

# ການສອນຊັ້ນຮຽນເດັກນ້ອຍ ລະດັບທີ 1



ສະຖາບັນຮູຮ





ປື້ມຫົວທີ 3

# ການສອນຊັ້ນຮຽນເດັກນ້ອຍ
# ລະດັບທີ 1

ສະຖາບັນຣູຣີ

## ບັນດາປຶ້ມທີ່ຢູ່ໃນຊຸດ:

ທາງລຸ່ມນີ້ແມ່ນລາຍຊື່ປຶ້ມໃນຊຸດທີ່ມີຢູ່ໃນປະຈຸບັນ ຊຶ່ງໄດ້ຮັບການອອກແບບໂດຍສະຖາບັນຣູຮີ. ປຶ້ມເລົ່ານີ້ແມ່ນມີຄວາມຕັ້ງໃຈວ່າຈະຖືກນຳໃຊ້ເປັນຫຼັກສູດຫຼັກ ໃນຄວາມພະຍາຍາມທີ່ເປັນລະບົບເພື່ອຍົກສູງຄວາມອາດສາມາດຂອງຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ຮັບໃຊ້ຊຸມຊົນຂອງຕົນ. ທາງສະຖາບັນຣູຮີກຳລັງພັດທະນາຊຸດຫຼັກສູດແຕກອອກຈາກປຶ້ມຫົວທີສາມ ໃນຊຸດປຶ້ມສຳລັບການຝຶກອົບຮົມຄູສອນຊັ້ນຮຽນເດັກນ້ອຍ, ແລະຊຸດປຶ້ມອີກຊຸດໜຶ່ງຈາກປຶ້ມຫົວທີ 5 ເພື່ອເພີ່ມຈຳນວນຜູ້ຊຸກຍູ້ກຸ່ມເຍົາວະຊົນ. ສິ່ງເລົ່ານີ້ໄດ້ຮັບການບົ່ງຊີ້ຄືກັນຢູ່ໃນລາຍການຂ້າງລຸ່ມນີ້. ຂໍໃຫ້ຈົດຈຳໄວ້ວ່າລາຍການຂ້າງລຸ່ມອາດຈະຜ່ານການປ່ຽນແປງ ອີງຕາມປະສົບການດ້ານຄວາມກ້າວໜ້າຈາກພາກສະໜາມ, ແລະ ຫົວຂໍ້ສິ່ງໃໝ່ໆຈະໄດ້ຮັບການເພີ່ມພູນ ໃນຈຳນວນທີ່ເພີ່ມຂຶ້ນຂອງອົງປະກອບຕ່າງໆໃນຫຼັກສູດ ເຊິ່ງຢູ່ພາຍໃຕ້ການພັດທະນາທີ່ດຳເນີນໄປຮອດຂັ້ນຕອນທີ່ຫຼັກສູດດັ່ງກ່າວສາມາດສ້າງໃຫ້ມີໄວ້ຢ່າງກວ້າງຂວາງ.

| | |
|---|---|
| ປຶ້ມຫົວທີ 1: | ການໄຕ່ຕອງກ່ຽວກັບຊີວິດແຫ່ງຈິດວິນຍານ |
| ປຶ້ມຫົວທີ 2: | ການລຸກຂຶ້ນມາຮັບໃຊ້ |
| ປຶ້ມຫົວທີ 3: | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 1 |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 2 (ຫຼັກສູດທີເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 3 (ຫຼັກສູດທີເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 4 (ຫຼັກສູດທີເຊື່ອມໂຍງ) |
| ປຶ້ມຫົວທີ 4: | ການປະກົດຂອງພຣະສາສະດາຄູ່ |
| ປຶ້ມຫົວທີ 5: | ການປົດປ່ອຍພະລັງຂອງເຍົາວະຊົນ |
| | ການລິເລີ່ມແຮງບັນດານໃຈ: ຫຼັກສູດທີ່ເຊື່ອມໂຍງຂັ້ນທຳອິດຂອງປຶ້ມຫົວທີ 5 |
| | ການຂະຫຍາຍວົງກວ້າງ: ຫຼັກສູດທີ່ເຊື່ອມໂຍງຂັ້ນທີສອງຂອງປຶ້ມຫົວທີ 5 |
| ປຶ້ມຫົວທີ 6: | ການເຜີຍແຜ່ສາສະໜາ |
| ປຶ້ມຫົວທີ 7: | ການຍ່າງກ້າວໄປດ້ວຍກັນໃນເສັ້ນທາງແຫ່ງການຮັບໃຊ້ |
| ປຶ້ມຫົວທີ 8: | ພຣະປະຕິນຍາຂອງພຣະບາຮາອຸລລາຫ໌ |
| ປຶ້ມຫົວທີ 9: | ການຮັບຮູ້ມຸມມອງທາງປະຫວັດສາດ |
| ປຶ້ມຫົວທີ 10: | ການສ້າງຊຸມຊົນທີ່ມີຊີວິດຊີວາ |
| ປຶ້ມຫົວທີ 11: | ປັດໃຈທາງດ້ານວັດຖຸ |
| ປຶ້ມຫົວທີ 12: | ຄອບຄົວແລະຊຸມຊົນ |
| ປຶ້ມຫົວທີ 13: | ການມີສ່ວນຮ່ວມກັບພຶດຕິກຳທາງສັງຄົມ |
| ປຶ້ມຫົວທີ 14: | ການເຂົ້າຮ່ວມໃນການປະທະກະຖາຕໍ່ສາທາລະນະຊົນ |

Copyright © 2022 by the Ruhi Foundation, Colombia
All rights reserved. Edition 2.2.1.PE.PV (provisional translation) published in 11 September 2023
Printed in Lao

Originally published in Spanish as *Enseñar clases para niños, primer grado*
Copyright © 1987, 1996, 2021 by the Ruhi Foundation, Colombia
ISBN 978-958-52941-7-2

Permission for a limited printing of this book in Lao has been granted to Spiritual Assembly of the Bahá'ís of Lao PDR by the Ruhi Institute.

Ruhi Institute
Cali, Colombia
Email: instituto@ruhi.org
Website: www.ruhi.org

Spiritual Assembly of the Bahais of Lao PDR
Nonsavanh Village, Saysettha District
Vientiane Capital, Lao PDR
Tel: +856 21 216996
Email: nsa@bahailao.org
Website: www.bahailao.org

# ສາລະບານ

ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ.............................................. v

ຫຼັກຄວາມເຊື່ອບາງປະການກ່ຽວກັບການສຶກສາແບບບາຮາຍ .................................. 1

ບົດຮຽນສຳລັບຊັ້ນຮຽນເດັກນ້ອຍ, ລະດັບ 1 ..................................................... 47

## ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ

ປຶ້ມເຫຼັ້ມນີ້ນຳເອົາສອງພາກມາດ້ວຍກັນ ເຊິ່ງພະຍາຍາມສ້າງຄວາມສາມາດໃຫ້ບັນດາບຸກຄົນໃນຈຳນວນທີ່ເພີ່ມຂຶ້ນ ເພື່ອດຳເນີນການສອນຊັ້ນຮຽນເປັນປົກກະຕິ ສຳລັບການສຶກສາທາງຈິດວິນຍານໃຫ້ແກ່ເດັກໃນລະແວກບ້ານ ແລະ ໝູ່ບ້ານຕ່າງໆ. ເປັນຫຼັກສູດທີ່ສາມຕາມລຳດັບຂອງຫຼັກສູດສະຖາບັນຣູຮີ, ແລະເປັນຄັ້ງທຳອິດຂອງການເປີດເຜີຍ ສະເພາະສຳລັບຜູ້ໃດທີ່ປາດຖະໜາປະຕິບັດໃນເສັ້ນທາງການຮັບໃຊ້. ບັນດາຜູ້ເຂົ້າຮ່ວມສຶກສາ ຜູ້ທີ່ຕັດສິນໃຈຈະຮັບໃຊ້ດ້ານນີ້ ຈະສືບຕໍ່ສຶກສາຫຼັກສູດຍ່ອຍຂອງການສອນເດັກ, ແຕ່ລະຄົນມີຈັງຫວະຂອງບາດກ້າວຕາມຄວາມເໝາະສົມ ກັບສະຖານະການຂອງຕົນເອງ, ໃນຂະນະທີ່ການຈະເລີນເຕີບໂຕສືບຕໍ່ໄປ ຕາມເສັ້ນທາງທີ່ວາດໄວ້ຂອງຫຼັກສູດຫຼັກ.

ໃນການນຳພາກຸ່ມຜ່ານທາງປຶ້ມ, ຜູ້ອຳນວຍຄວາມສະດວກຄວນຄຳນຶງເຖິງວິໃສທັດຂ້າງເທິງໄວ້ໃນໃຈ, ໃຫ້ຈົດຈຳວ່າມີພຽງເປີເຊັນໜຶ່ງຂອງຜູ້ເຂົ້າຮ່ວມສຶກສາເທົ່ານັ້ນ ອາດເລືອກທີ່ຈະອຸດທິດຕົນເອງແກ່ຄວາມມານະພະຍາຍາມຂອງດ້ານນີ້. ອີກປະການໜຶ່ງ ນອກເໜືອຈາກຈຸດມຸ້ງໝາຍທັນທີຂອງປຶ້ມ, ຂະນະນີ້ປຶ້ມເຫຼັ້ມນີ້ຈະໃຊ້ເປັນວົງກວ້າງຫຼາຍຂຶ້ນ ເພື່ອວ່າທຸກໆຄົນຈະຄຸ້ນເຄີຍກັບການຕັ້ງໝັ້ນຢູ່ບົນເສັ້ນທາງແຫ່ງການຮັບໃຊ້ ດ້ວຍແນວຄວາມຄິດ ແລະ ຄວາມຄິດບາງຢ່າງ ທີ່ກຳໜົດຮູບແບບໃຫ້ແກ່ໂປແກັມການສຶກສາສຳລັບຄົນລຸ້ນເຍົາ ທີ່ທຳການເຜີຍແຜ່ໃນໝູ່ບ້ານແລະລະແວກບ້ານຂອງຕົນ. ຕໍ່ກັບບັນຫານີ້ ປຶ້ມເຫຼັ້ມນີ້ຫວັງວ່າຈະມີສ່ວນເຮັດໃຫ້ເກີດຄວາມຕະໜັກ ໃນຊຸມຊົນຫຼາຍຂຶ້ນ, ທັງພາລະໜ້າທີ່ການລ້ຽງດູເດັກນ້ອຍທາງຈິດວິນຍານ ແລະ ຄຸນນະພາບ, ທັດສະນະຄະຕິ ແລະ ຄວາມປະພຶດຂອງສະມາຊິກທີ່ເປັນຜູ້ໃຫຍ່ ຕ້ອງສະແດງການປະຕິສຳພັນທີ່ມີຕໍ່ພວກເຂົາ.

ຈາກການສຶກສາພາກທີສອງ ຂອງເຫຼັ້ມທີ 2, ບັນດາຜູ້ເຂົ້າຮ່ວມສຶກສາໄດ້ຄຸ້ນເຄີຍກັບຄຳກ່າວຂອງ ພຣະອັບດຸລບາຮາ ແລ້ວວ່າການສຶກສາມີສາມຊະນິດ ຄື: ວັດຖຸ, ມະນຸດ, ແລະ ຈິດວິນຍານ. ໃນເຫຼັ້ມນີ້ພວກເຂົາຈະໄດ້ຮັບໂອກາດ ທຳຄວາມເຂົ້າໃຈເພີ່ມເຕີມ ກ່ຽວກັບການສຶກສາດ້ານສຸດທ້າຍ, ຈາກການຊ່ວຍເຫຼືອທຳມະຊາດຂອງຈິດວິນຍານ, ເປັນທຳມະຊາດທີ່ສູງກວ່າຂອງບຸກຄົນ ຕ້ອງໄດ້ຖືກພັດທະນາຂຶ້ນ. ສິ່ງທີ່ຄວນຊັ້ນເຈນຕັ້ງແຕ່ເລີ້ມຕົ້ນຄື ການສຶກສາທາງຈິດວິນຍານສຳລັບເດັກ ທີ່ໄດ້ລິເລີ້ມໃນສາສະໜາບາຮາຍແຕກຕ່າງກັນໂດຍພື້ນຖານ ຈາກການກຳໜົດຄວາມເຊື່ອແບບບໍ່ມີເຫດຜົນ ເຊິ່ງບາງຄັ້ງກ່ຽວຂ້ອງກັບຄຳແນະນຳຂອງສາສະໜາ. ໂດຍມີຈຸດປະສົງເພື່ອສົ່ງເສີມ ຄວາມຮັກໃນການຮຽນຮູ້, ທັດສະນະຄະຕິທີ່ເປີດກວ້າງຕໍ່ການຮຽນຮູ້, ແລະ ຄວາມປາດຖະໜາຢ່າງຕໍ່ເນື່ອງທີ່ຈະຄົ້ນຫາຄວາມຈິງ.

ສິ່ງສຳຄັນທີ່ເທົ່າທຽມກັນກໍຄືຕ້ອງຍອມຮັບວ່າ ໃນການສຶກສາຂອງຄົນລຸ້ນເຍົາ, ກົດທາງສາສະໜາບໍ່ສາມາດລະຖິ້ມໄດ້, ເພາະການກະທຳເຊັ່ນນັ້ນຈະເປັນການປະຕິເສດບໍ່ໃຫ້ພວກເຂົາເຂົ້າເຖິງຄວາມຈິງອັນສັກສິດ ແລະ ກົດຕ່າງໆທາງຈິດຍິນວານ, ກົດທີ່ຕ້ອງມາຄວບຄຸມຄວາມຄິດ ແລະ ການກະທຳ

ຂອງພວກເຂົາ. ຜູ້ທີ່ສະໜັບສະໜູນຄຳກ່າວອ້າງທີ່ວ່າ ດີທີ່ສຸດຄວນປ່ອຍໃຫ້ຄົນລຸ້ນເຍົາໄດ້ມາເຊິ່ງມາດຕະຖານ ແລະ ໂລກະທັດຂອງຕົນເອງ ຈາກການປະຕິສຳພັນກັບສັງຄົມ, ຕາມທີ່ຄາດຄະເນໂດຍການເລືອກອິດສະຫຼະ, ເບິ່ງຄືວ່າຈະບໍ່ປິຕິຍິນດີກັບຄວາມກ້າວລ້າວຂອງອຳນາດທາງການເມືອງ, ເສດຖະກິດ ແລະ ວັດທະນະທຳ ສົ່ງເສີມຮູບແບບຄວາມເຊື່ອ ແລະ ພຶດຕິກຳທີ່ຕອບສະໜອງຄວາມສົນໃຈຂອງຕົນເອງ. ແຕ່ເຖິງແມ່ນວ່າບໍ່ໄດ້ເປັນເຊັ່ນນັ້ນ, ກໍບໍ່ມີເຫດຜົນທີ່ຈະສັນນິຖານໄດ້ວ່າ ຄົນລຸ່ນຕໍ່ໆໄປຈະສາມາດສ້າງໂລກທີ່ດີຂຶ້ນກວ່າເດີມໄດ້ ຫາກປາດສະຈາກການສຶກສາທີ່ລໍ່ລ້ຽງທັມມະຊາດທາງຈິດວິນຍານຂອງບຸກຄົນ. ມະນຸດຊາດທີ່ປາດສະຈາກການຊີ້ນຳຈາກຄູສອນສະຫວັນ ສາມາດສ້າງຄວາມວຸ້ນວາຍເລັກນ້ອຍ, ຄວາມອະຍຸຕິທັມ, ແລະ ຄວາມທຸກທໍລະມານ.

ສະນັ້ນ ຄຳສອນບາຮາຍ ຈຶ່ງເປັນສູນກາງຂອງໂຄງການໄລຍະທີກປີ ຂອງການສຶກສາແກ່ເດັກນ້ອຍ ດັ່ງທີ່ວາດໄວ້ໃນໜັງສືເຫຼັ້ມນີ້ ແລະ ໃນໜັງສືທີ່ແຕກອອກຈາກມັນເປັນສາຂາ. ທີ່ກ່າວວ່າການອອກແບບໂຄງການ, ໂດຍສະເພາະການຈັດລຳດັບເນື້ອຫາຜ່ານລະດັບຊັ້ນຮຽນຕ່າງໆ, ເປີດໂອກາດໃຫ້ເດັກລຸ້ນເຍົາ ທີ່ມີພູມຫຼັງທັງໝົດໄດ້ມີສ່ວນຮ່ວມ. ບົດຮຽນຂອງລະດັບທີ 1 ແມ່ນກ່ຽວກັບການພັດທະນາຄຸນລັກສະນະທາງທັມ ແກ່ເດັກນ້ອຍອາຍຸ 5 ຫຼື 6 ປີ - ເຊິ່ງເປັນຄວາມພະຍາຍາມທີ່ຈະຊ່ວຍປັບແຕ່ງອຸປະນິໄສ. ລະດັບທີ 2 ຕໍ່ຍອດຈາກບົດຮຽນເລົ່ານີ້ ໂດຍປູກຝັງອຸປະນິໄສ ແລະ ຮູບແບບຄວາມປະພຶດ ທີ່ສະແດງອອກເຖິງຄຸນລັກສະນະພາຍໃນ ເຊິ່ງໄດ້ຄົ້ນຫາມາແລ້ວໃນປີຮຽນທີ່ຜ່ານມາ - ຕົວຢ່າງເຊັ່ນ ອຸປະນິໄສຂອງການອະທິຖານ ເຊິ່ງສະແດງອອກເຖິງສະພາບພາຍໃນທີ່ໂດດເດັ່ນດ້ວຍຄວາມປາດຖະໜາທີ່ຈະເຂົ້າໃກ້ ພຣະຜູ້ເປັນເຈົ້າ. ລະດັບຕໍ່ໄປ ຈະເຂົ້າສູ່ຄຳຖາມຂອງຄວາມຮູ້. ໂດຍສະເພາະ ໃນການເຮັດວຽກຢ່າງມີສະຕິເພື່ອການພັດທະນາທາງຈິດວິນຍານ, ບຸກຄົນຕ້ອງເຊື່ອມໂຍງກັບແຫຼ່ງທີ່ມາ ຂອງການຫຼັ່ງໄຫຼຄວາມຮູ້ກ່ຽວກັບ ພຣະຜູ້ເປັນເຈົ້າ. ຫົວຂໍ້ທີ່ເປັນສູນກາງຂອງການມີຊີວິດ ຂອງພຣະຜູ້ສະແດງທັມຂອງພຣະຜູ້ເປັນເຈົ້າ ສຳລັບມື້ນີ້, ເຊັ່ນດຽວກັບພຣະສາສະດາທັງຫຼາຍທີ່ໄດ້ປາກົດກ່ອນພຣະອົງ ໄດ້ອະທິບາຍໄວ້ໃນບົດຮຽນຂອງລະດັບເລົ່ານີ້. ລະດັບສຸດທ້າຍ ສຳລັບເດັກນ້ອຍເປີດໂອກາດໃຫ້ເດັກໆໄດ້ຂະຫຍາຍຄວາມຮູ້ ກ່ຽວກັບການເປີດເຜີຍທັມຂອງ ພຣະບາຮາອຸລລາຫ໌, ໂດຍໄດ້ຮັບການນຳທາງ, ແລະ ປະໂຫຍດຈາກການອະທິບາຍ ແລະ ແບບຢ່າງຂອງ ພຣະອັບດຸລບາຮາ. ລະດັບສຸດທ້າຍຂອງຊັ້ນຮຽນ ຫວັງວ່າຈະຊ່ວຍເສີມສ້າງອຸປະນິໄສຂອງເດັກນ້ອຍ ໃຫ້ຫັນໄປຫາຄຳສອນ ແລະ ພຣະວັດຈະນະທີ່ເປັ່ງອອກມາຂອງພຣະອົງ ຂະນະທີ່ພວກເຂົາກ້າວໄປຂ້າງໜ້າໃນຊີວິດ ແລະ ບຸກບືນດັດປັບຄວາມຄິດ ແລະ ການກະທຳຂອງພວກເຂົາ ໃຫ້ສອດຄ່ອງກັບຄຳສອນຂອງ ພຣະບາຮາອຸລລາຫ໌. ເມື່ອພວກເຂົາອາຍຸຮອດ 11 ຫຼື 12 ປີ, ຄົນລຸ້ນເຍົາກໍ່ພ້ອມທີ່ຈະກ້າວເຂົ້າສູ່ ໂຄງການເສີມສ້າງພະລັງທາງຈິດວິນຍານແກ່ເຍົາວະຊົນ, ເຊິ່ງຄວາມຮັບຮູ້ທີ່ເພີ້ມຂຶ້ນຂອງພວກເຂົາ ຈະຂະຫຍາຍອອກໄປຕື່ມອີກຜ່ານທາງຊຸດລຳດັບຂອງບົດຮຽນ, ໄດ້ຮຽນຮູ້ໄປກັບຜູ້ອຳນວຍຄວາມສະດວກກຸ່ມເຍົາວະຊົນ, ລວມທັງບົດຮຽນຕ່າງໆເຊິ່ງສືບຕໍ່ຈາກການສຶກສາທີ່ພວກເຂົາໄດ້ຮັບ ໃນຊັ້ນຮຽນເດັກນ້ອຍບາຮາຍ. ການໄຝ່ຝັນເປັນຄູຊັ້ນຮຽນເດັກ ຄວນເຮັດໃຫ້ໝັ້ນໃຈວ່າ ພໍ່ແມ່ຂອງເດັກນ້ອຍທີ່ບໍ່ແມ່ນບາຮາຍ ຍິນດີທີ່

ຈະສົ່ງລູກຊາຍ ແລະ ລູກສາວຂອງພວກເຂົາມາຮ່ວມຊັ້ນຮຽນ ແລະ ປາມປື້ມຍິນດີຢູ່ສະເໝີ ເມື່ອເຫັນຜົນຂອງການສຶກສາທາງຈິດວິນຍານທີ່ມີຕໍ່ຈິດໃຈ ແລະ ແນວຄິດຂອງເດັກໆ.

ດັ່ງທີ່ກ່າວໄວ້ຂ້າງເທິງວ່າ ຊັ້ນຮຽນລະດັບທີ 1 ແມ່ນເນັ້ນທີ່ການດັດປັບອຸປະນິໄສ. ສະນັ້ນ ພາຍໃນເນື້ອຫາຂອງພາກທຳອິດ "ຫຼັກຄວາມເຊື່ອບາງປະການກ່ຽວກັບການສຶກສາແບບບາຮາຍ", ກວດສອບແນວຄວາມຄິດພື້ນຖານທີ່ລວບລວມຈາກຄຳສອນຂອງສາສະໜາ ທີ່ມີຄວາມໝາຍເລິກເຊິ່ງຕໍ່ການສຶກສາ. ເຄິ່ງທຳອິດຂອງພາກແມ່ນມອບໃຫ້ການອະພິປາຍໃນສິ່ງນີ້, ໃນຂະນະທີ່ສ່ວນທີ່ເຫຼືອ ແມ່ນພິຈາລະນາວ່າມີວິທີໃດແດ່ໃນການຈັດສອນບົດຮຽນຕ່າງໆ ແລະ ຄວາມສຳພັນລະຫວ່າງຄູແລະພໍ່ແມ່ຜູ້ປົກຄອງ.

ໜຶ່ງໃນແນວຄວາມຄິດທຳອິດ ໄດ້ກ່າວໃນພາກນີ້ຄືສັກກະຍະພາບຂອງມະນຸດ, ເຊິ່ງຖືກຄົ້ນພົບຜ່ານທາງຈິນຕະນາການ ພົບໃນຄຳກ່າວຂອງພຣະບາຮາອຸລລາຫ໌ ທີ່ປຽບມະນຸດຄືກັບ "ເໝືອງທີ່ອຸດົມດ້ວຍອັນຍະມະນີທີ່ປະເມີນຄ່າບໍ່ໄດ້". ຂໍໃຫ້ຜູ້ເຂົ້າຮ່ວມທົບທວນໃນທັນທີ ເຖິງຄວາມໝາຍສອງປະການທີ່ສາມາດດຶງອອກມາຈາກຄຳກ່າວນັ້ນ - ຄື ແນວທາງການສຶກສາທີ່ມອງວ່າ ນັກຮຽນເປັນພາສະນະທີ່ວ່າງເປົ່າ ລໍຖ້າການເຕີມຂໍ້ມູນທີ່ຄວນຈັດເກັບໄວ້ດີທີ່ສຸດ ແລະ ຫາກປາສະຈາກການບຳລຸງລ້ຽງຢ່າງເໝາະສົມ, ເດັກນ້ອຍຈະບໍ່ສາມາດສະແດງອັນຍະມະນີຈຳນວນຫຼວງຫຼາຍ ທີ່ເຊື່ອງຊ້ອນຢູ່ພາຍໃນຂອງພວກເຂົາໄດ້.

ໃນບັນດາອັນຍະມະນີທີ່ແຕ່ລະຄົນໄດ້ຮັບມານັ້ນ ຈະນຳສະເໜີໃນພາກນີ້ໂດຍເອີ້ນວ່າ "ຄຸນລັກສະນະທາງຈິດວິນຍານ", ເຊິ່ງຖືກເບິ່ງວ່າເປັນໂຄງສ້າງຖາວອນທີ່ສາມາດສ້າງລັກສະນະທີ່ສູງສົ່ງ ແລະ ທ່ຽງທຳໄດ້. ສິ່ງເລົ່ານີ້ເປັນໝວດໝູ່ທີ່ຊັດເຈນຂອງ "ຄຸນນະທັມ" - ເຊິ່ງເປັນຄຳສັບທົ່ວໄປທີ່ໃຊ້ສຳລັບຄຸນລັກສະນະທີ່ໜ້າຍ້ອງຍໍທຸກປະເພດ, ລວມທັງນິໄສ ແລະ ທັດສະນະຄະຕິ ຕະຫຼອດຈົນເຖິງທັກສະ ແລະ ຄວາມສາມາດ - ເປັນແນວຄິດສຳຄັນທີ່ຜູ້ເຂົ້າຮ່ວມໝົດທຸກຄົນຄວນເຂົ້າໃຈຢ່າງພຽງພໍ. ພາກທີ 6 ແລະ 7 ພິຈາລະນາຄວາມໝາຍບາງປະການຂອງຂໍ້ຄວາມນີ້. ຜູ້ອຳນວຍຄວາມສະດວກຕ້ອງໃຫ້ແນ່ໃຈວ່າ ສະມາຊິກຂອງກຸ່ມສາມາດເຊື່ອງໂຍງ ສິ່ງທີ່ພວກເຂົາກຳລັງສົນທະນາກັບການຮຽນຂອງພວກເຂົາ ຈາກພາກທີສາມຂອງເຫຼັ້ມທີ 1, ເຊິ່ງພວກເຂົາໄດ້ຄິດວ່າຄຸນລັກສະນະທາງຈິດວິນຍານໃນຖານະຈິດວິນຍານຂອງມະນຸດ ຕ້ອງໄດ້ຮັບການພັດທະນາຄືແນວໃດ ເພື່ອອຸປະຖຳ ແລະ ຊ່ວຍເຫຼືອພວກເຮົາໃນການເດີນທາງອັນນິລັນດອນຂອງເຮົາ ຈົນໄປເຖິງພຣະຜູ້ເປັນເຈົ້າ. ຄວາມຮັກຂອງພຣະຜູ້ເປັນເຈົ້າ ແລະ ຄວາມຮູ້ກ່ຽວກັບພຣະຜູ້ເປັນເຈົ້າ ເປັນສິ່ງຈຳເປັນທີ່ຂາດບໍ່ໄດ້ໃນການບຳລຸງລ້ຽງຄຸນລັກສະນະທາງຈິດວິນຍານ. ສິ່ງສຳຄັນສຳລັບຜູ້ເຂົ້າຮ່ວມສຶກສາ ທີ່ຈະຕ້ອງເຫັນວ່າແນວຄິດຂອງສອງຕອນທີ່ຢູ່ໃນລະດັບທີ 1 ນີ້ຕ່າງໆຈາກຫຼັກສູດກ່ຽວກັບຄຸນນະທັມ ທີ່ຖືວ່າການຊື່ຕົງ ແລະ ຄວາມສັດຊື່ເປັນຄຸນລັກສະນະປະເພດດຽວກັນໄດ້ຢ່າງໃດ. ແລະເມື່ອຄູເຫັນຄຸນຄ່າໃນຄວາມໂດດເດັ່ນນີ້, ພວກເຂົາຈະຫຼີກລ້ຽງແນວໂນ້ມທີ່ຈະມອງຂ້າມການພັດທະນາອຸປະນິໄສທີ່ດີເປັນຫຼັກ ໂດຍການປັບປຸງພຶດຕິກຳ.

ແນ່ນອນວ່າ ຄຸນລັກສະນະທາງຈິດວິນຍານມີການຂັບເຄື່ອນຂອງມັນເອງ ເຊິ່ງອົງປະກອບຫຼັກໆ ສະເພາະຂອງບົດຮຽນທີ່ເປັນການບຸກບືນສົ່ງເສີມ ຄື - ການສວດມົນອະທິຖານ, ການທ່ອງຈຳພຣະ ວັດຈະນະ, ແລະ ເລື່ອງເລົ່າ. ຜູ້ເຂົ້າຮ່ວມສຶກສາໄດ້ເຂົ້າໃຈເຖິງລັກສະນະຂອງບາງອົງປະກອບເລົ່ານີ້ ແລ້ວ ຈາກການຮຽນເຫຼັ້ມທີ 1 ແລະ 2, ແລະ ຕອນທີ 8 ເນັ້ນໜັກເພື່ອຊ່ວຍໃຫ້ພວກເຂົາເສີມຂະຫຍາຍ ສິ່ງທີ່ພວກເຂົາໄດ້ຮຽນຮູ້ ນຳມາໃຊ້ໃນໜ້າທີ່ການສອນເດັກນ້ອຍ. ເພື່ອກະທຳເຊັ່ນນັ້ນ ພວກເຂົາຄວນ ຕະໜັກວ່າການປູກຝັງ ຄຸນສົມບັດທາງຈິດວິນຍານແກ່ຄົນລຸ້ນເຍົາ, ບົດຮຽນຕ່າງໆເຮັດໃຫ້ພວກເຂົາສຳ ພັດກັບພຣະວັດຈະນະຂອງພຣະຜູ້ເປັນເຈົ້າໃນທັນທີ ແລະ ສ້າງແຮງບັນດານໃຈໃຫ້ແກ່ພວກເຂົາ ດ້ວຍ ເລື່ອງເລົ່າຂອງພຣະອັບດຸລບາຮາ, ຜູ້ເປັນສູນລວມຂອງຄວາມດີເລີດອັນສູງສົ່ງທີ່ສຸດຂອງມະນຸດຊາດ.

ແນວຄິດອີກປະການໜຶ່ງທີ່ໄດ້ຄົ້ນພົບໃນພາກນີ້ ແມ່ນຄວາມຢ້ານກົວພຣະຜູ້ເປັນເຈົ້າ, ເຊິ່ງກ່າວ ໄວ້ໃນຕອນທີ 12. ອີງຕາມຄຳສອນຂອງບາຮາຍ "ປັດໃຈສຳຄັນ" ໃນການສຶກສາຂອງມະນຸດ. ສິ່ງ ສຳຄັນທີ່ຜູ້ເຂົ້າຮ່ວມຕ້ອງເຂົ້າໃຈຄື ຄວາມຢ້ານກົວນີ້ແຍກອອກຈາກຄວາມຮັກຂອງພຣະຜູ້ເປັນເຈົ້າບໍ່ໄດ້, ເພາະເປັນຄວາມຢ້ານທີ່ເກີດຈາກຄວາມປາດຖະໜາ ທີ່ຈະເຮັດໃຫ້ພຣະອົງ ຜູ້ທີ່ເຮົາຮັກນັ້ນເພິ່ງພໍໃຈ ແລະ ຫຼີກລ່ຽງການກະທຳໃດກໍຕາມ ທີ່ຂັດຂວາງຄວາມຮັກຂອງພຣະອົງບໍ່ໃຫ້ມາເຖິງພວກເຮົາ. ເມື່ອ ຂາດຄວາມຮັກ, ຄວາມຢ້ານທີ່ກະຕຸ້ນໃຫ້ເຮົາລະຖິ້ມການກະທຳທີ່ບໍ່ເໝາະສົມ ກໍເປັນອີກປະການໜຶ່ງ - ທີ່ຢ້ານການຖືກລົງໂທດຈາກຄວາມໂມໂຫຂອງພຣະຜູ້ເປັນເຈົ້າ. ມັນບໍ່ແມ່ນພາບທີ່ຄວນນຳເຂົ້າມາໃນ ຄວາມຄິດຂອງເດັກໆ. ໃນຂະນະທີ່ຄູຈຳເປັນຕ້ອງເຂົ້າໃຈຢ່າງທ່ອງແທ້ ໃນຂະບວນການສຶກສາ ເຖິງ ຄວາມສຳພັນລະຫວ່າງຄວາມຮັກຂອງພຣະຜູ້ເປັນເຈົ້າ ແລະ ຄວາມຢ້ານກົວພຣະຜູ້ເປັນເຈົ້າ, ຄູຄວນຕະ ໜັກວ່າບໍ່ແມ່ນເປັນເດັນທີ່ພວກເຂົາຈະຍົກຂຶ້ນມາເວົ້າໃນຊັ້ນຮຽນ. ແທນທີ່ຈະເປັນເຊັ່ນນັ້ນ ພວກເຂົາ ຕ້ອງຮຽນຮູ້ທີ່ຈະຈຸດໄຟແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ຢູ່ໃນຫົວໃຈຂອງນັກຮຽນຂອງເຂົາ ແລະ ຊ່ວຍໃຫ້ນັກຮຽນໄດ້ຮັບຄວາມໝັ້ນໃຈຢ່າງແທ້ຈິງວ່າ ການສ້າງມະນຸດຊາດຂຶ້ນມາຈາກຄວາມຮັກອັນບໍ່ຮູ້ ສິ້ນຂອງພຣະອົງ, ພຣະຜູ້ເປັນເຈົ້າ ຈະບໍ່ມີວັນຢຸດລໍ້ລ້ຽງ ແລະ ປົກປ້ອງພວກເຮົາ. ມັນເປັນຄວາມຮັກ ໃນຄວາມງາມຂອງພຣະອົງ, ແລ້ວໃນການວິເຄາະທ້າຍທີ່ສຸດ ພວກເຂົາກໍຈະກີດກັ້ນຕົນເອງຈາກການ ກະທຳທີ່ເປັນການຂັດກັບຄວາມຍິນຂອງພຣະອົງ.

ການອະພິປາຍກ່ຽວກັບແນວຄວາມຄິດ ແລະ ຄວາມຄິດຂ້າງຕົ້ນຈະນຳພາຜູ້ເຂົ້າຮ່ວມສຶກສາໄປ ສູ່ການຕະໜັກວ່າ ໃນທ້າຍທີ່ສຸດ ຜ່ານຂະບວນການສຶກສາທາງຈິດວິນຍານ, ເດັກນ້ອຍຄວນຖືວ່າການ ໄດ້ມາເຊິ່ງຄຸນລັກສະນທາງຈິດວິນຍານນັ້ນ ເປັນເໝືອນລາງວັນໃນຕົວມັນເອງ ແລະ ການຄອບຄອງ ຄຸນລັກສະນະທີ່ບໍ່ເໝາະສົມນັ້ນ ຖືເປັນການລົງໂທດທີ່ຍິ່ງໃຫຍ່ທີ່ສຸດ. ສະນັ້ນ ທັງໝົດນີ້ຈະຊ່ວຍໃຫ້ຜູ້ ເຂົ້າຮ່ວມສຶກສາມອງເຫັນການປັບປຸງພຶດຕິກຳຂອງຄົນລຸ່ນເຍົາ ຈາກມຸມມອງທີ່ເໝາະສົມ - ບໍ່ແມ່ນ ເປັນເປົ້າໝາຍຫຼັກ ແຕ່ເປັນການຊ່ວຍໃນການປັບແຕ່ງອຸປະນິໃສ. ພວກເຂົາຈະຫາວິທີທີ່ເໝາະສົມໃນ ການປະຕິສຳພັນກັບເດັກນ້ອຍ ເພື່ອເສີມສ້າງການກະທຳທີ່ໜ້າຍິນດີ ແລະ ກີດກັ້ນຮູບແບບພຶດຕິກຳທີ່

ບໍ່ເໝາະສົມ, ແລະ ບາງສ່ວນກໍໄດ້ກ່າວໄວ້ໃນຕອນທີ 13. ແນວຄວາມຄິດອື່ນໆທີ່ກ່າວໂດຍຫຍໍ້ໃນຕອນທີ່ກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ລະບຽບວິໄນ. ຂະນະທີ່ການລົງໂທດຢ່າງຮຸນແຮງເປັນໄດ້ຊັດເຈນວ່າ ບໍ່ມີຢູ່ໃນສະຖານທີ່ຂອງການສຶກສາເດັກນ້ອຍ, ການອະນຸຍາດໃຫ້ເດັກມີອິດສະຫຼະເຕັມທີ່ໃນການເຮັດສິ່ງທີ່ພວກເຂົາຕ້ອງການ ກໍເປັນການທຳລາຍການພັດທະນາທາງຈິດວິນຍານຂອງເຂົາເຊັ່ນກັນ.

ພາກນີ້ຈະຢູ່ຕໍ່ຈາກຄຳຖາມທີ່ວ່າ ຈະຮັກສາລະບຽບ ແລະ ວິໄນໃນຊັ້ນຮຽນໄດ້ແນວໃດໃນຂະນະຂອງການເສີມສ້າງສະພາບແວດລ້ອມແຫ່ງການຮຽນຮູ້ທີ່ສຸກທັນສາ. ຜູ້ອຳນວຍຄວາມສະດວກຄວນຈື່ໄວ້ວ່າຜູ້ເຂົ້າຮ່ວມສຶກສາສ່ວນໃຫຍ່ ຈະຍັງບໍ່ມີປະສົບການໃນການເດັກນ້ອຍມາກ່ອນ, ສະນັ້ນ ຢູ່ໃນນີ້ຈຶ່ງສະເໜີແນວຄິດເບື້ອງຕົ້ນພຽງບໍ່ເທົ່າໃດຂໍ້ ເພື່ອການພິຈາລະນາຂອງພວກເຂົາ. ພວກເຂົາອາດຈະຢາກກັບໄປເບິ່ງຕອນຕ່າງໆກ່ຽວຂ້ອງ ຫຼັງຈາກທີ່ໄດ້ປະຕິບັດການຮັບໃຊ້ສອນເດັກນ້ອຍ ແລະ ທົບທວນຄວາມຄິດໃນເລື່ອງຂອງປະສົບການ.

ຈາກນັ້ນ ຜູ້ເຂົ້າຮ່ວມສຶກສາກໍກວດສອບວິທີການເຂົ້າເຖິງບາງຢ່າງ ທີ່ພວກເຂົາສາມາດກະທຳຕາມໄດ້ ໃນການເຮັດໃຫ້ເດັກນ້ອຍມີສ່ວນຮ່ວມໃນກິດຈະກຳຕ່າງໆ ທີ່ປະກອບໃສ່ໃນບົດຮຽນ. ນອກຈາກນີ້ ອົງປະກອບຫຼັກຄື ການສວດມົນ, ການທ່ອງຈຳພຣະວັດຈະນະ, ແລະ ເລື່ອງເລົ່າ ທີ່ເນັ້ນໜັກຂ້າງຕົ້ນມາແລ້ວ ມີກິດຈະກຳອື່ນເຊິ່ງລວມທັງ ການຮ້ອງເພງ, ຫຼິ້ນເກມ, ແລະ ການລະບາຍສີ. ໃນການວິເຄາະວິທີການເຂົ້າເຖິງພວກເຂົາ ທີ່ມີຢູ່ນີ້, ຜູ້ເຂົ້າຮ່ວມສຶກສາທວນຄືນບົດທຳອິດ ກ່ຽວກັບຄວາມບໍລິສຸດຂອງຄຸນລັກສະນະທາງຈິດວິນຍານ.

ສຸດທ້າຍແມ່ນຕອນທີ 26, ພິຈາລະນາເຖິງລັກສະນະຂອງການສົນທະນາ ທີ່ກຳລັງດຳເນີນຢູ່ເຊິ່ງເກີດຂຶ້ນລະຫວ່າງຄູ ແລະ ພໍ່ແມ່ຜູ້ປົກຄອງຂອງຄົນລຸ້ນເຍົາກ່ຽວກັບຊັ້ນຮຽນຂອງເດັກຍິງ ແລະ ເດັກຊາຍ. ຕອນດັ່ງກ່າວນີ້ສ້າງຂຶ້ນຈາກສິ່ງທີ່ຜູ້ເຂົ້າຮ່ວມສຶກສາ ໄດ້ຮຽນມາແລ້ວໃນເຫຼັ້ມ 2, ເຊັ່ນດຽວກັບປະສົບການທີ່ພວກເຂົາອາດໄດ້ຮັບ ຕັ້ງແຕ່ຕອນທີ່ໄດ້ເປັນສ່ວນໜຶ່ງຂອງກຸ່ມແກນກາງ ໄປຢ້ຽມຢາມບ້ານຕ່າງໆຂອງນັກຮຽນທີ່ຈະມາເຂົ້າຮ່ວມຮຽນ ໃນລະແວກບ້ານ ແລະໝູ່ບ້ານຂອງພວກເຂົາ. ຜູ້ອຳນວຍຄວາມສະດວກຄວນໃຫ້ເວລາຜູ້ເຂົ້າຮ່ວມສຶກສາຢ່າງພຽງພໍໃນການເຮັດແບບເຝິກຫັດ ທີ່ຮຽກຮ້ອງໃຫ້ພວກເຂົາທົບທວນແນວຄວາມຄິດໃນພາກທຳອິດນີ້ ເພື່ອກຽມບົດສົນທະນາກັບພໍ່ແມ່ຜູ້ປົກຄອງ. ບົດເຝິກຫັດນີ້ມີຄວາມໝາຍຕໍ່ສະມາຊິກໃນກຸ່ມ ເປັນການເສີມສ້າງຄວາມຄິດຂອງພວກເຂົາ ກ່ຽວກັບແນວຄວາມຄິດ ແລະ ຄວາມຄິດທີ່ໄດ້ປຶກສາມາແລ້ວ.

ພາກທີສອງ "ບົດຮຽນສຳລັບຊັ້ນຮຽນເດັກນ້ອຍ, ລະດັບທີ 1" ປະກອບດ້ວຍສອງສ່ວນ: ບົດຮຽນຊາວສີ່ບົດ ທີ່ແນະນຳໃຫ້ສຳລັບລະດັບນີ້ ແລະ ຕອນຕ່າງໆຂອງການແນະນຳເບື້ອງຕົ້ນ ທີ່ອອກແບບມາເພື່ອໃຫ້ຄູຄຸ້ນເຄີຍກັບເນື້ອຫາຂອງບົດຮຽນເປັນຢ່າງດີ, ເຊິ່ງແຕ່ລະເນື້ອຫາມີໂຄງສ້າງມາຈາກ

ການພັດທະນາ ຄຸນລັກສະນະທາງຈິດວິນຍານ. ໂດຍນຳເອົາສີ່ບົດຮຽນຕໍ່ຄັ້ງ ຂອງຕອນຕ່າງໆຂອງການແນະນຳເບື້ອງຕົ້ນ ມາແນະນຳຜູ້ເຂົ້າຮ່ວມສຶກສາ ຜ່ານການທວນຄືນອົງປະກອບຫຼັກຂອງແຕ່ລະບົດ, ທີ່ພວກເຂົາວິເຄາະໃນລັກສະນະດຽວກັນກັບຄັ້ງທຳອິດ ທີ່ພວກເຂົາກະທຳມາແລ້ວໃນພາກກ່ອນນີ້ກ່ຽວກັບຄວາມບໍລິສຸດ.

ພຣະວັດຈະນະຈາກຄຳສອນບາຮາຍ ເປັນສ່ວນປະກອບສຳຄັນຂອງທຸກໆບົດຮຽນ. ພ້ອມທັງຂໍ້ຄວາມສັ້ນໆທີ່ສົ່ງເສີມໃຫ້ຄູ ໃຊ້ໃນການແນະນຳພຣະວັດຈະນະແກ່ເດັກນ້ອຍ. ແມ້ວ່າຈະສັ້ນ ແຕ່ຄຳກ່າວນີ້ນຳໃຊ້ກຸ່ມຖ້ອຍຄຳ ແລະ ຮູບພາບຈາກຄຳສອນ ທີ່ຈະຊ່ວຍໃຫ້ເດັກນ້ອຍເລີ່ມສ້າງພາບໃນຄວາມຄິດຂອງພວກເຂົາ ກ່ຽວກັບການຂັບເຄື່ອນທີ່ສະແດງເຖິງຄຸນລັກສະນະທາງຈິດວິນຍານ ທີ່ໄດ້ກ່າວມາແລ້ວ. ຄວາມສາມາດຂອງຄູໃນການນຳສະເໜີຄຳແນະນຳເບື້ອງຕົ້ນ ໃນລັກສະນະທີ່ເປັນທຳມະຊາດ ແລະ ຊ່ວຍໃຫ້ນັກຮຽນໄດ້ຮັບຄວາມເຂົ້າໃຈຢ່າງທ່ອງແທ້ ເຖິງການຂັບເຄື່ອນເລົ່ານີ້ຈະເຕີບໂຕຜ່ານປະສົບການ ແລະ ຜ່ານການໄຕ່ຕອງຢ່າງຕໍ່ເນື່ອງກ່ຽວກັບຄຸນລັກສະນະທາງຈິດວິນຍານ ທີ່ໄດ້ສົນທະນາໄປແລ້ວໃນບົດຮຽນ. ໃນເລື່ອງນີ້ ຜູ້ເຂົ້າຮ່ວມສຶກສາຈະຖືກຖາມໃນຕອນຕ່າງໆຂອງການແນະນຳເບື້ອງຕົ້ນ ເພື່ອທົບທວນເບື້ອງຕົ້ນກ່ຽວກັບຄວາມສຳຄັນຂອງແຕ່ລະຄຸນລັກສະນະ, ທັງໃນຊີວິດສ່ວນບຸກຄົນ ແລະ ສຳລັບຄວາມພະຍາຍາມໃນການສອນຂອງພວກເຂົາ, ແລະ ເພື່ອຈຸດປະສົງນີ້ ມີການເລືອກພຣະວັດຈະນະຈຳນວນໜຶ່ງທີ່ກ່ຽວຂ້ອງກັບແຕ່ລະຄຸນລັກສະນະ.

ການໄດ້ມີສ່ວນຮ່ວມໃນການທົບທວນແລ້ວ, ຕໍ່ໄປຜູ້ເຂົ້າຮ່ວມສຶກສາກວດສອບເລື່ອງເລົ່າ ທີ່ສະແດງໃຫ້ເຫັນຄຸນລັກສະນະຕ່າງໆ ທີ່ພວກເຂົາໄດ້ພິຈາລະນາ. ສ່ວນໃຫຍ່ລວບລວມມາຈາກຊີວິດຂອງ ພຣະອັບດຸລບາຮາ, ເລື່ອງເລົ່າໆນີ້ມີຈຸດປະສົງເພື່ອໃຫ້ເດັກນ້ອຍໄດ້ເຫັນ ການເປັ່ງປະກາຍຂອງພຣະຜູ້ສະແດງທັມອັນໄຮ້ຂີດຈຳກັດ ຂອງຄຸນລັກສະນະທາງຈິດວິນຍານ ອັນເປັນຄຸນລັກສະນະຂອງຈິດວິນຍານມະນຸດ. ດ້ວຍເຫດນີ້ ແຕ່ລະເລື່ອງເລົ່າຈຶ່ງມີບາງຄຳຖາມເພື່ອຊ່ວຍໃຫ້ຄູມອງຂ້າມລຳດັບຂອງເຫດການ ໄປສູ່ການສຳຫຼວດຄວາມເປັນຈິງທາງຈິດວິນຍານ. ໂດຍສະເພາະໃນກໍລະນີຂອງເລື່ອງເລົ່າຂອງພຣະອັບດຸລບາຮາ, ຄຳຖາມເລົ່ານີ້ຖືກຈັດຂຶ້ນເພື່ອໃຫ້ແນ່ໃຈວ່າ ໃນການບັນລະຍາຍຂອງຄູນັ້ນເນັ້ນຢໍ້າວ່າ ພຣະອົງສະແດງອອກຄຸນລັກສະນະຕ່າງໆທາງຈິດວິນຍານ ໄປສູ່ຄວາມສົມບູນເລີດທີ່ສຸດຄືແນວໃດ ແລະ ຫຼີກລ່ຽງການສຳນຶກວາດພາບ ລັກສະນະຄວາມສຳພັນນັ້ນໂດຍທັນທີ ແລະ ຜິວເຜີນນັ້ນສາມາດກີດກັ້ນເດັກນ້ອຍ ຈາກການເຫັນຄວາມໝາຍສຳຄັນທີ່ແທ້ຈິງ ຂອງການກະທຳຕ່າງໆຂອງພຣະອົງ.

ຫຼັງຈາກຜູ້ເຂົ້າຮ່ວມສຶກສາໄດ້ວິເຄາະແຕ່ລະກຸ່ມຂອງບົດຮຽນສີ່ບົດ ໃນລັກສະນະນີ້ແລ້ວ ພວກເຂົາຖືກຂໍໃຫ້ໃຊ້ເວລາເຝິກຝົນ ອົງປະກອບທີ່ຫຼາກຫຼາຍຂອງບົດຮຽນ, ໃຊ້ການເຂົ້າເຖິງຄືພາກທຳອິດຕາມທີ່ໄດ້ພິຈາລະນາມາແລ້ວ. ຄວາມສຳຄັນຂອງພາກປະຕິບັດບໍ່ສາມາດປະເມີນສູງເກີນໄປ. ສ່ວນໃຫຍ່ແມ່ນຂຶ້ນກັບຜູ້ອຳນວຍຄວາມສະດວກ ທີ່ຊ່ວຍໃຫ້ສະມາຊິກໃນກຸ່ມໃຊ້ຄວາມພະຍາຍາມຂອງພວກ

ເຂົາ ຍົກລະດັບຄວາມສາມາດຂອງພວກເຂົາ ໃຫ້ມີສັກກະຍະພາບເປັນຄູສອນ. ການຈັດການສຶກສາບົດຮຽນຕ່າງໆແບ່ງອອກເປັນຊຸດໆລະສີ່ບົດ ເຊິ່ງໃຫ້ມີລະດັບຄວາມຢືດຢຸ່ນ, ແລະ ຜູ້ອຳນວຍຄວາມສະດວກຄວນໃຫ້ແນວຄິດບາງປະການ ເພື່ອວິທີການດຳເນີນຊັ້ນຮຽນເດັກນ້ອຍໃຫ້ດີທີ່ສຸດ, ຫາກຈຳເປັນກໍໃຫ້ປຶກສາກັບຜູ້ປະສານງານຊັ້ນຮຽນເດັກນ້ອຍ. ອາດມີບາງຄັ້ງ ທີ່ຜູ້ເຂົ້າຮ່ວມສຶກສາຮຽນຈົບພາກນີ້ໝົດແລ້ວ, ລວມທັງພາກປະຕິບັດ ກ່ອນທີ່ພວກເຂົາຈະກະທຳການຮັບໃຊ້. ໃນກໍລະນີດັ່ງກ່າວ ຈຳເປັນຢ່າງຍິ່ງທີ່ຜູ້ທີ່ປາດຖະໜາຈະຈັດຊັ້ນຮຽນ ຕ້ອງໄດ້ຮັບປະສົບການຢ່າງວ່ອງໄວ ຫຼັງຈາກຮຽນຈົບເຫຼັ້ມ 3 ແລ້ວ, ບໍ່ວ່າຈະເປັນການເລີ້ມຊັ້ນຮຽນດ້ວຍຕົນເອງ ຫຼື ຈາກການເຮັດວຽກຮ່ວມກັບຄູຄົນອື່ນໆ, ການຊ່ວຍໃນກິດຈະກຳບາງຢ່າງ. ຢ່າງໃດກໍຕາມ ພາຍໃຕ້ສະພາບການອື່ນໆອາດເປັນປະໂຫຍດສຳລັບຜູ້ເຂົ້າຮ່ວມສຶກສາ ທີ່ຈະເລີ້ມໄດ້ຮັບປະສົບການໃນການສອນທີ່ຄ້າຍຄືກັນ ຫຼັງຈາກທີ່ພວກເຂົາສຶກສາຈົບ ແລະ ເຝິກຝົນອ່ານໜຶ່ງຫຼືສອງຊຸດບົດຮຽນສີ່ບົດ. ໃນຊ່ວງເວລາທີ່ເໝາະສົມ ຜູ້ອຳນວຍຄວາມສະດວກຈະນຳພາຜູ້ເຂົ້າຮ່ວມສຶກສາກັບຄືນມາສຶກສາ ແລະ ເຝິກຝົນບົດຮຽນຕື່ມອີກສີ່ບົດເພື່ອເພີ່ມປະສົບການ. ນີ້ຄວນກ່າວວ່າ ການຈັດຕອນຕ່າງໆຂອງການແນະນຳເບື້ອງຕົ້ນ ແກ່ຊຸດບົດຮຽນສີ່ບົດ ບໍ່ໄດ້ໝາຍຄວາມວ່າຄຸນລັກສະນະທາງຈິດວິນຍານທີ່ກ່າວໄວ້ໃນບົດຮຽນເລົ່ານັ້ນ ມີຄວາມເຊື່ອມໂຍງກັນເປັນພິເສດ.

ໂດຍບໍ່ຄຳນຶງເຖິງການກະກຽມດັ່ງກ່າວ, ສຳລັບແຕ່ລະຄັ້ງທີ່ສອນຊັ້ນຮຽນ ຄູຈຳເປັນຕ້ອງທຳຄວາມຄຸ້ນເຄີຍກັບບົດຮຽນຢ່າງຖີ່ຖ້ວນກ່ອນ ແລະ ກະກຽມຕົວຢ່າງເປັນຢ່າງດີ. ຊັ້ນຮຽນເດັກນ້ອຍຈະປະສົບຄວາມສຳເລັດຫຼາຍຂຶ້ນ ຫາກວ່າຄູບໍ່ອ່ານຈາກປຶ້ມໂດຍກົງ ແຕ່ໄດ້ຮຽນອ່ານອອກສຽງບົດສວດມົນ ແລະ ພຣະວັດຈະນະຈົນຈື່ຂຶ້ນໃຈແລ້ວ, ໄດ້ກະກຽມນຳສະເໜີພຣະວັດຈະນະຂອງບົດຮຽນນັ້ນ, ແລະ ໄດ້ເຝິກການເລົ່າເລື່ອງກ່ອນແລ້ວ. ຄຽງຄ້າງກັບການກະກຽມສິ່ງເລົ່ານີ້, ຊັ້ນຮຽນຍັງມີຄວາມຈຳເປັນໜ້ອຍໜຶ່ງທາງດ້ານອຸປະກອນ ແລະ ສິ່ງຂອງພາຍນອກ, ເຊິ່ງນອກເໜືອຈາກອຸປະກອນຫຼິ້ນເກມ ແລະ ເຈ້ຍສຳລັບທາສີ ແລະ ສໍສີ. ເຈ້ຍສຳລັບທາສີ ພົບເຫັນໄດ້ໃນຕອນທ້າຍຂອງພາກທີສອງ, ເຊິ່ງສາມາດນຳໄປສຳເນົາ ຫຼື ແຕ້ມຄືນໂດຍການຂຽນລາຍເສັ້ນເທິງເຈ້ຍລະແຜ່ນ. ນອກຈາກນີ້ ເຈ້ຍສຳລັບທາສີ ຍັງສາມາດດາວໂຫຼດຈາກເວັບໄຊຂອງ ສະຖາບັນຣູຮີ ເພື່ອການຕີພິມອອກ. ໃນເວັບໄຊກໍຍັງມີເພງທີ່ອັດໄວ້ສຳລັບຊັ້ນຮຽນລະດັບ 1, ເຊິ່ງຄູອາດຕ້ອງການໃຊ້ບໍ່ພຽງແຕ່ເພື່ອກະກຽມຕົນເອງສຳລັບຊັ້ນຮຽນເທົ່ານັ້ນ ແຕ່ເພື່ອຊ່ວຍເດັກນ້ອຍໃນການຮຽນຮ້ອງເພງເລົ່ານັ້ນ. ຜູ້ທີ່ເລີ້ມຊັ້ນຮຽນແກ່ຄົນລຸ້ນເຍົາໃນຊຸມຊົນຄວນເກັບຮັກສາປຶ້ມທີ່ບັນທຶກຄວາມພະຍາຍາມຂອງຕົນ, ເຊິ່ງຈະຊ່ວຍໃຫ້ພວກເຂົາມີຂໍ້ມູນທີ່ຈຳເປັນຢູ່ໃນມືໂດຍທັນທີ ແລະ ຈະເຮັດໃຫ້ຮູບແບບຂອງການກະກຽມ ແລະ ການທົບທວນ ເຂັ້ມແຂງຂຶ້ນ.

ຈະເປັນປະໂຫຍດທີ່ຈະຊີ້ແຈງໃນທີ່ນີ້ວ່າ ບົດຮຽນຊາວສີ່ບົດສຳລັບລະດັບ 1 ໄດ້ຮັບການອອກແບບໂດຍມີຈຸດປະສົງເພື່ອໃຫ້ແນ່ໃຈວ່າ ແຕ່ລະບົດຮຽນແມ່ນສາມາດຮຽນໃຫ້ຈົບໃນໄລຍະດຽວ ພາຍໃຕ້ສະພາບປົກກະຕິ. ການແບ່ງອົງປະກອບຂອງບົດຮຽນອອກເປັນສອງໄລຍະການຮຽນ ເຮັດໃຫ້ເກີດແນວໂນ້ມທີ່ຈະຍືດເວລາຂອງກິດຈະກຳອອກໄປໂດຍບໍ່ຈຳເປັນ. ຢ່າງໃດກໍຕາມ ທີ່ສຳຄັນກວ່ານັ້ນ ມັນສາມາດທຳລາຍປະສິດທິຜົນຂອງຂະບວນການຮຽນຮູ້ ໃນການສ້າງຈັງຫວະຂອງກິດຈະກຳເລົ່ານີ້,

ລະດັບຄວາມເຂັ້ມຂົ້ນທີ່ແຕກຕ່າງກັນ, ແຕ່ວ່າອົງປະກອບທັງໝົດນີ້ ຈະກ່ຽວພັນກັບຄຸນລັກສະນະທາງທັມອັນໜຶ່ງທີ່ເປັນສິ່ງສຳຄັນ.

ສຸດທ້າຍນີ້ ມີຄຳເວົ້າສອງສາມຄຳທີ່ຄວນກ່າວເຖິງຄວາມສຳພັນລະຫວ່າງຄູ ແລະ ນັກຮຽນ ໃນຂະບວນການສຶກສາ, ເຊິ່ງເປັນຫົວຂໍ້ທີ່ບັນຍາຍໄວ້ໃນ ຕອນທີ 9 ແລະ 10 ຂອງພາກທຳອິດ ແຕ່ແນ່ນອນວ່າໄດ້ເວົ້າເຖິງຕະຫຼອດໃນປຶ້ມເຫຼັ້ມນີ້. ຄູທຸກຄົນຄວນໃຊ້ຄວາມພະຍາຍາມຢ່າງເຕັມທີ່ ເພື່ອນຳພາຄວາມມຸມານະຂອງເດັກນ້ອຍ ໄປສູ່ຄຸນລັກສະນະທັງຫຼາຍທາງຈິດວິນຍານທີ່ພວກເຂົາກຳລັງຮຽນໃນລະດັບ 1 ໃຫ້ຊັດເຈນຂຶ້ນ. ສິ່ງເລົ່ານີ້ບໍ່ມີສິ່ງໃດສຳຄັນໄປກວ່າຄວາມຮັກ, ຄວາມຮັກທີ່ເປັນການສະທ້ອນຄວາມຮັກຂອງພຣະຜູ້ເປັນເຈົ້າ. ຄວາມຮັກນີ້ຈະສຳຜັດໄດ້ໃນສະພາບແວດລ້ອມທີ່ຄູສ້າງຂຶ້ນ - ໃນລະດັບຂອງການກະກຽມກ່ອນເລີ້ມຊັ້ນຮຽນ, ໃນການສວດມົນເມື່ອເລີ້ມຕົ້ນຮຽນຂອງແຕ່ລະຄົນ, ໃນພາສາທີ່ໃຊ້ໃນການໂຕ້ຕອບນັກຮຽນ, ແລະ ໃນທ່າທາງທີ່ນັກຮຽນໄດ້ຮັບກຳລັງໃຈ ແລະ ຍ້ອງຍໍໃນຄວາມກ້າວໜ້າທີ່ພວກເຂົາກຳລັງປະຕິບັດ.



# ບາງຫົວຂໍ້ຫຼັກຂອງການສຶກສາບາຮາຍ

ຈຸດປະສົງ

ເພື່ອຄົ້ນຫາບາງຫົວຂໍ້ຫຼັກ ແລະ ແນວຄິດຕ່າງໆ
ພົບໃນຄຳສອນຂອງບາຮາຍ ທີ່ກ່ຽວກັບການສຶກສາ
ແລະ ທົບທວນວ່າຈະແນວໃດໃຫ້ເດັກນ້ອຍມີສ່ວນຮ່ວມ
ໃນຊັ້ນຮຽນເຊິ່ງບຳລຸງລ້ຽງທາງສິນລະທັມໃຫ້ແກ່ພວກເຂົາ

## ຕອນທີ 1

ປື້ມເຫຼັ້ມທີສາມຂອງ ສະຖາບັນຣູຮີ ແນະນຳການປະຕິບັດການຮັບໃຊ້ທີ່ໜ້າສັນລະເສີນທີ່ສຸດແກ່ເຈົ້າ, ຄືການສອນຊັ້ນຮຽນຂອງບາຮາຍ ເພື່ອໃຫ້ການສຶກສາທາງຈິດວິນຍານແກ່ເດັກນ້ອຍ. ຫຼັງຈາກສຶກສາປື້ມເຫຼັ້ມນີ້ ແລະ ດຳເນີນຕາມພາກປະຕິບັດ, ເຈົ້າຕັດສິນໃຈທີ່ຈະອຸທິດເວລາ ແລະ ພາລະກຳລັງຂອງເຈົ້າແກ່ການປະຕິບັດການຮັບໃຊ້ນີ້, ເຈົ້າຈະຢູ່ໃນສະຖານະຂອງການເລີ້ມຕົ້ນຊັ້ນຮຽນທຸກໆອາທິດແກ່ກຸ່ມຄົນລຸ້ນເຍົາໃນຊຸມຊົນຂອງເຈົ້າ ເຂົ້າສູ່ລະດັບທຳອິດຂອງໂຄງການສຶກສາໄລຍະຫົກປີ. ແນ່ນອນວ່າຂະນະທີ່ເຈົ້າຈັດຊັ້ນຮຽນ, ເຈົ້າກໍສືບຕໍ່ກ້າວໜ້າໄປຕາມປື້ມເຫຼັ້ມຕ່າງໆຕາມລຳດັບ.

ການສອນເດັກນ້ອຍເປັນພຽງໜຶ່ງໃນຫຼາຍໆການກະທຳການຮັບໃຊ້ ເທິງເສັ້ນທາງທີ່ເຈົ້າກຳລັງກ້າວຍ່າງ. ແມ່ນວ່າເຈົ້າເລືອກທີ່ຈະບໍ່ມີສ່ວນຮ່ວມນຳການສອນເດັກ, ເຈົ້າຈະພົບວ່າການຮຽນຫຼັກສູດນີ້ມີຄຸນຄ່າ. ການມີສ່ວນຮ່ວມແກ່ຂະບວນການສ້າງຊຸມຊົນໃນໝູ່ບ້ານ, ເມືອງ ຫຼືລະແວກບ້ານຂອງເຈົ້າ, ມີຫຼາຍໂອກາດທີ່ເຈົ້າຈະມີປະຕິສຳພັນກັບເດັກນ້ອຍໆ ແລະ ຕາມປົກກະຕິຈະສາມາດດຶງເອົາຄວາມຢັ່ງຮູ້ຈາກການສຶກສາຄັ້ງນີ້. ຂໍໃຫ້ໃຊ້ເວລາໜ້ອຍໜຶ່ງ ເພື່ອທົບທວນເຖິງຄວາມຮູ້ສຶກທີ່ກ່າວຂ້າງລຸ່ມນີ້ ຈາກທັມມະສະພາຍຸຕິທັມແຫ່ງສາກົນ ກ່ຽວກັບເດັກນ້ອຍ:

> **"ເດັກນ້ອຍເປັນສົມບັດອັນລ້ຳຄ່າທີ່ສຸດ ທີ່ຊຸມຊົນສາມາດຄອບຄອງໄດ້, ເພາະໃນຕົວຂອງພວກເຂົາຄືຄຳໝັ້ນສັນຍາ ແລະ ຫຼັກປະກັນໃນອານາຄົດ. ພວກເຂົາເກີດເປັນເມັດພັນແຫ່ງລັກສະ ນະຂອງສັງຄົມໃນອະນາຄົດ ເຊິ່ງສ່ວນໃຫຍ່ຖືກຫຼໍ່ຫຼອມໂດຍສິ່ງທີ່ຜູ້ໃຫຍ່ໃນຊຸມຊົນ ໃຫ້ເດັກ ນ້ອຍປະຕິບັດ ຫຼື ບໍ່ໃຫ້ປະຕິບັດ. ພວກເຂົາເປັນຄວາມໄວ້ວາງໃຈທີ່ບໍ່ມີຊຸມຊົນໃດສາມາດລະ ເລີຍໄດ້ໂດຍບໍ່ຕ້ອງຮັບໂທດ. ຄວາມຮັກທັງໝົດທີ່ໂອບອ້ອມເດັກນ້ອຍ, ມາລະຍາດທີ່ປະຕິບັດຕໍ່ພວກເຂົາ, ຄຸນລັກສະນະຂອງຄວາມເອົາໃຈໃສ່ທີ່ສະແດງຕໍ່ພວກເຂົາ, ຈິດໃຈຂອງຜູ້ໃຫຍ່ທີ່ປະພຶດຕໍ່ພວກເຂົາ - ສິ່ງເລົ່ານີ້ລ້ວນເປັນສ່ວນສຳຄັນຂອງທັດສະນະຄະຕິທີ່ຈຳເປັນ."[1]**

ບົດຮຽນຕ່າງໆສຳລັບຊັ້ນຮຽນລະດັບທຳອິດ ໄດ້ນຳສະເໜີໃນພາກທີສອງຂອງປື້ມເຫຼັ້ມນີ້ແບບລຽບງ່າຍ. ແຕ່ລະບົດປະກອບດ້ວຍຊຸດຂອງກິດຈະກຳ ທີ່ເນັ້ນການພັດທະນາຄຸນລັກສະນະທາງຈິດວິນຍານ. ເດັກໆຖືກຊຸກຍູ້ໃຫ້ທ່ອງຈຳບົດອະທິຖານ ແລະ ພຣະວັດຈະນະ ຈາກຄຳສອນ, ຮັບຟັງເລື່ອງເລົ່າ ແລະ ການອະທິບາຍຄຳສອນ, ແຕ້ມຮູບ ແລະ ທາສີ, ຮ້ອງເພງ ແລະ ຫຼິ້ນ. ໃນການສະເໜີບົດຮຽນເລົ່ານີ້, ບໍ່ຈຳເປັນຕ້ອງມີຄວາມຮູ້ຫຼວງຫຼາຍໃນດ້ານການສຶກສາ. ບໍ່ວ່າເຈົ້າຈະຮັບການເຝິກອົບຮົມຄູຢ່າງເປັນທາງການຫຼືບໍ່, ຫຼັກສູດນີ້ຈະກຽມເຈົ້າໃຫ້ຈັດຊັ້ນຮຽນເດັກນ້ອຍຢ່າງມີປະສິດທິພາບ ແຕ່ລະອາທິດ. ໃນຄະນະທີ່ເຈົ້າຮຽນຫຼັກສູດຕ່າງໆທີ່ເປັນສາຂາແຍກຈາກເຫຼັ້ມ 3 ແລະໄດ້ຮັບປະສົບການ, ເຈົ້າຈະມີໂອກາດໃຫ້ຂໍ້ຄິດໃນປະເດັນຕ່າງໆ ທີ່ເປັນພື້ນຖານແກ່ການສຶກສາ. ຕອນເລີ້ມຕົ້ນເຈົ້າອາດຈະ

ຈັດຢ່າງໃກ້ຄຽງຕາມແຜນຂອງບົດຮຽນ ແຕ່ຈະສາມາດເພີ້ມຄຸນຄ່າຂອງບົດຮຽນ ດ້ວຍການເພີ້ມເນື້ອຫາທີ່ຕົວເຈົ້າເອງປະດິດຂຶ້ນຢ່າງຮອບຄອບ.

## ຕອນທີ 2

ຂໍໃຫ້ພວກເຮົາທົບທວນພຣະວັດຈະນະຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌ ແລະ ພຣະອັບດຸລບາຮາ , ເຊິ່ງຈະຊ່ວຍໃຫ້ເຈົ້າຮູ້ສຶກຊື່ນຊົມ ຕໍ່ການປະຕິບັດວຽກງານຂອງເຈົ້າໃນຖານະຄູສອນຊັ້ນຮຽນເດັກ. ເຈົ້າອາດປາດຖະໜາທີ່ຈະທ່ອງຈຳພຣະວັດຈະນະເລົ່ານີ້ ເພື່ອວ່າເຈົ້າຈະສາມາດຈົດຈຳຈົນຂຶ້ນໃຈໄດ້ເມື່ອເຈົ້າລົງມືສອນ.

**"ພອນຈົ່ງມີແດ່ຄູ ຜູ້ທີ່ລຸກຂຶ້ນເພື່ອສັ່ງສອນເດັກ, ແລະ ນຳພາປະຊາຊົນໄປສູ່ເສັ້ນທາງຂອງພຣະຜູ້ເປັນເຈົ້າ, ພຣະຜູ້ໃຫ້, ພຣະຜູ້ຊົງເປັນທີ່ຮັກ."[2]**

**"ໃນບັນດາການຮັບໃຊ້ທັງໝົດທີ່ຍິ່ງໃຫຍ່ທີ່ສຸດ ທີ່ມະນຸດຈະສາມາດກະທຳໄດ້ ເພື່ອຖວາຍຕໍ່ ພຣະຜູ້ເປັນເຈົ້າ ພຣະຜູ້ຊົງມະຫິທານຸພາບ ຄືການໃຫ້ການສຶກສາ ແລະ ການເຝິກອົບຮົມແກ່ເດັກນ້ອຍ ..."[3]**

**"ດັ່ງທີ່ກ່າວໄວ້ໃນພຣະທັມສະຫວັນອັນແຈ່ມແຈ້ງ, ການສອນເດັກເປັນສິ່ງຈຳເປັນ ແລະ ຕ້ອງກະທຳ. ຜົນທີ່ຕາມມາກໍ່ຄື ການທີ່ຄູເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ພຣະຜູ້ຊົງເປັນນາຍ, ເພາະພວກເຂົາໄດ້ລຸກຂຶ້ນເພື່ອປະຕິບັດພາລະກິດນີ້ ເຊິ່ງເປັນເໝືອນການປະຕິບັດບູຊາ. ດັ່ງນັ້ນ ເຈົ້າຈົ່ງຖວາຍການສັນລະເສີນໃນທຸກລົມຫາຍໃຈເຂົ້າອອກ, ເພາະເຈົ້າກຳລັງໃຫ້ການສຶກສາແກ່ບຸດຫຼານຂອງເຈົ້າໃນທາງສິນລະທັມ."[4]**

1. ຂະນະທີ່ເຈົ້າທົບທວນຄວາມສຳຄັນຂອງຖ້ອຍຄຳເລົ່ານີ້, ຂໍໃຫ້ຕື່ມບ່ອນວ່າງໃນປະໂຫຍກລຸ່ມນີ້.
   ກ. ________ ຈົ່ງມີແດ່ _____ ຜູ້ທີ່ລຸກຂຶ້ນເພື່ອ __________ ເດັກ, ແລະ ________ ປະຊາຊົນໄປສູ່ ________ ຂອງພຣະຜູ້ເປັນເຈົ້າ, ___________, ________________.
   ຂ. ໃນບັນດາ ____________ ທັງໝົດທີ່ ____________ ທີ່ມະນຸດຈະສາມາດກະທຳໄດ້ເພື່ອຖວາຍຕໍ່ ພຣະຜູ້ເປັນເຈົ້າ ພຣະຜູ້ຊົງມະຫິທານຸພາບ ຄື ____________________ ແລະ ______________ ແກ່ເດັກນ້ອຍ.
   ຄ. ດັ່ງທີ່ກ່າວໄວ້ໃນພຣະທັມສະຫວັນອັນແຈ່ມແຈ້ງ, ການສອນເດັກ ____________ ແລະ ______________. ຜົນທີ່ຕາມມາກໍ່ຄື __________ ເປັນ ___________ ຂອງພຣະຜູ້ເປັນເຈົ້າ ພຣະຜູ້ຊົງເປັນນາຍ, ເພາະພວກເຂົາໄດ້ _________ ເພື່ອປະຕິບັດພາລະກິດນີ້

ເຊິ່ງເປັນເໝືອນ ______________. ດັ່ງນັ້ນ ເຈົ້າຈຶ່ງຖວາຍ ____________ ໃນທຸກລົມຫາຍໃຈເຂົ້າອອກ, ເພາະເຈົ້າກຳລັງໃຫ້ການສຶກສາ ____________ ຂອງເຈົ້າ ________ ______________.

2. ບົນພື້ນຖານຂອງສິ່ງທີ່ພວກເຮົາໄດ້ສຶກສາມາຈົນເຖິງຕອນນີ້, ຂໍໃຫ້ຕັດສິນວ່າຂໍ້ຄວາມໃດຕໍ່ໄປນີ້ຖືກຕ້ອງ:

_____ ພໍ່ແມ່, ຄູ, ແລະ ຊຸມຊົນ ທັງໝົດຕ່າງກໍມີສ່ວນຮັບຜິດຊອບຕໍ່ການສຶກສາທາງຈິດວິນຍານແກ່ເດັກນ້ອຍ.

_____ ທຸກໆຊຸມຊົນມີພາລະໜ້າທີ່ໃນການສ້າງຊັ້ນຮຽນ ເພື່ອການສຶກສາທາງຈິດວິນຍານແກ່ເດັກນ້ອຍ.

_____ ການສອນເດັກຖືວ່າເປັນການປະຕິບັດບູຊາ.

_____ ເນື່ອງຈາກເດັກນ້ອຍໄປໂຮງຮຽນ, ຊຸມຊົນບໍ່ຈຳເປັນຕ້ອງຈັດຊັ້ນຮຽນເພື່ອການສຶກສາທາງຈິດວິນຍານແກ່ພວກເຂົາ.

_____ ຄູຂອງເດັກໆກຳລັງບຳລຸງລ້ຽງ ທາງຈິດວິນຍານຂອງເດັກຊາຍ ແລະເດັກຍິງໃຫ້ເຕີບໂຕ.

## ຕອນທີ 3

ມີຫຼາຍຂໍ້ຄວາມໃນຄຳສອນຂອງສາສະໜາ ທີ່ກ່ຽວກັບການສຶກສາ. ພວກເຮົາຈະສຶກສາບາງສ່ວນໃນຫຼັກສູດນີ້ ແລະ ໃນສາຂາເລົ່ານີ້ທີ່ແຕກອອກໄປຈາກຫຼັກສູດ. ເພື່ອເປັນການເລີ້ມຕົ້ນ ຂໍໃຫ້ອ່ານຖ້ອຍຄຳຂອງ ພຣະບາຮາອຸລລາຫ໌ ດັ່ງນີ້:

**"ຈົ່ງພິຈາລະນາມະນຸດເປັນປະດຸດເໝືອງ ທີ່ອຸດົມດ້ວຍອັນຍະມະນີທີ່ປະເມີນຄ່າບໍ່ໄດ້. ການສຶກສາເທົ່ານັ້ນ ທີ່ສາມາດເປີດເຜີຍສົມບັດລ້ຳຄ່ານີ້ອອກມາ, ແລະ ຊ່ວຍໃຫ້ມະນຸດຊາດໄດ້ຮັບປະໂຫຍດຈາກສົມບັດນີ້."**[5]

ການເຮັດໃຫ້ປະໂຫຍກຂ້າງລຸ່ມສົມບູນ ຈະຊ່ວຍໃຫ້ເຈົ້າໄຕ່ຕອງຄວາມໝາຍທີ່ເລິກເຊິ່ງຂອງຄຳກ່າວນີ້ ແລະ ຫາກເຈົ້າຍັງບໍ່ໄດ້ທ່ອງຈຳ ກໍຂໍໃຫ້ຈົດຈຳມັນໄວ້.

ກ. ມະນຸດເປັນປະດຸດ _________ ທີ່ອຸດົມດ້ວຍອັນຍະມະນີ _____________ ບໍ່ໄດ້.

ຂ. ____________ ເທົ່ານັ້ນ ທີ່ສາມາດ _________ ສົມບັດລ້ຳຄ່ານີ້ອອກມາ, ແລະ ຊ່ວຍໃຫ້ມະນຸດຊາດ ____________ ຈາກສົມບັດນີ້.

ຄວາມໝາຍຂອງຖ້ອຍຄຳຂອງ ພຣະບາຮາອຸລລາຫ໌ ໃນດ້ານການສຶກສານັ້ນກວ້າງໃຫຍ່ໄພສານ, ແລະ ມີຈຳນວນຖ້ອຍຄຳທີ່ຈະກ່າວເຖິງ ໃນຕອນຕໍ່ໆໄປ. ສຳລັບຕອນນີ້ ຂໍໃຫ້ພວກເຮົາພິຈາລະນາແນວຄິດດຽວ. ສົມມຸດວ່າເຈົ້າໄດ້ຮັບໂຖນ້ຳທີ່ວ່າງເປົ່າຊາວອັນ ແລະ ເຈົ້າຖືກຂໍໃຫ້ຕື່ມນ້ຳໃສ່ໂຖນັ້ນເທື່ອລະບ່ວງ. ຖ້າຫາກວ່າການສຶກສາຖືກເຮັດໃຫ້ຄິດໃນລັກສະນະນີ້ - ຄືການປ້ອນຂໍ້ມູນເປັນຄຳໃຫ້ນັກຮຽນ - ມັນຈະກາຍເປັນວຽກທີ່ໜ້າເບື່ອແມ່ນບໍ? ຕໍ່ໄປລອງນຶກພາບເໝືອງທີ່ເຕັມໄປດ້ວຍອັນຍະມະນີທີ່ເຊື່ອງຊ້ອນຢູ່ ເຊິ່ງພ້ອມທີ່ຈະຖືກຄົ້ນພົບ ແລະ ຖືກນຳໄປສ່ອງແສງ. ເຈົ້າບໍ່ເຫັນດີເລີຍບໍວ່າ ການສອນທີ່ຖືກມອງວ່າເປັນການຂຸດອັນຍະມະນີນັ້ນ ເປັນອາຊີບທີ່ມີຄວາມສຸກທັນສາທີ່ສຸດ?

## ຕອນທີ 4

ຂໍໃຫ້ພວກເຮົາຄິດເພີ່ມເຕີມກ່ຽວກັບພຣະວັດຈະນະ. ເຮົາສາມາດເພີ່ມຄຸນລັກສະນະຕ່າງໆເຊັ່ນຄວາມຮັກ, ວາຈາສັດຊື່, ຄວາມຍຸຕິທັມ, ຄວາມເອື້ອເຟື້ອ, ຄວາມແນ່ວແນ່ໝັ້ນຄົງ ແລະ ຄວາມຈິງໃຈທ່າມກາງອັນຍະມະນີທີ່ ພຣະບາຮາອຸລລາຫ໌ ກ່າວເຖິງໄດ້ບໍ? ກ່ຽວກັບພະລັງຂອງຈິດໃຈມະນຸດນັ້ນ, ມັນມີພະລັງ ເພື່ອການຄົ້ນພົບຄວາມລຶກລັບຂອງທັມມະຊາດ, ເພື່ອສ້າງສັນຜົນງານສິນລະປະທີ່ສວຍງາມ, ເພື່ອສະແດງຄວາມຄິດອັນສູງສົ່ງ ແລະ ເພື່ອການຍົກລະດັບແນວຄວາມຄິດບໍ? ເດັກນ້ອຍທີ່ເຈົ້າຈະສອນອາດມີຄຸນລັກສະນະທັງໝົດເລົ່ານີ້. ເຈົ້າສາມາດເວົ້າເຖິງຄຸນລັກສະນະອື່ນໄດ້ບໍ? ຈະມີເດັກນ້ອຍຄົນໃດແດ່ ທີ່ຖືກພັດທະນາໄດ້ໂດຍບໍ່ມີການສຶກສາທີ່ເໝາະສົມ? ໃນການທົບທວນຄຳຖາມເລົ່ານີ້, ຂໍໃຫ້ຈົດຈຳການປຽບທຽບທີ່ໃຊ້ໃນປຶ້ມເຫຼັ້ມ 1 ວ່າ ຕະກຽງມີສັກກະຍະພາບໃຫ້ແສງສະຫວ່າງ, ແຕ່ຈະກະທຳເຊັ່ນນີ້ໄດ້ຕ້ອງຖືກຈູດຂຶ້ນ.

__________________________________________________

__________________________________________________

__________________________________________________

__________________________________________________

__________________________________________________

__________________________________________________

## ຕອນທີ 5

ເພື່ອພັດທະນາສັກກະຍາພາບຂອງເຮົາ, ພວກເຮົາທຸກຄົນຕ້ອງຜ່ານລຳດັບຂັ້ນຕ່າງໆ ຂອງຂະບວນການສຶກສາ, ເຊິ່ງພວກເຮົາສາມາດເວົ້າໄດ້ວ່າ ມັນຕິແຜ່ໄປຈົນສິ້ນຊີວິດຂອງພວກເຮົາ. ພວກເຮົາໄດ້ສຶກສາຢູ່ບ້ານ, ຢູ່ໂຮງຮຽນ, ຢູ່ບ່ອນເຮັດວຽກ, ແລະ ພາຍໃນຊຸມຊົນ. ຄຳຖາມໜຶ່ງທີ່ເຮົາຄວນ

ຖາມຕົນເອງຄື ແມ່ນຫຍັງຄວນເປັນຈຸດສຸມຂອງຊັ້ນຮຽນບາຮາຍສຳລັບເດັກນ້ອຍ, ໂດຍສະເພາະໃນລະດັບທຳອິດ ທີ່ເປັນສ່ວນໜຶ່ງຂອງຂະບວນການສຶກສາຕະຫຼອດຊີວິດນີ້? ຄຳແນະນຳບາງປະການຂອງພຣະອັບດຸລບາຮາ ຈະຊ່ວຍເຮົາໃນການຫາຄຳຕອບ:

> **"ເຈົ້າຄວນພິຈາລະນາຄຳຖາມກ່ຽວກັບອຸປະນິໄສທີ່ດີນັ້ນ ຄືອັນດັບທຳອິດທີ່ສຳຄັນ. ບິດາມານດາທຸກຄົນມີໜ້າທີ່ແນະນຳບຸດຂອງຕົນເປັນໄລຍະເວລາດົນ ແລະ ນຳທາງພວກເຂົາໄປສູ່ສິ່ງເລົ່ານັ້ນເຊິ່ງເປັນສິ່ງທີ່ນຳພາໄປເຖິງກຽດອັນບໍ່ຮູ້ສິ້ນ."[6]**

> **"ການອົບຮົມທາງສິນລະທັມ ແລະ ຄວາມປະພຶດທີ່ດີ ມີຄວາມສຳຄັນຫຼາຍກວ່າການຮຽນໜັງສື. ເດັກທີ່ສະອາດ, ອ່ອນໂຍນ, ອຸປະນິໄສດີ, ຄວາມປະພຶດດີ - ແມ່ນວ່າເຂົາຈະອະວິຊາ - ຈະດີກວ່າການເລືອກເດັກທີ່ຫຍາບຄາຍ, ສົກກະປົກ, ມີນິໄສບໍ່ດີ, ແຕ່ມີຄວາມຮອບຮູ້ຢ່າງເລິກເຊິ່ງໃນດ້ານວິທະຍາສາດ ແລະ ສິນລະປະ. ເຫດຜົນກໍຄືວ່າ ເດັກທີ່ປະພຶດຕົນດີ ແມ່ນວ່າເຂົາຈະອະວິຊາ ກໍເປັນປະໂຫຍດແກ່ຜູ້ອື່ນ, ໃນຂະນະທີ່ເດັກນິໄສບໍ່ດີ ປະພຶດຕົນບໍ່ດີ ກໍເປັນຄວາມເສຍຫາຍ ແລະ ເປັນອັນຕະລາຍຕໍ່ຜູ້ອື່ນ ແມ່ນວ່າເຂົາຈະໄດ້ຮຽນຮູ້ກໍ່ຕາມ. ຢ່າງໃດກໍຕາມ ຫາກເດັກນ້ອຍໄດ້ຮັບການເຝິກຝົນໃຫ້ເປັນທັງຜູ້ຮຽນຮູ້ ແລະ ຄົນດີ, ຜົນທີ່ໄດ້ຄືແສງສະຫວ່າງບົນຄວາມສະຫວ່າງສະໄຫວ."[7]**

> **"ໃນເວລາທີ່ຈະມາເຖິງ, ສິນລະທັມ ຈະເສື່ອມສະຫຼາຍຢ່າງໜັກ. ຈຳເປັນຢ່າງຍິ່ງທີ່ຈະຕ້ອງລ້ຽງດູເດັກນ້ອຍໃນແບບຂອງບາຮາຍ, ເພື່ອພວກເຂົາຈະພົບຄວາມສຸກ ທັງໃນໂລກນີ້ແລະໂລກໜ້າ. ຫາກບໍ່ເປັນເຊັ່ນນັ້ນ, ພວກເຂົາຈະຖືກຫ້ອມລ້ອມດ້ວຍຄວາມໂສກເສົ້າ ແລະ ບັນຫາ, ເພາະຄວາມສຸກຂອງມະນຸດນັ້ນ ຕັ້ງຢູ່ບົນພຶດຕິກຳທາງຈິດວິນຍານ."[8]**

ຂໍ້ຄວາມເລົ່ານີ້ ເຮັດໃຫ້ສະຖາບັນຣູຮີມຸ່ງເນັ້ນໄປທີ່ການປັບແຕ່ງອຸປະນິໄສເດັກນ້ອຍ ໃນຊັ້ນຮຽນລະດັບທຳອິດຂອງໂຄງການສຶກສາທາງຈິດວິນຍານ. ກ່ອນທີ່ພວກເຮົາຈະຄົ້ນຫາຈຸດປະສົງນີ້, ເຈົ້າອາດຕ້ອງການປຶກສາກັນໃນກຸ່ມຂອງເຈົ້າວ່າ ເຈົ້າເຂົ້າໃຈຫຍັງແດ່ກ່ຽວກັບ "ອຸປະນິໄສດີ" ແລະ ຂໍໃຫ້ຂຽນຂໍ້ສະຫຼຸບບາງຢ່າງລົງໃສ່ບ່ອນວ່າງລຸ່ມນີ້.

________________________________________

________________________________________

________________________________________

________________________________________

________________________________________

**ຕອນທີ 6**

ແນວຄິດໜຶ່ງເຂົ້າມາໃນຫົວທັນທີ ເມື່ອນຶກເຖິງອຸປະນິໃສທີ່ດີອັນໜຶ່ງແມ່ນ "ຄຸນນະທັມ". ມີຫຼາຍໆໂຄງການໃນໂລກທີ່ມີຄຸນຄ່າ ເຊິ່ງພະຍາຍາມພັດທະນາຄຸນນະທັມຊຸດໃດໜຶ່ງ ຫຼື ອື່ນໆ ແກ່ນັກຮຽນ. ໂຄງການເລົ່ານີ້ໃຊ້ຄຳວ່າ "ຄຸນນະທັມ" ເພື່ອອະທິບາຍກິລິຍາທ່າທາງຂອງມະນຸດທີ່ໜ້າຍ້ອງຍໍຊົມເຊີຍ. ບາງຄົນມີນິໃສຕົງຕໍ່ເວລາ. ຄົນອື່ນມີກິລິຍາທ່າທາງເຊັ່ນ ຄວາມເຫັນອົກເຫັນໃຈຜູ້ຍາກໄຮ້. ແຕ່ບາງຄົນກໍ່ບົ່ງບອກທັກສະ ແລະ ຄວາມສາມາດສະເພາະ ເຊັ່ນ ຄວາມສາມາດໃນການເວົ້າຢ່າງຊັດເຈນ. ແຕ່ມີຄຸນນະທັມປະເພດໜຶ່ງທີ່ນອກເໜືອຈາກທັງໝົດນີ້ - ຍົກຕົວຢ່າງສອງສາມຕົວຢ່າງຄື ອາຈາສັດຊື່, ຄວາມເອື້ອເຟື້ອ, ຄວາມນອບນ້ອມ, ຄວາມຮັກ - ທີ່ເຮົາເອີ້ນວ່າ "ຄຸນລັກສະນະທາງຈິດວິນຍານ". ເຈົ້າກຳລັງຖືກຂໍໃຫ້ທຸ້ມເທຄວາມພະຍາຍາມໃນຊັ້ນຮຽນລະດັບທຳອິດ ເພື່ອການພັດທະນາຄຸນລັກສະນະພື້ນຖານເລົ່ານີ້ແກ່ຈິດວິນຍານມະນຸດ. ນີ້ບໍ່ໄດ້ໝາຍຄວາມວ່າ ໃນການປະຕິສຳພັນຂອງເຈົ້າກັບເດັກນ້ອຍ, ເຈົ້າຈະບໍ່ສົນໃຈຄຸນນະທັມອື່ນໆ. ພຽງແຕ່ວ່າ ບົດຮຽນທີ່ເຈົ້າສອນຈະກ່ຽວຂ້ອງກັບຄຸນສົມບັດທີ່ຈຳເປັນຕໍ່ການເດີນທາງອັນນິລັນດອນ ຂອງຈິດວິນຍານໄປສູ່ພຣະຜູ້ເປັນເຈົ້າ. ຈົ່ງພິຈາລະນາວ່າການຕົງຕໍ່ເວລາກໍເປັນຄຸນນະທັມຢ່າງໜຶ່ງ ໃຫ້ຊື່ນຊົມປະເພດທີ່ແຕກຕ່າງນີ້. ບາງຄົນທີ່ຕົງຕໍ່ເວລາກໍອາດຈະໃຈແຄບ ແລະ ອຳມະຫິດ. ຢ່າງໃດກໍຕາມ ຄວາມອຳມະຫິດ ແລະ ຄວາມໃຈແຄບ, ບໍ່ສາມາດເປັນຄຸນລັກສະນະໜຶ່ງຂອງຜູ້ທີ່ໄດ້ຮັບຄຸນສົມບັດສະຫວັນ ຄື ອາຈາສັດຊື່ ແລະ ຄວາມຈິງໃຈ, ຄວາມຮັກ ແລະ ຄວາມຍຸຕິທັມ, ຄວາມເອື້ອເຟື້ອ ແລະ ການໃຫ້ອະໄພ. ແນ່ນອນວ່າ ສຳລັບຄົນທີ່ຕົງຕໍ່ເວລາກໍ່ເປັນທີ່ປາດຖະໜາຢ່າງຍິ່ງເຊັ່ນກັນ.

ເຈົ້າໄດ້ຮັບແນວຄວາມຄິດຄຸນສົມບັດບາງຢ່າງ ທີ່ວິນຍານຈະຕ້ອງໄດ້ຮັບໃນຊີວິດນີ້ ໃນພາກສາມຂອງປື້ມເຫຼັ້ມ 1. ອາດເປັນໂອກາດທີ່ເຈົ້າຈະກັບໄປເບິ່ງພາກນັ້ນ ແລ້ວທົບທວນຕອນທີ່ກ່ຽວຂ້ອງ. ຈາກນັ້ນໃຫ້ນຶກເຖິງສິ່ງທີ່ເຈົ້າສຶກສາໃນບໍລິບົດ ຄວາມສຳຄັນຂອງການພັດທະນາຄຸນສົມບັດທາງຈິດວິນຍານຕັ້ງແຕ່ຊ່ວງປີທີ່ເປັນໄມ້ອ່ອນຂອງໄວເດັກ. ບ່ອນວ່າງຂ້າງລຸ່ມນີ້ ແມ່ນໃຫ້ຂຽນການທົບທວນຂອງເຈົ້າ.

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 7

ໃນການຊ່ວຍໃຫ້ເດັກນ້ອຍສະແດງອຸປະນິໄສທີ່ໜ້າສັນລະເສີນ, ຕາມທຳມະດາເຈົ້າຈະຕ້ອງຄຳນຶງເຖິງຄວາມປະພຶດຂອງພວກເຂົາ, ເພາະຄຸນນະທັມຕ່າງໆຈຳເປັນຕ້ອງຖືກນຳໄປປະຕິບັດ. ໃນຖານະຄູ ເຈົ້າຈະເສີມສ້າງພຶດຕິກຳທີ່ດີໃນຫຼາຍໆດ້ານ. ການສັນລະເສີນ, ການຊຸກຍູ້, ການຕັກເຕືອນ, ການອະທິບາຍ, ການໃຫ້ລາງວັນ - ແຕ່ລະຢ່າງເລົ່ານີ້ເຈົ້າຈະໃຊ້ເວລາ ແລະ ຕິດຕາມຄວາມກ້າວໜ້າຂອງກຸ່ມນ້ອຍໆຂອງຄົນລຸ້ນເຍົາອີກຄັ້ງ. ໃນບາງໂອກາດ ການສະແດງຄວາມບໍ່ພໍໃຈພຽງເລັກນ້ອຍຈາກເຈົ້າ ຈະເປັນການກີດກັ້ນຄວາມປະພຶດທີ່ບໍ່ເໝາະສົມ ເຊິ່ງສະແດງອອກໂດຍເດັກນ້ອຍຄົນໜຶ່ງ ຫຼື ເດັກຄົນອື່ນ - ສິ່ງນີ້ຈະເກີດຂຶ້ນໄດ້ ເມື່ອເຈົ້າໄດ້ສ້າງສາຍສຳພັນແຫ່ງຄວາມຮັກອັນເລິກເຊິ່ງ ແລະ ຄວາມມັກກັບນັກຮຽນໃນຊັ້ນຮຽນຂອງເຈົ້າ. ພວກເຮົາຈະຄົ້ນຫາບາງບັນຫາທີ່ກ່ຽວຂ້ອງກັບວິທີທີ່ເຈົ້າຈະໂຕ້ຕອບກັບນັກຮຽນຂອງເຈົ້າໄວ້ໃນຕອນຕໍ່ໆໄປ. ສຳລັບຈຸດປະສົງຂອງການສົນທະນາຂອງພວກເຮົາໃນປັດຈຸບັນ, ໃຫ້ພວກເຮົາພິຈາລະນາຕົວຢ່າງໜຶ່ງ. ໃນການປະຕິສຳພັນຂອງເຈົ້າກັບເດັກນ້ອຍ ເຈົ້າຈະຕ້ອງພະຍາຍາມປູກຝັງທັດສະນະຄະຕິ ການແບ່ງປັນ ແລະ ນິໄສທີ່ສອດຄ່ອງກັນໃຫ້ແກ່ພວກເຂົາ. ມີສິ່ງໃດແດ່ທີ່ເຈົ້າສາມາດເວົ້າ ແລະ ເຮັດໃດໄດ້ແດ່? ຂໍໃຫ້ສົນທະນາຄຳຖາມນີ້ກັບຄົນອື່ນໆໃນກຸ່ມຂອງເຈົ້າ.

ຕອນນີ້ໃຫ້ພິຈາລະນາຄຳຖາມຕໍ່ໄປນີ້: ກ່າວວ່າ ໃນຍາມຂາດແຄນ, ຖ້າບໍ່ແມ່ນການສະແດງອອກເຖິງຄວາມເອື້ອເຟື້ອ ຄຸນລັກສະນະທາງຈິດວິນຍານທີ່ສະທ້ອນຄຸນລັກສະນະຂອງ ພຣະຜູ້ເປັນເຈົ້າພຣະຜູ້ຊົງເອື້ອເຟື້ອ ພຣະຜູ້ຊົງກະລຸນາ, ການແບ່ງປັນຈະເປັນລັກສະນະໜຶ່ງຂອງພຶດຕິກຳທີ່ຍືນຍົງບໍ? ແນ່ນອນຄຳຕອບຄື ໃນຂະນະທີ່ການປັບປຸງພຶດຕິກຳມີທີ່ມາທີ່ໄປ, ຈຸດມຸ່ງໝາຍທີ່ແທ້ຈິງຄື ການພັດທະນາຄຸນສົມບັດຕ່າງໆທາງຈິດວິນຍານ ເຊິ່ງເປັນສັກກະຍາພາບຂອງຈິດວິນຍານມະນຸດ, ຈະຕ້ອງໄດ້ຮັບການບຳລຸງລ້ຽງດ້ວຍຄວາມຮູ້ຂອງພຣະຜູ້ເປັນເຈົ້າ ແລະ ຄວາມຮັກຂອງພຣະຜູ້ເປັນເຈົ້າ. ພຣະອັບດຸລບາຮາ ແນະນຳພວກເຮົາວ່າ:

**"ທ່ານຂຽນເຖິງເດັກນ້ອຍວ່າ: ຕັ້ງແຕ່ເລີ້ມຕົ້ນ ເດັກນ້ອຍຕ້ອງໄດ້ຮັບການສຶກສາຈາກສະຫວັນ ແລະ ຕ້ອງໄດ້ຮັບການຕັກເຕືອນຢ່າງຕໍ່ເນື່ອງ ໃຫ້ລະລຶກເຖິງພຣະຜູ້ເປັນເຈົ້າຂອງພວກເຂົາ. ຂໍໃຫ້ຄວາມຮັກຂອງພຣະຜູ້ເປັນເຈົ້າ ກະຈາຍເລິກທີ່ສຸດໃນການດຳລົງຢູ່ຂອງພວກເຂົາ, ປະສົມປະສານກັບນ້ຳນົມແມ່ຂອງພວກເຂົາ."[9]**

**"ຕັ້ງແຕ່ແລກເກີດ, ເດັກຕ້ອງໄດ້ຖືກລ້ຽງດູດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າ ແລະ ຖືກບຳລຸງລ້ຽງໃນອ້ອມແຂນແຫ່ງຄວາມຮູ້ຂອງພຣະອົງ ເພື່ອວ່າພວກເຂົາຈະໄດ້ສ່ອງແສງ, ເຕີບໂຕທາງດ້ານຈິດວິນຍານ, ເຕັມປ່ຽມໄປດ້ວຍຄວາມຮອບຮູ້ ແລະ ພູມປັນຍາ, ແລະ ຮັບເອົາລັກສະນະພິເສດຈາກເລົ່າເທບທິດາສະຫວັນ."[10]**

**"ຄຳຖາມຂອງທ່ານ ກ່ຽວກັບການໃຫ້ການສຶກສາແກ່ເດັກ: ເປັນໜ້າທີ່ຂອງທ່ານທີ່ຈະບຳລຸງລ້ຽງພວກເຂົາ ໃນອ້ອມອົກແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ, ແລະ ກະຕຸ້ນເຕືອນພວກເຂົາໄປສູ່ສິ່ງຕ່າງໆໃນທາງທັມມະ, ເພື່ອວ່າພວກເຂົາຈະຫັນໜ້າໄປຍັງພຣະຜູ້ເປັນເຈົ້າ; ເພື່ອວ່າວິຖີຂອງພວກເຂົາຈະສອດຄ່ອງກັບກົດແຫ່ງຄວາມປະພຶດອັນດີງາມ ແລະ ບຸກຄະລິກກະພາບຂອງພວກເຂົາຈະບໍ່ເປັນຮອງຜູ້ໃດ; ເພື່ອວ່າພວກເຂົາຈະສ້າງຄຸນຄວາມດີ ແລະ ຄຸນລັກສະນະອັນຄວນແກ່ການສັນລະເສີນທັງຫຼາຍຂອງມະນຸດ..."[11]**

ເຈົ້າອາດປາດທະໜາທີ່ຈະທ່ອງຈຳຢ່າງໜ້ອຍແມ່ນໜຶ່ງໃນ ພຣະວັດຈະນະເລົ່ານີ້.

## ຕອນທີ 8

ບົດຮຽນຕ່າງໆທີ່ເຈົ້າສອນເດັກໃນຊັ້ນຮຽນລະດັບທີ 1, ໂດຍທົ່ວໄປແລ້ວແມ່ນອາຍຸ 5 ຫຼື 6 ປີ ໄດ້ຮັບການອະທິບາຍລະອຽດດ້ວຍແນວຄວາມຄິດ ຈົນມາຮອດນີ້ພວກເຮົາໄດ້ຄົ້ນຫາໃນຄວາມຄິດແລ້ວ. ຕອນນີ້ມັນອາດຈະເປັນປະໂຫຍດສຳລັບເຈົ້າທີ່ຈະເປີດປຶ້ມໄປພາກທີສອງ ແລະ ອ່ານຜ່ານໆສອງຫຼືສາມບົດຮຽນ, ໂດຍໃຫ້ຄວາມສົນໃຈເປັນພິເສດກັບບົດຮຽນເລີ່ມຕົ້ນ. ຈາກນັ້ນ ເຈົ້າຈະມີໂອກາດວິເຄາະຢ່າງລະອຽດບົດຮຽນທັງໝົດຊາວສີ່ບົດ. ສຳລັບຕອນນີ້ ເຈົ້າຄວນໃຫ້ຄວາມຄິດກ່ຽວກັບອົງປະກອບອັນຫຼາກຫຼາຍທີ່ລະບຸໄວ້ຂ້າງລຸ່ມ, ໂດຍພິຈາລະນາຈາກການອະພິປາຍໃນຕອນທີ່ຜ່ານມາ.

ແຕ່ລະຫ້ອງຮຽນເລີ່ມຕົ້ນດ້ວຍການອະທິດຖານໂດຍເຈົ້າ ແລະເດັກນ້ອຍບາງຄົນ. ທັນທີຫຼັງຈາກນັ້ນ, ເດັກນ້ອຍຈະໃຊ້ເວລາເພື່ອຈື່ຈຳບົດອະທິຖານບົດໜຶ່ງ ດ້ວຍການຊ່ວຍເຫຼືອຂອງເຈົ້າ. ການອະທິຖານແມ່ນຈຳເປັນຕໍ່ການພັດທະນາຂອງເດັກນ້ອຍຜູ້ທີ່ຈະຖືກ "ດູແລໃນອ້ອມອົກແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ". ພຣະອັບດຸລບາຮາ ບອກພວກເຮົາວ່າ "ເດັກນ້ອຍແມ່ນແຕ່ເປັນຕົ້ນໄມ້ອ່ອນ, ແລະການສອນເຂົາເຈົ້າອະທິຖານແມ່ນຄືກັບການປ່ອຍໃຫ້ຝົນຕົກໃສ່ພວກເຂົາ, ເພື່ອພວກເຂົາຈະເຕີບໂຕຢ່າງອ່ອນໂຍນແລະສົດຊື່ນ, ແລະສາຍລົມອັນນິ້ມນວນແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ອາດຈະພັດເຂົ້າມາເຖິງພວກເຂົາ, ເຮັດໃຫ້ພວກເຂົາສັ່ນໄຫວດ້ວຍຄວາມສຸກ." ຂໍໃຫ້ໃຊ້ເວລາໜ້ອຍໜຶ່ງເພື່ອໄຕ່ຕອງວ່າອົງປະກອບຂອງຊັ້ນຮຽນນີ້ ມີສ່ວນສະໜັບສະໜູນຈຸດປະສົງໂດຍລວມ ຂອງການບຳລຸງລ້ຽງອຸປະນິໄສທີ່ດີໃນຕົວເດັກນ້ອຍແນວໃດ. ພະຍາຍາມບອກຄວາມຄິດຂອງເຈົ້າມາສອງສາມປະໂຫຍກ. ບາງຂໍ້ຄວາມຂອງພຣະວັດຈະນະຂ້າງລຸ່ມນີ້ຈາກເຫຼັ້ມ 1 ຈະຊ່ວຍເຈົ້າ:

**"ການບັນລຸທີ່ຍິ່ງໃຫຍ່ທີ່ສຸດ ຫຼື ພາວະທີ່ຫອມຫວານທີ່ສຸດບໍ່ແມ່ນສິ່ງອື່ນໃດ ນອກຈາກການໄດ້ສົນທະນາກັບພຣະຜູ້ເປັນເຈົ້າ. ການສົນທະນານີ້ກໍ່ໃຫ້ເກີດຄວາມຜ່ອງໃສໃນຈິດວິນຍານ, ການ**

**ມີສະຕິ ແລະ ຄວາມສຸກໃຈ, ກໍ່ໃຫ້ເກີດພະລັງດຶງດູດໃໝ່ໆຈາກອານາຈັກສະຫວັນ, ແລະກໍ່ໃຫ້ເກີດຄວາມຕື່ນຕົວຕໍ່ພູມປັນຍາທີ່ສູງຂຶ້ນ."[12]**

**"ຈົ່ງຂັບຂານ, ໂອ ຄົນຮັບໃຊ້ຂອງເຮົາ, ພຣະວັດຈະນະຂອງພຣະຜູ້ເປັນເຈົ້າທີ່ເຈົ້າໄດ້ຮັບ, ແມ່ນໄດ້ຂັບຂານໂດຍຜູ້ທີ່ເຂົ້າໃກ້ພຣະອົງ, ເພື່ອໃຫ້ຄວາມຫອມຫວານແຫ່ງທຳນອງຂອງເຈົ້າຈູດໄຟຂຶ້ນໃນຈິດວິນຍານຂອງເຈົ້າເອງ ແລະ ດຶງດູດຫົວໃຈຂອງມວນມະນຸດ."[13]**

**"ຈິດວິນຍານມີອິດທິພົນ; ການອະທິດຖານມີຜົນທາງຈິດວິນຍານ."[14]**

**"ເປັນການສົມຄວນທີ່ຄົນຮັບໃຊ້ຈະສວດອະທິດຖານ ແລະ ຂໍຄວາມຊ່ວຍເຫຼືອຈາກພຣະຜູ້ ເປັນເຈົ້າ, ແລະວິງວອນ ແລະ ຮ້ອງຂໍຄວາມຊ່ວຍເຫຼືອຈາກພຣະອົງ. ສິ່ງນີ້ແມ່ນລຳດັບ ຂັ້ນຂອງການຮັບໃຊ້, ແລະ ພຣະຜູ້ເປັນນາຍຈະຊົງບັນຊາສິ່ງໃດກໍຕາມທີ່ພຣະອົງຊົງປາດຖະໜາ, ຊຶ່ງເປັນໄປຕາມພຣະປັນຍານອັນສົມບູນຢ່າງຍິ່ງຂອງພຣະອົງ."[15]**

____________________________________________________________________
____________________________________________________________________
____________________________________________________________________
____________________________________________________________________
____________________________________________________________________
____________________________________________________________________

ຫົວຂໍ້ຂອງແຕ່ລະບົດຮຽນກ່ຽວກັບພຣະວັດຈະນະ ທີ່ມາຈາກຂໍ້ຄວາມອັນສັກສິດ ເຊິ່ງເດັກນ້ອຍຖືກມອບໝາຍໃຫ້ທ່ອງຈຳ. ຂໍໃຫ້ເຈົ້າເຮັດສຸດຄວາມສາມາດ ເພື່ອຊ່ວຍໃຫ້ເຂົາເຈົ້າໄດ້ຮັບຄວາມເຂົ້າໃຈຂັ້ນພື້ນຖານຂອງຄວາມຫມາຍຂອງພຣະວັດຈະນະ, ເປັນຄວາມເຂົ້າໃຈທີ່ພິສູດໃຫ້ເຫັນສະເໝີວ່າ ຈຳເປັນຕໍ່ການພັດທະນາຄຸນລັກສະນະທາງຈິດວິນຍານ. ຄຳຖາມໜຶ່ງທີ່ຕ້ອງພິຈາລະນາໃນເລື່ອງນີ້ ແມ່ນວ່າເຈົ້າສາມາດບຳລຸງລ້ຽງຄຸນລັກສະນະທີ່ປາດຖະໜາ ດ້ວຍວິທີທີ່ມີຄວາມໝາຍ ໂດຍປາດສະຈາກຄວາມຊ່ວຍເຫລືອຈາກຖ້ອຍຄຳຂອງພຣະຜູ້ເປັນເຈົ້າໄດ້ຫຼືບໍ. ອີກເທື່ອໜຶ່ງ, ໃນການກຳໜົດຄວາມຄິດຂອງເຈົ້າ, ໃຫ້ນຶກເຖິງການໄຕ່ຕອງບາງຢ່າງຂອງເຈົ້າ ໃນປຶ້ມເຫຼັ້ມກ່ອນໜ້ານີ້ - ຍົກຕົວຢ່າງ ກ່ຽວກັບພະລັງງານແຫ່ງຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ໃນພາກທີໜຶ່ງຂອງເຫຼັ້ມ 2. ໂດຍສະເພາະຂໍ້ຄວາມຂ້າງລຸ່ມນີ້ ທີ່ເຈົ້າອາດຈະຮູ້ຢູ່ໃນໃຈ, ຈະຊ່ວຍໃຫ້ເຈົ້າຕອບຄຳຖາມນີ້ໄດ້ແນວໃດ?

**"ຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ອາດປຽບໄດ້ກັບຕົ້ນໄມ້ອ່ອນ ທີ່ຢັ່ງຮາກເລິກລົງໄປໃນຫົວໃຈຂອງມະນຸດ. ເປັນໜ້າທີ່ຂອງເຈົ້າທີ່ຈະຕ້ອງລ້ຽງດູການຈະເລີນເຕີບໂຕຂອງຕົ້ນໄມ້ນັ້ນ ໂດຍອາໃສນ້ຳ**

**ຂອງຄວາມຮອບຮູ້ ແຫ່ງຄວາມສັກສິດ ແລະ ຖ້ອຍຄຳອັນສັກສິດ, ເພື່ອວ່າຮາກຂອງມັນຈະຍຶດແໜ້ນ ແລະ ກິ່ງກ້ານຂອງມັນຈະແຜ່ອອກໄປສູງຈົນໄປເຖິງທ້ອງຟ້າ ແລະ ເບື້ອງບົນ."[16]**

ອົງປະກອບອື່ນອີກຂອງບົດຮຽນ ປະກອບດ້ວຍເລື່ອງລາວທີ່ເລົ່າສູ່ເດັກນ້ອຍຟັງ. ສ່ວນໃຫຍ່ແມ່ນມາຈາກຊີວິດຂອງພຣະອັບດຸລບາຮາ ຜູ້ເປັນຕົວຢ່າງທີ່ສົມບູນແບບ ຕາມຄຳສອນຂອງພຣະບິດາຂອງພຣະອົງ, ເຊິ່ງໄດ້ລວບລວມເອົາຄຸນລັກສະນະຕ່າງໆທີ່ເຈົ້າປາດຖະໜາຈະສົ່ງເສີມ. ຈາກການສຶກສາຂອງເຈົ້າໃນພາກທີສາມຂອງເຫຼັ້ມ 2, ເຈົ້າຮັບຮູ້ເຖິງຄວາມກະລຸນາເປັນພິເສດທີ່ມອບໃຫ້ມະນຸດຊາດເຊິ່ງມີໃນຕົວຂອງ ພຣະອັບດຸລບາຮາ. ເລື່ອງລາວທີ່ເດັກນ້ອຍຮຽນຮູ້ກ່ຽວກັບຊີວິດຂອງພຣະອົງ ມີບົດບາດພິເສດໃນການພັດທະນາບຸກຄະລິກລັກສະນະຂອງເຂົາເຈົ້າ, ແລະ ເຂົາເຈົ້າຄວນຈະໄດ້ຮັບການຕັກເຕືອນເທື່ອແລ້ວເທື່ອເລົ່າ ເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງທີ່ມີຕໍ່ເດັກນ້ອຍ. ເມື່ອສາຍສຳພັນຂອງພວກເຂົາກັບພຣະອັບດຸລບາຮາ ເສີມສ້າງໃຫ້ເໜັ້ນແຟ້ນ, ເຈົ້າກໍສາມາດຮັບປະກັນກັບພວກເຂົາວ່າ, ເມື່ອພວກເຂົາພະຍາຍາມເຮັດຕາມແບບຢ່າງຂອງພຣະອົງ, ພວກເຂົາໄດ້ນຳຄວາມສຸກມາສູ່ຫົວໃຈຂອງພຣະອົງ. ເຈົ້າຄິດວ່າເລື່ອງເລົ່າຈາກຊີວິດຂອງພຣະອັບດຸລບາຮາ ໄດ້ບອກດ້ວຍຄວາມສຸກຫັນສາ ແລະ ຄວາມເຄົາລົບ, ຈະມີສ່ວນຊ່ວຍໃນການພັດທະນາຄຸນນະສົມບັດທີ່ຕ້ອງການໃນຄົນລຸ້ນເຍົາໄດ້ແນວໃດ?

ການຮ້ອງເພງແມ່ນອີກອົງປະກອບຂອງຊັ້ນຮຽນ, ເປັນສິ່ງໜຶ່ງທີ່ເຕີມເຕັມຫົວໃຈແລະຈິດວິນຍານຂອງເດັກນ້ອຍດ້ວຍຄວາມສຸກ. ພຣະອັບດຸລບາຮາ ກ່າວວ່າ:

**"ສິລະປະດົນຕີນັ້ນສັກສິດ ແລະ ມີປະສິດທິພາບ. ມັນເປັນອາຫານຂອງວິນຍານ ແລະ ຈິດວິນຍານ. ຜ່ານພະລັງ ແລະ ສະເໜ່ຂອງດົນຕີ ຈິດວິນຍານຂອງມະນຸດຖືກຍົກລະດັບຂຶ້ນ. ມັນມີສິ່ງມະຫັດແກວ່ງໄປມາ ແລະ ມີຜົນກະທົບຕໍ່ຫົວໃຈຂອງເດັກນ້ອຍ ເຊິ່ງຫົວໃຈຂອງເຂົາເຈົ້າ**

**ບໍລິສຸດ, ແລະ ທຳນອງດົນຕີມີອິດທິພົນໃຫຍ່ຫຼວງຕໍ່ພວກເຂົາ. ດ້ວຍຫົວໃຈຂອງເດັກນ້ອຍເລົ່ານີ້ທີ່ຖືກປະສິດປະສາດ ພອນສະຫວັນຕ່າງໆທີ່ເຊື່ອງຊ້ອນຢູ່ ກໍຈະຄົ້ນພົບສະແດງອອກມາ ໂດຍຜ່ານສື່ກາງຂອງດົນຕີ."**[17]

ສົນທະນາກັບກຸ່ມຂອງເຈົ້າວ່າເປັນຫຍັງ ມັນຈຶ່ງສຳຄັນສຳລັບເດັກນ້ອຍ ທີ່ຈະຮຽນການຮ້ອງເພງທີ່ມ່ວນອ່ອນຊອນຕັ້ງແຕ່ຕອນຍັງນ້ອຍ.

__________________________________________________

__________________________________________________

__________________________________________________

__________________________________________________

__________________________________________________

ເກມ ແລະ ການລະບາຍສີ ແມ່ນສອງອົງປະກອບອື່ນໆຂອງຊັ້ນຮຽນ. ເກມທີ່ມີລັກສະນະຮ່ວມມືກັນ ແລະ ມີຫມາຍຄວາມປະກອບສ່ວນເຂົ້າໃນການພັດທະນາທັດສະນະຄະຕິ ແລະ ນິໄສທີ່ເພິ່ງປະສົງບາງຢ່າງ. ເຈ້ຍສະບາຍສີ ໄດ້ຈັດໄວ້ແກ່ບົດຮຽນຕ່າງໆ ເຊິ່ງກ່ຽວຂ້ອງກັບຄຸນລັກສະນະທາງຈິດວິນຍານ ທີ່ແຕ່ລະບົດເນັ້ນໜັກໃສ່. ເຊັ່ນດຽວກັນ ການລະບາຍສີ ເສີມສ້າງທັກສະແລະຄວາມສາມາດທີ່ຈຳເປັນຈຳນວນຫນຶ່ງ ສຳລັບເດັກນ້ອຍທີ່ຢູ່ໃນໄລຍະຂອງການຂະຫຍາຍຕົວ. ສອງກິດຈະກຳນີ້ຊ່ວຍສ້າງບັນຍາກາດແຫ່ງຄວາມສຸກຫັນສາ ທີ່ຕ້ອງເປັນຈຸດເດັ່ນຂອງຊັ້ນຮຽນເພື່ອການສຶກສາທາງຈິດວິນຍານແກ່ເດັກນ້ອຍ. ເຈົ້າອາດຈະຕ້ອງການເວົ້າສອງສາມຄຳ ວ່າເປັນຫຍັງສິ່ງແວດລ້ອມແຫ່ງຄວາມສຸກຈຶ່ງເປັນສິ່ງທີ່ຂາດບໍ່ໄດ້ ສຳລັບການພັດທະນາຄຸນລັກສະນະທາງວິນຍານ.

__________________________________________________

__________________________________________________

__________________________________________________

__________________________________________________

__________________________________________________

## ຕອນທີ 9

ໃນຫຼາຍຕອນທີ່ຜ່ານມາເຈົ້າໄດ້ຮັບຄວາມເຂົ້າໃຈບາງຢ່າງ ກ່ຽວກັບຈຸດປະສົງຂອງບົດຮຽນໃນຊັ້ນຮຽນລະດັບທີໜຶ່ງ ແລະ ໄດ້ເຫັນວ່າແຕ່ລະອົງປະກອບ ມີສ່ວນຊ່ວຍເຂົ້າໃນການປັບປຸງອຸປະນິໃສຄືແນວໃດ. ຕອນນີ້ຂໍໃຫ້ພວກເຮົາພິຈາລະນາໂດຍຫຍໍ້ ກ່ຽວກັບລັກສະນະຂອງຄວາມສຳພັນຂອງເຈົ້າກັບຄົນລຸ້ນເຍົາທີ່ເຈົ້າກຳລັງຈະສອນ.

ສິ່ງທຳອິດແລະສຳຄັນທີ່ສຸດແມ່ນຄວາມຮັກ ທີ່ເຈົ້າຈະຮູ້ສຶກຕໍ່ນັກຮຽນຂອງເຈົ້າ, ຄວາມຮັກທີ່ເປັນການສະທ້ອນເຖິງຄວາມຮັກຂອງພຣະຜູ້ເປັນເຈົ້າ, ຈະໂອບກອດເອົາເດັກໆຂອງທຸກໆພູມຫຼັງ. ເພື່ອໃຫ້ເຂົ້າເຖິງເດັກແຕ່ລະຄົນ ວິທີການສະແດງອອກຄວາມຮັກນີ້ ເປັນສິ່ງທີ່ຄູຈະບຸກບືນຮຽນຮູ້.

ຄວາມຮັກຂອງເຈົ້າທີ່ມີຕໍ່ນັກຮຽນຂອງເຈົ້ານັ້ນ ບໍລິສຸດ ແລະ ປາດສະຈາກຄວາມລຳອຽງ ຈະເຮັດໃຫ້ເປັນການງ່າຍທີ່ເຈົ້າຈະຄົ້ນພົບອັນຍະມະນີທີ່ປະເມີນຄ່າບໍ່ໄດ້ ເຊິ່ງໃນຄວາມເປັນຈິງໄດ້ຖືກຝາກໄວ້ກັບເດັກນ້ອຍແຕ່ລະຄົນ ໂດຍພຣະຫັດຂອງພຣະຜູ້ຊົງອານຸພາບ. ເຈົ້າຈະມອງເຫັນນັກຮຽນທຸກຄົນເປັນຜູ້ທີ່ສູງສົ່ງ ໄດ້ຖືກສ້າງຂຶ້ນໃນພາບລັກຂອງພຣະຜູ້ເປັນເຈົ້າ, ຄວາມຈິງທີ່ຖ້ອຍຄຳເລົ່ານີ້ຂອງ ພຣະບາຮາອຸລລາຫ໌ ເປັນພະຍານວ່າ:

> **"ເຊື່ອງຊ້ອນຢູ່ໃນການດຳລົງຢູ່ຂອງເຮົາມາແຕ່ປະຖົມບູຮານ ແລະ ໃນຄວາມເປັນອຳມະຕະແຕ່ບັນພະການແຫ່ງສາລະຂອງເຮົາ, ເຮົາຮູ້ວ່າເຮົາຮັກເຈົ້າແນວໃດ; ດັ່ງນັ້ນ ເຮົາຈຶ່ງສ້າງເຈົ້າຂຶ້ນມາ, ຈຳລອງຮູບລັກຂອງເຮົາໄວ້ໃນຕົວເຈົ້າ ແລະ ເປີດເຜີຍຄວາມງາມຂອງເຮົາຕໍ່ເຈົ້າ."**[18]
>
> **"ເຮົາສ້າງເຈົ້າດ້ວຍຫັດແຫ່ງອານຸພາບ ແລະ ເນລະມິດເຈົ້າດ້ວຍອົງຄຸລີແຫ່ງພະລັງ; ແລະ ສາລະແຫ່ງແສງຂອງເຮົາສ່ອງສະຫວ່າງຢູ່ໃນຕົວເຈົ້າ."**[19]
>
> **"ເຈົ້າຄືຕະກຽງຂອງເຮົາ ແລະ ແສງຂອງເຮົາຢູ່ໃນຕົວເຈົ້າ. ຈົ່ງສ່ອງລັດສະໝີຂອງເຈົ້າຈາກຕະກຽງ ແລະ ຢ່າໄດ້ສະແຫວງຫາຜູ້ໃດນອກຈາກເຮົາ. ເພາະວ່າເຮົາສ້າງເຈົ້າຂຶ້ນມາຢ່າງອຸດົມສົມບູນ ແລະ ມອບສິດພິເສດໃຫ້ແກ່ເຈົ້າຢ່າງຫຼວງຫຼາຍ."**[20]

ແນ່ນອນ ເຈົ້າຕ້ອງຮັບຮູ້ວ່າຄວາມຮັກນັ້ນຈະຖືກທົດສອບຢ່າງຫຼີກລ່ຽງບໍ່ໄດ້. ຂະນະທີ່ເຈົ້າສອນ, ເຈົ້າຈະຕ້ອງພົບກັບອຸປະນິໄສ ທີ່ບໍ່ໜ້າພຶງປາດຖະໜາຢູ່ໃນຕົວນັກຮຽນຂອງເຈົ້າ. ໃນໂອກາດດັ່ງກ່າວເຈົ້າຈຳເປັນຕ້ອງປະຕິເສດແນວຄິດທີ່ຜິດພາດທີ່ວ່າ ເດັກນ້ອຍບາງຄົນບໍ່ສາມາດແກ້ໄຂໄດ້. ຄູໃນຊັ້ນຮຽນເດັກນ້ອຍບາຮາຍ ຕ້ອງບໍ່ສົງໃສວ່າເດັກນ້ອຍທຸກຄົນ ມີຄວາມສາມາດທີ່ຈະຮູ້ຈັກພຣະຜູ້ເປັນເຈົ້າໂດຍຜ່ານບັນດາພຣະສາສະດາຂອງພຣະອົງ ແລະ ເຊື່ອຟັງຄຳສອນຂອງບັນດາພຣະອົງ. ເດັກນ້ອຍທຸກຄົນມີຄວາມສາມາດທີ່ຈະກ້າວໜ້າທາງຈິດວິນຍານ. ເດັກນ້ອຍທຸກຄົນທີ່ຢູ່ໃນຊັ້ນຮຽນຂອງເຈົ້າ ໄດ້ຖືກສ້າງຂຶ້ນມາສູງສົ່ງ ມີຄວາມສາມາດເພື່ອກ້າວໄປຂ້າງໜ້າທາງວິນຍານ. ຄົນລຸ້ນເຍົາທຸກໆຄົນໃນຊັ້ນຮຽນຂອງເຈົ້າ ໄດ້ຖືກສ້າງຂຶ້ນມາສູງສົ່ງ ແລະ ສາມາດສະແດງໃຫ້ເຫັນຄວາມສູງສົ່ງນີ້ໄດ້ ດ້ວຍການຊ່ວຍເຫຼືອຈາກເຈົ້າ.

ການລະລຶກເຖິງບາງວະລີທີ່ໄດ້ນຳໃຊ້ໂດຍ ທ່ານນາຍຜູ້ເປັນທີ່ຮັກ ໃນການກ່າວເຖິງເດັກນ້ອຍຈະຊ່ວຍໃຫ້ເຈົ້າເຫັນໄດ້ຊັດເຈນວ່າ ເນື້ອແທ້ທາງວິນຍານຂອງເຂົາເຈົ້າເປັນການສ້າງສັນຂອງພຣະຜູ້

ເປັນເຈົ້າ. ຂ້າງລຸ່ມນີ້ແມ່ນການຄັດເລືອກບາງວະລີ; ຂໍໃຫ້ອ່ານວະລີເລົ່ານີ້ ແລະ ໄຕ່ຕອງວ່າມັນຄວນກຳໜົດຄວາມຮັບຮູ້ຂອງເຈົ້າແນວໃດ ກ່ຽວກັບຂອງສິ່ງມີຊີວິດອັນລ້ຳຄ່າທີ່ເຈົ້າກຳລັງຈະສອນ.

- ເດັກນ້ອຍເລົ່ານີ້ທີ່ໜ້າຮັກ
- ເດັກນ້ອຍເລົ່ານີ້ທີ່ສະຫວ່າງສົດໃສ
- ເດັກນ້ອຍທີ່ສວຍງາມຂອງອານາຈັກ
- ເບ້ຍໄມ້ເລົ່ານີ້ເຊິ່ງໄດ້ປົ່ງຂຶ້ນໂດຍສາຍນ້ຳແຫ່ງການນຳທາງຂອງພຣະອົງ
- ຕົ້ນໄມ້ອ່ອນຂອງອານາຈັກອັບຮາ
- ຕົ້ນໄມ້ທີ່ເປັນຂອງສວນ
- ເບ້ຍໄມ້ອ່ອນໃນສວນແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ
- ເບ້ຍໄມ້ສົດໃນທົ່ງຫຍ້າແຫ່ງຄວາມຮູ້ຂອງພຣະຜູ້ເປັນເຈົ້າ
- ເບ້ຍໄມ້ແຕກອອກຈົນເບັ່ງບານໃນລະດູໃບໄມ້ປົ່ງອັນສັກສິດຂອງພຣະອົງ
- ດອກກຸຫລາບໃນສວນຂອງພຣະອົງ
- ດອກກຸຫລາບໃນສວນຂອງການນຳທາງຂອງພຣະອົງ
- ດອກໄມ້ໃນທົ່ງຫຍ້າຂອງພຣະອົງ
- ກິ່ງງ່າຂອງຕົ້ນໄມ້ແຫ່ງຊີວິດ
- ກິ່ງງ່າອ່ອນເຕີບໃຫຍ່ຢູ່ໃນສວນແຫ່ງຄວາມຮູ້ຂອງພຣະອົງ
- ກິ່ງກ້ານຊໍ່ດອກຢູ່ໃນພຸ່ມໄມ້ແຫ່ງພຣະກາລຸນາທິຄຸນຂອງພຣະອົງ
- ນົກຂອງທົ່ງຫຍ້າແຫ່ງຄວາມຢູ່ລອດ
- ທຽນໄຂທີ່ໄດ້ຖືກຈູດດ້ວຍນິ້ວມືແຫ່ງພຣະພອນທີ່ສົມບູນແບບ
- ງານຫັດຖະກຳຂອງນິ້ວມືແຫ່ງພະລັງງານຂອງພຣະອົງ
- ສັນຍານອັນມະຫັດສະຈັນແຫ່ງຄວາມຍິ່ງໃຫຍ່ຂອງພຣະອົງ
- ຄົນຮັກຂອງພຣະອັບດຸລບາຮາ

## ຕອນທີ 10

ຄຽງຄູ່ໄປກັບຄວາມຮັກ, ເຈົ້າບຳລຸງລ້ຽງຄວາມສຳພັນກັບນັກຮຽນຂອງເຈົ້າ ຈະສະແດງຄຸນລັກສະນະທາງຈິດວິນຍານອື່ນໆທັງໝົດ ທີ່ໄດ້ກ່າວໄວ້ໃນບົດຮຽນສຳລັບຊັ້ນຮຽນລະດັບທີໜຶ່ງ. ບໍ່ຕ້ອງສົງໃສເລີຍວ່າ ເຈົ້າຈະພະຍາຍາມບຸກບືນສ່ອງແສງຄຸນລັກສະນະເຫຼົ່ານີ້ໃຫ້ຫຼາຍຂຶ້ນ ບໍ່ພຽງແຕ່ໃນການພົວພັນຂອງເຈົ້າກັບເດັກນ້ອຍໃນລະຫວ່າງຢູ່ຫ້ອງຮຽນ ແຕ່ໃນທຸກໆດ້ານຂອງຊີວິດຂອງເຈົ້າ. ພຣະບາຮາອຸລລາຫ໌ ແນະນຳພວກເຮົາວ່າ:

**"ໂອ ປະຊາຊົນ, ຈົ່ງລະວັງໃຫ້ດີ, ຢ້ານວ່າເຈົ້າຈະເປັນຜູ້ໃຫ້ຄຳແນະນຳທີ່ດີແກ່ຄົນອື່ນ ແຕ່ລືມປະຕິບັດຕາມສິ່ງເລົ່ານັ້ນເສຍເອງ."[21]**

ໂດຍສະເພາະແລ້ວ ມັນເປັນສິ່ງສຳຄັນສຳລັບຄູສອນຊັ້ນຮຽນຂອງເດັກນ້ອຍ ທີ່ຈະໄດ້ຮັບການຍົກຍ້ອງເພີ່ມຂຶ້ນເຖິງຄວາມໝາຍ ແລະ ຄວາມໝາຍທີ່ເຊື່ອງຊ້ອນຂອງແຕ່ລະຄຸນລັກສະນະ ທີ່ໄດ້ປຶກສາຫາລືໃນບົດຮຽນ, ເປັນການຍົກຍ້ອງທີ່ຈະຊ່ວຍຄູໃນຄວາມພະຍາຍາມຂອງເຂົາເຈົ້າໃນການເຝິກອົບຮົມ ແລະ ບຳລຸງລ້ຽງຕົ້ນອ່ອນ ພາຍໃຕ້ການດູແລຂອງເຂົາເຈົ້າ. ຕົວຢ່າງ, ດັ່ງທີ່ເຈົ້າໄດ້ສັງເກດເຫັນບົດຮຽນທຳອິດເນັ້ນໜັກໃສ່ຄວາມບໍລິສຸດ. ມັນເປັນການເໝາະສົມທີ່ຫ້ອງຮຽນກັງກັບຄຳຖາມ ກ່ຽວກັບຄຸນລັກສະນະເຊິ່ງຄວນເລີ່ມຕົ້ນໂດຍການຄົ້ນຫາ ຄຸນລັກສະນະຄວາມບໍລິສຸດຂອງຫົວໃຈ. ພຣະບາຮາອຸລລາຫ໌ ຊົງເຕືອນພວກເຮົາວ່າ, "ທຸກຊັບພະສິ່ງທີ່ຢູ່ໃນສະຫວັນແລະໂລກ" ພຣະຜູ້ເປັນເຈົ້າໄດ້ລິຂິດໄວ້ສຳລັບພວກເຮົາ "ຍົກເວັ້ນຫົວໃຈຂອງມະນຸດ," ເຊິ່ງພຣະອົງໄດ້ສ້າງເປັນທີ່ພັກພິງຂອງຄວາມງາມ ແລະຄວາມຮຸ່ງເຮືອງຂອງພຣະອົງ. ການເຮັດໃຫ້ກະຈົກຂອງຫົວໃຈສະອາດ ເຮັດໃຫ້ມັນສະທ້ອນເຖິງຄຸນລັກສະນະອື່ນໆທັງໝົດທີ່ຈິດວິນຍານຂອງມະນຸດຄວນໄດ້ຮັບການປະດັບປະດາ.

ເພື່ອຊ່ວຍໃຫ້ຄູສອນຄິດກ່ຽວກັບຄຸນລັກສະນະທາງຈິດວິນຍານທີ່ໄດ້ກ່າວໃນຊັ້ນຮຽນນີ້, ພາກທີສອງ ປະກອບຫຼາຍໆພຣະວັດຈະນະທີ່ກ່ຽວຂ້ອງກັນ. ສຳລັບຕອນນີ້, ເຈົ້າກຳລັງຊຸກຍູ້ໃຫ້ອ່ານພຣະວັດຈະນະຂ້າງລຸ່ມນີ້ກ່ຽວກັບຄວາມບໍລິສຸດ. ຈາກນັ້ນ, ກັບສະມາຊິກຄົນອື່ນໆໃນກຸ່ມຂອງທ່ານ, ໃຫ້ປຶກສາຫາລືຄວາມສຳຄັນຂອງຄຸນລັກສະນະນີ້ໃນຊີວິດຂອງມະນຸດ, ແລະໂດຍທົ່ວໄປ ສະເພາະຄວາມພະຍາຍາມຂອງຜູ້ທີ່ລຸກຂຶ້ນເພື່ອສອນເດັກນ້ອຍ. ຫຼັງຈາກຂຽນບາງຄວາມຄິດຂອງເຈົ້າໃນບ່ອນວ່າງທີ່ສະໜອງໃຫ້, ເຈົ້າອາດຈະປາດທະໜາທີ່ຈະຈື່ຈຳຢ່າງໜ້ອຍໜຶ່ງພຣະວັດຈະນະ.

**"ໂອ ພີ່ນ້ອງຂອງເຮົາພຣະອົງ! ຫົວໃຈບໍລິສຸດເປັນຄືກະຈົກ; ຈົ່ງຊຳລະມັນດ້ວຍໄຟແຫ່ງຄວາມຮັກ ແລະ ການປ່ອຍວາງຈາກທຸກສິ່ງນອກຈາກພຣະຜູ້ເປັນເຈົ້າ, ເພື່ອວ່າແສງຕາເວັນທີ່ແທ້ຈິງຈະໄດ້ສ່ອງແສງໃນກະຈົກນັ້ນ ແລະ ຮຸ່ງອາລຸນຍາມເຊົ້າຕະຫຼອດໄປ."[22]**

**"ໂອ ບຸດແຫ່ງຊີວິດ! ຫົວໃຈຂອງເຈົ້າຄືເຮືອນຂອງເຮົາພຣະອົງ; ຈົ່ງຊຳລະມັນສຳລັບການສືບເຊື້ອສາຍຂອງເຮົາພຣະອົງ. ວິນຍານຂອງເຈົ້າແມ່ນສະຖານທີ່ແຫ່ງການເປີດເຜີຍຂອງເຮົາພຣະອົງ; ຈົ່ງຊຳລະມັນເພື່ອການສ່ອງແສງຂອງເຮົາພຣະອົງ."[23]**

**"ຍິ່ງຫົວໃຈຂອງມະນຸດບໍລິສຸດ ແລະ ຊຳລະໃຫ້ບໍລິສຸດຫລາຍຂຶ້ນ, ຫົວໃຈນັ້ນຈະຫຍັບເຂົ້າມາໃກ້ພຣະຜູ້ເປັນເຈົ້າ, ແລະ ຄວາມສະຫວ່າງຂອງດວງອາທິດ ຂອງຄວາມເປັນຈິງໄດ້ຖືກເປີດເຜີຍພາຍໃນຫົວໃຈ."[24]**

**"ປະການທຳອິດໃນວິທີຊີວິດຂອງມະນຸດຕ້ອງບໍລິສຸດ, ຫຼັງຈາກນັ້ນຄວາມສົດຊື່ນ, ຄວາມສະອາດ,ແລະ ເອກະລາດຂອງວິນຍານ. ກ່ອນອື່ນໝົດລຳທານຕ້ອງໄດ້ຊຳລະໃຫ້ສະອາດກ່ອນ, ຫຼັງຈາກນັ້ນຈຶ່ງນຳເອົານ້ຳທີ່ຫອມຫວານໄຫຼລົງສູ່ລຳທານ."**[25]

## ຕອນທີ 11

ຕອນນີ້ເຈົ້າຕ້ອງຖາມຕົວເອງໃນຖານະຄູສອນເດັກນ້ອຍ ເຈົ້າສາມາດຊ່ວຍເສີມສ້າງແຮງຈູງໃຈຂອງເຂົາເຈົ້າໄດ້ແນວໃດ ເພື່ອປະຕິບັດຕາມຄຳສອນທີ່ພຣະຜູ້ເປັນເຈົ້າ ທີ່ໄດ້ເປີດເຜີຍໂດຍຜ່ານ ພຣະບາຮາອຸລລາຫ໌ ພຣະສາສະດາຂອງພຣະອົງ ແລະ ພັດທະນາຄຸນລັກສະນະທີ່ພຣະອົງບອກໃຫ້ພວກເຮົາຄວນປະດັບຈິດວິນຍານຂອງພວກເຮົາ. ໃຫ້ເຈົ້າຊອກຫາຄຳຕອບຕໍ່ກັບຄຳຖາມນີ້, ໂດຍທົບທວນຖ້ອຍຄຳຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌:

**"ລີ້ນແຫ່ງອຳນາດຂອງເຮົາໄດ້ກ່າວຖ້ອຍຄຳເລົ່ານີ້ ກັບສິ່ງສ້າງສັນຂອງເຮົາ: 'ຈົ່ງປະຕິບັດຕາມບັນຊາທັງຫຼາຍຂອງເຮົາ ເພື່ອຄວາມຮັກໃນຄວາມງາມຂອງເຮົາ.' ຄວາມສຸກຈົ່ງມີແດ່ຄົນຮັກ ທີ່ໄດ້ສູດດົມສຸຄົນທະລົດແຫ່ງສະຫວັນ ຂອງພຣະຜູ້ຊົງເປັນທີ່ຮັກຍິ່ງຈາກຖ້ອຍຄຳເລົ່ານີ້ ເຊິ່ງເຕັມໄປດ້ວຍກິ່ນຫອມແຫ່ງຄວາມກະລຸນາທີ່ບໍ່ມີລີ້ນໃດຈະພັນລະນາໄດ້."**[26]

**"ຈົ່ງໃຫ້ແປວເພີງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ເຜົາໄໝ້ເປັນແສງສະຫວ່າງຂຶ້ນຢູ່ໃນຫົວໃຈອັນຜ່ອງໃສຂອງເຈົ້າ. ຈົ່ງຕື່ມແປວເພີງນັ້ນ ດ້ວຍນ້ຳມັນແຫ່ງການນຳທາງຈາກສະຫວັນ ແລະ ປົກປ້ອງເພີງນັ້ນໄວ້ ໃນທີ່ພັກພິງແຫ່ງຄວາມສະໝ່ຳສະເໝີຂອງເຈົ້າ. ຈົ່ງອາລັກຂາເພີງນັ້ນໄວ້ໃນຕະກຽງແກ້ວ ແຫ່ງຄວາມໄວ້ວາງໃຈ ແລະ ຄວາມບໍ່ຜູກພັນກັບສິ່ງອື່ນໃດນອກຈາກພຣະຜູ້ເປັນເຈົ້າ, ເພື່ອວ່າສຽງກະຊິບອັນຊົ່ວຮ້າຍ ຂອງຜູ້ບໍ່ເຊື່ອໃນພຣະຜູ້ເປັນເຈົ້າ ຈະບໍ່ດັບແສງຂອງເພີງນັ້ນ."**[27]

**"ໂອ ບຸດແຫ່ງຊີວິດ! ຄວາມຮັກຂອງເຮົາຄືທີ່ໝັ້ນ; ຜູ້ທີ່ເຂົ້າມາຈະປອດໄພ ແລະ ໄຮ້ກັງວົນ, ແລ້ວຜູ້ທີ່ໜີຈາກໄປຈະຫຼົງທາງ ແລະ ມະລາຍຢ່າງແນ່ນອນ."**[28]

1. ຈົ່ງຕື່ມປະໂຫຍກຕໍ່ໄປນີ້ໃຫ້ສົມບູນ ດ້ວຍຖ້ອຍຄໍາຈາກພຣະວັດຈະນະກ່ອນໜ້ານີ້:
   - ກ. ພວກເຮົາຄວນປະຕິບັດຕາມບັນຊາທັງຫຼາຍຂອງພຣະຜູ້ເປັນເຈົ້າ ເພື່ອຄວາມຮັກໃນ ______________ ຂອງພຣະອົງ.
   - ຂ. _______________ ແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ເຜົາໄໝ້ເປັນ __________ __________ ຢູ່ໃນຫົວໃຈ _______________ ຂອງພວກເຮົາ.
   - ຄ. ພວກເຮົາຄວນຕື່ມແປວເພີງແຫ່ງ _____________ ຂອງພຣະຜູ້ເປັນເຈົ້າ ດ້ວຍ __________ ແຫ່ງ ______________ ຈາກສະຫວັນ.
   - ງ. ພວກເຮົາຄວນປົກປ້ອງເພີງນັ້ນໄວ້ໃນ _______________ ____________________ ຂອງເຈົ້າ.
   - ຈ. ພວກເຮົາຄວນ _______________ ເພີງແຫ່ງ _____________ ຂອງພຣະຜູ້ເປັນເຈົ້າ ນັ້ນໄວ້ໃນ ຕະກຽງແກ້ວ ____________________ ແລະ _______________ ກັບ ______________________________.
   - ສ. ພວກເຮົາຄວນປະຕິບັດຕາມບັນຊາທັງຫຼາຍຂອງພຣະຜູ້ເປັນເຈົ້າ ເພື່ອຄວາມຮັກໃນ ______________ ຂອງພຣະອົງ. ____________ ແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ຄວນເຜົາໄໝ້_____________________ ຢູ່ໃນຫົວໃຈ ____________ ຂອງພວກເຮົາ. ພວກເຮົາຄວນຕື່ມແປວເພີງນັ້ນ ດ້ວຍນໍ້າມັນແຫ່ງການນໍາທາງ ____________. ພວກເຮົາຄວນປົກປ້ອງເພີງນັ້ນໄວ້ ໃນທີ່ພັກພິງແຫ່ງ ______________________ ຂອງເຈົ້າ. ພວກເຮົາຄວນອາລັກຂາເພີງນັ້ນໄວ້ໃນຕະກຽງແກ້ວ _____________________ ແລະ ____________________ ກັບສິ່ງອື່ນໃດນອກຈາກພຣະຜູ້ເປັນເຈົ້າ. ພວກເຮົາຄວນຕື່ມແປວເພີງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ, ປົກປ້ອງ ແລະ ອາລັກຂາເພີງນັ້ນ ເພື່ອວ່າສຽງກະຊິບອັນຊົ່ວຮ້າຍ ຂອງຜູ້ບໍ່ເຊື່ອໃນພຣະຜູ້ເປັນເຈົ້າ ຈະບໍ່ດັບ __________ ຂອງເພີງນັ້ນ. ຜູ້ໃດກໍຕາມທີ່ເຂົ້າມາໃນທີ່ໝັ້ນແຫ່ງ ____________ ຂອງພຣະຜູ້ເປັນເຈົ້າ ຈະປອດໄພ ແລະ ____________.

## ຕອນທີ 12

ໃນໄລຍະທີ່ທ່ານໃຊ້ເວລາຮ່ວມກັບຄົນລຸ້ນເຍົາ, ທ່ານຈະພະຍາຍາມທີ່ຈະພັດເອົາ "ແປວເພີງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ" ເຂົ້າໃນຫົວໃຈທີ່ສົດໃສຂອງຄົນລຸ້ນເຍົາ ແລະ ເຮັດໃຫ້ເຂົາເຈົ້າຢັ້ງຮູ້ເຖິງພຣະພອນຂອງພຣະອົງ ແລະ ຄວາມສຸກຂອງການເຕີບໂຕໂດຍຜ່ານຖ້ອຍຄໍາຂອງພຣະອົງ. ແນ່ນອນວ່າຄວາມຮັກຂອງພວກເຮົາທີ່ມີຕໍ່ພຣະຜູ້ເປັນເຈົ້າ ແລະ ຄວາມປາຖະໜາຂອງພວກເຮົາທີ່ຈະ

ໄດ້ຮັບຄວາມກະລຸນາຂອງພຣະອົງ ນຳມາເຊິ່ງຄວາມຢ້ານກົວວ່າ ຄວາມຮັກຂອງພຣະອົງອາດຈະໄປບໍ່ເຖິງພວກເຮົາ ດ້ວຍເຫດຜົນບາງປະການ. ຈະເປັນແນວໃດຖ້າການກະທຳຜິດຂອງເຮົາເປັນສິ່ງກີດຂວາງ ທີ່ກີດກັນເຮົາຈາກການຮັບເອົາພຣະພອນຂອງພຣະອົງ? ຄວາມຮັກຂອງພຣະຜູ້ເປັນເຈົ້າເປັນສາເຫດຂອງການດຳລົງຢູ່ຂອງພວກເຮົາ, ແລະ ຖ້າຫາກພວກເຮົາຖືກຕັດຂາດຈາກຄວາມຮັກຂອງພຣະຜູ້ເປັນເຈົ້າແມ້ພຽງຊົ່ວຄະນະ ຊີວິດຂອງພວກເຮົາຄົງແຫຼກສະຫຼາຍ. ຄວາມຢ້ານກົວນີ້ ຖ້າຫາກວ່າພວກເຮົາບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ ພວກເຮົາອາດຈະບໍ່ສາມາດໄດ້ຮັບຄວາມຮັກຂອງພຣະອົງ, ບໍ່ສາມາດເຮັດໃຫ້ພວກເຮົາຢູ່ໃນເສັ້ນທາງທີ່ຊື່ຕົງ ແລະ ບໍ່ສາມາດປົກປ້ອງເຮົາຈາກການກະຕຸ້ນຈາກອັດຕາຂອງພວກເຮົາ ແລະ ຄວາມອິດສາລິດສະຫຍາ, ຄວາມໂລບ, ຈິນຕະນາການທີ່ໄຮ້ສາລະ ແລະ ຄວາມປາຖະໜາທີ່ເສື່ອມຊາມ.

ໃນຄວາມພະຍາຍາມຂອງເຈົ້າ ທີ່ຈະຫວ່ານເມັດພືດແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ໃນຫົວໃຈຂອງເດັກນ້ອຍ ເຈົ້າຕ້ອງຄິດເຖິງຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າເຊັ່ນກັນ, ເພາະວ່າທັງສອງຢ່າງບໍ່ສາມາດແຍກອອກຈາກກັນ. ພຣະອັບດຸລບາຮາ ປຸກລະດົມພວກເຮົາວ່າ:

> **"ຈົ່ງເຝິກອົບຮົມເດັກນ້ອຍເລົ່ານີ້ດ້ວຍການປຸກລະດົມສະຫວັນ. ຈາກໄວເດັກຂອງພວກເຂົາໃຫ້ປູກຝັງຄວາມຮັກຂອງພຣະຜູ້ເປັນເຈົ້າຢູ່ໃນຫົວໃຈຂອງພວກເຂົາ ເພື່ອວ່າພວກເຂົາຈະໄດ້ປະຈັກໃນຊີວິດຂອງພວກເຂົາເຖິງຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າ ແລະ ມີຄວາມໝັ້ນໃຈໃນການປະທານຂອງພຣະຜູ້ເປັນເຈົ້າ. ສອນໃຫ້ພວກເຂົາປົດປ່ອຍຕົວເອງຈາກຄວາມບໍ່ສົມບູນແບບຂອງມະນຸດ ແລະ ເພື່ອໄດ້ຮັບຄວາມສົມບູນອັນສູງສົ່ງທີ່ເຊື່ອງໄວ້ຢູ່ໃນຫົວໃຈຂອງມະນຸດ."[29]**

ເປັນສິ່ງສຳຄັນທີ່ຈະສັງເກດວ່າ ຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າບໍ່ແມ່ນແນວຄວາມຄິດທີ່ຈະສົນທະນາໂດຍກົງກັບເດັກນ້ອຍ. ພາບລັກພຽງຢ່າງດຽວທີ່ເດັກນ້ອຍຕ້ອງນຳເອົາໄປແມ່ນການຮັກພຣະຜູ້ເປັນເຈົ້າ, ໃນຄວາມກາລຸນາ ແລະ ການປະທານຂອງພຣະອົງ ທີ່ພວກເຂົາຄວນມີຄວາມໝັ້ນໃຈ ແລະ ໄວ້ວາງໃຈຢ່າງສົມບູນ. ຂະນະທີ່ເຈົ້າພະຍາຍາມບຳລຸງລ້ຽງພວກເຂົາດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າ, ແນວຄິດທີ່ເຈົ້າສາມາດແນະນຳໄດ້ຄື ຄຳເວົ້າ ແລະ ການກະທຳບາງຢ່າງ ທີ່ເປັນທີ່ພໍພຣະໄທຂອງພຣະຜູ້ເປັນເຈົ້າ ແລະ ຄຳເວົ້າອື່ນໆກໍ່ບໍ່ເປັນເຊັ່ນນັ້ນ. ເຈົ້າສາມາດເຕືອນເດັກນ້ອຍໄດ້ເປັນຄັ້ງຄາວວ່າ ຍ້ອນພວກເຂົາຮັກພຣະຜູ້ເປັນເຈົ້າ, ພວກເຂົາຈຶ່ງປາດຖະໜາທີ່ຈະເຮັດໃຫ້ພຣະອົງພໍພຣະໄທ. ຕົວຢ່າງເຊັ່ນ ພວກເຂົາສາມາດບອກໄດ້ວ່າ ການມີລີ້ນທີ່ອ່ອນໂຍນ ແລະ ຄວາມຮັກຕໍ່ກັນແລະກັນ ເປັນການກະທຳທີ່ເຮັດໃຫ້ພະຜູ້ເປັນເຈົ້າພໍພຣະໄທ, ໃນຂະນະທີ່ການໃຊ້ຄຳເວົ້າທີ່ບໍ່ດີ ຫຼື ຄຳເວົ້າທຳຮ້າຍຄົນອື່ນ ເຮັດໃຫ້ພຣະອົງບໍ່ພໍພຣະໄທ.

ພຣະວັດຈະນະຕໍ່ໄປນີ້ແມ່ນສະໜອງໃຫ້ເພື່ອການທົບທວນຂອງເຈົ້າ:

"ມັນເປັນໜ້າທີ່ຂອງເຈົ້າທີ່ຈະຮຽກຮ້ອງປະຊາຊົນໃນທຸກສະພາບການ ເພື່ອສິ່ງໃດກໍຕາມຈະເຮັດໃຫ້ພວກເຂົາສະແດງລັກສະນະທາງວິນຍານ ແລະ ການກະທຳທີ່ດີອອກມາ, ເພື່ອວ່າທຸກຄົນອາດຈະຕະໜັກເຖິງສິ່ງທີ່ເປັນສາເຫດ ໃຫ້ເກີດການຍົກສູງຂຶ້ນຂອງມະນຸດ, ແລະ ດ້ວຍຄວາມພະຍາຍາມຢ່າງທີ່ສຸດ, ຊີ້ນຳພວກເຂົາເອງໄປສູ່ສະຖານະທີ່ປະເສີດສູງສົ່ງທີ່ສຸດ ແລະ ຈຸດສຸດຍອດຂອງຄວາມຮຸ່ງເຮືອງ. ຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າເຄີຍເປັນປັດໄຈທີ່ສຳຄັນ ໃນການສຶກສາຂອງສິ່ງທີ່ມີຊີວິດຂອງພຣະອົງ. ມັນຂຶ້ນກັບພວກເຂົາທີ່ໄດ້ບັນລຸເຖິງສິ່ງນັ້ນແລ້ວ!"[30]

"ໃນການເປີດເຜີຍນີ້ ເຈົ້າພາບທີ່ສາມາດເຮັດໃຫ້ມີໄຊຊະນະ ແມ່ນເຈົ້າພາບຂອງການກະທຳທີ່ມີກຽດ ແລະ ມີລັກສະນະທ່ຽງທັມ. ຜູ້ນຳແລະຜູ້ບັນຊາການ ຂອງເຈົ້າພາບເລົ່ານີ້ຢ້ານກົວຂອງພຣະຜູ້ເປັນເຈົ້າ, ເຊິ່ງເປັນຄວາມຢ້ານກົວທີ່ກວມເອົາທຸກສິ່ງທຸກຢ່າງ ແລະ ປົກຄອງເໜືອທຸກສິ່ງ."[31]

"ຄຸນລັກສະນະອື່ນໆຂອງຄວາມສົມບູນແບບແມ່ນຢ້ານກົວພຣະຜູ້ເປັນເຈົ້າ, ຮັກພຣະຜູ້ເປັນເຈົ້າໂດຍການຮັກຜູ້ຮັບໃຊ້ຂອງພຣະອົງ, ເຝິກຝົນຄວາມອ່ອນໂຍນ ແລະ ຄວາມອົດທົນ ແລະຄວາມສະຫງົບ, ມີຄວາມຈິງໃຈ, ຍອມຮັບຟັງ, ຜ່ອນຜັນ ແລະ ຄວາມເຫັນອົກເຫັນໃຈ; ມີຄວາມລະອຽດ ແລະ ຄວາມກ້າຫານ, ຄວາມໄວ້ວາງໃຈ ແລະ ມີພະລັງກຳລັງ, ພະຍາຍາມແລະ ຕໍ່ສູ້ດີ້ນລົນ, ມີຄວາມເອື້ອຍເຟື້ອຍເພື່ອແຜ່, ຄວາມຈົງຮັກພັກດີ, ບໍ່ອາຄາດ, ມີຄວາມກະຕືລືລົ້ນ ແລະ ມີກຽດ, ມີຈິດໃຈສູງສົ່ງ ແລະ ເອື້ອຍເຟື້ອຍ, ແລະ ຄຳນຶງເຖິງສິດຂອງຜູ້ອື່ນ."[32]

ເມື່ອພິຈາລະນາຈາກຂໍ້ຄວາມນີ້ ແລະ ຕອນທີ່ຜ່ານມາ, ໃຫ້ຂຽນໜຶ່ງຫຼືສອງຂຽນຫຍໍ້ໜ້າທີ່ອະທິບາຍຄວາມກ່ຽວພັນກັນລະຫວ່າງ ຄວາມຮັກຂອງພຣະຜູ້ເປັນເຈົ້າ ກັບຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າ ແລະ ປະຕິສຳພັນທີ່ມີພະລັງຂອງທັງສອງມີຄວາມສຳຄັນ ຕໍ່ການພັດທະນາຄຸນລັກສະນະທີ່ໜ້າສັນລະເສີນແນວໃດ.

## ຕອນທີ 13

ດັ່ງທີ່ຄວນຈະເຫັນໄດ້ຊັດເຈນ ຈາກການສົນທະນາຂອງພວກເຮົາໃນຫຼາຍໆຕອນກ່ອນນີ້, ການສຶກສາທາງວິນຍານດຶງເອົາແຮງດຶງດູດຂອງຄວາມງາມ ແລະ ໂດຍການສຸມໃສ່ການພັດທະນາຄຸນລັກສະນະທາງຈິດວິນຍານ, ນໍາທາງຫົວໃຈຂອງເດັກນ້ອຍຢ່າງຖືກຕ້ອງກັບຄວາມງາມທີ່ແທ້ຈິງ - ເປັນຄວາມງາມຂອງອຸປະນິໄສທີ່ດີ, ຄວາມງາມທີ່ປະກົດຢູ່ໃນພຣະວັດຈະນະສັກສິດ, ຄວາມງາມຂອງການປະພຶດທີ່ເປັນແບບຢ່າງ, ຄວາມງາມຂອງຄວາມຄິດທີ່ສູງສົ່ງ, ແລະ ສໍາຄັນທີ່ສຸດຄື ການດຶງດູດໄປຍັງຄວາມງາມຂອງຜູ້ຊົງຄວາມຮຸ່ງເຮືອງທັງໝົດ. ໃນທີ່ສຸດ ການເຊື່ອຟັງກົດຂອງພຣະຜູ້ເປັນເຈົ້າ ເກີດຈາກຄວາມຮັກໃນຄວາມງາມຂອງພຣະອົງ. ດັ່ງນັ້ນ ເດັກນ້ອຍເຕີບໃຫຍ່ຂຶ້ນມາເພື່ອເຫັນວ່າການໄດ້ມາເຊິ່ງຄຸນລັກສະນະທາງຈິດວິນຍານ ເປັນລາງວັນທີ່ຍິ່ງໃຫຍ່ທີ່ສຸດໃນຕົວຂອງມັນເອງ, ແລະ ການມີອຸປະນິໃດທີ່ບໍ່ຄູ່ຄວນເປັນການລົງໂທດທີ່ຍິ່ງໃຫຍ່ທີ່ສຸດ. ພຣະອັບດຸລບາຮາ ກ່າວວ່າ:

> **"ຕົ້ນເຫດຂອງການກະທໍາຜິດແມ່ນຄວາມບໍ່ຮູ້, ດັ່ງນັ້ນ ພວກເຮົາຈຶ່ງຕ້ອງຍຶດໝັ້ນເຄື່ອງມືແຫ່ງການຮັບຮູ້ ແລະ ຄວາມຮູ້. ອຸປະນິໄສທີ່ດີຕ້ອງໄດ້ຮັບການສອນ. ແສງສະຫວ່າງຕ້ອງກະຈາຍອອກໄປໃຫ້ໄກ, ເພື່ອວ່າໃນໂຮງຮຽນຂອງມະນຸດທຸກຄົນ ຈະໄດ້ຮັບອຸປະນິໄສອັນປະເສີດຂອງວິນຍານ, ແລະ ມອງເຫັນຕົນເອງໂດຍບໍ່ຕ້ອງສົງໃສເລີຍວ່າ ບໍ່ມີນາຮົກທີ່ຮ້າຍກາດ, ບໍ່ມີກົ້ນເບື້ອງອະເວຈີທີ່ຮ້ອນແຮງກວ່າ ການມີອຸປະນິໄສຊົ່ວຮ້າຍ ແລະ ໄວ້ໃຈບໍ່ໄດ້; ບໍ່ມີຂຸມທີ່ມືດມົວ ແລະ ຄວາມທໍລະມານທີ່ໜ້າລັງກຽດຫຼາຍກວ່າ ການສະແດງຄຸນລັກສະນະທີ່ສົມຄວນຖືກປະນາມ."**[33]

ເພື່ອຊ່ວຍເດັກນ້ອຍປະສົບກັບຄວາມສຸກຂອງການທົບທວນຄຸນລັກສະນະສະຫວັນ, ພວກເຮົາຄວນຊຸກຍູ້ເດັກນ້ອຍດ້ວຍຄວາມພະຍາຍາມຂອງພວກເຂົາ ສະແດງການປະພຶດທີ່ຊື່ຕົງອອກມາ ແລະ ກີດກັ້ນການປະພຶດທີ່ບໍ່ປາດຖະໜາ. ຄວນຫຼີກເວັ້ນທັງການລົງໂທດຢ່າງຮຸນແຮງ ແລະ ອິດສະຫຼະເສລີເຕັມທີ່, ແລະ ການອະນຸຍາດໃຫ້ເດັກນ້ອຍເຮັດຕາມທີ່ເຂົາເຈົ້າປາດຖະໜາ. ດັ່ງທີ່ສະພາຍຸຕິທໍາແຫ່ງສາກົນເຕືອນພວກເຮົາວ່າ, "ຄວາມຮັກຕ້ອງການລະບຽບວິໄນ, ຄວາມກ້າຫານທີ່ຈະເຮັດໃຫ້ເດັກນ້ອຍຄຸ້ນເຄີຍກັບຄວາມຍາກລໍາບາກ, ບໍ່ປ່ອຍຕາມໃຈຂອງພວກເຂົາມັກ ຫຼື ປ່ອຍໃຫ້ພວກເຂົາຢູ່ກັບອຸປະກອນຂອງຕົນເອງຕະຫຼອດ." ເວົ້າຕໍ່ໄປວ່າ ເດັກນ້ອຍ "ຕ້ອງໄດ້ຮັບການຊີ້ນໍາດ້ວຍຄວາມຮັກ ແຕ່

ໄດ້ຮັບການຊີ້ນຳຢ່າງແນ່ວແນ່ເພື່ອໃຫ້ດຳລົງຊີວິດຕາມມາດຕະຖານຂອງບາຮາຍ". ແລະ ພຣະອັບດຸລບາຮາ ອະທິບາຍວ່າ:

> **"ເມື່ອໃດກໍຕາມທີ່ແມ່ເຫັນວ່າລູກເຮັດໄດ້ດີ, ໃຫ້ແມ່ຍ້ອງຍໍລູກ ແລະ ຕົບມືໃຫ້ລາວ ແລະ ຊື່ນຊົມຫົວໃຈຂອງລາວ; ແລະ ຖ້າຫາກວ່າອຸປະນິໃດທີ່ບໍ່ປາດຖະໜາພຽງເລັກນ້ອຍປາກົດຂຶ້ນ, ໃຫ້ແມ່ແນະນຳເດັກນ້ອຍ ແລະ ລົງໂທດເຂົາ, ແລະນຳໃຊ້ວິທີການຕາມເຫດຜົນ, ເຖິງແມ່ນວ່າການລົງໂທດດ້ວຍຄຳເວົ້າເລັກນ້ອຍກໍ່ມີຄວາມຈຳເປັນ. ຢ່າງໃດກໍຕາມ ບໍ່ອະນຸຍາດໃຫ້ຕີເດັກນ້ອຍ ຫຼື ໃສ່ຮ້າຍເຂົາ, ເພາະອຸປະນິໃສຂອງເດັກນ້ອຍຈະຖືກບິດເບືອນຢ່າງສິ້ນເຊີງ ຖ້າຫາກເຂົາຖືກຕຳໜິ ຫຼື ການຂົ່ມເຫັງທາງວາຈາ."[34]**

ເພື່ອປະຕິບັດຕາມຄຳແນະນຳຂອງ ພຣະອັບດຸລບາຮາ, ຄູຄວນຄິດຫາວິທີການເພື່ອຍ້ອງຍໍເດັກນ້ອຍ ແລະ ນຳເອົາຄວາມສຸກມາສູ່ຫົວໃຈຂອງພວກເຂົາເມື່ອພວກເຂົາເຮັດໄດ້ດີ. ສິ່ງນີ້ຮຽກຮ້ອງໃຫ້ຄູສັງເກດ ແລະ ຈົດບັນທຶກຄວາມກ້າວໜ້າຂອງເດັກນ້ອຍແຕ່ລະຄົນ, ເອົາໃຈໃສ່ບໍ່ໃຫ້ຍ້ອງຍໍເດັກນ້ອຍຈຳນວນເກົ່າຕະຫຼອດເວລາ ແລ້ວບໍ່ສົນໃຈເດັກສ່ວນທີ່ເຫຼືອ. ສຳລັບເດັກນ້ອຍທີ່ຄຸ້ນເຄີຍກັບການໄດ້ຮັບຄວາມເອົາໃຈໃສ່ດ້ວຍຄວາມຮັກຈາກຄູແລ້ວ, ຫຼັງຈາກນັ້ນ, ການສະແດງທ່າທາງງ່າຍໆຂອງການບໍ່ຍອມຮັບການປະພຶດທີ່ດື້ດ້ານ ສາມາດເປັນວິທີການລົງໂທດທີ່ອ່ອນໂຍນແຕ່ມີປະສິດທິພາບ. ບາງຄັ້ງອາດຈະມີຄວາມຈຳເປັນຕ້ອງດຳເນີນການເພີ້ມເຕີມອີກ ແລະ ສະແດງຄວາມບໍ່ພໍໃຈທາງວາຈາຂອງການປະຕິບັດທີ່ຜິດ, ໂດຍສະເພາະ ຖ້າຫາກເດັກນ້ອຍກຳລັງລົບກວນກິດຈະກຳ. ຄວນເວົ້າດ້ວຍນ້ຳສຽງທີ່ໜ້າເຄົາລົບ ແລະນັບຖື, ໂດຍບໍ່ສະແດງຮ່ອງຮອຍຂອງຄວາມໃຈຮ້າຍ ຫຼືບໍ່ມີຄວາມອົດທົນແມ້ແຕ່ໜ້ອຍ. ນອກຈາກນີ້, ຕາມປົກກະຕິແລ້ວຄູມັກຈະຫາເວລາ ທີ່ຈະໃຫ້ຄຳແນະນຳເດັກນ້ອຍຄົນໜຶ່ງຫຼືຄົນອື່ນໆ ຢູ່ທາງນອກຂອງຊັ້ນຮຽນ.

ເຖິງແມ່ນວ່າ ມັນອາດຈະເກີດຂຶ້ນເມື່ອເວລາທີ່ຄູປະຕິບັດຕາມຄຳແນະນຳຂ້າງເທິງ, ເດັກນ້ອຍບາງຄົນບໍ່ປະພຶດຕົວຕາມທີ່ຄາດຫວັງໄວ້. ໃນກໍລະນີດັ່ງກ່າວ, ອາດຈະຕ້ອງມີການລົງໂທດພຽງເລັກນ້ອຍແລະເໝາະສົມ. ຕົວຢ່າງຂອງການລົງໂທດດັ່ງກ່າວ ລວມເຖິງການບໍ່ໃຫ້ເດັກທາສີ ຫຼື ຈັບເດັກນ້ອຍອອກຈາກເກມເປັນເວລາຫຼາຍນາທີ. ມີສອງແນວຄວາມຄິດ ທີ່ຈຳເປັນທີ່ຈະຕ້ອງຈື່ໄວ້ໃນໃຈໃນເລື່ອງນີ້. ແນວຄວາມຄິດທຳອິດແມ່ນຄູຄວນອະທິບາຍໃຫ້ເດັກຊັດເຈນວ່າເປັນຫຍັງລາວຈຶ່ງຖືກລົງໂທດ, ຍົກຕົວຢ່າງ ໂດຍການເວົ້າວ່າ "ເນື່ອງຈາກວ່າເຈົ້າໄດ້ເຮັດເຊັ່ນນັ້ນແລະສິ່ງດັ່ງກ່າວ, ເຈົ້າຕ້ອງລໍຖ້າຫ້ານາທີກ່ອນເຂົ້າຫຼິ້ນເກມ." ແນວຄວາມຄິດທີ່ສອງ ແມ່ນການລົງໂທດຕ້ອງໄດ້ລົງມືໃນທັນທີຫຼັງຈາກການປະພຶດທີ່ບໍ່ດີໄດ້ເກີດຂຶ້ນ; ຖ້າບໍ່ດັ່ງນັ້ນເດັກອາດຈະບໍ່ສາມາດເຊື່ອມຕໍ່ການລົງໂທດກັບການປະຕິບັດໄດ້.

ຕອນນີ້ຂໍໃຫ້ສົນທະນາແນວຄວາມຄິດຂ້າງເທິງກັບສະມາຊິກຄົນອື່ນໆໃນກຸ່ມຂອງເຈົ້າ. ເຈົ້າສາມາດສ້າງປະໂຫຍກຮ່ວມກັນທີ່ເຈົ້າຄິດວ່າຈະເໝາະສົມ ເພື່ອໃຊ້ເສີມສ້າງການປະຕິບັດທີ່ດີຂອງ

ເດັກນ້ອຍ ແລະໃນການຊົມເຊີຍຄວາມກ້າວຫນ້າທີ່ເຈົ້າເຫັນພວກເຂົາເຮັດ, ທັງໃນແບບສ່ວນບຸກຄົນ ແລະເປັນກຸ່ມ? ເມື່ອຈຳເປັນມີປະໂຫຍກໃດແດ່ທີ່ເໝາະສົມໃນການຂັດຂວາງການປະຕິບັດທີ່ຜິດ?

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 14

ເພື່ອຊ່ວຍເດັກນ້ອຍໃນການພັດທະນາຄຸນສົມບັດ ທີ່ສົມຄວນໄດ້ຮັບການຍ້ອງຍໍ, ມັນເປັນສິ່ງສຳຄັນສຳລັບເຈົ້າທີ່ຈະສ້າງສະພາບແວດລ້ອມທີ່ເຫມາະສົມໃນຊັ້ນຮຽນ, ສະພາບແວດລ້ອມໂດດເດັ່ນດ້ວຍລະບຽບວິໄນ ແລະ ຄວາມເປັນລະບຽບ.

ພຣະອັບດຸລບາຮາ ກ່າວວ່າ:

**". . . ໂຮງຮຽນຂອງເດັກນ້ອຍຕ້ອງເປັນສະຖານທີ່ຂອງລະບຽບວິໄນ ແລະ ຄວາມເປັນລະບຽບທີ່ສຸດ, ເຊິ່ງຕ້ອງໃຫ້ຄຳແນະນຳຢ່າງລະອຽດ, ແລະ ຕ້ອງໄດ້ເຮັດຂໍ້ກຳໜົດສຳລັບການແກ້ໄຂໃຫ້ຖືກຕ້ອງ ແລະ ການປັບປຸງອຸປະນິໄສ; ດັ່ງນັ້ນ, ໃນປີທຳອິດຂອງເຂົາ, ພາຍໃນຄວາມສຳຄັນຂອງເດັກນ້ອຍ, ພື້ນຖານອັນສູງສົ່ງຈະຖືກວາງໄວ້ ແລະ ໂຄງສ້າງຂອງຄວາມສັກສິດຈະຖືກຍົກຂຶ້ນມາ."[35]**

ແລະ ໂດຍອີງຕາມການຮຽນທຸກອາທິດສຳລັບເດັກນ້ອຍ, ພຣະອົງໄດ້ໃຫ້ຄຳແນະນຳດັ່ງຕໍ່ໄປນີ້:

**"ເຈົ້າຕ້ອງສືບຕໍ່ກິດຈະກຳທີ່ໄດ້ຈັດຂຶ້ນນີ້ໂດຍບໍ່ມີການຢຸດເຊົາຢ່າງແນ່ນອນ, ແລະ ໃຫ້ຄວາມສຳຄັນກັບກິດຈະກຳ, ດັ່ງນັ້ນ ແຕ່ລະມື້ກິດຈະກຳອາດຈະເຕີບໃຫຍ່ ແລະ ຖືກກະຕຸ້ນໂດຍລົມຫາຍໃຈຂອງພຣະວິນຍານບໍລິສຸດ. ຖ້າກິດຈະກຳນີ້ຖືກຈັດຂຶ້ນໄດ້ດີ, ຂໍໃຫ້ເຈົ້າຫມັ້ນໃຈໄດ້ວ່າຈະຮັບຜົນອັນຍິ່ງໃຫຍ່."[36]**

ຫຼາຍໆສິລະປະການສອນແມ່ນປະກອບດ້ວຍ ການຮູ້ວິທີການແນະນຳເດັກແຕ່ລະຄົນ ເພື່ອໃຫ້ເຂົາເຈົ້າປະກອບສ່ວນສ້າງບັນຍາກາດການຮຽນຮູ້ທີ່ມີຄວາມສຸກ ແຕ່ມີລະບຽບວິໄນ. ຢ່າງໃດກໍຕາມ ສິລະປະເລົ່ານີ້ມີຄວາມຢັ່ງຮູ້ຫຼາຍຢ່າງ ທີ່ເຈົ້າຈຳເປັນຕ້ອງໄດ້ຮັບປະສົບການຈາກສິ່ງນີ້, ພວກເຮົາຈະປຶກສາຫາລືແນວຄວາມຄິດພື້ນຖານສອງສາມຢ່າງ ທີ່ຈະຊ່ວຍໃຫ້ເຈົ້າກະກຽມຕົວເຈົ້າເອງຕັ້ງແຕ່ເລີ່ມຕົ້ນ. ເພື່ອເປັນເລີ່ມຕົ້ນ ຂໍໃຫ້ອ່ານລາຍການຊ່ວຍໄລຍະຈັດຊັ້ນຮຽນດັ່ງນີ້:

> ເຈົ້າໃຫ້ເວລາເດັກນ້ອຍສອງສາມນາທີເພື່ອຈັດລະບຽບຕົນເອງ ແລະ ນັ່ງງຽບໆເມື່ອເຂົາເຈົ້າມາຮອດ. ເມື່ອຄົນລຸ້ນເຍົາທັງຫມົດສະຫງົບລົງ, ເຈົ້າໃຊ້ປະໂຫຍດຈາກບັນຍາກາດທີ່ງຽບສະຫງົບເພື່ອເລີ້ມຊັ້ນຮຽນດ້ວຍການອະທິຖານ. ກິດຈະກຳຕໍ່ໄປທີ່ເຈົ້າແນະນຳແມ່ນການຮ້ອງເພງ, ຫຼັງຈາກນັ້ນ ທ່ານນຳສະເໜີຫົວຂໍ້ຂອງບົດຮຽນ ແລະ ຊ່ວຍໃຫ້ເດັກນ້ອຍຈື່ຈຳພຣະວັດຈະນະ. ຈາກນັ້ນ, ໄດ້ສ້າງບັນຍາກາດຂອງການຄອງຄອຍ ໃຫ້ເຈົ້າເລົ່າເລື່ອງໃຫ້ເດັກນ້ອຍຟັງ. ຫຼັງຈາກນັ້ນເຂົາເຈົ້າຫຼິ້ນເກມ. ເມື່ອພວກເຂົາຫຼິ້ນແລ້ວໆ, ເຈົ້າກໍຢາຍເຈ້ຍສຳລັບລະບາຍສີ ແລະ ສີທຽນຫຼືສໍສີ ແລະ ບອກໃຫ້ພວກເຂົາທາສີໃສ່ຮູບນັ້ນດ້ວຍຄວາມລະມັດລະວັງ. ເພື່ອເປັນການປິດຊັ້ນຮຽນ, ເຈົ້າຊຸກຍູ້ໃຫ້ເດັກນ້ອຍນັ່ງງຽບໆ ແລະ ກະກຽມຕົນເອງສຳລັບການອະທິຖານປິດ ເຊິ່ງສວດໂດຍເຈົ້າແລະຄົນລຸ້ນເຍົາສອງສາມຄົນ.

ເປັນການຈັດລຳດັບຂອງກິດຈະກຳຢ່າງມີເຫດຜົນບໍ? ເປັນຫຍັງເຈົ້າຈຶ່ງຄິດວ່າກິດຈະກຳຖືກຈັດລຽງໃນລັກສະນະນີ້?

## ຕອນທີ 15

ດັ່ງທີ່ເຈົ້າໄດ້ສົນທະນາຈາກຂ້າງເທິງ, ເດັກນ້ອຍບໍ່ໄດ້ມາຊັ້ນຮຽນເພື່ອຢູ່ງຽບ. ມັນບໍ່ຄວນຈະເປັນຄວາມຕັ້ງໃຈຂອງເຈົ້າທີ່ຈະຮັກສາໃຫ້ເຂົາເຈົ້າເປັນແບບນັ້ນ. ເຈົ້າຄວນພະຍາຍາມໃຊ້ປະໂຫຍດຈາກພະລັງໂດຍທຳມະຊາດຂອງພວກເຂົາ ແລະ ເຮັດໃຫ້ມັນເປັນຊ່ອງທາງໃນການຮຽນຮູ້. ເພື່ອເຮັດສິ່ງນີ້,

ເຈົ້າຈຳເປັນຕ້ອງວາງແຜນສຳລັບຊ່ວງເວລາທີ່ງຽບສະຫງົບ ແລະ ສຳລັບໄລຍະເວລາຂອງກິດຈະກຳ ແລະ ຄວາມເປັນປົກກະຕິວິໃສ. ໃນທຸກໆກໍລະນີ, ການຈັດຕັ້ງແມ່ນອົງປະກອບພື້ນຖານໜຶ່ງ. ເມື່ອຫ້ອງຮຽນຖືກຈັດຂຶ້ນເປັນຢ່າງດີ, ເດັກຈະມີຄວາມຕັ້ງໃຈ ແລະ ຮຽນຮູ້ງ່າຍຂຶ້ນ. ຈະເປັນປະໂຫຍດທີ່ຈະພິຈາລະນາຢ່າງນ້ອຍສາມຈຸດທີ່ກ່ຽວຂ້ອງ ດັ່ງຕໍ່ໄປນີ້:

1. ແຕ່ລະໄລຍະຂອງຊັ້ນຮຽນຄວນເລີ່ມວິທີການຢ່າງຈະແຈ້ງ ແລະ ສອດຄ່ອງ ແລ້ວ ຈົບລົງຢ່າງເປັນລະບຽບເຊັ່ນດຽວກັນ.
2. ກິດຈະວັດເປັນປະຈຳຕ້ອງໄດ້ຈັດຂຶ້ນ. ດັ່ງນັ້ນ, ເທື່ອລະເລັກເທື່ອລະນ້ອຍເດັກນ້ອຍເລີ້ມຮູ້ຈັກວ່າກິດຈະກຳໃດຈະຕາມຈາກກິດຈະກຳນັ້ນ ແລະ ເປັນສິ່ງທີ່ເຂົາເຈົ້າຄາດຫວັງ.
3. ເວລາທີ່ອຸທິດໃຫ້ແຕ່ລະກິດຈະກຳຄວນຈະເປັນປ່ຽນແປງໄດ້ ແລະ ຄວນຈະຂຶ້ນກັບຄວາມກະຕືລືລົ້ນແລະ ພະລັງງານຂອງເດັກນ້ອຍ.

ດັ່ງທີ່ໄດ້ກ່າວໄວ້ໃນຄຳອະທິບາຍໃນຕອນກ່ອນໆ, ກິດຈະກຳທີ່ເດັກນ້ອຍຈະປະຕິບັດໃນແຕ່ລະໄລຍະຊັ້ນຮຽນມີດັ່ງນີ້:

ກ. ການອ່ານອອກສຽງ ແລະ ການທ່ອງຈຳບົດອະທິຖານ

ຂ. ການຮ້ອງເພງ

ຄ. ການຮຽນຮູ້ ແລະ ການທ່ອງຈຳພຣະວັດຈະນະ ຈາກຄຳສອນບາຮາຍ

ງ. ການຟັງເລື່ອງເລົ່າ

ຈ. ການຫຼິ້ນເກມ

ສ. ການທາສີໃສ່ຮູບແຕ້ມ

ຊ. ການອະທິຖານປິດຊັ້ນຮຽນ

ກິດຈະກຳເລົ່ານີ້ຕາມທຳມະຊາດ ມີແນວໂນ້ມທີ່ຈະແຕກຕ່າງກັນໃນລະດັບຂອງພະລັງງານ ແລະລະດັບການເຄື່ອນໄຫວທີ່ຕ້ອງການ; ບາງກິດຈະກຳຈະມີການເຄື່ອນໄຫວຫຼາຍ ແລະ ກິດຈະກຳອື່ນມີຄວາມສະຫງົບຫຼາຍ.

ໃນເຈັດກິດຈະກຳນີ້ ອັນໃດມີການເຄື່ອນໄຫວຫຼາຍທີ່ສຸດ?

______________________________

______________________________

______________________________

ອັນໃດເປັນກິດຈະກຳທີ່ງຽບກວ່າໝູ່?

______________________________

______________________________

______________________________

ມີຄວາມຮຽກຮ້ອງຕ້ອງການບາງຢ່າງ ເພື່ອຮັກສາບັນຍາກາດທີ່ເປັນລະບຽບໃຫ້ກັບຄູສອນ. ຕໍ່ໄປນີ້ອັນໃດທີ່ປະກອບສ່ວນ (Contribute) ເຂົ້າໃນບັນຍາກາດທີ່ຕ້ອງການ ແລະ ອັນໃດຂັດຂວາງ (Hamper) ບັນຍາກາດທີ່ເປັນລະບຽບ? ຂໍໃຫ້ໝາຍດ້ວຍ "C" ຫຼື "H" ຕາມຄວາມເໝາະສົມ.

_____ ຮັກສາພື້ນທີ່ບ່ອນຈັດຊັ້ນຮຽນໃຫ້ສະອາດ ແລະ ເປັນລະບຽບ
_____ ຍັງຮັກສາຄວາມສະຫງົບແລະອົດທົນ, ບໍ່ວ່າຈະຢູ່ໃນສະຖານະການໃດ
_____ ສູນເສຍຄວາມອົດທົນເມື່ອເດັກນ້ອຍບໍ່ຟັງຄໍາແນະນໍາ
_____ ການກະກຽມອຸປະກອນສໍາລັບແຕ່ລະກິດຈະກໍາໄວ້ລ່ວງໜ້າ
_____ ຊອກຫາອຸປະກອນສໍາລັບກິດຈະກໍາທົ່ວທຸກແຫ່ງ ໃນຂະນະທີ່ເດັກນ້ອຍລໍຖ້າ
_____ ການອະທິບາຍຢ່າງຈະແຈ້ງວ່າເດັກນ້ອຍຕ້ອງຕັ້ງໃຈໃນແຕ່ລະກິດຈະກໍາ
_____ ມີກິດຈະກໍາອື່ນໆທີ່ກຽມພ້ອມໄວ້ ສໍາລັບເດັກນ້ອຍຜູ້ທີ່ແລ້ວວຽກຂອງພວກເຂົາກ່ອນໝູ່ເພື່ອໃຫ້ພວກເຂົາມີສ່ວນຮ່ວມ
_____ ຊ່ວຍໃຫ້ເດັກນ້ອຍຫັນປ່ຽນຈາກກິດຈະກໍາໜຶ່ງ ໄປຫາອີກກິດຈະກໍາໜຶ່ງຢ່າງເປັນລະບຽບ
_____ ການອ່ານເລື່ອງເລົ່າໃຫ້ເດັກນ້ອຍຟັງຈາກປຶ້ມ
_____ ການຮຽນຮູ້ເລື່ອງເລົ່າເປັນຢ່າງດີ ຈົນສາມາດເລົ່າສູ່ເດັກນ້ອຍຟັງດ້ວຍຄວາມກະຕືລືລົ້ນ ແລະ ສະດວກສະບາຍ

## ຕອນທີ 16

ໃນຄວາມບຸກບືນເພື່ອສ້າງບັນຍາກາດຂອງລະບຽບວິໄນ ແລະ ຄວາມເປັນລະບຽບໃນຊັ້ນຮຽນ, ເຈົ້າຈະຈໍາເປັນຕ້ອງກໍານົດມາດຕະຖານການປະຕິບັດທີ່ແນ່ນອນ. ໂດຍສະເພາະສອງສາມອາທິດທໍາອິດທີ່ສໍາຄັນຕໍ່ການປະຕິບັດນີ້. ສິ່ງໃດກໍ່ຕາມທີ່ຄາດວ່າຈະຖືກກໍານົດໃນໄລຍະເບື້ອງຕົ້ນນີ້ ແມ່ນມີແນວໂນ້ມເພື່ອຮັກສາໄວ້ຕະຫຼອດປີ. ໃນຕອນເລີ່ມຕົ້ນ, ຄູຄວນເລືອກຫຼາຍໆມາດຕະຖານຂອງຄວາມປະພຶດ ແລະອະທິບາຍໃຫ້ພວກເຂົາ, ຄັ້ງໜຶ່ງບໍ່ເກີນສາມຫຼືສີ່ຄວາມປະພຶດ, ໃນພາສາແບບງ່າຍດາຍສໍາລັບເດັກນ້ອຍ. ມາດຕະຖານໂດຍທົ່ວໄປເຊັ່ນ "ພວກເຮົາຄວນປະຕິບັດຕົວເຮົາເອງ" ຈະບໍ່ຊ່ວຍໃຫ້ພວກເຂົາເຂົ້າໃຈຫຼາຍ, ແຕ່ຢ່າງອື່ນເຊັ່ນ "ພວກເຮົາປ່ຽນຜຽນກັນໃນເວລາທີ່ເວົ້າ" ແມ່ນງ່າຍທີ່ຈະເຂົ້າໃຈ. ຂໍໃຫ້ສົນທະນາກັບສະມາຊິກຂອງກຸ່ມຂອງເຈົ້າ ກ່ຽວກັບມາດຕະຖານທີ່ກໍານົດໄວ້ໃນຂໍ້ຄວາມຂ້າງລຸ່ມນີ້ ແລະ ຂຽນເພີ່ມອີກສອງສາມຂໍ້ຄວາມ.

ກ. ພວກເຮົາຊ່ວຍເຫຼືອເຊິ່ງກັນແລະກັນໃນເວລາທີ່ພວກເຮົາຫຼິ້ນເກມ.
ຂ. ພວກເຮົາຍັງຄົງສາມັກຄີ ແລະ ບໍ່ຕີກັນ.
ຄ. ພວກເຮົາຍິນດີຕ້ອນຮັບເພື່ອນໃໝ່ທີ່ມາຮ່ວມຊັ້ນຮຽນຂອງພວກເຮົາ.

ງ. ພວກເຮົາຟັງກັນແລະກັນ ແລະ ຟັງຄູສອນຂອງພວກເຮົາເມື່ອເວລາທີ່ຄູເວົ້າ.
ຈ. ພວກເຮົາເວົ້າລົມກັນດ້ວຍລີ້ນທີ່ອ່ອນໂຍນ.
ສ. ພວກເຮົາລໍຖ້າຜຽນຂອງພວກເຮົາທີ່ຈະເວົ້າ.
ຊ. ພວກເຮົາແບ່ງປັນສີທຽນໃຊ້ນຳກັນ.
ຍ. ພວກເຮົາພະຍາຍາມເຮັດວຽກຂອງພວກເຮົາໃຫ້ແລ້ວ.
ດ. ____________________
ຕ. ____________________
ຖ. ____________________
ທ. ____________________

ຄວາມຄາດຫວັງຕໍ່ຄວາມປະພຶດ, ເມື່ອປະກອບເປັນປະໂຫຍກແບບງ່າຍດາຍເຊັ່ນນີ້ ສາມາດສົນທະນາກັບເດັກນ້ອຍ, ແລະ ຂໍ້ຄວາມທີ່ອ່ານອອກສຽງກັບພວກເຂົາເປັນປົກກະຕິ. ດ້ວຍວິທີນີ້, ຂໍ້ຄວາມສາມາດຖືກຊຶມຊັບພາຍໃນ ເຊິ່ງເປັນມາດຕະຖານທີ່ເດັກນ້ອຍປາດຖະໜາ ແລະ ຈະບໍ່ເປັນຖືວ່າເປັນກົດລະບຽບທີ່ໄດ້ວາງອອກຢ່າງເຂັ້ມງວດ. ເມື່ອພວກເຂົາຄຸ້ນເຄີຍກັບຊຸດຂອງຄວາມຄາດຫວັງເລົ່ານີ້, ຄູສາມາດຄ່ອຍໆແນະນຳຄວາມຄາດຫວັງອື່ນ, ການທ່ອງຈຳເພື່ອຫຼີກລ້ຽງການເພີ່ມຈຳນວນຫຼາຍພ້ອມກັນໃນຄັ້ງດຽວ. ຫາກມີຂໍ້ຫຍຸ້ງຍາກເກີດຂຶ້ນໃນໄລຍະຂອງຊັ້ນຮຽນ, ເດັກນ້ອຍສາມາດໄດ້ຮັບການຊ່ວຍເຫຼືອ ໃນການສ້າງບາງປະໂຫຍກທີ່ງ່າຍດາຍເພື່ອກ່າວເຖິງມັນ. ໃນກໍລະນີດັ່ງກ່າວ, ຄູຄວນໝັ້ນຄົງ ແລະ ສະໝໍ່າສະເໝີ, ແຕ່ໃນຂະນະດຽວກັນກໍ່ເປັນມິດ ແລະ ເຕັມໄປດ້ວຍຄວາມອ່ອນໂຍນ.

## ຕອນທີ 17

ໃນຕອນທີ 8 ພວກເຮົາໄດ້ກວດສອບໂດຍຫຍໍ້ ກ່ຽວກັບຄວາມສຳຄັນຂອງອົງປະກອບຕ່າງໆຂອງບົດຮຽນລະດັບທີ 1 ແລະ ໄດ້ປຶກສາຫາລືວິທີທີ່ພວກເຂົາແຕ່ລະຄົນ ຈະບຸກບືນປະກອບສ່ວນເຂົ້າໃນອຸປະນິໄສທີ່ໜ້າສັນລະເສີນ. ໃນຕອນນີ້ແລະອີກເຈັດຕອນຕໍ່ໄປ ພວກເຮົາຈະພິຈາລະນາບາງວິທີການທີ່ເຈົ້າສາມາດເຮັດໃຫ້ເດັກນ້ອຍມີສ່ວນຮ່ວມໃນກິດຈະກຳທີ່ໄດ້ແນະນຳໄວ້, ເຊິ່ງເລີ່ມຕົ້ນດ້ວຍການທ່ອງຈຳ.

ການທ່ອງຈຳບົດອະທິຖານ ແລະ ພຣະວັດຈະນະຈາກຄຳສອນ ແມ່ນເປັນສູນກາງຂອງບົດຮຽນທີ່ເຈົ້າຈະສອນ, ແລະ ໃນແຕ່ລະໄລຍະຊັ້ນຮຽນເຈົ້າຈະຊ່ວຍນັກຮຽນຂອງເຈົ້າ ດ້ວຍຄວາມພະຍາຍາມຂອງພວກເຂົາທີ່ອ່ານອອກສຽງບົດອະທິຖານຈາກຄວາມຊົງຈຳ ແລະ ຮຽນພຣະວັດຈະນະໃຫມ່ອັນໜຶ່ງຈົນຂຶ້ນໃຈ. ກ່ອນພວກເຮົາຈະສົນທະນາວິທີທີ່ເຈົ້າຈະສາມາດເຮັດໃຫ້ພວກເຂົາ ມີສ່ວນຮ່ວມໃນກິດຈະກຳນີ້, ໃນຄວາມພະຍາຍາມຊ່ວຍຄົນລຸ້ນເຍົາໃຫ້ທ່ອງຈຳຖ້ອຍຄຳອັນສັກສິດ ມີບາງຢ່າງທີ່ເວົ້າເຖິງກ່ຽວກັບແນວຄວາມຄິດໂດຍທົ່ວໄປທີ່ຜິດ ດີທີ່ສຸດແມ່ນຄວນຫຼີກລ້ຽງ.

ເຈົ້າອາດຈະເຄີຍໄດ້ຍິນ ຫຼືອາດຈະໄດ້ຍິນໃນຂະນະທີ່ເຈົ້າເລີ່ມສອນ, ຄຳເຫັນເຊັ່ນວ່າ "ເດັກນ້ອຍບໍ່ຄວນເຮັດສິ່ງໃດຊ້ຳອີກ", "ພວກເຂົາຄວນຮຽນຮູ້ທີ່ຈະສະແດງຄວາມຄິດຂອງຕົນ", "ພວກເຂົາບໍ່ຄວນຂໍ້ເທັດຈິງແລະຂໍ້ມູນແບບນົກແກ້ວ". ໃນຄວາມເປັນຈິງ, ການວິພາກວິຈານສິ່ງທີ່ເອີ້ນວ່າການຮຽນຮູ້-ທ່ອງຈຳນັ້ນແພ່ຫຼາຍ ຈົນຄວາມຄິດເລົ່ານີ້ກຳລັງແພ່ລາມໄປທົ່ວທຸກສ່ວນຂອງໂລກ. ມັນເປັນຄວາມຈິງທີ່ຄົນເຮົາສາມາດຈົດຈຳສົມຜົນໃນຄະນິດສາດ, ນິຍາມຂອງກົດໃນຟີຊິກສາດ, ຫຼື ທ່ອນຂອງຄຳເວົ້າໃນວັນນະຄະດີທີ່ມີຄວາມເຂົ້າໃຈພຽງເລັກນ້ອຍຫຼືບໍ່ມີ. ແຕ່ຄຳຖາມທີ່ເຈົ້າຄວນຖາມຕົວເອງວ່າ: ເປັນຫຍັງການທ່ອງຈຳຂອງຄຳຖະແຫຼງທີ່ເລິກເຊິ່ງ ແລະ ຄວາມເຂົ້າໃຈຄວາມຫມາຍຂອງມັນ ຈະຖືກຈັດວາງໄວ້ກົງກັນຂ້າມກັນແລະກັນ? ຄວາມຊົງຈຳເປັນພະລັງຂອງຈິດໃຈມະນຸດຫຼາຍ ຄືກັບພະລັງແຫ່ງຄວາມເຂົ້າໃຈ, ຄວາມຄິດ, ແລະ ຈິນຕະນາການ. ທັງໝົດເສີມສ້າງແລະເສີມກຳລັງເຊິ່ງກັນແລະກັນ. ພວກເຮົາພຽງແຕ່ສາມາດຈິນຕະນາການໄດ້ວ່າ ການທ່ອງຈຳຖ້ອຍພຣະຄຳຂອງພຣະຜູ້ເປັນເຈົ້າ, ດ້ວຍສັກກາຍະພາບທີ່ບໍ່ສິ້ນສຸດໃນການສ້າງຫົວໃຈ ແລະ ຈິດໃຈຂອງມະນຸດຂຶ້ນມາໃໝ່, ຈະຍົກລະດັບສະຕິປັນຍາແລະຄວາມເຂົ້າໃຈໃນເດັກນ້ອຍ. ຕໍ່ມາ, ເມື່ອພວກເຂົາຜ່ານຊ່ວງຕ່າງໆຂອງການເຕີບໂຕ, ພວກເຂົາຈະໄດ້ຮັບຄວາມຢັ່ງຮູ້ໃຫມ່ໆ ຈາກຂໍ້ຄວາມທີ່ພວກເຂົາໄດ້ບັນທຶກໃນຄວາມຊົງຈຳ, ແລະ ຕະຫຼອດຊີວິດຂອງພວກເຂົາ ພວກເຂົາຈະສາມາດໃຊ້ພະລັງແຫ່ງການສ້າງສັນ, ການຟື້ນຟູ ແລະ ການປ່ຽນແປງຈາກຖ້ອຍຄຳຂອງພຣະຜູ້ເປັນເຈົ້າ.

ຂໍໃຫ້ສົນທະນາກັບສະມາຊິກຄົນອື່ນໆໃນກຸ່ມຂອງທ່ານ ວ່າເປັນຫຍັງມັນຈຶ່ງສຳຄັນສຳລັບຄູທີ່ຈະເຊື່ອໝັ້ນວ່າ ການທ່ອງຈຳຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ຈະຊ່ວຍໃຫ້ເກີດຄວາມໝັ້ນຄົງຢູ່ໃນຈິດໃຈ ແລະ ຫົວໃຈ ທີ່ເປັນແກ່ນຂອງຄວາມຮູ້ທາງຈິດວິນຍານຂອງເດັກນ້ອຍ, ເມັດພືດທີ່ຈະຂະຫຍາຍຕົວຕາມການເວລາທີ່ຈະຮັບຜິດຊອບໝາກໄມ້ທີ່ມີກິ່ນຫອມ.

___________________________________________

___________________________________________

___________________________________________

___________________________________________

___________________________________________

___________________________________________

___________________________________________

## ຕອນທີ 18

ດ້ວຍຄວາມຄິດການທົບທວນຂ້າງຕົ້ນຢູ່ໃນໃຈ, ໃຫ້ພວກເຮົາຄິດເຖິງວິທີທີ່ເຈົ້າຈະຊ່ວຍເຫຼືອນັກຮຽນຂອງເຈົ້າທ່ອງຈຳຂໍ້ຄວາມຈາກຄຳສອນ, ການນຳເອົາພຣະວັດຈະນະໃນບົດທີ 1 ເປັນຕົວຢ່າງ.

ເພື່ອເລີ່ມຕົ້ນ, ເຈົ້າຈະຕ້ອງຊ່ວຍພວກເຂົາໃນການໄດ້ຮັບຄວາມເຂົ້າໃຈເບື້ອງຕົ້ນບາງຢ່າງ ກ່ຽວກັບຄວາມສຳຄັນຂອງຄຸນລັກສະນະທາງວິນຍານທີ່ບົດຮຽນນັ້ນເນັ້ນໜັກໃສ່. ສຳລັບຈຸດປະສົງນີ້, ມີຂໍ້ແນະນຳສັ້ນໆໄດ້ສະໜອງໄວ້ໃຫ້ເຈົ້າເພື່ອເຮັດທຳຕາມ. ຈາກນັ້ນ ໃຫ້ເຈົ້າຊ່ວຍພວກເຂົາໃຫ້ໄດ້ຮັບຄວາມເຂົ້າໃຈພື້ນຖານທຳອິດ ກ່ຽວກັບຄວາມໝາຍຂອງພຣະວັດຈະນະ ໂດຍການເລືອກຄຳສັບຍາກໆທີ່ຢູ່ໃນນັ້ນ ແລະ ການໃຊ້ຄຳຍາກເລົ່ານັ້ນໃນສະຖານະການ ທີ່ເດັກນ້ອຍສາມາດຈຳແນກໄດ້ຢ່າງງ່າຍດາຍ. ໃຫ້ພິຈາລະນາວິທີການນີ້ດັ່ງທີ່ໄດ້ອະທິບາຍໄວ້ໃນບົດທີ 1, ເຊິ່ງກ່າວເຖິງຄຸນລັກສະນະຂອງຄວາມບໍລິສຸດ.

---

ຫົວໃຈຂອງເຮົາປຽບເໝືອນກະຈົກ. ເຮົາຄວນຮັກສາກະຈົກນັ້ນໃຫ້ສະອາດຢູ່ສະເໝີ. ຄວາມກຽດຊັງຜູ້ໃດຜູ້ໜຶ່ງ, ຄວາມອິດສາຜູ້ໃດຜູ້ໜຶ່ງ ແລະ ໄຮ້ຄວາມກະລຸນາຕໍ່ຜູ້ອື່ນ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ - ສິ່ງເລົ່ານີ້ເປັນເໝືອນຝຸ່ນ ທີ່ປົກຄຸມກະຈົກຂອງຫົວໃຈເຮົາ. ເມື່ອຫົວໃຈຂອງເຮົາບໍລິສຸດ, ຫົວໃຈນັ້ນຈະສະທ້ອນແສງຂອງພຣະຜູ້ເປັນເຈົ້າ ແລະ ຄຸນລັກສະນະຂອງພຣະອົງ - ຄຸນລັກສະນະຕ່າງໆເຊັ່ນຄວາມກາລຸນາ, ຄວາມຮັກ, ຄວາມເອື້ອເຟື້ອ - ແລະເຮົາກໍ່ຈະກາຍເປັນຕົ້ນເຫດແຫ່ງຄວາມສຸກໃຫ້ແກ່ຜູ້ອື່ນ. ເພື່ອຊ່ວຍໃຫ້ຈິດໃຈຂອງເຮົາບໍລິສຸດ, ຂໍໃຫ້ເຮົາທ່ອງຈຳພຣະວັດຈະນະນີ້ຂອງ ພຣະບາຮາອຸລລາຫ໌:

**"ໂອ ບຸດແຫ່ງທັມ! ຄຳແນະນຳເບື້ອງຕົ້ນຂອງພຣະອົງຄື: ຈົ່ງມີຫົວໃຈອັນບໍລິສຸດ, ເມດຕາ ແລະ ຜ່ອງໃສ..."**

*ຄຳແນະນຳ*

1. ມື້ໜຶ່ງ ກີຣາດ ແລະ ມາຣີ ໄດ້ທາສີຮູບແຕ້ມ. ກີຣາດ ຕ້ອງການສີຫຼຽນສີເຫຼືອງ, ແຕ່ Mary ບໍ່ຕ້ອງການທີ່ຈະເອົາສີນັ້ນໃຫ້ລາວ. ຄູສອນບອກ ມາຣີວ່ານາງຄວນແບ່ງປັນ. ຄູສອນໃຫ້ຄຳແນະນຳທີ່ດີແກ່ ມາຣີ.
2. ພາຫຣີເຊຍ ຕ້ອງຕັດສິນໃຈວ່າ ຈະໃຊ້ເງິນຂອງນາງຈ່າຍເຂົ້າໜົມອົມ ຫຼື ປຶ້ມນິທານ. ພໍ່ແມ່ຂອງນາງແນະນຳໃຫ້ນາງຊື້ປຶ້ມນິທານ. ພໍ່ແມ່ຂອງນາງໃຫ້ຄຳແນະນຳທີ່ດີແກ່ ພາຫຣີເຊຍ.

*ມີ (ຄອບຄອງ)*

1. ທິນາຍ ມັກອ່ານບົດອະທິຖານກ່ອນນອນ. ນາງອ່ານຈາກປຶ້ມອະທິຖານຂະໜາດນ້ອຍ. ທິນາຍ ມີປຶ້ມອະທິຖານຂະໜາດນ້ອຍ.

---

2. ພວກເຮົາປູກຜັກແຊບໆຫຼາຍຊະນິດຢູ່ໃນສວນຂອງພວກເຮົາ. ພວກເຮົາມີທີ່ດິນດີໆໄວ້ໃຫ້ຜັກສົດຫຼາຍຊະນິດ.

*ຫົວໃຈອັນບໍລິສຸດ*

1. ເຄທີ ໃຈຮ້າຍແລະເວົ້າຄຳທີ່ບໍ່ສຸພາບກັບ ອາກອດ. ອາກອດ ເສຍໃຈແຕ່ກໍໃຫ້ອະໄພແກ່ ເຄທີ ຢ່າງໄວວາ. ອາກອດ ມີຫົວໃຈອັນບໍລິສຸດ.
2. ແກັດສ໌ຕາໂວ ມັກແບ່ງປັນຄຸກກີ້ຂອງລາວກັບເດັກນ້ອຍທັງຫມົດ, ແມ່ນແຕ່ຈອດຊ໌ ຜູ້ທີ່ບໍ່ໄດ້ແບ່ງປັນຫຍັງໃຫ້ກັບຄົນອື່ນ. ແກັດສ໌ຕາໂວ ມີຫົວໃຈອັນບໍລິສຸດ.

*ຫົວໃຈທີ່ເມດຕາ*

1. ເມື່ອພໍ່ແມ່ຂອງນາງເຊີນຫມູ່ເພື່ອນໄປບ້ານ, ໝິງຫຼີງ ເສີບອາຫານໃຫ້ແກ່ເຂົາເຈົ້າຢ່າງມີຄວາມສຸກ. ໝິງຫຼີງ ມີຫົວໃຈທີ່ເມດຕາ.
2. ທ່ານ ໂຣເບີດສັນ ມີອາຍຸຫຼາຍ. ຈິມມີ້ ຊ່ວຍລາວຖືຫມາກໄມ້ທີ່ລາວເກັບກ່ຽວໄປຕະຫຼາດ. ຈິມມີ້ ມີຫົວໃຈທີ່ເມດຕາ.

*ຫົວໃຈທີ່ຜ່ອງໃສ*

1. ເມື່ອຂ້ອຍຮູ້ສຶກໂສກເສົ້າ ແມ່ກໍໃຫ້ກຳລັງໃຈຂ້ອຍສະເໝີ ແລະ ເຮັດໃຫ້ຂ້ອຍມີຄວາມສຸກ. ແມ່ຂອງຂ້ອຍມີຫົວໃຈທີ່ຜ່ອງໃສ.
2. ໂອບູຢະ ເຈັບປ່ວຍ ແລະ ຕ້ອງໃຊ້ເວລາທັງໝົດຢູ່ເທິງຕຽງນອນ. ລາວອ່ານຫຼາຍໆບົດອະທິຖານ, ແລ້ວບໍ່ໄດ້ໂສກເສົ້າ, ແລະ ສືບຕໍ່ສະແດງຄວາມສຸກອອກມາ. ໂອບູຢະ ມີຫົວໃຈທີ່ຜ່ອງໃສ.

ແນ່ນອນວ່າ ເຈົ້າຈະບໍ່ພຽງແຕ່ອ່ານຂໍ້ຄວາມຄຳແນະນຳ ແລະ ຄຳອະທິບາຍປະໂຫຍກຈາກປຶ້ມເຫຼັ້ມນີ້, ສະນັ້ນ ເຈົ້າຈຳເປັນຕ້ອງໄດ້ກະກຽມໃຫ້ດີລ່ວງຫນ້າ ເພື່ອນຳສະເຫນີຂໍ້ຄວາມຄຳແນະນຳ ແລະ ຄຳອະທິບາຍປະໂຫຍກໃຫ້ເປັນທຳມະຊາດ.

ສຳລັບບົດອະທິຖານທີ່ເດັກນ້ອຍທ່ອງຈຳ, ແນະນຳໃຫ້ເຈົ້າໃຊ້ວິທີການຄ້າຍຄືກັນ, ແຕ່ໃຫ້ເຈົ້າຕັດສິນໃຈວ່າ ຄຳສັບຫຼືວະລີໃດທີ່ອາດຈະຕ້ອງການຄຳອະທິບາຍ. ໃນເລື່ອງນີ້, ເຈົ້າຈະຕ້ອງເຝິກການເອົາໃຈໃສ່ບາງຢ່າງ. ມີບາງຄັ້ງທີ່ມັນອາດຈະພຽງພໍທີ່ຈະອະນຸຍາດໃຫ້ຄົນລຸ້ນເຍົາ ລວບລວມຄວາມຫມາຍຂອງຄຳສັບຕ່າງໆຈາກບົດອະທິຖານດ້ວຍຕົວຂອງເຂົາເອງ. ຕົວຢ່າງ ຂໍໃຫ້ເບິ່ງບົດອະທິຖານ

ຂ້າງລຸ່ມນີ້ເດັກນ້ອຍເລີ່ມຕົ້ນທີ່ຈະຮຽນຮູ້ໃນບົດຮຽນ 1. ເຂົາເຈົ້າຈະພ້ອມຮັບຮູ້ວ່າ "ຫົວໃຈອັນບໍລິສຸດ" ແລະ "ໄຂ່ມຸກ" ແມ່ນສິ່ງທີ່ມີຄ່າ. ແຕ່ເພື່ອເຂົ້າໃຈວ່າ, ໃນທີ່ສຸດແລ້ວ ຫົວໃຈອັນບໍລິສຸດໄດ້ຖືກມອບໃຫ້ພວກເຮົາ ໂດຍພຣະຜູ້ເປັນເຈົ້າ, ພວກເຂົາຈຳເປັນຕ້ອງການຮຽນຮູ້ວ່າຄຳວ່າ "ປະທານ" ໝາຍຄວາມວ່າແນວໃດ. ເຈົ້າຈະສ້າງປະໂຫຍກໃດແດ່ເພື່ອວັດຖຸປະສົງນີ້?

**"ພຣະອົງຄືພຣະຜູ້ເປັນເຈົ້າ! ໂອ ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂໍຊົງປະທານ ຫົວໃຈອັນບໍລິສຸດໃຫ້ຂ້າພະອົງ, ຄືກັບໄຂ່ມຸກ."**[37]

________________________________________

________________________________________

________________________________________

________________________________________

## ຕອນທີ 19

ຕອນນີ້ໃຫ້ເຮົາພິຈາລະນາວິທີການໜຶ່ງທີ່ເຈົ້າສາມາດປະຕິບັດໄດ້ ໃນການຊ່ວຍໃຫ້ນັກຮຽນຂອງເຈົ້າທ່ອງຈຳບົດອະທິຖານ ແລະ ພຣະວັດຈະນະ. ສິ່ງທີ່ເຈົ້າສາມາດເຮັດໄດ້ຄື ແບ່ງຂໍ້ຄວາມອອກເປັນສ່ວນນ້ອຍໆ, ເຊິ່ງສາມາດຮຽນຮູ້ໄດ້ເທື່ອລະສ່ວນ. ຫຼັງຈາກສ່ວນທີໜຶ່ງໄດ້ຮັບການຈົດຈຳແລ້ວ, ສ່ວນທີສອງສາມາດເພີ່ມໃສ່ສ່ວນທີໜຶ່ງແລະເພີ່ມຕໍ່ໄປ, ຈົນກວ່າພຣະວັດຈະນະ ຫຼື ບົດອະທິຖານທັງໝົດໄດ້ຖືກທ່ອງຈຳ. ເຈົ້າສາມາດຂໍໃຫ້ເດັກນ້ອຍອ່ານຄືນສ່ວນຕ່າງໆນຳຫຼັງທ່ານ, ບາງຄັ້ງກໍເປັນແຕ່ລະບຸກຄົນ ແລະ ບາງເວລາກໍອ່ານຄືນເປັນກຸ່ມ.

ຍົກຕົວຢ່າງ, ສອນພຣະວັດຈະນະ ບົດທີ 1 ແກ່ນັກຮຽນຂອງເຈົ້າ, ເຈົ້າຈະເລີ່ມຕົ້ນດ້ວຍຄຳວະລີທີ່ວ່າ "ໂອ ບຸດແຫ່ງທັມ!" ແລ້ວໃຫ້ພວກເຂົາອ່ານຄືນອີກ. ຈາກນັ້ນ ເຈົ້າກໍລວມເອົາ "ໂອ ບຸດແຫ່ງທັມ!" ກັບ "ຄຳແນະນຳເບື້ອງຕົ້ນຂອງພຣະອົງຄື" ແລະ ຂໍໃຫ້ພວກເຂົາອ່ານຄືນສອງຂໍ້ຄວາມນຳກັນ. ສຸດທ້າຍໃຫ້ເຈົ້າເພີ່ມຄຳວ່າ "ຈົ່ງມີຫົວໃຈອັນບໍລິສຸດ, ເມດຕາ ແລະ ຜ່ອງໃສ". ເມື່ອກຸ່ມໄດ້ຮຽນຮູ້ພຣະວັດຈະນະໃນວິທີນີ້, ກໍສາມາດຊ່ວຍເດັກນ້ອຍຈຳນວນໜຶ່ງໃຫ້ເວົ້າພຣະວັດຈະນະ ອອກມາຈາກຄວາມຊົງຈຳ. ແນ່ນອນ, ເຈົ້າຈຳເປັນຕ້ອງເຮັດໃຫ້ແນ່ໃຈວ່າ ການເຝິກຝົນນີ້ຖືກເຮັດໃນລັກສະນະທີ່ຄ່ອງແຄ້ວ, ສະນັ້ນເດັກນ້ອຍຍັງຄົງເອົາໃຈໃສ່ ແລະ ຮັກສາບັນຍາກາດທີ່ມີຄວາມສຸກຫັນສາໄວ້. ນອກຈາກນັ້ນ, ຄວາມສາມາດຂອງພວກເຂົາເພີ່ມຂຶ້ນເທື່ອລະກ້າວ, ພວກເຂົາອາດຈະສາມາດທ່ອງຈຳ ສ່ວນຕ່າງໆຂອງບົດສວດມົນຍາວຂຶ້ນ ແລະ ທ່ອງຈຳພຣະວັດຈະນະໄດ້ໝົດທຸກສ່ວນໄດ້ໃນຄັ້ງດຽວ.

ໃນຂະນະທີ່ເຈົ້າດຳເນີນສ່ວນນີ້ຂອງຊັ້ນຮຽນ, ສະຖານະການບາງຢ່າງອາດຈະເກີດຂຶ້ນເຊິ່ງຍາກທີ່ຈະຄາດເດົາ, ແລະ ເຈົ້າຈະຕ້ອງຮຽນຮູ້ວິທີແກ້ໄຂສິ່ງເຫຼົ່ານີ້ໂດຍຜ່ານປະສົບການໂດຍກົງ. ຍັງມີບາງ

ສະຖານະການທີ່ເຈົ້າຄວນພິຈາລະນາໃຫ້ດີ ເພື່ອເປັນສ່ວນໜຶ່ງຂອງການກະກຽມຂອງເຈົ້າ. ຂໍໃຫ້ສົນທະນາຄຳຖາມຕໍ່ໄປນີ້ກັບສະມາຊິກຄົນອື່ນໆໃນກຸ່ມຂອງເຈົ້າ:

- ຖ້າຢູ່ໃນຫ້ອງຮຽນຂອງເຈົ້າມີເດັກນ້ອຍຫຼາຍຄົນ ເຈົ້າຈະຊ່ວຍເຂົາເຈົ້າທ່ອງຈຳພຣະວັດຈະນະແນວ ໃດ?
- ເຈົ້າຈະເຮັດແນວໃດຖ້າເດັກນ້ອຍບາງຄົນຈື່ໄວກວ່າຄົນອື່ນ?
- ເຈົ້າຈະເຮັດແນວໃດຖ້າເດັກນ້ອຍຄົນໜຶ່ງຫຼືຫຼາຍຄົນ ມີຄວາມຫຍຸ້ງຍາກໃນການທ່ອງຈຳ?
- ເຖິງແມ່ນວ່າເດັກນ້ອຍບໍ່ສາມາດທ່ອງຈຳພຣະວັດຈະນະໄດ້ທັງໝົດ ໃນຊ່ວງໄລຍະຊັ້ນຮຽນ, ເຈົ້າຈະຮັບປະກັນໄດ້ແນວໃດ ວ່າເດັກນ້ອຍຍັງຄົງຮູ້ສຶກຕ້ອງທ່ອງຈຳໃຫ້ສຳເລັດ?

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 20

ເດັກນ້ອຍມັກຮ້ອງເພງ, ເຊິ່ງຈັດກ່ອນການທ່ອງຈຳພຣະວັດຈະນະ ແລະ ກິດຈະກຳນີ້ ເປັນໜຶ່ງໃນຄວາມສຸກຫັນສາທີ່ສຸດ. ກຸນແຈສູ່ຄວາມສຳເລັດແມ່ນການເຝິກຊ້ອມ. ເຈົ້າເອງຄວນຮ້ອງເພງກັບຜູ້ທີ່ຮູ້ຈັກເພງເລົ່ານີ້, ເອົາໃຈໃສ່ເປັນພິເສດກັບຈັງຫວະ ແລະ ທຳນອງ. ຖ້າເຈົ້າສາມາດຮັບຟັງເພງຕ່າງໆທີ່ອັດບັນທຶກສຽງ, ເຈົ້າຈະໄດ້ຮຽນຮູ້ເພງເລົ່ານັ້ນໄດ້ໄວຂຶ້ນ. ສຳລັບເດັກນ້ອຍ, ເຈົ້າຕ້ອງໄດ້ຮ້ອງເພງນັ້ນຊ້ຳແລ້ວຊ້ຳອີກ ຈົນກວ່າເຂົາເຈົ້າຈະຮຽນເພງນັ້ນໄດ້ດີແລ້ວ. ຄຳເວົ້າໃນເພງ ສາມາດທ່ອງຈຳໄດ້ດ້ວຍວິທີດຽວກັນກັບການທ່ອງຈຳພຣະວັດຈະນະ, ພຽງແຕ່ຕອນນີ້ ຄຳເວົ້າຕ່າງໆແມ່ນເວົ້າຄືນພ້ອມກັບທຳນອງ. ເຈົ້າອາດຈະໄດ້ພົບວ່າ ບາງເພງຍາກເກີນໄປສຳລັບພວກເຂົາທີ່ຈະຮ້ອງ ເຊິ່ງຂຶ້ນກັບຄວາມສາມາດຂອງນັກຮຽນຂອງເຈົ້າ. ໃນກໍລະນີດັ່ງກ່າວ, ມັນອາດຈະເປັນໄປໄດ້ທີ່ທ່ານຈະຮ້ອງວັກຕ່າງໆຂອງເພງ ແລະ ໃຫ້ນັກຮຽນຂອງເຈົ້າຮ່ວມຮ້ອງປະສານສຽງກັບເຈົ້າ.

## ຕອນທີ 21

ກົດຈະກຳຕໍ່ໄປ ພວກເຮົາຈະພິຈາລະນາເຖິງການເລົ່າເລື່ອງ. ດັ່ງທີ່ໄດ້ກ່າວກ່ອນໜ້ານີ້, ເລື່ອງເລົ່າສ່ວນໃຫຍ່ຢູ່ໃນຊັ້ນຮຽນລະດັບທີ 1 ແມ່ນມາຈາກຊີວິດຂອງ ພຣະອັບດຸລບາຮາ. ເລື່ອງເລົ່ານີ້ມີຈຸດປະສົງພິເສດຫຼາຍ. ມັນຊ່ວຍໃຫ້ເດັກນ້ອຍເຫັນວ່າ ຄຸນລັກສະນະທາງຈິດວິນຍານທີ່ເຂົາເຈົ້າພະຍາຍາມຮັບເອົານັ້ນ ໄດ້ຖືກສະແດງອອກຢ່າງຄົບຖ້ວນ ໃນພຣະຜູ້ຊົງເປັນແບບຢ່າງທີ່ສົມບູນແບບ ຕະຫຼອດວັນເວລາຂອງພຣະອົງທີ່ຢູ່ເທິງບົນໂລກນີ້ໄດ້ແນວໃດ. ຄວາມເຄົາລົບບູຊາທີ່ຄູສະແດງໃຫ້ເຫັນເມື່ອເລົ່າເລື່ອງເລົ່ານີ້ ໄດ້ກະຕຸ້ນຄວາມຮູ້ສຶກປະເສີດໃນຫົວໃຈທີ່ອ່ອນໂຍນຂອງເຂົາເຈົ້າ ແລະ ປຸກຄວາມອ່ອນໄຫວທາງຈິດວິນຍານຂອງເຂົາເຈົ້າ.

ເຖິງແມ່ນວ່າເລື່ອງເລົ່າທີ່ເຈົ້າຈະເລົ່າໃຫ້ເດັກນ້ອຍຟັງ ກ່ຽວກັບພຣະອັບດຸລບາຮານັ້ນສັ້ນ, ແຕ່ຄວາມຢັ່ງຮູ້ທາງຈິດວິນຍານທີ່ເລື່ອງເລົ່ານຳສະເໜີແມ່ນເລິກເຊິ່ງ. ດັ່ງນັ້ນ ເຈົ້າຈະຕ້ອງນຳພານັກຮຽນຂອງເຈົ້າໄປເກີນກວ່າເຫດການທີ່ອະທິບາຍໄວ້ ເພື່ອຊ່ວຍເຂົາເຈົ້າມອງເຫັນຄວາມເປັນຈິງທາງຈິດວິນຍານ. ສຳລັບປະເດັນນີ້ ຂໍໃຫ້ພວກເຮົາກວດສອບເລື່ອງເລົ່າຈາກບົດຮຽນທີ 1.

*ພຣະອັບດຸລບາຮາ ສາມາດອ່ານສິ່ງທີ່ຢູ່ໃນໃຈຂອງຄົນອື່ນໄດ້ສະເໝີ, ແລະ ພຣະອົງເອງຮັກຄົນທີ່ມີຫົວໃຈທີ່ບໍລິສຸດ ແລະ ຜ່ອງໃສເປັນຢ່າງຍິ່ງ. ມີແມ່ຍິງຜູ້ໜຶ່ງໄດ້ຮັບກຽດອັນຍິ່ງໃຫຍ່ໃນການຮ່ວມຮັບປະທານອາຫານຄ່ຳກັບ ພຣະອັບດຸລບາຮາ. ໃນຂະນະທີ່ລາວກຳລັງນັ່ງຟັງຖ້ອຍຄຳອັນປຸ່ມໄປດ້ວຍອັດສະລິຍະພາບຂອງພຣະອົງຢູ່ນັ້ນ, ລາວກໍ່ເບິ່ງໄປທີ່ຈອກນ້ຳທີ່ວາງຢູ່ຕໍ່ໜ້າຂອງລາວ ແລະ ຄິດວ່າ "ໂອ! ຖ້າພຣະອັບດຸລບາຮາ ຈະນຳເອົາຫົວໃຈຂອງຂ້ອຍໄປ ແລ້ວເຮັດໃຫ້ວ່າງເປົ່າ ແລະ ປັດສະຈາກເຊິ່ງຄວາມ ປາດຖະໜາທາງໂລກ ແລະຈາກນັ້ນເຕີມເຕັມຫົວໃຈຂອງຂ້ອຍໃຫ້ດ້ວຍຄວາມຮັກ ແລະ ຄວາມເຂົ້າໃຈ ແຫ່ງສະຫວັນ, ເໝືອນກັບຈອກໜ່ອຍນີ້ ທີ່ຖືກເຕີມໃຫ້ເຕັມດ້ວຍນ້ຳ."*

*ຄວາມຄິດນີ້ແລ່ນຜ່ານສະໝອງຂອງລາວຢ່າງວ່ອງໄວ, ແລະ ລາວກໍ່ບໍ່ໄດ້ເວົ້າຫຍັງເລີຍກ່ຽວກັບເລື່ອງນີ້, ແຕ່ຕໍ່ມາບໍ່ດົນປານໃດກໍ່ມີບາງຢ່າງເກີດຂຶ້ນ ທີ່ເຮັດໃຫ້ລາວຮູ້ແຈ້ງໄດ້ວ່າ ພຣະອັບດຸລບາຮາ ຮູ້ໃນສິ່ງທີ່ລາວກຳລັງຄິດຢູ່. ໃນລະຫວ່າງທີ່ພຣະອັບດຸລບາຮາກ່າວສູນທອນລະພົດຢູ່ນັ້ນ, ພຣະອົງກໍ່ຢຸດກ່າວ ແລະ ເອີ້ນຄົນຮັບໃຊ້ມາຫາ ແລະ ກ່າວສັ້ນໆເປັນພາສາເປີເຊຍກັບຄົນຮັບໃຊ້ຜູ້ນັ້ນ. ຄົນຮັບໃຊ້ຜູ້ນັ້ນ*

*ຟ້າວໄປຫາແມ່ຍິງຄົນນັ້ນທັນທີ ແລ້ວກໍ່ນໍາຈອກຂອງລາວໄປຖອກນໍ້າອອກຈົນວ່າງເປົ່າ, ແລ້ວນໍາມາວາງໄວ້ຕໍ່ໜ້າຂອງລາວອີກຄັ້ງໜຶ່ງ.*

*ຫຼັງຈາກນັ້ນອີກບໍ່ດົນ ໃນລະຫວ່າງທີ່ ພຣະອັບດຸລບາຮາ ກໍາລັງກ່າວສູນທອນລະພິດຂອງພຣະອົງ, ພຣະອົງກໍ່ຈັບເອົາໂຖນໍ້າຍົກຂຶ້ນຈາກໂຕະ ແລ້ວຄ່ອຍໆເຕີມຄືນໃສ່ຈອກນໍ້າທີ່ວ່າງເປົ່າຂອງແມ່ຍິງຄົນນີ້ ດ້ວຍທ່າທີທີ່ເປັນທັມມະຊາດ. ບໍ່ມີໃຜສັງເກດເຫັນວ່າເກີດຫຍັງຂຶ້ນ, ແຕ່ແມ່ຍິງຄົນນັ້ນຮູ້ດີວ່າ ພຣະອັບດຸລບາຮາ ກໍາລັງຊົງຕອບຄວາມປາດຖະໜາຂອງລາວ. ລາວມີຄວາມຮູ້ສຶກປິຕິຍິນດີເປັນຢ່າງຍິ່ງ. ໃນຕອນນີ້ລາວຮູ້ແລ້ວວ່າຫົວໃຈ ແລະ ຄວາມຄິດຂອງຄົນທັງຫຼາຍເປັນເໝືອນໜັງສືເປີດອອກກວ້າງສໍາລັບ ພຣະອັບດຸລບາຮາ, ຜູ້ເຊິ່ງອ່ານໜັງສືເລົ່ານັ້ນດ້ວຍຄວາມຮັກ ແລະ ຄວາມເມດຕາອັນໃຫຍ່ຫຼວງ.*

ເຫັນໄດ້ຊັດເຈນວ່າ ຄວາມບໍລິສຸດ ແມ່ນຄຸນລັກສະນະທາງວິນຍານ ເຊິ່ງເລື່ອງເລົ່າ - ແລະທີ່ຈິງແລ້ວ ບົດຮຽນທັງໝົດ - ແມ່ນເນັ້ນຍໍ້າ. ຄໍາຖາມຕໍ່ໄປນີ້ຈະຊ່ວຍໃຫ້ເຈົ້າຄິດກ່ຽວກັບວິທີການເລົ່າເລື່ອງຂອງເຈົ້າ ເພື່ອເຮັດໃຫ້ນັກຮຽນເຂົ້າໃຈຄຸນລັກສະນະນີ້ຢ່າງເລິກເຊິ່ງ ແລະ ຄວາມໝາຍຂອງການບຸກບືນເພື່ອສິ່ງນັ້ນ.

1. ມັນເປັນສິ່ງສໍາຄັນສໍາລັບເດັກນ້ອຍທີ່ຈະຮັບຮູ້ວ່າ ແຂກຂອງ ພຣະອັບດຸລບາຮາ ແມ່ນມີຄວາມປາຖະຫນາທີ່ຈະໄດ້ຮັບຫົວໃຈອັນບໍລິສຸດ. ແມ່ນຫຍັງຄືການເຊື່ອມໂຍງໃນເລື່ອງເລົ່າ ເຊິ່ງຢູ່ລະຫວ່າງຄວາມປາດຖະໜາ ແລະ ຈອກນໍ້າທີ່ຢູ່ທາງຫນ້າຂອງແຂກ?
2. ເພື່ອໃຫ້ໄດ້ມາເຊິ່ງຄວາມບໍລິສຸດ, ພວກເຮົາຕ້ອງກໍາຈັດຄວາມຄິດ ແລະ ຄວາມຮູ້ສຶກທີ່ບໍ່ສົມຄວນ ເຊັ່ນດຽວກັນກັບແກ້ວທີ່ວ່າງເປົ່າ ແລະ ຖືກເຕີມເຕັມໃໝ່, ເພື່ອວ່າພຣະຜູ້ເປັນເຈົ້າຈະສ່ອງແສງໃນໃຈເຮົາດ້ວຍຄຸນນະສົມບັດດັ່ງຕ່າງໆ ເຊັ່ນຄວາມຮັກ, ຄວາມເອື້ອເຟື້ອ, ແລະຄວາມກະລຸນາ. ແນ່ນອນ, ພວກເຮົາຮູ້ວ່າບໍ່ມີຫຍັງສາມາດເຊື່ອງໄວ້ຈາກສາຍພຣະເນດຂອງພຣະເຈົ້າ. ຄວາມເຂົ້າໃຈນີ້ຊ່ວຍພວກເຮົາແນວໃດໃນຄວາມພະຍາຍາມຂອງເຮົາ ທີ່ຈະບຸກບືນເພື່ອຄວາມບໍລິສຸດ?

ຫຼັງຈາກສົນທະນາຄໍາຖາມເລົ່ານີ້ ກັບສະມາຊິກອື່ນໆໃນກຸ່ມຂອງເຈົ້າ, ຂໍໃຫ້ຂຽນບາງຄວາມຄິດຂອງເຈົ້າລົງຢູ່ບ່ອນນີ້.

ມີສອງສາມເລື່ອງລາວຢູ່ໃນຊັ້ນຮຽນລະດັບນີ້ ທີ່ເຖິງແມ່ນວ່າບໍ່ກ່ຽວຂ້ອງກັບຊີວິດຂອງ ພຣະອັບດຸລບາຮາ, ກໍສະແດງໃຫ້ເຫັນເຖິງຄວາມສຳຄັນຂອງຄຸນລັກສະນະທາງຈິດວິນຍານ. ໃນຄຸນລັກສະນະເລົ່ານີ້, ເດັກນ້ອຍສາມາດເຫັນລາງວັນສຳລັບການສະແດງຄຸນລັກສະນະເລົ່ານີ້ ແລະ ຜົນທີ່ຕາມມາຈາກການລະຖິ້ມຄຸນລັກສະນະເລົ່ານີ້. ຕົວຢ່າງ ເລື່ອງລາວໃນບົດທີ 4 ຂອງຄົນລ້ຽງແກະທີ່ຮ້ອງໄຫ້ຫມາປ່າ, ເປັນເລື່ອງທີ່ຮູ້ຈັກດີໃນຫຼາຍວັດທະນະທຳ, ສະແດງໃຫ້ເຫັນຜົນທີ່ຕາມມາຈາກການຕົວະ ແລະ ວິທີການນີ້ ໃຫ້ຄວາມເຂົ້າໃຈກ່ຽວກັບຄຸນລັກສະນະຂອງອາຈາສັດຊື່. ເດັກນ້ອຍສາມາດໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍຈາກຂໍ້ຄວາມທີ່ຖ່າຍທອດໃນເລື່ອງລາວເລົ່ານີ້, ເຊິ່ງຈະພິສູດວ່າມີປະໂຫຍດໃຫ້ແກ່ເດັກນ້ອຍໃນການສ້າງອຸປະນິໄສຂອງພວກເຂົາ.

## ຕອນທີ 22

ການເລົ່າເລື່ອງເປັນສິນລະປະຢ່າງໜຶ່ງ. ເພື່ອບອກເລື່ອງລາວຢ່າງມີປະສິດທິພາບ, ຄົນເຮົາຕ້ອງຮູ້ຈັກເລື່ອງລາວນັ້ນດີ. ໃນຕອນນີ້ພວກເຮົາຈະສຶກສາລາຍລະອຽດຫຼາຍກວ່າເດີມ ຈາກບົດຮຽນທີ 1 ເພື່ອເບິ່ງວ່າຄູສອນຄວນຈະເລົ່າແນວໃດໃຫ້ເດັກຟັງ.

ພວກເຮົາໄດ້ສ້າງຫົວຂໍ້ສູນກາງຂອງເລື່ອງ ແມ່ນຄຸນລັກສະນະທາງຈິດວິນຍານ ຂອງຄວາມບໍລິສຸດຂອງຫົວໃຈ, ເຊິ່ງໄດ້ຖືກຄົ້ນຄິດໂດຍຜ່ານຕົວຢ່າງຂອງແກ້ວ. ຄຳຖາມທຳອິດຂອງເຈົ້າຈຳເປັນຕ້ອງຖາມຕົວເອງວ່າ, ພາກສ່ວນໃດຂອງເລື່ອງລາວທີ່ກ່ຽວຂ້ອງໂດຍກົງກັບຫົວຂໍ້ຕົ້ນຕໍນີ້? ຄຳເວົ້າທີ່ຮອບຮູ້ຂອງ ພຣະອັບດຸລບາຮາ ເຮັດໃຫ້ຜູ້ຍິງຄົນນັ້ນຄິດວ່າ ນາງຕ້ອງການເຮັດໃຫ້ຫົວໃຈຂອງນາງບໍລິສຸດຈາກຄວາມປາຖະຫນາທາງໂລກຫຼາຍປານໃດ, ຄືກັບແກ້ວທີ່ຢູ່ທາງຫນ້າຂອງນາງ, ເຊິ່ງເປັນສ່ວນຫນຶ່ງທີ່ສຳຄັນ. ຄຳແນະນຳໂດຍ ພຣະອັບດຸລບາຮາ ກັບຄົນຮັບໃຊ້ໃຫ້ຖິ້ມນ້ຳໃນຈອກແກ້ວນັ້ນ, ເຊິ່ງຕໍ່ມາ ພຣະອັບດຸລບາຮາ ກໍໄດ້ເຕີມນ້ຳໃໝ່ໃຫ້. ຕົວຢ່າງ, ມັນຈະເປັນແນວໃດຖ້າຫາກວ່າເຈົ້າບໍ່ໄດ້ກ່າວເຖິງວ່າ ພຣະອັບດຸລບາຮາ ຂໍໃຫ້ຄົນຮັບໃຊ້ເຮັດໃຫ້ຈອກແກ້ວຂອງຜູ້ຍິງຄົນນັ້ນຫວ່າງເປົ່າ?

ໃນປັດຈຸບັນ ເຖິງແມ່ນວ່າພວກເຮົາໄດ້ກຳນົດສ່ວນທີ່ສຳຄັນຂອງເລື່ອງລາວ, ແຕ່ລາຍລະອຽດອື່ນໆຂອງມັນກໍບໍ່ສາມາດລືມໄດ້. ມັນຈະເປັນເລື່ອງລາວບໍ ຖ້າຫາກວ່າເຈົ້າເວົ້າຢ່າງງ່າຍດາຍວ່າແຂກ

ຂອງ ພຣະອັບດຸລບາຮາ ໃນຂະນະທີ່ນັ່ງກິນອາຫານແລງ ໄດ້ປາດຖະໜາວ່າຫົວໃຈຂອງນາງສາມາດຖືກຊຳລະໃຫ້ບໍລິສຸດ ໃນແບບດຽວກັນກັບຈອກແກ້ວທີ່ວ່າງເປົ່າ? ຕາມປົກກະຕິແລ້ວ ມີລາຍລະອຽດຢູ່ໃນເລື່ອງລາວທີ່ເພີ່ມຄວາມຮູ້ສຶກ ແລະ ເຮັດໃຫ້ມີສ່ວນຮ່ວມໃນເລື່ອງລາວ. ສິ່ງເລົ່ານີ້ແມ່ນຫຍັງ?

- ຄວາມຄິດກ່ຽວກັບຈອກແກ້ວເປົ່າ ເກີດຂຶ້ນກັບແຂກໃນໄລຍະກິນອາຫານ, ໃນຂະນະທີ່ຟັງ ພຣະອັບດຸລບາຮາ ແບ່ງປັນຄວາມຮອບຮູ້ຂອງພຣະອົງ, ແຕ່ນາງບໍ່ເຄີຍເວົ້າຄວາມຄິດຂອງນາງອອກມາດັງໆ.
- ເຖິງແມ່ນວ່າຈະເວົ້າກັບຜູ້ທີ່ມາຊຸມນຸມກັນກິນອາຫານແລງ, ພຣະອັບດຸລບາຮາ ກໍຢຸດຂະນະໜຶ່ງເພື່ອກ່າວເຖິງຄວາມຄິດທີ່ບໍ່ມີສຽງຂອງແມ່ຍິງ.
- ບໍ່ມີໃຜສັງເກດເຫັນສິ່ງທີ່ໄດ້ເກີດຂຶ້ນ.
- ແຂກຮູ້ສຶກມີຄວາມສຸກຢ່າງຍິ່ງທີ່ຮູ້ວ່າ ພຣະອັບດຸລບາຮາ ຮັບຮູ້ຄວາມປາຖະໜາຂອງຫົວໃຈນາງ.

ຈຸດນີ້ຄວນສັງເກດວ່າ ຄູທຸກໆຄົນຕ້ອງເອົາໃຈໃສ່ບໍ່ໃຫ້ຕົກແຕ່ງເລື່ອງລາວຕ່າງໆໃນຊັ້ນຮຽນລະດັບ 1 ດ້ວຍການເພີ່ມເຕີມລາຍລະອຽດ ແລະ ອົງປະກອບອື່ນ, ເຊິ່ງມັນສາມາດຫັນປ່ຽນຄວາມເອົາໃຈໃສ່ຂອງເດັກນ້ອຍ ຈາກສັດຈະທັມທາງຈິດວິນຍານຕາມທີ່ເລື່ອງລາວຕ່າງໆມີຄວາມໝາຍຈະຖ່າຍທອດ.

ຫຼັງຈາກ ຕະຫຼອດການບັນຍາຍຂອງທ່ານ, ເຈົ້າຈະຕ້ອງການທີ່ຈະຈື່ໄວ້ໃນໃຈວ່າ ຈຸດປະສົງຂອງການເລົ່າເລື່ອງແມ່ນການສອນບາງສິ່ງທີ່ສຳຄັນໃຫ້ກັບເດັກນ້ອຍ. ເມື່ອເຈົ້າເລົ່າເລື່ອງດ້ວຍຄວາມສຸກຫັນສາແລະ ມີຄວາມຮູ້ສຶກ, ພວກເຂົາຈະເຂົ້າໃຈເລື່ອງນັ້ນດີກວ່າ. ເດັກນ້ອຍຈະບໍ່ສົນໃຈເລື່ອງເລົ່າທີ່ໄດ້ເລົ່າຢ່າງໜ້າເບື່ອ. ເຈົ້າຕ້ອງຮຽນຮູ້ທີ່ຈະສື່ສານຄວາມຮູ້ສຶກເຊັ່ນ: ຄວາມສຸກ, ຄວາມໂສກເສົ້າ, ຄວາມຜິດຫວັງ, ຄວາມຢ້ານກົວ, ແລະຄວາມກ້າຫານ ຜ່ານທາງນ້ຳສຽງ, ການສະແດງອອກທາງສີໜ້າ, ແລະ ທ່າທາງຂອງເຈົ້າ. ສຽງສູງຕ່ຳ ແລະ ນ້ຳໜັກສຽງຂອງເຈົ້າ ຄວນປ່ຽນໄປຕາມການພັດທະນາຂອງເລື່ອງ, ແລະ ທ່າທາງຂອງເຈົ້າ, ເຖິງແມ່ນວ່າຈະງ່າຍດາຍ ກໍຄວນສອດຄ່ອງກັບແຕ່ລະສ່ວນຂອງເລື່ອງ. ເຈົ້າຈຳເປັນຕ້ອງຄິດເຊັ່ນດຽວກັນ ກ່ຽວກັບຈັງຫວະ ແລະ ບາດກ້າວຂອງການເລົ່າເລື່ອງຂອງເຈົ້າ. ຖ້າຫາກເວົ້າຊ້າຈົນເກີນໄປ ເດັກນ້ອຍຈະເບື່ອ ແລະ ຖ້າທ່ານເວົ້າໄວເກີນໄປ ພວກເຂົາຈະບໍ່ສາມາດຕິດຕາມເລື່ອງ. ສຳຄັນທີ່ສຸດ, ເຈົ້າຄວນຈື່ໄວ້ວ່າເຈົ້າບໍ່ໄດ້ທຳທ່າຫຼິ້ນລະຄອນ ແລະ ຄວາມຮູ້ສຶກຂອງເຈົ້າຕ້ອງຈິງໃຈ. ເດັກລຸ້ນເຍົາສາມາດຄົ້ນພົບການຂາດຄວາມຈິງໃຈໄດ້ຢ່າງງ່າຍດາຍ. ສິ່ງທີ່ປາດຖະໜາຄື ການເຊື່ອມຕໍ່ກັບຫົວໃຈຂອງເດັກນ້ອຍ ແລະ ສືບສານປະເພນີການເລົ່າເລື່ອງທີ່ມີມາດົນນານແລ້ວ ໂດຍຜ່ານເວລານັບພັນໆປີ ຂອງຄັງປັນຍາທີ່ໄດ້ມາຈາກມະນຸດ ທີ່ໄດ້ຮັບການຖ່າຍທອດຈາກຄົນລຸ້ນສູ່ລຸ້ນ.

## ຕອນທີ 23

ບັດນີ້ໃຫ້ພວກເຮົາພິຈາລະນາ ສອງກິດຈະກຳທີ່ຕໍ່ຈາກການເລົ່າເລື່ອງ—ຄືການຫຼິ້ນເກມ ແລະ ການທາສີ. ໃນຕອນນີ້ພວກເຮົາຈະປຶກສາຫາລື ວິທີການເຂົ້າສູ່ໄລຍະເວລາທີ່ມອບໃຫ້ກັບເກມ, ແລະ ການທາສີ ເຊິ່ງຈະຖືກກ່າວເຖິງຕໍ່ໄປນີ້.

ດັ່ງທີ່ໄດ້ກ່າວກ່ອນໜ້ານີ້, ເກມໃນຊັ້ນຮຽນລະດັບ 1 ແມ່ນການຮ່ວມກັນມືຕາມທຳມະຊາດ. ຫລາຍຄົນເຊື່ອວ່າເກມທີ່ທ້າທາຍນັ້ນ ເດັກນ້ອຍຈຳເປັນຕ້ອງໄດ້ແຂ່ງຂັນກັນ. ສິ່ງທີ່ພວກເຮົາຄວນຕະໜັກຄື ເມື່ອເດັກນ້ອຍຖືກຈັດໃຫ້ຢູ່ໃນສະຖານະການທີ່ເຂົາເຈົ້າຕ້ອງແຂ່ງຂັນ, ແນ່ນອນວ່າທັດສະນະຄະຕິ ແລະ ອຸປະນິໄສທີ່ບໍ່ປາດຖະໜາ ໄດ້ຖືກປູກຝັງໃຫ້ຄົງຢູ່ຍາວນານກວ່າໄລຍະເວລາຂອງເກມ. ນອກຈາກນັ້ນ, ຍັງມີແນວຄິດທີ່ວ່າຄວາມເປັນເລີດສາມາດບັນລຸໄດ້ຜ່ານການແຂ່ງຂັນເທົ່ານັ້ນ. ເຈົ້າຈຳເປັນຕ້ອງກວດສອບເບິ່ງຄວາມຈິງຂອງແນວຄວາມຄິດນີ້ຢ່າງໃກ້ຊິດ. ມັນເປັນຄວາມຈິງແທ້ໆບໍ ທີ່ພວກເຮົາບໍ່ສາມາດບັນລຸໄດ້ການຮ່ວມມືທີ່ດີເລີດ? ໃນການແຂ່ງຂັນ, ບາງຄົນຊະນະໃນຂະນະທີ່ຄົນອື່ນແພ້; ໃນການຮ່ວມມືທຸກຄົນຮູ້ສຶກເຖິງຄວາມສຳເລັດ.

ເກມໃນຊັ້ນຮຽນລະດັບທຳອິດ ແມ່ນພະຍາຍາມຍົກລະດັບທັກສະການຟັງຂອງເດັກນ້ອຍ ແລະ ການປະຕິບັດຕາມຄຳແນະນຳແກ່ເດັກນ້ອຍ. ພວກເຂົາຍັງຈະໄດ້ເຫັນວ່າແຕ່ລະເກມກຳໜົດເປົ້າໝາຍທົ່ວໄປສຳລັບໝົດທຸກຊັ້ນຮຽນ ແລະ ໃນການປະສານຄວາມພະຍາຍາມຮ່ວມກັນຂອງພວກເຂົາ, ແຕ່ລະຄົນມີບົດບາດຫຼິ້ນໃຫ້ບັນລຸເປົ້າໝາຍນີ້. ສຳຄັນທີ່ສຸດ, ຫວັງວ່າພວກເຂົາຈະເພີ່ມການດູແລທີ່ພວກເຂົາສະແດງຕໍ່ກັນແລະກັນ, ຮຽນຮູ້ຄວາມອົດທົນ, ແລະ ເສີມສ້າງສາຍພົວພັນຂອງມິດຕະພາບທີ່ເຊື່ອມໂຍງພວກເຂົາ. ຫຼັງຈາກນັ້ນ, ເຈົ້າຄວນຈື່ຈຳວ່າພວກເຂົາບໍ່ຈຳເປັນຕ້ອງຫລິ້ນເກມຢ່າງສົມບູນແບບ ເພື່ອໃຫ້ຮູ້ສຶກເຖິງຄວາມສຳເລັດ. ຕົວຢ່າງ, ຂໍໃຫ້ເບິ່ງເກມທີ່ແນະນຳໃນບົດທີ 1. ເກມດັ່ງກ່າວສະໜັບສະໜູນເປົ້າໝາຍທີ່ປາດຖະໜາໄດ້ແນວໃດ?

> ສຳລັບກິດຈະກຳຕໍ່ໄປ, ໃຫ້ວາງຢາງລົດເທິງພື້ນດິນແລ້ວຂໍໃຫ້ເດັກນ້ອຍເບິ່ງວ່າ ມີຈັກຄົນທີ່ສາມາດຢືນຢູ່ໃນຢາງລົດພ້ອມກັນໄດ້. ຖ້າບໍ່ມີຢາງລົດ, ເຈົ້າສາມາດກາງສາດຫຼືຜືນຜ້າ, ຫຼືວັດຖຸບາງຢ່າງທີ່ຄ້າຍຄືກັນ ຢູ່ເທິງດິນແທນ. ວັດຖຸໃດກໍ່ຕາມທີ່ເຈົ້າເລືອກ, ມັນຄວນຈະມີຂະໜາດນ້ອຍພຽງພໍທີ່ຈະເຮັດໃຫ້ເກມເປັນສິ່ງທ້າທາຍ ສຳລັບຈຳນວນຂອງເດັກນ້ອຍໃນຊັ້ນຮຽນ.

ວິທີທີ່ຄູແນະນຳເກມ ມີຜົນຕໍ່ວິທີທີ່ເດັກນ້ອຍຫຼິ້ນເກມ. ຈຸດປະສົງຂອງມັນຄວນໄດ້ຮັບການອະທິບາຍຢ່າງຈະແຈ້ງ. ນອກຈາກນັ້ນ, ໃນເວລາທີ່ໃຫ້ຄຳແນະນຳກັບເດັກນ້ອຍ, ຕາມປົກກະຕິແລ້ວຄູຈະສາທິດວິທີການຫຼິ້ນເກມ ແລະ ຫຼິ້ນຮ່ວມກັບພວກເຂົາ.

## ຕອນທີ 24

ກິດຈະກຳສິລະປະແມ່ນສຳຄັນຕໍ່ການພັດທະນາຄວາມຄິດສ້າງສັນ ແລະ ທັກສະທາງຈິດໃຈຂອງເດັກນ້ອຍ, ແລະ ຕັ້ງແຕ່ອາຍຸຍັງນ້ອຍພວກເຂົາຄວນໄດ້ຮັບໂອກາດ ໃນການເຝິກຈິນຕະນາການຂອງເຂົາເຈົ້າຜ່ານການແຕ້ມຮູບຕາມໃຈ ແລະ ຮູບແບບອື່ນໆຂອງການສະແດງອອກທາງສິລະປະ. ຢ່າງໃດກໍຕາມ, ໃນຫຼາຍພາກສ່ວນຂອງໂລກ ເດັກນ້ອຍຈະມີໂອກາດໜ້ອຍທີ່ຈະໄດ້ແຕ້ມກ່ອນອາຍຸຫ້າ ຫຼື ຫົກປີ, ເຊິ່ງມີສ່ວນໜ້ອຍຫຼາຍທີ່ໄດ້ນຳໃຊ້ສີທຽນ. ສຳລັບພວກເຂົາແລ້ວ, ການທາສີໃສ່ຮູບພາບທີ່ສະໜອງໃຫ້ໃນປຶ້ມຮຽນຂອງຊັ້ນຮຽນລະດັບທຳອິດ ເປັນໜຶ່ງໃນໄລຍະເວລາຕົ້ນເຕັ້ນທີ່ສຸດຂອງຊັ້ນຮຽນ, ແລະ ມັນສ້າງຄວາມໝັ້ນໃຈທີ່ຈຳເປັນໃຫ້ກັບພວກເຂົາ ເພື່ອກ້າວໄປສູ່ກິດຈະກຳສິລະປະທີ່ສັບຊ້ອນຫຼາຍຂຶ້ນໃນຊັ້ນຮຽນລະດັບຕໍ່ໄປ. ນອກຈາກນີ້ ຍັງເປັນວິທີການໃນການພັດທະນາຄວາມຊຳນິຊຳນານ ແລະ ຮູ້ສຶກເຖິງລະບຽບວິໄນຂອງພວກເຂົາ. ຄວາມສາມາດ, ທັກສະ ແລະ ທັດສະນະຄະຕິ ດັ່ງຕໍ່ໄປນີ້ ໄດ້ຍົກລະດັບເດັກນ້ອຍຜ່ານການທາສີຄືແນວໃດ?

- ການຍ້ອງຊົມເຊີຍຄວາມເປັນລະບຽບແລະຄວາມງາມ
- ການເອົາໃຈໃສ່ໃນລາຍລະອຽດ
- ການສຸມໃສ່ວຽກງານທີ່ກຳລັງເຮັດຢູ່
- ການແບ່ງປັນຊັບພະຍາກອນກັບຄົນອື່ນ
- ການເຄົາລົບຄົນອື່ນ

ນອກເໜືອໄປຈາກການສົ່ງເສີມທັກສະ ແລະ ທັດສະນະຄະຕິບາງຢ່າງແລ້ວ, ຊ່ວງໄລຍະເວລາຂອງຊັ້ນຮຽນທີ່ມອບແກ່ການທາສີ ເປີດໂອກາດໃຫ້ຄູສອນສົນທະນາກັບນັກຮຽນຂອງຕົນ ເຖິງຄຸນລັກສະນະ ໃນປຶ້ມຮຽນຂອງຊັ້ນຮຽນລະດັບ 1. ການຂໍໃຫ້ຖາມຄຳຖາມໃນຊັ້ນຮຽນກ່ຽວກັບການພັນລະນາຮູບແຕ້ມ, ຄູສາມາດໃຫ້ໂອກາດເດັກນ້ອຍສະແດງຄວາມຄິດເຫັນ ແລະ ເຊື່ອມໃນຄວາມຄິດຂອງພວກເຂົາ ໃນຂະນະທີ່ພວກເຂົາເວົ້າເຖິງສິ່ງທີ່ເກີດຂຶ້ນໃນຮູບພາບ. ເບິ່ງແຜ່ນສຳລັບທາສີຂອງປຶ້ມຮຽນທຳອິດ ແລະ ສຳຫຼວດກັບກຸ່ມຂອງເຈົ້າວ່າ ເຈົ້າຈະແນະນຳມັນກັບເດັກນ້ອຍແນວໃດ. ຂໍໃຫ້ຂຽນຄວາມຄິດຂອງເຈົ້າໃສ່ຂ້າງລຸ່ມນີ້.

ຄູຕ້ອງກະກຽມຢ່າງພຽງພໍສໍາລັບກິດຈະກໍານີ້. ເດັກນ້ອຍສະແດງໃຫ້ເຫັນຄວາມຍິ່ງໃຫຍ່ຢ່າງຕໍ່ເນື່ອງໃນຄວາມປາດຖະໜາທີ່ຈະທາສີ; ແຕ່ວ່າພາກສ່ວນນີ້ຂອງຊັ້ນຮຽນກໍສາມາດກາຍເປັນຄວາມວຸ່ນວາຍໄດ້ ຖ້າບໍ່ໄດ້ຮັບການຈັດລະບຽບຢ່າງຖືກຕ້ອງ. ສະຖານທີ່ສໍາລັບເດັກນ້ອຍທີ່ຈະທາສີຄວນຖືກກໍານົດ, ແລະ ສໍາເນົາຮູບແຕ້ມຂອງແຕ່ລະບົດຮຽນໄດ້ກຽມໄວ້ລ່ວງໜ້າ. ໂດຍສະເພາະ ສອງສາມບົດຮຽນທໍາອິດ, ຄູອາດຈະຈໍາເປັນຕ້ອງໄດ້ກໍານົດມາດຕະຖານ ສໍາລັບວິທີທີ່ເດັກນ້ອຍຄວນປະຕິບັດຕົນເອງກ່ຽວກັບການໃຊ້ສີທຽນ ແລະ ສ້າງຄວາມຮູ້ສຶກເຖິງລະບຽບວິໄນ ແລະ ການຮ່ວມມືກັບພວກເຂົາ. ເລີ້ມຕົ້ນຂໍໃຫ້ເດັກນ້ອຍທຸກຄົນສາມາດເລືອກສໍສີໜຶ່ງອັນຈາກກ່ອງທີ່ຄູຖືຈັບໄວ້. ເມື່ອພວກເຂົາຕ້ອງການປ່ຽນສໍສີ, ພວກເຂົາສາມາດສົ່ງສໍສີທີ່ຢູ່ໃນມື ແລ້ວປ່ຽນເອົາສໍສີອື່ນ. ຫຼັງຈາກຮຽນຊັ້ນຮຽນຫຼາຍຄັ້ງ, ເມື່ອພວກເຂົາຄຸ້ນເຄີຍກັບການມີພຽງແຕ່ສໍສີອັນດຽວໃນແຕ່ລະຄັ້ງ, ແລ້ວກ່ອງຂອງສໍສີຈຶ່ງສາມາດປະໄວ້ທາງກາງໄດ້.

ຕອນນີ້ຂໍໃຫ້ເບິ່ງສະຖານະການຂ້າງລຸ່ມ. ສະຖານະການໃດໃນແຕ່ລະຄູ່ທີ່ສະໜັບສະໜູນປະສິດທິພາບຂອງກິດຈະກໍານີ້?

_____ ຄູອະນຸຍາດໃຫ້ເດັກທາສີອອກນອກເສັ້ນໄດ້, ຕາບໃດທີ່ພວກເຂົາພະຍາຍາມທາສີໃຫ້ດີຂຶ້ນ.

_____ ເດັກນ້ອຍທຸກຄົນຖືກບອກໃຫ້ທາສີຢູ່ໃນເສັ້ນຢ່າງເຂັ້ມງວດ.

_____ ໃນຂະນະທີ່ເດັກກໍາລັງທາສີ ຄູຍ່າງໄປຫາພວກເຂົາ ຊ່ວຍເຫຼືອພວກເຂົາແລະໃຫ້ການຊຸກຍູ້.

_____ ໃນຂະນະທີ່ເດັກກໍາລັງທາສີ ຄູນັ່ງແລະເຮັດວຽກງານບາງຢ່າງຂອງຕົນເອງ.

_____ ໃນຊ່ວງເວລາທີ່ຈັດສັນສໍສີ, ເດັກນ້ອຍໄດ້ສຸມໃສ່ວຽກງານທີ່ກໍາລັງເຮັດ.

_____ ໃນຊ່ວງເວລາທີ່ຈັດສັນສໍສີ, ເດັກນ້ອຍກວນກັນ.

_____ ໃນຂະນະທີ່ພວກເຂົາກໍາລັງທາສີ, ເດັກນ້ອຍຍັງຄົງມິດງຽບຢູ່.

_____ ໃນຂະນະທີ່ພວກເຂົາກໍາລັງທາສີ, ເດັກນ້ອຍປະຕິບັດຕໍ່ກັນ ແລະ ຊຸກຍູ້ເຊິ່ງກັນແລະກັນຢ່າງມີຄວາມສຸກ.

## ຕອນທີ 25

ຄູຫຼາຍຄົນພົບວ່າມັນເປັນປະໂຫຍດທີ່ຈະຮັກສາປຶ້ມບັນທຶກ ເຊິ່ງເປັນບ່ອນທີ່ສາມາດເກັບຮັກສາຂໍ້ມູນພື້ນຖານບາງຢ່າງ ກ່ຽວກັບກຸ່ມຄົນລຸ້ນເຍົາທີ່ພວກເຂົາສອນ. ສອງຕາຕະລາງແມ່ນເປັນປະໂຫຍດໃນເລື່ອງນີ້, ຕາຕະລາງໜຶ່ງມີຊື່ ແລະອາຍຸຂອງນັກຮຽນ ເພື່ອບັນທຶກການເຂົ້າຮຽນໃນຊັ້ນຮຽນຂອງພວກເຂົາ ແລະ ອີກຕາຕະລາງໜຶ່ງ ເພື່ອຕິດຕາມຄວາມກ້າວໜ້າຂອງພວກເຂົາໃນການທ່ອງຈຳພຣະວັດຈະນະ. ຕົວຢ່າງ ຕາຕະລາງສຸດທ້າຍນີ້ສາມາດໃສ່ຊື່ຂອງເດັກນ້ອຍຢູ່ໃນຖັນຊ້າຍ (column) ແລະຈຳນວນຂອງບົດຮຽນໃນແຖວເທິງ (row). ຫຼັງຈາກນັ້ນ ຄູສາມາດໝາຍຢູ່ໃນຫ້ອງຕາຕະລາງທີ່ເໝາະສົມ ຕາມທີ່ເດັກນ້ອຍທ່ອງຈຳພຣະວັດຈະນະໄດ້ແລ້ວ.

ປຶ້ມບັນທຶກຍັງສາມາດມີພາກສ່ວນໃຊ້ສຳລັບບົດຮຽນ, ເຊິ່ງເປັນບ່ອນທີ່ຄູສາມາດບັນທຶກການວິເຄາະໃນແຕ່ລະບົດຮຽນຂອງພວກເຂົາ, ຄວາມຄິດຂອງເຂົາເຈົ້າກ່ຽວກັບວິທີການສອນບົດຮຽນ, ແລະຕໍ່ມາກໍແມ່ນການໄຕ່ຕອງຂອງພວກເຂົາ ກ່ຽວກັບຊ່ວງໄລຍະການຮຽນນັ້ນໄດ້ເປີດເຜີຍຕໍ່ເດັກນ້ອຍຄືແນວໃດ.

ໃນຕອນອື່ນ, ຄູສາມາດບັນທຶກຄວາມກ້າວໜ້າຂອງເດັກນ້ອຍແຕ່ລະຄົນ, ຕະຫຼອດຈົນເຖິງເລື່ອງເລັກໆນ້ອຍໆທີ່ສາມາດແບ່ງປັນກັບພໍ່ແມ່ຂອງພວກເຂົາ. ຄູບາງຄົນຍັງພົບວ່າມັນເປັນປະໂຫຍດທີ່ໃສ່ຊື່ພໍ່ແມ່ແລະອ້າຍເອື້ອຍນ້ອງຂອງເດັກນ້ອຍ ແລະ ບົດສະຫຼຸບສັ້ນໆຂອງຫົວຂໍ້ທີ່ໄດ້ກ່າວມາ ໃນລະຫວ່າງການຢ້ຽມຢາມເຮືອນຂອງພວກເຂົາ.

## ຕອນທີ 26

ໃນຖານະເປັນຄູຂອງຊັ້ນຮຽນເດັກນ້ອຍ, ເຈົ້າຈຳເປັນຕ້ອງສ້າງສາຍພົວພັນອັນໃກ້ຊິດ ແລະດ້ວຍຄວາມຮັກກັບພໍ່ແມ່ຂອງເດັກນ້ອຍແຕ່ລະຄົນ, ການພົບປະກັບພວກເຂົາຢ່າງເປັນປົກກະຕິເພື່ອປຶກສາຫາລືການຂະຫຍາຍຕົວ ແລະ ພັດທະນາການຂອງລູກຊາຍຫຼືລູກສາວຂອງພວກເຂົາ ແລະ ຂໍການສະໜັບສະໜູນຂອງພວກເຂົາ. ເຈົ້າອາດຈະເຄີຍໄດ້ໄປຢ້ຽມຢາມຄອບຄົວຂອງເດັກນ້ອຍບາງຄົນທີ່ເຂົ້າຮ່ວມຊັ້ນຮຽນໃນຊຸມຊົນຂອງເຈົ້າ ຫຼັງຈາກທີ່ໄດ້ສຶກສາປຶ້ມເຫຼັ້ມ 2 ສຳເລັດແລ້ວ. ເພື່ອທວນຄືນຄວາມຊົງຈຳຂອງເຈົ້າ, ເຈົ້າອາດຈະຕ້ອງການອີງໃສ່ ຕອນທີ 15 ໃນພາກທີສາມຂອງປຶ້ມເຫຼັ້ມນັ້ນ. ໃນຕອນນັ້ນພວກເຮົາເຫັນ ມາຣີເບລ ຄູຊັ້ນຮຽນເດັກນ້ອຍ, ລວບລວມຄວາມຄິດຂອງລາວກ່ຽວກັບສິ່ງທີ່ລາວຈະເວົ້າກັບແມ່ຂອງ ເອມມາ ໃນການຢ້ຽມຢາມບ້ານຂອງພວກເຂົາເປັນຄັ້ງທີສອງຂອງລາວ. ແມ່ຕັດສິນໃຈເລີ່ມຕົ້ນບອກຄູເຖິງຄວາມສຸກໃນຫົວໃຈຂອງລາວທີ່ ເອມມາ ມາຮ່ວມໃນຊັ້ນຮຽນ ແລະ ດ້ວຍການກ່າວເຖິງຄຸນລັກສະນະອັນດີເລີດທີ່ລາວຄົ້ນພົບໃນລູກສາວຂອງລາວ. ພໍ່ແມ່ເຫັນຄວາມສຸກ ແລະ ຄວາມ

ກະຕືລືລົ້ນທີ່ຄູຮັບໃຊ້ເດັກນ້ອຍຂອງຊຸມຊົນມີຄວາມສໍາຄັນຄືແນວໃດ? ມີຄຸນລັກສະນະອື່ນໃດແດ່ທີ່ຈະດຶງດູດໃຈພໍ່ແມ່ ແລະ ສ້າງຄວາມໄວ້ວາງໃຈຂອງພວກເຂົາ?

ຍ້ອນຫຍັງມັນຈຶ່ງສໍາຄັນ ທີ່ຄູຕ້ອງໃຫ້ຄວາມສົນໃຈຂອງຜູ້ປົກຄອງ ກ່ຽວກັບຄຸນລັກສະນະທາງທັມຂອງສິ່ງທີ່ພໍ່ແມ່ສັງເກດເຫັນວ່າເດັກນ້ອຍກໍາລັງພັດທະນາ?

ມາຣີເບລ ຍັງໄດ້ຕັດສິນໃຈທີ່ຈະແບ່ງປັນກັບແມ່ຂອງ ເອັມມາ ພຣະວັດຈະນະທີ່ເຈົ້າໄດ້ສຶກສາຢູ່ໃນຕອນທີ 3 ຂອງພາກນີ້ ແລະ ຄົ້ນຫາຄວາມໝາຍທີ່ເຊື່ອງຊ້ອນນໍາກັນກັບລາວ ເຖິງການສຶກສາຂອງເດັກນ້ອຍ. ໃນຫຼາຍໆບົດສົນທະນາທີ່ເຈົ້າໃຫ້ພໍ່ແມ່ມີສ່ວນຮ່ວມ, ເຈົ້າຈະມີໂອກາດອະທິບາຍຄວາມຄິດດ້ານການສຶກສາ ທີ່ສ້າງຮູບຮ່າງໃຫ້ກັບໂຄງການຂອງຊັ້ນຮຽນເດັກນ້ອຍ. ຂ້າງລຸ່ມນີ້ແມ່ນບາງແນວຄວາມຄິດທີ່ເຈົ້າໄດ້ກວດສອບແລ້ວໃນພາກນີ້. ເຈົ້າຈະເວົ້າຫຍັງກັບພໍ່ແມ່ກ່ຽວກັບແຕ່ລະເນື້ອຫາຂອງການສຶກສາທາງຈິດວິນຍານສໍາລັບລູກຂອງພວກເຂົາ? ມີຂໍ້ຄວາມໃດຈາກພຣະທັມມະລິຂິດ ທີ່ກ່ຽວຂ້ອງກັບແນວຄວາມຄິດອັນໜຶ່ງຫຼື ແນວຄວາມຄິດອື່ນ ທີ່ຈະແບ່ງປັນໃນບົດສົນທະນາຂອງເຈົ້າກັບພໍ່ແມ່?

ການພັດທະນາອຸປະນິໃດທີ່ໜ້າສັນລະເສີນ:

ການໄດ້ມາເຊິ່ງຄຸນລັກສະນະທາງຈິດວິນຍານ:

ຜົນຂອງການອະທິຖານທີ່ມີຕໍ່ຫົວໃຈຂອງເດັກນ້ອຍ:

ຄວາມສຳຄັນຂອງການທ່ອງຈຳຖ້ອຍຄຳຂອງພຣະຜູ້ເປັນເຈົ້າ:

ອິດທິພົນການສັ່ງສອນເດັກນ້ອຍຈາກເລື່ອງລາວຊີວິດຂອງ ພຣະອັບດຸລບາຮາ:

ຄວາມຮັກຂອງພຣະຜູ້ເປັນເຈົ້າ ແລະ ຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າ:

ລະບຽບວິໄນ ແລະ ເສລີພາບ:

ມາຣີເບລ ຕັດສິນໃຈຢຸດຊົ່ວຄະນະໃນລະຫວ່າງການນຳສະເໜີຄວາມຄິດຂອງລາວ ແລະ ຊວນແມ່ຂອງ ເອັມມາ ສະແດງຄວາມຄິດຂອງລາວ. ຄາດວ່າການສົນທະນາທີ່ເລິກເຊິ່ງລະຫວ່າງຄູແລະພໍ່ແມ່ຂອງເດັກນ້ອຍ ຈະພັດທະນາເມື່ອໄລຍະເວລາຜ່ານໄປ. ເປັນຫຍັງຈຶ່ງວ່າມັນສຳຄັນ, ຈາກການໄປຢາມພໍ່ແມ່ເປັນຄັ້ງທຳອິດ, ຄູດຶງເອົາຄຳຄິດຄຳເຫັນ, ສິ່ງທີ່ຄິດ, ແລະ ຄວາມຄິດ ກ່ຽວກັບຫົວຂໍ້ທີ່ຖືກພິຈາລະນາຈາກພວກເຂົາ?

ນອກເໜືອໄປຈາກການສົນທະນາກັບພໍ່ແມ່ ແນວຄວາມຄິດທົ່ວໄປຂອງຄຸນລັກສະນະທາງຈິດວິນຍານ, ເຈົ້າຄວນໃຊ້ປະໂຫຍດຈາກໂອກາດທີ່ນຳສະເໜີຄຸນລັກສະນະທາງຈິດວິນຍານເລົ່ານີ້ຕະຫຼອດປີ ເພື່ອສົນທະນາກັບພວກເຂົາກ່ຽວກັບຄຸນລັກສະນະສະເພາະຂອງບົດຮຽນ ທີ່ບຸກບືນປູກຝັງໃນລູກສາວ ແລະ ລູກຊາຍຂອງພວກເຂົາ. ຈົ່ງຈື່ຈຳຄວາມຢັ່ງຮູ້ທີ່ເຈົ້າໄດ້ຮັບ ກ່ຽວກັບຄຸນລັກສະນະຂອງຫົວໃຈທີ່ບໍລິສຸດ, ໄດ້ກ່າວໄວ້ໃນບົດຮຽນທີ 1, ຂໍໃຫ້ຄົ້ນຫາກັບສະມາຊິກກຸ່ມການສຶກສາຂອງເຈົ້າ ວ່າເຈົ້າຈະເຂົ້າເຖິງການສົນທະນາດັ່ງກ່າວໄດ້ແນວໃດ.

ມາຣີເບລ ຮູ້ວ່າມັນຈຳເປັນຕ້ອງມີຄວາມເຂົ້າໃຈ ແລະ ການສະໜັບສະໜູນເຊິ່ງກັນແລະກັນລະຫວ່າງຕົວເອງແລະແມ່ຂອງ ເອັມມາ, ຖ້າຫາກວ່າລູກສາວຂອງລາວຈະໄດ້ຮັບປະໂຫຍດຢ່າງເຕັມທີ່ຈາກຊັ້ນຮຽນທີ່ລາວກຳລັງເຂົ້າຮ່ວມ. ຕົວຢ່າງ, ບົດອະທິຖານ ແລະ ພຣະວັດຈະນະທີ່ໄດ້ຮຽນຮູ້ຢູ່ໃນຊັ້ນຮຽນ, ສາມາດອ່ານຢູ່ເຮືອນໄດ້ດ້ວຍການຊ່ວຍເຫຼືອຂອງພໍ່ແມ່. ດ້ວຍວິທີນີ້, ເດັກນ້ອຍສາມາດຊຶມຊັບເອົາຖ້ອຍຄຳຂອງພຣະຜູ້ເປັນເຈົ້າໄດ້ດີກວ່າ, ເຊິ່ງຈະທະລຸເຂົ້າໄປໃນຫົວໃຈ ແລະ ຈິດວິນຍານຂອງພວກເຂົາແລະ ໃຫ້ອຸປະນິໄສຂອງພວກເຂົາເປັນຮູບເປັນຮ່າງ. ຂໍໃຫ້ສົນທະນາກັບສະມາຊິກຂອງກຸ່ມເຈົ້າ ວິທີໃດທີ່ພໍ່ແມ່ສາມາດເສີມສ້າງ ແລະ ສະໜັບສະໜູນຄວາມພະຍາຍາມຂອງຄູ.

ຄຸນລັກສະນະທີ່ຕ້ອງການຂອງຫົວໃຈ ແລະ ຈິດໃຈສາມາດຮັບການບຳລຸງລ້ຽງໃນເດັກນ້ອຍໄດ້ໂດຍຜ່ານການການສຶກສາທີ່ເໝາະສົມໃນໄລຍະເວລາຍາວນານເທົ່ານັ້ນ. ມັນເປັນທີ່ຊັດເຈນໃນປັດຈຸບັນວ່າສິ່ງທີ່ຄວນເນັ້ນໜັກໃນການພົບປະເປັນປະຈຳຂອງເຈົ້າກັບພໍ່ແມ່ ແມ່ນຄວາມກ້າວໜ້າຂອງລູກຂອງພວກເຂົາ, ບໍ່ວ່າຈະນ້ອຍປານໃດກໍຕາມ. ໃນຂະນະທີ່ການສົນທະນາຂອງເຈົ້າກ້າວໜ້າ, ເຈົ້າສາມາດຄົ້ນຫາ ກ່ຽວກັບວິທີການສ້າງສິ່ງເລົ່ານີ້ໃຫ້ສຳເລັດຜົນກັບພໍ່ແມ່. ເມື່ອເວລາທີ່ຮູບແບບການສື່ສານໃນທາງບວກດັ່ງກ່າວໄດ້ຖືກສ້າງຕັ້ງຂຶ້ນ, ຫຼັງຈາກນັ້ນຄູຈະສາມາດແບ່ງປັນກັບພໍ່ແມ່ ດ້ວຍຄວາມເປັນຫ່ວງເປັນໄຍ, ເຖິງຄວາມຫຍຸ້ງຍາກໃດໆທີ່ລາວສັງເກດເຫັນຢູ່ໃນເດັກນ້ອຍຂອງພວກເຂົາ. ຈຸດປະສົງຄວນແມ່ນເພື່ອຊອກຫາວິທີການຂອງການຮ່ວມມື ທີ່ຈະຊ່ວຍໃຫ້ເດັກນ້ອຍເອົາຊະນະຄວາມຫຍຸ້ງຍາກຂອງເຂົາ. ຂໍໃຫ້ສົນທະນາກັບກຸ່ມຂອງເຈົ້າກ່ຽວກັບຄວາມສຳຄັນຂອງການສ້າງຮູບແບບການສື່ສານທີ່ສ້າງສັນກັບພໍ່ແມ່.

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 27

ດັ່ງທີ່ໄດ້ກ່າວໃນຕອນຕົ້ນຂອງພາກນີ້, ບໍ່ແມ່ນທຸກຄົນທີ່ເຂົ້າຮ່ວມໃນຫຼັກສູດນີ້ຈະດຳເນີນການຈັດຊັ້ນຮຽນເດັກນ້ອຍ. ສຳລັບຜູ້ທີ່ຈັດຊັ້ນຮຽນ, ບາງຄົນອາດເລືອກການຈັດຊັ້ນຮຽນພຽງຄັ້ງໜຶ່ງກ່ອນທີ່ຈະກ້າວໄປສູ່ການຮັບໃຊ້ໃນກິດຈະກຳອື່ນ. ບາງຄົນຍັງຄົງຈະອຸທິດຕົນໃຫ້ກັບກິດຈະກຳນີ້ດ້ວຍຄວາມພະຍາຍາມ, ປະຄັບປະຄອງຊັ້ນຮຽນເປັນໄລຍະເວລາທີ່ຍາວນານ ເຊິ່ງບຳລຸງລ້ຽງເດັກນ້ອຍດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າ. ຢ່າງໃດກໍຕາມ, ໂດຍບໍ່ຄຳນຶງເຖິງເສັ້ນທາງທີ່ເຂົ້າຮ່ວມເລືອກ ເສັ້ນທາງທັງໝົດຈະມີໂອກາດທີ່ຈະພົບກະທົບຕໍ່ກັບສະມາຊິກຄົນລຸ້ນເຍົາຂອງຊຸມຊົນຂອງພວກເຂົາ, ບໍ່ວ່າຈະເປັນໃນການຮຽກຮ້ອງໃຫ້ເພື່ອນບ້ານ, ຫຼື ອ້າຍນ້ອງ ແລະ ພໍ່ແມ່ຜູ້ປົກຄອງ ເຂົ້າຮ່ວມການຊຸມນຸມ ແລະການເຕົ້າໂຮມກັນ. ບໍ່ວ່າສະຖານະການກໍ່ຕາມ, ແນວຄວາມຄິດ ແລະ ຄວາມຄິດທີ່ຄົ້ນພົບຢູ່ໃນພາກນີ້ຈະໃຫ້ຄວາມຢັ້ງຮູ້ກັບຜູ້ເຂົ້າຮ່ວມເຖິງຄວາມຮັບຜິດຊອບຂອງຊຸມຊົນຂອງພວກເຂົາໃນການເບິ່ງແຍງ, ດັ່ງທີ່ ທັມມະສະພາຄວາມຍຸຕິທຳແຫ່ງສາກົນ ບອກພວກເຮົາວ່າ "ຊັບສົມບັດອັນລ້ຳຄ່າທີ່ສຸດ" ຂອງສິ່ງນີ້. ຂໍໃຫ້ພວກເຮົາທຸກຄົນ, ຄະນະທີ່ພວກເຮົາເບິ່ງດ້ວຍສາຍຕາທີ່ຄາດຫວັງໄປສູ່ອະນາຄົດອັນສົດໃສຂອງມະນຸດຊາດ, ໄດ້ຮັບແຮງບັນດານໃຈ ແລະ ການປະຄັບປະຄອງຈາກຂໍ້ຄວາມຕໍ່ໄປນີ້:

“ເຮົາບັນຍັດໃຫ້ມະນຸດທັງປວງ ຜູ້ທີ່ຈະນຳພາຖ້ອຍຄຳຂອງພຣະຜູ້ເປັນເຈົ້າໄປສູ່ຄວາມສູງສົ່ງໃນບັນດາຜູ້ຮັບໃຊ້ຂອງພຣະອົງ, ແລະໃນທຳນອງດຽວກັນ, ເພື່ອຄວາມກ້າວໜ້າຂອງໂລກແຫ່ງການດຳລົງຢູ່ ແລະ ການຍົກລະດັບຈິດວິນຍານ. ດ້ວຍເຫດນີ້, ວິທີການທີ່ຍິ່ງໃຫຍ່ທີ່ສຸດແມ່ນການສຶກສາຂອງເດັກນ້ອຍ.”[38]

“ການສຶກສາ ແລະ ການເຝິກອົບຮົມເດັກນ້ອຍ ແມ່ນເປັນໜຶ່ງໃນບັນດາການກະທຳທີ່ໜ້າສັນລະເສີນທີ່ສຸດຂອງມະນຸດຊາດ ແລະ ດຶງດູດເອົາພຣະກາລຸນາທິຄຸນ ແລະ ໃຫ້ຄວາມເມດຕາທັງມວນ, ສຳລັບການສຶກສາແມ່ນພື້ນຖານທີ່ຂາດບໍ່ໄດ້ ຂອງຄວາມເປັນເລີດຂອງມະນຸດຊາດທັງໝົດ ແລະ ປ່ອຍໃຫ້ມະນຸດເຮັດວຽກໃນວິທີການຂອງຕົນ ເພື່ອລະດັບອັນສູງສົ່ງຂອງຂອງຄວາມຮຸ່ງເຮືອງຕະຫຼອດໄປ. ຖ້າຫາກເດັກນ້ອຍໄດ້ຮັບການເຝິກອົບຮົມຈາກໄວເດັກຂອງພວກເຂົາ, ໂດຍຜ່ານການດູແລດ້ວຍຄວາມຮັກຂອງ ພຣະຜູ້ເປັນຄົນດູແລສວນໃຈບຸນ, ດື່ມນ້ຳໃນຄຣິດສະຕໍ້ແຫ່ງຈິດໃຈ ແລະຄວາມຮູ້, ພວກເຂົາຈະເໝືອນດັ່ງຕົ້ນໄມ້ໜຸ່ມ ທ່າມກາງສາຍນ້ຳທີ່ໄຫຼແຮງ. ແລະແນ່ນອນວ່າ ເຂົາຈະລວບລວມລັດສະໝີທີ່ສົດໃສຂອງແສງຕາເວັນແຫ່ງສັດຈະທັມ, ແລະໂດຍຜ່ານແສງສະຫວ່າງ ແລະ ຄວາມຮ້ອນຂອງມັນຈະເຮັດໃຫ້ເຕີບໂຕຢ່າງສົດໃສ ແລະ ງົດງາມຢູ່ໃນສວນແຫ່ງຊີວິດ ....

“ຖ້າຫາກວ່າ ໃນວຽກງານທີ່ສຳຄັນຢ່າງຍິ່ງນີ້ ມີຄວາມພະຍາຍາມອັນຍິ່ງໃຫຍ່, ໂລກຂອງມະນຸດຊາດຈະເປັ່ງແສງອອກໄປດ້ວຍເຄື່ອງປະດັບອື່ນໆ, ແລະ ເຮັດໃຫ້ສ່ອງແສງໃຫ້ເຫັນແສງສະຫວ່າງທີ່ງົດງາມທີ່ສຸດ. ຫຼັງຈາກນັ້ນ, ສະຖານທີ່ມືດມົວຈະມີແສງສະຫວ່າງ, ແລະ ທີ່ຢູ່ອາໃສຂອງໂລກນີ້ຈະກາຍເປັນສະຫວັນ.”[39]

# ເອກະສານອ້າງອີງ


1. From a message dated 21 April 2000, published in *Messages from the Universal House of Justice, 1986–2001: The Fourth Epoch of the Formative Age* (Wilmette: Bahá'í Publishing Trust, 2010), no. 331.26, p. 727.
2. Bahá'u'lláh, in "A Compilation on Bahá'í Education", compiled by the Research Department of the Universal House of Justice, published in *The Compilation of Compilations* (Maryborough: Bahá'í Publications Australia, 1991), vol. 1, no. 576, p. 251.
3. *Selections from the Writings of 'Abdu'l-Bahá* (Wilmette: Bahá'í Publishing, 2010, 2015 printing), no. 106.1, p. 187.
4. 'Abdu'l-Bahá, in "A Compilation on Bahá'í Education", published in *The Compilation of Compilations*, vol. 1, no. 614, pp. 273–74.
5. *Gleanings from the Writings of Bahá'u'lláh* (Wilmette: Bahá'í Publishing Trust, 1983, 2017 printing), CXXII, par. 1, p. 294.
6. *Selections from the Writings of 'Abdu'l-Bahá*, no. 108.1, p. 188.
7. Ibid., no. 110.2, p. 190.
8. Ibid., no. 100.2, p. 179.
9. Ibid., no. 99.1, pp. 178–79.
10. Ibid., no. 103.5, p. 183.
11. Ibid., no. 122.1, pp. 198–99.
12. Words of 'Abdu'l-Bahá, cited in *Star of the West*, vol. 8, no. 4 (17 May 1917), p. 41.
13. *Gleanings from the Writings of Bahá'u'lláh*, CXXXVI, par. 2, p. 334; also in *Bahá'í Prayers: A Selection of Prayers Revealed by Bahá'u'lláh, the Báb, and 'Abdu'l-Bahá* (Wilmette: Bahá'í Publishing Trust, 2002, 2017 printing), p. iii.
14. From a talk given on 5 August 1912, published in *The Promulgation of Universal Peace: Talks Delivered by 'Abdu'l-Bahá during His Visit to the United States and Canada in 1912* (Wilmette: Bahá'í Publishing, 2012), par. 6, p. 345.
15. 'Abdu'l-Bahá, in *Prayer and Devotional Life: A Compilation of Extracts from the Writings of Bahá'u'lláh, the Báb, and 'Abdu'l-Bahá and the Letters of Shoghi Effendi and the Universal House of Justice*, compiled by the Research Department of the Universal House of Justice (Wilmette: Bahá'í Publishing, 2019), no. 24, p. 7.
16. *Gleanings from the Writings of Bahá'u'lláh*, XLIII, par. 9, p. 109.
17. From a talk given by 'Abdu'l-Bahá on 24 April 1912, published in *The Promulgation of Universal Peace*, par. 1, p. 71.
18. Bahá'u'lláh, *The Hidden Words* (Wilmette: Bahá'í Publishing Trust, 2003, 2012 printing), Arabic no. 3, p. 4.
19. Ibid., Arabic no. 12, p. 6.
20. Ibid., Arabic no. 11, p. 6.
21. *Gleanings from the Writings of Bahá'u'lláh*, CXXVIII, par. 6, p. 313.
22. *The Call of the Divine Beloved: Selected Mystical Works of Bahá'u'lláh* (Haifa: Bahá'í World Centre, 2018), no. 2.43, p. 31.
23. *The Hidden Words*, Arabic no. 59, p. 17.
24. From a talk given by 'Abdu'l-Bahá on 26 May 1912, published in *The Promulgation of Universal Peace*, par. 1, p. 204.
25. *Selections from the Writings of 'Abdu'l-Bahá*, no. 129.2, p. 204.
26. *Gleanings from the Writings of Bahá'u'lláh*, CLV, par. 4, pp. 376–77.
27. Ibid., CLIII, par. 5, p. 369.
28. *The Hidden Words*, Arabic no. 9, p. 5.

29. From a talk given by ‘Abdu’l-Bahá on 24 April 1912, published in *The Promulgation of Universal Peace*, par. 4, p. 73.
30. Bahá’u’lláh, *Epistle to the Son of the Wolf* (Wilmette: Bahá’í Publishing Trust, 1988, 2016 printing), p. 27.
31. *Tablets of Bahá’u’lláh Revealed after the Kitáb-i-Aqdas* (Wilmette: Bahá’í Publishing Trust, 1988, 2005 printing), no. 8.53, p. 126.
32. ‘Abdu’l-Bahá, *The Secret of Divine Civilization* (Wilmette: Bahá’í Publishing, 2007, 2016 printing), par. 74, p. 53.
33. *Selections from the Writings of ‘Abdu’l-Bahá*, no. 111.1, p. 191.
34. Ibid., no. 95.2, pp. 176–77.
35. Ibid., no. 111.4, pp. 191–92.
36. Ibid., no. 124.1, p. 200.
37. ‘Abdu’l-Bahá, in *Bahá’í Prayers*, p. 29.
38. From a Tablet revealed by Bahá’u’lláh, in *Social Action: A Compilation Prepared by the Research Department of the Universal House of Justice* (Wilmette: Bahá’í Publishing Trust, 2020), no. 178, p. 107.
39. *Selections from the Writings of ‘Abdu’l-Bahá*, no. 103.1–3, p. 182.



# ບົດຮຽນສຳລັບຊັ້ນຮຽນເດັກນ້ອຍ
# ລະດັບ 1

ຈຸດປະສົງ

ພັດທະນາຄວາມສາມາດໃນການສອນຊັ້ນຮຽນເດັກນ້ອຍ ອາຍຸຫ້າຫຼືຫົກປີ
ມຸ້ງເນັ້ນໄປທີ່ການຂັດເກົາອຸປະນິໃສ, ເຊິ່ງປະກອບດ້ວຍ
ການທ່ອງຈຳບົດອະທິຖານ ແລະ ພຣະວັດຈະນະ
ແລະ ເພງ, ເລື່ອງລາວ, ເກມ, ແລະ ການທາສີ

## ຕອນທີ 1

ໃນພາກສຸດທ້າຍ ເຈົ້າຄິດກ່ຽວກັບລັກສະນະຂອງຄວາມພະຍາຍາມຂອງເຈົ້າ ໃນຊັ້ນຮຽນລະດັບທຳອິດ ແລະ ກວດເບິ່ງອົງປະກອບຕ່າງໆທີ່ປະກອບເປັນບົດຮຽນໜຶ່ງ. ພາກທີສອງນີ້ ປະກອບມີຊາວສີ່ບົດຮຽນ, ເຊິ່ງເຈົ້າຮູ້ວ່າມີໂຄງສ້າງສຳລັບການພັດທະນາຄຸນລັກສະນະທາງຈິດວິນຍານ. ໃນພາກພື້ນຖານເຫຼົ່ານີ້, ເຈົ້າຈະໄດ້ຮັບໂອກາດທີ່ຈະຄຸ້ນເຄີຍກັບເນື້ອໃນຂອງບົດຮຽນ ແລະ ເຝິກອົບຮົມໃຫ້ເຂົາເຈົ້າ. ສິ່ງທີ່ພວກເຮົາຈະສຶກສາແມ່ນສີ່ບົດຮຽນໃນແຕ່ລະຄັ້ງ ແລະ ຄິດກ່ຽວກັບຄຸນລັກສະນະທາງວິນຍານທີ່ກ່າວເຖິງໃນແຕ່ລະບົດຮຽນ. ຫຼັງຈາກນັ້ນ ເຈົ້າຈະໄດ້ຮັບການສະໜັບສະໜູນເບິ່ງບົດຮຽນໃຫ້ລະອຽດ ກັບຜູ້ເຂົ້າຮ່ວມສຶກສາຂອງເຈົ້າ, ແລ້ວສືບຕໍ່ປຸ່ງພຽນກັນປະຕິບັດກິດຈະກຳທີ່ແຕກຕ່າງກັນໄປ, ກ່ອນທີ່ເຈົ້າຈະຍ້າຍໄປຮຽນສີ່ບົດຮຽນຕໍ່ໄປ.

## ຕອນທີ 2

ທຸກໆຊັ້ນຮຽນໃນຊັ້ນຮຽນລະດັບທີ 1 ຄວນເລີ່ມຕົ້ນດ້ວຍການອະທິຖານເປີດຊັ້ນຮຽນໂດຍຄູ. ເພື່ອເປັນການຊ່ວຍເຫຼືອ, ເຈົ້າຈະໄດ້ຮັບຄຳແນະນຳໃຫ້ສວດບົດອະທິຖານໃຫມ່ບົດໜຶ່ງ ໃນທຸກໆສີ່ບົດຮຽນ, ລວມທັງໝົດມີຫົກບົດອະທິຖານ. ຖ້າທ່ານສາມາດທ່ອງຈຳບົດອະທິຖານເຫຼົ່ານີ້, ມັນຈະຊຸກຍູ້ໃຫ້ເດັກນ້ອຍພະຍາຍາມທ່ອງຈຳເອງຫຼາຍຂຶ້ນ. ສຳລັບບົດຮຽນທີ 1 ເຖິງ 4, ຂໍແນະນຳບົດອະທິຖານຕໍ່ໄປນີ້:

> **"ໂອ ພຣະຜູ້ເປັນເຈົ້າ! ຂໍຊົງອົບຮົມເດັກເຫຼົ່ານີ້. ເດັກເຫຼົ່ານີ້ຄືພຶກສາຊາດໃນສວນໝາກໄມ້ຂອງພຣະອົງ, ຄືບຸບຜາໃນທົ່ງຫຍ້າຂອງພຣະອົງ, ຄືດອກກຸຫຼາບໃນອຸທະຍານຂອງພຣະອົງ. ຂໍຊົງຫຼັ່ງຝົນຂອງພຣະອົງມາໃຫ້ແກ່ພວກເຂົາ; ຂໍຊົງໃຫ້ດວງຕາເວັນແຫ່ງສັດຈະ ສ່ອງແສງມາພວກເຂົາດ້ວຍຄວາມຮັກ. ຂໍຊົງໃຫ້ສາຍລົມຂອງພຣະອົງ ພັດຄວາມສົດຊື່ນມາໃຫ້ພວກເຂົາເພື່ອວ່າພວກເຂົາຈະໄດ້ຮັບການອົບຮົມ, ຈະໄດ້ເຕີບໂຕ ແລະ ພັດທະນາໃຫ້ປາກົດຂຶ້ນຢ່າງງົດງາມທີ່ສຸດ. ພຣະອົງຄືພຣະຜູ້ໃຫ້. ພຣະອົງຄືພຣະຜູ້ຊົງເຫັນໃຈ."[1]**

ຫຼັງຈາກສະເໜີບົດອະທິຖານຂ້າງເທິງນີ້, ເຈົ້າຈະຊຸກຍູ້ໃຫ້ເດັກນ້ອຍສອງສາມຄົນເວົ້າບາງຢ່າງທີ່ພວກເຂົາທ່ອງຂຶ້ນໃຈ. ໃນຕອນເລີ່ມຕົ້ນເດັກນ້ອຍທຸກຄົນ ອາດຈະບໍ່ສາມາດປະກອບສ່ວນໃນພາກນີ້ຂອງຊັ້ນຮຽນ. ເຖິງຢ່າງໃດກໍ່ຕາມ, ມັນຈະຄ່ອຍໆສາມາດເຮັດໄດ້ຫຼາຍຂຶ້ນ, ໃນຂະນະທີ່ພວກເຂົາມີຄວາມຕັ້ງໃຈທີ່ຈະຈື່ຈຳບັນດາບົດອະທິຖານ ທີ່ພວກເຂົາຮຽນໃນຊັ້ນຮຽນລະດັບນີ້. ຈາກການສຶກສາພາກທີ່ຜ່ານມາຂອງເຈົ້າ, ເຈົ້າຄຸ້ນເຄີຍກັບສິ່ງທີ່ຢູ່ຂ້າງລຸ່ມນີ້ແລ້ວ, ເຊິ່ງຈະສຸມເອົາຄວາມພະຍາຍາມຂອງພວກເຂົາໃສ່ໃນບົດຮຽນສອງສາມບົດທຳອິດນີ້.

**"ພຣະອົງຄືພຣະຜູ້ເປັນເຈົ້າ! ໂອ ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂໍຊົງປະທານຫົວໃຈທີ່ບໍລິສຸດ ເໝືອນດັ່ງໄຂ່ມຸກແກ່ຂ້າພະອົງ."[2]**

ຊ່ວງເວລາທີ່ອຸທິດໃຫ້ກັບການອະທິຖານເປີດຊັ້ນຮຽນ ແມ່ນສິ່ງທີ່ສຳຄັນທີ່ສຸດ; ມັນຈະສ້າງບັນຍາກາດຂອງການອຸທິດຕົນຕໍ່ພຣະຜູ້ເປັນເຈົ້າ, ບັນຍາກາດທີ່ມີຄຸນນະພາບໃນການຮຽນຮູ້. ພຣະອັບດຸລລາບາຮາ ບອກພວກເຮົາວ່າ ການເຕົ້າໂຮມເດັກນ້ອຍຮ່ວມກັນ ແລະ ການສິດສອນພວກເຂົາສວດອະທິຖານຈະ "ນຳຄວາມສຸກ" ມາໃຫ້ພວກເຂົາ. ການສົນທະນາກັບພຣະຜູ້ເປັນເຈົ້າ "ຈະເຮັດໃຫ້ເກີດການເປີດຮັບທາງສະຕິປັນຍາທີ່ສູງຂຶ້ນ."

ເດັກນ້ອຍຄວນຖືກຊ່ວຍເຫຼືອ ໃນການພັດທະນາຄວາມຮູ້ສຶກເຄົາລົບຕໍ່ພຣະຜູ້ເປັນເຈົ້າຢ່າງເລິກເຊິ່ງ ແລະ ໃຫ້ພວກເຂົາປະຕິບັດຕົນເອງແບບນັ້ນໃນເວລາສວດອະທິຖານ. ພວກເຂົາອາດຈຳເປັນຈະຕ້ອງໄດ້ຖືກຊ່ວຍເຫຼືອ ເພື່ອໃຫ້ຈິດໃຈ ແລະ ຄວາມຄິດຂອງພວກເຂົາ ເປັນສູນກາງຢູ່ທີ່ຖ້ອຍຄຳອັນສັກສິດ, ບໍ່ວ່າຈະອະທິຖານຕົວເອງ ຫຼື ຟັງຄຳອະທິຖານທີ່ເດັກນ້ອຍຄົນອື່ນໆສວດ. ຄູສາມາດຖາມເດັກນ້ອຍວ່າ ພວກເຂົາສາມາດສະແດງອອກຄວາມເຄົາລົບແນວໃດ - ຕົວຢ່າງ ພວກເຂົາຄວນນັ່ງແນວໃດ, ພວກເຂົາຄວນເຮັດແນວໃດກັບມືຂອງພວກເຂົາເພື່ອບໍ່ໃຫ້ຈິດໃຈອອກແວກ, ແລະ ພວກເຂົາຄວນເຮັດແນວໃດກັບດວງຕາຂອງພວກເຂົາ ຫາກພົບວ່າດວງຕາແນມເບິ່ງໄປມາ. ຄູສາມາດໃຫ້ພວກເຂົາສາທິດວິທີທີ່ພວກເຂົາກຽມຕົວສຳລັບການອະທິຖານ. ເຈົ້າຕ້ອງຈື່ໄວ້ວ່າມັນຈະດີກວ່າສຳລັບເດັກນ້ອຍພຽງແຕ່ສາມຫຼືສີ່ຄົນ ສວດອະທິຖານໃນບັນຍາກາດທາງຈິດວິນຍານ ແທນທີ່ຈະເຮັດໃຫ້ເດັກນ້ອຍແຕ່ລະຄົນສວດບົດໜຶ່ງໃນຂະນະທີ່ມີສຽງແຊວ ແລະ ການເໜັງຕີງ. ສະນັ້ນ ຂໍແນະນຳໃຫ້ເຈົ້າເລືອກເດັກທີ່ຈະສວດອະທິຖານເລີ່ມຕົ້ນຊັ້ນຮຽນໄວ້ລ່ວງໜ້າ. ເຈົ້າຈະຕ້ອງໃຫ້ແນ່ໃຈວ່າເດັກນ້ອຍທຸກຄົນໄດ້ຮັບໂອກາດທີ່ຈະສວດອະທິຖານ ຢ່າງໜ້ອຍໜຶ່ງຄັ້ງໃນທຸກໆສາມ ຫຼື ສີ່ຄັ້ງຂອງຊັ້ນຮຽນ.

ຕະຫຼອດທັງປີ, ມັນເປັນສິ່ງສຳຄັນສຳລັບເຈົ້າທີ່ຈະສົນທະນາກັບນັກຮຽນຂອງເຈົ້າເປັນບາງຄັ້ງຄາວ ກ່ຽວກັບທຳມະຊາດຂອງການອະທິຖານ ແລະ ເປັນຫຍັງພວກເຮົາຈຶ່ງອະທິຖານ. ຂໍໃຫ້ອະທິບາຍໃນບ່ອນວ່າງຂ້າງລຸ່ມນີ້ ທ່ານຈະເວົ້າຫຍັງກັບພວກເຂົາໃນຊ່ວງສອງສາມອາທິດທຳອິດ.

**ຕອນທີ 3**

ຕອນນີ້ຂໍໃຫ້ອ່ານບົດຮຽນສີ່ບົດທຳອິດຢ່າງລະມັດລະວັງ, ເພື່ອລະບົດກັບສະມາຊິກຄົນອື່ນໆໃນກຸ່ມຂອງເຈົ້າ. ເຈົ້າຄວນເອົາໃຈໃສ່ເປັນພິເສດຕໍ່ຄວາມຄິດເຫັນເບື້ອງຕົ້ນ ແລະ ພຣະວັດຈະນະ ທີ່ນັກຮຽນຈະຕ້ອງທ່ອງຈຳ. ແນ່ນອນ, ເຈົ້າຮູ້ວ່າບົດຮຽນທຳອິດແມ່ນສຸມໃສ່ຫົວຂໍ້ຂອງຄວາມບໍລິສຸດ. ຈົ່ງຂຽນຄຸນລັກສະນະທາງຈິດວິນຍານກ່ຽວຂ້ອງກັບບົດຮຽນໃນສາມບົດຕໍ່ໄປ.

ບົດທີ 1: ຄວາມບໍລິສຸດ ____________________

ບົດທີ 2: ____________________

ບົດທີ 3: ____________________

ບົດທີ 4: ____________________

ໃນການກະກຽມທີ່ຈະສອນບົດຮຽນເຫຼົ່ານີ້, ເຈົ້າຄວນໃຊ້ເວລາໄລຍະໜຶ່ງໃນການທົບທວນຄຸນລັກສະນະໃນແຕ່ລະອັນທີ່ໄດ້ກ່າວມາ, ດັ່ງທີ່ເຈົ້າໄດ້ເຮັດຜ່ານມາແລ້ວສຳລັບຄວາມບໍລິສຸດຂອງຫົວໃຈໃນພາກທຳອິດ. ຂ້າງລຸ່ມນີ້ແມ່ນບາງພຣະວັດຈະນະ ຈາກຄຳສອນທີ່ກ່ຽວຂ້ອງກັບຄຸກລັກສະນະສາມຢ່າງ. ມັນໄດ້ແນະນຳໃຫ້ເຈົ້າອ່ານແຕ່ລະຊຸດຫຼາຍໆຄັ້ງກັບກຸ່ມຂອງເຈົ້າ ແລະ ທົບທວນຂໍ້ຄວາມເຫຼົ່ານັ້ນນຳກັນ, ໃຫ້ຈື່ໄວ້ໃນໃຈ ພຣະວັດຈະນະທີ່ນັກຮຽນຂອງເຈົ້າຈະທ່ອງຈຳ. ຫຼັງຈາກນັ້ນ, ຂໍໃຫ້ຂຽນຄວາມຄິດເຫັນບາງຢ່າງຂອງເຈົ້າ ກ່ຽວກັບຄວາມສຳຄັນຂອງຄຸນລັກສະນະໃນຊີວິດ ຂອງບຸກຄົນໂດຍທົ່ວໄປ, ແລະ ໂດຍສະເພາະ ຄວາມພະຍາຍາມຂອງເຈົ້າໃນຖານະເປັນຄູ. ຈົ່ງຈື່ໄວ້ວ່າພຣະວັດຈະນະເຫຼົ່ານີ້ ບໍ່ໄດ້ມີຈຸດປະສົງສຳລັບເດັກນ້ອຍໃນຊັ້ນຮຽນຂອງເຈົ້າ ແຕ່ສຳລັບການທົບທວນຂອງເຈົ້າເອງ.

ກ່ຽວກັບຄວາມຍຸຕິທັມ, ຂໍໃຫ້ພວກເຮົາອ່ານ:

**"ແສງສະຫວ່າງຂອງມະນຸດຄືຄວາມຍຸຕິທັມ. ຢ່າດັບມັນດ້ວຍລົມແຫ່ງການກົດຂີ່ຂົ່ມເຫັງ ແລະ ການປົກຄອງແບບຜະເດັດການ. ຈຸດປະສົງຂອງຄວາມຍຸດຕິທັມ ຄືການປາກົດຂຶ້ນຂອງຄວາມສາມັກຄີໃນມວນມະນຸດ."[3]**

**"ບໍ່ມີລັດສະໝີໃດທຽບໄດ້ກັບຄວາມຍຸຕິທັມ. ອົງການຈັດຕັ້ງຂອງໂລກ ແລະ ຄວາມສະຫງົບສຸກຂອງມວນມະນຸດຊາດ ແມ່ນຂຶ້ນກັບຄວາມຍຸຕິທັມ."[4]**

**"ສິ່ງທີ່ເຝິກຝົນໂລກນີ້ແມ່ນຄວາມຍຸຕິທັມ, ເພາະວ່າຄວາມຍຸຕິທັມໄດ້ຖືກຄ້ຳຈຸນດ້ວຍສອງເສົາຫຼັກ ກໍຄືລາງວັນແລະການລົງໂທດ. ສອງເສົາຫຼັກນີ້ເປັນແຫຼ່ງທີ່ມາຂອງຊີວິດແກ່ໂລກ."[5]**

"ໂອ ບຸດແຫ່ງຈິດວິນຍານ! ສິ່ງທີ່ເປັນທີ່ຮັກຍິ່ງເໜືອທຸກສິ່ງໃນພຣະເນດຂອງພຣະອົງຄື ຄວາມຍຸຕິທັມ; ບໍ່ໃຫ້ຫັນຈາກໄປ ຖ້າເຈົ້າຕ້ອງການເຮົາພຣະອົງ, ແລະ ບໍ່ໃຫ້ລະຖິ້ມຄວາມຍຸຕິທັມ ເພື່ອວ່າເຮົາພຣະອົງ ຈະໄດ້ໄວ້ວາງໃຈໃນຕົວເຈົ້າ. ດ້ວຍຄວາມຊ່ວຍເຫຼືອຂອງຄວາມຍຸຕິທັມ ເຈົ້າຈະເຫັນດ້ວຍຕາຂອງເຈົ້າເອງ ແລະ ບໍ່ແມ່ນຜ່ານສາຍຕາຂອງຄົນອື່ນ, ແລະ ຈະຮູ້ດ້ວຍຄວາມຮູ້ຂອງເຈົ້າເອງ ແລະ ບໍ່ໄດ້ຜ່ານຄວາມຮູ້ຂອງເພື່ອນບ້ານ. ຈົ່ງໄຕ່ຕອງກ່ຽວກັບສິ່ງນີ້ໃນຫົວໃຈຂອງເຈົ້າ; ວ່າມັນຈະເປັນແນວໃດ. ແທ້ຈິງແລ້ວ ຄວາມຍຸຕິທັມຄືຂອງຂວັນຂອງເຮົາພຣະອົງສຳລັບເຈົ້າ ແລະ ເປັນສັນຍາລັກຂອງຄວາມເມດຕາຮັກໃຄ່ຂອງເຮົາພຣະອົງ. ແລ້ວຕັ້ງໄວ້ຕໍ່ໜ້າຕໍ່ຕາຂອງເຈົ້າ."[6]

______________________________

______________________________

______________________________

______________________________

______________________________

ກ່ຽວກັບຄຸນລັກສະນະຂອງຄວາມຮັກ, ຄຳສອນເລົ່ານີ້ບອກພວກເຮົາວ່າ:

"ແກ່ນແທ້ຂອງຄວາມຮັກ ຄືການທີ່ມະນຸດຫັນຫົວໃຈຂອງພວກເຂົາ ໄປຫາພຣະຜູ້ເປັນທີ່ຮັກ, ແລະ ແຍກຕົນເອງອອກຈາກສິ່ງອື່ນໃດນອກຈາກພຣະອົງ, ແລະ ບໍ່ປາດຖະໜາສິ່ງອື່ນໃດນອກຈາກ ສິ່ງທີ່ເປັນຄວາມປາດຖະໜາຂອງພຣະຜູ້ເປັນເຈົ້າ."[7]

"ໃນມື້ນີ້, ການຮັບໃຊ້ຈຸດປະສົງອັນສັກສິດຂອງພຣະຜູ້ເປັນເຈົ້າ ແມ່ນການສ້າງຄວາມຮັກ ແລະ ມິດຕະພາບໃນບັນດາມິດສະຫາຍຂອງພຣະອົງ."[8]

"ຈຸດປະສົງຂອງການປາກົດຂຶ້ນ ຂອງບັນດາພຣະສາສະດາທີ່ສັກສິດ ການສ້າງມິດຕະພາບ ແລະ ຄວາມຮັກໃນໂລກຂອງມະນຸດຊາດ."[9]

"ຈົ່ງຮູ້ໄວ້ຢ່າງໝັ້ນໃຈວ່າ ຄວາມຮັກແມ່ນຄວາມເລັ້ນລັບຂອງແຜນງານອັນສັກສິດຂອງພຣະຜູ້ເປັນເຈົ້າ, ການປາກົດຕົວຂອງພຣະຜູ້ຊົງຄວາມເມດຕາ, ນ້ຳພຸແຫ່ງຈິດວິນຍານທີ່ຫຼັ່ງໄຫຼອອກມາ. ຄວາມຮັກແມ່ນແສງສະຫວ່າງອັນກະລຸນາຂອງສະຫວັນ, ລົມຫາຍໃຈນິລັນດອນຂອງພຣະວິນຍານບໍລິສຸດ ທີ່ເຮັດໃຫ້ວິນຍານຂອງມະນຸດມີຊີວິດຊີວາ."[10]

______________________________

______________________________

______________________________

______________________________________________________________________

______________________________________________________________________

ແລະ ກ່ຽວຂ້ອງກັບວາຈາສັດຊື່, ພວກເຮົາໄດ້ຮັບຄໍາແນະນໍາ:

"ຈົ່ງກ່າວວ່າ: ຂໍໃຫ້ວາຈາສັດຊື່ ແລະ ຄວາມສຸພາບອ່ອນໂຍນເປັນເຄື່ອງປະດັບແກ່ເຈົ້າ."[11]

"ຫາກປາສະຈາກວາຈາສັດຊື່ ຄວາມກ້າວໜ້າ ແລະ ຄວາມສໍາເລັດໃນທຸກພິບຂອງພຣະຜູ້ເປັນເຈົ້າ ຈະເປັນໄປບໍ່ໄດ້ສໍາລັບຈິດວິນຍານທຸກດວງ."[12]

"ວາຈາສັດຊື່ເປັນຄຸນລັກສະນະທີ່ປະເສີດທີ່ສຸດ ເນື່ອງຈາກວາຈາສັດຊື່ນໍາພາໄປສູ່ຄວາມເຂົ້າໃຈເຖິງຄຸນນະທັມອື່ນໆທັງໝົດ. ບຸກຄົນທີ່ສັດຊື່ຈະໄດ້ຮັບການຄຸ້ມຄອງຈາກຄວາມທຸກທໍລະມານທາງສິນລະທັມທັງປວງ, ຈະຫຼຸດຜ່ອນຈາກການກະທໍາທີ່ຊົ່ວຮ້າຍໃນທຸກໆຄັ້ງ, ແລະ ຖືກປົກປ້ອງຈາກການກະທໍາທີ່ຊົ່ວຮ້າຍທຸກປະການ, ເນື່ອງຈາກຄວາມຊົ່ວຮ້າຍ ແລະ ການກະທໍາຜິດທັງໝົດ ເປັນສິ່ງທີ່ກົງກັນຂ້າມກັບວາຈາສັດຊື່, ແລະ ມະນຸດທີ່ສັດຊື່ຈະຖືວ່າ ຄວາມຊົ່ວຮ້າຍ ແລະ ການກະທໍາຜິດທັງໝົດນັ້ນ ໜ້າລັງກຽດຢ່າງທີ່ສຸດ."[13]

______________________________________________________________________

______________________________________________________________________

______________________________________________________________________

______________________________________________________________________

______________________________________________________________________

ຕອນນີ້, ນອກເໜືອຈາກການທ່ອງຈໍາພຣະວັດຈະນະເລົ່ານີ້ ເດັກນ້ອຍຈະຮຽນຮູ້ຈື່ຈໍາໃຫ້ຂຶ້ນໃຈບົດຮຽນເຫຼົ່ານີ້, ເຈົ້າອາດຈະຕ້ອງການຈົດຈໍາຢ່າງໜ້ອຍໜຶ່ງຂໍ້ຄວາມຈາກແຕ່ລະຊຸດ.

**ຕອນທີ 4**

ຂໍໃຫ້ນຶກເຖິງການທົບທວນທີ່ກ່າວມາຂ້າງເທິງໄວ້ໃນໃຈຂອງເຈົ້າ, ຂໍໃຫ້ອ່ານຄືນເລື່ອງລາວຕ່າງໆໃນສີ່ບົດຮຽນທໍາອິດ ທີ່ເຈົ້າຈະເລົ່າໃຫ້ນັກຮຽນຂອງເຈົ້າຟັງ. ດັ່ງທີ່ເຈົ້າຮູ້ວ່າ ສາມໃນສີ່ສ່ວນຂອງເລື່ອງລາວນັ້ນໄດ້ຖືກນໍາເອົາມາຈາກຊີວິດຂອງ ພຣະອັບດຸລບາຮາ, ຜູ້ເປັນສູນກາງຂອງຄວາມສົມບູນແບບທີ່ສຸດຂອງມະນຸດ. ເດັກນ້ອຍບາງຄົນທີ່ເຈົ້າສອນໃນຊັ້ນຮຽນລະດັບທີ 1 ອາດຈະບໍ່ຄຸ້ນເຄີຍກັບພຣະອັບດຸລບາຮາ ຜູ້ເປັນບຸກຄົນສໍາຄັນ, ສະນັ້ນ ເຈົ້າຈໍາເປັນຕ້ອງແນະນໍາໂດຍຫຍໍ້ກ່ຽວກັບພຣະອົງ

ໃຫ້ແກ່ເດັກນ້ອຍ. ສິ່ງທີ່ເຈົ້າໄດ້ຮຽນຮູ້ໃນພາກທີສາມຂອງຫຼັ້ມ 2 ໄດ້ເພີ້ມການຮັບຮູ້ຂອງເຈົ້າເອງກ່ຽວກັບສາຖະນະພິເສດຂອງພຣະອົງ, ແລະ ເມື່ອເຈົ້າກ້າວໜ້າໃນການສຶກສາຕາມຫຼັກສູດຕາມລຳດັບແລ້ວເຈົ້າຈະຮູ້ສຶກຂອບໃຈພຣະຜູ້ເປັນເຈົ້າ ສຳລັບຂອງຂວັນອັນລ້ຳຄ່າທີ່ພຣະອົງປະທານມາໃຫ້ມະນຸດຢູ່ໃນຕົວຂອງ ພຣະອັບດຸລບາຮາ. ເຈົ້າຈະບອກຫຍັງກັບເດັກນ້ອຍກ່ຽວກັບພຣະອົງ ເມື່ອພວກເຂົາເລີ່ມຕົ້ນຮຽນບົດຮຽນທຳອິດໃນຊັ້ນຮຽນລະດັບທີ 1?

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

ຈາກການສຶກສາພາກທຳອິດຂອງເຈົ້າ, ເຈົ້າຮູ້ວ່າການເລົ່າເລື່ອງໃຫ້ເດັກນ້ອຍຟັງ, ເຈົ້າຈະຕ້ອງນຳພາພວກເຂົາໄປເໜືອກວ່າເຫດການ ແລະ ຊ່ວຍພວກເຂົາໃຫ້ເຫັນຄວາມເປັນຈິງທາງຈິດວິນຍານ. ເຈົ້າໄດ້ຮັບໂອກາດທີ່ຈະຄິດວ່າເລື່ອງລາວຂອງແຂກຂອງ ພຣະອັບດຸລບາຮາ ໃນບົດທີ 1 ຈະຊ່ວຍໃຫ້ນັກຮຽນຂອງເຈົ້າເຂົ້າໃຈ ຄວາມສຳຄັນຂອງຄຸນລັກສະນະຂອງຄວາມບໍລິສຸດ ແລະ ພະຍາຍາມບຸກບືນໃຫ້ມີຄຸນລັກສະນະຂອງຄວາມບໍລິສຸດ ມັນມີຄວາມໝາຍວ່າແນວໃດ. ຂໍໃຫ້ພວກເຮົາກວດສອບເລື່ອງລາວໃນສາມບົດຮຽນຕໍ່ໄປໃນແບບດຽວກັນ.

ດັ່ງທີ່ເຈົ້າຈະໄດ້ເຫັນ, ໃນບົດທີ 2 ເຈົ້າຈະເລົ່າເລື່ອງທີ່ສະແດງໃຫ້ເຫັນເຖິງຄວາມຫ່ວງໃຍໃນຄວາມຍຸດຕິທຳຂອງ ພຣະອັບດຸລບາຮາ, ເຊິ່ງເປັນຫົວຂໍ້ຂອງບົດຮຽນ. ເລື່ອງລາວໄດ້ອະທິບາຍເຖິງເຫດການທີ່ເກີດຂຶ້ນເມື່ອ ພຣະອັບດຸລບາຮາ ເດີນທາງໃນໜຶ່ງມື້ຈາກ ເມືອງອັກຄາ ເຖິງເມືອງໄຮຟາ. ມີລາຍລະອຽດບາງຢ່າງທີ່ເດັກນ້ອຍຈະຕ້ອງເຂົ້າໃຈ ຫາກພວກເຂົາຕິດຕາມເລື່ອງດັ່ງກ່າວ - ຍົກຕົວຢ່າງ ຄວາມແຕກຕ່າງລະຫວ່າງບ່ອນນັ່ງໃນລົດໂດຍສານທຳມະດາ ແລະ ລົດມ້າສ່ວນຕົວ. ນີ້ຈະຊ່ວຍໃຫ້ພວກເຂົາເຫັນວ່າ ພຣະອັບດຸລບາຮາ ໄດ້ຍິນດີທີ່ຈະປະຖິ້ມຄວາມສະດວກສະບາຍສ່ວນຕົວຂອງພຣະອົງ ເພື່ອຈະສາມາດໃຫ້ຄວາມຊ່ວຍເຫຼືອທາງດ້ານຈິດວິນຍານ ແລະ ທາງວັດຖຸປັດໃຈ ແກ່ຜູ້ທີ່ມີຄວາມຈຳເປັນ. ເຈົ້າຈະແນ່ໃຈໄດ້ແນວໃດວ່າ ນັກຮຽນຂອງເຈົ້າເຫັນວ່າວິຖີຊີວິດຂອງ ພຣະອັບດຸລບາຮາ - ບໍ່ໄດ້ໃຊ້ຈ່າຍເພື່ອພຣະອົງເອງໂດຍບໍ່ຈຳເປັນ ແລະ ການຕອບສະໜອງໃຫ້ແກ່ຜູ້ທີ່ມີຄວາມ

ຈຳເປັນ - ກໍເພື່ອສ່ອງແສງຄຸນລັກສະນາທາງຈິດວິນຍານຂອງຄວາມຍຸຕິທັມ? ມີບາງລາຍລະອຽດໃດແດ່ທີ່ຄວນຈະກະຈ່າງແຈ້ງໃນຄວາມຄິດຂອງເຈົ້າ ກ່ອນທີ່ເຈົ້າຈະເລົ່າເລື່ອງ?

ຄວາມຮັກແມ່ນຫົວຂໍ້ຂອງບົດທີ 3, ແລະ ໃນທີ່ນີ້ເຈົ້າຈະເລົ່າໃຫ້ເດັກນ້ອຍຟັງ ເລື່ອງຂອງຜູ້ຊາຍຄົນໜຶ່ງໃນ ເມືອງອັກຄາ, ຜູ້ທີ່ບໍ່ເຄົາລົບນັບຖື ພຣະອັບດຸລບາຮາ ຕະຫຼອດເວລາ, ເຖິງຢ່າງໃດກໍຕາມ ກໍເປັນຜູ້ໄດ້ຮັບຄວາມຮັກຄວາມກະລຸນາຂອງພຣະອົງມາຫຼາຍປີ. ແນ່ນອນ, ມັນງ່າຍທີ່ຈະມີຄວາມຮັກໃນຫົວໃຈຂອງພວກເຮົາ ສຳລັບຜູ້ທີ່ມີຄວາມເມດຕາຕໍ່ພວກເຮົາ. ແຕ່ຄວາມຮັກຂອງ ພຣະອັບດຸລບາຮາ ບໍ່ມີຂອບເຂດ ແລະ ບໍ່ມີເງື່ອນໄຂ. ໃນວິທີທີ່ເຈົ້າເລົ່າເລື່ອງ, ເຈົ້າຈະສາມາດໝັ້ນໃຈໄດ້ແນວໃດວ່າ ຄຸນລັກສະນະຂອງຄວາມຮັກຂອງ ພຣະອັບດຸລບາຮາ ຈະປະກົດຕໍ່ເດັກນ້ອຍ? ເຈົ້າຈະຊ່ວຍພວກເຂົາໃນການຊື່ນຊົມຍິນດີໃນພະລັງຂອງຄວາມຮັກ ທີ່ປ່ຽນແປງຫົວໃຈຂອງຄົນທີ່ປະພຶດຜິດຍ້ອນຄວາມບໍ່ຮູ້ໄດ້ແນວໃດ? ມີບາງລາຍລະອຽດໃດແດ່, ຫາກປ່ອຍໄວ້ຈະເຮັດໃຫ້ເດັກນ້ອຍຕິດຕາມເລື່ອງລາວ ແລະ ເຂົ້າໃຈຄວາມຢັ່ງຮູ້ນີ້ໄດ້ຍາກ?

ບົດທີ 4, ເຊິ່ງເນັ້ນໜັກໃສ່ຄຸນລັກສະນະຂອງອາຈາສັດຊື່, ລວມທັງເລື່ອງລາວທີ່ເປັນຮູ້ຈັກກັນດີຂອງຄົນລ້ຽງແກະຜູ້ຮ້ອງໄຫ້ນຳໝາປ່າ. ເລື່ອງລາວສະແດງໃຫ້ເຫັນຜົນສະທ້ອນຂອງການຕົວະຂອງຄົນລ້ຽງແກະໜຸ່ມນ້ອຍ, ເຊິ່ງເດັກນ້ອຍຈະເຂົ້າໃຈໄດ້ງ່າຍ. ແຕ່ເຈົ້າຈະຕ້ອງການໃຫ້ພວກເຂົາເຂົ້າໃຈໄປໄກກວ່ານັ້ນ ແລະ ຮັບຮູ້ເຖິງລາງວັນຂອງການເປັນຄົນຊື່ສັດ. ລາງວັນນີ້ແມ່ນຫຍັງ, ແລະ ເຈົ້າແນ່ໃຈໄດ້ຢ່າງໃດວ່າເດັກນ້ອຍຈະສະສົມລາງວັນຈາກເລື່ອງນີ້ແນວໃດ?

ຕອນທີ 5

ໃນຕອນເລົ່ານີ້ເຈົ້າໄດ້ຄິດກ່ຽວກັບຄຸນລັກສະນະທາງຈິດວິນຍານ ທີ່ໄດ້ກ່າວໃນສີ່ບົດຮຽນທຳອິດຂອງຊັ້ນຮຽນລະດັບທີ 1, ເຮັດໃຫ້ຄວາມເຂົ້າໃຈຂອງເຈົ້າເລິກເຊິ່ງ ກ່ຽວກັບຄວາມໝາຍອັນສຳຄັນຂອງຄຸນລັກສະນະທາງຈິດວິນຍານ. ເຈົ້າໄດ້ເຫັນເຊັ່ນກັນວ່າ, ເລື່ອງລາວຕ່າງໆໃຫ້ປະກາຍສູ່ລັກສະນະຂອງຄຸນສົມບັດຄືແນວໃດ ເຊິ່ງເຈົ້າຫວັງວ່ານັກຮຽນຂອງເຈົ້າຈະພັດທະນາຕໍ່ໄປໃນລະດັບນີ້.

ກ່ອນທີ່ເຈົ້າຈະຍ້າຍໄປອີກສີ່ບົດຮຽນຕໍ່ໄປ, ເຈົ້າຄວນໃຊ້ເວລາຈຳນວນໜຶ່ງກັບຜູ້ເຂົ້າຮ່ວມຂອງເຈົ້າ ເພື່ອກະກຽມສອນສີ່ບົດຮຽນທຳອິດ. ການໃຊ້ວິທີການທີ່ໄດ້ປຶກສາກັນໃນພາກກ່ອນໜ້ານີ້, ເຈົ້າສາມາດປຸ່ງແຕ່ງກັນແນະນຳບົດອະທິຖານສຳລັບທ່ອງຈຳ ແລະ ນຳສະເໜີຄຸນລັກສະນະທາງຈິດວິນຍານທີ່ໄດ້ປຶກສາກັນໃນແຕ່ບົດຮຽນ, ພ້ອມກັບພຣະວັດຈະນະທີ່ຕ້ອງທ່ອງຈຳ. ເຈົ້າຄວນເລົ່າເລື່ອງໃຫ້ກັນແລະກັນຟັງ ແລ້ວຫຼິ້ນເກມ ແລະ ຮ້ອງເພງນຳກັນ ຈົນກວ່າເຈົ້າສາມາດສອນດ້ວຍຄວາມໝັ້ນໃຈໃນລະດັບໜຶ່ງ. ຂໍໃຫ້ຄິດວິທີທີ່ເຈົ້າຈະແນະນຳກ່ຽວກັບເຈ້ຍສຳລັບທາສີ. ກ່ອນທີ່ເຈົ້າຈະເລີ່ມບົດເຝິກຫັດນີ້, ມັນອາດຈະເປັນປະໂຫຍດທີ່ຈະທົບທວນຕອນທີ 17 ເຖິງ 24 ໃນພາກທຳອິດ. ຫຼັງຈາກເຝິກອົງປະກອບຕ່າງໆຕາມທີ່ແນະນຳ, ສາມາດຂໍໃຫ້ສະມາຊິກແຕ່ລະຄົນໃນກຸ່ມຂອງເຈົ້າ ສອນໜຶ່ງບົດຮຽນ ຫຼື ຫຼາຍບົດຮຽນ ເຊິ່ງໃນຂະນະທີ່ຄົນອື່ນໆສະແດງເປັນນັກຮຽນ. ຂຶ້ນກັບສະພາບການຂອງເຈົ້າ, ມັນອາດຈະເປັນໄປໄດ້ ທີ່ຈະຈັບກຸ່ມເດັກນ້ອຍສາມຫຼືສີ່ຄົນຮ່ວມກັນ ແລະ ສອນບົດຮຽນແກ່ພວກເຂົາ.

ໃນການປະຕິບັດການເຝິກຝົນຂ້າງເທິງນີ້, ເຈົ້າອາດຈະຕ້ອງການຈົດບັນທຶກກ່ຽວກັບແຕ່ລະບົດຮຽນ ແລະ ບັນທຶກຄວາມຄິດຂອງເຈົ້າກ່ຽວກັບວິທີສອນບົດຮຽນ. ຍິ່ງໄປກວ່ານັ້ນ, ສຳລັບບາງເກມ, ເຈົ້າອາດຈະຕ້ອງກຽມສິ່ງຂອງໄວ້ລ່ວງໜ້າກ່ອນເລີ່ມບົດຮຽນ. ຄູຫຼາຍມອບສ່ວນໜຶ່ງຂອງປຶ້ມບັນທຶກຕາມທີ່ໄດ້ອະທິບາຍໄວ້ໃນພາກທຳອິດຂອງການກະກຽມດັ່ງກ່າວ.

ຈົ່ງຈື່ໄວ້ວ່າ, ໃນຂະນະທີ່ເຈົ້າຖືເອົາປຶ້ມຫົວນີ້ ແລະ ປຶ້ມບັນທຶກຂອງເຈົ້າໄປຊັ້ນຮຽນກັບເຈົ້າຢ່າງແນ່ນອນ, ເຈົ້າບໍ່ຕ້ອງການອ່ານແບບລຽບງ່າຍຈາກປຶ້ມ. ໃນຂະໜາດທີ່ວ່າເຈົ້າສາມາດນຳສະເໜີໄດ້ຢ່າງງ່າຍດາຍ ແລະ ຄວາມກະຕືລືລົ້ນ ນັກຮຽນຂອງເຈົ້າຈະສາມາດມີສ່ວນຮ່ວມກັບກິດຈະກຳໄດ້. ສະນັ້ນການເຝິກຝົນ ແລະ ການກະກຽມຈຶ່ງເປັນສິ່ງຈຳເປັນ.

ຕອນທີ 6

ສຳລັບບົດຮຽນທີ 5 ຫາ 8, ແມ່ນແນະນຳໃຫ້ເຈົ້າສວດບົດອະທິຖານດັ່ງຕໍ່ໄປນີ້ຈາກຄວາມຊົງຈຳ ເພື່ອເລີ່ມຊັ້ນຮຽນແຕ່ລະໄລຍະ:

**"ໂອ ພຣະຜູ້ເປັນນາຍຜູ້ຊົງເມດຕາ! ເດັກໜ້າຮັກເລົ່ານີ້ຄືງານຝີມືຂອງດັດສະນີແຫ່ງອຳນາດ ແລະ ຄືເຄື່ອງໝາຍອັນໜ້າພິດສະຫວົງ ຂອງຄວາມຍິ່ງໃຫຍ່ຂອງພຣະອົງ. ໂອ ພຣະຜູ້ເປັນເຈົ້າ! ຂໍຊົງຄຸ້ມຄອງເດັກເລົ່ານີ້ ຂໍຊົງຊ່ວຍໃຫ້ພວກເຂົາໄດ້ຮັບການອົບຮົມ ແລະ ໃຫ້ພວກເຂົາສາມາດຮັບໃຊ້ໂລກຂອງມະນຸດຊາດ. ໂອ ພຣະຜູ້ເປັນເຈົ້າ! ເດັກເລົ່ານີ້ຄືໄຂ່ມຸກ, ຂໍຊົງໃຫ້ພວກເຂົາໄດ້ຮັບການບຳລຸງລ້ຽງພາຍໃນເປືອກຫອຍ ແຫ່ງຄວາມເມດຕາຮັກແພງຂອງພຣະອົງ.**

**"ພຣະອົງຄືພຣະຜູ້ຊົງອາລີ ພຣະຜູ້ຊົງປ່ຽມໄປດ້ວຍຄວາມຮັກ."[14]**

ເຈົ້າອາດຕ້ອງການໃຊ້ເວລາໄລຍະໜຶ່ງໃນທົບທວນຖ້ອຍຄຳເລົ່ານີ້ ຕາມຄວາມພະຍາຍາມໃນການສອນຂອງເຈົ້າ. ຖ້ອຍຄຳເລົ່ານີ້ຈະມີອິດທິພົນ ຕໍ່ວິທີທີ່ເຈົ້າເຂົ້າເຖິງແຕ່ລະໄລຍະຂອງຊັ້ນຮຽນຄືແນວໃດ? ຖ້ອຍຄຳເລົ່ານີ້ຈະເສີມສ້າງຄວາມຮັກຂອງພຣະຜູ້ເປັນເຈົ້າ ໃນຫົວໃຈທີ່ອ່ອນໂຍນຂອງເດັກນ້ອຍຄືແນວໃດ?

________________________________________________

________________________________________________

________________________________________________

________________________________________________

________________________________________________

ໃນບົດຮຽນເລົ່ານີ້ ເຈົ້າຈະຊ່ວຍໃຫ້ນັກຮຽນຂອງເຈົ້າຈື່ຈຳບົດອະທິຖານຂ້າງລຸ່ມ, ດັ່ງທີ່ເຈົ້າຮູ້, ພວກເຂົາຈະພົບວ່າການຈື່ຈຳຈະງ່າຍຂຶ້ນ ຖ້າຫາກພວກເຂົາເຂົ້າໃຈຄວາມໝາຍອັນສຳຄັນຂອງບົດອະທິຖານ. ເຈົ້າສາມາດຂຽນຄວາມຄິດເຫັນຂອງເຈົ້າກ່ຽວກັບສິ່ງນີ້ໃສ່ບ່ອນວ່າງທີ່ໃຫ້ມາ. ເຈົ້າຄິດວ່າຄຳສັບໃດທີ່ພວກເຂົາອາດພົບວ່າເປັນຄຳສັບໃໝ່ ຫຼື ຄຳສັບທີ່ບໍ່ຄຸ້ນເຄີຍ, ແລະ ເຈົ້າຈະອະທິບາຍພວກເຂົາຜ່ານສະຖານະການໃດ ທີ່ເດັກນ້ອຍສາມາດແຍກແຍະໄດ້ງ່າຍ? ນອກເໜືອຈາກຄຳສັບດັ່ງກ່າວ, ເຈົ້າອາດຈະຕ້ອງຊ່ວຍພວກເຂົາເຂົ້າໃຈວ່າ ໂຄມໄຟອັນໜຶ່ງ ແລະ ດາວດວງໜຶ່ງ ທັງສອງໃຫ້ແສງສະຫວ່າງ, ແລະຖ້າວ່າບໍ່ມີແສງສະຫວ່າງ, ຈະມີຄວາມມືດມົວ, ແລະ ພວກເຮົາບໍ່ສາມາດມອງເຫັນ ແລະ ສາມາດຫຼົງທາງ. ສະນັ້ນ ໃນບົດອະທິຖານ, ພວກເຮົາຂໍໃຫ້ພຣະຜູ້ເປັນເຈົ້າສາດແສງດ້ວຍແສງ

ສະຫວ່າງທາງຈິດວິນຍານ, ແລະ ພວກເຮົາຂໍເປັນພະຍານເຖິງພະລັງ ແລະ ອຳນາດຂອງພຣະອົງທີ່ຈະເຮັດຕາມທີ່ພຣະອົງປາດຖະໜາ.

**"ໂອ ພຣະຜູ້ເປັນເຈົ້າ, ຂໍຊົງນຳທາງແກ່ຂ້າພະອົງ, ຂໍຊົງຄຸ້ມຄອງຂ້າພະອົງ, ຂໍຊົງບັນດານໃຫ້ຂ້າພະອົງ ເປັນຕາກຽງທີ່ສະຫວ່າງສະໄຫວ ແລະ ດວງດາວທີ່ສົດໃສ. ພຣະອົງຄືພຣະຜູ້ຊົງອານຸພາບ ຊົງພະລານຸພາບ."**[15]

______________________________________________

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 7

ຕອນນີ້ຂໍໃຫ້ອ່ານຜ່ານບົດທີ 5 ຫາ 8, ເທື່ອລະບົດ, ຈົ່ງເອົາໃຈໃສ່ເປັນພິເສດຕໍ່ແນວຄິດເບື້ອງຕົ້ນທີ່ເຈົ້າຈະແບ່ງປັນກັບນັກຮຽນ ແລະ ພຣະວັດຈະນະໃຫ້ຢູ່ໃນຄວາມຊົງຈຳຂອງພວກເຂົາ. ຂໍໃຫ້ລະບຸ ຄຸນລັກສະນະທາງຈິດວິນຍານ ທີ່ໄດ້ປຶກສາໃນແຕ່ລະບົດຮຽນໃສ່ຂ້າງລຸ່ມ:

ບົດທີ 5: ______________________________________

ບົດທີ 6: ______________________________________

ບົດທີ 7: ______________________________________

ບົດທີ 8: ______________________________________

ຂ້າງລຸ່ມນີ້ແມ່ນພຣະວັດຈະນະບາງສ່ວນຈາກຄຳສອນ ທີ່ໃຫ້ຄວາມຢັ່ງຮູ້ກ່ຽວກັບສີ່ຄຸນລັກສະນະນີ້. ຂໍໃຫ້ໄຕ່ຕອງແຕ່ລະຊຸດ ຕາມທີ່ເຈົ້າເຄີຍເຮັດມາກ່ອນ ແລະ ຂຽນແນວຄວາມຄິດບາງຢ່າງຂອງເຈົ້າລົງໃນບ່ອນວ່າງທີ່ສະໜອງໃຫ້.

ກ່ຽວກັບຄຸນລັກສະນະຂອງຄວາມເອື້ອເຟື້ອ. ຂໍໃຫ້ພວກເຮົາອ່ານ:

**"ຈົ່ງເອື້ອເຟື້ອໃນວັນທີເຫຼືອເຟືອຂອງເຈົ້າ, ແລະ ຈົ່ງອົດທົນໃນຊົ່ວໂມງຂອງການສູນເສຍ."**[16]

“ການເລີ່ມຕົ້ນຂອງຄວາມເອື້ອເຟື້ອ ແມ່ນເມື່ອມະນຸດໃຊ້ຄວາມຮັ່ງມີຂອງພວກເຂົາເພື່ອຕົວເອງ, ເພື່ອຄອບຄົວຂອງພວກເຂົາ ແລະ ເພື່ອຄົນທຸກຍາກໃນບັນດາພີ່ນ້ອງຂອງເຂົາດ້ວຍຄວາມສັດທາ.”[17]

“ຍິ່ງພວກເຂົາພົບກັບການເປັນປໍລະປັກກັນຫຼາຍເທົ່າໃດ, ພວກເຂົາກໍ່ສະແດງຄວາມສັດທາທີ່ດີຂອງຕົນເອງຫຼາຍຂຶ້ນເທົ່ານັ້ນ; ຍິ່ງພວກເຂົາປະເຊີນກັບຄວາມທຸກທໍລະມານ ແລະ ໄພພິບັດຫຼາຍເທົ່າໃດ, ພວກເຂົາກໍຍິ່ງມອບຈອກແຫ່ງຄວາມໂອບອ້ອມອາລີຢ່າງເອື້ອເຟື້ອ. ນັ້ນເປັນຈິດໃຈທີ່ຈະກາຍເປັນຊີວິດຂອງໂລກ, ນັ້ນເປັນແສງສະຫວ່າງທີ່ສ່ອງເຂົ້າໄປໃນຫົວໃຈຂອງຈິດໃຈ…”[18]

“ຈົ່ງເປັນຄົນນ້ຳພຸແຫ່ງຄວາມເອື້ອເຟື້ອ, ການເລີ່ມຕົ້ນຂອງຄວາມລຶກລັບຂອງການດຳລົງຢູ່, ສະຖານທີທີ່ແຮງບັນດານໃຈສະຫວ່າງສະໄຫວ, ສະຖານທີ່ອັນຮຸ່ງເຮືອງ, ວິນຍານທີ່ໄດ້ຮັບການຄ້ຳຈຸນໂດຍພຣະວິນຍານອັນສັກສິດ, ຫຼົງໄຫຼໃນພຣະອົງ, ປ່ອຍວາງຈາກທຸກສິ່ງນອກຈາກພຣະອົງ, ຄຸນລັກສະນະອັນສັກສິດເໜືອມະນຸດ, ສວມຄຸນລັກສະນະຂອງບັນດາເທບຂອງສະຫວັນ, ເພື່ອວ່າເຈົ້າຈະໄດ້ຮັບບຸນກຸສົນອັນສູງສຸດຂອງສິ່ງທັງປວງສຳລັບຕົວເຈົ້າເອງ, ໃນຍຸກໃໝ່ອັນມະຫັດສະຈັນນີ້.”[19]

ກ່ຽວກັບຄວາມບໍ່ເຫັນແກ່ຕົວ, ພວກເຮົາຖືກເຕືອນວ່າ:

“… ເຈົ້າຕ້ອງມີຄວາມຮັກທີ່ບໍ່ມີທີ່ສິ້ນສຸດຕໍ່ກັນ, ແຕ່ລະຄົນເລືອກຄົນອື່ນກ່ອນຕົນເອງ.”[20]

“ພຣະຜູ້ເປັນເຈົ້າ! ຂໍໃຫ້ຂ້າພະເຈົ້າດື່ມຈາກຈອກຂອງຄວາມບໍ່ເຫັນແກ່ຕົວ; ດ້ວຍການສວມໃສ່ອາພອນຂອງຄວາມບໍ່ເຫັນແກ່ຕົວແກ່ຂ້າພະເຈົ້າ, ແລະ ດຳດິ່ງຂ້າພະເຈົ້າໃນມະຫາສະໝຸດຂອງຄວາມບໍ່ເຫັນແກ່ຕົວ. ຂໍຊົງເຮັດໃຫ້ຂ້າພະເຈົ້າເປັນຄືຜົງທຸລີ ໃນຫົນທາງຂອງຜູ້ເປັນທີ່ຮັກຂອງ ພຣະອົງ, ແລະ ຍອມຖະຫວາຍຈິດວິນຍານຂອງຂ້າພະເຈົ້າ ເພື່ອໃຫ້ໂລກເລີນຂຶ້ນດ້ວຍຮອຍພຣະບາດຂອງພຣະອົງ ພຣະຜູ້ຊົງເລືອກສັນຕາມຫົນທາງຂອງພຣະອົງ, ໂອ ພຣະຜູ້ເປັນເຈົ້າ ພຣະຜູ້ຊົງຄວາມຮຸ່ງເຮືອງສູງສຸດ.”[21]

"ມະນຸດແມ່ນຜູ້ທີ່ລືມຄວາມສົນໃຈຂອງພວກເຂົາ ເພື່ອຜົນປະໂຫຍດຂອງຄົນອື່ນ. ເຂົາສູນເສຍຄວາມສະດວກສະບາຍຂອງຕົນເອງ ເພື່ອຄວາມເປັນຢູ່ທີ່ດີຂອງທຸກໆ. ບໍ່ພຽງເທົ່ານັ້ນ ຢ່າງໃດກໍຕາມ, ເຂົາຕ້ອງເຕັມໃຈສະຫຼະຊີວິດຂອງເຂົາເອງເພື່ອຊີວິດຂອງມະນຸດຊາດ. ມະນຸດເຊັ່ນນີ້ເປັນກຽດແກ່ໂລກຂອງມະນຸດຊາດ. ມະນຸດເຊັ່ນນີ້ເປັນຄວາມຮຸ່ງເຮືອງແກ່ໂລກຂອງມະນຸດ. ມະນຸດເຊັ່ນນີ້ເປັນຜູ້ໄດ້ຮັບຄວາມສຸກນິລັນດອນ. ມະນຸດເຊັ່ນນີ້ແມ່ນຢູ່ໃກ້ທໍລະນີປະຕູຂອງພຣະຜູ້ເປັນເຈົ້າ. ມະນຸດເຊັ່ນນີ້ປາກົດຄວາມສຸກນິລັນດອນ."[22]

ໃນບັນດາພຣະວັດຈະນະຕໍ່ໄປນີ້, ພວກເຮົາໄດ້ພົບປະກາຍທີ່ມີພະລັງແຫ່ງຄວາມສຸກຫັນສາ:

"ຈົ່ງບິນຂຶ້ນໄປດ້ວຍປີກແຫ່ງຄວາມສຸກ ໃນບັນຍາກາດແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ."[23]

"ຄວາມສຸກທັງຫມົດ ທີ່ໄດ້ເຂົ້າເຖິງທີ່ປະທັບຂອງພຣະອົງ, ຈ້ອງເບິ່ງຄວາມງາມຂອງພຣະອົງ, ຕັ້ງໃຈຟັງທຳນອງຂອງພຣະອົງ, ແລະ ໄດ້ຖືກກະຕຸ້ນໂດຍຖ້ອຍຄຳທີ່ອອກມາຈາກພຣະໂອດອັນສັກສິດ ແລະ ສູງສົ່ງຂອງພຣະອົງ, ພຣະໂອດອັນຮຸ່ງເຮືອງ ແລະ ສະຫວ່າງສະໄຫວຂອງພຣະອົງ!"[24]

"ຄວາມສຸກເຮັດໃຫ້ພວກເຮົາມີປີກ! ໃນຊ່ວງເວລາແຫ່ງຄວາມສຸກ ພາລະກຳລັງຂອງພວກເຮົາແມ່ນສຳຄັນຍິ່ງຂຶ້ນ, ສະຕິປັນຍາຂອງພວກເຮົາຫຼັກແຫຼມຫຼາຍຂຶ້ນ ແລະ ຄວາມເຂົ້າໃຈຂອງພວກເຮົາແມ່ນມືດມົວໜ້ອຍລົງ."[25]

"ເທົ່າທີ່ເຮົາສາມາດກະທຳໄດ້, ຈົ່ງໃຕ້ທຽນແຫ່ງຄວາມຮັກໃນທຸກໆການພົບປະ, ແລະ ດ້ວຍຄວາມອ່ອນໂຍນ ຈົ່ງຊື່ນຊົມ ແລະ ປິຕິຍິນດີກັບທຸກຫົວໃຈ."[26]

ຂໍ້ຄວາມຂ້າງລຸ່ມນີ້ ບອກພວກເຮົາກ່ຽວກັບຄວາມຈິງໃຈ:

"ຈົ່ງກ່າວວ່າ: ວິນຍານທີ່ຈິງໃຈປາດຖະໜາທີ່ຈະເຂົ້າໃກ້ທີ່ສຸດກັບພຣະຜູ້ເປັນເຈົ້າ ແມ່ນແຕ່ແອນ້ອຍທີ່ກຳລັງດູດນົມແມ່ຂອງລາວ, ຄວາມກະຕືລືລົ້ນຫຼາຍຂຶ້ນນັ້ນແມ່ນຄວາມປາດຖະໜາຂອງເຂົາ, ຈົ່ງຮູ້ໄວ້ເຖີດ! ອີກຢ່າງໜຶ່ງ, ຄວາມປາດຖະໜາຂອງເຂົາປຽບໄດ້ກັບການເມື່ອຍຫອບຂອງຜູ້ທີ່ຫິວນໍ້າ ຫຼັງຈາກນໍ້າແຫ່ງກະລຸນາທິຄຸນ, ຫຼື ຄວາມກະຕືລືລົ້ນຂອງຄົນບາບ ໃນການໃຫ້ອະໄພ ແລະ ຄວາມເມດຕາ."[27]

"ໃນທຸກວັນນີ້, ວາຈາສັດຊື່ ແລະ ຄວາມຈິງໃຈ ຖືກກົດຂີ່ຢ່າງໜັກໃນກຳເງື້ອມມືຂອງຄວາມບໍ່ຊື່ສັດ, ແລະ ຄວາມຍຸຕິທຳຖືກທໍລະມານ ໂດຍຄວາມຫາຍຍະນະຂອງຄວາມອະຍຸຕິທຳ."[28]

"ຈຳເປັນທີ່ທຸກຄົນຕ້ອງຂ້າມຜ່ານຊ່ວງເວລາສັ້ນໆຂອງຊີວິດນີ້ ດ້ວຍຄວາມຈິງໃຈ ແລະ ຄວາມຍຸຕິທຳ."[29]

"ຫົວໃຈຂອງພວກເຈົ້າຕ້ອງບໍລິສຸດ ແລະ ເຈດຕະນາຂອງພວກເຈົ້າຈິງໃຈ ເພື່ອວ່າເຈົ້າອາດຈະໄດ້ເປັນຜູ້ຮັບລາງວັນອັນສັກສິດ."[30]

________________________________________

________________________________________

________________________________________

________________________________________

________________________________________

ໃຫ້ທ່ອງຈຳຢ່າງໜ້ອຍໜຶ່ງຂໍ້ຄວາມຈາກແຕ່ລະຊຸດຂ້າງເທິງ.

## ຕອນທີ 8

ຕອນນີ້ໃຫ້ພວກເຮົາເບິ່ງໄປເລື່ອງລາວຂອງບົດທີ 5 ເຖິງ 8 ແລະ ຄິດວ່າເລື່ອງລາວເລົ່ານີ້ຈະຊ່ວຍໃຫ້ເດັກນ້ອຍ ໄດ້ຮັບຄວາມຢັ່ງຮູ້ເຖິງຄຸນລັກສະນະທາງຈິດວິນຍານ ທີ່ພວກເຂົາກຳລັງຄົ້ນຫາຄືແນວໃດ. ຫຼັງຈາກອ່ານຄືນແຕ່ລະເລື່ອງລາວ, ໃຫ້ພິຈາລະນາຄຳຖາມຂ້າງລຸ່ມນີ້.

ຄວາມເອື້ອເຟື້ອເພື່ອແຜ່ ແມ່ນຫົວຂໍ້ຫຼັກຂອງເລື່ອງລາວໃນບົດທີ 5, ເຊິ່ງອະທິບາຍເຫດການທີ່ເກີດຂຶ້ນໃນໄວເດັກຂອງ ພຣະອັບດຸລບາຮາ ກ່ຽວຂ້ອງກັບຝູງແກະຂອງບິດາຂອງພຣະອົງ. ສ່ວນໃດຂອງບົດເລື່ອງທີ່ກ່ຽວຂ້ອງກັບຫົວຂໍ້ຫຼັກ? ລາຍລະອຽດໃດແດ່ຫາກວ່າຕັດອອກແລ້ວ ຈະເຮັດໃຫ້

ເດັກນ້ອຍຕິດຕາມເລື່ອງໄດ້ຍາກ? ແນ່ນອນ ສິ່ງທີ່ສຳຄັນທີ່ສຸດແມ່ນຄວາມປິຕິຍິນດີທີ່ສະແດງອອກໂດຍ ພຣະບາຮາອຸລລາຫ໌ ເມື່ອຮຽນຮູ້ເຖິງຈິດໃຈຂອງຄວາມເອື້ອເຟື້ອເພື່ອແຜ່ຂອງລູກຊາຍຂອງພຣະອົງທີ່ມີຕໍ່ຄົນລ້ຽງແກະ. ຄຳກ່າວຂອງພຣະອົງຄາດການໄວ້ລ່ວງໜ້າວ່າ ພຣະອັບດຸລບາຮາ ຈະເຕີບໃຫຍ່ຂຶ້ນເພື່ອມອບທຸກຢ່າງທີ່ພຣະອົງມີ ເພື່ອປະໂຫຍດຂອງມະນຸດຊາດ, ບໍ່ພຽງແຕ່ຊັບສົມບັດທາງວັດຖຸເທົ່ານັ້ນ ແຕ່ຍັງລວມທັງການເປັນຢູ່ທັງໝົດຂອງພຣະອົງ. ເຈົ້າຈະແນ່ໃຈໄດ້ແນວໃດວ່າເດັກນ້ອຍຮັບຮູ້ເຖິງຄວາມເອື້ອເຟື້ອເພື່ອແຜ່ຂອງ ພຣະອັບດຸລບາຮາ, ເຊິ່ງບໍ່ມີຂີດຈຳກັດນີ້?

ເລື່ອງລາວໃນບົດທີ 6 ເຮັດໃຫ້ເດັກນ້ອຍເຫັນ ແນວທາງຂອງການບໍ່ເຫັນແກ່ຕົວ. ພຣະອັບດຸລບາຮາ ຊົງປະຕິເສດທີ່ຈະຮັບເອົາເສື້ອຄຸມລາຄາແພງ, ສະແດງວ່າພຣະອົງນຶກເຖິງຜູ້ອື່ນກ່ອນພຣະອົງເອງ. ເຈົ້າຈະໝັ້ນໃຈໄດ້ແນວໃດວ່າເດັກນ້ອຍຈະເຂົ້າໃຈຂໍ້ສະຫຼຸບນີ້ ຈາກການເລົ່າເລື່ອງຂອງເຈົ້າ? ມີລາຍລະອຽດໃດແດ່ທີ່ຄວນກະຈ່າງແຈ້ງໃນໃຈຂອງເຈົ້າ ກ່ອນທີ່ເຈົ້າຈະເລົ່າເລື່ອງ?

ຫົວຂໍ້ຫຼັກຂອງບົດທີ 7 ແມ່ນຄວາມສຸກຫັນສາ, ແລະ ເຈົ້າຈະເລົ່າເລື່ອງກ່ຽວກັບ ລົຣອຍ ໄອໄອອັສ, ຜູ້ເປັນເດັກໜຸ່ມນ້ອຍໄດ້ພົບກັບ ພຣະອັບດຸລບາຮາ ແລະ ເປັນຜູ້ທີ່ອຸທິດຊີວິດຂອງຕົນເພື່ອສົ່ງເສີມການເປີດເຜີຍພຣະທັມຂອງພຣະຜູ້ເປັນເຈົ້າ. ໃນເລື່ອງລາວ, ລົຣອຍ ຕັດສິນໃຈທີ່ຈະບໍ່ເອົາຊໍ່ດອກໄມ້ໃຫ້ ພຣະອັບດຸລບາຮາ ເຊິ່ງເປັນຊໍ່ດອກໄມ້ທີ່ເຂົາໄດ້ຊື້ມາໃຫ້ແກ່ພຣະອົງ; ລາວຕ້ອງການຖະຫວາຍຫົວໃຈຂອງລາວແທນ. ເພື່ອໃຫ້ເດັກນ້ອຍເຂົ້າໃຈວ່າເປັນຫຍັງ ລົຣອຍ ຈຶ່ງເຮັດແນວນັ້ນ, ເປັນສິ່ງສຳຄັນສຳລັບເຈົ້າທີ່ຈະຕ້ອງເຂົ້າໃຈກ່ອນວ່າ ຫົວໃຈຂອງມະນຸດມີຄ່າຫຼາຍກວ່າວັດຖຸສິ່ງຂອງໃດໆ. ຈະເປັນການພຽງພໍບໍທີ່ເຈົ້າຈະເນັ້ນສຽງຂອງເຈົ້າ ເມື່ອເລົ່າເລື່ອງສ່ວນນີ້ຂອງເລື່ອງລາວ? ຈະຕ້ອງເນັ້ນລາຍລະໃດແດ່ ໃນການເລົ່າເລື່ອງຂອງເຈົ້າ, ຖ້າຫາກເດັກນ້ອຍຕິດຕາມລຳດັບຂອງແນວຄວາມຄິດ ແລະ ຮັບຮູ້ວ່າເປັນຫຍັງທ່າທາງຂອງ ພຣະອັບດຸລບາຮາ ທີ່ມີຕໍ່ ລົຣອຍ ດ້ວຍການມອບດອກກຸຫຼາບສີແດງ ຈາກເສື້ອຄຸມຂອງພຣະອົງ ຈຶ່ງເຮັດໃຫ້ເດັກຊາຍຄົນນີ້ມີຄວາມສຸກຫັນສາ?

ຕະຫຼອດຊີວິດຂອງພຣະອົງ, ພຣະອັບດຸລບາຮາ ໄດ້ນຳຄວາມສຸກມາໃຫ້ທຸກຄົນທີ່ມາເຂົ້າເຝົ້າພຣະອົງ. ໃນເລື່ອງນີ້, ພວກເຮົາສາມາດເຫັນໄດ້ວ່າ ລີຣອຍ ບໍ່ຕ້ອງການຫຍັງຫຼາຍໄປກວ່າການເຮັດໃຫ້ພະໄທຂອງ ພຣະອັບດຸລບາຮາ ປີຕິຍິນດີ. ເປັນຫຍັງຈຶ່ງຈຳເປັນໃຫ້ເດັກນ້ອຍເຂົ້າໃຈວ່າ ໜຶ່ງໃນແຫຼ່ງທີ່ມາຂອງຄວາມສຸກທີ່ຍິ່ງໃຫຍ່ທີ່ສຸດ ຄືການເຮັດໃຫ້ຜູ້ອື່ນມີຄວາມສຸກ?

ຄວາມຈິງໃຈແມ່ນສິ່ງທີ່ເນັ້ນໜັກຂອງບົດທີ 8, ແລະ ໃນການແນະນຳເລື່ອງລາວໃຫ້ເດັກນ້ອຍ, ເຈົ້າອາດຈະຕ້ອງອະທິບາຍວ່າ ບາງຄັ້ງພວກເຮົາສາມາດເຂົ້າໃຈຄວາມຈິງໃຈໝາຍເຖິງຫຍັງໄດ້ດີກວ່າດ້ວຍການຄວບຄຸມຄຸນນະພາບຂອງການຟັງເລື່ອງ ທີ່ສະແດງໃຫ້ເຫັນເມື່ອຄວາມຈິງໃຈຂາດຫາຍໄປ. ເລື່ອງລາວຂອງຜູ້ຊາຍທີ່ຊັກຊວນເພື່ອນບ້ານຂອງເຂົາໃຫ້ຕັດຕົ້ນໄມ້ຂອງລາວ ກໍເປັນຕົວຢ່າງໜຶ່ງ. ເຈົ້າຈະຊ່ວຍໃຫ້ເດັກນ້ອຍເຂົ້າໃຈຄວາມໝາຍໄດ້ແນວໃດ ວ່າບາງຄັ້ງການສະແດງອອກກໍອາດສາມາດຫຼອກລວງໄດ້? ໃນການເລົ່າເລື່ອງ, ເຈົ້າຈະຕ້ອງເຮັດໃຫ້ແນ່ໃຈວ່າ ເດັກນ້ອຍຈະຄິດຕ່າງອອກໄປວ່າເພື່ອນບ້ານຜູ້ທີ່ບໍ່ຈິງໃຈໄດ້ຮັບລາງວັນ. ເຈົ້າຈະບອກຫຍັງກັບເດັກນ້ອຍ ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈຜົນເສຍຂອງຄວາມບໍ່ຈິງໃຈ?

**ຕອນທີ 9**

ຕອນນີ້ເຈົ້າໄດ້ຮັບຄວາມຢັ້ງຮູ້ບາງຢ່າງກ່ຽວກັບຄຸນລັກສະນະທາງຈິດວິນຍານ ທີ່ປຶກສາຫາລືກັນ ໃນບົດທີ 5 ເຖິງ 8, ເຈົ້າຄວນຢຸດໄລຍະໜຶ່ງເພື່ອສືບຕໍ່ເຝິກສອນບົດຮຽນເຫຼົ່ານີ້ ແລະ ອົງປະກອບຕ່າງໆຂອງບົດຮຽນກັບຜູ້ເຂົ້າຮ່ວມຮຽນຂອງເຈົ້າ, ເໝືອນກັນກັບທີ່ເຈົ້າໄດ້ປະຕິບັດກັບສີ່ບົດທຳອິດ. ຈົ່ງຈື່ໄວ້ວ່າໃນປຶ້ມບັນທຶກຂອງເຈົ້າ, ເຈົ້າສາມາດຂຽນຈຸດເດັ່ນໃດໜຶ່ງກ່ຽວກັບແຕ່ລະບົດຮຽນ ທີ່ເຈົ້າຕ້ອງການຂຽນເກັບໄວ້ ແລະ ບັນທຶກແນວຄວາມຄິດຕ່າງໆຂອງເຈົ້າກ່ຽວກັບວິທີການສອນຂອງບົດຮຽນ.

ຕອນທີ 10

ຂໍແນະນຳວ່າສຳລັບບົດທີ 9 ຫາ 12, ເຈົ້າເລີ່ມແຕ່ລະຊັ້ນຮຽນໂດຍການອ່ານບົດອະທິຖານຕໍ່ໄປນີ້, ເຊິ່ງເຈົ້າຖືກຊຸກຍູ້ໃຫ້ຈື່ຈຳ:

> "ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂໍໃຫ້ຄວາມງາມຂອງພຣະອົງຄືອາຫານຂອງຂ້າພະອົງ, ແລະ ການດຳລົງຢູ່ຂອງພຣະອົງຄືເຄື່ອງດື່ມຂອງຂ້າພະອົງ, ແລະ ຄວາມຍິນດີຂອງພຣະອົງຄືຄວາມຫວັງຂອງຂ້າພະອົງ, ແລະຄວາມສັນລະເສີນຂອງພຣະອົງຄືການກະທຳຂອງຂ້າພະອົງ, ແລະ ການລະລຶກເຖິງພຣະອົງຄືສະຫາຍຂອງຂ້າພະອົງ, ແລະ ອຳນາດອະທິປະໄຕຂອງພຣະອົງຄືຜູ້ຊ່ວຍເຫຼືອຂອງຂ້າພະອົງ, ແລະ ທີ່ພັກຂອງພຣະອົງຄືບ້ານຂອງຂ້າພະອົງ, ແລະ ທີ່ປະທັບຂອງພຣະອົງ ໄດ້ຊຳລະໃຫ້ບໍລິສຸດຈາກຂໍ້ຈຳກັດທີ່ໄດ້ກຳໜົດໃຫ້ພວກເຂົາ ຜູ້ທີ່ຖືກປິດກັ້ນຈາກພຣະອົງດ້ວຍມ່ານກັ້ນ.

> "ແທ້ຈິງແລ້ວ, ພຣະອົງຄືພຣະຜູ້ຊົງອານຸພາບ, ພຣະຜູ້ຊົງຄວາມຮຸ່ງເຮືອງທັງໝົດ, ພຣະຜູ້ຊົງອຳນາດທີ່ສຸດ."[31]

ໃນສີ່ບົດຮຽນນີ້ ເຈົ້າຈະຊ່ວຍນັກຮຽນຈື່ຈຳບົດອະທິຖານຂ້າງລຸ່ມນີ້. ຄຳສັບຫຼືປະໂຫຍກໃດທີ່ເຈົ້າຕ້ອງການອະທິບາຍ ໃຫ້ເດັກນ້ອຍເຂົ້າໃຈຄວາມໝາຍອັນຄັນຂອງການອະທິຖານ?

> "ພຣະພອນຂອງພຣະຜູ້ເປັນເຈົ້າ, ຢູ່ໃນເຮືອນ, ແລະ ທຸກແຫ່ງ, ໃນບ້ານເມືອງ, ໃນດວງໃຈ ແລະ ເທິງພູເຂົາ, ໃນທີ່ພັກ ແລະ ໃນຖ້ຳ, ໃນຮ່ອມພູ ແລະ ພື້ນດິນ, ໃນທະເລ, ເທິງເກາະດອນ ແລະ ໃນທົ່ງຫຍ້າ. ບ່ອນທີ່ມີຜູ້ກ່າວເຖິງ ພຣະນາມຂອງພຣະຜູ້ເປັນເຈົ້າ ແລະ ສັນລະເສີນພຣະກຽດຕິຄຸນຂອງພຣະອົງ."[32]

________________________________________

________________________________________

________________________________________

________________________________________

________________________________________

ຕອນທີ 11

ດັ່ງທີ່ເຈົ້າໄດ້ປະຕິບັດຜ່ານມາ, ຂໍໃຫ້ອ່ານຜ່ານບົດທີ 9 ຫາ 12, ໃຫ້ເອົາໃຈໃສ່ເປັນພິເສດກັບຕໍ່ຄຳແນະນຳເບື້ອງຕົ້ນ ແລະ ພຣະວັດຈະນະສຳລັບການທ່ອງຈຳ. ໃຫ້ລະບຸຄຸນລັກສະນະທາງຈິດວິນຍານຂອງແຕ່ລະບົດຮຽນໃສ່ຂ້າງລຸ່ມ.

ບົດທີ 9: ______________________________

ບົດທີ 10: ______________________________

ບົດທີ 11: ______________________________

ບົດທີ 12: ______________________________

ເພື່ອໃຫ້ຄວາມເຂົ້າໃຈຂອງເຈົ້າເລິກເຊິ່ງ ກ່ຽວກັບຄວາມໝາຍສຳຄັນຂອງສີ່ຄຸນລັກສະນະຂ້າງເທິງນີ້, ຂໍໃຫ້ທົບທວນການເລືອກພຣະວັດຈະນະທີ່ກ່ຽວຂ້ອງກັບແຕ່ລະຄຸນລັກສະນະ. ໃນຂະນະທີ່ເຈົ້າເລືອກ, ຈົ່ງຈື່ໄວ້ວ່າຂໍ້ຄວາມທີ່ເລືອກນັ້ນຈະໃຫ້ນັກຮຽນຂອງເຈົ້າທ່ອງຈຳໃຫ້ຂຶ້ນໃຈ. ຫຼັງຈາກນັ້ນ ຂຽນຄວາມຄິດຂອງເຈົ້າ ກ່ຽວກັບຄວາມສຳຄັນຂອງຄຸນລັກສະນະໃນຊີວິດຂອງບຸກຄົນ ແລະ ສຳລັບຄູສອນເດັກນ້ອຍ.

ກ່ຽວກັບຄຸນລັກສະນະຂອງຄວາມອ່ອນນ້ອມ, ຖ້ອຍຄຳເລົ່ານີ້ບອກພວກເຮົາວ່າ:

**"ຄວາມອ່ອນນ້ອມ ຍົກມະນຸດໄປສູ່ສະຫວັນອັນຮຸ່ງເຮືອງ ແລະ ອຳນາດ, ໃນຂະນະທີ່ຄວາມຍິ່ງທະນົງ ຫຼຸດເຂົາລົງຈົນເຖິງສ່ວນເລິກຂອງຄວາມໜ້າສົມເພດ ແລະ ຄວາມເຊື່ອມໂຊມ."[33]**

**"ທຸກວິນຍານທີ່ດຳເນີນຊີວິດຢ່າງຖ່ອມຕົນ ຕາມພຣະຜູ້ເປັນເຈົ້າຂອງວິນຍານ, ໃນປັດຈຸບັນ ແລະ ເຂົ້າໄປໃກ້ຈົນເຖິງພຣະອົງ, ຈະພົບວ່າຕົນໄດ້ຮັບກຽດ ແລະ ຄວາມຮຸ່ງເຮືອງຂອງພຣະນາມ ແລະ ສະຖານະອັນດີງາມທັງໝົດ."[34]**

**"ພວກເຂົາຄືຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ, ບໍ່ວ່າພວກເຂົາຈະໄປຮວມຕົວກັນຢູ່ແຫ່ງໃດ ແລະ ພົບປະໃຜກໍຕາມ, ຕ້ອງພິສູດດ້ວຍທັດສະນະຄະຕິທີ່ມີຕໍ່ພຣະຜູ້ເປັນເຈົ້າ, ແລະ ໃນລັກສະນະຂອງການຍ້ອງຍໍສັນລະເສີນ ແລະ ຄວາມຮຸ່ງເຮືອງຂອງພຣະອົງ, ຄວາມອ່ອນນ້ອມ ແລະ ຄວາມຖ່ອມຕົນ ຈົນທຸກລະອອງທຸລີໃຕ້ຝາຕີນຂອງພວກເຂົາ ຈະຢັ້ງຢືນຄວາມເລິກເຊິ່ງຂອງຄວາມຈົງຮັກພັກດີຂອງພວກເຂົາ."[35]**

"ແນ່ນອນວ່າຄວາມໂດດເດັ່ນຂອງຂອງມະນຸດທີ່ສູງສົ່ງທີ່ສຸດ ແມ່ນຕົກຕ່ຳມາກ່ອນ ແລະ ເຊື່ອຟັງພຣະຜູ້ເປັນເຈົ້າຂອງເຂົາ ..."[36]

________________________________________

________________________________________

________________________________________

________________________________________

________________________________________

ພວກເຮົາອ່ານ ກ່ຽວກັບຄວາມສຳຄັນຂອງຄວາມຂອບໃຈ:

"ຈົ່ງຮູ້ໄວ້ເຖີດວ່າ, ເຮົາພຣະອົງໄດ້ສົ່ງກິ່ນຫອມແຫ່ງຄວາມສັກສິດທັງໝົດໄປຫາພວກເຈົ້າແລ້ວ, ໄດ້ເປີດເຜີຍຖ້ອຍຄຳຂອງເຮົາພຣະອົງແກ່ພວກເຈົ້າຢ່າງສົມບູນ, ໄດ້ເຮັດໃຫ້ພວກເຈົ້າສົມບູນແບບດ້ວຍພຣະກະລຸນາຂອງເຮົາພຣະອົງ ແລະ ໄດ້ມີພຣະປະສົງແກ່ພວກເຈົ້າຕາມທີ່ເຮົາພຣະອົງປາດຖະໜາຕໍ່ຕົນເອງ. ດັ່ງນັ້ນ ຈົ່ງພໍໃຈກັບຄວາມຍິນດີຂອງເຮົາພຣະອົງ ແລະ ຂອບໃຈຈົນໄປເຖິງເຮົາພຣະອົງ."[37]

"ຂໍໃຫ້ພຣະຜູ້ເປັນເຈົ້າຊົງພຽງພໍແກ່ຂ້າພະອົງ. ສື່ສານກັບຈິດໃຈຂອງພຣະອົງຢ່າງໃກ້ຊິດ, ແລະ ຈົ່ງເປັນຜູ້ທີ່ຂອບໃຈ."[38]

"ເພາະສະນັ້ນ, ຈົ່ງຂອບໃຈພຣະຜູ້ເປັນເຈົ້າ, ທີ່ເຮັດໃຫ້ເຈົ້າເຂັ້ມແຂງເພື່ອຊ່ວຍເຫຼືອຈຸດປະສົງຂອງພຣະອົງ, ການທີ່ຈະເຮັດໃຫ້ດອກໄມ້ແຫ່ງຄວາມຮູ້ ແລະ ຄວາມເຂົ້າໃຈເກີດຂຶ້ນໃນຫົວໃຈຂອງເຂົາ. ສະນັ້ນ, ພຣະກາລຸນາທິຄຸນຂອງພຣະອົງຈຶ່ງຫ້ອມລ້ອມພວກເຈົ້າ ແລະ ຄອບຄຸມສິ່ງສ້າງສັນທັງໝົດ."[39]

"ຄວາມຈິງກໍຄື ພຣະຜູ້ເປັນເຈົ້າໄດ້ປະທານຄຸນນະທຳຕ່າງໆ, ພາລະກຳລັງ ແລະ ປັນຍາອັນດີເລີດໃຫ້ແກ່ມະນຸດ ເຊິ່ງສັດກັບພືດຂາດທັງໝົດນີ້ໄປ ແລະ ມະນຸດກໍຖືກຍົກລະດັບຂຶ້ນ, ໃຫ້ໂດດເດັ່ນ ແລະ ສູງສົ່ງກວ່າ. ພວກເຮົາຕ້ອງຂອບໃຈພຣະຜູ້ເປັນເຈົ້າສຳລັບການປະທານສິ່ງເລົ່ານີ້, ສຳລັບພາລະກຳລັງທີ່ພຣະອົງປະທານໃຫ້ພວກເຮົາ, ສຳລັບມົງກຸດນີ້ທີ່ພຣະອົງຊົງວາງໄວ້ເທິງຫົວຂອງພວກເຮົາ."[40]

________________________________________

________________________________________

________________________________________

________________________________________

---

ພຣະວັດຈະນະຂ້າງລຸ່ມນີ້ ເວົ້າກັບພວກເຮົາກ່ຽວກັບການໃຫ້ອະໄພ:

"ເຂົາຄວນໃຫ້ອະໄພບາບ ແລະ ຢ່າດູໝິ່ນຖານະອັນຕ່ຳຕ້ອຍຂອງເຂົາ, ເພາະບໍ່ມີໃຜຮູ້ວ່າຈຸດຈົບຂອງເຂົາຈະເປັນແນວໃດ."[41]

"ແກ່ນແທ້ທີ່ຢູ່ພາຍໃນທຸກສິ່ງ ເປັນສຽງພະຍານຫຼັກຖານແກ່ທຸກສິ່ງ: 'ໃນປັດຈຸບັນ, ການໃຫ້ອະໄພທັງໝົດຫຼັ່ງໄຫຼມາຈາກພຣະຜູ້ເປັນເຈົ້າ, ບໍ່ມີຜູ້ໃດທຽບພຣະອົງໄດ້, ເຊິ່ງບໍ່ມີຜູ້ໃດສາມາດເຂົ້າຮ່ວມໄດ້, ພຣະຜູ້ຊົງເປັນຜູ້ປົກປ້ອງອະທິປະໄຕຂອງມະນຸດທັງປວງ ແລະ ເປັນຜູ້ປົກປິດບາບຂອງພວກເຂົາ!'"[42]

"ສະນັ້ນ ຈົ່ງຢ່າເບິ່ງແຕ່ຂໍ້ບົກຜ່ອງຂອງຜູ້ໃດ; ຈົ່ງເບິ່ງດ້ວຍສາຍຕາແຫ່ງການໃຫ້ອະໄພ. ດວງຕາທີ່ບໍ່ສົມບູນເບິ່ງເຫັນຄວາມບໍ່ສົມບູນ. ດວງຕາທີ່ປົກປິດຂໍ້ຜິດພາດ ຈະເບິ່ງໄປທີ່ພຣະຜູ້ສ້າງດວງວິນຍານ."[43]

"ຢ່າປ່ອຍໃຫ້ຫົວໃຈຂອງເຈົ້າບໍ່ພໍໃຈກັບຜູ້ໃດ. ຖ້າຜູ້ໃດຜູ້ໜຶ່ງເຮັດຜິດພາດ ແລະ ເຮັດຜິດຕໍ່ເຈົ້າ, ເຈົ້າຕ້ອງໃຫ້ອະໄພລາວໃນທັນທີ."[44]

---

---

---

---

---

ແລະ ຂໍ້ຄວາມທີ່ກັ່ນຕອງມານີ້ອະທິບາຍເຖິງມາດຕະຖານຂອງ ຄວາມຊື່ສັດ ທີ່ພວກເຮົາປາດຖະໜາ:

"ຈົ່ງກ່າວວ່າ, ຄວາມຊື່ສັດ, ຄຸນນະທັມ, ຄວາມຮອບຮູ້ ແລະ ອຸປະນິໃສອັນສັກສິດ ມີຜົນຕໍ່ການຍົກລະດັບຂອງມະນຸດ, ໃນຄະນະທີ່ຄວາມບໍ່ຊື່ສັດ, ການໂອ້ອວດ, ການເມີນເສີຍ ແລະ ຄວາມໜ້າຊື່ໃຈຄົດ ນຳເຂົາໄປສູ່ຄວາມຕົກຕ່ຳ."[45]

"ໂອ ສະຫາຍຂອງພຣະຜູ້ເປັນເຈົ້າ ທີ່ຢູ່ໃນຕົວເມືອງຕ່າງໆຂອງພຣະອົງ ແລະ ຄົນທີ່ພຣະອົງຮັກ ໃນພື້ນແຜ່ນດິນຂອງພຣະອົງ! ພຣະຜູ້ຖືກກະທົບຮ້າຍນີ້ ບັນຊາໃຫ້ເຈົ້າມີຄວາມຊື່ສັດ ແລະ

ຄວາມຮູ້ບຸນຄຸນ. ຂໍພຣະພອນຈົ່ງມີແດ່ຕົວເມືອງທີ່ສ່ອງແສງ ດ້ວຍແສງສະຫວ່າງຂອງຄວາມຊື່ສັດ ແລະ ຄວາມຮູ້ບຸນຄຸນ. ຈາກສິ່ງເລົ່ານີ້ມະນຸດໄດ້ຖືກຍົກລະດັບ, ແລະ ປະຕູແຫ່ງຄວາມປອດໄພຈະຖືກປິດລັອກ ກ່ອນທີ່ຈະປະເຊີນໜ້າກັບການສ້າງສັນທັງໝົດ. ຂໍໃຫ້ມະນຸດຜູ້ທີ່ຍຶດໝັ້ນຄວາມຊື່ສັດ ແລະ ຄວາມຮູ້ບຸນຄຸນມີຄວາມສຸກ, ແລະ ຮັບຮູ້ໃນຄຸນນະທັມຂອງພວກເຂົາ, ແລະ ຄວາມທຸກໂສກຈະມີແກ່ຜູ້ທີ່ປະຕິເສດຕໍ່ສະຖານະຂອງເຂົາ."[46]

"ຄວາມໄວ້ວາງໃຈໄດ້, ຄວາມຮອບຮູ້ ແລະ ຄວາມຊື່ສັດ ແມ່ນເປັນສັດຈະທັມ, ເປັນເຄື່ອງປະດັບທີ່ສວຍງາມຂອງພຣະຜູ້ເປັນເຈົ້າ ສຳລັບສິ່ງສ້າງສັນຂອງພຣະອົງ. ອາພອນທີ່ງົດງາມເລົ່ານີ້ ເປັນເຄື່ອງແຕ່ງກາຍທີ່ເໝາະສົມ ສຳລັບວັດທຸກແຫ່ງ. ຄວາມສຸກຈົ່ງມີແກ່ຜູ້ທີ່ເຂົ້າໃຈ, ແລະ ຜູ້ທີ່ໄດ້ຮັບຄຸນນະທັມແລ້ວກໍເປັນສຸກ."[47]

________________________________________

________________________________________

________________________________________

________________________________________

________________________________________

ໃຫ້ທ່ອງຈຳຢ່າງໜ້ອຍໜຶ່ງຂໍ້ຄວາມຈາກແຕ່ລະຊຸດຂ້າງເທິງ.

## ຕອນທີ 12

ຕອນນີ້ຂໍໃຫ້ພວກເຮົາເບິ່ງວ່າເລື່ອງລາວໃນສີ່ບົດຮຽນເລົ່ານີ້ ຈະຊ່ວຍໃຫ້ນັກຮຽນຂອງເຈົ້າມີຄວາມເຂົ້າໃຈຢ່າງທ່ອງແທ້ ກ່ຽວກັບຄຸນລັກສະນະທາງຈິດວິນຍານຂ້າງເທິງໄດ້ແນວໃດ.

ເລື່ອງລາວໃນບົດທີ 9 ອະທິບາຍເຖິງເຫດການທີ່ເກີດຂຶ້ນເມື່ອ ພຣະອັບດຸລບາຮາ ໄດ້ພົບກັບຜູ້ມາຢ້ຽມຢາມຈຳນວນໜຶ່ງທີ່ຮັ່ງມີ; ເລື່ອງລາວຈະສະແດງໃຫ້ເດັກນ້ອຍເຫັນເຖິງຄວາມອ່ອນນ້ອມຢ່າງທີ່ສຸດຂອງພຣະອົງ. ການທີ່ ພຣະອັບດຸລບາຮາ ບໍ່ຕ້ອງການຖືກປະຕິບັດດ້ວຍພິທີໃຫຍ່ໂຕ ລວມທັງການສະແດງຄວາມຫຼູຫຼາ ເຊິ່ງເປັນແນວຄິດຫຼັກ. ສິ່ງນີ້ສະແດງໃຫ້ເຫັນເຖິງຄວາມອ່ອນນ້ອມຂອງພຣະອົງໃນທາງໃດ? ແນ່ນອນ, ຮູບແບບສະເພາະຂອງການສະແດງຄວາມຫຼູຫຼາ - ມີຂັນນ້ຳ, ນ້ຳ, ແລະຜ້າໃສ່ນ້ຳຫອມ - ເຊິ່ງເປັນພຽງລາຍລະອຽດທີ່ໜ້າສົນໃຈ ແລະ ບໍ່ຄວນທັບຄວາມສົນໃຈຈາກຫົວຂໍ້ຫຼັກໃນການເລົ່າເລື່ອງຂອງເຈົ້າ. ເລື່ອງລາວມີການສະຫຼຸບທີ່ຄວນຖືກເນັ້ນ. ເລື່ອງລາວຈະຂະຫຍາຍຄວາມເຂົ້າໃຈຂອງເດັກນ້ອຍ ກ່ຽວກັບຄວາມອ່ອນນ້ອມຂອງ ພຣະອັບດຸລບາຮາ ແລະ ຄວາມປາດຖະໜາທີ່ຈະຮັບໃຊ້ຜູ້ອື່ນໄດ້ແນວໃດ?

________________________________________

ຫົວຂໍ້ຂອງບົດທີ 10 ແມ່ນຄວາມຂອບໃຈ, ແລະ ເດັກນ້ອຍຈະໄດ້ຟັງເລື່ອງລາວກ່ຽວກັບຜູ້ຍິງຄົນໜຶ່ງໄປຢ້ຽມຢາມ ພຣະອັບດຸລບາຮາ ແລະ ເລີ້ມແບ່ງປັນກັບພຣະອົງເຖິງບັນຫາ ແລະ ຄວາມທຸກໂສກທັງໝົດຂອງນາງ. ຕໍ່ມາ ພຣະອັບດຸລບາຮາ ຊຶ່ງແນະນຳນາງໃຫ້ຮູ້ຈັກກັບ ມີຊາ ເຮດາອາລີ, ຜູ້ເຊິ່ງແມ້ຈະປະສົບກັບຄວາມຫຍຸ້ງຍາກຢ່າງໃຫຍ່ຫຼວງໃນຊີວິດ, ແຕ່ກໍບໍ່ເຄີຍຢຸດຂອບໃຈສຳລັບພຣະພອນທັງໝົດທີ່ເຂົາໄດ້ຮັບຈາກ ພຣະຜູ້ເປັນເຈົ້າ. ໃນການເລົ່າເລື່ອງລາວ, ເຈົ້າຈະຕ້ອງໃຫ້ນັກຮຽນເຂົ້າໃຈເລື່ອງລາວຢ່າງຊັດເຈນວ່າ ພຣະອັບດຸລບາຮາ ບໍ່ໄດ້ແນະນຳ ມີຊາ ເຮດາອາລີ ໃຫ້ຜູ້ຍິງຄົນນັ້ນໂດຍບັງເອີນ. ເຈົ້າຄິດວ່າຜູ້ຍິງຄົນນີ້ໄດ້ຮຽນຮູ້ຫຍັງຈາກການພົບກັບພຣະອົງ? ເລື່ອງລາວພະຍາຍາມຖ່າຍທອດບົດຮຽນນີ້ຄືແນວໃດ?

ການໃຫ້ອະໄພເປັນຫົວຂໍ້ຫຼັກຂອງບົດທີ 11, ແລະ ເຈົ້າຈະເລົ່າເລື່ອງລາວກ່ຽວກັບ ພຣະອັບດຸລບາຮາ ໃຫ້ນັກຮຽນຂອງເຈົ້າຟັງ ເຊິ່ງສະແດງໃຫ້ເຫັນຜົນຂອງການໃຫ້ອະໄພຕໍ່ຄົນທີ່ເຮົາໃຫ້ອະໄພ. ເລື່ອງລາວມີຫຼາຍລາຍລະອຽດທີ່ເຈົ້າຈະຕ້ອງເລົ່າໃຫ້ຊັດເຈນ ຖ້າວ່າເດັກນ້ອຍຈະຕ້ອງປະຕິບັດຕາມລຳດັບຂອງແນວຄິດ. ເລື່ອງລາວກ່ຽວຂ້ອງກັບເຈົ້າເມືອງໆອັກຄາ ທີ່ຕັ້ງໃຈທຳຮ້າຍຢ່າງໜັກຕໍ່ ພຣະອັບດຸລບາຮາ ແລະ ຜູ້ຮ່ວມເດີນທາງທີ່ເມືອງນັ້ນ. ໃນເລື່ອງລາວ, ບໍ່ພຽງແຕ່ ພຣະອັບດຸລບາຮາ ຈະໃຫ້ອະໄພແກ່ເຈົ້າເມືອງສຳລັບການກະທຳຂອງເຂົາເທົ່ານັ້ນ; ພຣະອົງປະຕິບັດຕໍ່ເຈົ້າເມືອງ ຜູ້ທີ່ສູນເສຍທຸກສິ່ງທຸກຢ່າງ ດ້ວຍຄວາມເມດຕາ ແລະ ຊ່ວຍເຫຼືອເຂົາໃນຍາມຕົກທຸກໄດ້ຍາກ. ສິ່ງທີ່ເຈົ້າຄວນຫວັງໃຫ້ເດັກນ້ອຍເຂົ້າໃຈຈາກເລື່ອງນີ້ຄື ການໃຫ້ອະໄພ, ດັ່ງທີ່ສະແດງອອກທີ່ເໜືອກວ່າໂດຍ ພຣະອັບດຸລບາຮາ, ບໍ່ເກັບຄວາມຮູ້ສຶກທີ່ບໍ່ດີກັບຜູ້ກະທຳຜິດຕໍ່ພວກເຮົາ. ເຈົ້າຈະຮູ້ໄດ້ແນວໃດວ່າພວກເຂົາເຂົ້າໃຈແນວຄິດນີ້ແລ້ວຫຼືບໍ?

ໃນເລື່ອງລາວຂອງບົດທີ 12, ເດັກນ້ອຍຈະເຫັນວ່າ ພຣະອັບດຸລບາຮາ ຊົງຕອບແນວໃດຕໍ່ຄົນຂັບລົດທີ່ຮຽກຮ້ອງຕ້ອງການຄ່າຂີ່ລົດມ້າໃນລາຄາທີ່ບໍ່ເປັນທໍາ. ຢ່າງໃດກໍຕາມ ເນື້ອຫາສໍາຄັນຂອງຄວາມກະລຸນາ ແລະ ຄວາມສຸພາບ, ພຣະອັບດຸລບາຮາ ບໍ່ເຄີຍອະນຸຍາດໃຫ້ປະຊາຊົນກະທໍາການທີ່ບໍ່ຊື່ສັດ ຫຼື ຫຼອກລວງຕໍ່ພຣະອົງ ຫຼື ຕໍ່ຜູ້ອື່ນ. ເຈົ້າຄິດວ່າຄົນຂັບລົດໄດ້ຮຽນຮູ້ຫຍັງ ຈາກການຕອບກັບຂອງ ພຣະອັບດຸລບາຮາ? ເຈົ້າຈະຊ່ວຍໃຫ້ເດັກໆເຂົ້າໃຈໄດ້ຢ່າງໃດວ່າ ສິ່ງທີ່ເຮົາສູນເສຍໄປຈາກການບໍ່ຊື່ສັດນັ້ນຍິ່ງໃຫຍ່ກວ່າວັດຖຸໃດໆ, ເຊັ່ນ ຄົນຂັບລົດບໍ່ໄດ້ຮັບເງິນຕອບແທນ (tip)?.

**ຕອນທີ 13**

ຫຼັງຈາກທີ່ເຈົ້າໄດ້ເຝິກປະຕິບັດກິດຈະກໍາໃນບົດທີ 9 ຫາ 12 ກັບຜູ້ເຂົ້າຮ່ວມແລ້ວ, ເຈົ້າສາມາດຍ້າຍໄປສູ່ບົດຕໍ່ໄປ. ຂໍແນະນໍາວ່າສໍາລັບບົດທີ 13 ຫາ 16, ໃຫ້ເຈົ້າເປີດຊັ້ນຮຽນແຕ່ລະໄລຍະໂດຍການທ່ອງອອກສຽງບົດສວດອະທິຖານຕໍ່ໄປນີ້ຈາກຄວາມຊົງຈໍາ:

> **"ໂອ ພຣະຜູ້ຊົງຄວາມເມດຕາຂອງຂ້າພະອົງ! ນີ້ຄືດອກຜັກຕົບສະອາ (hyacinth) ທີ່ເຕີບໂຕໃນສວນແຫ່ງຄວາມສຸກຂອງພຣະອົງ ແລະ ກິ່ງກ້ານທີ່ປາກົດໃນສວນແຫ່ງຄວາມຮູ້ທີ່ແທ້ຈິງ. ໂອ ພຣະຜູ້ຊົງຄວາມກະລຸນາ, ເຮັດໃຫ້ດອກໄມ້ນັ້ນສົດຊື່ນຢ່າງຕໍ່ເນື່ອງ ແລະ ຕະຫຼອດເວລາຜ່ານສາຍລົມທີ່ເຮັດໃຫ້ມີຊີວິດຊີວາຂອງພຣະອົງ, ແລະ ເຮັດໃຫ້ດອກໄມ້ນັ້ນຂຽວງາມ, ສົດຊື່ນ ແລະ ຈະເລີນງອກງາມ ຜ່ານການຫຼັ່ງໄຫຼຂອງໝູ່ເມກແຫ່ງຄວາມໂປດປານຂອງພຣະອົງ, ໂອ ພຣະຜູ້ຊົງກະລຸນາ!**
>
> **"ແທ້ຈິງແລ້ວ ພຣະອົງຄືພຣະຜູ້ຊົງຄວາມຮຸ່ງເຮືອງທັງປວງ"**[48]

ຂ້າງລຸ່ມນີ້ແມ່ນບົດສວດອະທິຖານທີ່ນັກຮຽນຂອງເຈົ້າຈະໄດ້ຮຽນເວົ້າໃຫ້ຂຶ້ນໃຈ ໃນບົດທີ 13 ຫາ 16. ເພື່ອໃຫ້ພວກເຂົາເຂົ້າໃຈເຖິງຄວາມໝາຍອັນສໍາຄັນຂອງບົດສວດອະທິຖານ, ເຈົ້າຄວນບົ່ງບອກຄໍາສັບຫຼືວະລີໃດທີ່ໃໝ່ ຫຼືບໍ່ຄຸ້ນເຄີຍສໍາລັບນັກຮຽນຂອງເຈົ້າ ແລ້ວປະດິດປະໂຫຍກທີ່ເໝາະສົມເພື່ອອະທິບາຍ ຄໍາສັບຫຼືວະລີເຫຼົ່ານັ້ນ. ແນ່ນອນພວກເຂົາຈະເຂົ້າໃຈໄດ້ງ່າຍ ເຖິງການບັນຍາຍພາບ

ຂອງບົດສວດອະທິຖານ, ເຊິ່ງຈະດັງກ້ອງກັງວານດ້ວຍບົດສວດໃນບົດຮຽນເລົ່ານີ້ ທີ່ເຈົ້າທ່ອງອອກສຽງຈາກຄວາມຊົງຈຳ.

**"ໂອ ພຣະຜູ້ເປັນເຈົ້າ! ຈົ່ງປູກເບ້ຍໄມ້ທີ່ອ່ອນນີ້ ໃນສວນແຫ່ງຄວາມກະລຸນາຢ່າງຫຼວງຫຼາຍຂອງພຣະອົງ, ຈົ່ງຫົດນໍ້າເບ້ຍໄມ້ອ່ອນນີ້ຈາກນໍ້າພຸແຫ່ງຄວາມຮັກ-ຄວາມເມດຕາຂອງພຣະອົງ ແລະ ຈົ່ງປ່ອຍໃຫ້ມັນເຕີບໂຕເປັນພືດທີ່ດີ ຜ່ານການຫຼັ່ງໄຫຼຂອງຄວາມໂປດປານ ແລະ ພຣະກະລຸນາທິຄຸນຂອງພຣະອົງ.**

**"ພຣະອົງຊົງເປັນຜູ້ຊົງພະລັງ ແລະ ພຣະຜູ້ຊົງອຳນາດ."[49]**

________________________________________

________________________________________

________________________________________

________________________________________

________________________________________

**ຕອນທີ 14**

ໃຫ້ຂຽນຄຸນລັກສະນະທີ່ໄດ້ກ່າວໄວ້ໃນບົດທີ 13 ຫາ 16, ຫຼັງຈາກທີ່ເຈົ້າໄດ້ອ່ານຜ່ານແຕ່ລະບົດກັບຜູ້ເຂົ້າຮ່ວມຂອງເຈົ້າ ຕາມທີ່ໄດ້ປະຕິບັດຜ່ານມາ.

ບົດທີ 13: ______________________________

ບົດທີ 14: ______________________________

ບົດທີ 15: ______________________________

ບົດທີ 16: ______________________________

ບັນດາພຣະວັດຈະນະຕໍ່ໄປນີ້ ຈະເປີດໂອກາດໃຫ້ເຈົ້າທົບທວນກ່ຽວກັບຄຸນລັກສະນະທາງຈິດວິນຍານ ທີ່ໄດ້ປຶກສາຫາລືໃນບົດຮຽນເລົ່ານີ້, ດັ່ງທີ່ເຈົ້າໄດ້ກະທຳໄປແລ້ວກ່ອນໜ້ານີ້.

ເຮົາອ່ານກ່ຽວກັບຄວາມສຳຄັນຂອງການສະແດງຄວາມເຫັນອົກເຫັນໃຈ:

**"ສ່ອງແສງແຫ່ງຄວາມເຫັນອົກເຫັນໃຈ ເພື່ອວ່າຫົວໃຈຈະໄດ້ຮັບການຊຳລະໃຫ້ສະອາດ ແລະ ບໍລິສຸດ ເພື່ອວ່າພວກເຂົາຈະຮັບສ່ວນແບ່ງ ແລະ ບາງສ່ວນຈາກການຮັບຮອງຂອງພຣະອົງ."[50]**

"ຈົ່ງມີຄວາມເຫັນອົບເຫັນໃຈ, ເພື່ອວ່າການກະທຳຂອງພວກເຈົ້າ ຈະໄດ້ສ່ອງສະຫວ່າງເໝືອນກັບແສງທີ່ສ່ອງອອກມາຈາກຕະກຽງ."[51]

"ພວກເຈົ້າເປັນໝາກໄມ້ເທິງຕົ້ນດຽວກັນ ແລະ ໃບຂອງກິ່ງກ້ານດຽວກັນ; ຈົ່ງເຫັນອົກເຫັນໃຈ ແລະ ກະລຸນາຕໍ່ມະນຸດຊາດທັງປວງ."[52]

"ບັດນີ້ຜູ້ທີ່ຮັກພຣະຜູ້ເປັນເຈົ້າ ຕ້ອງລຸກຂຶ້ນມາປະຕິບັດຕາມຄຳແນະນຳຂອງພຣະອົງ: ຂໍໃຫ້ພວກເຂົາເປັນບິດາທີ່ກະລຸນາແກ່ລູກຫຼານຂອງມະນຸດຊາດ, ແລະ ເປັນອ້າຍນ້ອງມີເຫັນອົກເຫັນໃຈຕໍ່ຊາວໜຸ່ມ, ແລະ ເປັນບຸດທີ່ເສຍສະລະໂຕເອງ ໃຫ້ຜູ້ແກ່ສະລາ."[53]

ພວກເຮົາຖືກແນະນຳກ່ຽວກັບຄຸນລັກສະນະຂອງການປ່ອຍວາງ:

"ຈົ່ງປ່ອຍວາງຕົວເຈົ້າເອງຈາກທຸກສິ່ງຂອງຈາກເຮົາພຣະອົງ, ແລະ ຫັນໜ້າເຂົ້າຫາພຣະພັກຂອງເຮົາພຣະອົງ, ເພາະສິ່ງນີ້ດີກວ່າສຳລັບເຈົ້າ ຫຼາຍກວ່າສິ່ງຕ່າງໆທີ່ເຈົ້າຄອບຄອງ."[54]

"ຈົ່ງຢ່າໃຫ້ຕົວເຈົ້າເອງພໍໃຈກັບສິ່ງຕ່າງໆທາງໂລກ ແລະ ເຄື່ອງປະດັບອັນໄຮ້ສາລະທາງໂລກ, ຢ່າຕັ້ງຄວາມຫວັງໄວ້ກັບມັນ. ຂໍໃຫ້ເຈົ້າວາງໃຈໃນການລະນຶກເຖິງພຣະຜູ້ເປັນເຈົ້າ, ພຣະຜູ້ຊົງສູງສົ່ງ, ພຣະຜູ້ຍິ່ງໃຫຍ່ທີ່ສຸດ."[55]

"ແກ່ນແທ້ຂອງການປ່ອຍວາງຄືການທີ່ມະນຸດ ຫັນໜ້າຂອງເຂົາໄປຍັງລາດສະສຳນັກຂອງພຣະຜູ້ເປັນເຈົ້າ, ເຂົ້າເຝົ້ານະທີ່ປະທັບຂອງພຣະອົງ, ຈ້ອງເບິ່ງພຣະພັກຂອງພຣະອົງ, ແລະຕັ້ງໝັ້ນໃນຖານະພະຍານຕໍ່ໜ້າພຣະພັກຂອງພຣະອົງ."[56]

"ການປ່ອຍວາງເປັນເໝືອນດວງອາທິດ; ຢ່າງໃດກໍ່ຕາມ ມັນສ່ອງແສງຢູ່ໃນໃຈ ມັນດັບໄຟແຫ່ງຄວາມໂລບ ແລະ ອັດຕາ. ຜູ້ມີສາຍຕາທີ່ຖືກສ່ອງດ້ວຍແສງແຫ່ງຄວາມເຂົ້າໃຈ ຈະປ່ອຍວາງຕົນເອງອອກຈາກໂລກ ແລະ ສິ່ງໄຮ້ສາລະທັງປວງ... ຢ່າປ່ອຍໃຫ້ໂລກ ແລະ ສິ່ງໄຮ້ສາລະທາງໂລກເຮັດໃຫ້ເຈົ້າເສຍໃຈ. ຂໍຄວາມສຸກຈົ່ງມີແດ່ຜູ້ຮັ່ງມີ ທີ່ບໍ່ເຕັມໄປດ້ວຍຄວາມຮຸ່ງເຮືອງອັນໄຮ້ສາລະ, ຢ່າມີຄວາມຍາກຈົນດ້ວຍຄວາມເສົ້າໂສກ."[57]

ຂໍ້ຄວາມຕໍ່ໄປນີ້ບອກພວກເຮົາກ່ຽວກັບຄຸນລັກສະນະຂອງຄວາມພໍໃຈ:

"ໂອ ບຸດແຫ່ງມະນຸດ! ຫາກເຈົ້າເລັ່ງຄວາມໄວຜ່ານຄວາມກວ້າງໃຫຍ່ຂອງຈັກກະວານ ແລະ ທ່ອງທ່ຽວໄປຍັງສະຫວັນອັນໄພສານ, ເຖິງຢ່າງໃດ ເຈົ້າກໍ່ຈະບໍ່ພົບການພັກຜ່ອນ ນອກຈາກ ການຈຳນົນຕໍ່ບັນຍັດຂອງເຮົາ ແລະ ຄວາມຖ່ອມຕົນຕໍ່ໜ້າພຣະພັກຂອງເຮົາ."[58]

"ໂອ ແກ່ນແທ້ຂອງຄວາມຫຼົງໄຫຼ! ລະຖິ້ມຄວາມໂລບທັງໝົດ ແລະ ສະແຫວງຫາຄວາມພໍໃຈ; ເພາະຄົນໂລບຖືກກີດກັນ ແລະ ຜູ້ທີ່ພໍໃຈຍ່ອມໄດ້ຮັບຄວາມຮັກ ແລະ ຄຳສັນລະເສີນ."[59]

"ສະນັ້ນ, ຈົ່ງກ້າວໄປສູ່ເສັ້ນທາງແຫ່ງການຍອມຮັບ ແລະ ການຍອມຈຳນົນ. ຢ່າໃຫ້ຄວາມ ຍາກລຳບາກມາເຮັດໃຫ້ຫົວໃຈເຈົ້າເສົ້າໝອງ, ຢ່າຕັ້ງຄວາມຫວັງກັບຂອງຂວັນໃດໆທາງໂລກ. ຈົ່ງມີຄວາມສຸກ ແລະ ພໍໃຈກັບທຸກສິ່ງທີ່ພຣະຜູ້ເປັນເຈົ້າຊົງປະທານ, ເພື່ອວ່າຫົວໃຈ ແລະ ວິນ ຍານຂອງເຈົ້າຈະພົບຄວາມງຽບສະຫງົບ ແລ້ວການດຳລົງຢູ່ ແລະ ຄວາມສຳນຶກພາຍໃນຂອງ ເຈົ້າອາດຈະປະສົບກັບຄວາມສຸກທີ່ແທ້ຈິງ."[60]

ສິ່ງທີ່ຂັດເລືອກມາຂ້າງລຸ່ມນີ້ ສ່ອງແສງແຫ່ງຄວາມເຂົ້າໃຈຂອງເຮົາກ່ຽວກັບ ຄວາມກະລຸນາ:

"ເຮົາມັກທີ່ຈະເຫັນເຈົ້າຜູກໄມຕີ ແລະ ປອງດອງກັນຕະຫຼອດເວລາພາຍໃນສະຫວັນແຫ່ງຄວາມ ຍິນດີຂອງເຮົາ, ແລະ ຈະສູດກິ່ນຫອມຫວນຂອງຄວາມເປັນມິດ ແລະ ຄວາມສາມັກຄີ, ຄວາມ ເມດຕາຮັກໃຄ່ ແລະ ມິດຕະພາບ ຈາກການກະທຳຂອງເຈົ້າ."[61]

"ຈົ່ງມີຄວາມກະລຸນາຢ່າງຈິງໃຈ, ບໍ່ແມ່ນພຽງແຕ່ຮູບຮ່າງພາຍນອກເທົ່ານັ້ນ. ຂໍໃຫ້ຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າແຕ່ລະຄົນມຸ່ງຄວາມສົນໃຈໄປທີ່ສິ່ງນີ້: ເປັນຄວາມເມດຕາຂອງພຣະຜູ້ເປັນເຈົ້າຕໍ່ມະນຸດ, ເປັນພຣະມະຫາກະລຸນາທິຄຸນຂອງພຣະຜູ້ເປັນເຈົ້າ. ຂໍໃຫ້ເຂົາກະທຳຄວາມດີ ແລະ ເປັນປະໂຫຍດແກ່ທຸກຄົນທີ່ຜ່ານເຂົ້າມາໃນຫົນທາງ."[62]

"... ເປັນຫຍັງມະນຸດຈຶ່ງບໍ່ຍຸດຕິທຳ ແລະ ບໍ່ກະລຸນາເຊິ່ງກັນແລະກັນ, ສະແດງອອກເຖິງການຕໍ່ຕ້ານພຣະຜູ້ເປັນເຈົ້າ? ໃນເມື່ອພຣະອົງຊົງຮັກພວກເຮົາ, ເປັນຫຍັງເຮົາສະແດງຄວາມເປັນປໍລະປັກ ແລະ ຄວາມກຽດຊັງ? ຖ້າຫາກວ່າພຣະຜູ້ເຈົ້າບໍ່ຮັກພວກເຮົາທຸກຄົນ, ພຣະອົງກໍຈະບໍ່ສ້າງ, ບໍ່ເຝິກຝົນ ແລະ ບໍ່ຈັດຕຽມທຸກສິ່ງ. ຄວາມເມດຕາຮັກໃຄ່ເປັນນະໂຍບາຍສະຫວັນ."[63]

"ຢ່າພໍໃຈກັບການສະແດງມິດຕະພາບດ້ວຍຄຳເວົ້າພຽງຢ່າງດຽວ, ຂໍໃຫ້ຫົວໃຈຂອງເຈົ້າລຸກໄໝ້ດ້ວຍຄວາມກະລຸນາຕໍ່ທຸກຄົນທີ່ອາດເຂົ້າມາໃນຫົນທາງຂອງເຈົ້າ."[64]

ພະຍາຍາມທ່ອງຈຳຢ່າງໜ້ອຍໜຶ່ງຂໍ້ຄວາມຈາກແຕ່ລະຊຸດຂ້າງເທິງ.

## ຕອນທີ 15

ຫຼັງຈາກທຳຄວາມເຂົ້າໃຈເລິກເຊິ່ງເຖິງຄຸນລັກສະນະຕ່າງໆທີ່ກ່າວມາໃນບົດທີ 13 ຫາ 16, ຂໍໃຫ້ອື່ນຄືນສີ່ເລື່ອງລາວ ແລະ ປຶກສາຫາລືຄຳຖາມຂ້າງລຸ່ມກັບກຸ່ມຂອງເຈົ້າ.

ຫົວຂໍ້ຂອງບົດທີ 13 ແມ່ນຄວາມເຫັນອົກເຫັນໃຈ, ແລະ ເລື່ອງລາວທີ່ເຈົ້າຈະເລົ່າກ່ຽວຂ້ອງກັບແມ່ຍິງຄົນໜຶ່ງຖືກປະຕິເສດຈາກບ້ານທີ່ພຣະອັບດຸລບາຮາພັກຢູ່ ຂະນະທີ່ນາງເຄາະປະຕູ, ຫວັງວ່າຈະໄດ້ພົບພຣະອົງ. ສ່ວນໃດຂອງເລື່ອງທີ່ສະແດງເຖິງຄວາມເຫັນອົກເຫັນໃຈທີ່ມີຕໍ່ຍິງຄົນນັ້ນ? ລາຍລະອຽດໃດທີ່ຈະຊ່ວຍໃຫ້ເດັກນ້ອຍຕິດຕາມເລື່ອງລາວ ແລະ ເຂົ້າໃຈວ່າຫົວໃຈທີ່ເຫັນອົກເຫັນໃຈ, ໃນຂະນະທີ່ຫ່ວງໃຍທຸກຄົນເທົ່າໆກັນ, ໂດຍສະເພາະກັບຜູ້ທີ່ຕົກທຸກໄດ້ຍາກ, ທຸກໃຈ ຫຼື ເສົ້າໂສກ?

ບົດທີ 14 ເນັ້ນໜັກໄປທີ່ຄຸນລັກສະນທາງທັມຂອງການປ່ອຍວາງ. ເລື່ອງລາວກ່ຽວກັບໝູ່ສອງຄົນທີ່ຕັດສິນໃຈເດີນທາງໄປດິນແດນສັກສິດ, ຄົນໜຶ່ງຮັ່ງມີ ແລະ ອີກຄົນຖານະຕ່ຳຕ້ອຍ. ແນ່ນອນ, ເພື່ອໃຫ້ເຂົ້າໃຈເຖິງຄຸນລັກສະນະຂອງການປ່ອຍວາງ, ເດັກນ້ອຍຈະຕ້ອງຮັບຮູ້ວ່າການເດີນທາງໄປດິນແດນສັກສິດ ເປັນສັນຍາລັກຂອງການເຂົ້າໃກ້ພຣະຜູ້ເປັນເຈົ້າຫຼາຍຂຶ້ນ. ສິ່ງທີ່ເຈົ້າຢາກໃຫ້ເດັກນ້ອຍເຂົ້າໃຈຄືການປ່ອຍວາງ ບໍ່ແມ່ນການຍຶດຕິດຫຼາຍ ຫຼື ໜ້ອຍກັບສິ່ງທີ່ເຮົາຄອບຄອງ, ແຕ່ຂຶ້ນຢູ່ກັບວ່າເຮົາຍອມໃຫ້ການຄອບຄອງຂອງພວກເຮົາຂັດຂວາງ ບໍ່ໃຫ້ພວກເຮົາເຂົ້າໃຫ້ພຣະຜູ້ເປັນເຈົ້າຫຼືບໍ່. ເລື່ອງລາວຈະຊ່ວຍສົ່ງເສີມຄວາມເຂົ້າໃຈນີ້ໄດ້ແນວໃດ?

ເລື່ອງລາວໃນບົດທີ 15 ຈະໃຫ້ຄວາມຢັ່ງຮູ້ແກ່ເດັກນ້ອຍກ່ຽວກັບຄຸນລັກສະນະຂອງຄວາມເຫັນອົກເຫັນໃຈ, ເຊິ່ງເປັນຫົວຂໍ້ຫຼັກ. ພຣະອັບດຸລບາຮາ ບອກຜູ້ຮ່ວມເດີນທາງຂອງພຣະອົງວ່າ ພຣະອົງມີຄວາມສຸກຂະນະທີ່ຖືກຂັງໃນເມືອງປ້ອມປະການຂອງ ເມືອງອັກຄາ ເພາະພຣະອົງຜ່ານວັນເລົ່ານັ້ນໃນເສັ້ນທາງແຫ່ງການຮັບໃຊ້. ຂໍ້ຄວາມນີ້ຈະສົ່ງຜົນຕໍ່ຄວາມເຂົ້າໃຈຂອງເດັກນ້ອຍ ໃນເລື່ອງຄວາມເຫັນອົກເຫັນໃຈແນວໃດ? ເດັກນ້ອຍຈະເຂົ້າໃຈໄດ້ແນວໃດວ່າ, ເຖິງວ່າຖືກຂັງທາງຮ່າງກາຍ ຈິດວິນຍານຂອງພຣະອັບດຸລບາຮາ ກໍ່ບໍ່ອາດຖືກກັກຂັງໄດ້?

ໃນການເຊື່ອມໂຍງເລື່ອງລາວໃນບົດທີ 16, ເຊິ່ງກ່ຽວກັບຊາຍຄົນໜຶ່ງໃນເມືອງອັກຄາ ທີ່ຖືກກືນກິນດ້ວຍຄວາມໂມໂຫ ແລະ ຄວາມກຽດຊັງ, ເຈົ້າຈະຕ້ອງເນັ້ນລາຍລະອຽດບາງຢ່າງ; ບໍ່ດັ່ງນັ້ນເດັກນ້ອຍອາດນຳບໍ່ທັນ ວ່າມັນກ່ຽວຂ້ອງກັບປະເດັນຫຼັກຂອງຄວາມກະລຸນາຄືແນວໃດ. ລາຍລະອຽດເລົ່ານີ້ມີຫຍັງແດ່? ບົດຮຽນໃນທີ່ ພຣະອັບດຸລບາຮາ ສອນຊາຍຄົນນັ້ນຜູ້ທີ່ຍຶດໝັ້ນໃນຄວາມໂມໂຫ ແລະ ຄວາມກຽດຊັງມາດົນນານ?

ຕອນທີ 16

ຫວັງວ່າການວິເຄາະບົດທີ 13 ຫາ 16 ຂອງເຈົ້າປະສົບຜົນສຳເລັດ ແລ້ວເຈົ້າແລະເພື່ອຮ່ວມກຸ່ມຂອງເຈົ້າໄດ້ມ່ວນກັບການເຝິກອົງປະກອບຫຼາຍຢ່າງຮ່ວມກັນ. ສຳລັບບົດທີ 17 ຫາ 20, ໃນຕອນເລີ່ມຕົ້ນຊັ້ນຮຽນທຸກຄັ້ງ ເຈົ້າສາມາດທ່ອງບົດສວດອະທິຖານຂ້າງລຸ່ມຈາກຄວາມຊົງຈຳ:

**"ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຄົນຮັບໃຊ້ຜູ້ນີ້ກ້າວເຂົ້າມາຫາພຣະອົງ, ຫຼົງໄຫຼໃນທະເລຊາຍແຫ່ງຄວາມຮັກຂອງພຣະອົງ, ເດີນໃນເສັ້ນທາງແຫ່ງການຮັບໃຊ້ຂອງພຣະອົງ, ຄອງຄອຍຄວາມໂປດປານຂອງພຣະອົງ, ຫວັງຄວາມກະລຸນາຈາກພຣະອົງ, ວາງໃຈໃນອານາຈັກຂອງພຣະອົງ, ແລະມົວເມົາດ້ວຍເຫຼົ້າອາງຸ່ນຈາກຂອງຂວັນຂອງພຣະອົງ. ໂອ ພຣະຜູ້ເປັນເຈົ້າ! ຈົ່ງເພີ້ມຄວາມຮັກຄວາມສະເໜ່ຫາຂອງເຂົາທີ່ມີຕໍ່ພຣະອົງ, ຄວາມໝັ້ນຄົງຂອງເຂົາໃນການສັນລະເສີນພຣະອົງ, ແລະ ຄວາມກະຕືລືລົ້ນໃນຄວາມຮັກທີ່ຕໍ່ພຣະອົງ.**

**"ແທ້ຈິງແລ້ວ, ພຣະອົງຄືພຣະຜູ້ຊົງຄວາມເອື້ອເຟື້ອ, ພຣະກະລຸນາທິຄຸນອັນເຫຼືອລົ້ນ. ບໍ່ມີພຣະຜູ້ເປັນເຈົ້າອື່ນໃດຂອງນອກຈາກພຣະອົງ, ພຣະຜູ້ຊົງອະໄພ, ພຣະຜູ້ຊົງເມດຕາ."**[65]

ບົດຮຽນເລົ່ານີ້, ເດັກນ້ອຍຈະເນັ້ນໜັກໃສ່ການຮຽນທ່ອງຈຳ ບົດສວດອະທິຖານຂ້າງລຸ່ມໃຫ້ຂຶ້ນໃຈ, ແລະເຈົ້າຄວນບັນທຶກໄວ້ເຊັ່ນກັນກັບສິ່ງອື່ນໆ, ວ່າເຈົ້າຈະເຮັດແນວໃດເພື່ອໃຫ້ແນ່ໃຈວ່າເດັກນ້ອຍເຂົ້າໃຈຄຳສັບທີ່ພວກເຂົາກຳລັງຈົດຈຳ. ບົດສວດອະທິຖານນີ້ຂ້ອນຂ້າງຍາວກວ່າເທື່ອກ່ອນໆ, ແລະຖ້າຫາກ ເດັກນ້ອຍພົບວ່າຄຳສັບນີ້ ຫຼື ຄຳສັບອື່ນໆທີ່ທ້າທາຍຕໍ່ການຈົດຈຳ ໃນບົດຮຽນທັງສີ່ບົດທີ່ກຳໜົດໃຫ້, ເຈົ້າຄວນປັບປ່ຽນວິທີໃດກໍຕາມທີ່ເຈົ້າຄິດວ່າຈຳເປັນ.

**"ພຣະນາມຂອງພຣະອົງ ຄືການຮັກສາປິ່ນປົວຂອງຂ້າພະອົງ, ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພະອົງ, ແລະ ການລະນຶກເຖິງພຣະອົງຄືທິບໂອສົດຂອງຂ້າພະອົງ. ການເຂົ້າໃກ້ພຣະອົງຄືຄວາມຫວັງຂອງຂ້າພະອົງ, ແລະ ຄວາມຮັກທີ່ມີຕໍ່ພຣະອົງນັ້ນຄື ການຮັກສາປິ່ນປົວ ແລະການຊ່ວຍເຫຼືອຂ້າພະອົງທັງໃນໂລກນີ້ ແລະ ໂລກໜ້າ. ແທ້ຈິງແລ້ວ ພຣະອົງຄືພຣະຜູ້ຊົງກະລຸນາ, ພຣະຜູ້ຊົງຮອບຮູ້, ພຣະຜູ້ຊົງພຣະປັຊາຍານ ເໜືອສັບພະສິ່ງທັງມວນ."**[66]

ຕອນທີ 17

ໃນການເລີ່ມທົບທວນບົດທີ 17 ຫາ 20, ຂໍໃຫ້ອ່ານເທື່ອລະບົດຕາມວິທີທີ່ປະຕິບັດມາ, ແລະ ຊຽນຄຸນລັກສະນະທາງຈິດວິນຍານ ທີ່ເຈົ້າສຳຫຼວດຄຸນລັກສະນະເລົ່ານີ້ຮ່ວມກັບເດັກນ້ອຍ.

ບົດທີ 17: ______

ບົດທີ 18: ______

ບົດທີ 19: ______

ບົດທີ 20: ______

ຂ້າງລຸ່ມນີ້ເປັນພຣະວັດຈະນະບາງສ່ວນທີ່ຈະຊ່ວຍເຈົ້າ ແລະ ຜູ້ເຂົ້າຮ່ວມຮຽນນຳເຈົ້າໄດ້ຮັບຄວາມຢັ່ງຮູ້ກ່ຽວກັບຄວາມໝາຍສຳຄັນຂອງຄຸນລັກສະນະຂ້າງເທິງ. ຈົ່ງຈື່ຈຳໄວ້ວ່າໃຫ້ປຶກສາຫາລືຄຸນລັກສະນະເລົ່ານີ້ບໍ່ພຽງແຕ່ຈາກມູມມອງຊີວິດຂອງແຕ່ລະຄົນ; ເຈົ້າຄວນຄິດນຳວ່າຄຸນລັກສະນະເລົ່ານີ້ມີຄວາມໝາຍແນວໃດຕໍ່ຄູຂອງເດັກນ້ອຍ ເຊິ່ງກໍຄືຕົວເຈົ້າເອງ.

ພວກເຮົາໄດ້ຮັບຄຳແນະນຳກ່ຽວກັບຄຸນລັກສະນະຂອງຄວາມກ້າຫານ:

**"ຈົ່ງບຸກບືນໃຫ້ຫຼາຍທີ່ສຸດເທົ່າທີ່ເຈົ້າຈະເຮັດໄດ້ ເພື່ອຫັນທັງໝົດໄປຫາອານາຈັກ, ເພື່ອວ່າເຈົ້າຈະໄດ້ຮັບຄວາມກ້າຫານໂດຍກຳເນີດ ແລະ ພະລັງອັນສົມບູນແບບ."[67]**

**"ຂໍໃຫ້ເຈົ້າຈົ່ງເປັນແຫຼ່ງທີ່ເພິ່ງແກ່ຫົວໃຈທີ່ແຕກສະຫຼາຍ. ຂໍໃຫ້ເຈົ້າຈົ່ງເປັນລີ້ໄພຂອງຄົນພະເນຈອນ. ຂໍໃຫ້ເຈົ້າຈົ່ງເປັນແຫຼ່ງຂອງຄວາມກ້າຫານແກ່ຜູ້ທີ່ຢ້ານກົວ. ດັ່ງນັ້ນ ດ້ວຍຄວາມໂປດປານ ແລະ ຄວາມຊ່ວຍເຫຼືອຈາກພຣະຜູ້ເປັນເຈົ້າ ຂໍໃຫ້ມາດຕະຖານແຫ່ງຄວາມສຸກຂອງມະນຸດຊາດຖືກຍົກຂຶ້ນສູງ ໃນສູນກາງຂອງໂລກ ແລະທຸງແຫ່ງຂໍ້ຕົກລົງສາກົນຈະຖືກພືອອກ"[68]**

ຂໍໃຫ້ພວກເຮົາອ່ານກ່ຽວກັບຄວາມສຳຄັນຂອງຄວາມຫວັງ:

"ຈົ່ງຕັ້ງຄວາມຫວັງທັງໝົດຂອງເຈົ້າໄວ້ໃນພຣະຜູ້ເປັນເຈົ້າ, ແລະ ຍຶດໝັ້ນໃນພຣະເມດຕາທີ່ບໍ່ຮູ້ສິ້ນຂອງພຣະອົງ. ມີໃຜອີກຂອງນອກພຣະອົງ ທີ່ສາມາດເພີ່ມພູນແກ່ຜູ້ຍາກຈົນ, ແລະ ປົດປ່ອຍຜູ້ຕົກຕ່ຳຈາກຄວາມຕ່ຳຕ້ອຍຂອງເຂົາ?"[69]

"ໂອ ຮູບແບບການເຄື່ອນໄຫວຂອງຝຸ່ນ! ເຮົາປະສົງແບ່ງປັນກັບເຈົ້າ, ແຕ່ເຈົ້າບໍ່ໄວ້ວາງໃຈໃນເຮົາ. ດາບແຫ່ງການກໍ່ກະບົດຂອງເຈົ້າໄດ້ບັກຕົ້ນໄມ້ແຫ່ງຄວາມຫວັງຂອງເຈົ້າ. ເຮົາໃກ້ເຈົ້າຕະຫຼອດເວລາ ແຕ່ເຈົ້າຢູ່ໄກຈາກເຮົາຕະຫຼອດ. ເຮົາໄດ້ເລືອກຄວາມຮຸ່ງເຮືອງທີ່ບໍ່ມີວັນສະຫຼາຍໃຫ້ກັບເຈົ້າ, ແຕ່ເຈົ້າຍັງເລືອກຄວາມອັບປະຍົດອັນໄຮ້ຂອບເຂດໃຫ້ຕົນເອງ. ໃນຂະນະທີ່ຍັງມີເວລາ, ຈົ່ງກັບມາ, ແລະ ຢ່າເສຍໂອກາດຂອງເຈົ້າ."[70]

"ມະນຸດຢູ່ພາຍໃຕ້ທຸກສະພາວະການທັງໝົດ ໄດ້ດຳດິ່ງຢູ່ໃນທະເລແຫ່ງພຣະພອນຂອງພຣະຜູ້ເປັນເຈົ້າ. ດັ່ງນັ້ນ, ຈົ່ງຢ່າສິ້ນຫວັງໃນທຸກສະພາບການ, ແຕ່ຈົ່ງໝັ້ນຄົງໃນຄວາມຫວັງ."[71]

"ຖ້າຫາກຫົວໃຈນັ້ນຫັນອອກໄປຈາກພຣະພອນຂອງພຣະຜູ້ເປັນເຈົ້າທີ່ປະທານໃຫ້ ຫົວໃຈຈະຫວັງໃຫ້ມີຄວາມສຸກໄດ້ແນວໃດ? ຖ້າຫາກຫົວໃຈບໍ່ໃຫ້ຄວາມຫວັງ ແລະ ບໍ່ວາງໃຈໃນຄວາມເມດຕາຂອງພຣະຜູ້ເປັນເຈົ້າ, ຈະຫາທີ່ພັກຜ່ອນໄດ້ຢູ່ໃສ? ໂອ, ຈົ່ງໄວ້ວາງໃຈໃນພຣະຜູ້ເປັນເຈົ້າ! ເພາະຄວາມກະລຸນາຂອງພຣະອົງດຳລົງຢູ່ບໍ່ຮູ້ສິ້ນ, ແລະ ພຣະພອນຂອງພຣະອົງທີ່ມີຕໍ່ເຂົານັ້ນວິເສດສຸດ."[72]

ແລະ ຄຳສອນບອກພວກເຮົາກ່ຽວກັບຄວາມໄວ້ວາງໃຈວ່າ:

"ໂອ ປະຊາຊົນ! ພູສາທີ່ດີທີ່ສຸດໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າໃນຍຸກນີ້ຄື ຄວາມໄວ້ວາງໃຈ. ຄວາມກະລຸນາ ແລະ ຄວາມກຽດຕິຍົດທັງມວນຈະເປັນສ່ວນໜຶ່ງຂອງວິນຍານ ທີ່ປະດັບປະດາວິນຍານດ້ວຍເຄື່ອງປະດັບທີ່ຍິ່ງໃຫຍ່ທີ່ສຸດນີ້."[73]

"ຄວາມໄວ້ວາງໃຈເປັນເໝືອນຖານທີ່ໝັ້ນຂອງນະຄອນແຫ່ງມະນຸດຊາດ, ແລະ ເປັນເໝືອນດວງຕາຂອງວິຫານແຫ່ງມະນຸດ. ຜູ້ໃດກໍຕາມທີ່ຍັງຄົງຖືກກີດກັ້ນຢູ່ຕໍ່ໜ້າບັນລັງຂອງພຣະອົງ, ຈະຖືກນັບວ່າເປັນຜູ້ບໍ່ມີວິໄສທັດ."[74]

"ຈົ່ງເປັນບັນດາພຣະຜູ້ສະແດງຄວາມໄວ້ວາງໃຈຂອງພຣະຜູ້ເປັນເຈົ້າໃນທຸກດິນແດນ. ສະນັ້ນ ຫາກເຈົ້າສະທ້ອນຄຸນລັກສະນະນີ້ອອກມາຢ່າງສົມບູນແບບ ແມ້ວ່າເຈົ້າຈະເດີນທາງຜ່ານເມືອງທີ່ເຕັມໄປດ້ວຍທອງຄຳ, ການຈ້ອງມອງຂອງເຈົ້າຈະບໍ່ຖືກລວງດ້ວຍສະເໜ່ຫາຂອງມັນແມ້ແຕ່ວິນາທີດຽວ."[75]

________________________________________

________________________________________

________________________________________

________________________________________

________________________________________

ແລະ ຖ້ອຍຄຳເລົ່ານີ້ບອກພວກເຮົາກ່ຽວກັບການຈຸດໄຟ:

"ໂອ ສະຫາຍ! ໃນມື້ນີ້ພວກເຈົ້າທຸກຄົນຈະຕ້ອງລຸກໄໝ້ດ້ວຍໄຟແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ເພື່ອວ່າຄວາມອົບອຸ່ນຂອງຄວາມຮັກນັ້ນ ຈະກະຈາຍແສງໃນທຸກເສັ້ນໂລຫິດຂອງເຈົ້າ, ທຸກແຂນຂາຂອງເຈົ້າ ແລະ ທຸກອະໄວຍະວະໃນຮ່າງກາຍຂອງເຈົ້າ, ແລະ ປະຊາຊົນໃນໂລກອາດຈະຖືກຈຸດໄຟດ້ວຍຄວາມອົບອຸ່ນນີ້ ແລະ ຫັນໄປຍັງຂອບຟ້າແຫ່ງພຣະຜູ້ເປັນທີ່ຮັກ."[76]

"ຈົ່ງໃຫ້ວິນຍານຂອງເຈົ້າລຸກໄໝ້ດ້ວຍແປວເພີງແຫ່ງໄຟທີ່ບໍ່ມີວັນດັບນີ້ ເຊິ່ງເຜົາໄໝ້ຢູ່ໃນຈຸດໃຈກາງຂອງໂລກ, ໃນທຳນອງດຽວກັນ ເພື່ອໃຫ້ນ້ຳໃນຈັກກະວານບໍ່ມີພະລັງໃດທີ່ຈະຫຼຸດຄວາມຮ້ອນຂອງມັນລົງໄດ້."[77]

"ຈົ່ງເຜົາເຈົ້າໃຫ້ສະຫວ່າງສະໄຫວດ້ວຍແປວເພີງແຫ່ງໄຟທີ່ບໍ່ມີວັນດັບ ເຊິ່ງພຣະຜູ້ຊົງຄວາມເມດຕາ ຊົງຈຸດຂຶ້ນໃນຈຸດໃຈກາງຂອງສັບພະສິ່ງສ້າງສັນ, ເພື່ອວ່າຄວາມຮັກອັນອົບອຸ່ນຂອງພຣະອົງຈະຈຸດປະກາຍຂຶ້ນໃນຫົວໃຈ ຂອງຜູ້ເປັນທີ່ໂປດປານຂອງພຣະອົງ. ຈົ່ງດຳເນີນຕາມ

**ທາງຂອງເຮົາພຣະອົງ ແລະ ເຮັດໃຫ້ຫົວໃຈຂອງມະນຸດປິຕິຍິນດີ ດ້ວຍການລະລຶກເຖິງພຣະອົງ, ພຣະຜູ້ຊົງອານຸພາບ, ພຣະຜູ້ຊົງສູງສົ່ງທີ່ສຸດ.”[78]**

**“ຈົ່ງຈຸດໄຟແຫ່ງຄວາມຮັກ ແລະ ເຜົາໄໝ້ທຸກສິ່ງ; ແລ້ວກ້າວຍ່າງເຂົ້າໄປໃນດິນແດນຂອງຜູ້ເປັນທີ່ຮັກ.”[79]**

______________________________________________

______________________________________________

______________________________________________

______________________________________________

______________________________________________

ພະຍາຍາມທ່ອງຈຳຢ່າງໜ້ອຍໜຶ່ງຂໍ້ຄວາມຈາກແຕ່ລະຊຸດຂໍ້ຄວາມຂ້າງເທິງ.

**ຕອນທີ 18**

ຕອນນີ້ຂໍໃຫ້ພວກເຮົາໄປເບິ່ງເລື່ອງລາວໃນບົດທີ 17 ຫາ 20. ຫຼັງຈາກນັ້ນໃຫ້ອ່ານຄືນແຕ່ລະເລື່ອງ, ຈົ່ງພິຈາລະນາຄຳຖາມຂ້າງລຸ່ມຮ່ວມກັບສະມາຊິກໃນກຸ່ມຂອງເຈົ້າ.

ໃນບົດທີ 17 ເຈົ້າຈະເລົ່າເລື່ອງກ່ຽວກັບ ອາລີ-ອັສກາ, ເຖິງແມ່ນວ່າຕອນທີ່ເຂົາຖືກຂົ່ມຂູ່ຈາກເຈົ້າໜ້າຜູ້ທຸດຈະລິດ, ກໍ່ບໍ່ອາດຖືກຊັກຈູງໃຫ້ຂີ້ຕົວະ ແລະ ສໍ້ໂກງ. ເດັກນ້ອຍຮູ້ດີຢູ່ແລ້ວວ່າການຂີ້ຕົວະບໍ່ເປັນທີ່ພໍພຣະໄທໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ. ເລື່ອງລາວຈະເຮັດໃຫ້ພວກເຂົາເຫັນວ່າການເຊື່ອຟັງຄຳສອນຂອງພຣະຜູ້ເປັນເຈົ້າ ເປັນແຫຼ່ງທີ່ມາຂອງຄວາມກ້າຫານ, ເຊິ່ງເປັນຫົວຂໍ້ຂອງບົດຮຽນ. ສ່ວນໃດຂອງເລື່ອງລາວທີ່ຈະຊ່ວຍໃຫ້ພວກເຂົາເຊື່ອມໂຍງກັບຫົວຂໍ້ນີ້ໄດ້? ມີລາຍລະອຽດສຳຄັນໃດແດ່ທີ່ເຈົ້າຕ້ອງເນັ້ນໜັກໃນການເລົ່າເຫດການຕ່າງໆ ເພື່ອໃຫ້ເດັກນ້ອຍຕິດຕາມເລື່ອງລາວ ແລະ ເຂົ້າໃຈປະເດັນສຳຄັນນີ້?

______________________________________________

______________________________________________

______________________________________________

______________________________________________

______________________________________________

ບົດທີ 18 ກ່ຽວຂ້ອງກັບຄຸນລັກສະນະຂອງຄວາມຫວັງ, ແລະ ເຈົ້າຈະບອກເດັກນ້ອຍເຖິງເລື່ອງລາວຂອງຜູ້ຊາຍທີ່ສິ້ນຫວັງ ໄດ້ຮັບການຟື້ນຟູໂດຍ ພຣະອັບດຸລບາຮາ. ພຣະອົງສະແດງຄວາມ

ເມດຕາຕໍ່ຊາຍຄົນນັ້ນ ແລະ ເຂົາວ່າຊາຍຄົນນັ້ນຮັ່ງມີໃນອານາຈັກຂອງພຣະຜູ້ເປັນເຈົ້າ. ການຮັ່ງມີໃນອານາຈັກຂອງພຣະຜູ້ເປັນເຈົ້າ ບໍ່ໄດ້ໝາຍຄວາມວ່າພວກເຮົາມີຄວາມຮັ່ງມີທາງດ້ານວັດຖຸ. ມັນໝາຍຄວາມວ່າແນວໃດ? ຄຳຕັກເຕືອນຂອງ ພຣະອັບດຸລບາຮາເຮັດໃຫ້ມະນຸດມີຄວາມໄວ້ວາງໃຈໃນຄວາມກະລຸນາຂອງພຣະຜູ້ເປັນເຈົ້າເພີ່ມຂຶ້ນໄດ້ແນວໃດ? ເຈົ້າຈະຊ່ວຍເດັກນ້ອຍໃຫ້ຮູ້ຈັກແນວໃດວ່າ, ຫາກປາດສະຈາກຄວາມໄວ້ວາງໃຈໃນພຣະຜູ້ເປັນເຈົ້າ, ກໍເປັນການຍາກທີ່ຈະຍັງຄົງມີຄວາມຫວັງ?

________________________________________________________

________________________________________________________

________________________________________________________

________________________________________________________

________________________________________________________

ຄວາມໄວ້ວາງໃຈເປັນຫົວຂໍ້ຂອງບົດທີ 19, ແລະ ເພື່ອສະແດງໃຫ້ເຫັນເຖິງຄວາມສຳຄັນຂອງຄຸນລັກສະນະນີ້ ເຈົ້າຈະບອກນັກຮຽນຂອງເຈົ້າເຖິງເລື່ອງລາວຂອງ ມູຮຳໝັດ-ຕາກີ, ເປັນຜູ້ທີ່ຖືກໄວ້ວາງໃຈໂດຍ ພຣະອັບດຸລບາຮາ ໃຫ້ເຮັດໜ້າທີ່ການຮັບ ແລະ ການແຈກຢາຍຈົດໝາຍໃນດິນແດນສັກສິດ. ມີລາຍລະອຽດຫຼາຍຢ່າງທີ່ເຈົ້າຈຳເປັນຕ້ອງຈື່ໄວ້ເມື່ອທຳການເລົ່າເລື່ອງ ເພື່ອໃຫ້ເດັກນ້ອຍບໍ່ພາດຈາກແນວຄິດຫຼັກ. ລາຍລະອຽດເລົ່ານັ້ນມີຫຍັງແດ່? ໃນການອະທິບາຍກ່ຽວກັບ ມູຮຳໝັດ-ຕາກີ, ເຈົ້າຈະໃຊ້ຄຳວ່າ "ເຊື່ອຖືໄດ້" ແລະ "ເພິ່ງພາໄດ້". ເຈົ້າຄິດວ່າເປັນໄປໄດ້ບໍ່ທີ່ຈະບໍ່ເອົາໃຈໃສ່ ແລະ ມີຄວາມໄວ້ວາງໃຈໃນເວລາດຽວກັນ?

________________________________________________________

________________________________________________________

________________________________________________________

________________________________________________________

________________________________________________________

ຮູບລັກສະນະຂອງ ໂທມັດ ແບຣກເວວ ເປັນສູນກາງຂອງເລື່ອງລາວໃນບົດທີ 20, ເຊິ່ງກ່ຽວກັບການເຜົາໄໝ້. ເປັນຄຳປຽບທຽບຂອງທຽນທີ່ຖືກຈຸດ, ແປວໄຟທີ່ລຸກໄໝ້, ໄຟທີ່ສະຫວ່າງ ມັກຖືກໃຊ້ໃນຄຳສອນເພື່ອຊ່ວຍໃຫ້ເຮົາເຂົ້າໃຈ ເຖິງຄຸນລັກສະນະຂອງການເຜົາໄໝ້-ຄວາມຮັກຢ່າງເຂັ້ມຂົ້ນທີ່ພວກເຮົາມີຕໍ່ພຣະຜູ້ເປັນເຈົ້າໃນຫົວໃຈຂອງພວກເຮົາ. ເຈົ້າຄວນມີຄວາມໝັ້ນໃຈວ່າ, ດ້ວຍຄຳປຽບທຽບ ນັກຮຽນຂອງເຈົ້າຈະເຂົ້າໃຈບາງຢ່າງວ່າ ການເຜົາໄໝ້ໝາຍເຖິງຫຍັງ. ຄວາມສາມາດໃນການຄິດສະຫຼຸບຫຍໍ້ຂອງເດັກນ້ອຍຈະເລີ່ມມີຂຶ້ນຕັ້ງແຕ່ອາຍຸຍັງນ້ອຍ, ແລະ ມັນຈະພັດທະນາຄວາມຄ່ອງແຄ້ວໃນການໃຊ້ພາສາໃຫ້ເຕີບໂຕຂຶ້ນ. ເມື່ອນຶກເຖິງສິ່ງເລົ່ານີ້, ຂໍໃຫ້ລະບຸວ່າສ່ວນໃດຂອງເລື່ອງລາວສະແດງໃຫ້ເຫັນວ່າ ໂທມັດ ແບຣກເວວ ໄດ້ຖືກເຜົາໄໝ້ດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າແນວໃດ. ມີລາຍລະອຽດບາງຢ່າງໃດແດ່ທີ່ເຮັດໃຫ້ເລື່ອງລາວໜ້າຕິດຕາມ?

ຕອນທີ 19

ຄາດວ່າເຈົ້າ ແລະ ເພື່ອນຜູ້ເຂົ້າຮ່ວມກຸ່ມຂອງເຈົ້າໄດ້ຮັບແຮງບັນດານໃຈ ຈາກການເຝິກອົງປະກອບຕ່າງໆຂອງບົດທີ 17 ຫາ 20 ແລະຕອນນີ້ເຈົ້າພ້ອມທີ່ຈະກ້າວໄປສູ່ສີ່ບົດສຸດທ້າຍຂອງລະດັບທີ 1, ບົດທີ 21 ຫາ 24. ເຈົ້າອາດຕ້ອງການທ່ອງບົດສວດອະທິຖານນີ້ຈົດຈື່ ເພື່ອສວດເລີ້ມຕົ້ນຊັ້ນຮຽນໃນທຸກໄລຍະ:

> **"ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ, ຂໍຊົງສ້າງຈິດໃຈທີ່ບໍລິສຸດຂຶ້ນໃນຂ້າພະອົງ ແລະ ຟື້ນຟູມະໂນທັມທີ່ສະຫງົບພາຍໃນຂ້າພະອົງ, ໂອ ຄວາມຫວັງຂອງຂ້າພະອົງ! ດ້ວຍຈິດວິນຍານແຫ່ງອຳນາດ ຢືນຢັນພຣະອົງໃນຈຸດປະສົງຂອງພຣະອົງ, ໂອ ພຣະຜູ້ເປັນທີ່ຮັກຍິ່ງຂອງຂ້າພະອົງ, ແລະ ດ້ວຍແສງແຫ່ງຄວາມຮຸ່ງເຮືອງຂອງພຣະອົງໄດ້ເປີດເຜີຍເສັ້ນທາງຂອງພຣະອົງແກ່ຂ້າພະອົງ, ໂອ ພຣະອົງເປັນເປົ້າໝາຍແຫ່ງຄວາມປາດຖະໜາ! ດ້ວຍອຳນາດເໜືອທຳມະຊາດຂອງພຣະອົງ ຈະຍົກຂ້າພະອົງຂຶ້ນສູ່ສະຫວັນແຫ່ງຄວາມສັກສິດຂອງພຣະອົງ, ໂອ ແຫຼ່ງທີ່ມາຂອງການດຳລົງຢູ່ຂອງຂ້າພະອົງ, ແລະ ດ້ວຍສາຍລົມແຫ່ງຄວາມເປັນນິລັນດອນຂອງພຣະອົງເຮັດໃຫ້ຂ້າພະອົງປິຕິຍິນດີ, ໂອ ພຣະອົງຜູ້ເປັນພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂໍໃຫ້ທຳນອງອັນບໍ່ຮູ້ສິ້ນຂອງພຣະອົງດົນເອົາຄວາມສັນຕິສຸກມາແກ່ຂ້າພະອົງ, ໂອ ເພື່ອນຮ່ວມເດີນທາງຂອງຂ້າພະອົງ, ແລະ ຂໍໃຫ້ຄວາມຮັ່ງມີແຫ່ງພຣະສຸລະພັກທີ່ຄົງຢູ່ຂອງພຣະອົງຊ່ວຍຂ້າພະອົງໃຫ້ລອດພົ້ນຈາກທຸກສິ່ງນອກຈາກພຣະອົງ, ໂອ ພຣະຜູ້ເປັນນາຍຂອງຂ້າພະອົງ, ແລະ ຂໍໃຫ້ຂ່າວການເປີດເຜີຍແກ່ນແທ້ທີ່ບໍ່ມີວັນເສື່ອມສະຫຼາຍຂອງພຣະອົງ ເຮັດໃຫ້ຂ້າພະອົງມີຄວາມສຸກຫັນສາ, ໂອ ພຣະອົງຜູ້ຊົງເປັນທີ່ປະຈັກແຈ້ງທີ່ສຸດ ໃນສິ່ງທີ່ປະກົດຢ່າງຊັດເຈນ ແລະ ຊົງເລັ້ນລັບທີ່ສຸດໃນບັນດາສິ່ງທີ່ເລັ້ນລັບ!"**[80]

ຂ້າງລຸ່ມນີ້ເປັນບົດສວດອະທິຖານບົດສຸດທ້າຍຂອງລະດັບນີ້ທີ່ໃຫ້ເດັກນ້ອຍຈື່ຈຳ. ແມ່ນວ່າພວກເຂົາຈະເຂົ້າໃຈຄວາມສຳຄັນຂອງບົດສວດອະທິຖານນີ້ໄດ້ງ່າຍ, ແຕ່ເຈົ້າກໍຄວນຕັດສິນໃຈວ່າ ເຈົ້າຈະອະທິບາຍແນວໃດ ຄຳສັບ ຫຼື ວະລີທີ່ເຫັນວ່າເປັນຄຳສັບໃໝ່ ຫຼື ບໍ່ຄຸ້ນເຄີຍສຳລັບພວກເຂົາ.

**"ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂ້າພະອົງເປັນເດັກນ້ອຍ, ໂປດອຸ້ມຊູຂ້າພະອົງໃຫ້ຂ້າພະອົງໄດ້ເຂົ້າໄປໃນອານາຈັກ. ຂ້າພະອົງເປັນຄົນເດີນດິນ, ໂປດເຮັດໃຫ້ຂ້າພະອົງເປັນຊາວສະຫວັນ; ຂ້າພະອົງມາຈາກໂລກເບື້ອງລຸ່ມ, ຂໍໃຫ້ຂ້າພະອົງຢູ່ໃນອານາຈັກເບື້ອງບົນ; ຄວາມມືດມົນທຸກທໍລະມານໃຫ້ຂ້າພະອົງກາຍເປັນຜ່ອງໃສ; ທາງວັດຖຸເຮັດໃຫ້ຂ້າພະອົງມີທາງຈິດວິນຍານ, ແລະ ຂໍໃຫ້ຂ້າພະອົງສະແດງຄວາມກະລຸນາອັນບໍ່ຮູ້ສິ້ນຂອງພຣະອົງ.**

**"ພຣະອົງຊົງເປັນຜູ້ຊົງອຳນາດ, ພຣະຜູ້ຊົງເປັນທີ່ຮັກຍິ່ງທັງປວງ."**[81]

____________________________________________

____________________________________________

____________________________________________

____________________________________________

____________________________________________

## ຕອນທີ 20

ຂໍໃຫ້ອ່ານສີ່ບົດສຸດທ້າຍທີ່ເຈົ້າຈະສອນໃນຊັ້ນຮຽນລະດັບ 1, ໃຫ້ຄວາມສົນໃຈເປັນພິເສດເຊັ່ນເຄີຍກັບແນວຄິດທີ່ເຈົ້າຈະແບ່ງປັນກັບນັກຮຽນຂອງເຈົ້າ ເພື່ອແນະນຳບັນດາພຣະວັດຈະນະທີ່ພວກເຂົາຈະທ່ອງໃຫ້ຂຶ້ນໃຈ. ຂໍໃຫ້ຂຽນຄຸນລັກສະນະທີ່ເນັ້ນໜັກໃນແຕ່ລະບົດຮຽນ.

ບົດທີ 21: ____________________________________

ບົດທີ 22: ____________________________________

ບົດທີ 23: ____________________________________

ບົດທີ 24: ____________________________________

ພຣະວັດຈະນະຕໍ່ໄປນີ້ຈະຊ່ວຍໃຫ້ເຈົ້າ ແລະ ສະມາຊິກຄົນອື່ນໃນກຸ່ມຂອງເຈົ້າມີໂອກາດໄຕ່ຕອງຮ່ວມກັນກ່ຽວກັບຄຸນລັກສະນະທາງຈິດວິນຍານ ທີ່ກ່າວເຖິງໃນບົດຮຽນເລົ່ານີ້, ເຊັ່ນດຽວກັບທີ່ເຈົ້າໄດ້ກະທຳມາແລ້ວໃນບົດທີ່ຜ່ານມາ.

ຄຳສອນບອກພວກເຮົາກ່ຽວກັບຄວາມສຳຄັນຂອງຄວາມສະຫວ່າງສະໄຫວ:

**"ໂອ ແປວເພີງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ! ລັງສີຕ້ອງສາຍແສງ ແລະ ດວງຕາເວັນຕ້ອງຮຸ່ງຂຶ້ນ; ພະຈັນເຕັມດວງຕ້ອງສ່ອງແສງ ແລະ ດວງດາວຕ້ອງເປັນປະກາຍ. ເນື່ອງຈາກເຈົ້າເປັນລັງສີໜຶ່ງ, ເຈົ້າຈົ່ງອ້ອນວອນພຣະຜູ້ເປັນເຈົ້າ ເພື່ອໃຫ້ເຈົ້າສາມາດໃຫ້ແສງສະຫວ່າງ**

ແລະ ການຕັດສະຣູ້, ເພື່ອເຮັດໃຫ້ຂອບຟ້າເປັ່ງປະກາຍ ແລະ ເຜົາຜານໂລກດ້ວຍໄຟແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ."[82]

"ໂອ ປະຊາຊົນ, ຂໍໃຫ້ພວກເຈົ້າຈົ່ງຢູ່ຮ່ວມກັນດ້ວຍຄວາມສະຫວ່າງສະໄຫວ ແລະ ຄວາມສຸກທັນສາ."[83]

"ພຣະຜູ້ເປັນເຈົ້າປ່ຽມດ້ວຍຄວາມຮັກທັງປວງ ໄດ້ຊົງສ້າງມະນຸດເພື່ອສ່ອງສະຫວ່າງແສງແຫ່ງສະຫວັນ ແລະ ສ່ອງແສງໂລກດ້ວຍຖ້ອຍຄຳ, ການກະທຳ ແລະ ຊີວິດຂອງພວກເຂົາ."[84]

"ການຮັບໃຊ້ມະນຸດຊາດຄືການຮັບໃຊ້ພຣະຜູ້ເປັນເຈົ້າ. ຂໍໃຫ້ຄວາມຮັກ ແລະ ແສງສະຫວ່າງແຫ່ງອານາຈັກ ສ່ອງຜ່ານເຈົ້າໄປຈົນກວ່າທຸກຄົນທີ່ເບິ່ງເຈົ້າຈະສ່ອງແສງດ້ວຍການສະທ້ອນແສງ. ຈົ່ງເປັນດັ່ງດວງດາວທີ່ເປັນປະກາຍ ແລະ ລະຫຍິບລະຫຍັບໃນຄວາມສູງສົ່ງ ນະສະຖານທີ່ອັນເປັນສະຫວັນຂອງພວກເຂົາ."[85]

________________________________________

________________________________________

________________________________________

________________________________________

________________________________________

ຈາກຂໍ້ຄວາມເລົ່ານີ້, ເຮົາໄດ້ຮັບຄວາມຢັ່ງຮູ້ກ່ຽວກັບຄຸນລະນະຂອງ ຄວາມຈົງຮັກພັກດີ:

"ຄວາມຮຸ່ງເຮືອງຂອງພຣະຜູ້ເປັນເຈົ້າ ຢູ່ນະທີ່ຕົວຂອງເຈົ້າ, ເມື່ອທຸກໆດວງໃຈທີ່ໝັ້ນຄົງ ແລະບໍ່ສັ່ນຄອນ ແລ້ວເມື່ອທຸກໆວິນຍານແນ່ວແນ່ ແລະ ຈົງຮັກພັກດີ."[86]

"ເຈົ້າຈົ່ງບອກຂ່າວສານ ແກ່ບັນດາຍິງຮັບໃຊ້ຂອງພຣະຜູ້ຊົງຄວາມເມດຕາວ່າ ເມື່ອການທົດສອບກາຍເປັນຄວາມຮຸນແຮງ ພວກເຂົາຈະຕ້ອງບໍ່ຫວັ່ນໄຫວ, ແລະ ຈົງຮັກພັກດີຕໍ່ຄວາມຮັກທີ່ພວກເຂົາມີຕໍ່ບາຮາ. ໃນລະດູໜາຍຈະມີພາຍຸ, ແລະ ລົມພັດມາຢ່າງໜັກ, ແຕ່ຫຼັງຈາກນັ້ນ ຈະຕາມມາດ້ວຍຄວາມງົດງາມຂອງລະດູໃບໄມ້ປົ່ງ, ປະດັບປະດາເນີນເຂົາ ແລະ ທົ່ງພຽງດ້ວຍພຶກສາອັນຫອມຫວນ ແລະ ດອກໄມ້ສີແດງທີ່ສວຍງາມໜ້າຊົມ."[87]

"ໃນມື້ນີ້, ຜູ້ທີ່ພຣະຜູ້ເປັນເຈົ້າຊົງໂປດປານນະທຳລະນີປະຕູຂອງພຣະຜູ້ເປັນເຈົ້າ ຄືຜູ້ທີ່ຢືນຈອກແຫ່ງຄວາມຈົງຮັກພັກດີ; ຜູ້ທີ່ມອບອັນຍະມະນີແຫ່ງຄວາມກະລຸນາໃຫ້ແມ່ນແຕ່ກັບເລົ່າສັດຕູ

**ຂອງເຂົາ, ແລະ ໃຫ້ຢືນແມ່ນແຕ່ກັບຜູ້ທີ່ຖືກກົດຂີ່ໃຫ້ຕົກຕ່ຳຂອງເຂົາ, ດ້ວຍມືທີ່ຊ່ວຍເຫຼືອ; ເຂົາຄືຄົນທີ່ຈະເປັນເພື່ອນຮັກແມ່ນແຕ່ກັບສັດຕູທີ່ຮ້າຍກາດທີ່ສຸດຂອງເຂົາ."[88]**

---

---

---

---

---

ຈາກຂໍ້ຄວາມຂ້າງລຸ່ມບອກພວກເຮົາກ່ຽວກັບຄວາມອົດທົນ:

**"ໂອ ບຸດແຫ່ງມະນຸດ! ສຳລັບທຸກສິ່ງນັ້ນມີສັນຍາລັກ. ສັນຍາລັກຂອງຄວາມຮັກຄືຄວາມເຂັ້ມແຂງພາຍໃຕ້ກົດຂອງພຣະອົງ ແລະ ຄວາມອົດທົນພາຍໃຕ້ການທົດສອບຂອງພຣະອົງ."[89]**

**"ພຣະພອນຈົ່ງມີແດ່ຜູ້ທີ່ອົດທົນຢ່າງແນ່ວແນ່, ຜູ້ທີ່ອົດທົນຕໍ່ຄວາມເຈັບປ່ວຍ ແລະ ຄວາມຍາກລຳບາກຕ່າງໆ, ຜູ້ທີ່ບໍ່ຄ່ຳຄວນເຖິງສິ່ງໃດທີ່ປະສົບແກ່ພວກເຂົາ, ແລະ ຜູ້ທີ່ເດີນບົນເສັ້ນທາງແຫ່ງການຍອມຮັບໃນສິ່ງທີ່ບໍ່ປາດຖະໜາ."**

"ຈົ່ງພໍໃຈໃນສິ່ງທີ່ຖືກກຳໜົດໄວ້ໂດຍກົດທີ່ບໍ່ອາດເພີກຖອນໄດ້, ແລະ ຈົ່ງຢູ່ໃນໝູ່ຜູ້ມຸມານະດ້ວຍຄວາມອົດທົນ."[91]

"ມັນເປັນໜ້າທີ່ຂອງຜູ້ໃດກໍ່ຕາມ ທີ່ມຸ່ງໜ້າໄປຍັງຂອບຟ້າທີ່ປະເສີດທີ່ສຸດຂອງພຣະອົງ ເພື່ອຍຶດໝັ້ນໃນສາຍໃຍແຫ່ງຄວາມອົດທົນ, ແລະ ວາງໃຈໃນພຣະຜູ້ເປັນເຈົ້າ, ພຣະຜູ້ຊົງຊ່ວຍເຫຼືອ, ພຣະຜູ້ບໍ່ມີຂໍ້ຈຳກັດ."[92]

---

---

---

---

---

ແລະ ພວກເຮົາອ່ານຂໍ້ຄວາມຕໍ່ໄປນີ້ກ່ຽວກັບຄວາມໝັ້ນຄົງ:

"ໜ້າທີ່ທຳອິດ ແລະ ສຳຄັນທີ່ສຸດທີ່ກຳໜົດໃຫ້ມະນຸດ, ຮອງຈາກການຍອມຮັບພຣະອົງ ພຣະຜູ້ຊົງເປັນສັດຈະທັມນິລັນອດນ, ຄືໜ້າທີ່ຂອງຄວາມໝັ້ນຄົງໃນການເປີດເຜີຍພຣະທັມຂອງພຣະອົງ."[93]

"ດັ່ງທີ່ກ່າວມາ ເຈົ້າຕ້ອງມີຄວາມໝັ້ນຄົງໃນການເປີດເຜີຍພຣະທັມຂອງພຣະຜູ້ເປັນເຈົ້າ, ບໍ່ມີສິ່ງໃດໆໃນໂລກນີ້ຈະມີພະລັງຂັດຂວາງເຈົ້າຈາກໜ້າທີ່ຂອງເຈົ້າ."[94]

"ຈົ່ງດຳເນີນຊີວິດຢ່າງໝັ້ນຄົງ ໃນຄວາມຮັກຂອງພຣະຜູ້ເປັນເຈົ້າ, ແລະ ຍຶດໝັ້ນໃນຄວາມສັດທາຂອງພຣະອົງ, ແລະ ຊ່ວຍເຫຼືອພຣະອົງຜ່ານພະລັງແຫ່ງວາທະຂອງເຈົ້າ."[95]

"ດ້ວຍຕີນອັນໝັ້ນຄົງ ພວກເຮົາອາດກ້າວສູ່ເສັ້ນທາງແຫ່ງຄວາມເຊື່ອໝັ້ນ, ບາງເທື່ອສາຍລົມທີ່ພັດມາຈາກທົ່ງຫຍ້າ ແຫ່ງຄວາມພໍພຣະໄທຂອງພຣະຜູ້ເປັນເຈົ້າ ອາດພັດພາກິ່ນອັນຫອມຫວານແຫ່ງການຍອມຮັບຈາກເບື້ອງບົນມາສູ່ພວກເຮົາ, ແລະ ເຮັດໃຫ້ການລະຖິ້ມມະນຸດທີ່ເຮົາເປັນ, ເພື່ອບັນລຸເຖິງອານາຈັກແຫ່ງຄວາມຮຸ່ງເຮືອງອັນບໍ່ຮູ້ສິ້ນ."[96]

"ຈົ່ງໝັ້ນໃຈ ແລະ ໝັ້ນຄົງ; ການຮັບໃຊ້ຂອງເຈົ້າໄດ້ຮັບການຢັ້ງຢືນໂດຍພະລັງແຫ່ງສະຫວັນ, ເພາະເຈດຕະນາຂອງເຈົ້າສູງສົ່ງ, ຈຸດປະສົງຂອງເຈົ້າບໍລິສຸດ ແລະ ມີຄຸນຄ່າ."[97]

______________________________________________

______________________________________________

______________________________________________

______________________________________________

______________________________________________

ພະຍາຍາມທ່ອງຈຳຢ່າງໜ້ອຍໃຫ້ໄດ້ໜຶ່ງຂໍ້ຄວາມຈາກແຕ່ລະຊຸດຂໍ້ຄວາມຂ້າງເທິງ.

## ຕອນທີ 21

ຕອນນີ້ໃຫ້ພວກເຮົາມາເບິ່ງສີ່ເລື່ອງລາວສຸດທ້າຍ ທີ່ເຈົ້າຈະເລົ່າໃຫ້ນັກຮຽນຂອງເຈົ້າຟັງ, ເຊິ່ງເຈົ້າຈະໃຊ້ເວລາຫຼາຍຊົ່ວໂມງອັນແສນວິເສດຮ່ວມກັນ, ບຸກບືນບຳລຸງລ້ຽງນັກຮຽນດ້ວຍຄຸນລັກສະນະທາງຈິດວິນຍານທີ່ພວກເຂົາໄດ້ຮຽນຮູ້. ຫຼັງຈາກອ່ານຄືນແຕ່ລະເລື່ອງລາວ, ຂໍໃຫ້ປຶກສາກັນກັບກຸ່ມຂອງເຈົ້າຕາມຄຳຖາມຂ້າງລຸ່ມ.

ໃນບົດທີ 21, ເດັກນ້ອຍຈະໄດ້ຟັງເລື່ອງລາວກ່ຽວກັບ ໂດໂຣທີ ເບເກີ ຕອນທີ່ລາວເປັນເດັກຍິງ, ເມື່ອລາວພົບກັບ ພຣະອັບດຸລບາຣາ ເປັນຄັ້ງທຳອິດ. ພວກເຈົ້າຈະເຫັນໄດ້ວ່າ, ໃນການເດີນເລື່ອງ, ລາວກາຍເປັນຜູ້ທີ່ຫຼົງໄຫຼໃນຄວາມສະຫວ່າງສະໄຫວຂອງພຣະອົງ, ເຊິ່ງເປັນຫົວຂໍ້ຫຼັກ. ຄວາມສະຫວ່າງສະໄຫວຂອງພຣະອັບດຸລບາຣາ ມີຜົນແນວໃດຕໍ່ ໂດໂຣທີ? ເຈົ້າຫວັງວ່າເລື່ອງລາວຈະເພີ່ມຄວາມຜູກພັນຂອງເດັກນ້ອຍກັບ ພຣະອັບດຸລບາຣາ ໄດ້ແນວໃດ?

ຫົວຂໍ້ຂອງບົດທີ 22 ຄືຄວາມຈົງຮັກພັກດີ, ເປັນຄຸນລັກສະນະໜຶ່ງທີ່ສະແດງຈາກເລື່ອງລາວຂອງ ອິດຟາດີຢາ. ສ່ວນໃດແດ່ຂອງເລື່ອງທີ່ກ່ຽວຂ້ອງໂດຍກົງກັບຫົວຂໍ້ນີ້ຫຼາຍທີ່ສຸດ? ອິດຟາດີຢາສະແດງໃຫ້ເຫັນຄຸນລັກສະນະທາງຈິດວິນຍານອັນໃດອີກ ທີ່ຊ່ວຍໃຫ້ລາວຍັງຄົງມີຄວາມຈົງຮັກພັກດີ? ລາຍລະອຽດໃດແດ່ທີ່ເຈົ້າແນ່ໃຈວ່າ ຈະຕ້ອງປະກອບໃສ່ໃນການເລົ່າເລື່ອງຂອງເຈົ້າ?

ບົດທີ 23 ເນັ້ນຄຸນລັກສະນະຂອງຄວາມອົດທົນ. ໃນເລື່ອງ, ລີ ຊິນ ສະແດງຄວາມອົດທົນໃນຂະນະທີ່ລາວດູແລຕົ້ນໝາກຄາຍຂອງລາວ ຕອນທີ່ມັນຜ່ານໄລຍະຕ່າງໆຂອງການຈະເລີນເຕີບໂຕ-ຈາກເມັດພືດນ້ອຍໆ ຈົນໄປເຖິງຕົ້ນໄມ້ທີ່ອອກໝາກໃນທີ່ສຸດ. ເລື່ອງລາວນີ້ເນັ້ນຢ້ຳເຖິງລາງວັນຂອງຄວາມສຸກຫັນສາທີ່ໄດ້ມາຈາກຄວາມອົດທົນ ເຝິກຝົນພະຍາຍາມມາເປັນເວລາຍາວນານ ແລະສະແດງໃຫ້ເຫັນເລື້ອຍໆ, ກວ່າຈະເຫັນໝາກຜົນແຫ່ງຄວາມພະຍາຍາມຂອງພວກເຮົາ, ພວກເຮົາຕ້ອງໃຊ້ຄວາມພະຍາຍາມຫຼວງຫຼາຍ. ໃນລັກສະນະນີ້ເປັນຫຍັງຈຶ່ງເບິ່ງວ່າ ຄຸນລັກສະນະທາງຈິດວິນຍານຂອງຄວາມອົດທົນ ມັນສຳຄັນສຳລັບເດັກນ້ອຍ? ລາຍລະອຽດໃດແດ່ທີ່ເຈົ້າຈະຕ້ອງເຂົ້າໃຈຊັດເຈນ ໃນຂະນະທີ່ເລົ່າເລື່ອງໃຫ້ກັບນັກຮຽນຂອງເຈົ້າ?

ບົດທີ 24 ເຈົ້າຈະເລົ່າໃຫ້ເດັກນ້ອຍຟັງເລື່ອງຂອງ ບາຣີຢີ ຄານຸມ, ຜູ້ເປັນນ້ອຍສາວຂອງພຣະອັບດຸລບາຮາ. ເລື່ອງລາວຈະສະແດງໃຫ້ພວກເຂົາເຫັນວ່າ ບາຣີຢີ ຄານຸມ ສະແດງຄວາມໝັ້ນຄົງໃນການປະເຊີນກັບຄວາມຂັດສົນ. ແຕ່ວ່າເຈົ້າຈະຕ້ອງການໃຫ້ພວກເຂົາລະຖິ້ມຄວາມເຂົ້າໃຈທີ່ວ່າ ຄວາມໝັ້ນຄົງໃນຄວາມຮັກຂອງພຣະຜູ້ເປັນເຈົ້າ ກ່ຽວຂ້ອງຫຼາຍກວ່າການເອົາຊະນະວິກິດ ຫຼື ຄວາມຍາກລຳບາກໃດໆ. ເລື່ອງໃນຊີວິດຂອງລາວຈະເຮັດໃຫ້ເດັກໆໄດ້ເຫັນເຖິງຄວາມເຂັ້ມແຂງ ແລະ ຄວາມໝັ້ນຄົງທີ່ແນ່ວແນ່ໃນການເປີດເຜີຍຂອງພຣະຜູ້ເປັນເຈົ້າໄດ້ແນວໃດ?

**ຕອນທີ 22**

ໃນພາກນີ້, ເຈົ້າໄດ້ຄິດກ່ຽວກັບບັນດາຄຸນລັກສະນະທາງຈິດວິນຍານ ທີ່ເຈົ້າຈະຄົ້ນຫາກັບເດັກນ້ອຍໃນລະດັບທຳອິດ ແລະ ໄດ້ເຝິກປະຕິບັດຕາມອົງປະກອບຕ່າງໆຂອງບົດຮຽນຊາວສີ່ບົດ ທີ່ເຈົ້າຈະສອນພວກເຂົາໂດຍຫວັງວ່າ ຈະມີສ່ວນຊ່ວຍໃນການພັດທະນາອຸປະນິໄສຂອງພວກເຂົາ. ຕອນນີ້ຂໍໃຫ້ໃຊ້ເວລາແປບໜຶ່ງ ເພື່ອນຶກເຖິງຄຸນລັກສະນະທາງຈິດວິນຍານທັງໝົດ ທີ່ເຈົ້າຈະໄດ້ຮັບຄວາມກະລຸນາໃນການຊ່ວຍເຫຼືອນັກຮຽນໃຫ້ພັດທະນາໃນລະດັບທີ 1. ຈາກສິ່ງເລົ່ານີ້, ເບິ່ງເໝາະສົມແລ້ວວ່າ, ຄວາມໝັ້ນຄົງໃນຄວາມຮັກຂອງພຣະຜູ້ເປັນເຈົ້າ ເປັນຫົວຂໍ້ທີ່ພວກເຂົາຈະສະຫຼຸບບົດຮຽນເລົ່ານີ້, ດັ່ງທີ່ກ່າວໄວ້ກ່ອນໜ້ານີ້ດ້ວຍເຊັ່ນກັນ, ມັນສຳຄັນຕໍ່ພວກເຂົາ ທີ່ຈະເລີ້ມຕົ້ນໂດຍການເນັ້ນໜັກໃສ່ຄວາມບໍລິສຸດຂອງຫົວໃຈ. ເມື່ອເຈົ້າເລີ້ມດຳເນີນພະຍາຍາມສອນຄັ້ງທຳອິດ, ເຈົ້າຄວນທົບທວນຢູ່ສະເໝີວ່າ ຄວາມຮັກທີ່ໝັ້ນຄົງຂອງພຣະອົງ ຈະຊ່ວຍໃຫ້ນັກຮຽນທີ່ຢູ່ໃນຄວາມດູແລຂອງເຈົ້າພາກພຽນ ໃນຄວາມພະຍາຍາມຂອງພວກເຂົາ ທີ່ຈະສະແດງຄຸນລັກສະນະທັງໝົດ ເໝືອນອັນຍະມະນີທີ່ເຊື່ອງຊ້ອນໃນຕົວຂອງພວກເຂົາ.

# ບົດຮຽນ 24 ບົດ ສຳລັບເດັກນ້ອຍ

## ບົດທີ 1

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ເພື່ອດຶງດູດພຣະພອນຈາກສະຫວັນ ແລະ ສ້າງບັນຍາກາດທາງຈິດວິນຍານ, ຂໍໃຫ້ເລີ້ມຊັ້ນຮຽນດ້ວຍການທ່ອງອອກສຽງຈາກຄວາມຊົງຈຳ ບົດສວດອະທິຖານທີ່ເຈົ້າຮູ້ຈັກນັ້ນ, ເຊັ່ນມີບົດໜຶ່ງທີ່ໄດ້ແນະນຳໃນຕອນທີ 2. ຈາກນັ້ນ ເຈົ້າສາມາດຂໍໃຫ້ເດັກນ້ອຍຜູ້ໃດຜູ້ໜຶ່ງທີ່ຮູ້ບົດສວດອະທິຖານບົດໜຶ່ງໄດ້ຂຶ້ນໃຈ ທີ່ລາວສາມາດທ່ອງອອກສຽງໃນຊັ້ນຮຽນນັ້ນ. ຫຼັງຈາກນັ້ນ, ພວກເຂົາຈະທ່ອງຈຳບົດສວດອະທິຖານຂ້າງລຸ່ມ. ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈເຖິງຄວາມສຳຄັນຂອງບົດສວດອະທິຖານ, ໃຫ້ລະບຸຄຳສັບໃດທີ່ເຈົ້າຄິດວ່າອາດຈະຕ້ອງອະທິບາຍດ້ວຍຕົວຢ່າງທີ່ເປັນຮູບປະທຳ. ຄາດວ່າເດັກນ້ອຍຫຼາຍຄົນຈະຮຽນຮູ້ຄຳສັບໄດ້ຢ່າງງ່າຍດາຍ, ແຕ່ເຈົ້າຄວນທວນຄືນກັບພວກເຂົາອີກຕອນເລີ້ມຊັ້ນຮຽນອີກສາມຄັ້ງຕໍ່ໄປ, ສະນັ້ນເມື່ອໄປເຖິງບົດທີ 5 ເວລາທີ່ພວກເຂົາເລີ້ມຮຽນບົດສວດອະທິຖານໃໝ່, ແລ້ວບົດສວດອະທິຖານນີ້ຈຶ່ງຖືກຈາກລຶກໄວ້ໃນຫົວໃຈ ແລະ ຄວາມຄິດຂອງພວກເຂົາ.

**"ພຣະອົງຄືພຣະຜູ້ເປັນເຈົ້າ! ໂອ ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂໍຊົງບັນດານໃຫ້ຫົວໃຈຂອງຂ້າພະອົງບໍລິສຸດ, ດັ່ງເຊັ່ນໄຂ່ມຸກແກ່ຂ້າພະອົງ."**[98]

ເນື່ອງຈາກໃນບົດຮຽນສອງສາມບົດທຳອິດ ບົດສວດອະທິຖານທີ່ເດັກນ້ອຍຈະທ່ອງຈຳນັ້ນສັ້ນ, ເຈົ້າຈະມີຫຼາຍໂອກາດທີ່ຈະປຶກສາຫາລືກັບພວກເຂົາເຖິງແນວຄິດບາງຢ່າງ ທີ່ໄດ້ກ່າວໄວ້ໃນຕອນທີ 2 ກ່ຽວກັບຄວາມເຄົາລົບບູຊາ ແລະ ລັກສະນະຂອງການສວດອະທິຖານ.

### B. ບົດເພງ

ຫຼັງຈາກຊ່ວງເວລາທີ່ອຸດທິດໃຫ້ແກ່ການສວດອະທິຖານ, ເດັກນ້ອຍສາມາດຮຽນຮ້ອງບົດເພງຕໍ່ໄປນີ້, ເຊິ່ງເອົາພຣະວັດຈະນະທີ່ກ່ຽວຂ້ອງກັບຫົວຂໍ້ຂອງບົດຮຽນ ຫົວໃຈອັນບໍລິສຸດ ມາໃສ່ດົນຕີ, ແລ້ວພວກເຂົາຈະທ່ອງຈຳໃນພາຍຫຼັງ. ເນື່ອງຈາກວ່າບາງຄຳສັບອາດຈະຍາກສຳລັບຄົນລຸ້ນເຍົາ, ເຈົ້າສາມາດຊ່ວຍພວກເຂົາຮຽນຮ້ອງສີ່ແຖວທຳອິດ, ແລ້ວສືບຕໍ່ຮຽນຄຳທີ່ເຫຼືອ.

**ຄຳແນະນຳເບື້ອງຕົ້ນຂອງພຣະອົງ**

C C/B Am C/B
ໂອ ບຸດແຫ່ງທັມ!
C C/B Am C/B

ໂອ ບຸດແຫ່ງທັມ!

F G

ຄຳແນະນຳເບື້ອງຕົ້ນຂອງພຣະອົງຄື

F G

ຄຳແນະນຳເບື້ອງຕົ້ນຂອງພຣະອົງຄື

F G C Am

ຈົ່ງມີຫົວໃຈອັນບໍລິສຸດ, ເມດຕາ ແລະ ຜ່ອງໃສ

F G C Am

ເພື່ອວ່າຕົວເຈົ້າເອງ ຈະດຳລົງຢູ່ໃນອານາຈັກ

F G C C/B Am C/B

ອັນຍັ້ງຢືນ, ຖາວອນ ແລະ ບໍ່ຮູ້ສິ້ນ

F G C

ອັນຍັ້ງຢືນ, ຖາວອນ

## C. ການທ່ອງຈຳພຣະວັດຈະນະ

ກິດຈະກຳຕໍ່ໄປ, ເດັກນ້ອຍຈະທ່ອງຈຳພຣະວັດຈະນະໜຶ່ງຈາກຄຳສອນຂອງບາຮາຍ. ເຈົ້າສາມາດແນະນຳຫົວຂໍ້ຂອງບົດຮຽນ ແລະ ການທ່ອງຈຳພຣະວັດຈະນະ ໃນລັກສະນະຕໍ່ໄປນີ້:

ຫົວໃຈຂອງເຮົາປຽບເໝືອນກະຈົກ. ເຮົາຄວນຮັກສາກະຈົກນັ້ນໃຫ້ສະອາດຢູ່ສະເໝີ. ຄວາມກຽດຊັງຜູ້ໃດຜູ້ໜຶ່ງ, ຄວາມຮູ້ສຶກອິດສາຜູ້ໃດຜູ້ໜຶ່ງ, ແລະ ໄຮ້ຄວາມກະລຸນາຕໍ່ຜູ້ອື່ນ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ - ສິ່ງເລົ່ານີ້ເປັນເໝືອນຝຸ່ນທີ່ປົກຄຸມກະຈົກຂອງຫົວໃຈພວກເຮົາ. ເມື່ອຫົວໃຈຂອງເຮົາບໍລິສຸດ, ຫົວໃຈນັ້ນຈະສະທ້ອນແສງຂອງພຣະຜູ້ເປັນເຈົ້າ ແລະ ຄຸນລັກສະນະຂອງພຣະອົງ - ຄຸນລັກສະນະຕ່າງໆເຊັ່ນ ຄວາມກາລຸນາ, ຄວາມຮັກ, ແລະ ຄວາມເອື້ອເຟື້ອ - ແລະເຮົາກໍ່ຈະກາຍເປັນຕົ້ນເຫດແຫ່ງຄວາມສຸກໃຫ້ແກ່ຜູ້ອື່ນ. ເພື່ອຊ່ວຍໃຫ້ຫົວໃຈຂອງພວກເຮົາບໍລິສຸດ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະນີ້ຂອງ ພຣະບາຮາອຸລລາຫ໌:

**"ໂອ ບຸດແຫ່ງທັມ! ຄຳແນະນຳແລກຂອງພຣະອົງຄື: ຈົ່ງມີຫົວໃຈອັນບໍລິສຸດ, ເມດຕາ ແລະ ຜ່ອງໃສ..."**[99]

ເດັກຈະສາມາດຮຽນຮູ້ກ່ຽວກັບພຣະວັດຈະນະໄດ້ງ່າຍຂຶ້ນ ຖ້າພວກເຂົາເຂົ້າໃຈພຣະວັດຈະນະເປັນຢ່າງດີ. ດັ່ງນັ້ນ, ຈຶ່ງຂໍແນະນຳໃຫ້ເຈົ້າໃຊ້ເວລາໄລຍະໜຶ່ງ ເພື່ອການປຶກສາຫາລືຄວາມໝາຍ

ຂອງຄຳສັບ ແລະ ວະລີຕ່າງໆຮ່ວມກັບເດັກ. ຕໍ່ໄປນີ້ແມ່ນບາງປະໂຫຍກທີ່ຈະຊ່ວຍເຈົ້າໃນການອະທິບາຍກັບເດັກໆ:

*ຄຳແນະນຳ*

1. ມື້ໜຶ່ງ ກີຣາດ ແລະ ມາຣີ ໄດ້ທາສີຮູບແຕ້ມ. ກີຣາດ ຕ້ອງການສີທຽນສີເຫຼືອງ, ແຕ່ ມາຣີ ບໍ່ຕ້ອງການທີ່ຈະເອົາສີນັ້ນໃຫ້ລາວ. ຄູໄດ້ບອກ ມາຣີ ວ່ານາງຄວນແບ່ງປັນ. ຄູໃຫ້ຄຳແນະນຳທີ່ດີແກ່ ມາຣີ.
2. ພາທຣີເຊຍ ຕ້ອງຕັດສິນໃຈວ່າ ຈະໃຊ້ເງິນຂອງນາງຈ່າຍເຂົ້າໜົມອົມ ຫຼື ປຶ້ມນິທານ. ພໍ່ແມ່ຂອງນາງແນະນຳໃຫ້ນາງຊື້ປຶ້ມນິທານ. ພໍ່ແມ່ຂອງນາງໃຫ້ຄຳແນະນຳທີ່ດີແກ່ ພາທຣີເຊຍ.

*ມີ*

1. ທິນາຍ ມັກອ່ານບົດສວດອະທິຖານກ່ອນນອນ. ນາງອ່ານຈາກປຶ້ມສວດອະທິຖານຫົວນ້ອຍທີ່ມີ. ທິນາຍ ມີປຶ້ມສວດອະທິຖານຫົວນ້ອຍ.
2. ພວກເຮົາປູກຜັກແຊບໆຫຼາຍຊະນິດຢູ່ໃນສວນຂອງພວກເຮົາ. ພວກເຮົາມີທີ່ດິນດີໆໄວ້ໃຫ້ຜັກສົດຫຼາຍຊະນິດ.

*ຫົວໃຈອັນບໍລິສຸດ*

1. ເຄທີ ໃຈຮ້າຍແລະເວົ້າຄຳທີ່ບໍ່ສຸພາບກັບ ອາກອດ. ອາກອດ ເສຍໃຈແຕ່ກໍໃຫ້ອະໄພແກ່ ເຄທີຢ່າງໄວວາ. ອາກອດ ມີຫົວໃຈອັນບໍລິສຸດ.
2. ແກັດສ໌ຕາໂວ ມັກແບ່ງປັນຄຸກກີ້ຂອງລາວກັບເດັກນ້ອຍທຸກຄົນ, ແມ່ນແຕ່ ຈອດຊ໌, ຜູ້ທີ່ບໍ່ໄດ້ແບ່ງປັນຫຍັງໃຫ້ກັບຄົນອື່ນ. ແກັດສ໌ຕາໂວ ມີຫົວໃຈອັນບໍລິສຸດ.

*ຫົວໃຈທີ່ເມດຕາ*

1. ເມື່ອພໍ່ແມ່ຂອງນາງເຊີນໝູ່ເພື່ອນໄປບ້ານ, ໝິງຫຼີງ ເສີບອາຫານໃຫ້ແກ່ເຂົາເຈົ້າຢ່າງມີຄວາມສຸກ. ໝິງຫຼີງ ມີຫົວໃຈທີ່ເມດຕາ.
2. ທ່ານ ໂຣເບີດສັນ ມີອາຍຸຫຼາຍ. ຈິມມີ້ ຊ່ວຍລາວຖືໝາກໄມ້ທີ່ລາວເກັບກ່ຽວໄປຕະຫຼາດ. ຈິມມີ້ ມີຫົວໃຈທີ່ເມດຕາ.

*ຫົວໃຈທີ່ຜ່ອງໃສ*

1. ເມື່ອຂ້ອຍຮູ້ສຶກໂສກເສົ້າ, ແມ່ກໍໃຫ້ກຳລັງໃຈຂ້ອຍສະເໝີ ແລະ ເຮັດໃຫ້ຂ້ອຍມີຄວາມສຸກ. ແມ່ຂອງຂ້ອຍມີຫົວໃຈທີ່ຜ່ອງໃສ.
2. ໂອບູຍະ ເຈັບປ່ວຍ ແລະ ຕ້ອງໃຊ້ເວລາທັງໝົດຂອງເຂົາຢູ່ເທິງຕຽງນອນ. ລາວອ່ານຫຼາຍໆ ບົດສວດອະທິຖານ, ແລ້ວບໍ່ໄດ້ໂສກເສົ້າ, ແລະ ສືບຕໍ່ສະແດງຄວາມສຸກອອກມາ. ໂອບູຍະ ມີຫົວໃຈທີ່ຜ່ອງໃສ.

## D. ເລື່ອງລາວ

ເມື່ອເດັກທ່ອງຈຳພຣະວັດຈະນະໄດ້ແລ້ວ, ເຈົ້າສາມາດເລົ່າເລື່ອງຂ້າງລຸ່ມນີ້ກ່ຽວກັບ ພຣະອັບດຸລບາຮາ ທີ່ສະແດງໃຫ້ເຫັນຢ່າງຊັດເຈນຫຼາຍຂຶ້ນ ເຖິງຄວາມສຳຄັນຂອງການມີຫົວໃຈບໍລິສຸດ. ຂໍໃຫ້ຈື່ໄວ້ວ່າ, ຖ້າຫາກຄົນລຸ້ນເຍົາໃນຊັ້ນຮຽນຂອງເຈົ້າບໍ່ຮູ້ຈັກ ພຣະອັບດຸລບາຮາ, ເຈົ້າຄວນກະກຽມຄຳເວົ້າເພື່ອກ່າວກ່ຽວກັບພຣະອົງ ກ່ອນເລີ້ມເລົ່າເລື່ອງ.

*ພຣະອັບດຸລບາຮາ ສາມາດບອກສິ່ງທີ່ຢູ່ໃນໃຈຂອງຄົນອື່ນໄດ້ສະເໝີ, ແລະ ພຣະອົງເອງຮັກຄົນທີ່ມີຫົວໃຈທີ່ບໍລິສຸດ ແລະ ຜ່ອງໃສເປັນຢ່າງຍິ່ງ. ມີແມ່ຍິງຄົນໜຶ່ງໄດ້ຮັບກຽດອັນຍິ່ງໃຫຍ່ໃນການຮ່ວມຮັບປະທານອາຫານຄໍ່າກັບ ພຣະອັບດຸລບາຮາ. ໃນຂະນະທີ່ລາວກຳລັງນັ່ງຟັງຖ້ອຍຄຳອັນປ່ຽມໄປດ້ວຍອັດສະລິຍະພາບຂອງພຣະອົງຢູ່ນັ້ນ, ລາວກໍ່ເບິ່ງໄປທີ່ຈອກນ້ຳທີ່ວາງຢູ່ຕໍ່ໜ້າຂອງລາວ ແລະ ຄິດວ່າ, "ໂອ! ຖ້າ ພຣະອັບດຸລບາຮາ ຈະນຳເອົາຫົວໃຈຂອງຂ້າພະອົງໄປ ແລະ ເຮັດໃຫ້ມັນວ່າງເປົ່າ ປັດສະຈາກເຊິ່ງຄວາມປາດຖະໜາທາງໂລກ ແລະຈາກນັ້ນເຕີມເຕັມຫົວໃຈຂອງຂ້າພະອົງດ້ວຍຄວາມຮັກ ແລະ ຄວາມເຂົ້າໃຈແຫ່ງສະຫວັນ, ເໝືອນກັບຈອກນ້ຳໜ່ວຍນີ້ທີ່ຖືກເຕີມໃຫ້ເຕັມດ້ວຍນ້ຳ."*

*ຄວາມຄິດນີ້ແລ່ນຜ່ານສະໝອງຂອງລາວຢ່າງວ່ອງໄວ, ແລະ ລາວກໍ່ບໍ່ໄດ້ເວົ້າຫຍັງເລີຍກ່ຽວກັບເລື່ອງນີ້, ແຕ່ຕໍ່ມາບໍ່ດົນປານໃດກໍ່ມີບາງຢ່າງເກີດຂຶ້ນ ທີ່ເຮັດໃຫ້ລາວຮູ້ແຈ້ງໄດ້ວ່າ ພຣະອັບດຸລບາຮາ ຮູ້ໃນສິ່ງທີ່ລາວໄດ້ກຳລັງຄິດ. ໃນລະຫວ່າງທີ່ ພຣະອັບດຸລບາຮາ ກ່າວສູນທອນລະພົດຢູ່ນັ້ນ, ພຣະອົງກໍ່ຢຸດກ່າວເພື່ອເອີ້ນຜູ້ດູແລມາຫາ ແລະ ກ່າວສອງສາມຖ້ອຍຄຳຢ່າງນຸ້ມນວນກັບຜູ້ດູແລຄົນນັ້ນ. ຜູ້ດູແລຄົນນັ້ນໄປບ່ອນນັ່ງຂອງແມ່ຍິງຄົນນັ້ນຢ່າງວ່ອງໄວ, ແລ້ວນຳເອົາຈອກຂອງລາວໄປຖອກນ້ຳອອກຈົນວ່າງເປົ່າ, ແລະ ນຳມາວາງໄວ້ຄືນຕໍ່ໜ້າຂອງລາວ.*

*ຫຼັງຈາກນັ້ນອີກບໍ່ດົນ, ໃນຄະນະທີ່ ພຣະອັບດຸລບາຮາ ກຳລັງກ່າວສູນທອນລະພົດຂອງພຣະອົງ, ພຣະອົງກໍ່ຈັບຍົກເອົາໂຖນ້ຳຂຶ້ນຈາກໂຕະ, ແລ້ວຄ່ອຍໆເຕີມຄືນໃສ່ຈອກນ້ຳທີ່ວ່າງເປົ່າຂອງແມ່ຍິງຄົນນັ້ນ ດ້ວຍທ່າທີທີ່ເປັນທຳມະຊາດ. ບໍ່ມີໃຜສັງເກດເຫັນວ່າເກີດຫຍັງຂຶ້ນ, ແຕ່*

*ແມ່ຍິງຄົນນັ້ນຮູ້ດີວ່າ ພຣະອັບດຸລບາຮາ ຊຶ່ງກຳລັງຕອບຄວາມປາດຖະໜາຂອງລາວ. ລາວມີຄວາມຮູ້ສຶກປິຕິຍິນດີເປັນຢ່າງຍິ່ງ. ໃນຕອນນີ້ລາວຮູ້ແລ້ວວ່າຫົວໃຈ ແລະ ຄວາມຄິດຂອງຄົນທັງຫຼາຍ ເປັນເໝືອນໜັງສືເປີດອອກກວ້າງສຳລັບ ພຣະອັບດຸລບາຮາ, ພຣະຜູ້ຊຶ່ງອ່ານໜັງສືເຫຼົ່ານັ້ນດ້ວຍຄວາມຮັກ ແລະ ຄວາມເມດຕາອັນໃຫຍ່ຫຼວງ.*

## E. ເກມ: "ການແບ່ງປັນ"

ກິດຈະກຳຕໍ່ໄປ, ໃຫ້ວາງຕີນລົດໃຫຍ່ໄວ້ເທິງພື້ນ ແລະ ຈາກນັ້ນຂໍໃຫ້ເດັກນ້ອຍລອງຢືນເບິ່ງວ່າຈະຢືນພ້ອມກັນໄດ້ຈັກຄົນ. ຖ້າຫາກບໍ່ມີຕີນລົດໃຫຍ່, ເຈົ້າສາມາດໃຊ້ສາດ ຫຼື ຜ້າແພ, ຫຼື ສິ່ງຂອງບາງຢ່າງທີ່ຄ້າຍຄືກັນ, ວາງເທິງພື້ນແທນ. ສິ່ງຂອງໃດກໍຕາມທີ່ເຈົ້າເລືອກ, ມັນຄວນຈະນ້ອຍພຽງພໍທີ່ຈະເຮັດໃຫ້ເກມນັ້ນທ້າທາຍ ສຳລັບຈຳນວນເດັກນ້ອຍໃນຊັ້ນຮຽນ.

## F. ການທາສີ: ຮູບທີ 1

ຫຼັງຈາກຫຼິ້ນເກມແລ້ວ, ເຈົ້າສາມາດເຕົ້າໂຮມເດັກນ້ອຍ ແລະ ແຈກສຳເນົາຮູບທີ 1 ໃຫ້ພວກເຂົາແຕ່ລະຄົນເພື່ອທາສີ, ອະທິບາຍພຣະວັດຈະນະທີ່ພວກເຂົາໄດ້ທ່ອງຈຳ ແມ່ນຢູ່ລຸ່ມຂອງໜ້າເຈ້ຍຮູບ ແລະ ເວົ້າບາງຄຳທີ່ເຈົ້າໄດ້ກະກຽມໄວ້ລ່ວງໜ້າ ວ່າຮູບພາບກ່ຽວຂ້ອງກັບຫົວຂໍ້ຂອງບົດຮຽນຄືແນວໃດ.

## G. ການສວດອະທິຖານປິດ

ເພື່ອເປັນການປິດຊັ້ນຮຽນ, ສາມາດຂໍໃຫ້ເດັກສອງສາມຄົນ ທ່ອງອອກສຽງບົດສວດອະທິຖານບົດໜຶ່ງທີ່ພວກເຂົາເຈົ້າຮູ້ຈັກ ຫຼື ພຣະວັດຈະນະຈາກຄວາມຊົງຈຳທີ່ພວກເຂົາເຄີຍໄດ້ຮຽນ. ແລ້ວຈາກນັ້ນ ເຈົ້າກໍສາມາດສະເໜີຂໍສວດບົດສຸດທ້າຍ.

# ບົດທີ 2

## A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ຂໍແນະນຳໃຫ້ເຈົ້າເປີດຊັ້ນຮຽນຄັ້ງນີ້ ແລະ ອີກສອງຄັ້ງຂອງຊັ້ນຮຽນຕໍ່ໄປດ້ວຍບົດສວດອະທິຖານທີ່ເຈົ້າໄດ້ທ່ອງອອກສຽງໃນຕອນເລີ່ມຕົ້ນ ບົດທີ 1. ຈາກນັ້ນ ເຈົ້າສາມາດຂໍໃຫ້ເດັກນ້ອຍສອງສາມຄົນ ທີ່ເລືອກໄວ້ແລ້ວລ່ວງໜ້າ, ໃຫ້ແຕ່ລະຄົນສວດບົດທີ່ພວກເຂົາຮູ້. ຫຼັງຈາກນັ້ນ, ສືບຕໍ່ຊ່ວຍນັກຮຽນທ່ອງຈຳບົດສວດອະທິຖານທີ່ແນະນຳໃນບົດຮຽນທີ່ຜ່ານມາ.

B. ບົດເພງ

ກິດຈະກຳຕໍ່ໄປ, ເດັກນ້ອຍສາມາດຮ້ອງສອງເພງ - ເພງໜຶ່ງແມ່ນຈາກບົດຮຽນຜ່ານມາ ແລະ ເພງໃໝ່ຂ້າງລຸ່ມນີ້ກ່ຽວກັບຄວາມຍຸຕິທັມ, ເຊິ່ງເປັນຫົວຂໍ້ຂອງບົດຮຽນ.

**ຫົນທາງປະເສີດ**

D
ຄວາມຍຸຕິທັມຄືຫົນທາງປະເສີດ
A D
ຄວາມຍຸຕິທັມນຳພາວັນທີ່ສົດໃສກວ່າ
G D
ເປັນແສງໄຟແກ່ຜູ້ທີ່ຕ້ອງການ
A D
ສ່ອງແສງຜ່ານການທຳຄວາມດີ
D A D
ໂອ, ຄວາມຍຸຕິທັມຄືຫົນທາງ

D
ພວກເຮົາຮູ້ ພຣະອັບດຸລບາຮາ ຈະແບ່ງປັນ
A D
ສະແດງຄວາມຮັກ ແລະຄວາມຫ່ວງໃຍ
G D
ພຣະອົງພໍໃຈກັບສິ່ງເລັກນ້ອຍ
A D
ເພື່ອນຳມາເຊິ່ງຄວາມສຸກ
D A D
ພຣະອົງພໍໃຈກັບສິ່ງເລັກນ້ອຍ
D
ເພື່ອຄວາມຍຸຕິທັມພວກເຮົາຕ້ອງມອບ
A D
ແບ່ງປັນຄວາມຮັກ ແລະ ຄວາມສຸກໃນຊີວິດ

G D
ແບ່ງປັນພຣະພອນທີ່ເຮົາຮັບ
A D
ເພື່ອໂລກທີ່ດີກວ່າ ເຮົາຈະປະສົບຜົນສຳເລັດ
D A D
ໂອ, ຄວາມຍຸຕິທັມຄືຫົນທາງ
*(ອ່ານຄືນວັກທຳອິດ, ແລ້ວຮ້ອງແຖວສຸດທ້າຍ)*

## C. ການທ່ອງຈຳພຣະວັດຈະນະ

ຫຼັງຈາກຮ້ອງສອງເພງແລ້ວ, ເຈົ້າຈະຊຸກຍູ້ໃຫ້ເດັກນ້ອຍທ່ອງຈຳພຣະວັດຈະນະໜຶ່ງ ຈາກຄຳສອນຂອງ ພຣະບາຮາອຸລລາຫ໌. ນີ້ແມ່ນແນວຄວາມຄິດບາງຢ່າງເພື່ອໃຫ້ເຈົ້ານຳສະເໜີຫົວຂໍ້ຂອງບົດຮຽນ ແລະ ພຣະວັດຈະນະທີ່ໄດ້ແນະນຳ:

ພຣະຜູ້ເປັນເຈົ້າຊົງຮັກຄວາມຍຸຕິທັມ. ເມື່ອມີຄວາມຍຸຕິທັມ ທຸກຄົນຍ່ອມມ່ວນຊື່ນກັບສິ່ງດີໆໃນຊີວິດ. ເດັກທຸກຄົນສາມາດໄປໂຮງຮຽນ, ທຸກຄອບຄົວມີບ້ານທີ່ສະດວກສະບາຍ, ແລະ ຜູ້ທີ່ມີຫຼາຍຍິນດີມອບພຣະພອນທີ່ພວກເຂົາໄດ້ຮັບຈາກພຣະຜູ້ເປັນເຈົ້າ ເພື່ອປະໂຫຍດຂອງຜູ້ອື່ນ. ພຣະຜູ້ເປັນເຈົ້າຊົງພໍພຣະໄທໃນຕົວພວກເຮົາ ເມື່ອເວລາທີ່ພວກເຮົາປະຕິບັດກັບຜູ້ອື່ນ ດ້ວຍຄວາມເປັນທັມ ແລະ ຄວາມຍຸຕິທັມ. ຖ້າຫາກພວກເຮົາເຫັນໃຜຖືກທຳຮ້າຍ, ພວກເຮົາຄວນຍືນຢັດເພື່ອຄົນເລົ່ານັ້ນ ແລະ ຊ່ວຍເຫຼືອພວກເຂົາ. ພວກເຮົາບໍ່ຄວນເອົາເຄື່ອງຂອງໆເພື່ອນ ຫຼື ຂອງເພື່ອນບ້ານ. ເມື່ອຈະແບ່ງປັນສິ່ງໃດ, ພວກເຮົາຕ້ອງໃຫ້ແນ່ໃຈວ່າຈະບໍ່ມີຜູ້ໃດທີ່ຖືກປະຖິ້ມ ແລະ ທຸກຄົນຕ້ອງໄດ້ຮັບສ່ວນແບ່ງທີ່ຍຸຕິທັມ. ເພື່ອຊ່ວຍໃຫ້ພວກເຮົາເປັນຄົນທ່ຽງທັມ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຂອງ ພຣະບາຮາອຸລລາຫ໌:

**"ພວກເຈົ້າຈົ່ງເດີນໄປຕາມຫົນທາງແຫ່ງຄວາມຍຸຕິທັມ, ເພາະຫົນທາງນີ້, ຄືຫົນທາງຕົງຢ່າງແທ້ຈິງ."**[100]

ເປັນສິ່ງສຳຄັນເພື່ອໃຫ້ໝັ້ນໃຈວ່າ ເດັກນ້ອຍມີຄວາມເຂົ້າໃຈພື້ນຖານກ່ຽວກັບພຣະວັດຈະນະຂ້າງເທິງ ກ່ອນທີ່ພວກເຂົາຈະເລີ້ມທ່ອງຈຳພຣະວັດຈະນະ. ສອງສາມປະໂຫຍກຂ້າງລຸ່ມນີ້ ມີໄວ້ເພື່ອຊ່ວຍເຈົ້າໃນການອະທິບາຍຄວາມໝາຍຂອງຄຳສັບທີ່ອາດເປັນຄຳໃໝ່ສຳລັບພວກເຂົາ.

*ເດີນ*

1. ໃບໄມ້ຈຳນວນຫຼວງຫຼາຍລົ່ນລົງມາຈາກຕົ້ນໄມ້ໃນປ່າ, ປົກຄຸມຫົນທາງເດີນໄວ້. ຟູມິໂກະ ຍ່າງຜ່ານປ່ານັ້ນ. ລາວເດີນໃນຫົນທາງທີ່ປົກຄຸມດ້ວຍໃບໄມ້.
2. ເປໂດຣ ມັກຊ່ວຍເຫຼືອເພື່ອນໆທຸກຄົນຂອງເຂົາໃຫ້ຫຼິ້ນນຳກັນຢ່າງມີຄວາມສຸກ. ເປໂດຣ ກັບເພື່ອນຂອງເຂົາສາມັກຄີກັນຫຼາຍ. ເປໂດຣ ເດີນໃນຫົນທາງແຫ່ງຄວາມສາມັກຄີ.

*ຫົນທາງ*

1. ລູອິດ ມີໂຕລໍຢູ່ໂຕໜຶ່ງ. ເຂົາໄດ້ພາມັນອອກໄປກິນຫຍ້າໃນທົ່ງຫຍ້າ ແລະ ປະມັນໄວ້ຕາມລຳພັງ. ໂຕລໍໂຕນັ້ນໄດ້ພົບຫົນທາງກັບບ້ານດ້ວຍຕົວມັນເອງ.
2. ມີທາງໄປໂຮງຮຽນໄດ້ສອງທາງ. ມິນລີ ມັກເລືອກໄປຫົນທາງທີ່ຜ່ານເຮືອນຂອງແມ່ຕູ້ຂອງລາວ.

*ຄວາມຍຸຕິທັມ*

1. ຄາລອສ໌ ໄດ້ຮັບສີທຽນມາຫຼາຍກ້ານເພື່ອແຈກລະຫວ່າງຊັ້ນຮຽນ. ມີສີທຽນຈຳນວນ 10 ກ້ານ ແລະ ເດັກນ້ອຍ 5 ຄົນ. ຄາລອສ໌ ຈຶ່ງໄດ້ແບ່ງປັນສີທຽນໃຫ້ເພື່ອນໆຄົນລະສອງກ້ານ. ຄາລອສ໌ ໄດ້ສະແດງອອກເຖິງຄວາມຍຸຕິທັມ ດ້ວຍການແຈກສີທຽນ.
2. ແອນນາ ມີນ້ຳຫຼວງຫຼາຍໃນນ້ຳສ້າງທີ່ຢູ່ໃນສ່ວນຂອງລາວ, ແຕ່ບາງຄັ້ງນ້ຳສ້າງຂອງເພື່ອນບ້ານຂອງລາວກໍແຫ້ງ. ແອນນາ ບໍ່ເຄີຍປ່ອຍໃຫ້ເພື່ອນບ້ານເດືອດຮ້ອນ ແລະ ລາວຍິນດີໃຫ້ມາເອົານ້ຳໄດ້ຕະຫຼອດ. ແອນນາ ຮັກຄວາມຍຸຕິທັມ.

## D. ເລື່ອງລາວ

ຫຼັງຈາກທີ່ເດັກນ້ອຍຮຽນທ່ອງອອກສຽງ ພຣະວັດຈະນະຈາກຄວາມຊົງຈຳແລ້ວ, ເຈົ້າສາມາດເລົ່າເລື່ອງຂ້າງລຸ່ມນີ້ກ່ຽວກັບ ພຣະອັບດຸລບາຮາ ຊົງສະແດງຄວາມຍຸຕິທັມທີ່ພຣະອົງມີຄືແນວໃດ.

*ມີມື້ໜຶ່ງ ພຣະອັບດຸລບາຮາ ຕ້ອງການທີ່ຈະເດີນທາງຈາກເມືອງອັກຄາໄປທີ່ເມືອງໄຮຟາ. ພຣະອົງຈຶ່ງໄປຊື້ປີ້ລົດ ເພື່ອເດີນທາງດ້ວຍລົດໂດຍສານຊັ້ນທຳມະດາລາຄາບໍ່ແພງ ເຊິ່ງປົກກະຕິແລ້ວຈະແອອັດເຕັມໄປດ້ວຍຜູ້ຄົນ. ຄົນຂັບລົດຮູ້ສຶກແປກໃຈ ແລະ ຈົນຕ້ອງຖາມພຣະອົງວ່າ ເຫດໃດ ພຣະອັບດຸລບາຮາ ຈຶ່ງໄດ້ມີຄວາມປະຢັດມັດທະຍັດ ເດີນທາງດ້ວຍລົດໂດຍສານລາຄາຖືກ. ເຂົາໄດ້ອຸທານຂຶ້ນວ່າ "ແນ່ນອນວ່າ, ນາຍທ່ານເລືອກທີ່ຈະເດີນທາງດ້ວຍລົດມ້າສ່ວນຕົວ." ພຣະອັບດຸລບາຮາ ຊົງຕອບວ່າ "ບໍ່ແມ່ນດອກ," ແລ້ວພຣະອົງກໍ່ເດີນທາງໄປໃນລົດໂດຍສານທຳມະດາຕະຫຼອດເສັ້ນທາງຈົນເຖິງເມືອງໄຮຟາ. ໃນຕອນທີ່ພຣະອົງກ້າວລົງຈາກລົດຄັນນັ້ນໃນເມືອງໄຮຟາ ກໍ່ມີແມ່ຍິງຫາປາຄົນໜຶ່ງ ທີ່ມີທ່າທາງເປັນທຸກເຂົ້າມາຫາພຣະອົງ ແລະ*

*ໄດ້ຂໍຄວາມຊ່ວຍເຫຼືອຈາກພຣະອົງ. ໜຶດນີ້ແມ່ຍິງຜູ້ນັ້ນຫາປາບໍ່ໄດ້ຈັກໂຕ ແລະ ຕອນນີ້ລາວຈະຕ້ອງກັບບ້ານດ້ວຍມືເປົ່າໄປຫາຄອບຄົວຂອງລາວທີ່ກຳລັງຫິວໂຫຍ. ພຣະອັບດຸລບາຣາ ໄດ້ໃຫ້ເງິນຈຳນວນໜຶ່ງແກ່ລາວ, ແລ້ວພຣະອົງກໍ່ຫັນມາຫາຄົນຂັບລົດແລ້ວກ່າວວ່າ, "ຂ້າພະເຈົ້າຈະຕ້ອງນັ່ງລົດຫຼູຫຼາໄປເຮັດຫຍັງ ໃນຂະນະທີ່ມີຄົນອີກຈຳນວນຫຼາຍກຳລັງອຶດຢາກ?"*

## E. ເກມ: "ຫິວນ້ຳຢ່າງສຸດຂີດ"

ຕໍ່ຈາກຊ່ວງທີ່ໄດ້ອຸດທິໃຫ້ການເລົ່າເລື່ອງ, ເດັກນ້ອຍກໍຈະກະຕືລືລົ້ນຫຼິ້ນເກມ. ໃຫ້ມັດທ່ອນໄມ້ຕິດໃສ່ແຂນຂອງພວກເຂົາ ເພື່ອບໍ່ສາມາດງໍແຂນສອກໄດ້, ຈາກນັ້ນບອກໃຫ້ພວກເຂົາທຳທ່າວ່າຍ່າງໄປນຳກັນໃນທະເລຊາຍ ແລະ ທຸກຄົນກໍຫິວນ້ຳແຮງຫຼາຍ. ເມື່ອພວກເຂົາເຫັນນ້ຳໃນຈອກທີ່ເຈົ້າກຽມໄວ້ໃຫ້ພວກເຂົາ, ພວກເຂົາຕ້ອງຊອກວິທີດື່ມນ້ຳນັ້ນ. ພວກເຂົາຈະພົບວ່າມີພຽງວິທີດຽວທີ່ຈະເຮັດໄດ້ແມ່ນຕ້ອງຊ່ວຍເຫຼືອເຊິ່ງກັນແລະກັນ, ໂດຍລະວັງບໍ່ໃຫ້ຜູ້ອື່ນປຽກນ້ຳ.

## F. ການທາສີ: ຮູບທີ 2

ກິດຈະກຳຕໍ່ໄປ, ແຈກສຳເນົາຮູບທີ 2 ໃຫ້ເດັກແຕ່ລະຄົນເພື່ອທາສີ. ເຈົ້າຄວນເຕືອນເດັກນ້ອຍວ່າ ພຣະວັດຈະນະທີ່ພວກເຂົາໄດ້ທ່ອງຈຳ ແມ່ນຢູ່ລຸ່ມຂອງໜ້າເຈ້ຍຮູບ ແລະ ຄວນກະກຽມທີ່ຈະເວົ້າບາງຄຳ ວ່າຮູບພາບນັ້ນກ່ຽວຂ້ອງກັບຫົວຂໍ້ຂອງບົດຮຽນຄືແນວໃດ.

## G. ການສວດອະທິຖານປິດ

ເມື່ອເດັກນ້ອຍທາສີແລ້ວໆ, ເຈົ້າສາມາດເຊີນພວກເຂົາສອງສາມຄົນ ໃຫ້ສວດອະທິຖານໜຶ່ງບົດ ຫຼື ພຣະວັດຈະນະທີ່ພວກເຂົາໄດ້ທ່ອງຈຳໃນບົດນີ້ ແລະ ບົດຮຽນທີ່ຜ່ານມາ. ແລ້ວຈາກນັ້ນ ເຈົ້າກໍສາມາດສະເໜີຂໍສວດບົດສຸດທ້າຍ.

# ບົດທີ 3

## A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ເປີດຊັ້ນຮຽນດ້ວຍການທ່ອງອອກສຽງບົດສວດອະທິຖານຈາກຄວາມຊົງຈຳ ແລະ ຂໍໃຫ້ເດັກນ້ອຍສອງສາມຄົນທີ່ເລືອກໄວ້ແລ້ວອ່ານຄົນລະບົດ. ຈາກນັ້ນ ເຈົ້າສາມາດໃຊ້ເວລາໄລຍະໜຶ່ງກັບນັກຮຽນຂອງເຈົ້າ ເພື່ອທວນຄືນບົດສວດອະທິຖານທີ່ພວກເຂົາໄດ້ເລີ່ມຮຽນໃນບົດທີ 1.

B. ບົດເພງ

ເລີ່ມກິດຈະກຳຕໍ່ໄປໂດຍການໃຫ້ເດັກນ້ອຍຮ້ອງສອງເພງ ທີ່ພວກເຂົາໄດ້ຮຽນໃນບົດຮຽນທີ່ຜ່ານມາແລ້ວ. ຈາກນັ້ນ ສອນພວກເຂົາຮ້ອງເພງລຸ່ມນີ້, ເຊິ່ງກ່ຽວກັບຫົວຂໍ້ຂອງບົດຮຽນ, ກໍຄື ຄວາມຮັກ.

**ຮັກ, ຮັກ, ຮັກ**

C F G C
ຮັກ, ຮັກ, ຮັກ, ຮັກ ຈຶ່ງຮັກເພື່ອນມະນຸດ
C F D7 G
ຮັກ, ຮັກ, ຮັກ, ຄື ທຳໃຫ້ໂລກເກີດຂຶ້ນມາ
C F C G
ພຣະຜູ້ເປັນເຈົ້າຮັກສິ່ງສ້າງສັນ ຈຶ່ງສ້າງພວກເຮົາຂຶ້ນມາ
C F G C
ຮັກ, ຮັກ, ຮັກ, ພຣະອົງ ແລະ ມວນມະນຸດຊາດ

ຮັກ, ຮັກ, ຮັກ, ໃນ ຄວາມດີງາມນິລັນດອນ
ຮັກ, ຮັກ, ຮັກ, ໃນ ເມັດພືດຄວາມເປັນພີ່ນ້ອງ
ຮັກທຸກຊັບພະສິ່ງ ເພາະພຣະອົງສ້າງເຮົາຂຶ້ນມາເພື່ອ
ຮັກ, ຮັກ, ຮັກ, ພຣະອົງ ແລະ ມວນມະນຸດຊາດ

ຮັກ ສິ່ງສ້າງສັນ ຂອງພຣະຜູ້ເປັນເຈົ້າ ບໍ່ວ່າຈະໃກ້ຫຼືໄກ
ເຫັນມະນຸດແຕ່ລະຄົນ ເປັນດັ່ງດວງດາວສົດໃສ
ຮັກທຸກຊັບພະສິ່ງ ເພາະພຣະອົງສ້າງເຮົາຂຶ້ນມາເພື່ອ
ຮັກ, ຮັກ, ຮັກ, ພຣະອົງ ແລະ ມວນມະນຸດຊາດ

C. **ການທ່ອງຈຳພຣະວັດຈະນະ**

ເພື່ອແນະນຳພຣະວັດຈະນະຕອນໃໝ່ສຳລັບທ່ອງຈຳ, ເຈົ້າສາມາດແບ່ງປັນແນວຄິດທີ່ກ່ຽວຂ້ອງກັບຫົວຂໍ້ຂອງບົດຮຽນໃຫ້ແກ່ນັກຮຽນຂອງເຈົ້າດັ່ງນີ້:

ຄວາມຮັກຂອງພຣະຜູ້ເປັນເຈົ້າ ສ່ອງແສງມາເຖິງມວນມະນຸດທຸກຄົນ ເໝືອນກັບແສງລັດສະໝີຂອງດວງຕາເວັນ. ແສງລັດສະໝີຂອງດວງຕາເວັນສ່ອງລົງມາບົນທະເລຊາຍ ແລະ ສວນທີ່ຊຸ່ມຊື່ນໃນລັກສະນະດຽວກັນ. ຜ່ານຄວາມອົບອຸ່ນ, ເມັດພືດທີ່ໄດ້ປູກໄວ້ໃນດິນທີ່ອຸດົມສົມບູນຈະເຕີບໂຕ ແລະ ໃຫ້ໝາກຜົນທີ່ມີຄ່າອອກມາ. ສະນັ້ນ ພວກເຮົາຄວນປູກເມັດພືດແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ, ເຊິ່ງຈະເຕີບໂຕ ແລະ ເບີກບານພາຍໃຕ້ການດູແລອັນອົບອຸ່ນຈາກຄວາມຮັກຂອງພຣະອົງ. ເມື່ອນັ້ນຄວາມຮັກຂອງເຮົາຈະແຜ່ຂະຫຍາຍອອກໄປ, ແລະ ພວກເຮົາຈະສະແດງຄວາມຮັກຕໍ່ທຸກຄົນ, ແມ່ນແຕ່ກັບຜູ້ທີ່ໄຮ້ຄວາມເມດຕາຕໍ່ພວກເຮົາໃນບາງຄັ້ງ. ໃນການທີ່ຈະຊ່ວຍໃຫ້ພວກເຮົາຮັກມວນມະນຸດທຸກຄົນ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕອນນີ້ຂອງ ພຣະບາຮາອຸລລາຫ໌:

**"ໂອ ມິດສະຫາຍ! ໃນອຸທະຍານຂອງຫົວໃຈເຈົ້າ ຢ່າໄດ້ເພາະປູກສິ່ງອື່ນໃດ ນອກຈາກກຸຫຼາບແຫ່ງຄວາມຮັກ..."**[101]

ໃນພຣະວັດຈະນະຕອນນີ້ ມີພຽງຄຳດຽວທີ່ຕ້ອງໄດ້ຮັບການອະທິບາຍຄື "ສິ່ງອື່ນໃດ", ໝາຍຄວາມວ່າ "ບໍ່ມີສິ່ງໃດເລີຍ".

1. ດີນີໂອ ມັກຮ້ອງເພງກ່ຽວກັບດວງຕາເວັນ ແລະ ດອກໄມ້, ແລະ ລາວບໍ່ໄດ້ຮ້ອງເພງກ່ຽວກັບຢ່າງອື່ນເລີຍ. ດີນີໂອ ບໍ່ຮ້ອງເພງກ່ຽວກັບສິ່ງອື່ນໃດ ນອກຈາກເພງແສງຕາເວັນແລະດອກໄມ້.
2. ຕາເຈີນ ຕ້ອງການລົງໄປທີ່ແມ່ນ້ຳ, ແຕ່ເຂົາຍັງເຮັດວຽກເຮືອນທີ່ເປັນໜ້າທີ່ຂອງເຂົາຍັງບໍ່ແລ້ວ. ພໍ່ຂອງເຂົາບອກວ່າ ເຂົາບໍ່ສາມາດໄປໄດ້ຈົນກວ່າເຂົາຈະເຮັດວຽກນັ້ນໃຫ້ແລ້ວກ່ອນ, ແລະ ໂຊກຮ້າຍທີ່ ຕາເຈີນ ເລີ່ມມີຄວາມຮູ້ສຶກຈຸດຈິດ. ແມ່ຕູ້ຂອງເຂົາຈຶ່ງເວົ້າກັບເຂົາວ່າ, "ຫຼານຮັກເອີຍ, ແຜນງານທັງໝົດຂອງເຈົ້າຈະບໍ່ມີສິ່ງອື່ນໃດເລີຍ ຫາກເຈົ້າບໍ່ເຊື່ອຟັງພໍ່ຂອງເຈົ້າ."

## D. ເລື່ອງລາວ

ຫຼັງຈາກໄລຍະເວລາທີ່ໄດ້ອຸທິດໃຫ້ການທ່ອງຈຳແລ້ວ, ເຈົ້າສາມາດເລົ່າເລື່ອງຕໍ່ໄປນີ້ໃຫ້ນັກຮຽນຂອງເຈົ້າຟັງ:

*ໃນຊ່ວງເວລາທີ່ ພຣະອັບດຸລບາຮາ ອາໃສຢູ່ໃນເມືອງຄຸກແຫ່ງເມືອງອັກຄາ, ມີຊາຍຄົນໜຶ່ງທີ່ປະຕິບັດບໍ່ດີຕໍ່ພຣະອົງ. ຊາຍຄົນນັ້ນຄິດວ່າ ພຣະອັບດຸລບາຮາ ເປັນຄົນບໍ່ດີ ແລະ ພຣະຜູ້ເປັນເຈົ້າບໍ່ໄດ້ສົນໃຈວ່າ ຊາວບາຮາຍຈະຖືກກະທຳຢ່າງຮ້າຍກາດແນວໃດ. ໃນຄວາມເປັນຈິງ, ລາວເຊື່ອວ່າລາວກຳລັງສະແດງຄວາມຮັກຕໍ່ພຣະຜູ້ເປັນເຈົ້າ ດ້ວຍການສະແດງຄວາມກຽດຊັງຕໍ່ຊາວບາຮາຍ. ລາວກຽດຊັງພຣະອັບດຸລບາຮາຈົນໝົດຫົວໃຈ. ຄວາມກຽດຊັງນັ້ນໄດ້ເຕີບໂຕ*

*ແລະ ໄດ້ຝັງເລິກໃນໃຈຂອງລາວ, ຈົນບາງຄັ້ງຄວາມກຽດຊັງນັ້ນໄດ້ໄຫຼອອກມາເໝືອນກັບນ້ຳທີ່ຮົ່ວອອກຈາກໝໍ້ທີ່ແຕກລ້າວ. ໃນສະຖານທີ່ທີ່ສັກສິດ, ເວລາຜູ້ຄົນມາສວດອະທິຖານ, ຊາຍຄົນນີ້ກໍໄດ້ຮ້ອງໄຫ້ຂຶ້ນເພື່ອຕໍ່ຕ້ານ ພຣະອັບດຸລບາຮາ ແລະ ເວົ້າສິ່ງທີ່ໂຫດຮ້າຍໃສ່ພຣະອົງ. ໃນເວລາທີ່ລາວຍ່າງກາຍ ພຣະອັບດຸລບາຮາ ຕາມຫົນທາງ, ລາວກໍຈະເອົາເສື້ອຄຸມມາປົກໜ້າຕົນເອງໄວ້ ເພື່ອບໍ່ໃຫ້ລາວເຫັນພຣະອົງ.*

*ຕອນນີ້ຊາຍຄົນນີ້ທຸກຍາກຫຼາຍ ແລະ ບໍ່ມີອາຫານພຽງພໍທີ່ຈະກິນ ຫຼືແມ່ນແຕ່ເຄື່ອງນຸ່ງຮົ່ມອຸ່ນໆທີ່ຈະສວມໃສ່. ເຈົ້າຄິດວ່າພຣະອັບດຸລບາຮາໄດ້ເຮັດຫຍັງ? ພຣະອົງໄດ້ສະແດງເຖິງຄວາມເມດຕາຕໍ່ຊາຍຄົນນີ້, ໄດ້ສົ່ງອາຫານ ແລະ ເຄື່ອງນຸ່ງຮົ່ມ, ແລະ ຍັງເຮັດໃຫ້ແນ່ໃຈວ່າຊາຍຄົນນີ້ໄດ້ຮັບການດູແລເປັນຢ່າງດີ. ຕົວຢ່າງ ມີຄັ້ງໜຶ່ງຕອນທີ່ຊາຍຄົນນີ້ລົ້ມປ່ວຍໜັກ, ພຣະອັບດຸລບາຮາ ກໍສົ່ງທ່ານໝໍໄປປິ່ນປົວລາວ, ຈ່າຍຄ່າຢາ ແລະ ຄ່າອາຫານ, ແລ້ວກໍຍັງເອົາເງິນໃຫ້ລາວຈຳນວນໜຶ່ງ. ລາວໄດ້ຮັບເອົາຂອງຂວັນເລົ່ານີ້ຈາກ ພຣະອັບດຸລບາຮາ, ແຕ່ກໍບໍ່ໄດ້ກ່າວຂອບໃຈພຣະອົງ. ແນ່ນອນວ່າ, ລາວຍື່ນແຂນຂ້າງໜຶ່ງໃຫ້ທ່ານໝໍກວດຊີບພະຈອນ, ແລະເອົາແຂນອີກຂ້າງໜຶ່ງປົກໜ້າຂອງຕົນໄວ້ ເພື່ອວ່າລາວຈະບໍ່ຈຳເປັນຕ້ອງເບິ່ງ ພຣະສຸລະພັກຂອງພຣະອັບດຸລບາຮາ. ແລະ ຊາຍຄົນນີ້ກໍໄດ້ປະຕິບັດເຊັ່ນນີ້ມາຫຼາຍປີ. ແລ້ວມື້ໜຶ່ງ, ຫົວໃຈຂອງຊາຍຄົນນີ້ກໍໄດ້ປ່ຽນໄປໃນທີ່ສຸດ. ລາວໄດ້ໄປທີ່ບ້ານຂອງພຣະອັບດຸລບາຮາ, ໄດ້ກົ້ມລົງກາບຕີນພຣະອົງ ແລະ ດ້ວຍຫົວໃຈທີ່ໜັກໜ່ວງ ແລະ ນ້ຳຕາທີ່ໄຫຼລົງມາເທິງໃບໜ້າຂອງລາວເໝືອນກັບຄູ່ສາຍນ້ຳ, ລາວຮ້ອງໄຫ້ວ່າ, "ຍົກໂທດໃຫ້ຂ້າພະເຈົ້າເຖີດ, ນາຍທ່ານ! ສຳລັບສິ່ງໂຫດຮ້າຍທີ່ຂ້າພະເຈົ້າໄດ້ກະທຳກັບພຣະອົງມາຕະຫຼອດຊາວສີ່ປີ. ສຳລັບສິ່ງດີໆທີ່ພຣະອົງໄດ້ກະທຳໃຫ້ກັບຂ້າພະອົງມາຕະຫຼອດຊາວສີ່ປີ. ຕອນນີ້ຂ້າພະອົງຮູ້ແລ້ວວ່າຂ້າພະອົງຜິດ. ໂປດໃຫ້ອະໄພຂ້າພະອົງ!" ດັ່ງນັ້ນ ຄວາມຮັກອັນຍິ່ງໃຫຍ່ຂອງ ພຣະອັບດຸລບາຮາ ຈຶ່ງມີໄຊຊະນະເໜືອຄວາມກຽດຊັງ.*

## E. ເກມ: "ຂົວ"

ສຳລັບກິດຈະກຳຕໍ່ໄປ, ເຈົ້າສາມາດໃຊ້ແປ້ນມ້າ, ກະດານ, ກ້ອນດິນຈີ່, ຫຼື ກະໂລ້ ມາລຽງເປັນແຖວຢູ່ພື້ນ. ນີ້ແມ່ນ "ຂົວ". ແບ່ງເດັກນ້ອຍອອກເປັນສອງກຸ່ມ ແລະ ບອກພວກເຂົາວ່າທັງສອງກຸ່ມຕ້ອງຂ້າງຂົວໃນເວລາດຽວກັນ, ແຕ່ຂ້າມມາໃນທິດທາງທີ່ກົງກັນຂ້າມກັນ, ໂດຍບໍ່ໃຫ້ມີໃຜຕົກຈາກຂົວນັ້ນ. ເດັກຈະຄົ້ນພົບວ່າ ເພື່ອໃຫ້ສຳເລັດ, ພວກເຂົາຕ້ອງຊ່ວຍເຫຼືອເຊິ່ງກັນແລະກັນ ໃນການປ່ຽນບ່ອນກັນ, ຍ່າງຂ້າມຜ່ານກັນໄປເທື່ອລະຄົນ.

ເພື່ອຊ່ວຍພວກເຂົາ, ເຈົ້າສາມາດແນະນຳເດັກນ້ອຍຢ່າງສຸພາບ ໃຫ້ໄປທີ່ຈຸດເລີ້ມຕົ້ນຂອງພວກເຂົາ ແລະ ຊ່ວຍພວກເຂົາເຮັດຕາມຂັ້ນຕອນຕ່າງໆ. ແທນທີ່ຈະເອົາເດັກທຸກຄົນໄປຢູ່ເທິງຂົວພ້ອມກັນ

ໝົດ, ເຈົ້າສາມາດເຝິກກັບພວກເຂົາຄັ້ງລະສອງສາມຄົນ. ຫຼັງຈາກການສາທິດຫຼາຍຄັ້ງແລ້ວ, ຈຶ່ງສາມາດເພີ້ມຈຳນວນເດັກນ້ອຍເທື່ອຂຶ້ນ, ຈົນໝົດທຸກຄົນໄດ້ມີສ່ວນຮ່ວມ.

**F. ການທາສີ: ຮູບທີ 3**

ຕໍ່ຈາກເກມ, ເຈົ້າສາມາດແຈກສຳເນົາຮູບທີ 3 ໃຫ້ເດັກແຕ່ລະຄົນເພື່ອທາສີເປັນກິດຈະກຳສຸດທ້າຍ. ໃຫ້ຈື່ໄວ້ວ່າເວົ້າບາງຄຳ ວ່າຮູບພາບນັ້ນກ່ຽວຂ້ອງກັບຫົວຂໍ້ຂອງບົດຮຽນຄືແນວໃດ.

**G. ການສວດອະທິຖານປິດ**

ເພື່ອເປັນການປິດຊັ້ນຮຽນ, ຊຸກຍູ້ໃຫ້ນັກຮຽນຂອງເຈົ້ານັ່ງມິດໆ, ໃນຂະນະທີ່ພວກເຂົາສອງສາມຄົນ ທ່ອງສວດອະທິຖານບົດໜຶ່ງ ຫຼື ພຣະວັດຈະນະທີ່ພວກເຂົາທ່ອງຈຳແລ້ວ. ຈາກນັ້ນ ເຈົ້າຫຼືເດັກນ້ອຍຄົນໜຶ່ງກໍສາມາດສະເໜີຂໍສວດບົດສຸດທ້າຍ.

## ບົດທີ 4

**A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ຫຼັງຈາກການສວດອະທິຖານເປີດຊັ້ນຮຽນ, ຂໍໃຫ້ທວນຄືນດ້ວຍການທ່ອງຂຶ້ນໃຈ ບົດສວດທີ່ໄດ້ຮຽນຜ່ານມາແລ້ວສອງສາມບົດກັບນັກຮຽນຂອງເຈົ້າ.

**B. ບົດເພງ**

ກິດຈະກຳຕໍ່ໄປ, ພາເດັກນ້ອຍຮ້ອງເພງທີ່ພວກເຂົາໄດ້ຮຽນໃນບົດຮຽນທີ່ຜ່ານມາ, ກ່ອນທີ່ຈະສອນເພງໃໝ່ນີ້ພວກເຂົາ ກ່ຽວກັບຫົວຂໍ້ວາຈາສັດຊື່:

**ຖ້ອຍຄຳທີ່ສັດຊື່**

G D
ກະຈົກທີ່ຖືກປົກຄຸມໄປດ້ວຍຝຸ່ນ
A D
ບໍ່ສາມາດສະທ້ອນແສງຂອງດວງອາທິດ

G D
ນົກມີປີກທີ່ເຕັມໄປດ້ວຍຕົມ
A D D7
ບໍ່ສາມາດເຫີນບິນໄປໄດ້

<u>ຮ້ອງປະສານສຽງ:</u>
G D
ເມື່ອຄຳເວົ້າທຸກຄຳຂອງເຮົາຄືຄວາມຈິງ
A D D7
ວິນຍານຂອງເຮົາກໍຈະກ້າວໜ້າ
G D
ຮາກຖານຄຸນນະທັມທັງໝົດຂອງມະນຸດ
A D
ເຮົາຮູ້ວ່າແມ່ນວາຈາສັດ

<u>ຮ້ອງປະສານສຽງ:</u>
ເຮືອບໍ່ສາມາດຮັບເອົາລົມໄດ້
ຖ້າຫາກໃຊ້ໃບເຮືອທີ່ຂາດ
ດວງຕາບໍ່ສາມາດເຫັນທາງຂ້າງໜ້າ
ຖ້າຫາກມັນຖືກປົກປິດດ້ວຍຜ້າຄຸມ

<u>ຮ້ອງປະສານສຽງ</u> (*ຮ້ອງຄືນແຖວສຸດທ້າຍ*)

## C. ການທ່ອງຈຳພຣະວັດຈະນະ

ຂໍແນະນຳໃຫ້ເຈົ້ານຳສະເໜີຫົວຂໍ້ຂອງບົດຮຽນ ແລະ ພຣະວັດຈະນະເພື່ອການທ່ອງຈຳ ໃນລັກສະນະຕໍ່ໄປນີ້:

ວາຈາສັດຊື່ເປັນໜຶ່ງໃນຄຸນລັກສະນະທາງຈິດວິນຍານ ທີ່ສຳຄັນທີ່ສຸດສຳລັບການດຳລົງຢູ່ຂອງມະນຸດທຸກຄົນຈະຕ້ອງມີ. ພວກເຮົາບໍ່ຄວນເວົ້າຕົວະແມ່ນແຕ່ພຽງເລັກນ້ອຍທີ່ສຸດ, ເຖິງວ່າຈະບໍ່ມີໃຜຮູ້ກໍຕາມ. ບາງຄັ້ງຄົນເຮົາເວົ້າຕົວະກໍ່ເປັນເພາະວ່າ ພວກເຂົາຢ້ານທີ່ຈະບອກຄວາມຈິງ. ແຕ່ເຖິງຢ່າງໃດກໍ່ຕາມພວກເຮົາທຸກຄົນຮູ້ວ່າ ພຣະຜູ້ເປັນເຈົ້າຊົງຮູ້ດີ ເຖິງການກະທຳທຸກຢ່າງຂອງພວກເຮົາ ແລະ ພວກເຮົາບໍ່ສາມາດປິດບັງສິ່ງໃດໄດ້ເລີຍຈາກພຣະອົງ. ພວກເຮົາຄວນ

ຮັກຄວາມຈິງ. ຖ້າຫາກພວກເຮົາບໍ່ເວົ້າຄວາມຈິງ, ແລ້ວກໍ່ຈະເປັນການຍາກຫຼາຍ ທີ່ເຮົາຈະສາມາດພັດທະນາຄຸນນະທັມອື່ນໆຂຶ້ນມາໄດ້, ເຊັ່ນ ຄວາມຍຸຕິທັມ, ຄວາມຮັກ, ຄວາມເມດຕາ, ແລະ ເຮົາກໍ່ຈະບໍ່ສາມາດເຂົ້າໄປໃກ້ພຣະຜູ້ເປັນເຈົ້າ. ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້ຂອງ ພຣະອັບດຸລບາຮາ:

**"ວາຈາສັດຄືຮາກຖານຂອງຄຸນນະທັມທັງປວງ"**[102]

ຂ້າງລຸ່ມນີ້ມີບາງປະໂຫຍກທີ່ຊ່ວຍເຈົ້າໃນການອະທິບາຍ ຄວາມໝາຍຂອງຄຳສັບໃນພຣະວັດຈະນະຂ້າງເທິງ ທີ່ເດັກນ້ອຍອາດພົບວ່າເປັນຄຳສັບຍາກ.

*ວາຈາສັດ*

1. ທ້າວ ຊັນເຈ ເຮັດຈອກນ້ຳຕົກ ແລ້ວມັນແຕກ. ເມື່ອແມ່ຂອງລາວຖາມລາວວ່າເກີດຫຍັງຂຶ້ນ, ລາວໄດ້ບອກຄວາມຈິງກັບແມ່ຂອງລາວ ແລະ ບໍ່ໄດ້ຕົວະ. ທ້າວ ຊັນເຈ ໄດ້ສະແດງອອກເຊິ່ງຄຸນນະທັມແຫ່ງການມີວາຈາສັດ.
2. ນາງ ຈິຕະ ໄດ້ໃຊ້ເວລາຂອງຊ່ວງຕອນແລງໜຶ່ງດົນນານຫຼາຍໃນການຫຼິ້ນ ເຊິ່ງລາວກໍບໍ່ໄດ້ເຮັດວຽກບ້ານຂອງລາວໃຫ້ແລ້ວ. ມື້ຕໍ່ມາ, ເມື່ອເຖິງເວລາຕ້ອງສົ່ງວຽກບ້ານ, ລາວຕັດສິນໃຈບອກຄວາມຈິງກັບຄູຂອງລາວ, ເຖິງລາວຈະຮູ້ວ່າ ອາດເຮັດໃຫ້ຄູບໍ່ພໍໃຈ. ນາງ ຈິຕະ ໄດ້ສະແດງໃຫ້ເຫັນເຖິງຄວາມມີວາຈາສັດ.

*ຮາກຖານ*

1. ພໍ່ຂອງ ທ້າວ ອາລັອກ ກຳລັງປຸກເຮືອນຫຼັງໜຶ່ງຢູ່. ກ່ອນທີ່ຈະກໍ່ຝາເຮືອນ, ລາວວາງກ້ອນຫີນ ແລະ ປູນສີເມນມາກໍ່ໃສ່ເຊິ່ງຕຳແໜ່ງທີ່ຈະກໍ່ຝາຂຶ້ນ. ການກໍ່ຂອງກ້ອນຫີນກັບປູນສີເມນ ເປັນຮາກຖານຂອງເຮືອນນີ້. ມັນຊ່ວຍຍຶດຕົວເຮືອນໄວ້ນຳກັນ.
2. ກ່ອນທີ່ເຈົ້າຈະຮຽນອ່ານ ແລະ ຂຽນ, ເຈົ້າຈະຕ້ອງຮູ້ຕົວອັກສອນ ແລະ ອອກສຽງຕົວອັກສອນ. ການຮຽນຮູ້ສຽງຂອງຕົວອັກສອນ ແມ່ນເປັນຮາກຖານສຳລັບການຮຽນອ່ານ ແລະ ຂຽນ.

*ຄຸນນະທັມ*

1. ນາງ ອໍໂຣຣາ ເປັນຄົນທີ່ເປັນມິດ, ສຸພາບ, ແລະ ມີເມດຕາ. ຄວາມເປັນມິດ, ຄວາມສຸພາບ, ແລະ ຄວາມເມດຕາ ເປັນຄຸນນະທັມບາງຢ່າງໃນຫຼາຍໆຄຸນນະທັມຂອງລາວ.

2. ນາງ ພາແທວ ສອນເດັກນ້ອຍເລື່ອງຄວາມຍຸດຕິທັມ, ຄວາມເອື້ອເຟື້ອ, ຄວາມຖ່ອມຕົນ, ແລະ ຄວາມສັດຊື່. ສິ່ງເລົ່ານີ້ແມ່ນຄຸນນະທັມທີ່ສຳຄັນບາງຢ່າງທີ່ທຸກຄົນຄວນມີ.

## D. ເລື່ອງລາວ

ກິດຈະກຳຕໍ່ໄປ, ເຈົ້າສາມາດບອກເລື່ອງລາວຂ້າງລຸ່ມນີ້ກັບນັກຮຽນຂອງເຈົ້າ, ເຊິ່ງຈະຊ່ວຍພວກເຂົາໃຫ້ຄິດກ່ຽວກັບຄຸນລັກສະນະຂອງວາຈາສັດ:

*ດົນມາແລ້ວ, ໃນປະເທດໜຶ່ງທີ່ຢູ່ຫ່າງໄກອອກໄປ, ມີເດັກນ້ອຍລ້ຽງແກະຄົນໜຶ່ງອາໃສຢູ່, ຂະນະທີ່ພໍ່ຂອງເຂົາເຮັດວຽກຢູ່ທົ່ງນາ ແລະ ແມ່ຂອງເຂົາເບິ່ງແຍງເຮືອນ, ສ່ວນຕົວຂອງເຂົາເອງມີໜ້າທີ່ເບິ່ງແຍງຝູງແກະຂອງຄອບຄົວ. ມື້ນຶ່ງ, ເດັກຊາຍຄົນນີ້ກໍ່ຮູ້ສຶກໜ້າເບື່ອຫຼາຍ ແລະ ໄດ້ຕັດສິນໃຈອອກອຸບາຍຫຼອກເພື່ອນບ້ານຂອງເຂົາຫຼິ້ນ. ທັນໃດນັ້ນເຂົາກໍ່ຮ້ອງດັງໆຂຶ້ນວ່າ "ໝາປ່າ! ໝາປ່າ! ໝາປ່າກຳລັງກິນແກະຢູ່!" ເພື່ອນບ້ານທຸກຄົນກໍ່ພາກັນແລ່ນອອກມາເພື່ອທີ່ຈະຊ່ວຍໄລ່ໝາປ່າ, ແຕ່ເມື່ອພວກເຂົາມາເຖິງ ກໍ່ເຫັນເດັກລ້ຽງແກະຄົນນີ້ກຳລັງຫົວຂວັນໃສ່ພວກເຂົາ ຍ້ອນອາການຕົກໃຈຂອງເພື່ອນບ້ານທີ່ຟ້າວແລ່ນມານັ້ນ ແລະ ກໍ່ບໍ່ໄດ້ພົບໝາປ່າຢູ່ທີ່ນັ້ນເລີຍ. ເພື່ອນບ້ານຂອງເຂົາກໍ່ພາກັນກັບໄປເຮັດວຽກຂອງໃຜລາວ ແລ້ວເວົ້າກັນວ່າເດັກຊາຍຄົນນີ້ປະພຶດຕົວທີ່ບໍ່ດີ.*

*ມື້ຕໍ່ມາ, ເດັກຊາຍຄົນນີ້ກໍ່ທຳກົນອຸບາຍຄືເກົ່າ ເພື່ອຈະຫຼອກເພື່ອນບ້ານອີກຄັ້ງໜຶ່ງ. "ໝາປ່າ! ໝາປ່າ! ຊ່ວຍຂ້ອຍແດ່! ຊ່ວຍຂ້ອຍແດ່!" ມີເພື່ອນບ້ານບາງຄົນກໍ່ຟ້າວແລ່ນມາຕາມສຽງຂອງເຂົາເພື່ອຈະຊ່ວຍເຫຼືອ, ແຕ່ແລ້ວກໍ່ພົບວ່າມີແຕ່ເດັກລ້ຽງແກະຄົນນັ້ນ ເຊິ່ງກຳລັງຫົວຂວັນໃສ່ພວກເຂົາ, ຍ້ອນວ່າເທື່ອນີ້ກໍ່ເປັນການຕົວະອີກ ເພາະບໍ່ມີໝາປ່າຢູ່ແຖວໆນັ້ນເລີຍ. ມື້ທີສາມ, ເມື່ອພວກເພື່ອນບ້ານກໍ່ໄດ້ຍິນສຽງເດັກຊາຍຄົນນີ້ຮ້ອງຂຶ້ນອີກວ່າ "ໝາປ່າ! ໝາປ່າ! ໝາປ່າກຳລັງກິນແກະຢູ່! ກະລຸນາມາຊ່ວຍຂ້ອຍແດ່!" ບໍ່ມີໃຜສົນໃຈເລີຍ; ພວກເຂົາຄິດວ່າຄົງຈະເປັນການເວົ້າຕົວະຂອງເດັກຊາຍຄົນນັ້ນອີກຄັ້ງ. ແຕ່ທີ່ຈິງແລ້ວໃນມື້ນັ້ນໄດ້ມີໝາປ່າມາ ແລະ ກິນແກະຂອງເຂົາແທ້ໆ! ເດັກລ້ຽງແກະຈຶ່ງເສຍໃຈຫຼາຍ, ແຕ່ເຂົາກໍ່ໄດ້ຮຽນຮູ້ບົດຮຽນທີ່ດີ. ຖ້າຫາກພວກເຮົາເວົ້າຕົວະ, ໃນທີ່ສຸດກໍ່ຈະບໍ່ມີໃຜເລີຍແມ່ນແຕ່ ພໍ່ແມ່ຂອງເຮົາ, ອ້າຍເອື້ອຍນ້ອງຂອງເຮົາ, ໝູ່ເພື່ອນຂອງເຮົາ ທີ່ຈະເຊື່ອໃນສິ່ງທີ່ເຮົາເວົ້າ, ເຖິງແມ່ນວ່າສິ່ງນັ້ນຈະເປັນຄວາມຈິງກໍ່ຕາມ!*

## E. ເກມ: "ໂທລະສັບລະບົບສັມພັດ"

ຫຼັງຈາກການເລົ່າເລື່ອງ, ເຈົ້າສາມາດພາເດັກນ້ອຍຫຼິ້ນເກມໜຶ່ງ. ຂໍໃຫ້ພວກເຂົາຢືນລຽນແຖວເປັນແຖວດຽວ. ພວກເຂົາຄວນຫັນໜ້າໄປຫາກະດານໝົດທຸກຄົນ, ເດັກນ້ອຍຄົນສຸດທ້າຍຈະໄດ້ເບິ່ງເຈ້ຍທີ່ຫ້ອຍຢູ່ຝາ ຫຼື ຫ້ອຍຢູ່ຕົ້ນໄມ້, ຫ້ອຍໃສ່ກະດານຖ້າມີ. ເດັກນ້ອຍຈຳເປັນຕ້ອງມີອຸປະກອນໃນການຂຽນ. ຖ້າຫາກມີເດັກນ້ອຍຫຼາຍຄົນ, ກໍໃຫ້ຈັດຢືນລຽນແຖວຫຼາຍກວ່າໜຶ່ງແຖວ.

ຕອນນີ້, ໃຫ້ໃຊ້ນິ້ວມືຂອງເຈົ້າແຕ້ມຮູບບາງຢ່າງ ໃສ່ຫຼັງຂອງເດັກຄົນທຳອິດ, ແລ້ວໃຫ້ລາວປ່ຽນໄປແຕ້ມໃສ່ຫຼັງຂອງເດັກຄົນທີ່ສອງ. ເດັກຄົນທີ່ສອງແຕ້ມຮູບໃສ່ຫຼັງເດັກທີ່ສາມ, ແລະ ເດັກຄົນຕໍ່ໆໄປ, ຈົນກວ່າຈະໄປເຖິງເດັກຄົນສຸດທ້າຍ, ຜູ້ທີ່ຈະຕ້ອງແຕ້ມຮູບໃສ່ເຈ້ຍ ຫຼື ໃສ່ກະດານດຳ. ຕອນນີ້ເຈົ້າຄວນແຕ້ມທາງຂ້າງລາວ ໃນສິ່ງທີ່ເຈົ້າໄດ້ໃຊ້ນິ້ວມືແຕ້ມໃສ່ຫຼັງຂອງເດັກຄົນທຳອິດ. ຮູບທີ່ເຈົ້າແຕ້ມຄວນຈະເປັນຮູບແບບງ່າຍໆ ສະນັ້ນເດັກທຸກຄົນຈຶ່ງສາມາດແຕ້ມຄືນໄດ້.

### F. ການທາສີ: ຮູບທີ 4

ດັ່ງລັກສະນະເຊັ່ນເຄີຍເຈົ້າສາມາດແຈກສຳເນົາຮູບທີ 4 ໃຫ້ເດັກນ້ອຍເພື່ອທາສີ ເຊິ່ງເປັນກິດຈະກຳຕໍ່ໄປ.

### G. ການສວດອະທິຖານປິດ

ຕາມປົກກະຕິ, ໃຫ້ປິດຊັ້ນຮຽນດ້ວຍການຂໍໃຫ້ເດັກນ້ອຍນັ່ງຢ່າງມິດໆ ໃນຂະນະທີ່ກຳລັງທ່ອງອອກສຽງພຣະວັດຈະນະ ຫຼື ບົດສວດອະທິຖານ.

## ບົດທີ 5

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ສຳລັບບົດນີ້ ແລະ ອີກສາມບົດຮຽນ, ເຈົ້າຄວນເລີ່ມຕົ້ນຊັ້ນຮຽນດ້ວຍການທ່ອງອອກສຽງບົດສວດອະທິຖານອື່ນທີ່ເຈົ້າຮູ້ຈາກຄວາມຊົງຈຳ, ແລະ ສຳລັບຈຸດປະສົງນີ້ມີບົດໜຶ່ງທີ່ໄດ້ແນະນຳໃນຕອນທີ 6. ຫຼັງຈາກທີ່ເດັກນ້ອຍສອງສາມຄົນ ໄດ້ຮ່ວມທ່ອງອອກສຽງບົດສວດອະທິຖານເປີດຊັ້ນຮຽນກັບເຈົ້າແລ້ວ, ເຈົ້າສາມາດແນະນຳບົດສວດອະທິຖານຂ້າງລຸ່ມນີ້ເພື່ອທ່ອງຈຳ. ຄາດວ່າພວກເຂົາໝົດທຸກຄົນສາມາດຮຽນຮູ້ໄດ້ ຢ່າງໜ້ອຍກໍບາງສ່ວນຂອງບົດສວດອະທິຖານໃນຊັ້ນຮຽນຄັ້ງນີ້ ແລະ ຈະສາມາດທ່ອງອອກສຽງຈາກຄວາມຊົງຈຳໄດ້ທັງໝົດຂອງບົດສວດອະທິຖານເມື່ອຮຽນຮອດ ບົດທີ 8.

**"ໂອ ພຣະຜູ້ເປັນເຈົ້າ, ຂໍຊົງນຳທາງແກ່ຂ້າພະອົງ, ຂໍຊົງຄຸ້ມຄອງຂ້າພະອົງ, ຂໍຊົງບັນດານໃຫ້ຂ້າພະອົງ ເປັນຕະກຽງທີ່ສະຫວ່າງສະໄຫວ ແລະ ດວງດາວທີ່ສົດໃສ. ພຣະອົງຄື ພຣະຜູ້ຊົງອຳນາດ ແລະ ຊົງພະລານຸພາບ."**[103]

B. ບົດເພງ

ສຳລັບບົດນີ້, ນອກຈາກຈະການສອນເພງຕໍ່ໄປນີ້ໃຫ້ເດັກນ້ອຍແລ້ວ, ເຈົ້າສາມາດຮ້ອງເພງອື່ນກັບພວກເຂົາສອງສາມເພງທີ່ພວກເຂົາຮູ້.

**ນ້ຳພຸແຫ່ງຄວາມເອື້ອເຟື້ອ**

```
          C
ເປັນດັ່ງນ້ຳພຸ, ເປັນລະດູບານໃໝ່
          C               G
ເປັນສິ່ງທີ່ໄຫຼ ຜ່ານຕະຫຼອດການ
          F               C
ມັນເປັນຄວາມຈິງ ຖ້າເຈົ້າກະທຳ
          Dm7   G7      C
ຄວາມສຸກນັ້ນ ຈະມາຫາເຈົ້າ
          F               C
ຄົ້ນຫາຫົວໃຈ ຂອງເຈົ້າທຸກວັນ
          D7                      G7
ມີບາງຢ່າງທີ່ເຈົ້າສາມາດມອບໃຫ້
```

ຄວາມສຸກນັ້ນ ຄວນເປັນເປົ້າໝາຍ
ມອບຫົວໃຈ, ແລະວິນຍານຂອງເຈົ້າ
ມັນເປັນຄວາມຈິງ ຖ້າເຈົ້າກະທຳ
ພຣະຜູ້ເປັນເຈົ້າ ຈະຢູ່ກັບເຈົ້າສະເໝີ
ຄົ້ນຫາຫົວໃຈ ຂອງເຈົ້າທຸກວັນ
ມີບາງຢ່າງທີ່ເຈົ້າສາມາດມອບໃຫ້

ຄວາມສຸກນັ້ນ ຄວນເປັນເປົ້າໝາຍ
ມອບຫົວໃຈ, ແລະວິນຍານຂອງເຈົ້າ
ມັນເປັນຄວາມຈິງ ຖ້າເຈົ້າກະທຳ

พระผู้เป็นเจ้า จะยู่กับเจ้าสะเฝี

C. **ການທ່ອງຈຳພຣະວັດຈະນະ**

ແນວຄິດຕໍ່ໄປນີ້ຈະຊ່ວຍເຈົ້າແນະນຳຫົວຂໍ້ຂອງບົດຮຽນ ແລະ ພຣະວັດຈະນະທີ່ເດັກນ້ອຍຈະທ່ອງຈຳ:

ພຣະຜູ້ເປັນເຈົ້າຊົງເອື້ອເຟື້ອຫຼາຍ ຕໍ່ສັບພະສິ່ງທີ່ພຣະອົງຊົງສ້າງ. ພຣະອົງຊົງບັນດານຝົນໃຫ້ພືດເພື່ອສະໜອງອາຫານ ແລະ ການບຳລຸງລ້ຽງສັດເພື່ອການດຳລົງຢູ່ຂອງມະນຸດ. ພຣະອົງດູແລພວກເຮົາທຸກຄົນ. ພຣະອົງປະທານຂອງຂວັນຫຼວງຫຼາຍແກ່ພວກເຂົາ: ດວງຕາໃຫ້ເພື່ອມອງເຫັນພູເຂົາ, ແມ່ນ້ຳ, ດວງດາວ, ແລະ ຄວາມງາມອ້ອມຮອບຕົວເຮົາ; ຫູໃຫ້ເພື່ອຟັງເພງທີ່ມ່ວນອອນຊອນ, ສຽງຮ້ອງຂອງນົກ, ຄຳແນະນຳຂອງພໍ່ແມ່, ແລະ ຖ້ອຍຄຳຂອງພຣະຜູ້ເປັນເຈົ້າ. ພຣະອົງໄດ້ປະທານສະຕິປັນຍາໃຫ້ພວກເຮົາ ເພື່ອສາມາດຮຽນຮູ້ກ່ຽວກັບຄວາມເລິກລັບຂອງຈັກກະວານ ແລະ ເໜືອສິ່ງອື່ນໃດທັງໝົດ, ພຣະອົງປະທານພະລັງທາງຈິດວິນຍານແກ່ພວກເຮົາ ເພື່ອໃຫ້ພວກເຮົາສາມາດຮູ້ຈັກ ແລະ ຮັກພຣະອົງ. ເຊັ່ນດຽວກັບທີ່ພຣະຜູ້ເປັນເຈົ້ານັ້ນເອື້ອເຟື້ອເຜື່ອແຜ່ຕໍ່ພວກເຮົາ, ພວກເຮົາກໍ່ຄວນເອື້ອເຟື້ອຕໍ່ຜູ້ອື່ນ. ພວກເຮົາຄວນໃຫ້ສິ່ງທີ່ເຮົາມີ - ອາຫານຂອງເຮົາ, ຊັບສົມບັດຂອງເຮົາ, ເວລາຂອງເຮົາ, ຄວາມຮູ້ຂອງເຮົາ - ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ອື່ນ. ພວກເຮົາຄວນແບ່ງປັນຄວາມຮັກ, ຄວາມສຸກທັນສາ, ແລະ ສິ່ງດີໆທີ່ເຮົາຮຽນຮູ້ທີ່ບ້ານ ແລະ ທີ່ໂຮງຮຽນ. ເພື່ອຊ່ວຍພວກເຮົາໃນຄວາມພະຍາຍາມທີ່ຈະເປັນຄົນເອື້ອເຟື້ອ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຂອງ ພຣະບາຮາອຸລລາຫ໌ ທີ່ເຕືອນພວກເຮົາໃຫ້ລະລຶກເຖິງຄວາມເອື້ອເຟື້ອເຜື່ອແຜ່ຂອງພຣະຜູ້ເປັນເຈົ້າ:

**"ການໃຫ້ ແລະ ຄວາມເອື້ອເຟື້ອຄືຄຸນລັກສະນະຂອງເຮົາພຣະອົງ; ຂໍຄວາມສຸກສະຫວັດດີ ຈົ່ງມີແດ່ຜູ້ທີ່ປະດັບຕົນເອງ ດ້ວຍຄຸນນະທັມຂອງເຮົາພຣະອົງ."**[104]

*ເອື້ອເຟື້ອ*

1. ແຣມ ແລະ ຣາຈິດຊ໌ ທ້ອນເງິນໄດ້ຈຳນວນໜ້ອຍໜຶ່ງ. ພວກເຂົາຕັດສິນໃຈທີ່ຈະຊື້ໜັງສືສອງສາມເຫຼັ້ມໃຫ້ກັບນ້ອງຊາຍ ແລະ ນ້ອງສາວຂອງພວກເຂົາ. ແຣມ ແລະ ຣາຈິດຊ໌ ເປັນຄົນເອື້ອເຟື້ອ.
2 ນາງ ເມີຟີ ໄດ້ໃຊ້ເວລາຕະຫຼອດທັງເຊົ້າໃນການອົບເຂົ້າໜົມເຄັກ. ກ່ອນຈະນຳເອົາເຄັກເລົ່ານັ້ນໄປຂາຍ, ລາວກໍ່ໄດ້ເອົາເຄັກສອງປ່ຽງໃຫຍ່ໄປໃຫ້ກັບເພື່ອນບ້ານ. ນາງ ເມີຟີ ເປັນຄົນເອື້ອເຟື້ອ.

*ຄຸນລັກສະນະ*

1. ກ້ອນຫີນແຂງຫຼາຍ. ຄວາມແຂງເປັນຄຸນລັກສະນະຂອງກ້ອນຫີນ.
2. ຄູໄດ້ເວົ້າກັບ ຊາລີນີ ວ່າ "ຄຸນລັກສະນະໜຶ່ງຂອງເຈົ້າກໍ່ຄື ເຈົ້າເປັນຄົນເຮັດວຽກຢ່າງໜັກ."

*ປະດັບ*

1. ຄືນນີ້ມີງານຊຸມນຸມສວດອະທິຖານທີ່ສູນຂອງຊຸມຊົນ. ເດັກນ້ອຍໄດ້ພາກັນເກັບດອກໄມ້ມາວາງໄວ້ໃນຫ້ອງປະຊຸມ. ຫ້ອງປະຊຸມຖືກປະດັບດ້ວຍດອກໄມ້.
2. ຫຼີງ ເຟີງ ມີຮອຍຍິ້ມທີ່ແຈ່ມໃສ. ຮອຍຍິ້ມທີ່ແຈ່ມໃສປະດັບຢູ່ເທິງໃບໜ້າຂອງເຂົາຕະຫຼອດເວລາ.

## D. ເລື່ອງລາວ

ບົດຮຽນນີ້ ເຈົ້າຈະເລົ່າເລື່ອງຂ້າງລຸ່ມນີ້ໃຫ້ເດັກນ້ອຍຟັງ, ເຊິ່ງຈະຊ່ວຍໃຫ້ພວກເຂົາໃນການທົບທວນແນວຄວາມຄິດຂອງຄວາມເອື້ອເຟື້ອ:

*ມື້ໜຶ່ງ ພຣະອັບດຸລບາຮາ ຖືກເຊີນໂດຍຄົນລ້ຽງແກະທີ່ທຳໜ້າທີ່ເບິ່ງແຍງແກະຂອງບິດາຂອງພຣະອົງ ພຣະບາຮາອຸລລາຫ໌, ເພື່ອໃຊ້ເວລາກັບຝູງແກະໃນນອກເມືອງ. ໃນຕອນນັ້ນ ພຣະອັບດຸລບາຮາ ຍັງເປັນເດັກນ້ອຍຢູ່, ແລະ ກ່ອນການປະຫັດປະຫານຕໍ່ ພຣະບາຮາອຸລລາຫ໌ ແລະ ຄອບຄົວຂອງພຣະອົງ ໃຫ້ອອກຈາກບ້ານເກີດອັນເປັນທີ່ຮັກ ຍັງບໍ່ທັນໄດ້ເລີ່ມຕົ້ນຂຶ້ນ. ພຣະບາຮາອຸລລາຫ໌ ຊົງມີທີ່ດິນຈຳນວນຫຼວງຫຼາຍຢູ່ໃນແຖບພູເຂົາ ແລະ ຊົງເປັນເຈົ້າຂອງຝູງແກະຂະໜາດໃຫຍ່ຫຼາຍຝູງ. ເມື່ອໄດ້ຮັບການອະນຸຍາດຈາກມານດາຂອງພຣະອົງ, ພຣະອັບດຸລບາຮາ ໄດ້ໄປຮ່ວມກັບຄົນລ້ຽງແກະ ແລະ ເປັນມື້ທີ່ແສນວິເສດໃນກຸ່ມຂອງພວກເຂົາ ເຊັ່ນພວກເຂົາໄດ້ຮ້ອງເພງ, ເຕັ້ນ ແລະ ກຽມງານສະຫຼອງທີ່ສວຍງາມ. ເມື່ອເຖິງເວລາສິ້ນສຸດຂອງມື້ນັ້ນ ແລະ ພຣະອັບດຸລບາຮາ ກໍຕຽມພ້ອມທີ່ຈະກັບ, ຄົນລ້ຽງແກະທັງໝົດກໍມາອ້ອມຮອບພຣະອົງ ແລະ ກ່າວອຳລາ. ມີຊາຍຜູ້ໜຶ່ງທີ່ຕິດຕາມ ພຣະອັບດຸລບາຮາ ໄປໄດ້ອະທິບາຍວ່າ ມັນເປັນທຳນຽມຂອງຜູ້ທີ່ເປັນເຈົ້າຂອງທີ່ດິນ ແລະ ຝູງແກະທີ່ຈະໃຫ້ຂອງຂວັນແກ່ຄົນລ້ຽງແກະ. ພຣະອັບດຸລບາຮາ ງຽບໄປຊົ່ວໄລຍະໜຶ່ງ. ພຣະອົງບໍ່ມີສິ່ງໃດທີ່ຈະມອບໃຫ້ແກ່ຄົນລ້ຽງແກະເຫຼົ່ານັ້ນ, ແຕ່ຊາຍຜູ້ຕິດຕາມໄປນັ້ນ ກໍ່ຍັງຢືນຢັນວ່າຄົນລ້ຽງແກະເຫຼົ່ານັ້ນ ຄາດຫວັງວ່າຈະໄດ້ຮັບຂອງຂວັນບາງຢ່າງ. ຈາກນັ້ນ ພຣະອັບດຸລບາຮາ ກໍ່ເກີດຄວາມຄິດ: ພຣະອົງຈະຍົກແກະຈຳນວນໜຶ່ງ ຈາກຝູງແກະອັນຫຼວງຫຼາຍທີ່ຄົນລ້ຽງແກະເບິ່ງແຍງຢູ່. ພຣະບາຮາອຸລລາຫ໌ ຊົງພໍພຣະໄທເປັນຢ່າງຍິ່ງເມື່ອພຣະອົງຊົງຊາບ ກ່ຽວກັບຄວາມເອື້ອເຟື້ອຂອງ ພຣະອັບດຸລບາຮາ ທີ່ມີຕໍ່ຄົນລ້ຽງແກະ. ພຣະອົງຊົງກ່າວຢ່າງເຕັມໄປດ້ວຍອາລົມມ່ວນຊື່ນວ່າທຸກຄົນຄວນຈະເບິ່ງແຍງ ພຣະອັບດຸລບາຮາ ໃຫ້ດີກວ່ານີ້ ເພາະວ່າວັນໜຶ່ງ ພຣະອັບດຸລບາຮາ ຈະ*

*ສະຫຼະຕົວເອງ. ແນ່ນອນວ່າ, ນີ້ເປັນສິ່ງທີ່ ພຣະອັບດຸລບາຮາ ໄດ້ກະທຳຢ່າງຈິງໃຈຕະຫຼອດຊີວິດຂອງພຣະອົງ. ພຣະອົງໃຫ້ທຸກສິ່ງທີ່ພຣະອົງມີ, ແຕ່ລະຄັ້ງ ແລະ ໃນທຸກຂະນະຂອງຊີວິດຂອງພຣະອົງແກ່ມະນຸດຊາດ, ເພື່ອລວບລວມພວກເຮົາໃຫ້ເປັນອັນໜຶ່ງອັນດຽວກັນ ແລະ ນຳຄວາມສຸກທີ່ແທ້ຈິງມາໃຫ້ແກ່ພວກເຮົາ.*

### E. ເກມ "ຝາແຝດ"

ຫຼັງຈາກໄລຍະຂອງການເລົ່າເລື່ອງ, ດັ່ງເຊັ່ນເຄີຍເດັກນ້ອຍຈະໄດ້ຫຼິ້ນເກມ. ຂໍໃຫ້ແບ່ງພວກເຂົາອອກເປັນຄູ່, ພະຍາຍາມຈັບຄູ່ເດັກນ້ອຍທີ່ມີສ່ວນສູງຄືກັນຫຼາຍທີ່ສຸດເພື່ອຫຼິ້ນນຳກັນ. ຂໍໃຫ້ແຕ່ລະຄູ່ຍືນຫັນຫຼັງໃສ່ກັນແລ້ວນັ່ງລົງ. ຈາກນັ້ນ ບອກໃຫ້ພວກເຂົາເອົາແຂນຄ້ອງກັນ ແລ້ວພະຍາຍາມລຸກຂຶ້ນຍືນ. ເມື່ອພວກເຂົາເຮັດສຳເລັດແລ້ວ, ໃຫ້ຈັດເປັນກຸ່ມລະສາມຫຼືສີ່ຄົນ ພະຍາຍາມຫຼິ້ນແບບດຽວກັນ.

### F. ການທາສີ: ຮູບທີ 5

ກິດຈະກຳສຸດທ້າຍ, ເຈົ້າສາມາດແຈກສຳເນົາຮູບທີ 5 ໃຫ້ເດັກນ້ອຍເພື່ອທາສີ.

### G. ການສວດອະທິຖານປິດ

ຊັ້ນຮຽນສາມາດປິດລົງຕາມລັກສະນະປົກກະຕິ, ດ້ວຍບົດສວດອະທິຖານ ແລະພຣະວັດຈະນະທີ່ທ່ອງອອກສຽງໂດຍເຈົ້າ ແລະ ເດັກນ້ອຍສອງສາມຄົນ.

## ບົດທີ 6

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ຫຼັງຈາກເຈົ້າ ແລະ ນັກຮຽນສອງສາມຄົນຂອງເຈົ້າສວດອະທິຖານເປີດແລ້ວ, ເຈົ້າສາມາດຊ່ວຍເດັກນ້ອຍສືບຕໍ່ຮຽນບົດສວດອະທິຖານທີ່ແນະນຳໃນບົດທີ 5.

### B. ບົດເພງ

ກິດຈະກຳຕໍ່ໄປ, ສອນເດັກນ້ອຍຮ້ອງເພງຕໍ່ໄປນີ້, ເຊິ່ງກ່ຽວກັບຫົວຂໍ້ຂອງບົດຮຽນ. ພ້ອມນີ້ພວກເຂົາກໍສາມາດຮ້ອງສອງສາມເພງ ທີ່ພວກເຮົາມ່ວນເປັນພິເສດ.

## ນຶກເຖິງເອື້ອຍນ້ອງ

C G/B Am7 C
ຂ້ອຍຫິວນ້ຳແລ້ວ, ຂ້ອຍຫິວນ້ຳແລ້ວ
Dm G C Am7
ແຕ່ນ້ອງຊາຍຂອງຂ້ອຍ, ຕ້ອງມາກ່ອນໃຜ
F Em Dm C
ຂ້ອຍຈຶ່ງໃຫ້ນ້ຳລາວໄປດື່ມ
Dm G C
ໝົດຄວາມຫິວທັນໃດ

<u>ຮ້ອງປະສານສຽງ:</u>

F G C Am
ພອນຈຶ່ງມີແດ່ຜູ້ທີ່ນຶກເຖິງເອື້ອຍນ້ອງຂອງຕົນເອງ
F G C Am
ເປັນວິທີສະແດງວ່າເຮົາຫ່ວງໃຍ
F G C Am
ພອນຈຶ່ງມີແດ່ຜູ້ທີ່ນຶກເຖິງເອື້ອຍນ້ອງຂອງຕົນເອງ
F G C
ແບ່ງປັນຍິ່ງຫຼາຍ ກໍ່ຍິ່ງຮັ່ງມີ

ຂ້ອຍຫິວເຂົ້າແລ້ວ, ຂ້ອຍຫິວເຂົ້າແລ້ວ
ແລະເອື້ອຍຂອງຂ້ອຍ, ລາວກໍ່ຫິວ
ຂ້ອຍຈຶ່ງແບ່ງອາຫານໃຫ້ລາວ
ຂ້ອຍວ່າດີທີ່ສຸດ

<u>ຮ້ອງປະສານສຽງ</u>

### C. ການທ່ອງຈຳພຣະວັດຈະນະ

ບົດນີ້ເດັກນ້ອຍຈະຮຽນທ່ອງອອກສຽງພຣະວັດຈະນະຈາກຄຳສອນຂອງ ພຣະບາຣາອຸລລາຫ໌ ເຊິ່ງຮຽກຮ້ອງໃຫ້ພວກເຮົາບໍ່ເຫັນແກ່ຕົວ. ເຈົ້າສາມາດນຳສະເໜີຫົວຂໍ້ນີ້ດ້ວຍວິທີດັ່ງຕໍ່ໄປນີ້:

ພຣະຜູ້ເປັນເຈົ້າຊົງຮັກແຕ່ລະຄົນ ແລະ ພວກເຮົາທຸກຄົນ, ແລະ ພຣະອົງໄດ້ສ້າງຫົວໃຈຂອງມະນຸດເພື່ອໃຫ້ຮູ້ຈັກພຣະອົງ ແລະ ຮັກພຣະອົງ. ເມື່ອຫົວໃຈຂອງພວກເຮົາບໍລິສຸດ, ພວກເຮົາກໍຈະສາມາດມອງເຫັນສັນຍາລັກຂອງພຣະຜູ້ເປັນເຈົ້າ ສະທ້ອນຈາກສິ່ງທີ່ພຣະອົງສ້າງ. ພວກເຮົາເຫັນຄວາມເອື້ອເຟື້ອຂອງພຣະອົງ, ຄວາມກະລຸນາຂອງພຣະອົງ, ຄວາມເມດຕາຂອງພຣະອົງ. ຄວາມຮັກຂອງພວກເຮົາທີ່ມີຕໍ່ພຣະຜູ້ເປັນເຈົ້າ, ພວກເຮົາຕ້ອງການນຳເອົາຄວາມທັນສາ ແລະ ຄວາມສຸກໃຫ້ແກ່ທຸກຄົນທີ່ເຮົາມອງເຫັນຢູ່ອ້ອມຮອບຕົວເຮົາ - ແກ່ພໍ່ແມ່ຂອງພວກເຮົາ, ອ້າຍເອື້ອຍນ້ອງຂອງເຮົາ, ໝູ່ເພື່ອນແລະເພື່ອນບ້ານຂອງເຮົາ. ຄວາມຮັກຂອງພວກເຮົານັ້ນຍິ່ງໃຫຍ່ຫຼາຍ ຈົນສິ່ງທີ່ເຮັດໃຫ້ພວກເຮົາປິຕິຍິນດີທີ່ສຸດຄືນຳຄວາມສຸກມາສູ່ຄົນອື່ນ ແລະ ໃຫ້ຄວາມສະດວກສະບາຍແກ່ພວກເຂົາກ່ອນຕົນເອງ. ດັ່ງນັ້ນ ພວກເຮົາຈຶ່ງນຶກເຖິງເພື່ອນມະນຸດກ່ອນທີ່ເຮົາຈະນຶກເຖິງຕົນເອງ. ຂໍໃຫ້ເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌:

**"ພອນຈົ່ງມີແດ່ຜູ້ທີ່ນຶກເຖິງພີ່ນ້ອງຂອງເຂົາກ່ອນຕົນເອງ"**[105]

*ພອນ*

1. ແມ່ຂອງອາມີເລຍຂໍໃຫ້ລາວໄປຮ້ານຂາຍເຄື່ອງເພື່ອຊື້ສິ່ງຂອງ. ລາວບໍ່ໄດ້ເຮັດລາຍເຄື່ອງແຕ່ວ່າລາວຈື່ສິ່ງທັງໝົດທີ່ຈະຊື້, ໂດຍບໍ່ລືມແມ້ແຕ່ອັນດຽວ. ອາມີເລຍ ໄດ້ຮັບພຣະພອນຂອງຄວາມຈຳດີ.
2. ຄອບຄົວຂອງວິກເຕີ ສວດອະທິຖານຮ່ວມກັນທຸກເຊົ້າທີ່ບ້ານຂອງພວກເຂົາ. ບ້ານຂອງຄອບຄົວວິກເຕີ ໄດ້ຮັບພຣະພອນດ້ວຍການລະນຶກເຖິງພຣະຜູ້ເປັນເຈົ້າ.

*ນຶກເຖິງກ່ອນ (ເລືອກກ່ອນ)*

1. ແມ່ຕູ້ຂອງອານຸຊາ ມັກກິນນ້ຳທັງສອງແບບ ຊາໝາກນາວ ແລະ ຊາມິ້ນ, ແຕ່ເມື່ອເຖິງເວລາທີ່ລາວຕ້ອງເລືອກ, ລາວເລືອກຊາມິ້ນ. ລາວນຶກເຖິງຊາມິ້ນກ່ອນ.
2. ເວັດນ້າ ສາມາດເລືອກໄປຫຼິ້ນຢູ່ຂ້າງນອກ ຫຼື ຈະຊ່ວຍພໍ່ຂອງລາວເຮັດວຽກໃນສວນກໍ່ໄດ້. ລາວຕັດສິນໃຈທີ່ຈະຊ່ວຍພໍ່ຂອງລາວເຮັດວຽກໃນສວນ. ເວັດນ້າ ເລືອກຊ່ວຍພໍ່ຂອງລາວກ່ອນ.

## D. ເລື່ອງລາວ

ເລື່ອງລາວຂ້າງລຸ່ມສະແດງໃຫ້ເຫັນ, ຜ່ານທາງຖ້ອຍຄຳ ແລະ ການກະທຳຂອງ ພຣະອັບດຸລບາຮາ ໄດ້ສະແດງອອກຄືແນວໃດໃນລັກສະນະຂອງການບໍ່ເຫັນແກ່ຕົວ.

*ພຣະອັບດຸລບາຣາ ມັກເລືອກເອົາເສື້ອຜ້າທີ່ມີລາຄາບໍ່ແພງໃຫ້ແກ່ພຣະອົງເອງ. ສິ່ງທີ່ສຳຄັນກວ່າສຳລັບພຣະອົງແມ່ນຕ້ອງສະອາດຢ່າງລະອຽດ. ເມື່ອພຣະອົງມີເສື້ອຜ້າຈຳນວນເພີ້ມຫຼາຍຂຶ້ນ, ປົກກະຕິແລ້ວພຣະອົງມັກຈະນຳເສື້ອຜ້າເລົ່ານັ້ນໄປມອບໃຫ້ກັບຄົນອື່ນ. ມີມື້ໜຶ່ງພຣະອົງຕ້ອງໄປໃຫ້ການຕ້ອນຮັບເຈົ້າເມືອງຂອງເມືອງອັກຄາ. ພັນລະຍາຂອງພຣະອົງຮູ້ສຶກວ່າ ເສື້ອຄຸມຂອງພຣະອົງບໍ່ເໝາະສົມພຽງພໍສຳລັບທີ່ຈະໃຊ້ໃນໂອກາດດັ່ງກ່າວ. ກ່ອນຈະເຖິງມື້ນັ້ນບໍ່ດົນປານໃດພັນລະຍາຂອງພຣະອົງຈຶ່ງໄປຫາຊ່າງຕັດເສື້ອ ແລະ ສັ່ງໃຫ້ຕັດເສື້ອຄຸມຢ່າງດີຕົວໜຶ່ງໃຫ້ກັບ ພຣະອັບດຸລບາຣາ. ເມື່ອມາເຖິງມື້ທີ່ເຈົ້າເມືອງມາຢ້ຽມຢາມ, ເສື້ອຄຸມຜືນໃໝ່ກໍ່ຖືກນຳມາວາງກຽມໄວ້ສຳລັບພຣະອົງ. ແຕ່ ພຣະອັບດຸລບາຣາ ພັດໄປຄົ້ນຫາເສື້ອຄຸມຜືນເກົ່າ. ເສື້ອຄຸມລາຄາແພງເຊັ່ນນີ້, ຜືນທີ່ວາງກຽມໄວ້ເປັນຂອງພຣະອົງບໍ? ໃນມູນຄ່າທີ່ເທົ່າກັນ, ສາມາດຕັດເສື້ອຄຸມແບບທຳມະດາໄດ້ຫ້າຜືນ. ພຣະອົງໄດ້ກ່າວກັບພັນລະຍາຂອງພຣະອົງວ່າ "ເຫັນບໍ່ວ່າ, ຂ້າພະເຈົ້າບໍ່ພຽງແຕ່ຈະໄດ້ເສື້ອຄຸມຕົວໃໝ່ຜືນໜຶ່ງເທົ່ານັ້ນ, ແຕ່ຍັງໄດ້ມີອີກສີ່ຜືນ ເພື່ອໄວ້ແຈກໃຫ້ກັບຄົນອື່ນອີກດ້ວຍ!"*

## E. ເກມ "ຫອຍທາດ"

ສຳລັບກິດຈະກຳຕໍ່ໄປ, ບອກເດັກນ້ອຍວ່າພວກເຂົາຈະເປັນຫອຍທາດໂຕໜຶ່ງ. ເພື່ອເຮັດໃຫ້ສຳເລັດ, ພວກເຂົາຕ້ອງຍື່ນລຽນແຖວດຽວ, ຈັບມືກັນ, ແລະ ບໍ່ປ່ອຍມືກັນ. ຄົນໜຶ່ງທີ່ຢູ່ສຸດທ້າຍຈະເປັນໃຈກາງ, ແລະ ເຂົາຕ້ອງຍື່ນຢູ່ຊື່ໆ. ເດັກຄົນທີ່ຢູ່ສຸດຫົວແຖວຂອງອີກດ້ານ ຕ້ອງນຳພາຄົນອື່ນໆໃນແຖວຢ່າງໝູນອ້ອມຮອບເດັກທີ່ຢູ່ໃຈກາງ. ເທື່ອລະໜ້ອຍ ພວກເຂົາຄວນໝູນຕົວເອງໃນລັກສະນະທີ່ເປັນກຽວຈົນຂົດເໝືອນກັບຫອຍທາດ.

ອີກແບບໜຶ່ງຈາກເກມຂ້າງເທິງ, ບອກໃຫ້ເດັກນ້ອຍຢືນເປັນແຖວດຽວອີກຄັ້ງ ແລະ ຈັບມືກັນ. ຈາກນັ້ນຂໍໃຫ້ເດັກທີ່ຢູ່ສຸດທ້າຍຂອງແຖວເບື້ອງໜຶ່ງເປັນວົງມົນ, ແລ້ວຄ່ອຍໆໝູນຄົນອື່ນໆເຂົ້າຫາລາວຈົນຂອດເຂົ້າເປັນຫອຍທາດ. ກວດສອບໃຫ້ແນ່ໃຈວ່າ ພວກເຂົາລະມັດລະວັງທີ່ຈະບໍ່ໃຫ້ຢຽບຕີນກັນ ແລະກັນເວລາຫຼິ້ນ.

ຫາກມີເວລາ, ເມື່ອເດັກນ້ອຍເຮັດຮູບຮ່າງເປັນຫອຍທາດແລ້ວ, ບອກເດັກໆທີ່ຢູ່ທາງກາງໃຫ້ກົ້ມລົງ ແລະ ຜູ້ໜຶ່ງທີ່ຢູ່ໃຈກາງໃຫ້ລອດກ້ອງແຂນຂອງເດັກນ້ອຍທີ່ຢູ່ທາງຂ້າງລາວ, ແລ້ວສືບລອດຜ່ານກ້ອງແຂນຄົນອື່ນໆຕໍ່ໄປ ຈົນກວ່າລາວຈະອອກມາຈາກຫອຍທາດ. ໃນຂະນະທີ່ສືບຕໍ່, ໃຫ້ເດັກນ້ອຍຄົນອື່ນຍັງຄົງຈັບມືກັນໄວ້, ເຮັດຕາມຄົນອື່ນທີ່ລອດຜ່ານກ້ອງແຂນກັນຈົນກວ່າຈະອອກມາຈາກຫອຍທາດ ແລ້ວເປັນຮູບແບບຢືນແຖວດຽວອີກຄັ້ງ. ເຫັນໄດ້ຊັດເຈນວ່າ ເພື່ອໃຫ້ເກມນີ້ໃຊ້ງານໄດ້, ເຈົ້າຕ້ອງມີຈຳນວນເດັກນ້ອຍທີ່ພຽງພໍໃນຊັ້ນຮຽນ.

F. ການທາສີ: ຮູບທີ 6

G. ການສວດອະທິຖານປິດ

## ບົດທີ 7

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ເຈົ້າສາມາດທວນຄືນກັບເດັກນ້ອຍ ເຖິງບົດສວດອະທິຖານທີ່ພວກເຂົາໄດ້ທ່ອງຈຳໃນບົດທີ 5, ຫຼັງຈາກນັ້ນເຈົ້າ ແລະ ຄົນລຸ້ນເຍົາສອງສາມຄົນກໍຈະສວດອະທິຖານເປີດ.

### B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຄວາມຫັນສາເປັນດັ່ງປີກໃຫ້ເຮົາໄດ້ໂບຍບິນ**

```
D       A       D           G                D
ຄວາມຫັນສາເປັນດັ່ງປີກ         ໃຫ້ເຮົາໄດ້ໂບຍບິນ
D       A       D           A                D
ຄວາມຫັນສາເປັນດັ່ງປີກ         ໃຫ້ເຮົາໄດ້ໂບຍບິນ

   A                    D
ໃນຍາມຫັນສາ           ພະລັງເຮົາແຂງແກ່ນ
   A                    D
ໃນຍາມຫັນສາ           ປັນຍາເຮົາແຈ່ມແຈ້ງ
   A                        D
ໃນຍາມຫັນສາ           ຄວາມເຂົ້າໃຈເຮົາຜ່ອງໃສ
D       A       D           A                D
ຄວາມຫັນສາເປັນດັ່ງປີກ         ໃຫ້ເຮົາໄດ້ໂບຍບິນ

        Dm  A7   Dm                 A7     Dm
ແຕ່ໃນຍາມທີ່ເຮົາທຸກໃຈ          ໃນຍາມທີ່ເຮົາທຸກໃຈ
```

A Dm A Dm
ເຮົາອ່ອນແອ ພະລັງຫົດຫາຍໄປ
A Dm A Dm
ຈິດໃຈຂອງເຮົາໝົ່ນໝອງ ຄວາມເຂົ້າໃຈກໍ່ມືດມົນ
A7
ຫາກແຕ່ວ່າ ...

ຄວາມຫັນສາເປັນດັ່ງປີກ ໃຫ້ເຮົາໄດ້ໂບຍບິນ
ຄວາມຫັນສາເປັນດັ່ງປີກ ໃຫ້ເຮົາໄດ້ໂບຍບິນ

ໃນຍາມຫັນສາ ພະລັງເຮົາແຂງແກ່ນ
ໃນຍາມຫັນສາ ປັນຍາເຮົາແຈ່ມແຈ້ງ
ໃນຍາມຫັນສາ ຄວາມເຂົ້າໃຈເຮົາຜ່ອງໃສ
ຄວາມຫັນສາເປັນດັ່ງປີກ ໃຫ້ເຮົາໄດ້ໂບຍບິນ

## C. ການທ່ອງຈຳພຣະວັດຈະນະ

ຂໍ້ຄວາມຕໍ່ໄປນີ້ຈະຊ່ວຍເຈົ້າໃນການນຳສະເໜີ ພຣະວັດຈະນະທີ່ເດັກຈະຕ້ອງທ່ອງຈຳໃນບົດນີ້, ເຊິ່ງເນັ້ນໜັກໃນຫົວຂໍ້ ຄວາມສຸກຫັນສາ:

ພຣະອັບດຸລບາຮາ ກ່າວກັບພວກເຮົາວ່າ ຄວາມຫັນສາເປັນດັ່ງປີກໃຫ້ເຮົາ, ໃນຍາມທີ່ເຮົາມີຄວາມສຸກຫັນສາເຮົາມີຄວາມແຂງແກ່ນຫຼາຍຂຶ້ນ, ແລະ ເວລາທີ່ມີຄວາມສະບາຍໃຈ ພວກເຮົາຈະເຂົ້າໃຈໄວຂຶ້ນ. ຄວາມສຸກຫັນສາເປັນຄຸນລັກສະນະອັນໜຶ່ງຂອງຫົວໃຈມະນຸດ. ຫົວໃຈທີ່ເຕັມໄປດ້ວຍຄວາມສຸກ, ພວກເຮົາຈະເຫັນພຣະພອນຂອງພຣະຜູ້ເປັນເຈົ້າທຸກຫົນທຸກແຫ່ງອ້ອມຮອບຕົວເຮົາ - ພອນຈາກພໍ່ແມ່ທີ່ຮັກ, ພອນຂອງມິດຕະພາບ, ແລະ ເໜືອສິ່ງອື່ນໃດ, ພຣະພອນທີ່ໄດ້ຮູ້ຈັກພຣະອົງ ແລະ ຮັກພຣະອົງ. ພວກເຮົາຕ້ອງມີຄວາມສະບາຍໃຈ ແລະ ຄວາມສຸກຫັນສາພາຍໃຕ້ທຸກສະພາບການ ແລະ ພະຍາຍາມຢ່າງທີ່ສຸດເພື່ອສ້າງຄວາມສຸກໃຫ້ກັບຄົນອື່ນ. ພຣະອັບດຸລບາຮາ ປາດຖະໜາໃຫ້ເດັກນ້ອຍທຸກຄົນ ສ່ອງແສງເໝືອນຕະກຽງສະຫວ່າງສະໄຫວ ທີ່ສ່ອງແສງແຫ່ງຄວາມສຸກຫັນສາໄປຍັງທຸກແຫ່ງຫົນ. ເພື່ອຊ່ວຍໃຫ້ພວກເຮົາຈົດຈຳໄດ້ວ່າ ພວກເຮົາຕ້ອງເປັນຜູ້ທີ່ມີຄວາມສຸກຫັນສາຕະຫຼອດເວລານັ້ນ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"ໂອ ບຸດແຫ່ງມະນຸດ! ຈົ່ງຍິນດີໃນຄວາມປິຕິຂອງຫົວໃຈ, ເພື່ອວ່າເຈົ້າຈະຄູ່ຄວນຕໍ່ການພົບກັບເຮົາ ແລະ ສະທ້ອນຄວາມງາມຂອງເຮົາ."[106]**

*ຍິນດີ*

1. ທ້າວ ໂຣນໍ ອາໃສຢູ່ຫ່າງໄກຈາກພໍ່ຕູ້ແມ່ຕູ້ຂອງລາວ. ເມື່ອລາວໄດ້ຍິນວ່າລາວຈະໄດ້ໄປຢ້ຽມພວກເພິ່ນໃນຊ່ວງພັກຮຽນ, ລາວກໍມີຄວາມສຸກຫຼາຍ. ຫົວໃຈຂອງລາວມີຄວາມຍິນດີ.
2. ນາງ ມູດສ໌ກັນ ໄດ້ຊ່ວຍແມ່ແລະພໍ່ຂອງລາວແປງໄນໝາກແຕງໃນສວນຂອງພວກເຂົາ. ຫົວໃຈຂອງລາວມີຄວາມຍິນດີ ເມື່ອລາວເຫັນໝາກແຕງໜ່ວຍນ້ອຍໆໜ່ວຍທຳອິດເລີ່ມປາກົດ.

*ຄູ່ຄວນ*

1. ໂຈນາ ຕັ້ງໃຈຮຽນຫຼາຍ ແລະ ໄດ້ຮັບຜົນການຮຽນທີ່ດີຫຼາຍ. ຄູຍ້ອງຍໍເພາະຄວາມດຸໝັ່ນ ແລະ ການຕັ້ງໃຈຮຽນຢ່າງໜັກຂອງລາວ. ການຕັ້ງໃຈຮຽນຢ່າງໜັກຂອງ ໂຈນາ ແມ່ນຄູ່ຄວນກັບຄຳຍ້ອງຍໍຂອງຄູ.
2. ເດວິດ ເບິ່ງແຍງນ້ອງຊາຍ ແລະ ນ້ອງສາວຂອງຕົນເປັນຢ່າງດີສະເໝີ. ພໍ່ແມ່ຂອງລາວຮູ້ວ່າພວກເຂົາສາມາດໄວ້ວາງໃຈ ເດວິດ ໃຫ້ເບິ່ງແຍງນ້ອງໄດ້. ເດວິດ ຄູ່ຄວນກັບຄວາມໄວ້ໃຈຈາກພໍ່ແມ່ຂອງລາວ.

*ສະທ້ອນ*

1. ອາມາຣິ ຂັດເງົາກ້ອນຫີນທີ່ລາວຊອກມາ ຈົນເຮັດໃຫ້ມັນເງົາເຫຼື້ອມຫຼາຍ ຈົນເລີ້ມສະທ້ອນແສງອອກມາ.
2. ຫົວໃຈທີ່ບໍລິສຸດສະທ້ອນເຖິງຄຸນລັກສະນະທັງຫຼາຍຂອງ ພຣະຜູ້ເປັນເຈົ້າ.

*ຄວາມງາມ*

1. ແມ່ຂອງອີລານາ ມີຄວາມສຸກກັບການທີ່ໄດ້ເຫັນນົກບິນເທິງທ້ອງຟ້າ, ດອກໄມ້ເບັ່ງບານ, ແລະ ຄື້ນຂອງທະເລສາດຊັດເຂົ້າຫາຝັ່ງ. ລາວເຫັນຄວາມງາມໃນທຳມະຊາດ.
2. ບາງຄັ້ງຄວາມງາມຂອງເພງກໍຈັບໃຈເຮົາຫຼາຍ ຈົນເຮັດໃຫ້ນ້ຳຕາໄຫຼ.
3. ເມື່ອໃດກໍຕາມທີ່ ທ້າວ ມູເນີ ສວດອະທິຖານ, ລາວຈະລະນຶກເຖິງຄວາມງາມຂອງພຣະຜູ້ເປັນເຈົ້າ, ຄວາມຮັກຂອງພຣະອົງ, ຄວາມເອື້ອເຟື້ອຂອງພຣະອົງ, ຄວາມຮອບຮູ້ຂອງພຣະອົງ.

## D. ເລື່ອງລາວ

ເລື່ອງຕໍ່ໄປນີ້ຈະສະແດງໃຫ້ເດັກນ້ອຍເຫັນວ່າ ພຣະອັບດຸລບາຮາ ນຳຄວາມສຸກທັນການມາສູ່ຫົວໃຈຂອງຜູ້ທີ່ຢູ່ອ້ອມຂ້າງພຣະອົງຄືແນວໃດ.

*ລີຣອຍ ໄອໂອອັດສ ເປັນບາຮາຍທີ່ໂດດເດັ່ນຜູ້ໜຶ່ງ ເຊິ່ງເຈົ້າອາດຈະໄດ້ຮຽນຮູ້ເພີ່ມຫຼາຍຂຶ້ນເມື່ອເຈົ້າເຕີບໂຕ. ໃນປີ ຄສ 1912 ຂະນະນັ້ນເຂົາຍັງເປັນເດັກໜຸ່ມ ໃນຕອນທີ່ທ່ານນາຍໄດ້ມາຢາມເມືອງຊິຄາໂກ້. ພວກເຈົ້າພໍທີ່ຈະຈິດຕະນາການໄດ້ບໍ່ວ່າ ເດັກທີ່ມີຄຸນນະທັມຄົນນີ້ ຈະຮູ້ສຶກຕື່ນເຕັ້ນພຽງໃດທີ່ຈະໄດ້ຮັບໂອກາດໃຫ້ເຂົ້າເຝົ້າ ພຣະອັບດຸລບາຮາ? ມື້ໜຶ່ງ, ຂະນະທີ່ລາວ ແລະ ພໍ່ຂອງລາວກຳລັງເດີນທາງໄປຍັງໂຮງແຮມທີ່ ພຣະອັບດຸລບາຮາ ປະທັບຢູ່, ລີຣອຍ ກໍ່ໄດ້ເກີດຄວາມຄິດໜຶ່ງຂຶ້ນມາ: ລາວຕັດສິນໃຈວ່າ ລາວຕ້ອງການນຳດອກໄມ້ໄປຖະຫວາຍໃຫ້ກັບ ພຣະອັບດຸລບາຮາ. ດ້ວຍເງິນຈຳນວນພຽງເລັກໜ້ອຍທີ່ລາວມີຢູ່, ລາວໄດ້ຊື້ດອກຄາເນຊັນສີຂາວທີ່ສວຍງາມຊໍ່ໜຶ່ງ. ແຕ່ພໍລາວໄປເຖິງໂຮງແຮມແຫ່ງນັ້ນ, ລາວໄດ້ປ່ຽນໃຈເສຍແລ້ວ. ລາວຕັດສິນໃຈທີ່ຈະບໍ່ມອບສິ່ງຂອງໃຫ້ກັບທ່ານນາຍ, ບໍ່ໃຫ້ແມ້ກະທັ່ງດອກໄມ້ທີ່ສວຍງາມ. ລາວຈະຖະຫວາຍຫົວໃຈຂອງລາວໃຫ້ກັບພຣະອົງ. ນັ້ນເປັນສິ່ງທີ່ມີຄວາມສຳຄັນຫຼາຍທີ່ສຸດ ທີ່ເຂົາຈະສາມາດຖະຫວາຍໃຫ້ກັບພຣະອົງໄດ້. ດັ່ງນັ້ນ ພໍ່ຂອງລີຣອຍຈຶ່ງໄດ້ມອບດອກໄມ້ຊໍ່ນັ້ນໃຫ້ກັບ ພຣະອັບດຸລບາຮາ ໂດຍບໍ່ໄດ້ກ່າວວ່າໃຜເປັນຜູ້ນຳມາໃຫ້.*

*ຈາກນັ້ນ ພຣະອັບດຸລບາຮາ ໄດ້ກ່າວສຸນທອນພົດກັບເພື່ອນໆທີ່ໄດ້ມາຣວມຕົວກັນທີ່ໂຮງແຮມແຫ່ງນັ້ນເພື່ອເຂົ້າເຝົ້າພຣະອົງ. ໃນລະຫວ່າງການກ່າວສຸນທອນພົດຂອງພຣະອົງຢູ່ນັ້ນ, ລີຣອຍໄດ້ນັ່ງຢູ່ແທບພຣະບາດຂອງພຣະອົງຢ່າງທຽບໆ ແລະ ຟັງພຣະວັດຈະນະອັນປ່ຽມໄປດ້ວຍຄວາມຮອບຮູ້ ແລະ ຄວາມຮັກຂອງພຣະອົງ. ຫຼັງຈາກນັ້ນທ່ານນາຍກໍ່ໄດ້ລຸກຂຶ້ນຢືນ ແລະ ຈັບມືກັບແຂກ, ມອບດອກຄາເນຊັນສີຂາວໃຫ້ແຕ່ລະຄົນໆລະດອກ ເພື່ອສະແດງເຖິງຄວາມຮັກຂອງພຣະອົງ. ຂະນະນີ້ລີຣອຍໄດ້ຢືນຢູ່ດ້ານຫຼັງຂອງພຣະອັບດຸລບາຮາ. "ໂອ! ຂ້ອຍຢາກໃຫ້ພຣະອົງທັນມາມອບດອກໄມ້ໃຫ້ຂ້ອຍບ້າງແດ່," ເດັກໜຸ່ມຄິດໃນໃຈ. ອາດເປັນໄປໄດ້ວ່າ, ເລິກໆໃນໃຈຂອງລາວ, ລາວກໍ່ຢາກໃຫ້ທ່ານນາຍ ຮັບຮູ້ວ່າລາວເປັນຜູ້ນຳດອກໄມ້ເລົ່ານັ້ນມາ. ແຕ່ແລ້ວດອກຄາເນຊັນສີຂາວ ແລ້ວດອກເລົ່າກໍ່ຖືກມອບໃຫ້ກັບຜູ້ອື່ນ, ແລະ ເບິ່ງຄືກັບວ່າລີຣອຍຈະບໍ່ໄດ້ຮັບດອກໄມ້ແມ້ແຕ່ດອກດຽວ. ແລ້ວທັນໃດນັ້ນ ທ່ານນາຍກໍ່ໄດ້ຫັນໜ້າມາຫາລາວ ແລະ ຈ້ອງເບິ່ງທີ່ ລີຣອຍ ໄອໂອອັດສ. ໃບໜ້າຂອງພຣະອົງເປັ່ງປະກາຍດ້ວຍຄວາມຮັກ ແລະ ດວງຕາຂອງພຣະອົງປ່ຽມໄປດ້ວຍຄວາມເມດຕາ. ແລ້ວພຣະອົງຊົງມອບດອກຄາເນຊັນສີຂາວໃຫ້ກັບລາວບໍ? ບໍ່ເລີຍ. ພຣະອັບດຸລບາຮາ ໄດ້ຊົງມອບໃຫ້ ລີຣອຍ ສິ່ງທີ່ມີຄ່າກວ່ານັ້ນອີກ. ພຣະອົງມີດອກໄມ້ສີແດງທີ່ສວຍງາມດອກໜຶ່ງ ເໜັບຢູ່ເທິງເສື້ອຄຸມຂອງພຣະອົງ. ພຣະອົງໄດ້ດຶງດອກໄມ້ນັ້ນອອກມາ ແລະ ມອບໃຫ້ກັບເດັກໜຸ່ມຄົນນັ້ນ. ຫົວໃຈຂອງລີຣອຍ*

*ກະໂດດໂລດເຕັ້ນຢ່າງມີຄວາມສຸກຫັນສາ. ທ່ານບາຍຊິງຮູ້ດີວ່າ ຜູ້ໃດທີ່ໄດ້ນຳດອກຄາເນຊັນສີຂາວນັ້ນ ມາຖະຫວາຍໃຫ້ກັບພຣະອົງ.*

E. ເກມ: **"ຈັບຫາງມັງກອນ"**

ໃຫ້ເລີ້ມຕົ້ນກິດຈະກຳ, ດ້ວຍການຂໍໃຫ້ເດັກນ້ອຍຢືນເປັນແຖວດຽວ, ເອົາມືຂອງພວກເຂົາວາງໄວ້ເທິງບ່າຂອງໝູ່ທີ່ຢູ່ທາງໜ້າຂອງເຂົາ. ເດັກນ້ອຍຄົນທຳອິດໃນແຖວເປັນຫົວມັງກອນ. ເດັກນ້ອຍຄົນສຸດທ້າຍໃນແຖວເປັນຫາງມັງກອນ, ເຊິ່ງມີຄວາມກະຕືລືລົ້ນຫຼາຍທີ່ຈະແກວ່ງໄປທາງຊ້າຍຫຼືທາງຂວາເພື່ອຫຼົບໜີຫົວ. ກ່ອນທີ່ຈະມີການໃຫ້ສັນຍານ "ເລີ້ມໄດ້", ມັງກອນຕ້ອງຢືນເປັນແຖວຊື່. ເດັກນ້ອຍຄົນໜຶ່ງຈະນັບຂຶ້ນວ່າ "ໜຶ່ງ, ສອງ, ສາມ, ເລີ້ມໄດ້!" ເມື່ອໄດ້ຍິນຄຳວ່າ "ເລີ້ມໄດ້", ຫົວຈະຕ້ອງແລ່ນອ້ອມໄປຫາຫາງເພື່ອຈັບຫາງ. ຕົວຂອງມັງກອນຕ້ອງຍ້າຍໄປພ້ອມກັບຫົວ ແລະ ບໍ່ຂາດອອກຈາກກັນ. ຖ້າຫາກຫົວຈັບຫາງໄດ້ສຳເລັດ, ຫຼື ຖ້າຫາກເດັກນ້ອຍຂາດອອກຈາກກັນກ່ອນທີ່ຈະຈັບຫາງໄດ້, ຫົວຈະໄດ້ໄປເປັນຫາງ, ແລະ ຄົນທີ່ຢູ່ຖັດໄປໃນແຖວຈະຫຍັບຂຶ້ນມາເປັນຫົວແທນ. ເກມນີ້ສາມາດສືບຕໍ່ໃນລັກສະນະນີ້ ຈົນກວ່າເດັກນ້ອຍທຸກຄົນໄດ້ມີໂອກາດເປັນຫົວແລະຫາງ ຢ່າງນ້ອຍຄົນລະເທື່ອ.

F. **ການທາສີ: ຮູບທີ 7**

G. **ການສວດອະທິຖານປິດ**

## ບົດທີ 8

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ເລີ້ມຊັ້ນຮຽນຕາມປົກກະຕິດ້ວຍການກ່າວສວດອະທິຖານບົດໜຶ່ງຈາກຄວາມຊົງຈຳ ແລະ ຂໍໃຫ້ນັກຮຽນສອງສາມຄົນທີ່ໄດ້ເລືອກໄວ້ລ່ວງໜ້າ ສວດບົດອະທິຖານເຊັ່ນກັນ. ຈາກນັ້ນເຈົ້າສາມາດທົບທວນເດັກນ້ອຍ ບົດສວດອະທິຖານທີ່ພວກເຂົາເລີ້ມຮຽນໃນບົດທີ 5.

### B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຕະຫຼອດເວລາ**

<u>ຮ້ອງປະສານສຽງ:</u>

E A
ເຮົາຄວນສະແດງອອກຕະຫຼອດເວລາ
B E A B
ວາຈາສັດຊື່ ແລະ ຄວາມຈິງໃຈຂອງເຮົາ

E A
ເຮົາຄວນສະແດງອອກຕະຫຼອດເວລາ
B E A B
ວາຈາສັດຊື່ ແລະ ຄວາມຈິງໃຈຂອງເຮົາ (ຊ້ຳ)

E A B
ເມື່ອຂ້ອຍເວົ້າ, ຂ້ອຍແບ່ງປັນຈາກສ່ວນເລິກຂອງຫົວໃຈເຮົາ
E A B
ຂ້ອຍປ່ອຍໃຫ້ຄຳເວົ້າທີ່ເມດຕາ ແລະ ຈິງແທ້ເປັນສິນລະປະຂອງຂ້ອຍ
E A B
ໂອ ສົມບັດລ້ຳຄ່າຄືຄວາມຈິງໃຈ
A E B E
ສ່ວນປະສົມທີ່ງົດງາມຂອງຄວາມຊື່ສັດ ແລະ ຄວາມບໍລິສຸດ
A E B E A E
ໂອ ສົມບັດລ້ຳຄ່າຄືຄວາມຈິງໃຈ

ເມື່ອຂ້ອຍຮັບໃຊ້, ຂ້ອຍມອບຈາກສ່ວນເລິກຂອງຫົວໃຈ
ຂ້ອຍຊຳລະລ້າງຄວາມຄິດ ແລະ ອະທິຖານກ່ອນທີ່ຈະເລີ້ມ
ດ້ວຍວິທີນີ້ການກະທຳຂອງຂ້ອຍສາມາດສ້າງຄວາມສາມັກຄີທີ່ແທ້ຈິງ
ໂອ ສົມບັດລ້ຳຄ່າຄືຄວາມຈິງໃຈ
ໂອ ສົມບັດລ້ຳຄ່າຄືຄວາມຈິງໃຈ

ເມື່ອຂ້ອຍອະທິຖານ, ຂ້ອຍອະທິຖານຈາກສ່ວນເລິກຂອງຫົວໃຈ
ຂ້ອຍຫຼັບຕາ ແລະ ນຶກເຖິງພຣະຜູ້ເປັນເຈົ້າ
ຂ້ອຍບໍ່ນຶກເຖິງຄວາມປາດຖະໜາຂອງຂ້ອຍ, ຂ້ອຍບໍ່ນຶກເຖິງສິ່ງທີ່ຂ້ອຍຕ້ອງການ
ຂ້ອຍຄິດວ່າຄວາມຈິງໃຈຈະສ່ອງຜ່ານການກະທຳຂອງຂ້ອຍໄດ້ຢ່າງໃດ
ໂອ ສົມບັດລ້ຳຄ່າຄືຄວາມຈິງໃຈ

ຮ້ອງປະສານສຽງ (ຊ້ຳສອງຄັ້ງ):

C. **ການທ່ອງຈຳພຣະວັດຈະນະ**

ເພື່ອເປັນການນຳສະເໜີພຣະວັດຈະນະສຳລັບທ່ອງຈຳ, ເຈົ້າສາມາດໃຊ້ແນວຄິດຕໍ່ໄປນີ້ກ່ຽວກັບຫົວຂໍ້ຂອງບົດຮຽນນີ້:

ເມື່ອຄຳເວົ້າ ແລະ ການກະທຳຂອງພວກເຮົາສະທ້ອນສິ່ງທີ່ຢູ່ໃນຫົວໃຈຂອງພວກເຮົາ, ພວກເຮົາຈະສະແດງອອກຄຸນລັກສະນະແຫ່ງຄວາມຈິງໃຈ. ຄວາມຈິງໃຈ ສ້າງແຮງບັນດານໃຈໃຫ້ເຮົາເປັນຜູ້ທີ່ມີວາຈາສັດຊື່ ແລະ ຄວາມຈົງຮັກພັກດີໃນການກະທຳຂອງເຮົາຕໍ່ຜູ້ອື່ນ. ຍົກຕົວຢ່າງເຊັ່ນ, ເວລາທີ່ພວກເຮົາເວົ້າວ່າພວກເຮົາເສຍໃຈກັບການກະທຳບາງຢ່າງ ທີ່ພວກເຮົາໄດ້ກະທຳລົງໄປ ແລະ ພວກເຮົາກໍ່ຮູ້ໃນໃຈນຳວ່າພວກເຮົາຈະເຮັດທຸກຢ່າງ ທີ່ຈະຊ່ວຍໃຫ້ພວກເຮົາບໍ່ກະທຳຄວາມຜິດນັ້ນຊ້ຳອີກ, ພວກເຮົາມີຄວາມຈິງໃຈ. ຄວາມຈິງໃຈຂອງພວກເຮົາເຮັດໃຫ້ຜູ້ອື່ນມອງເຫັນຄວາມບໍລິສຸດຂອງຫົວໃຈຂອງພວກເຮົາ ແລະ ມອບຄວາມໄວ້ວາງໃຈຂອງເຂົາໃນຕົວພວກເຮົາ. ເພື່ອຊ່ວຍໃຫ້ພວກເຮົາຈົດຈຳຄວາມສຳຄັນຂອງຄຸນລັກສະນະນີ້, ພວກເຮົາຈະທ່ອງຈຳພຣະວັດຈະນະຕໍ່ໄປນີ້ຂອງ ພຣະອັບດຸລບາຮາຟ:

**"ເຮົາຄວນສະແດງອອກຕະຫຼອດເວລາ ວາຈາສັດຊື່ ແລະ ຄວາມຈິງໃຈຂອງເຮົາ..."**[107]

*ສະແດງອອກ*

1. ທ້າວ ຊາບາ ທຳຄວາມສະອາດຂີ້ຕົມອອກຈາກເປືອກຫອຍ ທີ່ລາວເກັບມາໄດ້ຈາກຊາຍຫາດ ແລະ ລາວຂັດເງົາເປືອກຫອຍນັ້ນຈົນມັນລຽບ ແລະ ເປັນເງົາ. ເມື່ອລາວຂັດແລ້ວ, ຄວາມງາມທີ່ແທ້ຈິງຂອງເປືອກຫອຍກໍ່ໄດ້ສະແດງອອກມາ.
2. ຂະນະທີ່ດວງອາທິດຂຶ້ນ ແລະ ໝອກໃນຍາມເຊົ້າກໍໄດ້ຫາຍໄປ, ຄວາມງົດງາມຂອງພູເຂົາກໍ່ສະແດງອອກມາ.

*ຄວາມຈິງໃຈ*

1. ຫຼາຍຄັ້ງທີ່ເພື່ອນໆຮ່ວມຊັ້ນຮຽນຂອງ ລີໂອ ມັກຈະຫຼິ້ນເກມແທນທີ່ຈະອ່ານໜັງສື. ລີໂອ ເປັນກັງວົນວ່າຜົນການຮຽນຂອງພວກເຂົາຈະບໍ່ດີປານໃດ, ລາວຈຶ່ງສະເໜີແນະໃຫ້ເພື່ອນໆທຸກຄົນອ່ານໜັງສືຮຽນນຳກັນ ແລະ ພະຍາຍາມຄິດຫາຫົນທາງ ທີ່ພວກເຂົາຈະຊ່ວຍເຫຼືອເຊິ່ງກັນແລະກັນໃນການຮຽນ. ລີໂອ ມີຄວາມຈິງໃຈໃນຄວາມເປັນຫ່ວງເປັນໃຍເພື່ອນຮ່ວມຊັ້ນຮຽນຂອງລາວ.

2. ໂຣຊ້າ ໄດ້ສັນຍາກັບແມ່ຂອງລາວວ່າຈະເຮັດວຽກບ້ານທຸກມື້. ໃນຍາມທີ່ພໍ່ແມ່ຂອງລາວບໍ່ຢູ່, ໂຣຊ້າ ກໍ່ຕັ້ງໃຈເຮັດວຽກບ້ານຂອງລາວ. ໂຣຊ້າ ມີຄວາມຈິງໃຈໃນຄຳໝັ້ນສັນຍາຂອງລາວ.

## D. ເລື່ອງລາວ

ເລື່ອງເລົ່າທີ່ເຈົ້າເລົ່າໃຫ້ເດັກນ້ອຍຟັງໃນບົດນີ້ ຈະຊ່ວຍໃຫ້ພວກເຂົາຄິດວ່າ ການມີຄຸນລັກສະນະຂອງຄວາມຈິງໃຈ ແລະ ໃຫ້ເຫັນເມື່ອຂາດຄຸນລັກສະນະຂອງຄວາມຈິງໃຈໄປ.

*ເປັນເວລາຫຼາຍປີທີ່ຕົ້ນໄມ້ໃຫຍ່ຕົ້ນໜຶ່ງ ຂຶ້ນຢູ່ຫຼັງບ້ານຂອງຜົວເມຍຄູ່ໜຶ່ງທີ່ມີລູກຫຼາຍຄົນ. ໃນຂະນະທີ່ຕົ້ນໄມ້ນັ້ນຈະເລີນເຕີບໂຕຂຶ້ນ, ກິ່ງກ້ານສາຂາຂອງມັນກໍ່ໄດ້ຂະຫຍາຍສູງຂຶ້ນ ແລະກວ້າງອອກໄປເລື້ອຍໆ, ຈົນເປັນຮົ່ມເງົາໃຫ້ກັບບໍລິເວນຫຼັງບ້ານຂອງຄອບຄົວນີ້. ເຊົ້າມື້ໜຶ່ງໃນລະດູໜາວ, ພໍ່ກຳລັງຍ່າງຜ່ານກ້ອງຕົ້ນໄມ້ຕົ້ນນັ້ນ ຂະນະທີ່ລາວພົບກັບເພື່ອນບ້ານຄົນໜຶ່ງ. ພວກເຂົາເວົ້າລົມກັນຊົ່ວໄລຍະໜຶ່ງເຖິງຄວາມເປັນມາຂອງໝູ່ບ້ານແຫ່ງນັ້ນ. ຕໍ່ມາ, ເພື່ອນບ້ານສັງເກດເຫັນຕົ້ນໄມ້ໃຫຍ່ໂຕ, ແລ້ວເວົ້າກັບຜູ້ເປັນພໍ່ວ່າ "ເຈົ້າຮູ້ບໍ່ວ່າ, ຕອນນີ້ເຖິງເວລາທີ່ເຈົ້າຕ້ອງຕັດຕົ້ນໄມ້ຕົ້ນນີ້ໄດ້ແລ້ວ. ມັນແຜ່ກິ່ງກ້ານສາຂາ ແລະ ພະລຸງພະລັງໄປທົ່ວ. ຖ້າຫາກກິ່ງມັນຫັກລົງມາ ແລະ ຕົກໃສ່ຫຼັງຄາບ້ານຂອງເຈົ້າເດ - ຫຼື ຮ້າຍໄປກວ່ານັ້ນ, ຖ້າມັນຕົກລົງມາທັບລູກຂອງເຈົ້າ ໃນຕອນທີ່ເຂົາເຈົ້າຫລິ້ນຢູ່ກ້ອງເດ?" ເມື່ອທັງສອງຍ່າງແຍກກັນໄປ, ພໍ່ໄດ້ພິຈາລະນາຄຳແນະນຳຂອງເພື່ອນບ້ານຂອງເຂົາ. ຕົ້ນໄມ້ຕົ້ນນີ້ໄດ້ຕັ້ງເດັ່ນສະຫງ່າໃນທີ່ຂອງມັນມາຕັ້ງແຕ່ລາວຈື່ຄວາມບໍ່ໄດ້, ແລະ ບໍ່ເຄີຍມີອັນຕະລາຍໃດໆເກີດຂຶ້ນຈາກຕົ້ນໄມ້ຕົ້ນນີ້ເລີຍ. ມັນໃຫ້ຮົ່ມເງົາທີ່ເຢັນສະບາຍໃນຊ່ວງລະດູຮ້ອນ ແລະ ຍັງປົກປ້ອງບ້ານຈາກລົມທີ່ໜາວເໜັບໃນຊ່ວງລະດູໜາວ. ເບິ່ງໆແລ້ວຕົ້ນໄມ້ນີ້ກໍ່ຍັງແຂງແຮງ ແລະໝັ້ນຄົງ. "ຢ່າງໃດກໍ່ຕາມ, ເພື່ອນບ້ານຂອງເຮົາອາດຈະເວົ້າຖືກກໍ່ໄດ້ເດີ້," ພໍ່ກ່າວກັບຕົນເອງ "ບາງຄັ້ງການມອງພາບລັກພາຍນອກອາດຕົບຕາເຮົາກໍ່ໄດ້. ຖ້າຫາກຕົ້ນໄມ້ນັ້ນບໍ່ໄດ້ໝັ້ນຄົງຢ່າງທີ່ມັນເບິ່ງຄືສິໝັ້ນຄົງກໍ່ເປັນໄດ້?" ແລະສະນັ້ນພໍ່ຈຶ່ງໄດ້ຕັດສິນໃຈຕັດມັນ.*

*ຈັ່ງແມ່ນເປັນວຽກທີ່ໜັກໜ່ວງ, ເພາະມັນເປັນຕົ້ນໄມ້ທີ່ໃຫຍ່ໂຕຫຼາຍ, ແລະ ກໍ່ມີກິ່ງກ້ານ ແລະຫງ່າຫຼວງຫຼາຍ, ເຊິ່ງບາງກິ່ງກໍ່ຂະຫຍາຍຂຶ້ນໄປສູງຫຼາຍ. ທັນທີທີ່ລາວຕັດສຳເລັດ, ເພື່ອນບ້ານຂອງລາວກໍ່ກັບມາພໍດີ, ເທື່ອນີ້ມາພ້ອມກັບລູກຊາຍສອງຄົນຂອງເຂົາ ແລະລໍ້ຂົນເຄື່ອງອັນໜຶ່ງ. "ຂ້ອຍເຫັນເຈົ້າຕັດສິນໃຈຕັດຕົ້ນໄມ້ແລ້ວ," ເພື່ອນບ້ານຄົນນັ້ນກ່າວພ້ອມກັບມອງໄປຍັງທ່ອນໄມ້ຫຼາຍທ່ອນທີ່ວາງຊ້ອນໆກັນ. "ຂ້ອຍຄິດວ່າເຈົ້າຄົງຕ້ອງການຄົນຊ່ວຍຂົນໄມ້ພວກນັ້ນອອກຈາກບ້ານ. ບາງທີພວກເຮົາອາດສາມາດຊ່ວຍເຈົ້າໄດ້ເດີ້. ຂ້ອຍເອົາລໍ້ຂົນເຄື່ອງ ແລະ ລູກຊາຍສອງຄົນຂອງຂ້ອຍມານຳ, ແລະພວກເຮົາຍິນດີທີ່ຈະຊ່ວຍເຈົ້າຂົນທັງໝົດນີ້ອອກຈາກຫຼັງບ້ານຂອງເຈົ້າ." ໂດຍທີ່ບໍ່ລໍຖ້າຄຳຕອບ, ລູກຊາຍທັງສອງຄົນກໍ່ເລີ່ມຂົນທ່ອນໄມ້ເລົ່ານັ້ນໄວ້ໃນລໍ້ຂົນ*

*ເຄື່ອງ. ຂະນະທີ່ພວກເຂົາຊຸກລົ້ອອກໄປ, ຊາຍຜູ້ນັ້ນກຳບັງລົງເທິງຕໍໄມ້ຂອງຕົ້ນໄມ້ທີ່ເຄີຍປົກປ້ອງຄຸ້ມຄອງບ້ານຂອງລາວມາດົນນານ. ຕໍ່ມາທີ່ລາວໄດ້ຮູ້ວ່າ ແທ້ຈິງແລ້ວ ເພື່ອນບ້ານຄົນນັ້ນບໍ່ໄດ້ເປັນຫ່ວງສະຫວັດດີພາບຂອງຄອບຄົວລາວເລີຍ, ແຕ່ຕ້ອງການໄມ້ທີ່ຈະເປັນຟືນສຳລັບເຕົາຜີງ ທີ່ຊ່ວຍໃຫ້ເຂົາອົບອຸ່ນໃນຕະຫຼອດຊ່ວງລະດູໜາວ. "ບາງຄັ້ງການມອງພາບລັກສະນະພາຍນອກ, ອາດຕົບຕາເຮົາກໍ່ໄດ້ແທ້ໆເນາະ," ລາວກ່າວຂຶ້ນພ້ອມກັບຖອນຫາຍໃຈ. ຈະມີຄວາມເສຍໃຈຫຼາຍພຽງໃດ ທີ່ຄອບຄົວນັ້ນສູນເສຍຕົ້ນໄມ້ອັນສວຍງາມໃນວັນນັ້ນ. ແຕ່ໜ້າເສຍໃຈຍິ່ງກວ່ານັ້ນ - ທີ່ເພື່ອນບ້ານສູນເສຍຄວາມໄວ້ວາງໃຈຈາກເພື່ອນຂອງເຂົາ ແລະ ເສຍໂອກາດທີ່ຈະໄດ້ເປັນທີ່ພໍພຣະໄທຂອງ ພຣະຜູ້ເປັນເຈົ້າ.*

### E. ເກມ: "ຮ້ອນຫຼືໜາວ"

ເລີ່ມໂດຍການປິດຕາເດັກໜຶ່ງຄົນ ແລະ ຂໍໃຫ້ລາວອອກໄປຈາກກຸ່ມ. ໃຫ້ເດັກຄົນອື່ນໆເຊື່ອງສິ່ງຂອງນ້ອຍ, ຕົວຢ່າງເຊັ່ນ, ສໍດຳ ຫຼື ສີທຽນ, ແລ້ວເອົາຜ້າປິດຕາອອກຈາກເດັກຄົນທຳອິດ, ເຊິ່ງຕອນນີ້ລາວຈະຊອກຫາສິ່ງຂອງທີ່ເຊື່ອງໄວ້. ເພື່ອນຄົນອື່ນໆຊ່ວຍເຫຼືອລາວ ໂດຍການຕົບມືດັງຂຶ້ນ ແລະ ດັງຂຶ້ນເວລາທີ່ເດັກຄົນນັ້ນເຂົ້າໃກ້ສິ່ງຂອງທີ່ເຊື່ອງໄວ້. ຫາກເດັກຄົນນັ້ນໄກອອກໄປຈາກສິ່ງຂອງທີ່ຖືກເຊື່ອງໄວ້ນັ້ນ, ການຕົບມືກໍຈະຄ່ອຍລົງ ແລະ ຄ່ອຍລົງເລື້ອຍໆ. ແທນທີ່ຈະເປັນການຕົບມື, ເດັກໆສາມາດຮ້ອງອອກມາວ່າ "ອຸ່ນ", "ອຸ່ນຂຶ້ນ", ແລະ "ຮ້ອນ" ເວລາທີ່ເດັກຜູ້ທີ່ກຳລັງຊອກຫາ ເຂົ້າໃກ້ສິ່ງຂອງນັ້ນ ແລະ "ເຢັນ", "ເຢັນຂຶ້ນ", ແລະ "ໜາວ" ຖ້າຫາກເດັກຄົນນັ້ນຫຍັບຫ່າງອອກໄປຈາກສິ່ງຂອງ. ເດັກນ້ອຍຄວນລະວັງທີ່ຈະບໍ່ນຳທາງຜິດ ແກ່ເພື່ອນທີ່ຊອກຫາສິ່ງຂອງ; ບໍ່ສະນັ້ນແລ້ວລາວຈະສູນເສຍຄວາມໄວ້ວາງໃຈຄົນອື່ນໆ, ແລະ ເກມກໍ່ຈະບໍ່ໄດ້ເກີດຜົນອັນໃດ.

### F. ການທາສີ: ຮູບທີ 8

### G. ການສວດອະທິຖານປິດ

## ບົດທີ 9

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ໃນການເລີ່ມຊັ້ນຮຽນນີ້ ແລະ ຊັ້ນຮຽນອີກສາມຄັ້ງຕໍ່ໄປ, ຂໍໃຫ້ເລືອກບົດອະທິຖານບົດໜຶ່ງທີ່ທ່ອງຈຳໄດ້ຂຶ້ນໃຈ, ເຊັ່ນບົດທີ່ໄດ້ແນະນຳໃນຕອນທີ 10. ນັກຮຽນສອງສາມຄົນສາມາດຮ່ວມສວດອະທິຖານເປີດນຳກັນກັບເຈົ້າ, ຫຼັງຈາກນັ້ນ ເຈົ້າສາມາດແນະນຳບົດຂ້າງລຸ່ມເພື່ອທ່ອງຈຳ. ບົດສວດ

ອະທິຖານນີ້ຍາວກວ່າສອງບົດອະທິຖານທີ່ຜ່ານມາ ເຊິ່ງເດັກໆໄດ້ທ່ອງຈຳໄປແລ້ວ, ແຕ່ມັນຈະເຂົ້າໃຈໄດ້ບໍ່ຍາກ, ແລະ ພວກເຂົາທຸກຄົນຄວາມຈະຈື່ຈຳບົດສວດອະທິຖານນີ້ໃຫ້ໄດ້ ເມື່ອຮຽນຮອດບົດທີ 12.

> **"ພຣະພອນຂອງພຣະຜູ້ເປັນເຈົ້າ, ຢູ່ໃນເຮືອນ, ແລະ ທຸກແຫ່ງ, ໃນບ້ານເມືອງ, ໃນດວງໃຈ, ແລະ ເທິງພູເຂົາ, ໃນທີ່ພັກ, ແລະ ໃນຖ້ຳ, ໃນຮ່ອມພູ, ແລະ ພື້ນດິນ, ໃນທະເລ, ເທິງເກາະດອນ, ແລະ ໃນທົ່ງຫຍ້າ ບ່ອນທີ່ມີຜູ້ກ່າວເຖິງ ພຣະນາມຂອງພຣະຜູ້ເປັນເຈົ້າ, ແລະ ສັນລະເສີນພຣະກຽດຕິຄຸນຂອງພຣະອົງ."**[108]

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

### ເປັນດັ່ງພື້ນດິນ

C G
ເຫັນແຜ່ນດິນນັ້ນບໍ
F G C
ມັນຊ່າງຖ່ອມຕົນ
C G
ໃຫ້ຄວາມຮັ່ງມີທັງມວນຂອງພຣະເຈົ້າ
F G C
ທຸກສິ່ງທີ່ເຮົາຕ້ອງໃຊ້ໃນຊີວິດ
C G
ເຮົາຍ່ຳເທົ້າເທິງພື້ນດິນທຸກມື້
F G C
ແຕ່ເຄີຍໄດ້ຍິນແຜ່ນດິນເອີ່ຍປາກບໍ
C G F G C
"ວ່າຂ້ອຍນັ້ນລ້ຳລວຍ ແລະຍິ່ງໃຫຍ່ກວ່າເຈົ້າ"

ເຫັນຕົ້ນໄມ້ນັ້ນບໍ
ມັນຊ່າງຖ່ອມຕົນ
ຍິ່ງໃຫ້ຜົນຫຼາຍເທົ່າໃດ
ຍິ່ງໂນ້ມລົງໄປຫຼາຍເທົ່ານັ້ນ
ແບ່ງປັນໝາກຜົນໃຫ້ຢ່າງນີ້
ແຕ່ເຄີຍໄດ້ຍິນຕົ້ນໄມ້ເອີ່ຍປາກບໍ

"ວ່າຂ້ອຍນັ້ນລ້ຳລອຍ
ແລະຍິ່ງໃຫຍ່ກວ່າເຈົ້າ"

C G
ຈົ່ງເປັນດັ່ງພື້ນດິນ
F G C
ແລະດັ່ງຕົ້ນໄມ້
C G
ໄປຍັງສະຫວັນທີ່ແສນຍິ່ງໃຫຍ່
F G C
ດ້ວຍປີກແຫ່ງຄວາມອ່ອນນ້ອມຖ່ອມຕົນ
C G
ໄປຍັງສະຫວັນທີ່ແສນຍິ່ງໃຫຍ່
F G C
ດ້ວຍປີກແຫ່ງຄວາມອ່ອນນ້ອມຖ່ອມຕົນ

## C. ການທ່ອງຈຳພຣະວັດຈະນະ

ແນວຄິດຕໍ່ໄປນີ້ຈະຊ່ວຍເຈົ້າແນະນຳຫົວຂໍ້ຂອງບົດຮຽນ ແລະ ພຣະວັດຈະນະສຳລັບການທ່ອງຈຳ.

ຄຸນນະທຳໜຶ່ງທີ່ມີຄວາມສຳຄັນຫຼາຍກໍຄື ຄວາມຖ່ອມຕົນ. ບຸກຄົນຜູ້ທີ່ຖ່ອມຕົນຕໍ່ໜ້າພຣະພັກຂອງພຣະຜູ້ເປັນເຈົ້ານັ້ນ ຈະຕະໜັກໃນຄວາມຍິ່ງໃຫຍ່ຂອງພຣະອົງ ແລະ ສິ່ງສ້າງສັນຂອງພຣະອົງ. ພວກເຂົາຮູ້ວ່າ, ຫາກປາດສະຈາກການຊ່ວຍເຫຼືອ ແລະ ພຣະກາລຸນາທິຄຸນຂອງພຣະອົງແລ້ວ, ຈະບໍ່ມີຜູ້ໃດສາມາດປະສົບຜົນສຳເລັດກັບສິ່ງໃດເລີຍ. ພຣະອົງຄືພຣະຜູ້ຊົງອານຸພາບ, ພຣະຜູ້ຊົງອຳນາດທັງປວງ. ແລະ ເຊັ່ນດຽວກັນກັບທີ່ພວກເຮົາບໍ່ເຄີຍໂອ້ອວດຕໍ່ໜ້າພຣະພັກຂອງພຣະຜູ້ເປັນເຈົ້າ, ພວກເຮົາຍັງຄົງອ່ອນນ້ອມຖ່ອມຕົນຕໍ່ສິ່ງສ້າງສັນທັງໝົດຂອງພຣະອົງ. ພວກເຮົາຈື່ຈຳໄດ້ວ່າ ໂລກ ແລະ ທຸກຄົນບົນໂລກຖືກສ້າງຂຶ້ນມາໂດຍພຣະອົງ ແລະ ສະທ້ອນສັນຍາລັກ ແລະ ຄຸນລັກສະນະຂອງພຣະອົງ. ພວກເຮົາເຄົາລົບລັກສະນະນິໄສ ແລະ ຮູ້ຢູ່ໃນໃຈວ່າ ມີບາງສິ່ງທີ່ພວກເຮົາສາມາດຮຽນຮູ້ໄດ້ຈາກຄົນອ້ອມຂ້າງພວກເຮົາສະເໝີ. ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"ໂອ ບຸດແຫ່ງມະນຸດ! ຈົ່ງຖ່ອມຕົນຕໍ່ໜ້າເຮົາ, ເພື່ອວ່າເຮົາຈະໄດ້ມາຢ້ຽມເຈົ້າດ້ວຍຄວາມກະລຸນາ."**[109]

*ຖ່ອມຕົນ*

1. ນາງ ຊາຍນັບ ເຮັດວຽກບ້ານວິຊາຄະນິດສາດຢ່າງຂະຫຍັນຂັນແຂງ ແລະ ເຮັດໄດ້ດີທຸກໆຄັ້ງ. ລາວຖ່ອມຕົນ ແລະ ບໍ່ເຄີຍໂອ້ອວດຜົນສຳເລັດຂອງຕົນເອງ.
2. ເດັກໆໃນລະແວກບ້ານຂອງ ທ້າວ ຢົງຟູ ມີຄວາມຕັ້ງໃຈທີ່ຈະຮຽນຮູ້ສິ່ງຕ່າງໆ, ແລະ ລາວຖືກຂໍໃຫ້ຈັດຊັ້ນຮຽນໃຫ້ກັບເດັກເຫຼົ່ານັ້ນ. ເຖິງວ່າລາວຈະມີປະສົບການພຽງເລັກນ້ອຍ ແລະ ພິຈາລະນາວ່າຕົວເອງບໍ່ຄູ່ຄວນ, ແຕ່ລາວກໍມອບຄວາມໄວ້ວາງໃຈຂອງຕົນໃນ ພຣະຜູ້ເປັນເຈົ້າ ແລະ ເຮັດໃຫ້ດີທີ່ສຸດ. ລາວສອນເດັກດ້ວຍຄວາມອ່ອນນ້ອມຖ່ອມຕົນ.

*ດ້ວຍຄວາມກະລຸນາ*

1. ຄອບຄົວຂອງ ແຄນແດສ ເຊີນເພື່ອນບ້ານສອງສາມຄົນມາກິນອາຫານຢູ່ບ້ານຂອງພວກເຂົາ. ເມື່ອແຂກມາຮອດ, ແຄນແດສ ທັກທາຍພວກເຂົາຢ່າງອົບອຸ່ນ ແລະ ມອບເຄື່ອງດື່ມເຢັນໆແກ່ພວກເຂົາດ້ວຍຄວາມກະລຸນາ.
2. ທ້າວ ຈິໂອວານນີ ເຫັນເພື່ອນບ້ານສູງອາຍຸຂອງເຂົາລຳບາກໃນການຍ່າງກັບບ້ານ ໄປພ້ອມກັບຖືຖົງເຄື່ອງຂອງຫຼາຍ, ສະນັ້ນ ລາວຈຶ່ງອາສາໄປຖືຖົງເຄື່ອງດ້ວຍຄວາມກະລຸນາ.

## D. ເລື່ອງລາວ

*ຄວາມຖ່ອມຕົນເປັນຄຸນລັກສະນະໜຶ່ງ ໃນບັນດາຄຸນລັກສະນະທີ່ໂດດເດັ່ນທີ່ສຸດຂອງ ພຣະອັບດຸລບາຮາ. ຫຼາຍຄົນຕ້ອງການຕັ້ງສາຍຍາທີ່ຍິ່ງໃຫຍ່ໃຫ້ກັບພຣະອົງ, ແຕ່ພຣະອົງພັດຕ້ອງການທີ່ຈະຖືກຮຽກວ່າ "ອັບດຸລບາຮາ", ເຊິ່ງມີຄວາມໝາຍວ່າ "ຄົນຮັບໃຊ້ຂອງພຣະຜູ້ຊົງຄວາມຮຸ່ງເຮືອງ". ຄວາມປາດຖະໜາອັນແຮງກ້າທີ່ສຸດຂອງພຣະອົງຄືການຮັບໃຊ້. ມີຄັ້ງໜຶ່ງ, ຜູ້ມາຢ້ຽມຢາມຊາວຕະເວັນຕົກທີ່ລ້ຳລວຍຈຳນວນໜຶ່ງ ໄດ້ວາງແຜນຢ່າງລະອຽດລະອໍ ສຳລັບການລ້າງມືກ່ອນການຮັບປະທານອາຫານຂອງພຣະອົງ. ພວກເຂົາຈັດໃຫ້ມີເດັກຊາຍທີ່ແຕ່ງຕົວຢ່າງດີເປັນພິເສດ ມາຖືຊາມອ່າງທີ່ມີລວດລາຍສວຍງາມບັນຈຸນ້ຳ "ໃສສະອາດເໝືອນຄຣິດສະຕໍ", ແລະ ພ້ອມກັບຈັດໃຫ້ມີຜ້າເຊັດມືທີ່ອົບນ້ຳຫອມຕຽມໄວ້ນຳ. ເມື່ອທ່ານນາຍເຫັນກຸ່ມເພື່ອນສາສະນິກຊົນທີ່ຍ່າງຂ້າມເດີ່ນຫຍ້າ - ພ້ອມກັບເດັກຊາຍ, ຊາມອ່າງ, ແລະ ຜ້າເຊັດ - ພຣະອົງກໍຮູ້ຈຸດປະສົງຂອງພວກເຂົາ. ພຣະອົງຟ້າວຊອກຫານ້ຳທີ່ມີຢູ່ໃກ້ຕົວ, ແລ້ວລ້າງມືຂອງພຣະອົງ, ແລະ ກໍເຊັດມືຂອງພຣະອົງໂດຍໃຊ້ຜ້າຜືນທີ່ຄົນເຮັດສວນມີຢູ່. ດ້ວຍໃບໜ້າທີ່ຜ່ອງໃສ, ພຣະ*

*ອົງກໍຫັນໄປທັກທາຍກຸ່ມນັ້ນ. ຈາກນັ້ນ ກໍຊົງປະທານກຽດແກ່ແຂກຂອງພຣະອົງ, ດ້ວຍການມອບນໍ້າລ້າງມື ແລະ ຜ້າເຊັດມືທີ່ອົບດ້ວຍນໍ້າຫອມ ທີ່ຕັ້ງໃຈກຽມມາໃຫ້ພຣະອົງ!*

E. **ເກມ "ບາງຄັ້ງຂ້ອຍກໍຕົວສູງ"**

ໃຫ້ເດັກຄົນໜຶ່ງປິດຕາໄວ້ ແລະ ຄົນອື່ນໆທີ່ຍັງເຫຼືອຢືນເປັນວົງມົນອ້ອມຮອບລາວ. ພວກເຂົາເວົ້າຂຶ້ນພ້ອມກັນວ່າ:

"ຂ້ອຍຕົວສູງຫຼາຍ." (ພວກເຂົາຄວນຢືນແຢງຢີ້ຕີນຂຶ້ນ ແລະ ຢືດຕົວໃຫ້ສູງທີ່ສຸດເທົ່າທີ່ພວກເຂົາຈະເຮັດໄດ້)
"ຂ້ອຍຕົວເຕ້ຍຫຼາຍ" (ພວກເຂົານັ່ງຍອງຍໍ້ລົງ ແລະ ເຮັດໃຫ້ຕົວເອງເຕ້ຍທີ່ສຸດເທົ່າທີ່ຈະເຮັດໄດ້)
"ບາງຄັ້ງຂ້ອຍກໍຕົວສູງ" (ພວກເຂົາຢືດຕົວໃຫ້ສູງອີກຄັ້ງ)
"ບາງຄັ້ງຂ້ອຍກໍຕົວເຕ້ຍ" (ພວກເຂົານັ່ງຍອງຍໍ້ລົງອີກຄັ້ງ)

ບັດນີ້ໃຫ້ຄູສົ່ງສັນຍານແກ່ເດັກໆ, ເພື່ອບົ່ງບອກວ່າໃຫ້ຢືນຕົວສູງ ຫຼື ຕົວເຕ້ຍລົງ, ແລະ ໃຫ້ເດັກໆເວົ້າຂຶ້ນພ້ອມກັນວ່າ:

"ທວາຍເບິ່ງວ່າຕອນນີ້ພວກເຮົາເຮັດຫຍັງ!"

ເດັກທີ່ຖືກປິດຕາກໍຈະພະຍາຍາມທວາຍຈາກລະດັບສຽງຂອງພວກເຂົາວ່າ "ສູງ" ຫຼື "ເຕ້ຍ". ໃຫ້ເດັກນ້ອຍແຕ່ລະຄົນປ່ຽນກັນເປັນຄົນທີ່ຖືກປິດຕາ.

F. **ການທາສີ: ຮູບທີ 9**

G. **ການສວດອະທິຖານປິດ**

## ບົດທີ 10

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ຫຼັງຈາກສວດອະທິຖານເປີດແລ້ວ, ເດັກນ້ອຍສາມາດສືບຕໍ່ສວດທ່ອງຈຳບົດສວດອະທິຖານທີ່ໄດ້ແນະນຳໃນບົດຮຽນທີ່ຜ່ານມາ.

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ**

```
      C            Am           Em
ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ
             F      G
ສຳລັບມຸງກຸດແຫ່ງຄວາມເມດຕາ
      C            Am
ທີ່ໄວ້ເທິງຫົວຂອງຂ້າພະເຈົ້າ
      F            C
ມັນຈະເປັ່ງປະກາຍຕະຫຼອດໄປ
             G7           Am
ຂ້າພະເຈົ້າຍິ່ງສະແດງຄວາມກະຕັນຍູ
      Dm           G7           C
ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ
```

ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ
ສຳລັບຄວາມຮັກແລະຄວາມຮູ້
ທີ່ປູກຝັງໃນໃຈຂອງຂ້າພະເຈົ້າ
ມັນຈະເຕີບໂຕ ແລະ ເຕີບໂຕຂຶ້ນເລື່ອຍໆ
ຂ້າພະເຈົ້າຍິ່ງສະແດງຄວາມກະຕັນຍູ
ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ

ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ
ເພື່ອແສງສະຫວ່າງແຫ່ງຄວາມສັດຈະທັມ
ທີ່ເຮັດໃຫ້ຕາຂອງຂ້າພະເຈົ້າສະຫວ່າງ
ຂ້າພະເຈົ້າຈະເຫັນຄວາມກະລຸນາຂອງພຣະອົງຫຼັງໄຫຼ
ຂ້າພະເຈົ້າຍິ່ງສະແດງຄວາມກະຕັນຍູ
ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ

ຂ້າພະເຈົ້າຂອບໃຈແລະສັນລະເສີນພຣະຜູ້ເປັນເຈົ້າ

C. **ການທ່ອງຈໍາພຣະວັດຈະນະ**

ພຣະວັດຈະນະສໍາລັບການທ່ອງຈໍາສາມາດນໍາສະເໜີນັກຮຽນຂອງເຈົ້າ ດ້ວຍວິທີຕໍ່ໄປນີ້:

ເມື່ອພວກເຮົາໄດ້ຮັບຂອງຂວັນ ເຖິງແມ່ນວ່າຈະເປັນສິ່ງຂອງເລັກນ້ອຍທີ່ສຸດ, ພວກເຮົາກໍ່ຈະຂອບໃຈຜູ້ທີ່ມອບຂອງຂວັນສິ່ງນັ້ນໃຫ້ກັບພວກເຮົາ. ຍິ່ງໄປກວ່ານັ້ນ, ພວກເຮົາຄວນຂອບໃຈພຣະຜູ້ເປັນເຈົ້າ ສໍາລັບຂອງຂວັນ ແລະ ຄວາມກະລຸນານັບບໍ່ຖ້ວນຂອງພຣະອົງ - ດ້ວຍດວງຕາທີ່ຫ່ວງໃຍຄອຍດູແລພວກເຮົາ, ຫົວໃຈທີ່ຮັກພວກເຮົາ, ແລະ ທຸກສິ່ງທີ່ພຣະອົງຊົງສ້າງເພື່ອໃຫ້ພວກເຮົາເຕີບໂຕ ແລະ ພັດທະນາໄດ້. ພຣະອັບດຸລບາຮາ ບອກກັບພວກເຮົາວ່າ ພວກເຮົາຄວນຂອບໃຈພຣະຜູ້ເປັນເຈົ້າ ສໍາລັບຄວາມກະລຸນາຢ່າງຫຼວງຫຼາຍທີ່ພຣະອົງຊົງປະທານໃຫ້ແກ່ເຮົາ ແລະ ເຕີມຫົວໃຈຂອງພວກເຮົາດ້ວຍຄວາມຮັກຂອງພຣະອົງ. ພວກເຮົາຕ້ອງຂອບໃຈພຣະຜູ້ເປັນເຈົ້າໃນທຸກເວລາ, ແມ່ນແຕ່ໃນຍາມທີ່ພວກເຮົາຕ້ອງປະສົບກັບຄວາມຍາກລໍາບາກ. ການຂອບໃຈພຣະຜູ້ເປັນເຈົ້າ ຈະຊ່ວຍໃຫ້ພວກເຮົາສາມາດຮັບພຣະກະລຸນາອັນໄຮ້ຂີດຈໍາກັດຂອງພຣະອົງໄດ້ຫຼາຍຍິ່ງໆຂຶ້ນໄປ. ຂໍໃຫ້ພວກເຮົາທ່ອງຈໍາພຣະວັດຈະນະຕໍ່ໄປນີ້:

**"ເຈົ້າຈົ່ງເປັນສຸກ. ເຈົ້າຈົ່ງພໍໃຈ. ຈົ່ງລຸກຂຶ້ນເພື່ອຖວາຍຄໍາຂອບໃຈຕໍ່ພຣະຜູ້ເປັນເຈົ້າ, ເພື່ອວ່າຄວາມຮູ້ຂອງເຈົ້ານັ້ນ ຈະນໍາມາເຊິ່ງການເພີ່ມຂຶ້ນຂອງພຣະກະລຸນາທີ່ຄຸນ."**[110]

*ລຸກຂຶ້ນ*

1. ນາງ ເຊວມາ ດີໃຈທີ່ເຫັນແມ່ຕູ້ຂອງລາວລຸກຂຶ້ນຈາກຕຽງ ແລະ ໄປຍ່າງຫຼັງຈາກເຈັບປ່ວຍມາເປັນເວລາດົນ.
2. ເດັກນ້ອຍລຸກຂຶ້ນແຕ່ເຊົ້າທຸກໆມື້ເພື່ອມາສວດອະທິຖານ.

*ນໍາມາເຊິ່ງ*

1. ນາງ ນາເດຍ ຮັກສາຄວາມສະອາດຢູ່ສະເໝີ. ລາວຮູ້ວ່າຄວາມສະອາດມີຄວາມສໍາຄັນ ຕໍ່ການຈະເລີນເຕີບໂຕທາງຈິດວິນຍານ. ຄວາມສະອາດນໍາໄປສູ່ທາງຈິດວິນຍານ.
2. ສະມາຊິກໃນຄອບຄົວຂອງເຊຟ ໃຫ້ຄວາມຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນທຸກເລື່ອງທີ່ສໍາຄັນ. ເພາະພວກເຂົາຮ່ວມມືກັນ, ພວກເຂົາໃຊ້ຊີວິດໃນຄວາມປອງດອງ. ການຮ່ວມມືກັນນໍາມາເຊິ່ງຄວາມປອງດອງ.

*ເພີ່ມຂຶ້ນ*

1. ປີກາຍນີ້, ໂຮງຮຽນຂອງມາເລຍມີຄູພຽງແຕ່ຫ້າຄົນ. ປີນີ້ມີຄູແປດຄົນ. ຈຳນວນຄູຢູ່ໂຮງຮຽນໄດ້ເພີ້ມຂຶ້ນອີກສາມຄົນ.
2. ທ້າວ ຊາຢານ ເປັນເດັກຊາຍທີ່ມ່ວນຊື່ນ, ແລະ ຄວາມມ່ວນຊື່ນຂອງລາວກໍເພີ້ມຫຼາຍຂຶ້ນເມື່ອໃດກໍຕາມທີ່ລາວສາມາດຊ່ວຍເຫຼືອຜູ້ອື່ນໄດ້. ຄວາມປິຕິຂອງລາວເພີ້ມຂຶ້ນເມື່ອລາວຮັບໃຊ້ຜູ້ອື່ນ.

## D. ເລື່ອງລາວ

*ມີໜຶ່ງ, ຜູ້ຍິງທີ່ຮັ່ງມີຄົນໜຶ່ງມາຈາກບ່ອນຫ່າງໄກແສນໄປ ເພື່ອມາພົບພຣະອັບດຸລບາຮາ ໃນດິນແດນສັກສິດ. ໃນຄວາມຍາວພໍສົມຄວນ, ນາງໄດ້ເລີ້ມຕົ້ນບອກກັບພຣະອົງກ່ຽວກັບບັນຫາເລັກນ້ອຍຂອງນາງ, ບັນຫາໜຶ່ງແລ້ວບັນຫາອື່ນອີກ. ພຣະອັບດຸລບາຮາ ໄດ້ຮັບຟັງດ້ວຍຄວາມອົດທົນ ແລະ ຄວາມເມດຕາເປັນເວລາດົນນານ, ຈົນໃນທີ່ສຸດ, ການນັດໝາຍອື່ນກໍໄດ້ຮຽກເອີ້ນພຣະອົງໄປ. ຢ່າງໃດກໍຕາມ ກ່ອນທີ່ຈະຈາກແຂກຂອງພຣະອົງ, ພຣະອົງໄດ້ຊີ້ໄປຫາສຸພາບບູລຸດຄົນໜຶ່ງທີ່ຍ່າງຢູ່ນອກປ່ອງຢ້ຽມ. ແລ້ວກ່າວວ່າ "ມີຊາຍຄົນໜຶ່ງທີ່ຂ້ອຍຈະພາເຂົ້າມາຫາເຈົ້າ, ລາວມີຊື່ວ່າ ມີຊາ ຮາດີອາລີ. ລາວຍ່າງຢູ່ເທິງພື້ນດິນໂລກ ແຕ່ວ່າລາວອາໃສຢູ່ໃນສະຫວັນ," ພຣະອັບດຸລບາຮາ ໄດ້ອະທິບາຍ. "ລາວມີບັນຫາຫຼາຍໆຢ່າງ ແລະ ລາວຈະບອກເຈົ້າກ່ຽວກັບບັນຫາເຫຼົ່ານັ້ນ."*

*ມີຊາ ຮາດີອາລີ ມີບັນຫາຫຼາຍຢ່າງແທ້ໆ. ລາວມາຈາກເປີເຊຍ, ບ່ອນທີ່ຊາວບາຮາຍຖືກປະຕິບັດດ້ວຍຄວາມບໍ່ຍຸດຕິທັມ ແລະ ຄວາມໂຫດຮ້າຍຢ່າງຍິ່ງ. ບາງຄົນຖືກຈັບ ແລະ ຈຳຄຸກຢ່າງບໍ່ຖືກຕ້ອງ; ຄົນອື່ນໆຖືກທຸບຕີໂດຍຜູ້ຄົນທີ່ເຕັມໄປດ້ວຍຄວາມກຽດຊັງ ແລະ ຄວາມໂມໂຫ. ມັນເປັນເລື່ອງທີ່ຄົງຈະເຮັດໃຫ້ຫົວໃຈຂອງເຈົ້າໂສກເສົ້າຫຼາຍ ເມື່ອໄດ້ຍິນກ່ຽວກັບຄວາມທຸກທໍລະມານທັງໝົດທີ່ ມີຊາ ຮາດີອາລີ ໄດ້ປະສົບໃນຊີວິດຂອງລາວ.*

*ຕອນນີ້, ພຣະອັບດຸລບາຮາ ອອກໄປຮັບເອົາ ມີຊາ ຮາດີອາລີ ແລະ ພາລາວມາພົບແຂກຂອງພຣະອົງ. ຫຼັງຈາກແນະນຳລາວໃຫ້ແມ່ຍິງຄົນນັ້ນ, ພຣະອັບດຸລບາຮາ ກໍໄປ. ທັນໃດນັ້ນ ມີຊາ ຮາດີອາລີ ກໍເລີ້ມເວົ້າກັບນາງດ້ວຍຄວາມມ່ວນຊື່ນ ແລະ ອ່ອນນ້ອມຖ່ອມຕົນຫຼາຍກ່ຽວກັບຊ່ວງເວລາທີ່ແສນພິເສດທີ່ເຮົາມີຊີວິດຢູ່ ແລະ ພຣະພອນທັງໝົດຂອງພຣະຜູ້ເປັນເຈົ້າທີ່ມາເຖິງ. ຈາກນັ້ນ ແຂກຮັບຟັງໄລຍະໜຶ່ງ, ໝົດຄວາມອົດທົນກໍເລີຍເວົ້າຂັດຂຶ້ນມາວ່າ, "ແຕ່ພຣະອັບດຸລບາຮາ ກ່າວວ່າເຈົ້າຈະບອກຂ້ອຍກ່ຽວກັບບັນຫາຂອງເຈົ້າ." ມີຊາ ຮາດີອາລີ ເງີຍໜ້າຂຶ້ນມາເບິ່ງດ້ວຍຄວາມປະຫຼາດໃຈ. ລາວຕອບກັບ "ບັນຫາຫວາ?". "ເປັນຫຍັງຄືວ່າແນວ*

*ນັ້ນທ່ານຍິງ, ຂ້ອຍບໍ່ເຄີຍມີບັນຫາຫຍັງເລີຍ. ຂ້ອຍບໍ່ຮູ້ວ່າບັນຫາມີຫຍັງແດ່." ແນ່ນອນ, ພຣະອັບດຸລບາຮາ ຮູ້ຢູ່ແລ້ວ, ເຖິງແມ່ນວ່າ ມີຊາ ຣາດີອາລີ ຈະປະສົບກັບຄວາມຍາກລຳບາກຫຼາຍປານໃດ, ບັນຫາເລົ່ານັ້ນບໍ່ເຄີຍແຕະຕ້ອງຄວາມສຸກຂອງລາວເລີຍ, ແລະ ລາວມອງເຫັນພຽງແຕ່ພຣະພອນທັງໝົດທີ່ພຣະຜູ້ເປັນເຈົ້າຊົງປະທານແກ່ຊີວິດຂອງລາວ, ເຊິ່ງລາວຮູ້ສຶກຂອບໃຈ.*

**E. ເກມ: "ແຮງກະຕຸ້ນແບບຊັບພັນ"**

ຂໍໃຫ້ນັກຮຽນຈັບມືກັນເປັນວົງມົນ. ທຳອິດ, ໃຫ້ພວກເຂົາເຝິກບີບມືຊ້າຍ ແລ້ວກໍມືຂວາຂອງພວກເຂົາ. ຫຼັງຈາກນັ້ນ, ອະທິບາຍພວກເຂົາວ່າພວກເຂົາກຳລັງຈະສົ່ງຕໍ່ສັນຍານ "ຊີບພະຈອນ" ໃຫ້ກຸ່ມ. ເດັກຄົນໜຶ່ງຈະເປັນຜູ້ເລີ່ມບີບມືຂອງເພື່ອນທີ່ຢູ່ຂ້າງຂວາໄວໆ, ເຊິ່ງເປັນຜູ້ທີ່ຈະສົ່ງສັນຍານຫາເພື່ອນຄົນຕໍ່ໄປ, ແລະ ຄົນຕໍ່ໆໄປ, ຈົນສັນຍານນັ້ນກັບມາຫາເດັກຄົນທຳອິດ. ເດັກນ້ອຍຄວນຈະມີການຈັບເວລາ ແລະ ທ້າທາຍໃຫ້ເດັກສົ່ງສັນຍານໄວຂຶ້ນເລື່ອຍໆ. ເມື່ອພວກເຂົາເຂົ້າໃຈວິທີການຫລິ້ນເກມແບບພື້ນຖານນີ້ໄດ້ແລ້ວ, ຄູສາມາດຂໍເດັກໃຫ້ສົ່ງສັນຍານໃນທາງກົງກັນຂ້າມ ຫຼື ເພີ່ມຈຳນວນຄັ້ງຂອງການບີບມືຕໍ່ສັນຍານໜຶ່ງເທື່ອ.

**F. ການທາສີ: ຮູບທີ 10**

**G. ການສວດອະທິຖານປິດ**

## ບົດທີ 11

**A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ເລີ່ມຊັ້ນຮຽນຕາມປົກກະຕິດ້ວຍການທ່ອງບົດສວດອະທິຖານບົດໜຶ່ງຈາກຄວາມຊົງຈຳ ແລະ ຂໍໃຫ້ນັກຮຽນສອງສາມຄົນສວດອະທິຖານຄົນລະບົດ. ຈາກນັ້ນ ເຈົ້າສາມາດຊ່ວຍເດັກນ້ອຍສືບຕໍ່ທ່ອງຈຳບົດສວດອະທິຖານທີ່ພວກເຂົາໄດ້ເລີ້ມຮຽນໃນບົດທີ 9.

**B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)**

## ມອງຫາສິ່ງທີ່ດີ

C

ຂ້ອຍມີຄວາມເປັນເລີດເປັນເປົ້າໝາຍຂອງຂ້ອຍ

F7

ແຕ່ວ່າຂ້ອຍມີຫົນທາງອີກໄກແສນໄກທີ່ຈະໄປ

C

ແລະຂ້ອຍຮູ້ວ່າມັນຊ່ວຍຂ້ອຍໃນເສັ້ນທາງຂອງຂ້ອຍ

G7 C

ເມື່ອຂ້ອຍເຫັນສິ່ງທີ່ດີໃນທຸກໆມື້

F7

ສະນັ້ນຖ້າຫາກຂ້ອຍເຫັນບາງຂໍ້ຜິດພາດທີ່ເຈົ້າເຮັດ

C

ຂ້ອຍຈະບໍ່ຮ້ອງເພງກ່ຽວຂໍ້ຜິດພາດໃນບົດເພງນີ້

G7

ຂ້ອຍຈະບໍ່ເວົ້າຂໍ້ຜິດພາດກັບໝູ່ເພື່ອນຂອງຂ້ອຍ

F7 C

ຂ້ອຍຈະບໍ່ຄິດເຖິງຂໍ້ຜິດພາດອີກຄັ້ງ

ຮ້ອງປະສານສຽງ:

F7

ຂ້ອຍຈະມອງເຫັນສິ່ງທີ່ດີໃນຕົວເຈົ້າ

C

ຂ້ອຍຈະມອງເຫັນສິ່ງທີ່ດີໃນຕົວເຈົ້າ

G7

ຂ້ອຍຮູ້ວ່າເຈົ້າກໍຢາກໃຫ້ຂ້ອຍເປັນເຊັ່ນນັ້ນ

F7 C

ເພາະນັ້ນຄືສິ່ງທີ່ຂ້ອຍຢາກໃຫ້ເຈົ້າເປັນ

F7

ແລະພຣະຜູ້ເປັນເຈົ້າມອງເຫັນສິ່ງທີ່ດີໃນຕົວຂ້ອຍ

C Am

ພຣະອົງມອງເຫັນສິ່ງທີ່ດີໃນຕົວຂ້ອຍ

C G
ແລະເມື່ອເວລາທີ່ຂ້ອຍປົກປິດ
F7
ຂໍ້ຜິດພາດພຽງເລັກນ້ອຍຂອງຜູ້ອື່ນ
C G7 C
ຂ້ອຍຫວັງວ່າພຣະຜູ້ເປັນເຈົ້າຈະປົກປິດຂໍ້ຜິດພາດຂອງຂ້ອຍເຊັ່ນກັນ

ພຣະອັບດຸລບາຮາ ຊົງຮອບຮູ້ຫຼາຍ
ພຣະອົງເຫັນຫົວໃຈຂອງເຈົ້າໃນດວງຕາເຈົ້າ
ແລະເມື່ອພຣະອົງສັງເກດເຫັນສິ່ງທີ່ຜິດປົກກະຕິ ພຣະອົງຈະຊອກ
ຫາວິທີທີ່ຈະເຮັດໃຫ້ເຈົ້າເຂັ້ມແຂງ ຫາກພົບຂໍ້ຜິດພາດໃນຕົວເຈົ້າ
ຂ້ອຍຮູ້ວ່າເຈົ້າກໍຢາກໃຫ້ຂ້ອຍເປັນເຊັ່ນນັ້ນ
ຂ້ອຍຈະບໍ່ບອກໃຜອີກ
ບໍ່, ຂ້ອຍຈະບໍ່ບອກແມ່ນແຕ່ຕົນເອງ

<u>ຮ້ອງປະສານສຽງ</u>

## C. ການທ່ອງຈຳພຣະວັດຈະນະ

ຂໍແນະນຳໃຫ້ເຈົ້ານຳສະເໜີຫົວຂໍ້ຂອງບົດຮຽນນີ້ ແລະ ພຣະວັດຈະນະສຳລັບການທ່ອງຈຳໂດຍການແບ່ງປັນແນວຄິດຕໍ່ໄປນີ້ກັບນັກຮຽນຂອງເຈົ້າ:

ການໃຫ້ອະໄພເປັນຄຸນລັກສະນະໜຶ່ງຂອງພຣະຜູ້ເປັນເຈົ້າ. ພຣະອັບດຸລບາຮາ ບອກກັບພວກເຮົາສະເໝີວ່າ ພວກເຮົາຄວນໃຫ້ອະໄພເຊິ່ງກັນແລະກັນ. ພວກເຮົາຄວນມອງດ້ວຍສາຍຕາແຫ່ງການໃຫ້ອະໄພ ແລະ ບໍ່ຄວນມອງໄປທີ່ຂໍ້ຜິດພາດຂອງຄົນອື່ນ. ຖ້າຫາກພວກເຮົາປະຕິບັດຕາມແບບຢ່າງຂອງພຣະອັບດຸລບາຮາ, ເຮົາຈະສາມາດໃຫ້ອະໄພບໍ່ພຽງແຕ່ກັບຄວາມຜິດພາດຂອງເພື່ອນໆຂອງເຮົາເທົ່ານັ້ນ ແຕ່ຍັງສາມາດໃຫ້ອະໄພກັບຜູ້ທີ່ບໍ່ມີເມດຕາກັບເຮົາອີກດ້ວຍ. ເພື່ອຊ່ວຍພວກເຮົາໃນຄວາມພະຍາຍາມທີ່ຈະເປັນຜູ້ໃຫ້ອະໄພ, ຂໍໃຫ້ເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"... ຈົ່ງໃຫ້ເຄື່ອງປະດັບຂອງເຈົ້າ ຄືການໃຫ້ອະໄພແລະຄວາມເມດຕາ ເຊິ່ງເປັນສິ່ງນຳຄວາມປີຕິຍິນດີມາສູ່ຫົວໃຈ ຂອງຜູ້ເປັນທີ່ໂປດປານຂອງພຣະຜູ້ເປັນເຈົ້າ."**[111]

*ຄວາມເມດຕາ*

1. ຝົນຕົກຕິດຕໍ່ກັນຫຼາຍມື້. ແມ່ນແຕ່ນ້ຳຈະຖ້ວມໝູ່ບ້ານ ແຕ່ຝົນກໍຍັງບໍ່ຢຸດຕົກ. ຝົນບໍ່ໄດ້ສະແດງຄວາມເມດຕາ.
2. ເມື່ອພວກເຮົາອະທິຖານຕໍ່ພຣະຜູ້ເປັນເຈົ້າ, ພຣະອົງຊົງໃຫ້ອະໄພຄວາມຜິດພາດຂອງພວກເຮົາ. ພຣະອົງຊົງສະແດງຄວາມເມດຕາ.

*ຄວາມປິຕິຍິນດີ*

1. ນາງ ເອີຊູລາ ຮູ້ສຶກບໍ່ຄ່ອຍສະບາຍ. ເພື່ອນຂອງລາວ ເອລຊີ ໄດ້ນຳດອກໄມ້ມາໃຫ້ລາວ ແລະ ນັ່ງລົມກັບລາວເປັນເວລາດົນ, ເລົ່າເລື່ອງແລະໂອ້ລົມກັນ. ການມາຢ້ຽມຢາມຂອງ ເອລຊີ ເຮັດໃຫ້ ເອີຊູລາ ຮູ້ສຶກດີຂຶ້ນຫຼາຍ. ການມາຢ້ຽມຢາມຂອງລາວເຮັດໃຫ້ຫົວໃຈຂອງ ເອີຊູລາ ປີຕິຍິນດີ.
2. ນາງ ຊານເຊີ ໄດ້ຮັບຈົດໝາຍຍາວສະບັບໜຶ່ງຈາກສາມີຂອງນາງ ທີ່ໄປເຮັດວຽກເມືອງໃກ້ຄຽງ. ຈົດໝາຍນັ້ນແຈ້ງຂ່າວດີວ່າ ອີກບໍ່ດົນເຂົາຈະໄດ້ກັບບ້ານ. ຂ່າວດັ່ງກ່າວເຮັດໃຫ້ນາງມີຄວາມປີຕິຍິນດີຫຼາຍ.

*ໂປດປານ*

1. ຄູຮັກນັກຮຽນທຸກຄົນຂອງລາວ ແລະ ໃຫ້ຄວາມເອົາໃຈໃສ່ເປັນພິເສດແກ່ນັກຮຽນແຕ່ລະຄົນ. ລາວໂປດປານພວກເຂົາ.
2. ເຈມ ມັກທຸກໆວິຊາທີ່ມີຢູ່ໂຮງຮຽນ, ແຕ່ລາວຮຽນວິຊາວິທະຍາສາດໄດ້ດີທີ່ສຸດ. ວິຊາວິທະຍາສາດເປັນວິຊາທີ່ລາວໂປດປານທີ່ສຸດ.

## D. ເລື່ອງລາວ

*ໃນຊ່ວງເວລາຫຼາຍວັນທີ່ທ່ານບາຍອາໃສຢູ່ທີ່ເມືອງອັກຄາ, ມີຜູ້ວ່າລາດສະການຄົນໜຶ່ງເຊິ່ງໄດ້ພະຍາຍາມເທື່ອແລ້ວເທື່ອເລົ່າ ທີ່ຈະທຳຮ້າຍຊາວບາຮາຍ. ເທື່ອໜຶ່ງເຂົາຄິດຄົ້ນແຜນທີ່ຈະທຳລາຍທັນທາງທຳມາຫາລ້ຽງຊີບຂອງຊາວບາຮາຍ: ເຂົາສັ່ງໃຫ້ທະຫານປິດຮ້ານຄ້າຂອງຊາວບາຮາຍທຸກໆຮ້ານ ແລະ ນຳກະແຈມາໃຫ້ເຂົາ. ແຕ່ພຣະອັບດຸລບາຮາ ຊົງຮູ້ກ່ຽວກັບແຜນການຂອງຜູ້ວ່າລາດສະການຄົນນັ້ນ ແລະ ໄດ້ບອກກັບເພື່ອນສາສະນິກຊົນວ່າ ບໍ່ໃຫ້ເປີດຮ້ານຄ້າຂອງຕົນໃນມື້ຖັດໄປ. ພຣະອົງບອກກັບພວກເຂົາໃຫ້ເຝົ້າລໍເບິ່ງວ່າ ພຣະຜູ້ເປັນເຈົ້າຈະຊົງກຳນົດໃຫ້ເກີດສິ່ງໃດຂຶ້ນ.*

*ຂໍໃຫ້ລອງຈິນຕະນາການເບິ່ງວ່າ ຜູ້ວ່າລາດສະການຄົນນັ້ນຈະຕົກໃຈຫຼາຍພຽງໃດ ເມື່ອຮັບຂ່າວວ່າທະຫານຂອງຕົນບໍ່ສາມາດນຳກະແຈເລົ່ານັ້ນມາໃຫ້ເຂົາ ເພາະວ່າຮ້ານຄ້າເລົ່ານັ້ນປິດໝົດທຸກຮ້ານ. ແຕ່ກ່ອນທີ່ເຂົາຈະສາມາດວາງແຜນວ່າຈະເຮັດຢ່າງໃດຕໍ່ໄປນັ້ນ, ໄດ້ເກີດສິ່ງທີ່ບໍ່ຄາດຄິດມາກ່ອນເກີດຂຶ້ນ. ໄດ້ມີໂທລະເລກມາຈາກຜູ້ບັງຄັບບັນຊາຂອງເຂົາ ວ່າເຂົາຖືກປົດອອກຈາກຕຳແໜ່ງຜູ້ວ່າລາດສະການຂອງເມືອງນັ້ນ. ແລະດ້ວຍເຫດນີ້ຮ້ານຄ້າຂອງຊາວບາຮາຍຈຶ່ງປອດໄພ.*

*ຜູ້ເຄີຍດຳລົງຕຳແໜ່ງຜູ້ວ່າລາດສະການຄົນນັ້ນ ຖືກສັ່ງໃຫ້ອອກຈາກເມືອງອັກຄາແລະເດີນທາງໄປອີກເມືອງໜຶ່ງທີ່ຊື່ດາມັດກັດ. ເຂົາບໍ່ຮູ້ວ່າຈະເຮັດຢ່າງໃດຕໍ່ໄປ. ເຂົາຕ້ອງຈາກໄປຕາມລຳພັງຢ່າງວ່ອງໄວ. ຈະເກີດຫຍັງຂຶ້ນກັບຄອບຄົວຂອງເຂົາ? ໃຜສິຢາກມາຊ່ວຍເຫຼືອຜູ້ທີ່ຖືກໄລ່ອອກຈາກທາງລາດສະການ? ທ່ານບາຍຮູ້ຂ່າວນີ້ແລະໄດ້ໄປຫາເຂົາ. ພຣະອົງສະແດງຄວາມເມດຕາຮັກໃຄ່ຢ່າງລົ້ນຫຼາມແກ່ຊາຍທີ່ເສົ້າໂສກຜູ້ນັ້ນ, ເໝືອນກັບວ່າເຂົາບໍ່ເຄີຍເຮັດຕົວເປັນສັດຕູຂອງສາສະໜາ. ພຣະອົງບໍ່ໄດ້ເອີ່ຍເຖິງຄວາມຜິດພາດທີ່ຜ່ານມາຂອງເຂົາແມ່ນແຕ່ໜ້ອຍ. ແທນທີ່ຈະເຮັດເຊັ່ນນັ້ນ, ພຣະອົງໄດ້ສະເໜີທີ່ຈະຊ່ວຍເຫຼືອເຂົາໃນທຸກສິ່ງທີ່ພຣະອົງຈະຊ່ວຍໄດ້. ອະດີດຜູ້ວ່າລາດສະການຄົນນັ້ນເປັນຫ່ວງເມຍແລະລູກໆ ທີ່ເຂົາຈະຕ້ອງລະຖິ້ມໄປ. ພຣະອັບດຸລບາຮາ ຮັບປາກວ່າຈະເບິ່ງແຍງເລື່ອງນີ້ໃຫ້ເຂົາ. ຕໍ່ມາພຣະອົງໄດ້ຈັດການໃຫ້ມີການເດີນທາງທີ່ສະດວກສະບາຍ, ຈັດໃຫ້ມີຜູ້ທີ່ໄວ້ວາງໃຈໄດ້ເດີນທາງຮ່ວມໄປກັບເມຍແລະລູກໆຂອງເຂົາ, ພຣະອົງຊົງຊຳລະຄ່າໃຊ້ຈ່າຍທັງໝົດເອງ ແລະ ສົ່ງຄອບຄົວນັ້ນໄປເຖິງເມືອງດາມັດກັດໂດຍສະຫວັດດີພາບ.*

*ເມື່ອອາດີດຜູ້ວ່າລາດສະການຄົນນັ້ນ ໄດ້ພົບກັບຄອບຄົວຂອງເຂົາອີກຄັ້ງ, ເຂົາເຕັມໄປດ້ວຍຄວາມສຸກ. ດ້ວຍຫົວໃຈທີ່ເຕັມປ່ຽມໄປດ້ວຍຄວາມກະຕັນຍູຮູ້ຄຸນ, ເຂົາໄດ້ຫັນໄປຖາມຜູ້ທີ່ຮ່ວມເດີນທາງມາກັບຄອບຄົວຂອງເຂົາເຖິງຄ່າໃຊ້ຈ່າຍຂອງການເດີນທາງ. ຊາຍຜູ້ນັ້ນອະທິບາຍວ່າພຣະອັບດຸລບາຮາໄດ້ຈ່າຍໃຫ້ເປັນທີ່ຮຽບຮ້ອຍແລ້ວ. ຈາກນັ້ນ ອາດີດຜູ້ວ່າລາດສະການຈຶ່ງໄດ້ມອບຂອງຂວັນໃຫ້ແກ່ລາວ ເພື່ອຕອບແທນຄວາມມີນ້ຳໃຈ ແລະ ການເອົາໃຈໃສ່ຂອງເຂົາຕະຫຼອດການເດີນທາງ. ແຕ່ລາວບໍ່ຍອມຮັບຂອງຂວັນນັ້ນ; ລາວຕອບວ່າລາວພຽງແຕ່ເຊື່ອຟັງພຣະອັບດຸບລບາຮາເທົ່ານັ້ນ ແລະບໍ່ຕ້ອງການລາງວັນຕອບແທນໃດໆສຳລັບການຮັບໃຊ້ນີ້. ອາດີດຜູ້ວ່າລາດສະການຈຶ່ງຂໍໃຫ້ຊາຍຜູ້ນັ້ນພັກຄ້າງຄືນທີ່ເຮືອນຂອງເຂົາໃນຖານະແຂກ. ຢ່າງໃດກໍຕາມ, ລາວໄດ້ຕອບໄປວ່າລາວຕ້ອງປະຕິບັດຕາມຄຳສັ່ງຂອງພຣະອັບດຸລບາຮາ, ພຣະອົງໄດ້ບອກໃຫ້ລາວຮີບກັບມາຍັງເມືອງອັກຄາໂດຍບໍ່ລໍຊ້າ. ອາດີດຜູ້ວ່າລາດສະການຄົນນັ້ນຈຶ່ງຂໍໃຫ້ລາວຢ່າງນ້ອຍຢູ່ຕໍ່ໄລຍະໜຶ່ງ ຈົນກວ່າເຂົາຈະຂຽນຈົດໝາຍເຖິງພຣະອັບດຸລບາຮາເປັນທີ່ຮຽບຮ້ອຍກ່ອນ. ຊາຍຜູ້ນັ້ນຍອມຮັບຄຳຂໍນີ້ ແລະ ເມື່ອກັບໄປເຖິງເມືອງອັກຄາ ລາວໄດ້ນຳຈົດໝາຍດັ່ງກ່າວໄປສົ່ງໃຫ້ກັບທ່ານບາຍ. ຈົດໝາຍສະບັບນັ້ນມີຂໍ້ຄວາມວ່າ "ໂອ ພຣະອັບ*

*ດຸລບາຣາ, ຂ້າພະເຈົ້າສວດອະທິຖານວິງວອນຂໍໃຫ້ທ່ານອະໄພໃຫ້ຂ້າພະເຈົ້າດ້ວຍເຖີດ. ກ່ອນໜ້ານີ້ຂ້າພະເຈົ້າບໍ່ເຂົ້າໃຈ. ຂ້າພະເຈົ້າບໍ່ຮູ້ກ່ຽວກັບພຣະອົງ. ຂ້າພະເຈົ້າໄດ້ກະທຳຄວາມຊົ່ວຮ້າຍຢ່າງມະຫັນຕໍ່ພຣະອົງ. ແຕ່ພຣະອົງໄດ້ຕອບແທນດ້ວຍຄວາມດີຫຼວງຫຼາຍມະຫາສານ."*

E. **ເກມ: "ຄົນຕໍ່ຄົນ"**

ບອກເດັກນ້ອຍຍ່າງອ້ອມຮອບໄປມາໃນຫ້ອງ ພ້ອມທັງຕົບມື ແລະ ເວົ້າວ່າ "ຄົນຕໍ່ຄົນ". ເມື່ອຄູຮ້ອງຂຶ້ນວ່າ "ຫຼັງຕໍ່ຫຼັງ", ໃຫ້ພວກເຂົາຢຸດຍ່າງ, ແລະແຕ່ລະຄົນຄວນຫັນຫຼັງໃຫ້ກັບເພື່ອນອີກຄົນ. ເມື່ອຄູສົ່ງສັນຍານອີກຄັ້ງ, ໃຫ້ເດັກໆຍ່າງໄປອ້ອມຮອບອີກຄັ້ງ, ພ້ອມທັງຕົບມື ແລະ ເວົ້າວ່າ "ຄົນຕໍ່ຄົນ". ເມື່ອຄູຮ້ອງຂຶ້ນວ່າ "ໜ້າຕໍ່ໜ້າ" ພວກເຂົາຢຸດຍ່າງ ແລະ ຫັນໜ້າເຂົ້າຫາເພື່ອນອີກຄົນໜຶ່ງ, ແລ້ວກົ້ມຫົວລົງ. ເກມຈະດຳເນີນໄປໃນລັກສະນະທີ່ອອກຄຳສັ່ງສອງຄຳສັ່ງນີ້ສະຫຼັບກັນໄປມາອີກສອງສາມຄັ້ງ. ຄຳສັ່ງອື່ນໆສາມາດເພີ່ມໃສ່, ຕົວຢ່າງ, "ເຂົ່າຕໍ່ເຂົ່າ" ແລະ "ແຂນສອກຕໍ່ແຂນສອກ".

F. **ການທາສີ: ຮູບທີ 11**

G. **ການສວດອະທິຖານປິດ**

## ບົດທີ 12

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ດັ່ງເຊັ່ນເຄີຍ, ຊັ້ນຮຽນຄວນເລີ່ມຕົ້ນດ້ວຍການສວດອະທິຖານອະທິຖານ. ຈາກນັ້ນເຈົ້າສາມາດທົບທວນກັບເດັກນ້ອຍ ບົດສວດອະທິຖານທີ່ພວກເຂົາເຄີຍໄດ້ຮຽນໃນສາມບົດທີ່ຜ່ານມາ. ເຈົ້າຄວນແນ່ໃຈວ່າພວກເຂົາໝົດທຸກຄົນສາມາດສວດໄດ້ດີ, ເນື່ອງຈາກວ່າເຈົ້າຈະແນະນຳບົດສວດອະທິຖານບົດໃໝ່ໃຫ້ພວກເຂົາທ່ອງຈຳໃນບົດທີ 13.

B. **ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)**

**ສະຫວ່າງຍິ່ງກວ່າດວງຕາເວັນ**

C G D G
ວາຈາສັດສະຫວ່າງຍິ່ງກວ່າແສງຂອງດວງຕາເວັນ

C G D G
ວາຈາສັດສະຫວ່າງຍິ່ງກວ່າແສງຂອງດວງຕາເວັນ
C G D G
ໂອປະຊາຊົນ, ຈົ່ງປະດັບຖ້ອຍຄໍາຂອງພວກເຈົ້າ ດ້ວຍວາຈາສັດ
C G D G
ໂອປະຊາຊົນ, ຈົ່ງປະດັບຖ້ອຍຄໍາຂອງພວກເຈົ້າ ດ້ວຍວາຈາສັດ

ຄວາມຊື່ສັດປະດັບຈິດວິນຍານຂອງທຸກໆຄົນ
ຄວາມຊື່ສັດປະດັບຈິດວິນຍານຂອງທຸກໆຄົນ
ຄວາມຊື່ສັດສະຫວ່າງຍິ່ງກວ່າແສງຂອງດວງຕາເວັນ
ຄວາມຊື່ສັດສະຫວ່າງຍິ່ງກວ່າແສງຂອງດວງຕາເວັນ

## C. ການທ່ອງຈໍາພຣະວັດຈະນະ

ຂ້າງລຸ່ມນີ້ເປັນແນວຄິດບາງຢ່າງທີ່ເຈົ້າສາມາດແບ່ງປັນກັບນັກຮຽນ ເພື່ອນໍາສະເໜີຫົວຂໍ້ຂອງບົດຮຽນ, ເຊິ່ງກໍຄືຄວາມຊື່ສັດ, ແລະ ພຣະວັດຈະນະທີ່ພວກເຂົາຈະທ່ອງຈໍາ.

ສວນໄດ້ຮັບການປະດັບປະດາດ້ວຍດອກໄມ້ທີ່ມີຮູບຊົງ ແລະ ສີສັນແຕກຕ່າງກັນ. ໃນລະດູໃບໄມ້ປົ່ງ, ຕົ້ນໝາກໄມ້ຈະຖືກປະດັບປະດາດ້ວຍດອກໄມ້ທີ່ມີກິ່ນຫອມ. ພວກເຮົາແຕ່ງກາຍດ້ວຍເສື້ອຜ້າທີ່ສະອາດ ແລະ ປາດສະຈາກຈຸດດ່າງດໍາ. ເຄື່ອງປະດັບທັງໝົດນີ້ລ້ວນແລ້ວແຕ່ສ້າງຄວາມສວຍງາມ. ຢ່າງໃດກໍຕາມ, ຍິ່ງກວ່າສິ່ງຂອງທາງວັດຖຸ, ແມ່ນລັດສະໝີຂອງຄຸນລັກສະນະທາງຈິດວິນຍານ ທີ່ເຮັດໃຫ້ມະນຸດງົດງາມ, ນໍາຄວາມສຸກທັນສາມາສູ່ຫົວໃຈຂອງພວກເຮົາ. ຄຸນລັກສະນະໜຶ່ງທີ່ສວຍງາມທີ່ສຸດທີ່ສາມາດປະດັບຊີວິດຂອງເຮົາແມ່ນຄວາມຊື່ສັດ. ເມື່ອພວກເຮົາຕົບແຕ່ງຕົນເອງໃຫ້ສວຍງາມດ້ວຍຄວາມຊື່ສັດ, ພວກເຮົາຈະບໍ່ເອົາສິ່ງຂອງທີ່ເປັນຂອງຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດ, ເຮົາບໍ່ເຄີຍຂີ້ຫຼັກ ຫຼື ສໍ້ໂກງຄົນອື່ນໃຫ້ເຮັດບາງສິ່ງບາງຢ່າງ. ເພື່ອຊ່ວຍໃຫ້ພວກເຮົາຈົດຈໍາຄຸນລັກສະນະຂອງຄວາມຊື່ສັດ, ຂໍໃຫ້ພວກເຮົາທ່ອງຈໍາ ພຣະວັດຈະນະຂອງ ພຣະບາຮາອຸລລາ ດັ່ງຕໍ່ນີ້:

**"ໂອ ປະຊາຊົນ, ຈົ່ງຕົບແຕ່ງວາຈາຂອງເຈົ້າດ້ວຍວາຈາສັດຊື່, ແລະ ປະດັບຈິດວິນຍານຂອງເຈົ້າ ດ້ວຍເຄື່ອງປະດັບແຫ່ງຄວາມຊື່ສັດ."**[112]

*ຕົບແຕ່ງ*

1. ມາລິດ ປູກດອກກຸຫຼາບທີ່ສວຍງາມໄວ້ໃນສວນ. ດອກກຸຫຼາບຕົກແຕ່ງໃຫ້ສວນນັ້ນສວຍງາມ.
2. ສຸບິນ ເວົ້າແຕ່ຄວາມຈິງ. ສຸບິນ ຕົກແຕ່ງຄຳເວົ້າຂອງເຂົາດ້ວຍວາຈາສັດຊື່.

## D. ເລື່ອງລາວ

*ໃນຊ່ວງບັ້ນປາຍຊີວິດຂອງພຣະອົງ, ພຣະອັບດຸລບາຮາ ສາມາດເດີນທາງໄປຍັງສະຖານທີ່ຕ່າງໆທົ່ວໂລກ. ບໍ່ວ່າພຣະອົງຈະສະເດັດໄປທີ່ໃດ, ພຣະອົງຈະຊົງພົບກັບຜູ້ຄົນຈາກທຸກສາຂາອາຊີບ - ບໍ່ວ່າຈະເປັນກຳມະກອນ ແລະ ຜູ້ນຳ. ນັກສຶກສາ ແລະ ນັກວິທະຍາສາດ - ແລະພຣະອົງຊົງເຮັດທຸກວິຖີທາງເພື່ອໃຫ້ທຸກຄົນຮູ້ສຶກສະບາຍໃຈ. ມື້ໜຶ່ງໃນອີຢິບ, ພຣະອົງໄດ້ເຊີນເຈົ້າໜ້າທີ່ລະດັບສູງມາເປັນແຂກຂອງພຣະອົງ ເພື່ອຮັບປະທານອາຫານທ່ຽງ. ພຣະອັບດຸລບາຮາ ໄດ້ຕັດສິນໃຈຈ້າງລົດມ້າເພື່ອພາພວກເຂົາໄປຍັງຈຸດໝາຍປາຍທາງ ເນື່ອງຈາກເຈົ້າໜ້າທີ່ຄຸ້ນເຄີຍກັບຄວາມສະດວກສະບາຍແບບນີ້.*

*ບັ່ງລົດມ້າໄດ້ບໍ່ດົນ, ແລະ ພວກເຂົາກໍຮອດງານລ້ຽງອາຫານທ່ຽງ. ແຕ່ເມື່ອຄົນຂັບລົດມ້າເຂົ້າໄປຫາພຣະອັບດຸລບາຮາເພື່ອຂໍຊຳລະເງິນ, ເຂົາຂໍວ່າຄ່າລົດແພງກວ່າລາຄາທີ່ເປັນທຳສຳລັບການເດີນທາງ. ພຣະອັບດຸລບາຮາ ຮູ້ວ່າຄົນຂັບບໍ່ຊື່ສັດ. ພຣະອົງຊົງຈ່າຍໃຫ້ຊາຍຄົນນັ້ນຕາມຈຳນວນທີ່ຕິດລາວເທົ່ານັ້ນ ຈາກນັ້ນກໍຫັນຫຼັງຈາກໄປ.*

*ເມື່ອຄົນຂັບພະຍາຍາມໂຕ້ຖຽງ, ພຣະອັບດຸລບາຮາ ກໍຢືນຢັນ. ພຣະອົງບອກຊາຍຄົນນັ້ນວ່າ, ຖ້າຫາກເຂົາຊື່ສັດເລື່ອງຄ່າລົດໂດຍສານ, ເຂົາກໍຈະໄດ້ຮັບເງິນລາງວັນ. ຈາກນັ້ນ ທ່ານນາຍກໍຍ່າງຈາກໄປ, ປ່ອຍໃຫ້ຄົນຂັບຄຶດກ່ຽວກັບການກະທຳຂອງຕົນ.*

## E. ເກມ: "ສີ່ຫຼ່ຽມ, ວົງມົນ, ສາມຫຼ່ຽມ"

ເປັນທີ່ຄາດໄວ້ວ່າເດັກໆຮູ້ຈັກຊື່ຂອງບາງຮູບຊົງແລ້ວ ເຊັ່ນ "ສີ່ຫຼ່ຽມ", "ວົງມົນ", ແລະ "ສາມຫຼ່ຽມ". ໃຫ້ເລີ່ມດ້ວຍການທົບທວນຊື່ຂອງຮູບຊົງເລົ່ານີ້ຮ່ວມກັບເດັກໆ, ໂດຍຕ້ອງໝັ້ນໃຈວ່າເດັກແຕ່ລະຄົນສາມາດແຍກແຍະແຕ່ລະຮູບຊົງນັ້ນໄດ້. ຕໍ່ຈາກນັ້ນ, ໃຫ້ຍົກແຜ່ນພາບແຜ່ນໜຶ່ງທີ່ມີລຳດັບຮູບຊົງທັງສາມ - ຄືຮູບ ວົງມົນ, ວົງມົນ, ສີ່ຫຼ່ຽມ - ແລ້ວບອກໃຫ້ເດັກນ້ອຍເບິ່ງໃກ້. ຈາກນັ້ນຈຶ່ງເກັບແຜ່ນພາບນັ້ນໄວ້ ແລ້ວຂໍໃຫ້ເດັກຄົນໜຶ່ງເວົ້າອອກສຽງດັງໆລຳດັບຂອງຮູບຊົງທີ່ໄດ້ສະແດງໄປ. ໃຫ້ເຮັດເຊັ່ນນີ້ຊ້ຳຫຼາຍໆເທື່ອ, ໂດຍໃຊ້ແຜ່ນພາບທີ່ເຈົ້າໄດ້ແຕ້ມຊຸດຮູບຊົງຕ່າງໆໄວ້ລ່ວງໜ້າແລ້ວ. ເຈົ້າຄວນຕຽມແຜ່ນພາບບາງແຜ່ນທີ່ມີພຽງສອງຮູບຊົງເທົ່ານັ້ນ, ໃນກໍລະນີທີ່ຊຸດຮູບຊົງຍາກເກີນໄປສຳລັບເດັກທີ່ຈະຈົດຈຳ, ແລະ ແຜນພາບຂອງຊຸດຮູບຊົງທີ່ມີສີ່ຫຼືຫ້າຮູບຊົງ, ໃນກໍລະນີທີ່ພົບວ່າຊຸດຮູບຊົງສາມຮູບນັ້ນງ່າຍເກີນໄປສຳລັບເດັກນ້ອຍ.

ຕອນນີ້ໃຫ້ລອງເອີ້ນຊຸດຮູບຊົງຕາມລໍາດັບ - ໂດຍຈະມີຊຸດລະສອງ, ສາມ, ຫຼືສີ່ຮູບຊົງກໍໄດ້, ຂຶ້ນຢູ່ກັບຄວາມສາມາດຂອງນັກຮຽນຂອງເຈົ້າ - ແລະ ຂໍໃຫ້ເດັກຄົນໜຶ່ງໃນກຸ່ມເວົ້າທວນຄືນ. ຫຼັງຈາກທີ່ເຈົ້າໄດ້ເຮັດເຊັ່ນນີ້ສອງສາມເທື່ອກັບເດັກແຕ່ລະຄົນແລ້ວ, ເຈົ້າສາມາດເຮັດໃຫ້ເກມມີຄວາມທ້າທາຍຫຼາຍຍິ່ງຂຶ້ນ ໂດຍການຂໍໃຫ້ເດັກໆແຕ້ມຮູບຕາມຊຸດລໍາດັບທີ່ຄູເວົ້າໄປ.

F. **ການທາສີ: ຮູບທີ 12**

G. **ການສວດອະທິຖານປິດ**

## ບົດທີ 13

A. **ການທ່ອງອອກສຽງ ແລະ ການທ່ອງຈໍາບົດສວດອະທິຖານ**

ໃນຊັ້ນຮຽນນີ້ ແລະ ສາມຊັ້ນຮຽນຕໍ່ໄປ, ເດັກນ້ອຍຈະມຸ່ງຄວາມສົນໃຈໄປທີ່ການຮຽນຮູ້ທີ່ຈະທ່ອງບົດສວດອະທິຖານຂ້າງລຸ່ມນີ້ໃຫ້ຂຶ້ນໃຈ. ເຈົ້າສາມາດແນະນໍາບົດສວດອະທິຖານແກ່ພວກເຂົາຫຼັງຈາກທີ່ສວດອະທິຖານເປີດຈາກຄວາມຊົງຈໍາ, ເຊັ່ນບົດສວດອະທິຖານຈາກຕອນທີ 13, ແລະຫຼັງຈາກນັກຮຽນສອງສາມຄົນຂອງເຈົ້າສວດແລ້ວ.

> **"ໂອ ພຣະຜູ້ເປັນເຈົ້າ! ຂໍຊົງປູກຕົ້ນກ້າທີ່ຍັງເປັນໄມ້ອ່ອນນີ້ ໃນສວນແຫ່ງຄວາມອຸດົມສົມບູນຂອງພຣະອົງ, ຂໍຊົງຫົດນໍ້າຈາກນໍ້າພຸແຫ່ງຄວາມເມດຕາຂອງພຣະອົງ ແລະ ໃຫ້ຕົ້ນກ້ານັ້ນເຕີບໂຕເປັນພືດທີ່ດີດ້ວຍຄວາມໂປດປານ ແລະ ພຣະກະລຸນາທິຄຸນຂອງພຣະອົງຫຼັ່ງໄຫຼອອກມາ.**
>
> **"ພຣະອົງຊົງເປັນຜູ້ຊົງພະລັງ ແລະ ຊົງອໍານາດ."**[113]

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຈົ່ງເປັນທັມ**

<u>ຮ້ອງປະສານສຽງ:</u>

A

ຈົ່ງເປັນທັມ, ຈົ່ງເປັນທັມ

E7 A

ແລະ ບຸກຄົນທີ່ຈະຈັດຫາຄວາມສະດວກໃຫ້ກັບທຸກຄົນ

A

ຈົ່ງເປັນທັມ, ຈົ່ງເປັນທັມ

E7 A

ແລະ ບຸກຄົນທີ່ຈະຈັດຫາຄວາມສະດວກໃຫ້ກັບທຸກຄົນ

A E

ເມື່ອພວກເຮົາປະຕິບັດກັບຜູ້ອື່ນຢ່າງເປັນທັມ

E7 A

ພວກເຮົາໄດ້ຮັບຄວາມໄວ້ວາງໃຈຈາກອ້າຍເອື້ອຍນ້ອງ

A7 D

ເມື່ອສິ່ງຕ່າງໆຖືກແບ່ງອອກຢ່າງເທົ່າທຽມກັນ

E A

ຄວາມຍຸຕິທັມຈະສາຍແສງໃຫ້ຊາວໂລກໄດ້ເຫັນ

<u>ຮ້ອງປະສານສຽງ:</u>

ເມື່ອເຈົ້າໃຫ້ຄວາມສະດວກ ແລະ ການຊ່ວຍເຫຼືອ
ເຈົ້າຈະເດີນຕາມຫົນທາງທີ່ທ່ານນາຍໄດ້ວາງໄວ້
ເມື່ອເຈົ້າຮອບຮູ້ແລະຍຸຕິທັມໃນສິ່ງທີ່ເຈົ້າເວົ້າແລະກະທຳ
ເຈົ້າຈະພາຄວາມສຸກທັນສາມາສູ່ຫົວໃຈຂອງເຈົ້າ

<u>ຮ້ອງປະສານສຽງ</u>

## C. ການທ່ອງຈຳພຣະວັດຈະນະ

ໃນບົດຮຽນນີ້, ເດັກນ້ອຍຈະໄດ້ຮຽນຮູ້ພຣະວັດຈະນະໜຶ່ງທີ່ກ່ຽວຂ້ອງກັບ ຄຸນລັກສະນະຂອງຄວາມເຫັນອົກເຫັນໃຈ, ເຊິ່ງເຈົ້າສາມາດນຳສະເໜີໄດ້ດັ່ງນີ້:

ພຣະຜູ້ເປັນເຈົ້າຄືພຣະຜູ້ຊົງເຫັນອົກເຫັນໃຈທີ່ສຸດ, ພຣະຜູ້ຊົງເມດຕາ. ໃນຍາມຍາກລຳບາກ, ພວກເຮົາຫັນຫົວໃຈຂອງເຮົາໄປຫາພຣະອົງ ແລະ ຂໍໃຫ້ພຣະອົງປອບໂຍນແລະເສີມສ້າງພວກ

ເຮົາໃຫ້ເຂັ້ມແຂງ. ເຊັ່ນກັນ, ພວກເຮົາຄວນສະແດງຄວາມເຫັນອົກເຫັນໃຈຕໍ່ຄົນອື່ນ. ເມື່ອບາງຄົນທີ່ເຮົາຮູ້ຈັກມີບັນຫາຫຼືໂສກເສົ້າ, ພວກເຮົາຄວນພະຍາຍາມຢ່າງເຕັມທີ່ຈະເຂົ້າໃຈ ແລະ ຊ່ວຍເຫຼືອເຂົາ. ພວກເຮົາຕ້ອງເຫັນອົກເຫັນໃຈ ແລະ ກະລຸນາຕໍ່ທຸກຄົນ, ພາຍໃຕ້ທຸກສະພາບການ, ປຽບເໝືອນຕົ້ນໄມ້ທີ່ອອກໝາກຜົນໃຫ້ທັງຄົນແລະໝົດທຸກຄົນ, ແມ່ນແຕ່ຄົນທີ່ດຶກກ້ອນຫີນໃສ່ມັນກໍຕາມ. ພຣະອັບດຸລບາຮາ ໄດ້ສະແດງຄວາມເຫັນອົກເຫັນໃຈຢູ່ຕະຫຼອດເວລາ, ຕໍ່ປະຊາຊົນ, ແມ່ນວ່າພຣະຊົນຊີບຂອງພຣະອົງຈະຍາກລຳບາກ. ເພື່ອຊ່ວຍໃຫ້ພວກເຮົາພະຍາຍາມເປັນຄົນເຫັນອົບເຫັນໃຈ, ຂໍໃຫ້ພວກເຮົາທ່ອງຈຳຖ້ອຍຄຳຂອງພຣະອົງດັ່ງນີ້:

**"ອານາຈັກຂອງພຣະຜູ້ເປັນເຈົ້າຕັ້ງຢູ່ບົນຄວາມສະເໝີພາບ ແລະ ຄວາມຍຸຕິທັມ, ແລະ ບົນຄວາມເມດຕາ, ຄວາມເຫັນອົກເຫັນໃຈ, ແລະ ຄວາມກະລຸນາຕໍ່ຈິດວິນຍານທຸກດວງທີ່ມີຊີວິດຢູ່."**[114]

*ກໍ່ຕັ້ງຂຶ້ນ*

1. ທ່ານໝໍ ຫ່ວງໃຍເລື່ອງສຸຂະພາບຂອງເດັກໆໃນຫມູ່ບ້ານ, ສະນັ້ນ ເຂົາຈຶ່ງໄດ້ເປີດຄລີນິກເພື່ອເບິ່ງແຍງເດັກໆ. ຄລີນິກກໍ່ຕັ້ງຂຶ້ນຈາກຄວາມຮັກທີ່ທ່ານໝໍມີຕໍ່ເດັກໆ.
2. ເຈນນາ ແລະ ເມີຊີເດັດ ເປັນເພື່ອນກັນມາເປັນເວລາດົນຫຼາຍ. ພວກເຂົາອ່ານຫນັງສືຮຽນນຳກັນຢູ່ສະເໝີ ແລະ ແບ່ງປັນສິ່ງດີໆທີ່ຕົນໄດ້ຮຽນຮູ້ເພື່ອປະໂຫຍດຂອງກັນແລະກັນ. ມິດຕະພາບຂອງພວກເຂົາກໍ່ຕັ້ງຂຶ້ນເທິງຄວາມເມດຕາແລະຄວາມຮັກ.

*ຄວາມສະເໝີພາບ*

1. ປະຊາຊົນທຸກຄົນໃນອານາຈັກນັ້ນຕັ້ງໃຈເຮັດວຽກໜັກ ເພື່ອປະໂຫຍດສຸກຂອງອານາຈັກນັ້ນ. ເມື່ອໄດ້ມີການເກັບກ່ຽວຜົນຜະລິດທາງການກະເສດເປັນທີ່ຮຽບຮ້ອຍແລ້ວ, ກະສັດແຫ່ງອານາຈັກນັ້ນຈຶ່ງໄດ້ແບ່ງຜົນຜະລິດເລົ່ານັ້ນ ໃຫ້ກັບປະສິກນິກອນ, ໂດຍຂຶ້ນຢູ່ກັບຂະໜາດຂອງແຕ່ລະຄອບຄົວ. ກະສັດຊົງປະຕິບັດຕໍ່ປະສິກນິກອນຂອງພະອົງດ້ວຍຄວາມສະເໝີພາບ.
2. ຄະນະເມືອງ ຕ້ອງສ້າງຖະໜົນໄປຍັງຫມູ່ບ້ານຖັດໄປ. ໂດຍໄດ້ຕັດສິນໃຈສ້າງຖະໜົນອ້ອມພື້ນດິນທີ່ເປັນທົ່ງນາ. ດ້ວຍວິທີນີ້ ຫຼາຍຄົນສາມາດໄດ້ຮັບປະໂຫຍດຈາກຖະໜົນເສັ້ນໃໝ່ເສັ້ນນັ້ນ ໃນຂະນະດຽວກັນຊາວນາກໍບໍ່ຕ້ອງເດືອດຮ້ອນ. ການຕັດສິນໃຈຂອງຄະນະເມືອງສະແດງໃຫ້ເຫັນວ່າຄະນະເມືອງສະແດງຄວາມສະເໝີພາບ.

*ຄວາມເຫັນອົກເຫັນໃຈ*

1. ນາງ ລີຍອງ ສັງເກດເຫັນວ່າເພື່ອນຂອງເຂົາທີ່ຊື່ຊາຣາ ກຳລັງບໍ່ສະບາຍໃຈ, ສະນັ້ນ ເຂົາຈຶ່ງໄດ້ໄປຊອກຫາເບິ່ງວ່າເຂົາຈະສາມາດຊ່ວຍເຫຼືອນາງໄດ້ຢ່າງໃດ. ຊາຣາ ອະທິບາຍໃຫ້ເຂົາຟັງວ່າແມ່ຂອງນາງປ່ວຍຢູ່ທີ່ໂຮງໝໍ. ລີຍອງ ຕັ້ງໃຈຟັງເລື່ອງລາວແລະປອບໃຈ ຊາຣາ, ແລະອາສາທີ່ຈະໄປໂຮງໝໍເປັນເພື່ອນນາງໃນມື້ຖັດໄປ. ລີຍອງ ສະແດງຄວາມເຫັນອົກເຫັນໃຈຕໍ່ຊາຣາ.
2. ມື້ໜຶ່ງ ຊີໂອຣີ ກຳລັງຍ່າງຫລິ້ນຢູ່ໃນຊົນນະບົດແລະເຫັນແກະນ້ອຍຕົວໜຶ່ງ ຂາຂອງມັນໄປຕິດຢູ່ໃນຮົ້ວ. ຊີໂອຣີ ຄ່ອຍໆເອົາຂາຂອງມັນອອກຢ່າງນຸ່ມນວນ ແລະໄດ້ພັນແຜໃຫ້ມັນ. ຊີໂອຣີໄດ້ສະແດງຄວາມເຫັນອົກເຫັນໃຈຕໍ່ແກະນ້ອຍຕົວນັ້ນ.

## D. ເລື່ອງລາວ

*ເມື່ອຕອນທີ່ພຣະອັບດຸລບາຮາເດີນທາງໄປຊີກໂລກຕະເວັນຕົກ, ໃນທຸກໆເມືອງທີ່ພຣະອົງເດີນທາງໄປຢ້ຽມຢາມນັ້ນ, ມີຜູ້ຄົນຫຼວງຫຼາຍໄດ້ເດີນທາງມາພົບ ແລະ ຟັງຖ້ອຍຄຳທີ່ໃຫ້ກຳລັງໃຈຂອງພຣະອົງ. ທັງກາງເວັນແລະກາງຄືນ ພຣະອົງຊົງພົບປະກັບຜູ້ຄົນທຸກປະເພດ - ທັງຜູ້ເຍົາໄວແລະຜູ້ຊະລາ, ທັງຜູ້ຮັ່ງມີລົ້ນລວຍແລະຜູ້ຍາກຈົນ, ທັງຂ້າລາດສະການແລະປະຊາຊົນຄົນທຳມະດາທົ່ວໄປ. ບາງຄົນມາດ້ວຍຄວາມຮັກອັນຍິ່ງໃຫຍ່ທີ່ຕົນມີຕໍ່ທ່ານນາຍ, ແລະ ບາງຄົນກໍ່ມາເພາະຄວາມສົງໃສວ່າພຣະອົງຈະເວົ້າເລື່ອງຫຍັງ.*

*ມື້ໜຶ່ງ ມີຜູ້ຍິງຄົນໜຶ່ງມາເຖິງເຮືອນພັກທີ່ທ່ານນາຍອາໃສຢູ່ ແລະໄດ້ເຄາະປະຕູເຮືອນ. ນາງເປັນຜູ້ຍິງທຳມະດາຄົນໜຶ່ງທີ່ເຝົ້າປາດຖະໜາທີ່ຈະໄດ້ໃຊ້ເວລາໄລຍະໜຶ່ງກັບ ພຣະອັບດຸລບາຮາ. "ເຈົ້າໄດ້ນັດພົບກັບທ່ານນາຍແລ້ວຫຼືບໍ່?" ຊາຍຜູ້ທີ່ເປີດປະຕູຖາມ. ນາງກໍໄດ້ຕອບວ່ານາງບໍ່ໄດ້ນັດພຣະອົງໄວ້. ໃນກໍລະນີນັ້ນ, ບອກນາງຖືກບອກວ່າ ນາງບໍ່ສາມາດທີ່ຈະພົບພຣະອັບດຸລບາຮາໄດ້ ເພາະພຣະອົງກຳລັງປະຊຸມຮ່ວມກັບບຸກຄົນສຳຄັນຫຼາຍຄົນ. ນາງຫັນກັບໄປຢ່າງໂສກເສົ້າ ແລະ ເລີ່ມຍ່າງລົງຂັ້ນໃດໜ້າເຮືອນຫຼັງນັ້ນ. ຫົວໃຈຂອງນາງເຕັມປ່ຽມໄປດ້ວຍຄວາມຜິດຫວັງ! ແຕ່ທັນໃດນັ້ນ ຜູ້ສົ່ງຂ່າວສານຈາກພຣະອັບດຸລບາຮາກໍປາກົດຕົວຂຶ້ນ, ແລ້ວຂໍໃຫ້ນາງກັບໄປຫາພຣະອົງ. ທ່ານນາຍມີຄວາມປາດຖະໜາທີ່ຈະພົບນາງ. ສຽງອັນປ່ຽມໄປດ້ວຍພະລັງ ແລະ ອຳນາດຂອງພຣະອົງໄດ້ເປັ່ງຂຶ້ນວ່າ, "ມີຫົວໃຈດວງໜຶ່ງຖືກເຮັດໃຫ້ເສົ້າໃຈ. ຈົ່ງຮີບ, ຮີບໄປ, ນຳພານາງມາຫາເຮົາ!"*

## E. ເກມ "ຮ່ວມກັນ"

ແບ່ງເດັກນ້ອຍອອກເປັນຄູ່, ໂດຍໃຫ້ຍືນຂ້າງໆກັນ, ໃຫ້ມັດຂາຂ້າງຊ້າຍຂອງເດັກຄົນໜຶ່ງເຂົ້າກັບຂາຂ້າງຂວາຂອງເດັກອີກຄົນ. ອະທິບາຍເດັກນ້ອຍວ່າ, ຖ້າຫາກພວກເຂົາຈະປະສົບຄວາມສຳເລັດໃນຫຼິ້ນເກມນີ້, ພວກເຂົາຈະຕ້ອງຮຽນຮູ້ທີ່ຈະເຮັດວຽກຮ່ວມກັນ. ຈາກນັ້ນໃຫ້ແຕ່ລະຄູ່ຍ່າງຈາກຈຸດທີ່

ກຳນົດໄວ້ໄປຍັງອີກຈຸດໜຶ່ງ. ເຈົ້າສາມາດເຮັດໃຫ້ເກມມີຄວາມທ້າທາຍຫຼາຍຍິ່ງຂຶ້ນ ໂດຍການວາງສິ່ງກີດຂວາງນ້ອຍໆຕາມເສັ້ນທາງ, ເຊັ່ນ ກິ່ງໄມ້ ແລະ ກ້ອນຫີນ. ຂໍໃຫ້ຄູໝັ້ນໃຈວ່າເສັ້ນທາງຍ່າງນັ້ນມີຄວາມປອດໄພ. ອີກທາງເລືອກໜຶ່ງຄື, ແທນທີ່ເຈົ້າຈະໃຫ້ເດັກໆພຽງແຕ່ຍ່າງໄປລ້າໆ, ຂໍໃຫ້ເດັກແຕ່ລະຄູ່ໂດດເໝືອນກົບ, ກະໂດດເໝືອນມ້າ, ແລະອື່ນໆ. ມັນຈຳເປັນຕ້ອງອະທິບາຍໃຫ້ເດັກນ້ອຍເຂົ້າໃຈວ່າເດັກແຕ່ລະຄູ່ບໍ່ໄດ້ທຳການແຂ່ງຂັນກັນ.

F. **ການທາສີ: ຮູບທີ 13**

G. **ການສວດອະທິຖານປິດ**

## ບົດທີ 14

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ຂໍໃຫ້ເຈົ້າແລະນັກຮຽນສອງສາມຄົນທ່ອງບົດອະທິຖານ ເພື່ອເປີດຊັ້ນຮຽນດ້ວຍວິທີການຕາມປົກກະຕິ. ຈາກນັ້ນເດັກໆສາມາດສືບຕໍ່ທ່ອງຈຳບົດອະທິຖານ ທີ່ໄດ້ນຳສະເໜີໄປໃນບົດຮຽນກ່ອນນີ້.

B. **ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)**

**ເທິງປີກແຫ່ງການປ່ອຍວາງ**

<u>ຮ້ອງປະສານສຽງ:</u>

```
          C                    F       G
ມື້ໜຶ່ງມີນົກບິນຢູ່ເທິງທ້ອງຟ້າເບື້ອງບົນ
C                 F      G
ເຕັມໄປດ້ວຍຄວາມສຸກແລະຄວາມໝັ້ນໃຈ
C                 F      G      C      F G
ບິນຂຶ້ນໄປສູ່ສະຫວັນແຫ່ງນີ້ທີ່ເປັນບ້ານຂອງເຂົາ
C                 F      G      C      F G
ຂະນະທີ່ເຂົາໂບຍບິນ, ຄວາມຫິວຂອງເຂົາກໍເລີ່ມເພີ້ມຂຶ້ນ
C                 F      G      C      F G
```

ດັ່ງນັ້ນເຂົາຈຶ່ງຫັນໄປຫານ້ຳແລະດິນໜຽວຢູ່ເບື້ອງລຸ່ມ

C F

ຢູ່ເບື້ອງລຸ່ມ

G C F

ເຂົາຖືກຂັງໄວ້

G C

ຕາມຄວາມປາດຖະໜາ

F G C F G

ແລະປີກຂອງເຂົາກໍເຕັມໄປດ້ວຍຕົມ

C

ໜັກເກີນກວ່າຈະບິນໄດ້,

F G C F G

ເຂົາບໍ່ສາມາດຄືນກັບບ້ານຂອງເຂົາ

<u>ຮ້ອງປະສານສຽງ:</u>

ເໝືອນນົກໂຕນັ້ນທີ່ຂ້ອຍກໍເປັນຂອງສະຫວັນ
ດັ່ງນັ້ນຂ້ອຍຈະບໍ່ຍຶດຕິດກັບໂລກເບື້ອງລຸ່ມ
ຂ້ອຍຈະບໍ່ຍຶດຕິດກັບຄວາມຮັ່ງມີ
ຂ້ອຍຈະບໍ່ຍຶດຕິດກັບຄວາມປາດຖະໜາຂອງຂ້ອຍ
ຂ້ອຍຈະບໍ່ຍຶດຕິດກັບສິ່ງໃດນອກຈາກພຣະຜູ້ເປັນເຈົ້າ

ດັ່ງນັ້ນຂ້ອຍຈະເດີນດ້ວຍເທົ້າແຫ່ງການປ່ອຍວາງ
ຂ້ອຍຈະໂບຍບິນດ້ວຍປີກແຫ່ງການປ່ອຍວາງ
ຂ້ອຍຈະຫຼຸດພົ້ນຕົນເອງຈາກຄວາມຜູກພັນທຸກຢ່າງ
ບໍ່ມີສິ່ງໃດນອກຈາກພຣະຜູ້ເປັນເຈົ້າ (ຮ້ອງຊ້ຳ)

## C. ການທ່ອງຈຳພຣະວັດຈະນະ

ເດັກໆຈະທ່ອງຈຳພຣະວັດຈະນະໜຶ່ງ ທີ່ກ່ຽວກັບຄຸນລັກສະນະແຫ່ງການປ່ອຍວາງ, ເຊິ່ງເປັນຫົວຂໍ້ຂອງບົດຮຽນນີ້. ເຈົ້າສາມາດແນະນຳຫົວຂໍ້ນີ້ແກ່ພວກເຂົາດ້ວຍວິທີການດັ່ງຕໍ່ໄປນີ້:

ພຣະຜູ້ເປັນເຈົ້າໄດ້ຊົງສ້າງສິ່ງດີງາມທຸກຢ່າງໃນໂລກນີ້ໄວ້ ເພື່ອໃຫ້ພວກເຮົາໄດ້ມີຄວາມປິຕິຍິນດີ - ກໍ່ຄືມີສຸຂະພາບທີ່ດີ, ມີອາຫານທີ່ແຊບຊ້ອຍ, ມີຄວາມຮັກແລະມິດຕະພາບ, ຄວາມງົດງາມຂອງທຳມະຊາດ, ແລະອຳນາດແຫ່ງສະຕິປັນຍາ, ເຊິ່ງຊ່ວຍໃຫ້ເຮົາສາມາດສຳຫຼວດຄົ້ນພົບ ແລະ ສາມາດຄິດຄົ້ນການປະດິດສ້າງ ເພື່ອປັບປຸງວິຖີຊີວິດຂອງພວກເຮົາ. ພວກເຮົາຄວນໃຊ້ພຣະກະລຸນາຕ່າງໆ ທີ່ພຣະຜູ້ເປັນເຈົ້າຊົງປະທານແກ່ເຮົາໃຫ້ເກີດປະໂຫຍດ ແລະຄວນຂອບໃຈພຣະອົງທີ່ໄດ້ຊົງມອບຄວາມສຸກຫັນສາໃນຊີວິດ. ແຕ່ພວກເຮົາຄວນລະມັດລະວັງບໍ່ໃຫ້ຍຶດຕິດກັບໂລກນີ້. ຈິດວິນຍານຂອງເຮົາຕ້ອງເປັນອິດສະຫຼະຕະຫຼອດເວລາ; ເໝືອນດັ່ງນົກທີ່ເປັນອິດສະຫຼະແລະແຂງແຮງ, ນົກນັ້ນຄວນເຫີນຂຶ້ນໄປໃນສະຫວັນແຫ່ງຄວາມສັກສິດ. ຈະເປັນເລື່ອງເສົ້າຫຼາຍພຽງໃດ ຖ້າຫາກນົກນັ້ນຍັງຄົງຢູ່ເທິງພື້ນດິນ, ບໍ່ສາມາດເຫີນຂຶ້ນໄປໄດ້ເພາະມັນຍັງຄົງຍຶດຕິດຢູ່ກັບສິ່ງຕ່າງໆຮອບຕົວມັນ. ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"ຈົ່ງຮູ້ໄວ້ວ່າ ເຄື່ອງຕົກແຕ່ງອັນແທ້ຈິງ ປະກອບດ້ວຍຄວາມຮັກໃນພຣະຜູ້ເປັນເຈົ້າ ແລະ ການປ່ອຍວາງຈາກທຸກສິ່ງນອກຈາກພຣະອົງ..."**[115]

*ປະກອບດ້ວຍ*

1. ວາດິດສ໌ລາຟ ມີໄສ້ກອກ, ມັນຝະລັ່ງ, ແລະໝາກຖົ່ວຍາວເປັນອາຫານທ່ຽງ. ອາຫານທ່ຽງເຂົາປະກອບດ້ວຍໄສ້ກອກ, ມັນຝະລັ່ງ, ແລະໝາກຖົ່ວຍາວ.
2. ປະໂຫຍກນີ້ມີຫ້າຄຳສັບ. ມັນປະກອບດ້ວຍຫ້າຄຳສັບ.

*ການປ່ອຍວາງ*

1. ທ້າວ ເຣວຈີ ຈາກໄປລອຍນ້ຳກັບເພື່ອນຂອງເຂົາແທ້ໆ. ຢ່າງໃດກໍຕາມ, ເຂົາກໍຢູ່ບ້ານກັບນ້ອງສາວຂອງເຂົາຢ່າງມີຄວາມສຸກ ເພື່ອວ່າແມ່ຂອງເຂົາຈະໄດ້ໄປຮ້ານຄ້າ. ທ້າວ ເຣວຈີ ສະແດງການປ່ອງວາງຈາກແຜນຂອງເອງ ຍ້ອນເຂົາຕ້ອງການຊ່ວຍເຫຼືອຄອບຄົວຂອງເຂົາ.
2. ໃນຕອນປິດສົກຮຽນ, ນາງ ແອນຈາລີ ຄິດວ່າໜ້າຈະເປັນການດີຫາກນຳເອົາດອກໄມ້ໄປໃຫ້ຄູຂອງລາວ. ນ້ອງສາວຂອງລາວແນະນຳໃຫ້ພວກເຂົາອົບຂະໜົມເຄັກໃຫ້ແທນ. ນາງ ແອນຈາລີ ຄິດວ່ານີ້ເປັນຄວາມຄິດທີ່ດີ. ນາງໄດ້ປ່ອຍວາງຈາກຄວາມຄິດຂອງລາວເອງ.

*ທຸກສິ່ງນອກຈາກ*

1. ໃນການສອບເສັງເດັກນ້ອຍທຸກຄົນເຮັດໄດ້ດີ, ຍົກເວັ້ນຄົນໜຶ່ງທີ່ບໍ່ໄດ້ຮຽນ. ທຸກຄົນນອກຈາກນັກຮຽນໜຶ່ງຄົນທີ່ເຮັດໄດ້ດີໃນການສອບເສັງ.
2. ແມ່ຕ້ອງການເຮັດອາຫານພິເສດໃຫ້ແກ່ຄອບຄົວ. ຈາກນັ້ນນາງກໍຮູ້ວ່າບໍ່ສາມາດເຮັດໄດ້ ຍ້ອນລາວຂາດສ່ວນປະສົມທີ່ສຳຄັນຢ່າງໜຶ່ງໄປ. ລາວມີທຸກສິ່ງນອກຈາກສ່ວນປະສົມຢ່າງດຽວ.

## D. ເລື່ອງລາວ

*ມື້ນຶ່ງມີຊາຍສອງຄົນ ທີ່ເປັນໝູ່ກັນມາດົນ, ກຳລັງສົນທະນາກັນກ່ຽວກັບເລື່ອງຂອງຈິດວິນຍານໃນລະຫວ່າງການດື່ມນ້ຳຊາ. ປັດຈຸບັນນີ້, ໜຶ່ງໃນຊາຍສອງຄົນນີ້ກໍໄດ້ສະສົມຊັບສົມບັດຢ່າງຫຼວງຫຼາຍຮັ່ງມີໃນຊ່ວງເວລາຊີວິດຂອງເຂົາ ແລະ ບໍ່ຕ້ອງການຫຍັງແລ້ວ. ສ່ວນຊາຍອີກຄົນໜຶ່ງມີຊັບສົມບັດໜ້ອຍກວ່າຫຼາຍ. "ຂ້ອຍຢາກເດີນທາງໄປທີ່ດິນແດນສັກສິດ", ຊາຍຄົນທີສອງໄດ້ເວົ້າກັບໝູ່ຜູ້ຮັ່ງມີຂອງເຂົາ. ຊາຍຄົນທຳອິດຕອບແບບບໍ່ລັງເລໃຈ, "ນີ້ແມ່ນຄວາມຄິດທີ່ດີເລີດ! ຂ້ອຍຈະຮ່ວມເດີນທາງໄປນຳເຈົ້າ." ທັງສອງຄົນວາງຈອກນ້ຳຊາລົງ ແລະ ລຸກຂຶ້ນທັນທີແລ້ວມຸ້ງໜ້າໄປໃນທິດທາງຂອງດິນແດນສັກສິດ.*

*ພວກເຂົາໄດ້ພາກັນຍ່າງພຽງໜ້ອຍດຽວ ເມື່ອເລີ່ມຕົກຕອນກາງຄືນ. ຊາຍທີ່ຍາກຈົນກວ່າຍ່າງຊ້າລົງແລ້ວກໍຢຸດ ລາວເວົ້າຂຶ້ນວ່າ, "ເພື່ອນຂອງຂ້ອຍ, ພວກເຮົາກັບໄປນອນພັກຂ້າມຄືນທີ່ບ້ານຂອງພວກເຮົາເຖີ້ນ. ຈະໄດ້ສະບາຍກວ່າ, ແລ້ວພວກເຮົາຈຶ່ງເລີ່ມຕົ້ນໃໝ່ມື້ອື່ນເຊົ້າ." "ແຕ່ເປັນຫຍັງພວກເຮົາຕ້ອງຫັນກັບໄປ?" ຊາຍອີກຄົນຕອບ. "ພວກເຮົາກຳລັງເດີນທາງໄປທີ່ດິນແດນສັກສິດໃດ໋!" ແຕ່ເພື່ອນຂອງລາວກໍຍັງບໍ່ພໍໃຈ. "ດິນແດນສັກສິດນັ້ນຢູ່ຫ່າງໄກເກີນທີ່ຈະຍ່າງໄປ," ຊາຍຄົນພະຍາຍາມເວົ້າອີກ. "ຢ່າງນ້ອຍໃຫ້ຂ້ອຍກັບໄປເອົາໂຕລາຂອງຂ້ອຍ, ເຊິ່ງຂ້ອຍບໍ່ຢາກຈະຖິ້ມມັນໄວ້ຂ້າງຫຼັງ."*

*"ສະນັ້ນແລ້ວ," ໝູ່ຜູ້ທີ່ລ້ຳລວຍເວົ້າກັບໝູ່ຂອງເຂົາ, "ບາງທີເຈົ້າອາດຈະບໍ່ແມ່ນຜູ້ທີ່ຈະມາຊຸກຍູ້ຂ້ອຍໃນການເດີນທາງຄັ້ງນີ້ເລີຍ. ດ້ວຍຄວາມສຸກຫັນສາ, ຂ້ອຍໄດ້ລະຖິ້ມຊັບສົມບັດອັນຫຼວງຫຼາຍເຊັ່ນ - ມ້າ, ດິນດອນຕ່ອນຫຍ້າ, ແລະ ເຄື່ອງນຸ່ງດີໆ - ແຕ່ກໍບໍ່ຮູ້ສຶກເຖິງການສູນເສຍຫຍັງ. ມີຄວາມກະລຸນາໃດອີກທີ່ຍິ່ງໃຫຍ່ໄປກວ່າ ການໃຊ້ຊ່ວງເວລາແມ່ນພຽງຊົ່ວຄະນະຢູ່ໃນດິນແດນສັກສິດ. ເຈົ້າບໍ່ສາມາດລະຖິ້ມແມ່ນແຕ່ໂຕລາຂອງເຈົ້າໄວ້ຂ້າງຫຼັງບໍ?" ໜ້າເສົ້າທີ່ເຂົາບໍ່ສາມາດລະຖິ້ມຊັບສົມບັດລ້ຳຄ່າຢ່າງດຽວຂອງເຂົາໄປໄດ້. ຍ້ອນແນວນັ້ນ ເຂົາຈຶ່ງຖິ້ມໝູ່ຂອງຕົນ, ຜູ້ທີ່ສືບຕໍ່ເດີນທາງໄປດິນແດນສັກສິດແລະບໍ່ໄດ້ຫຼຽວກັບມາເບິ່ງແມ່ນແຕ່ພຽງຄັ້ງດຽວ.*

## E. ເກມ "ວົງລໍ້"

ໃຫ້ເດັກນ້ອຍຢືນຕໍ່ຂ້າງເປັນວົງມົນ ແລະ ຍື່ນແຂນຊ້າຍຂອງພວກເຂົາເຂົ້າມາດ້ານໃນວົງກົມ, ແລະຈັບມືກັນເປັນສູນກາງ. ຕອນນີ້ພວກເຂົາຄວນເປັນເໝືອນວົງລໍ້, ໂດຍມີແຂນເປັນດີ້ວຂອງລໍ້. ຈາກນັ້ນ, ໃຫ້ເດັກໆໝຸນອ້ອມຮອບສູນກາງຂອງວົງກົມເໝືອນວົງລໍ້. ຫຼັງຈາກທີ່ໄດ້ເຮັດເຊັ່ນນັ້ນແລ້ວ, ຂໍໃຫ້ເດັກໆໝຸນໄປອ້ອມໆບໍລິເວນທີ່ມີການຈັດຊັ້ນຮຽນ, ຂະນະທີ່ໝຸນໄປອ້ອມຮອບ ແລະ ຍັງຄົງຮູບຊົງເດີມໄວ້. ເພື່ອເພີ່ມຄວາມທ້າທາຍ, ພວກເຂົາສາມາດລອງກະໂດດສອງຂາ ແລະ ກະໂດດຂາດຽວໄປພ້ອມນຳ.

ເຈົ້າສາມາດເຮັດໃຫ້ເກມທ້າທາຍຍິ່ງຂຶ້ນ ໂດຍການໃຫ້ເດັກນ້ອຍນັ່ງເທິງພື້ນເປັນວົງມົນ ແລະ ຍື່ນຂາຂອງພວກເຂົາອອກມາ ໃຫ້ປາຍຕີນແຕະກັນເປັນສູນກາງ. ຈາກນັ້ນຄວນວາງຝ່າມືໄວ້ເທິງພື້ນຂ້າງສະໂພກຂອງພວກເຂົາ. ຕອນນີ້ພວກເຂົາພ້ອມທີ່ຈະໃຫ້ວົງລໍ້ເຄື່ອນທີ່ແລ້ວ. ເພື່ອໃຫ້ມັນເຄື່ອນທີ່, ພວກເຂົາຈະທຸກຄົນຈະຕ້ອງດັນຕົນເອງຂຶ້ນດ້ວຍມື ແລ້ວຍ້າຍໄປທາງຂວາໜຶ່ງກ້າວ. ດ້ວຍວິທີນີ້ພວກເຂົາຄວນຍ້າຍເທື່ອກ້າວດ້ວຍມື, ຍັງຄົງໃຫ້ຕີນຂອງພວກເຂົາແຕະກັນເປັນສູນກາງຂອງວົງລໍ້, ຈົນກວ່າຈະໝູນການໂຄຈອນໄດ້ຮອບໜຶ່ງ.

F. **ການທາສີ: ຮູບທີ 14**

G. **ການສວດອະທິຖານປິດ**

## ບົດທີ 15

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ຫຼັງຈາກທ່ອງບົດສວດອະທິຖານເປີດແລ້ວ, ເຈົ້າສາມາດຊ່ວຍເດັກນ້ອຍສືບຕໍ່ການທ່ອງຈຳບົດອະທິ ຖານ ທີ່ໄດ້ນຳສະເໜີໄປໃນບົດຮຽນທີ່ 13.

### B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ປະທານສ່ວນແບ່ງຂອງຂ້າພະເຈົ້າ**

<u>ຮ້ອງປະສານສຽງ:</u>

A

ປະທານສ່ວນແບ່ງຂອງຂ້າພະເຈົ້າ

D A
ໂອ ພຣະອົງ, ໂອ ພຣະອົງ
A D A
ປະທານສ່ວນແບ່ງຂອງຂ້າພະເຈົ້າ
E A
ຕາມທີ່ພຣະອົງຊົງພໍພຣະໄທ

A
ເປັນເລື່ອງງ່າຍທີ່ຈະພໍໃຈ
D A
ເມື່ອສິ່ງຕ່າງໆເປັນໄປດ້ວຍດີ
A
ເປັນເລື່ອງງ່າຍທີ່ຈະພໍໃຈ
E A
ເມື່ອເຈົ້ານັ້ນຮູ້ສຶກດີ
D A
ແຕ່ວ່າແມ່ນຫຍັງເປັນສິ່ງທ້າທ້າຍກວ່າ
E A
ຄືການພໍໃຈເມື່ອມີສິ່ງຜິດພາດ
D A
ຕ້ອງອົດທົນໃນຍາມຫຍຸ້ງຍາກ
E A
ບາງຄັ້ງເຖິງແມ່ນວ່າຈະຮ້ອງເພງ

ຮ້ອງປະສານສຽງ

ຕັ້ງແຕ່ຕອນທີ່ພຣະອົງຍັງເປັນເດັກຊາຍ
ທ່ານນາຍໄດ້ປະສົບກັບຄວາມລໍາບາກ
ຕັ້ງແຕ່ຊ່ວງຍັງເຍົາໄວຂອງພຣະອົງ
ພຣະອົງເກືອບຈະບໍ່ໄດ້ຮັບຄວາມສະດວກຫຼືຄວາມສະບາຍ
ແຕ່ພຣະອົງກໍຍັງພໍພຣະໄທແລະສະຫງົບ
ບໍ່ເຄີຍເຕັມໄປດ້ວຍຄວາມວິຕົກກັງວົນ
ພຣະອົງເຊື່ອໝັ້ນໃນພຣະຜູ້ເປັນເຈົ້າ ແລະຍອມຮັບພຣະປະສົງຂອງພຣະອົງ

ດຳເນີນຕໍ່ໄປຢ່າງອົດທົນ

ຮ້ອງປະສານສຽງ

## C. ການທ່ອງຈຳພຣະວັດຈະນະ

ຂ້າງລຸ່ມນີ້ແມ່ນແນວຄວາມຄິດເຫັນບາງປະການ ທີ່ຊ່ວຍເຈົ້ານຳສະເໜີຫົວຂໍ້ຂອງບົດຮຽນ ແລະ ພຣະວັດຈະນະທີ່ເດັກໆຈະທ່ອງຈຳໃຫ້ຂຶ້ນໃຈ.

ພຣະອັບດຸລບາຮາ ຊົງພໍພຣະໄທກັບພຣະປະສົງຂອງພຣະຜູ້ເປັນເຈົ້າ ຢູ່ພາຍໃຕ້ທຸກສະພາບການ. ພຣະອົງເຄີຍໄດ້ບອກກັບຜູ້ທີ່ຢູ່ອ້ອມຂ້າງຂອງພຣະອົງວ່າ ມັນເປັນສິ່ງທີ່ງ່າຍດາຍທີ່ຈະມີຄວາມພໍໃຈ ໃນຄະນະທີ່ທຸກສິ່ງທຸກຢ່າງເປັນໄປດ້ວຍດີ, ເມື່ອມີຄົນສຸຂະພາບດີ ແລະ ດຳເນີນລົງຊີວິດຢ່າງສະດວກສະບາຍ. ສິ່ງທີ່ຍາກກວ່ານັ້ນຄື ການມີຄວາມສຸກແລະຄວາມພໍໃຈໃນເວລາທີ່ປະສົບກັບບັນຫາ, ໃນເວລາທີ່ເຈັບປ່ວຍ ແລະ ປະສົບກັບຄວາມຍາກລຳບາກ. ເຖິງວ່າຊີວິດຂອງພຣະອົງຈະເຕັມໄປດ້ວຍຄວາມທຸກທໍລະມານ, ພຣະອັບດຸລບາຮາ ກໍບໍ່ເຄີຍຊົງທໍ້ຖອຍສິ້ນຫວັງ. ໃນຊ່ວງເວລາທີ່ອັນຕະລາຍ ແລະທຸກຍາກທີ່ສຸດ, ພຣະອົງກໍຍັງຊົງພໍໃຈ ແລະຊົງຂອບໃຈພຣະຜູ້ເປັນເຈົ້າ. ພຣະອົງຊົງເບີກບານແລະມອງໂລກໃນແງ່ດີຕະຫຼອດເວລາ. ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້ ເພື່ອວ່າພວກເຮົາຈະໄດ້ຮັບການຢໍ້າເຕືອນຢູ່ສະເໝີກ່ຽວກັບຄຸນຄ່າຂອງຄວາມພໍໃຈ ຕາມພຣະປະສົງຂອງພຣະຜູ້ເປັນເຈົ້າ:

**“ແຫຼ່ງທີ່ມາຂອງຄວາມຮຸ່ງເຮືອງທັງປວງ ຄືການຍອມຮັບສິ່ງໃດກໍຕາມ ທີ່ພຣະຜູ້ຊົງເປັນນາຍໄດ້ຊົງປະທານໃຫ້, ແລະ ຄວາມພໍໃຈໃນສິ່ງທີ່ພຣະຜູ້ເປັນເຈົ້າຊົງບັນຍັດ.”**[116]

*ຄວາມຮຸ່ງເຮືອງ*

1. ຫຼັງຈາກຮຽນຈົບດ້ານວິຊາວິທະຍາສາດໃນສະຖານສຶກສາ, ນາງ ໂພ ໄດ້ເຂົ້າຮ່ວມກັບກຸ່ມນັກວິທະຍາສາດກຸ່ມໜຶ່ງ. ພວກເຂົາໄດ້ທຳການຄົ້ນຄວ້າທາງວິທະຍາສາດທີ່ສຳຄັນຫຼາຍປະການ. ວຽກງານຂອງ ນາງ ໂພ ນຳຄວາມຮຸ່ງເຮືອງມາສູ່ຊື່ສຽງຂອງຄອບຄົວລາວ.
2. ນາງ ສະຫວີ ຮັກການຊື່ນຊົມທຳມະຊາດ - ລາວມັກເບິ່ງພູເຂົາ, ຕົ້ນໄມ້, ແລະທະເລ. ທຸກເທື່ອທີ່ລາວເຫັນຄວາມງົດງາມຂອງໂລກ, ລາວມັກຈະນຶກເຖິງຄວາມງົດງາມ ແລະ ຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ, ຜູ້ຊົງເປັນພຣະຜູ້ສ້າງທຸກຊັບພະສິ່ງ. ການເບິ່ງທຳມະຊາດເຮັດໃຫ້ ສະຫວີ ນຶກເຖິງຄວາມຮຸ່ງເຮືອງຂອງພຣະຜູ້ເປັນເຈົ້າ.

*ປະທານໃຫ້*

1. ທ້າວ ເປົາໂລ ຂອບໃຈພຣະຜູ້ເປັນເຈົ້າທຸກມື້ສຳລັບຄອບຄົວທີ່ອົບອຸ່ນຂອງລາວ, ສຸຂະພາບທີ່ແຂງແຮງຂອງລາວ, ແລະ ສິ່ງດີງາມທຸກສິ່ງທີ່ພຣະອົງໄດ້ຊົງມອບໃຫ້ກັບລາວ. ທ້າວ ເປົາໂລ ຮູ້ສຶກຂອບໃຈສຳລັບຂອງຂວັນອັນຫຼວງຫຼາຍ ທີ່ພຣະຜູ້ເປັນເຈົ້າໄດ້ຊົງປະທານໃຫ້ກັບເຂົາ.
2. ຫາກປາດສະຈາກດວງອາທິດ, ໂລກຈະມືດມົນແລະເໜັບໜາວ, ແລະ ຈະບໍ່ມີສິ່ງໃດສາມາດອາໄສຢູ່ເທິງໂລກໄດ້ເລີຍ. ດວງອາທິດປະທານແສງສະຫວ່າງ ແລະ ຄວາມອົບອຸ່ນໃຫ້ແກ່ພວກເຮົາ.

*ບັນຍັດ*

1. ພະລາຊາໄດ້ກຳນົດໄວ້ວ່າ ປະຊາຊົນທັງໝົດທີ່ອາໄສໃນປະເທດຂອງພຣະອົງ ບໍ່ຄວນເຮັດວຽກໃນມື້ທຳອິດຂອງລະດູບານໃໝ່. ມື້ທຳອິດຂອງລະດູບານໃໝ່ຖືກບັນຍັດຂຶ້ນໃຫ້ເປັນມື້ພັກ.
2. ເປັນເວລາຫຼາຍເດືອນແລ້ວທີ່ຝົນບໍ່ຕົກໃນຂົງເຂດນັ້ນເລີຍ, ແລະ ປະຊາຊົນບ່ອນນັ້ນຈຶ່ງໄດ້ຮັບຄຳສັ່ງຈາກສະພາຫມູ່ບ້ານໃຫ້ຈຳກັດການໃຊ້ນ້ຳ. ການຈຳກັດນັ້ນຖືກບັນຍັດໂດຍສະພາ ເພື່ອເປັນການປະຫຍັດນ້ຳເອົາໄວ້.

## D. ເລື່ອງລາວ

*ຕອນແລງມື້ໜຶ່ງ, ພຣະອັບດຸລບາຮາ ກຳລັງຍ່າງກັບຊາວບາຮາຍສອງສາມຄົນຢູ່ໃນເມືອງລອນດອນທີ່ສົດໃສ. ພວກເຂົາຍ່າງຕາມແຄມທົບທາງ ທັງສອງຂ້າງທາງມີຕະກຽງເຮືອງແສງທີ່ຍາວສຸດສາຍຕາ. ກຸ່ມຄົນທີ່ໄດ້ຍ່າງມາພ້ອມກັບທ່ານນາຍຜູ້ເປັນທີ່ຮັກຂອງເຂົາ ຮູ້ສຶກເໝືອນກັນກັບວ່າຫົວໃຈຂອງພວກເຂົາໄດ້ຖືກນຳພາໄປຍັງອີກໂລກໜຶ່ງ.*

*"ຂ້າພະເຈົ້າປິຕິຍິນດີກັບເຫດການນີ້ຫຼາຍ," ພຣະອັບດຸລບາຮາອອກຄຳເຫັນ. "ແສງສະຫວ່າງເປັນສິ່ງທີ່ດີ, ດີທີ່ສຸດ. ມັນມືດມົວຫຼາຍຢູ່ທີ່ຄຸກແຫ່ງອັກຄາ."*

*ເພື່ອນກຸ່ມນ້ອຍໆທີ່ຮັກ ພຣະອັບດຸລບາຮາ, ໂສກເສົ້າກ່ຽວກັບຄວາມຊົງຈຳຂອງການຄຸມຂັງໃນເມືອງປ້ອມປະການແຫ່ງອັກຄາຂອງພຣະອົງ, ທີ່ພຣະອົງໄດ້ໃຊ້ເວລາຫຼາຍປີ ໃນການເປັນນັກໂທດຄຽງຄູ່ກັບບິດາຂອງພຣະອົງ ພຣະບາຮາອຸລາ. ເຊິ່ງເປັນສະຖານທີ່ທີ່ບໍ່ໜ້າຕ້ອນຮັບ, ແລະ ຄອບຄົວຂອງພຣະອົງໄດ້ຮັບຄວາມລຳບາກຢ່າງໜັກໜ່ວງ. "ພວກເຮົາດີໃຈ, ໂອ! ເຕັມໄປດ້ວຍຄວາມປິຕິຍິນດີທີ່ພຣະອົງໄດ້ເປັນອິດສະຫຼະ," ພວກເຂົາເວົ້າ.*

*ຍ້ອນສິ່ງນີ້ ພຣະອັບດຸລບາຮາ ໄດ້ຕອບກັບ: "ຂ້າພະເຈົ້າມີຄວາມສຸກຕອນທີ່ຢູ່ໃນຄຸກແຫ່ງນັ້ນ, ເພາະວັນເວລາເລົ່ານັ້ນໄດ້ຜ່ານໄປຕາມຫົນທາງແຫ່ງການຮັບໃຊ້." ຄຸກທີ່ຍິ່ງໃຫຍ່, ພຣະອົງບອກພວກເຂົາ, ວ່າມັນເປັນຄຸກແຫ່ງຕົນເອງ. ເຈົ້າເຫັນບໍ່ວ່າ, ຖ້າຫາກເຈົ້າຄິດເຖິງພຽງແຕ່ຕົນເອງ ແລະ ບໍ່ແມ່ນຄົນອອ້ມຂ້າງ - ນັ້ນແມ່ນເວລາທີ່ເຮົາໄດ້ຖືກຄຸມຂັງແທ້ໆ, ຕອນທີ່ເຮົາທໍລະມານທີ່ແທ້ຈິງ! ພຣະອັບດຸລບາຮາພໍໃຈຕະຫຼອດເວລາ, ເພາະພຣະອົງໄດ້ຍ່າງໃນຫົນທາງແຫ່ງການຮັບໃຊ້ພຣະຜູ້ເປັນເຈົ້າ ແລະ ມ່ວນມະນຸດຊາດ. ແລະແມ່ນແຕ່, ໃນລະວ່າງນີ້ທີ່ມືດມົວທີ່ສຸດໃນການເປັນນັກໂທດທີ່ອັກຄາ, ແສງແຫ່ງຄວາມບໍ່ຍໍ້ທໍ້ຂອງຈິດວິນຍານພຣະອົງ ສ່ອງແສງອອກມາ, ໃຫ້ຄວາມອົບອຸ່ນ ແລະ ຄວາມສະດວກສະບາຍແກ່ຜູ້ອື່ນ.*

E. **ເກມ: "ຊ່າງແກະສະຫຼັກ"**

ໃຫ້ທຳທ່າວ່າເຈົ້າເປັນຊ່າງແກະສະຫຼັກ ແລະ ເດັກນ້ອຍຈະຊ່ວຍເຈົ້າປະດິດຊິ້ນສ່ວນງານສິນລະປະ. ຂໍໃຫ້ເດັກຄົນໜຶ່ງມາຢືນຢູ່ດ້ານໜ້າຂອງຊັ້ນຮຽນ ແລະ ໃຫ້ເຮັດທ່າທາງໜຶ່ງທີ່ເຈົ້າຈະສາທິດ - ຕົວຢ່າງ, ໂຄ້ງຕົວລົງພ້ອມກັບເດ່ແຂນອອກ. ຫຼັງຈາກນັ້ນ, ເດັກນ້ອຍເທື່ອລະຄົນຫຼືເດັກນ້ອຍເທື່ອລະສອງສາມຄົນ, ກໍຈະຖືກເອີ້ນອອກມາຢູ່ດ້ານໜ້າຂອງກຸ່ມ ແລະ ສາທິດທ່າທາງເພື່ອໃຫ້ພວກເຂົາເຮັດຕາມ. ເມື່ອພວກເຂົາທຸກຄົນຮູ້ທ່າທາງຂອງຕົນເອງແລ້ວ, ໃຫ້ພວກເຂົາມາຮວມຕົວກັນ ແລ້ວສ້າງຊິ້ນສ່ວນງານສິນລະປະ. ຈາກນັ້ນກໍເພີ່ມຕົວເຈົ້າເອງເຊິ່ງເປັນຊິ້ນສ່ວນສຸດທ້າຍ ເຂົ້າໄປໃນກຸ່ມນັ້ນ.

ເຈົ້າສາມາດສືບຕໍ່ເກມນີ້ດ້ວຍການແບ່ງນັກຮຽນຂອງເຈົ້າອອກເປັນຄູ່. ໃຫ້ແຕ່ລະຄູ່ປ່ຽນຜຽນກັນ, ດ້ວຍການທຳທ່າເປັນຊ່າງແກະສະຫຼັກ ແລະ ຄົນອື່ນເຮັດທ່າທາງຕາມທີ່ບອກ.

ເຈົ້າອາດສາມາດຄິດກ່ຽວກັບຄວາມຫຼາກຫຼາຍອື່ນໆຂອງເກມໄດ້. ຕົວຢ່າງເຊັ່ນ, ເຈົ້າສາມາດເອີ້ນຖາມອອກມາວ່າ "ເຈົ້າເປັນຮົ້ວໄດ້ບໍ?" ຫຼື "ເຈົ້າເປັນສວນໄດ້ບໍ?" ຈາກນັ້ນໃຫ້ເດັກນ້ອຍຕອບກັບດ້ວຍການຈັດທ່າທາງຕົວເອງໃນຮູບຊົງທີ່ກຳໜົດ.

F. **ການທາສີ: ຮູບທີ 15**

G. **ການສວດອະທິຖານປິດ**

# ບົດທີ 16

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ເມື່ອມາເຖິງຊັ້ນຮຽນຄັ້ງນີ້, ເດັກນ້ອຍທຸກຄົນຄວນສາມາດທ່ອງບົດສວດອະທິຖານໃນບົດທີ 13 ໄດ້ແລ້ວຈາກຄວາມຊົງຈຳ, ເຊິ່ງເຈົ້າສາມາດທວນຄືນກັບພວກເຂົາຫຼັງຈາກສວດອະທິຖານເປີດ.

B. **ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)**

**ພວກເຮົາເປັນຢົດນ້ຳ**

C
ເຮົາເປັນຢົດນ້ຳ
ເຮົາເປັນຢົດນ້ຳ (*ສຽງສະທ້ອນ*)
C
ໃນມະຫາສະໝຸດ
ໃນມະຫາສະໝຸດ
F
ພວກເຮົາເປັນຄື້ນ
ພວກເຮົາເປັນຄື້ນ
G
ໃນທະເລດຽວ
ໃນທະເລດຽວ

<u>ຮ້ອງປະສານສຽງ:</u>
C
ມາຮ່ວມກັບເຮົາ
ມາຮ່ວມກັບເຮົາ (*ສຽງສະທ້ອນ*)
F
ເພື່ອສະແຫວງຫາຄວາມສາມັກຄີ
C G C F C
ນີ້ເປັນວິຖີຊີວິດຂອງເຮົາທັງຫຼາຍ

ເຮົາເປັນດອກໄມ້ (ສຽງສະທ້ອນ)
ໃນສວນໜຶ່ງ
ເຮົາເປັນໃບ
ເທິງຕົ້ນດຽວກັນ

ຮ້ອງປະສານສຽງ

ໂລກໜ່ວຍນີ້ (*ສຽງສະທ້ອນ*)
ເປັນປະເທດໜຶ່ງ
ທຸກໆຄົນ
ເປັນໜຶ່ງດຽວກັນ

ຮ້ອງປະສານສຽງ (*ດ້ວຍການຮ້ອງຄືນແຖວສຸດທ້າຍ*)

## C. ການທ່ອງຈຳພຣະວັດຈະນະ

ແນວຄວາມຄິດຂ້າງລຸ່ມນີ້ຈະຊ່ວຍເຈົ້າແນະນຳຫົວຂໍ້ຂອງບົດຮຽນ, ຄວາມກະລຸນາ, ແລະພຣະວັດຈະນະທີ່ຈະໃຫ້ເດັກໆທ່ອງຈຳ.

ພຣະຜູ້ເປັນເຈົ້າຊົງສ້າງມະນຸດຊາດ ໃຫ້ອາໃສຢູ່ຮ່ວມກັນເປັນຄອບຄົວດຽວກັນ. ຖ້າຫາກພວກເຮົາຕ້ອງການໃຫ້ເປັນເຊັ່ນນັ້ນ, ພວກເຮົາຕ້ອງບໍ່ໃຫ້ຄວາມແຕກຕ່າງມາແບ່ງແຍກເຮົາ. ແທນທີ່ຈະເປັນເຊັ່ນນັ້ນ, ພວກເຮົາຄວນຄົບຫາສະມາຄົມກັບຜູ້ຄົນຈາກທຸກສາສະໜາ, ທຸກປະເທດຊາດ, ແລະ ທຸກພູມຫຼັງ ດ້ວຍຫົວໃຈທີ່ເຕັມປ່ຽມໄປດ້ວຍຄວາມຮັກແລະຄວາມກະລຸນາ. ເພື່ອໃຫ້ພວກເຮົາຈົດຈຳສິ່ງນີ້ໄດ້, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌:

**"ພຣະພອນຈົ່ງມີແດ່ຜູ້ທີ່ຄົບຫາສະມາຄົມ ກັບມະນຸດທຸກຄົນ ດ້ວຍດວງຈິດແຫ່ງຄວາມກະລຸນາ ແລະ ຄວາມຮັກໄຄ່ຢ່າງທີ່ສຸດ."**[117]

*ຄົບຫາສະມາຄົມ*

1. ນົກກະຢາງແລະນົກກະທາ ເປັນນົກສອງຊະນິດທີ່ອາໃສຢູ່ໃນທົ່ງຫຍ້າ. ເຮົາມັກຈະເຫັນພວກມັນຢູ່ນຳກັນ. ນົກສອງຊະນິດນີ້ຄົບຫາສະມາຄົມກັນ.
2. ທີ່ງານຊຸມນຸມອະທິຖານ, ຫຼັງຈາກສວດບົດສວດອະທິຖານແລ້ວ, ຜູ້ຄົນພາກັນຢູ່ຕໍ່ແລະຄົບຫາສະມາຄົມກັນ.

## D. ເລື່ອງລາວ

*ເຈົ້າຮູ້ຈາກນິທານບາງເລື່ອງທີ່ຜ່ານມາ, ເມື່ອຄັ້ງທຳອິດທີ່ພຣະອັບດຸລບາຮາໄປເຖິງຄຸກແຫ່ງອັກຄາ, ຄົນສ່ວນຫຼາຍປະຕິບັດກັບພຣະອົງບໍ່ດີ. ພວກເຂົາໂຫດຮ້າຍກັບຊາວບາຮາຍ ແລະ ບໍ່ຍາກທີ່ຈະລືມນຳ. ຢ່າງໃດກໍຕາມ, ຫຼັງຈາກນັ້ນບໍ່ດົນ, ພວກເຂົາໄດ້ມາເຫັນວ່າຊາວບາຮາຍນັ້ນປຸງມໄປດ້ວຍຄວາມຮັກ ແລະ ກະລຸນາ, ແລ້ວຄົນໃນເມືອງສ່ວນໃຫຍ່ນັ້ນກໍຄ່ອຍໆສະແດງຄວາມກະລຸນາຕອບກັບຄືນ. ແຕ່ກໍຍັງມີບາງຄົນຍຶດໝັ້ນໃນຄວາມໂມໂຫ ແລະ ຄວາມກຽດຊັງຂອງພວກເຂົາ.*

*ໃນປັດຈຸບັນ, ມີມື້ໜຶ່ງຊາຍຄົນໜຶ່ງທີ່ຍັງມີຄວາມກຽດຊັງໃນຫົວໃຈຂອງເຂົາຕໍ່ ພຣະອັບດຸລບາຮາເມື່ອໄດ້ຍິນຜູ້ຄົນຍ້ອງຍໍຄວາມຍິ່ງໃຫຍ່ ແລະ ຄວາມດີຂອງພຣະອົງ. ຊາຍຄົນນັ້ນກາຍເປັນຄວາມຮ້າຍກາດ. ເຂົາໄດ້ສະແດງໃຫ້ຜູ້ຄົນເຫັນດ້ວຍຄວາມໃຈຮ້າຍວ່າ, ທ່ານນາຍທີ່ພວກເຂົາທຸກຄົນກຳລັງເຄົາລົບນັ້ນບໍ່ໄດ້ມະຫັດສະຈັນຫຍັງເລີຍ. ແລ້ວລາວກໍໄປ, ດ້ວຍຫົວໃຈທີ່ລຸກເປັນໄຟແຫ່ງຄວາມກຽດຊັງ. ເຂົາຮູ້ວ່າສາມາດພົບພຣະອັບດຸລບາຮາສວດອະທິຖານຢູ່ທີ່ວັດໃນຊ່ວງເວລານັ້ນໄດ້, ແລະ ເຂົາກໍຮີບໄປຫາພຣະອົງທີ່ນັ້ນ, ພ້ອມທີ່ຈະທຳຮ້າຍຢ່າງຮຸນແຮງໃສ່ທ່ານນາຍຜູ້ເປັນທີ່ຮັກ. ແຕ່ພຣະອັບດຸລບາຮາກໍເບິ່ງຊາຍຄົນນັ້ນດ້ວຍຄວາມສັນຕິສຸກ ແລະ ຄວາມພາກ ພູມໃຈ. ດ້ວຍຄວາມຮັກ, ພຣະອົງໄດ້ເຕືອນເຂົາກ່ຽວກັບຄຳສອນຂອງພຣະຜູ້ເປັນເຈົ້າວ່າເຮົາຄວນມີຄວາມເອື້ອເຟື້ອຕໍ່ແຂກທຸກຄົນ, ແມ່ນແຕ່ຄົນທີ່ແຕກຕ່າງຈາກພວກເຮົາ. ຍ້ອນແນວນີ້, ຊາຍຄົນນັ້ນກໍຮັບຮູ້ໄດ້ວ່າ ພຣະອັບດຸລບາຮາ ແລະ ຊາວບາຮາຍນັ້ນເໝືອນກັນກັບແຂກໃນເມືອງອັກຄາ, ເຊິ່ງເປັນບ້ານຂອງຕົນ. ແລະ ການເປັນເຈົ້າພາບທີ່ດີ ເຂົາຄວນຕ້ອນຮັບພວກເຂົາດ້ວຍຄວາມຮັກ ແລະ ປະຕິບັດຕໍ່ພວກເຂົາດ້ວຍຄວາມກະລຸນາ.*

## E. ເກມ: "ຄຸນລັກສະນະທີ່ເຊື່ອງຊ້ອນ"

ບອກໃຫ້ເດັກນ້ອຍເຮັດຮູບແບບເປັນວົງມົນ, ໂດຍເອົາສອງຂ້າງຈັບກັນ ແລ້ວເດ່ໄປທາງໜ້າຂອງພວກເຂົາ. ຢືນຢູ່ກາງວົງມົນ, ຖືວັດຖຸສິ່ງຂອງນ້ອຍໆເຊັ່ນໝາກບີ້. ສິ່ງຂອງນັ້ນສະແດງເຖິງຄຸນລັກສະນະໜຶ່ງ, ຕົວຢ່າງເຊັ່ນ "ຄວາມກະລຸນາ". ແລ້ວເຈົ້າກໍຍ່າງໄປອ້ອມຮອບວົງມົນ, ຍື່ນມືໄປແຕະມືເດັກໆເທື່ອລະຄົນພ້ອມກັບເວົ້າເຊັ່ນວ່າ "ຈອນເປັນຄົນກະລຸນາ, ອິດສະແບວລ້າເປັນຄົນກະລຸນາ, ເດິລ໌ວິເປັນຄົນກະລຸນາ ແລະຄົນອື່ນໆ." ເດັກແຕ່ລະຄົນກໍກຳມືຂອງຕົນເອງໄວ້, ເຮັດຄືກັບວ່າໄດ້ຮັບສິ່ງຂອງນັ້ນຈາກເຈົ້າແລ້ວ. ອັນທີ່ຈິງເຈົ້າຄວນມອບສິ່ງຂອງນັ້ນໄວ້ໃນມືຂອງເດັກຄົນໃດຄົນໜຶ່ງແລ້ວ. ເມື່ອເຈົ້າຍ່າງໄປຈົນຄົບຮອບວົງມົນແລ້ວ, ຈຶ່ງຂໍໃຫ້ເດັກຄົນໜຶ່ງໃນວົງກົມນັ້ນ ທວາຍວ່າໃຜເປັນຄົນທີ່ມີສິ່ງຂອງນັ້ນໂດຍໃຫ້ເວົ້າຂຶ້ນເຊັ່ນວ່າ, "ເຄນຈິເປັນຄົນກະລຸນາຫຼາຍ". ຈາກນັ້ນເຄນຈິກໍຈະແບມືຂອງເຂົາອອກເພື່ອໃຫ້ເພື່ອນເຫັນວ່າມີສິ່ງຂອງນັ້ນຢູ່ຫຼືບໍ່. ໃຫ້ໂອກາດເດັກຄົນທີ່ເປັນຄົນທວາຍ ໃຫ້ທວາຍໄດ້

ສາມຄັ້ງວ່າໃຜເປັນຄົນທີ່ມີສິ່ງຂອງນັ້ນຢູ່, ຫຼັງຈາກນັ້ນຈຶ່ງສາມາດຫຼິ້ນເກມນີ້ຄືນໃໝ່ ໂດຍການໃຊ້ຄຸນລັກສະນະອື່ນ. ເຈົ້າຄວນເຮັດໃຫ້ແນ່ໃຈວ່າເດັກນ້ອຍແຕ່ລະຄົນ ໄດ້ຮັບສິ່ງນັ້ນຢ່າງໜ້ອຍຄົນລະໜຶ່ງຄັ້ງ.

F. **ການທາສີ: ຮູບທີ 16**

G. **ການສວດອະທິຖານປິດ**

## ບົດທີ 17

### A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ໃນສີ່ບົດຮຽນຕໍ່ໄປນີ້, ເດັກນ້ອຍຈະໄດ້ຮຽນທ່ອງບົດສວດອະທິຖານຂ້າງລຸ່ມນີ້ໃຫ້ຂຶ້ນໃຈ, ແລະພວກເຂົາຈະພົບວ່າມັນເປັນແຫຼ່ງທີ່ມາຂອງການຊຸກຍູ້ ຫາກເຈົ້າເປີດຊັ້ນຮຽນແຕ່ລະໄລຍະດ້ວຍບົດສວດອະທິຖານບົດໃໝ່ບົດໜຶ່ງທີ່ເຈົ້າໄດ້ຕັ້ງໃຈທ່ອງຈຳ, ເໝືອນກັບທີ່ໄດ້ແນະນຳໃນຕອນທີ 16. ຫຼັງຈາກນັກຮຽນສອງສາມຄົນສວດອະທິຖານເປີດຮ່ວມກັບເຈົ້າແລ້ວ, ເຈົ້າສາມາດແນະນຳບົດສວດອະທິຖານນີ້ຕາມປົກກະຕິ.

> **"ພຣະນາມຂອງພຣະອົງ ຄືການຮັກສາປິ່ນປົວຂອງຂ້າພະອົງ, ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ, ແລະ ການລະນຶກເຖິງພຣະອົງຄືທິບໂອສົດຂອງຂ້າພະອົງ. ການເຂົ້າໃກ້ພຣະອົງຄືຄວາມຫວັງຂອງຂ້າພະອົງ, ແລະ ຄວາມຮັກທີ່ມີຕໍ່ພຣະອົງນັ້ນຄື ການຮັກສາປິ່ນປົວ. ແລະ ການຊ່ວຍເຫຼືອຂ້າພະອົງທັງໃນໂລກນີ້ ແລະ ໂລກໜ້າ. ແທ້ຈິງແລ້ວ, ພຣະອົງຄືພຣະຜູ້ຊົງກະລຸນາ, ພຣະຜູ້ຊົງຮອບຮູ້, ພຣະຜູ້ຊົງພຣະປັຊາຍານ, ເໜືອສັບພະສິ່ງທັງມວນ."**[118]

### B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ແຫຼ່ງທີ່ມາຂອງຄວາມກ້າຫານ**

ຮ້ອງປະສານສຽງ:

```
        Am
ທີ່ມາຂອງຄວາມກ້າຫານແລະພະລັງ
        Dm                    E      Am
ຄືການສັ່ງເສີມຖ້ອຍຄຳຂອງພຣະຜູ້ເປັນເຈົ້າ
```

Am
ທີ່ມາຂອງຄວາມກ້າຫານແລະພະລັງ
Dm E Am
ຄືຄວາມໝັ້ນຄົງໃນຄວາມຮັກຂອງພຣະອົງ
G
ລືມສິ່ງທີ່ອ້ອມຮອບຕົວເຈົ້າ
C
ຢືນຢັດເພື່ອສິ່ງທີ່ຖືກຕ້ອງ
E7
ປົກປ້ອງຜູ້ທີ່ຕ້ອງການ
Am
ວາງໃຈໃນອຳນາດຂອງພຣະອົງ

ສອນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ
ຈົ່ງກ້າຫານໃນການກະທຳຂອງເຈົ້າ
ເດີນຕາມໜົນທາງຂອງພຣະອົງ
ຈະນຳໄປສູ່ຄວາມສຸກ

<u>ຮ້ອງປະສານສຽງ</u>

## C. ການທ່ອງຈຳພຣະວັດຈະນະ

ຄຳບັນຍາຍຂ້າງລຸ່ມຈະຊ່ວຍເຈົ້າໃນການນຳສະເໜີຫົວຂໍ້ຂອງບົດຮຽນ ແລະ ພຣະວັດຈະນະສຳລັບການທ່ອງຈຳ:

ການມີຄວາມກ້າຫານ ໝາຍເຖິງການທີ່ເຮົາຢືນຢັດເພື່ອສິ່ງທີ່ຖືກຕ້ອງ ເຖິງວ່າເຮົາຈະເປັນຄົນດຽວທີ່ກະທຳເຊັ່ນນັ້ນ, ການປົກປ້ອງຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຈາກເຮົາ ເຖິງວ່າມັນຈະເຮັດໃຫ້ເຮົາບໍ່ສະດວກສະບາຍກໍຕາມ, ແລະ ການບອກຄວາມຈິງ ເຖິງແມ່ນວ່າເຮົາຮູ້ວ່າສິ່ງນັ້ນຈະເຮັດໃຫ້ເຮົາຫຍຸ້ງຍາກກໍຕາມ. ມັນຕ້ອງໃຊ້ຄວາມກ້າຫານ ທີ່ຈະປະເຊີນກັບຄວາມຍາກລຳບາກໃນຊີວິດດ້ວຍຄວາມໃຈເຢັນ ແລະ ກະລຸນາທິຄຸນ. ພວກເຮົາໄດ້ມາເຊິ່ງຄວາມກ້າຫານຈາກຄວາມຮັກໃນພຣະຜູ້ເປັນເຈົ້າ ແລະ ຈາກຄວາມປາດຖະໜາຂອງເຮົາເໜືອສິ່ງອື່ນໃດທັງປວງ ທີ່ຈະເຮັດໃຫ້ພຣະອົງຊົງພໍພຣະໄທ. ເພື່ອຊ່ວຍໃຫ້ພວກເຮົາຈົດຈຳວ່າ ພວກເຮົາຄວນປະ

ເຊີນທຸກສະຖານະການໃນຊີວິດຂອງເຮົາ ດ້ວຍຄວາມກ້າຫານ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕອນຕໍ່ໄປນີ້:

**"ແຫຼ່ງທີ່ມາຂອງຄວາມກ້າຫານ ແລະ ພະລັງ ຄືການສົ່ງເສີມຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ແລະ ຄວາມໝັ້ນຄົງໃນຄວາມຮັກຂອງພຣະອົງ."**[119]

*ແຫຼ່ງທີ່ມາ*

1. ຢອງມີ ອາໃສຢູ່ໃນຫມູ່ບ້ານແຫ່ງໜຶ່ງທີ່ຢູ່ໃນຫຸບພວກເຂົາ. ນ້ຳທີ່ໃຊ້ໃນຫມູ່ບ້ານມາຈາກຫິມະທີ່ລະລາຍມາຈາກພູເຂົາທີ່ຢູ່ໃກ້ຄຽງ. ແຫຼ່ງທີ່ມາຂອງນ້ຳທີ່ໃຊ້ໃນຫມູ່ບ້ານແມ່ນຫິມະຈາກເທິງຍອດພູເຂົາ.
2. ນາງພຸດເຕີ້ ມີລູກໆທີ່ໜ້າຮັກແລະຮຽບຮ້ອຍສາມຄົນ. ລູກໆຂອງນາງເປັນແຫຼ່ງທີ່ມາແຫ່ງຄວາມສຸກຫັນສາ ແລະ ຄວາມມ່ວນຊື່ນແກ່ນາງ.

*ການສົ່ງເສີມ*

1. ເພື່ອນໆຂອງໂສສອງຄົນເລີ່ມຖົກຖຽງກັນ ແລະ ຮ້າຍກັນແລະກັນ. ໂສຊ່ວຍແຕ່ລະຄົນໃຫ້ມອງຈາກມຸມມອງຂອງເພື່ອນອີກຄົນ ແລະ ໄດ້ຊ່ວຍໃຫ້ປອງດອງກັນ. ໂສສົ່ງເສີມຄວາມປອງດອງ ແລະ ຄວາມເຂົ້າໃຈລະຫວ່າງເພື່ອນໆຂອງເຂົາ.
2. ພະຍາບານຄົນໜຶ່ງໄປຢ້ຽມຢາມເພື່ອນຮ່ວມຫ້ອງ ເພື່ອໄປສອນເດັກນ້ອຍວ່າອາຫານເປັນສິ່ງທີ່ດີສຳລັບສຸຂະພາບຂອງພວກເຂົາ. ພະຍາບານສົ່ງເສີມການກິນເພື່ອສຸຂະພາບດີ.

*ຄວາມໝັ້ນຄົງ*

1. ນາງ ໂປຣມິນລາ ຮູ້ດີວ່ານາງຢາກເປັນໝໍ. ລາວຕັ້ງໃຈຮຽນຢ່າງໜັກໃນໂຮງຮຽນຢູ່ສະເໝີ, ແລະ ຫຼັງຈາກນັ້ນຫຼາຍປີຂອງການຮຽນຢ່າງຫຍຸ້ງຍາກ, ລາວກໍສຳເລັດຕາມເປົ້າໝາຍຂອງລາວ. ລາວສະແດງຄວາມໝັ້ນຄົງໃນຄວາມພະຍາຍາມຂອງລາວທີ່ຈະເປັນໝໍ.
2. ທ້າວ ສວອນດາຍ ເດີນທາງໄປຍັງຫມູ່ບ້ານແຫ່ງໜຶ່ງທີ່ຫ່າງໄກສອກຫຼີກຫຼາຍ ເພື່ອຊ່ວຍເປີດໂຮງຮຽນໃໝ່ແຫ່ງໜຶ່ງ. ເຖິງແມ່ນວ່າເຂົາຈະຄິດເຖິງຄອບຄົວຂອງເຂົາ ແລະ ຕ້ອງປະສົບກັບຄວາມຫຍຸ້ງຍາກຫຼາຍປະການ, ເຂົາກໍໄດ້ສະແດງຄວາມໝັ້ນຄົງ ໂດຍການຍັງຄົງຢູ່ໃນໝູ່ບ້ານເປັນເວລາຫຼາຍປີ, ເພື່ອເຝິກອົບຮົມຄູ ແລະ ສອນເດັກໆ.

## D. ເລື່ອງລາວ

*ທ້າວ ອາລີ ອັສກາ ເປັນພໍ່ຄ້າໃນອານາຈັກເປີລ໌ເຊຍ. ຕອນທີ່ເລີ່ມນັບຖືສາສະໜາບາຮາຍ, ເຂົາຕ້ອງປະສົບກັບຄວາມຍາກລຳບາກ ຈາກຝີມືຂອງຜູ້ທີ່ຕໍ່ຕ້ານສາສະໜາ. ພາຍໃນຊ່ວງເວລາສັ້ນໆ, ເຂົາຕ້ອງສູນເສຍທຸກສິ່ງທຸກຢ່າງທີ່ເຂົາມີ. ເຖິງຢ່າງນັ້ນ ອາລີ ອັສກາ ກໍບໍ່ເສຍກຳລັງໃຈ. ດ້ວຍເຫດທີ່ເຂົາຄາດການໄດ້ວ່າເຂົາຄົງບໍ່ສາມາດຫາລ້ຽງຊີບຕົນເອງໄດ້ ໃນບ້ານເກີດເມືອງນອນຂອງຕົນເອງ, ເຂົາຈຶ່ງໄດ້ຕັດສິນໃຈຍ້າຍໄປຍັງເມືອງເອເດລີຍໂນເປິນ ເຊິ່ງເປັນເມືອງໜຶ່ງໃນປະເທດທີ່ມີອານາເຂດໃກ້ກັນ.*

*ໃນເມືອງເອເດລີຍໂນເປິນ, ເຖິງແມ່ນວ່າເຂົາຈະຍັງຂັດສົນຢູ່, ແຕ່ເຂົາກໍໄດ້ພະຍາຍາມຈົນສາມາດຊື້ສິນຄ້າຈຳນວນນ້ອຍໆຈຳນວນໜຶ່ງເພື່ອຄ້າຂາຍ. ຢ່າງໃດກໍຕາມ, ກ່ອນທີ່ເຂົາຈະສາມາດຂາຍສິນຄ້າແມ່ນພຽງຊິ້ນດຽວ, ເຂົາກໍຖືກຈູ່ໂຈມໂດຍໂຈນກຸ່ມໜຶ່ງ ເຊິ່ງລັກເອົາທຸກຢ່າງທີ່ເຂົາມີ, ແລ້ວຖິ້ມເຂົາໄວ້ໂດຍປາດສະຈາກທຸກສິ່ງທຸກຢ່າງອີກເທື່ອ.*

*ບໍ່ດົນຫຼັງຈາກນັ້ນ, ໂຈນກຸ່ມນັ້ນໄດ້ຖືກຈັບກຸມ, ແລະຊັບສິນຫຼວງຫຼາຍທີ່ພວກເຂົາລັກມາກໍໄດ້ຖືກຍຶດຄືນ. ເຈົ້າໜ້າທີ່ຂອງທາງການຄົນໜຶ່ງ, ເຊິ່ງຮູ້ສຶກຕື່ນຕາຕື່ນໃຈກັບສົມບັດອັນຮັ່ງມີເລົ່ານັ້ນ, ໄດ້ຄິດວິທີທີ່ເຂົາຈະສາມາດເກັບຊັບສິນເລົ່ານັ້ນໄວ້ເອງ. ລາວຕິດຕໍ່ ອາລີ ອັສກາມາຍັງຫ້ອງເຮັດວຽກຂອງລາວ ແລະ ອະທິບາຍ.*

*"ອາລີ ອັສກາ" ລາວເວົ້າ "ໂຈນເລົ່ານີ້ຮັ່ງມີລົ້ນລອຍຫຼາຍ. ໃນລາຍງານຂອງຂ້ອຍທີ່ສົ່ງໄປຍັງລັດຖະບານ ຂ້ອຍໄດ້ຂຽນວ່າປະລິມານສິ່ງຂອງທີ່ເຂົາໄດ້ລັກຈາກເຈົ້ານັ້ນຫຼວງຫຼາຍມະຫາສານ. ດັ່ງນັ້ນເຈົ້າຕ້ອງເຂົ້າຮ່ວມການໄຕ່ສວນ ແລະ ໃຫ້ການກົງກັບສິ່ງທີ່ຂ້ອຍໄດ້ຂຽນລົງໄປວ່າເປັນຄວາມຈິງ." ດ້ວຍວິທີນີ້, ເຈົ້າໜ້າທີ່ຄົນນີ້ຄິດວ່າເງິນທັງໝົດຈະຖືກນຳສົ່ງຄືນໃຫ້ກັບ ອາລີ ອັສກາ ແລະ ທັງສອງກໍຈະແບ່ງຊັບສິນເລົ່ານັ້ນຄົນລະເຄິ່ງ.*

*ອາລີ ອັສກາ ຮູ້ດີວ່າຕົນເອງບໍ່ມີວັນເຫັນດີກັບແຜນການເຊັ່ນນີ້ໄດ້. "ທ່ານທີ່ເຄົາລົບ" ເຂົາຕອບກັບ, "ສິນຄ້າຂອງຂ້າພະເຈົ້າທີ່ຖືກລັກໄປນັ້ນມີຈຳນວນພຽງໜ້ອຍດຽວ. ຂ້າພະເຈົ້າຈະລາຍງານໃນສິ່ງທີ່ບໍ່ເປັນຄວາມຈິງໄດ້ຢ່າງໃດ? ເວລາທີ່ເຂົາເຈົ້າໄຕ່ສວນຂ້າພະເຈົ້າ, ຂ້າພະເຈົ້າຈະຕອບໄປຕາມຄວາມຈິງ. ຂ້າພະເຈົ້າຖືວ່ານີ້ແມ່ນໜ້າທີ່ຂອງຂ້າພະເຈົ້າ, ແລະມີພຽງແຕ່ສິ່ງນີ້ເທົ່ານັ້ນ."*

*ເຈົ້າໜ້າທີ່ຄົນນັ້ນຍັງພະຍາຍາມໂນ້ມນ້າວ ອາລີ ອັສກາ ອີກຄັ້ງ. "ພວກເຮົາມີໂອກາດທອງເລີຍເດີ້" ເຈົ້າໜ້າທີ່ເວົ້າ. "ເຈົ້າກັບຂ້ອຍສາມາດໄດ້ຮັບຜົນປະໂຫຍດກັນທັງຄູ່ໃດ໋. ຢ່າໃຫ້ໂອກາດທີ່ມີພຽງຄັ້ງດຽວໃນຊີວິດເຊັ່ນນີ້ຫຼຸດມືເຮົາໄປ!"*

*ແຕ່ ອາລີ ອັສກາ ກໍໄດ້ປະຕິເສດອີກຄັ້ງໜຶ່ງ, ໂດຍເວົ້າວ່າ "ທ່ານເອີຍ, ຂ້າພະເຈົ້າຈະຊີ້ແຈງໃຫ້ພຣະຜູ້ເປັນເຈົ້າຟັງຢ່າງໃດ? ປ່ອຍຂ້າພະເຈົ້າໄປເຖີດ. ຂ້າພະເຈົ້າຈະເວົ້າຄວາມຈິງ ແລະ ຈະເວົ້າແຕ່ຄວາມຈິງເທົ່ານັ້ນ."*

*ມາເຖິງຕອນນີ້ ເຈົ້າໜ້າທີ່ຄົນນັ້ນກໍຮູ້ສຶກຮ້າຍຂຶ້ນມາ. ຫາກວ່າ ອາລີ ອັສກາ ບໍ່ປະຕິບັດຕາມອຸບາຍຂອງລາວ, ແຜນການທັງໝົດຂອງລາວກໍຈະບໍ່ເກີດຜົນອັນໃດຂຶ້ນມາ, ແລະ ລາວກໍຈະສູນເສຍໂຊກລາບທັງໝົດທີ່ຢູ່ໃກ້ພຽງເອື້ອມມືໃນຕອນນີ້. ດັ່ງນັ້ນ ລາວຈຶ່ງເລີ່ມຂົ່ມຂູ່ ອາລີ ອັສກາ, ໂດຍຫວັງວ່າຈະເຮັດໃຫ້ເຂົາຢ້ານແລ້ວໃຫ້ຄວາມຮ່ວມມື. "ຂ້ອຍຈະຂັງເຈົ້າ" ລາວເວົ້າ. "ຂ້ອຍຈະເນລະເທດເຈົ້າ; ຂ້ອຍຈະບໍ່ລະເວັ້ນເຈົ້າຈາກຄວາມທຸກທໍລະມານແມ່ນແຕ່ຢ່າງດຽວ." ຈາກນັ້ນລາວກໍໄດ້ບອກກັບ ອາລີ ອັສກາ ວ່າ, ຫາກເຂົາບໍ່ເຫັນດີນຳ, ເຂົາຈະຖືກສົ່ງກັບໄປທີ່ອານາຈັກເປີລ໌ເຊຍອີກຄັ້ງ.*

*ອາລີ ອັສກາ ພຽງແຕ່ຍິ້ມ. "ທ່ານເອີຍ" ເຂົາເວົ້າ, "ຂໍໃຫ້ທ່ານເຮັດກັບຂ້າພະເຈົ້າຕາມທີ່ທ່ານຕ້ອງການເຖີດ; ຂ້າພະເຈົ້າຈະບໍ່ມີມື້ຫັນຫຼັງໃຫ້ກັບສິ່ງທີ່ຖືກຕ້ອງ."*

## E. ເກມ: "ຖືກ ຫຼື ຜິດ"

ໃຫ້ເລີ້ມເກມໂດຍຂໍໃຫ້ເດັກນ້ອຍເຮັດເປັນຮູບວົງມົນກວ້າງ, ແລ້ວໃຫ້ເຈົ້າຢູ່ທາງກາງ. ຕອນນີ້ອະທິບາຍໃຫ້ເດັກນ້ອຍຟັງວ່າ ເຈົ້າກຳລັງສ້າງຄຳບັນຍາຍຫຼາຍອັນ. ບາງຄຳບັນຍາຍແມ່ນຖືກຕ້ອງ; ບາງອັນກໍຜິດ. ບອກພວກເຂົາວ່າ, ຖ້າຫາກຄຳບັນຍາຍຖືກ ພວກເຂົາຄວນຮ້ອງອອກມາວ່າ "ຖືກ" ແລ້ວໂດດເຂົ້າໄປທາງກາງຂອງວົງມົນ. ຖ້າວ່າຄຳບັນຍາຍຜິດ ພວກເຂົາຄວນຮ້ອງອອກມາວ່າ "ຜິດ" ແລ້ວໂດດຖອຍຫຼັງ.

ຄຳບັນຍາຍທັງໝົດທີ່ເຈົ້າເວົ້າຄວນອີງໃສ່ສິ່ງຕ່າງໆ ທີ່ເດັກນ້ອຍສາມາດສັງເກດໄດ້ງ່າຍໆ. ຕົວຢ່າງຂອງຄຳບັນຍາຍທີ່ຕອບວ່າ "ແມ່ນ" ດັ່ງນີ້: "ດວງຕາເວັນສ່ອງແສງ." "ຕົ້ນໄມ້ເຕີບໂຕມາຈາກເມັດພືດ." "ພູເຂົາສູງ." ເຈົ້າຍັງສາມາດສ້າງຄຳບັນຍາຍເພື່ອອະທິບາຍສິ່ງທີ່ເດັກນ້ອຍສວມໃສ່, ເຊັ່ນ "ຊີຣາ ໃສ່ເສື້ອສີຟ້າ," ຫຼື ສິ່ງຂອງທີ່ພວກເຂົາເຫັນໃນພື້ນທີ່ອ້ອມຮອບພວກເຂົາ, ເຊັ່ນ "ມີຕັ່ງແປ້ນມ້າຢູ່ບ່ອນນັ້ນ."

ຕົວຢ່າງສອງສາມຄຳບັນຍາຍທີ່ຕອບວ່າ "ບໍ່ແມ່ນ" ດັ່ງນີ້: "ຝົນຕົກຂຶ້ນເທິງ." "ປາບິນ." "ກ້ອນຫີນຍ່າງເທິງຕີນ." ອີກຄັ້ງ, ເຈົ້າກໍສາມາດສ້າງຄຳບັນຍາຍທີ່ຜິດຈາກສິ່ງທີ່ອ້ອມຮອບຕົວເຈົ້າ. ຈົ່ງຈື່ໄວ້ວ່າເຈົ້າຄວນມີຄຳບັນຍາຍທີ່ຖືກຕ້ອງຫຼາຍກວ່າຄຳບັນຍາຍທີ່ຜິດ, ເມື່ອຈົບເກມ, ເດັກໆຈຶ່ງມາຮອດເຈົ້າຢູ່ຈຸດໃຈກາງຂອງວົງມົນ.

F. ການທາສີ: ຮູບທີ 17

G. ການສວດອະທິຖານປິດ

## ບົດທີ 18

A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ຫຼັງຈາກສວດອະທິຖານເປີດຊັ້ນຮຽນ, ເດັກນ້ອຍຄວນໃຊ້ເວລາຮຽນທ່ອງອອກສຽງຈາກຄວາມຊົງຈຳບົດສວດອະທິຖານທີ່ໄດ້ແນະນຳໃນບົດຮຽນທີ່ຜ່ານມາ.

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຈົ່ງມີຄວາມຫວັງ**

```
     C          F
ອານາຄົດເຮົາບໍ່ສາມາດຮູ້ໄດ້
     G          C
ຈະເກີດຫຍັງຂຶ້ນໃນມື້ຕໍ່ໄປ
     C          F
ແຕ່ພຣະກະລຸນາບໍ່ເຄີຍຢຸດຫຼັ່ງໄຫຼ
G               C
ຈົ່ງວາງໃຈໃນພຣະອົງແລະສ້າງເສັ້ນທາງຂອງເຈົ້າ
```

<u>ຮ້ອງປະສານສຽງ:</u>

```
     F          G
ຈົ່ງມີຄວາມຫວັງ, ຈົ່ງມີຄວາມຫວັງ,
     C                    F
ແລ້ວຈະພົບພຣະກະລຸນາຂອງພຣະອົງທຸກແຫ່ງຫົນ
     F
ດວງຕາເວັນຈະສ່ອງແສງ
```

G

ແລະເຕີມເຕັມທ້ອງຟ້າ

C F

ເບິ່ງດ້ວຍສາຍຕາທີ່ຄາດຫວັງ

F G C

ເບິ່ງພຣະອົງດ້ວຍສາຍຕາແຫ່ງຄວາມຫວັງ

ຈົ່ງມີຄວາມຫວັງຢູ່ສະເໝີ, ມຸ່ງໝັ້ນທີ່ຈະເຕີບໂຕ
ແລ້ວລະດູໜາວຈະຫຼີກທາງໃຫ້ແກ່ລະດູບານໃໝ່
ພຣະກະລຸນາຂອງພຣະອົງບໍ່ເຄີຍຢຸດຫຼັ່ງໄຫຼ
ກຳລັງນຳເອົາຊີວິດຊີວາມາສູ່ສັບພະສິ່ງ

<u>ຮ້ອງປະສານສຽງ</u>

ເປັນທີ່ມາຂອງຄວາມສຸກທັນສາແລະສັນຕິ
ຮັບໃຊ້ແລະປ່ອຍໃຫ້ຈິດໃຈເປັ່ງປະກາຍ
ຈື່ໄວ້ວ່າພຣະກະລຸນາບໍ່ເຄີຍຢຸດ
ຈົ່ງມີຄວາມຫວັງແກ່ມື້ອື່ນ

<u>ຮ້ອງປະສານສຽງ</u>

## C. ການທ່ອງຈຳພຣະວັດຈະນະ

ຂ້າງລຸ່ມນີ້ແມ່ນແນວຄວາມຄິດບາງຢ່າງ ທີ່ເຈົ້າສາມາດໃຊ້ແນະນຳພຣະວັດຈະນະເຊິ່ງເດັກນ້ອຍຈະທ່ອງຈຳໃນຊັ້ນຮຽນຄັ້ງນີ້.

ຄວາມຮັກຂອງພຣະຜູ້ເປັນເຈົ້າຢູ່ກັບພວກເຮົາຕະຫຼອດເວລາ. ພຣະອົງຈະບໍ່ປ່ອຍປະພວກເຮົາໄວ້ຕາມລຳພັງ ແລະ ຊົງໃຫ້ຄຳໝັ້ນສັນຍາວ່າຈະຊົງຊ່ວຍເຫຼືອພວກເຮົາຕະຫຼອດຊີວິດຂອງເຮົາ. ເຖິງວ່າພວກເຮົາບໍ່ຮູ້ວ່າຈະເກີດຫຍັງຂຶ້ນກັບພວກເຮົາຈາກມື້ໜຶ່ງໄປຮອດມື້ຂ້າງໜ້າ, ແຕ່ພວກເຮົາເຊື່ອໝັ້ນໃນພຣະຜູ້ເປັນເຈົ້າ ແລະ ຈົດຈຳວ່າຂອງຂວັນ ແລະ ພຣະກະລຸນາຈາກພຣະອົງແມ່ນຢູ່ອ້ອມຮອບຕົວພວກເຮົາ. ດັ່ງນັ້ນເມື່ອພວກເຮົາເບິ່ງໄປຍັງອະນາຄົດ ເຮົາຈຶ່ງມີຄວາມຫວັງ, ມີຄວາມໝັ້ນໃຈວ່າຈະໄດ້ຮັບສ່ວນແບ່ງ ຈາກພຣະພອນອັນບໍ່ຮູ້ສິ້ນຂອງພຣະອົງ.

ດ້ວຍຫົວໃຈທີ່ເຕັມປ່ຽມໄປດ້ວຍຄວາມຫວັງ, ພວກເຮົາຄາດຫວັງການຫຼັ່ງໄຫຼພຣະກະລຸນາຂອງພຣະອົງມາສູ່ເຮົາຕະຫຼອດເວລາ. ເພື່ອຊ່ວຍໃຫ້ພວກເຮົາຈົດຈຳຄວາມສຳຄັນຂອງຄວາມຫວັງ, ຂໍໃຫ້ພວກເຮົາທ່ອງຈຳຖ້ອຍຄຳຂອງ ພຣະອັບດຸລບາຮາ ຕໍ່ໄປນີ້:

**"ຢ່າສູນເສຍຄວາມໄວ້ວາງໃຈໃນພຣະຜູ້ເປັນເຈົ້າ. ຈົ່ງມີຄວາມຫວັງຢູ່ສະເໝີ, ເພາະພຣະກະລຸນາຂອງພຣະຜູ້ເປັນເຈົ້າ ບໍ່ເຄີຍຢຸດຫຼັ່ງໄຫຼມາສູ່ມະນຸດ."**[120]

*ໄວ້ວາງໃຈ*

1. ເອັດເວີດ ມີບັນຫາແລະໄປຫາທຸຍເວີຍ ເພື່ອຂໍຄວາມຊ່ວຍເຫຼືອ. ເອັດເວີດ ຮູ້ວ່າທຸຍເວີຍຈະເຮັດທຸກຢ່າງເພື່ອຊ່ວຍເຫຼືອລາວ. ເອັດເວີດໄວ້ວາງໃຈທຸຍເວີຍ.
2. ນາງ ນິມາລາ ຕ້ອງການແປງຫຼັງຄາບ້ານຂອງລາວ ແຕ່ລາວບໍ່ສາມາດແປງຄົນດຽວໄດ້. ໝູ່ເພື່ອນຂອງນິມາລາຈະມາຊ່ວຍລາວໃນມື້ອື່ນ. ລາວໄວ້ວາງໃຈວ່າໝູ່ເພື່ອນຈະມາຕາມທີ່ສັນຍາໄວ້ ແລະກະກຽມທຸກຢ່າງໃຫ້ພ້ອມ.

*ຄວາມຫວັງ*

1. ນາງ ໂລຊີຟີນາ ປູກເມັດພືດໃນບ່ອນທີ່ມີແສງແດດ ແລະ ຫົດນ້ຳທຸກມື້. ລາວລໍຖ້າເບິ່ງເມັດພືດຈະເລີນເຕີບໂຕ. ໂລຊີຟີນາ ມີຄວາມຫວັງວ່າໃນມື້ໜຶ່ງເມັດພືດຈະເປັນພືດທີ່ແຂງແຮງ.
2. ແມັດເທຍໝູ່ທີ່ດີຂອງແອນໂຕນີໂອ ໄດ້ຍ້າຍໄປຢູ່ເມືອງອື່ນ. ແອນໂຕນີໂອຄິດຮອດໝູ່ຂອງລາວ, ແຕ່ກໍຫວັງວ່າພວກເຂົາຈະໄດ້ພົບກັນອີກໃນບໍ່ຊ້າ.

*ພຣະກະລຸນາ*

1. ທຸກຄືນເວລາທີ່ນາງລີລຽນສວດບົດອະທິຖານ, ລາວຈະຄິດເຖິງຫຼາຍສິ່ງຫຼາຍຢ່າງ ທີ່ລາວໂຊກດີຫຼາຍໃນຊີວິດຂອງລາວ. ລາວຄິດເຖິງພໍ່ແມ່ຂອງລາວ, ໝູ່ເພື່ອນ, ຄູ, ແລະແມ່ນແຕ່ຕຽງທີ່ລາວໃຊ້ນອນ. ລີລຽນມີຄວາມຮູ້ສຶກຂອບໃຈສະເໝີ ສຳລັບພຣະກະລຸນາຕ່າງໆທີ່ລາວໄດ້ຮັບ.
2. ທ້າວຣີຊາ ມີໝູ່ເພື່ອນແລະຍາດພີ່ນ້ອງຫຼາຍຄົນທີ່ຮັກເຂົາ ແລະຊ່ວຍໃຫ້ເຂົາກ້າວໜ້າ. ຣີຊາຮູ້ສຶກຂອບໃຈສຳລັບພຣະກະລຸນາໃນຄວາມຮັກ ແລະ ການສະໜັບສະໜູນຂອງພວກເຂົາ.

*ຢຸດ*

1. ເມື່ອຕາເຮໝຸນປິດກັອກນ້ຳ, ນ້ຳກໍຈະບໍ່ໄຫຼອອກມາ; ນ້ຳຈະຢຸດໄຫຼ.

2. ແມ່ນວ່າໃນວັນທີ່ມີເມກໜາ, ລັດສະໝີຂອງດວງຕາເວັນກໍຍັງຄົງໃຫ້ຄວາມອົບອຸ່ນແກ່ໂລກ. ລັດສະໝີຂອງດວງຕາເວັນບໍ່ເຄີຍຢຸດສ່ອງແສງມາຍັງໂລກ.

## D. ເລື່ອງລາວ

*ມີຊາຍຄົນໜຶ່ງທີ່ຂາດທີ່ຢູ່ອາໃສ, ຜູ້ທີ່ອາໃສຢູ່ຕາມລຳພັງຢູ່ແຄມຝັ່ງແມ່ນ້ຳເທມສ໌ໃນເມືອງລອນດອນ. ເຂົາເສົ້າເສຍໃຈຫຼາຍແລະໄດ້ສູນເສຍຄວາມຫວັງທັງໝົດທີ່ຈະພົບຄວາມສຸກໃນຊີວິດ. ມື້ໜຶ່ງເຂົາໄດ້ຍ່າງຜ່ານຮ້ານຄ້າແຫ່ງໜຶ່ງ ແລະ ຮູບພາບໜຶ່ງໃນໜ້າໜັງສືພິມສະບັບໜຶ່ງສະດຸດຕາເຂົາຫຼາຍ. ພາບນັ້ນເປັນພາບພຣະພັກຂອງພຣະອັບດຸລບາຮາ. ເຂົາຢຸດສະງັກ, ແລ້ວຈ້ອງເບິ່ງພຣະພັກຂອງພຣະອົງໃນພາບ. ເຂົາບໍ່ເຄີຍເຫັນພຣະອັບດຸລບາຮາມາກ່ອນ ແລະ ບໍ່ຮູ້ເລີຍວ່າພຣະອົງແມ່ນໃຜ, ແຕ່ເຂົາໝັ້ນໃຈວ່າຈະຕ້ອງໄປພົບພຣະອົງໃຫ້ໄດ້. ໃນຫນັງສືພິມສະບັບນັ້ນໄດ້ຂຽນທີ່ຢູ່ຕິດຕໍ່ໄວ້, ສະນັ້ນເຂົາຈຶ່ງເລີ່ມຍ່າງອອກເດີນທາງ, ໂດຍຫວັງວ່າຈະພົບພຣະອົງຢູ່ທີ່ນັ້ນ. ເປັນການເດີນທາງໄລຍະໄກຫຼາຍ - ເກືອບຫ້າສິບກິໂລ - ແຕ່ເຂົາກໍຍັງຄົງຍ່າງຕໍ່ໄປຈົນເຂົາໄປຮອດເຮືອນຫຼັງນັ້ນ.*

*ໃນທີ່ສຸດເມື່ອຊາຍຜູ້ນັ້ນໄປເຖິງເຮືອນຫຼັງນັ້ນ ເຂົາຮູ້ສຶກອິດເມື່ອຍແລະຫິວໂຫຍ, ແລະຜູ້ຍິງທີ່ຢູ່ໃນເຮືອນຫຼັງນັ້ນໄດ້ເຊີນເຂົາເຂົ້າເຮືອນຢ່າງເມດຕາ, ນາງໄດ້ນຳອາຫານມາໃຫ້ເຂົາ, ແລະໄດ້ໃຫ້ເຂົາພັກຜ່ອນໄລຍະໜຶ່ງ. ໃນຂະນະທີ່ເຂົາພັກຜ່ອນ, ເຂົາໄດ້ເລົ່າເລື່ອງລາວຂອງເຂົາໃຫ້ກັບຜູ້ຍິງຄົນນັ້ນຟັງ ແລະ ຈາກນັ້ນໄດ້ຖາມນາງວ່າ ພຣະອັບດຸລບາຮາຊົງຢູ່ບ່ອນນັ້ນຫຼືບໍ່. ຜູ້ຍິງຄົນນັ້ນໄດ້ຢືນຢັນກັບເຂົາວ່າ.*

*"ພຣະອົງຈະຊົງພົບຂ້ອຍບໍ?" ເຂົາຖາມ. "ເຖິງແມ່ນຂ້ອຍກໍພົບບໍ?"*

*ໃນຄະນະທີ່ຜູ້ຍິງຄົນນັ້ນຕອບວ່ານາງໝັ້ນໃຈວ່າ ພຣະອັບດຸລບາຮາຈະຊົງພົບເຂົາ, ທ່ານນາຍໄດ້ຊົງປາກົດຕົວຂຶ້ນທີ່ປະຕູ. ຊາຍຜູ້ນັ້ນລຸກຂຶ້ນຢືນ, ແລະ ພຣະອັບດຸລບາຮາຊົງຍື່ນມືອອກໄປເພື່ອຈັບມືທັກທາຍກັບເຂົາ. ຄືກັບວ່າຊາຍຜູ້ນັ້ນເປັນສະຫາຍຄົນສະນິດ ທີ່ພຣະອົງຊົງລໍຄອຍການກັບມາຂອງເຂົາ. ພຣະອົງຊົງຍິນດີຕ້ອນຮັບເຂົາດ້ວຍຄວາມຮັກ ແລະ ຄວາມເຫັນໃຈອົກເປັນໃຈ ແລ້ວໄດ້ເຊີນໃຫ້ເຂົານັ່ງຂ້າງໆພຣະອົງ.*

*ຈາກນັ້ນ ພຣະອັບດຸລບາຮາ, ຜູ້ຊົງຮູ້ສະເໝີວ່າຈະຊົງນຳຄວາມສຸກທັນສາກັບຄືນສູ່ຫົວໃຈຂອງປະຊາຊົນໄດ້ຢ່າງໃດ, ພຣະອົງຊົງເລີ່ມໂອ້ລົມກັບຊາຍຜູ້ນັ້ນ. ພຣະອົງຊົງຊັກຊວນໃຫ້ເຂົາລະຖິ້ມຄວາມເສົ້າເສຍໃຈ, ຊົງເຕືອນເຂົາວ່າໃນອານາຈັກຂອງພຣະຜູ້ເປັນເຈົ້ານັ້ນ ເຂົາຮັ່ງມີລົ້ນລວຍ! ຂະນະທີ່ພຣະອັບດຸລບາຮາຊຳລະຊາຍຜູ້ນັ້ນດ້ວຍຄວາມເຫັນອົກເຫັນໃຈ, ຖ້ອຍຄຳຂອງ*

*ພຣະອົງກໍ່ເລີ່ມຮັກສາຫົວໃຈຂອງຊາຍຜູ້ນັ້ນ ແລະ ເຮັດໃຫ້ເຂົາກັບມີພະກຳລັງຂຶ້ນມາ. ຄວາມໂສກເສົ້າຂອງເຂົາໄດ້ມະລາຍຫາຍໄປເທື່ອລະເລັກເທື່ອລະນ້ອຍ. ກ່ອນທີ່ຊາຍຜູ້ນັ້ນຈະຈາກໄປ, ເຂົາໄດ້ບອກກັບພຣະອັບດຸລບາຮາວ່າ ເຂົາຈະບໍ່ຍອມໃຫ້ຄວາມຍາກຈົນຂອງເຂົາເຮັດໃຫ້ເຂົາເສົ້າໂສກເສຍໃຈອີກຕໍ່ໄປ; ແທນທີ່ຈະເປັນເຊັ່ນນັ້ນ ເຂົາຈະຫາວຽກເຮັດໃນທົ່ງນາ ແລະ ຈະເກັບເງິນເພື່ອຊື້ທີ່ດິນນ້ອຍໆໄວ້ຈັກຕອນໜຶ່ງ, ທີ່ເຂົາວາງຈະປູກດອກໄວໂອເລັດເພື່ອນຳໄປຂາຍໃນຕະຫຼາດ. ຊາຍຄົນນັ້ນຮຽນຮູ້ຈາກພຣະອັບດຸລບາຮາວ່າ ໃຫ້ມອງຄວາມໄວ້ວາງໃຈຂອງເຂົາໃນພຣະຜູ້ເປັນເຈົ້າ ແລະ ມີຄວາມໝັ້ນໃຈວ່າພຣະຜູ້ເປັນເຈົ້າຈະໃຫ້ຮັບຮອງ ແລະ ພຣະພອນແກ່ຄວາມພະຍາຍາມຂອງເຂົາ. ຄວາມສິ້ນຫວັງຂອງເຂົາໄດ້ກາຍເປັນຄວາມຫວັງຂຶ້ນມາໃໝ່.*

E. ເກມ: **"ຄົນສ້າງຝົນ"**

ທຳອິດໃຫ້ເດັກໆຢືນເປັນວົງມົນອ້ອມຮອບຕົວເຈົ້າ, ແລະ ຈາກນັ້ນແນະນຳເກມດ້ວຍການຂໍໃຫ້ເດັກໆຈິນຕະນາການວ່າ ພວກເຂົາຢູ່ໃນທະເລຊາຍ ເຝົ້າລໍຄອຍຖ້າໃຫ້ເກີດພາຍຸຝົນ. ຈາກນັ້ນໃຫ້ເຈົ້າຖູມືທັງສອງຂ້າງໄປມາ ແລະ ບອກໃຫ້ເດັກໆວ່າ, ເມື່ອເຈົ້າແນມເບິ່ງແຕ່ລະຄົນ ແລ້ວໃຫ້ພວກເຂົາເລີ້ມເຮັດຕາມເຈົ້າ. ທັນທີທີ່ເຈົ້າຍ່າງອ້ອມຮອບວົງມົນຈົນຄົບທຸກຄົນແລ້ວ ແລ້ວເດັກທຸກຄົນກໍ່ເລີ່ມຖູມືໄປມາ, ບອກເດັກໆໃຫ້ຖູມືໄປມາຕໍ່ໄປ ຈົນກວ່າເຈົ້າຈະແນມເບິ່ງແຕ່ລະຄົນດ້ວຍທ່າທາງໃໝ່, ເຊິ່ງເດັກແຕ່ລະຄົນທີ່ເຈົ້າແນມກໍຈະປ່ຽນຕາມຄູ. ຈາກນັ້ນຄູສາມາດປ່ຽນເປັນການດີດນິ້ວເປັນທ່າທາງຕໍ່ໄປ ແລະ ຈາກນັ້ນກໍຕົບມືຕໍ່ໄປ, ຕໍ່ດ້ວຍຕົບຂາ ແລະທືບຕີນ. ສຽງທີ່ເກີດຂຶ້ນຈາກທ່າທາງຕ່າງໆຂອງເດັກໆ ຄວນຈະອອກມາຄ້າຍຄືກັບຊ່ວງເລີ້ມຝົນຕົກ ແລະ ຄ້າຍຄືກັບພາຍຸມໍລະສຸມໃຫຍ່ໃນຕອນທ້າຍ.

F. **ການທາສີ: ຮູບທີ 18**

G. **ການສວດອະທິຖານປິດ**

## ບົດທີ 19

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ດັ່ງເຊັ່ນເຄີຍ, ໃຫ້ເລີ້ມຊັ້ນຮຽນດ້ວຍການສວດອະທິຖານ. ຈາກນັ້ນເຈົ້າສາມາດຊ່ວຍເດັກນ້ອຍສືບຕໍ່ທ່ອງຈຳບົດສວດອະທິຖານທີ່ໄດ້ແນະນຳໃນບົດທີ 17.

B. **ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)**

## ມືທີ່ດຸໝັ່ນ

<u>ຮ້ອງປະສານສຽງ</u>

C F

ມືທີ່ດຸໝັ່ນເຮັດໃຫ້ເດັກມີຄວາມສຸກ

C G

ເດັກທີ່ມີຄວາມສຸກສາມາດ

C F

ເຮັດໃຫ້ຄົນອື່ນມີຄວາມສຸກ

C F G C

ແຜ່ກະຈາຍຄວາມສະຫງົບສຸກແລະຄວາມຮັກ

C F

ມືທີ່ເຮັດວຽກເພື່ອສ້າງໂລກໃໝ່

C G

ທຸກຄົນມີບົດບາດ

C F

ເຮົາທຸກຄົນສາມາດຍິນດີ

C F G C

ເພາະໄວໆນີ້ຈະໄປເຖິງເປົ້າໝາຍ

<u>ຮ້ອງປະສານສຽງ</u>

ພຣະຜູ້ເປັນເຈົ້າຈະຊ່ວຍເຮົາສ້າງໂລກໃໝ່

ທີ່ໆເຮົາຊ່ວຍເຫຼືອຄົນອື່ນທຸກໆຄົນ

ເຮົາທຸກຄົນຈະຮັກເພື່ອນບ້ານຂອງຕົນ

ຫຼາຍກວ່າເຮົາຮັກຕົນເອງ

<u>ຮ້ອງປະສານສຽງ</u> (ຮ້ອງຊ້ຳແຖວສຸດທ້າຍ)

## C. ການທ່ອງຈຳພຣະວັດຈະນະ

ໃນບົດຮຽນນີ້, ເດັກນ້ອຍຈະທ່ອງຈຳພຣະວັດຈະນະໜຶ່ງ ກ່ຽວກັບຄວາມໄວ້ວາງໃຈໄດ້, ແລະ ເຈົ້າສາມາດແນະນຳຫົວຂໍ້ນີ້ໄດ້ດ້ວຍວິທີດັ່ງຕໍ່ໄປນີ້:

ໜຶ່ງໃນຄຸນລັກສະນະທີ່ຍິ່ງໃຫຍ່ທີ່ສຸດໃນສາຍພະເນດຂອງພຣະຜູ້ເປັນເຈົ້າຄື ຄວາມໄວ້ວາງໃຈໄດ້. ຜູ້ທີ່ໄວ້ວາງໃຈໄດ້ນັ້ນຈະເວົ້າຄວາມຈິງ ແລະ ມີຄວາມຊື່ສັດສຸດຈະລິດ ແລະ ສາມາດເຊື່ອຖືໄດ້ວ່າເຂົາຈະຮັກສາຄຳໝັ້ນສັນຍາ. ພວກເຮົາບໍ່ຄວນເວົ້າຢ່າງໜຶ່ງແຕ່ເຮັດອີກຢ່າງໜຶ່ງ. ການກະທຳຂອງເຮົາຕ້ອງສະທ້ອນຄຳເວົ້າຂອງເຮົາຢູ່ສະເໝີ. ເມື່ອເຮົາເປັນຜູ້ທີ່ໄວ້ວາງໃຈໄດ້ແລ້ວ, ຜູ້ອື່ນກໍໝັ້ນໃຈໄດ້ວ່າເຮົາຈະພະຍາຍາມສຸດຄວາມສາມາດ ທີ່ຈະເຮັດໃນສິ່ງທີ່ເຮົາຮັບຜິດຊອບຢູ່ ແລະ ຈະພະຍາຍາມເຮັດທຸກຢ່າງທີ່ເປັນໜ້າທີ່ຂອງເຮົາ. ດ້ວຍວິທີນີ້, ຜູ້ຄົນສາມາດເຮັດວຽກຮ່ວມກັນດ້ວຍຄວາມປອງດອງ, ຂະນະທີ່ແຕ່ລະຄົນສຳນຶກວ່າທຸກຄົນຈະເຮັດໃນສ່ວນຂອງຕົນ. ເພື່ອຊ່ວຍໃຫ້ເຮົາຈົດຈຳໃນຄວາມສຳຄັນຂອງຄວາມໄວ້ວາງໃຈໄດ້ນັ້ນ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"ຄວາມໄວ້ວາງໃຈໄດ້ເປັນປະຕູທີ່ຍິ່ງໃຫຍ່ທີ່ສຸດ ທີ່ຈະນຳພາໄປສູ່ຄວາມງຽບສະຫງົບ ແລະ ຄວາມປອດໄພຂອງປະຊາຊົນ."**[121]

*ຄວາມໄວ້ວາງໃຈໄດ້*

1. ທ້າວ ອາໂຕສ ສັນຍາກັບແມ່ຂອງເຂົາໄວ້ວ່າ ລາວຈະຊ່ວຍນາງຕຽມອາຫານຄໍ່າ. ເມື່ອເພື່ອນໆຂອງລາວມາເຮືອນຂອງລາວ ແລະ ຊວນລາວອອກໄປຫຼິ້ນທາງນອກ, ອາໂຕສ ນຶກເຖິງສັນຍາທີ່ໃຫ້ໄວ້ກັບແມ່ ແລະ ໄດ້ບອກເພື່ອນໆວ່າລາວຈະອອກໄປຫຼິ້ນກັບເພື່ອນໆໃໝ່ໃນຊ່ວງເວລາອື່ນ. ອາໂຕສ ສະແດງຄຸນລັກສະນະຂອງຄວາມໄວ້ວາງໃຈໄດ້.
2. ນາງ ສຸນິຕາ ໄປຮ້ານຄ້າເພື່ອໄປເອົາເຄື່ອງໃຫ້ຄອບຄົວຂອງນາງ, ແຕ່ນາງພົບວ່ານາງຖືເງິນມາບໍ່ພໍທີ່ຈະຈ່າຍເຄື່ອງທຸກຢ່າງທີ່ຕ້ອງການ. ນາງໄດ້ຖາມເຈົ້າຂອງຮ້ານວ່າສາມາດເອົາເງິນທີ່ເຫຼືອມາໃຫ້ໃນມື້ຕໍ່ໄປໄດ້ບໍ່. ເຈົ້າຂອງຮ້ານບອກວ່າໄດ້ ຍ້ອນເຈົ້າຂອງຮ້ານຮູ້ດີວ່າ ສຸນິຕາ ເປັນຄົນໄວ້ວາງໃຈໄດ້ ແລະ ຈະຈ່າຍຄ່າເຄື່ອງຕາມທີ່ໄດ້ສັນຍາ.

*ຄວາມງຽບສະຫງົບ*

1. ເມື່ອໃດກໍຕາມທີ່ ທ້າວ ເອມີລີໂອ ຕ້ອງຕັດສິນໃຈຢ່າງໃດຢ່າງໜຶ່ງທີ່ມີຄວາມສຳຄັນ, ເຂົາຈະພະຍາຍາມຫາສະຖານທີ່ທີ່ງຽບໆເພື່ອຄິດ ແລະ ທຳສະມາທິ. ເຂົາຈະໄປທີ່ສວນແຫ່ງໜຶ່ງທີ່ຢູ່ໃກ້. ໃນຄວາມງຽບສະຫງົບຂອງສວນແຫ່ງນັ້ນ, ເຂົາສາມາດເຮັດໃຫ້ຄວາມຄິດ ແລະ ຈິດໃຈຂອງເຂົາກະປອດໂປ່ງ.

2. ເມື່ອພາຍຸສະຫງົບລົງ, ທຸກຢ່າງກໍກັບມາມິດງຽບ ແລະ ຢຸດນິ່ງຢ່າງຜິດປົກກະຕິ. ສິ່ງທີ່ຕາມພາຍຸມາກໍຄື ສັນຕິສຸກ ແລະ ຄວາມງຽບສະຫງົບ.

*ຄວາມປອດໄພ*

1. ເມື່ອລູກສັດກໍາລັງຕື່ນຕະໜົກ, ມັນຈະແລ່ນກັບໄປຫາແມ່ຂອງມັນຢູ່ສະເໝີ ເຊິ່ງເປັນບ່ອນພັກພິງທີ່ປອດໄພ. ແມ່ສັດມອບຄວາມປອດໄພໃຫ້ກັບລູກໆ.
2. ນັກປີນເຂົາອອກນອກເສັ້ນທາງ ແລະ ຫຼົງທາງໃນປ່າ. ເມື່ອລາວບໍ່ກັບຄືນມາ, ຜູ້ນໍາທາງຈາກໝູ່ບ້ານໄດ້ອອກໄປຊອກຫາລາວ. ນັກປີນເຂົາຮູ້ສຶກໄດ້ເຖິງຄວາມປອດໄພເມື່ອພວກເຂົາມາພົບລາວ, ເພາະຮູ້ວ່າພວກເຂົາຈະນໍາລາວກັບໄປຍັງທີ່ປອດໄພ.

## D. ເລື່ອງລາວ

*ຫຼາຍປີກ່ອນ, ໃນຍຸກທໍາອິດຂອງຄວາມສັດທາ, ມີຜູ້ຄົນພຽງເລັກນ້ອຍທີ່ເປັນຄົນບາຮາຍ, ກະຈັດກະຈາຍໃນຫຼາຍປະເທດ. ພວກເຂົາໄດ້ປະເຊີນກັບຄວາມທ້າທາຍຫຼາຍຢ່າງ ແລະ ໄດ້ຂຽນຫາ ພຣະອັບດຸລບາຮາໃນດິນແດນສັກສິດຢູ່ເລື້ອຍໆກ່ຽວກັບຂ່າວ ແລະ ຄໍາຖາມ. ຈົດໝາຍຂອງພວກເຂົາໄດ້ເດີນທາງໄກຫຼາຍກວ່າຈະໄປເຖິງພຣະອົງ, ແລະ ພຣະອົງກໍໄດ້ຕອບແຕ່ລະຄົນດ້ວຍຄວາມຮັກທີ່ຍິ່ງໃຫຍ່ ແລະ ດ້ວຍຄວາມຫ່ວງໃຍ. ຖ້ອຍຄໍາທີ່ໃຫ້ກໍາລັງໃຈຂອງພຣະອົງເຮັດໃຫ້ພວກເຂົາເຂັ້ມແຂງ ແລະ ໃຫ້ກໍາລັງໃຈແກ່ພວກເຂົາ. ດັ່ງນັ້ນ ຈຶ່ງຈໍາເປັນຢ່າງຍິ່ງທີ່ລໍາທານແຫ່ງການສືບທະນານີ້ຈະບໍ່ຖືກລົບກວນ.*

*ປັດຈຸບັນນີ້, ມີຜູ້ອາໃສຢູ່ໃນເຂດໜຶ່ງ ຕອນນັ້ນແມ່ນຊາວບາຮາຍຄົນໜຶ່ງທີ່ມີຊື່ວ່າ ທ້າວ ມູຣາມັດ ທາຄີ. ລາວໄດ້ເດີນທາງມາຈາກເປີເຊຍຫຼາຍປີກ່ອນຕັ້ງແຕ່ລາວຍັງໜຸ່ມ ແລະ ໄດ້ສ້າງຕັ້ງທຸລະກິດນ້ອຍໆ. ລາວຄ່ອຍໆກາຍເປັນທີ່ຮູ້ຈັກຂອງຄວາມເຊື່ອຖືທີ່ບໍ່ປ່ຽນແປງຂອງລາວ. ລາວມີຄວາມເຊື່ອຖືຫຼາຍ ຈົນຈົດໝາຍທຸກສະບັບເຖິງພຣະອັບດຸລບາຮາໃນດິນແດນສັກສິດ ແລະທຸກການຕອບກັບຂອງພຣະອົງທີ່ໄດ້ສົ່ງໄປຕ່າງປະເທດນັ້ນ ຖືກສົ່ງຜ່ານບ້ານຂອງ ມູຣາມັດທາຄີ. ທຸກຄົນຮັບຮູ້ວ່າລາວເຊື່ອຖືໄດ້ ໃຫ້ໝັ້ນໃຈໄດ້ວ່າຈົດໝາຍແຕ່ລະອັນນັ້ນຖືກສົ່ງໄປຢ່າງທັນທີ ແລະ ປອດໄພ.*

*ແຕ່ຫຼັງຈາກນັ້ນ, ສັດຕູຂອງຄວາມສັດທາກໍໄດ້ລຸກຂຶ້ນຕໍ່ຕ້ານ ພຣະອັບດຸລບາຮາ. ພວກເຂົາອິດສາຄວາມຮັກ ແລະ ຄວາມນັບຖືທີ່ຜູ້ຄົນມອບໃຫ້ກັບພຣະອົງ. ພວກເຂົາຫວັງວ່າພວກເຂົາຈະສາມາດນໍາການເນລະເທດ, ຫຼື ໜັກກວ່ານັ້ນ, ການປະຫານຊີວິດພຣະອົງໄດ້. ມີຜູ້ສອດແນມຢູ່ອ້ອມບ້ານຂອງພຣະອົງ, ແລະ ພຣະອົງຖືກເຝົ້າເບິ່ງຢູ່ຕະຫຼອດເວລາ. ສັດຕູຂອງພຣະ*

*ອົງຈະຍິນດີພຽງໃດ ຫາກພວກເຂົາສາມາດຢຸດການຕິດຕໍ່ສື່ສານ ແລະ ທຳລາຍຄວາມເຊື່ອມໂຍງລະຫວ່າງພຣະອັບດຸລບາຮາ ແລະ ຊາວບາຮາຍທີ່ອຸທິດຕົນໃຫ້ພຣະອົງທີ່ຢູ່ປະເທດອື່ນໆ; ຈະຍິນດີອີກຫຼາຍຊ່ຳໃດ ຖ້າພວກເຂົາສາມາດລັກເອົາເອກະສານບາງຢ່າງທີ່ອາດຈະເຮັດໃຫ້ເຈົ້າໜ້າທີ່ເຂົ້າໃຈຜິດໄດ້!*

*ຢ່າງໃດກໍຕາມ ພຣະອັບດຸລບາຮາບໍ່ໄດ້ຂັດຂວາງ. ມັກຈະພົບເຫັນພຣະອົງໄດ້ໃນຕອນກາງຄືນ, ທີ່ກຳລັງຂຽນດ້ວຍແສງຈາກຕະກຽງຂອງພຣະອົງ; ເພາະພຣະອົງກຳລັງກວດໃຫ້ໝັ້ນໃຈໃນຄວາມປອດໄພຂອງການຮັບ ແລະ ການສົ່ງຈົດໝາຍ. ເຈົ້າຄິດວ່າພຣະອົງໄດ້ເຮັດແນວໃດ?*

*ເຈົ້າຮູ້ບໍ່ວ່າ, ພຣະອັບດຸລບາຮາຮູ້ວ່າສັດຕູຂອງພຣະອົງໄດ້ຕະໜັກເຖິງຄວາມສຳຄັນຂອງວຽກທີ່ມູຮາມັດ ທາຄີ ກຳລັງເຮັດຢູ່. ບໍ່ຕ້ອງສົງໃສເລີຍວ່າພວກເຂົາຈະພະຍາຍາມສະກັດກັ້ນຈົດໝາຍທີ່ສົ່ງຜ່ານລາວ. ສະນັ້ນ ພຣະອັບດຸລບາຮາເລີຍສົ່ງ ມູຮາມັດ ທາຄີ ໄປສະຖານທີ່ໃກ້ໆໃນປະເທດເພື່ອນບ້ານ, ບ່ອນທີ່ລາວພົ້ນຈາກຄວາມອັນຕະລາຍ. ສ່ວນຜູ້ອື່ນໆ, ຜູ້ທີ່ສັດຕູຂອງພຣະອົງບໍ່ໄດ້ສົງໃສກໍດຳເນີນການນຳຈົດໝາຍເຂົ້າ-ອອກຈາກດິນແດນສັກສິດໄປໃຫ້ ມູຮາມັດ ທາຄີ. ແລະ ຈາກຈຸດທີ່ປອດໄພ, ມູຮາມັດ ທາຄີ ກໍສືບຕໍ່ດຳເນີນການຮັບ ແລະ ສົ່ງຈົດໝາຍຢ່າງຈົງຮັກພັກດີ, ຄວາມໄວ້ວາງໃຈຂອງພຣະອັບດຸລບາຮາທີ່ມີຕໍ່ລາວບໍ່ເຄີຍເຊື່ອມຄາຍ. ດັ່ງນັ້ນ, ໃນຊ່ວງເວລາທີ່ຍາກລຳບາກທີ່ສຸດ, ການຕິດຕໍ່ສື່ສານກັບດິນແດນສັກສິດກໍບໍ່ເຄີຍຕັດຂາດຫາຍໄປ ແລະ ການນຳທາງຍັງຄົງສົ່ງໄປເຖິງເພື່ອນໆໃນສະຖານທີ່ທີ່ຮ່າງໄກທີ່ສຸດ.*

## E. ເກມ: “ຜູ້ນຳທາງ”

ແບ່ງນັກຮຽນຂອງເຈົ້າເປັນຄູ່ໆ ແລະ ຂໍໃຫ້ພວກເຂົາຈັບມືກັນກັບຄູ່ຂອງຕົນ. ໃຫ້ມີຄົນໜຶ່ງໃນແຕ່ລະຄູ່ປິດຕາ ແລະ ໃຫ້ເດັກອີກໜຶ່ງຄົນເປັນຜູ້ນຳທາງພາເຂົາຍ່າງໄປ, ຕ້ອງໃຫ້ແນ່ໃຈວ່າຈະບໍ່ໃຫ້ເຂົາຍ່າງສະດຸດລົ້ມລະຫວ່າງທາງ. ເພື່ອເພີ່ມຄວາມທ້າທາຍ, ເດັກທີ່ຖືກປິດຕາສາມາດຖືກນຳທາງໄປຜ່ານສິ່ງກີດຂວາງຕ່າງໆເຊັ່ນ ລຳຕົ້ນໄມ້, ຫລຸມ, ກ້ອນຫີນ, ແລະ ຢາງລົດ. ເມື່ອສ້າງສາຍໃຍແຫ່ງຄວາມໄວ້ວາງໃຈລະຫວ່າງຄູ່ຕ່າງໆແລ້ວ ໃຫ້ເດັກທີ່ຖືກປິດຕາສາມາດຖືກນຳທາງໂດຍການບອກດ້ວຍວາຈາພຽງຢ່າງດຽວ. ໃນກໍລະນີນີ້, ຜູ້ນຳທາງຄວນຍ່າງຕາມຫຼັງໃກ້ໆເພື່ອຈັບເອົາເດັກທີ່ຖືກປິດຕາບໍ່ໃຫ້ສະດຸດລົ້ມ.

ອີກວິທີໜຶ່ງເພື່ອຫຼິ້ນເກມຂ້າງເທິງ, ເດັກໆທຸກຄົນຖືກປິດຕາ ແລ້ວໃຫ້ເດັກໆຍືນລຽງກັນເປັນແຖວໜຶ່ງແບບຂະບວນລົດໄຟ, ແລ້ວນຳທາງໂດຍເຈົ້າຫຼືເດັກຄົນໃດຄົນໜຶ່ງໃນຈຳນວນນັກຮຽນ.

## F. ການທາສີ: ຮູບທີ 19

G. ການສວດອະທິຖານປິດ

## ບົດທີ 20

A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ຫຼັງຈາກທີ່ເຈົ້າ ແລະ ນັກຮຽນສອງສາມຄົນໄດ້ສວດອະທິຖານເປີດຊັ້ນຮຽນແລ້ວ, ໃຫ້ທວນຄືນບົດສວດອະທິຖານທີ່ພວກເຂົາໄດ້ຮຽນມາແລ້ວໃນສາມບົດຮຽນຜ່ານມາ.

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

### ຈຸດໄຟແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ

D
ໃນຫົວໃຈຂອງຂ້ອຍ
A
ມັນມີແປວໄຟ
G
ມີພຣະຜູ້ເປັນເຈົ້າຢູ່ໃນ
D
ແປວໄຟພິເສດ
A
ນີ້ແມ່ນໄຟ
G
ໄຟຄວາມຮັກ
D
ຂອງພຣະອົງ

<u>ຮ້ອງປະສານສຽງ</u>

D A

ຂ້ອຍຈະສວດອະທິຖານ

ຂ້ອຍຈະສວດອະທິຖານ *(ສຽງກ້ອງ echo voice)*

G

ເຖິງພຣະຜູ້ເປັນເຈົ້າ

A D A

ຈຸດໄຟໃນໃຈຂອງຂ້ອຍ

ຈຸດໄຟໃນໃຈຂອງຂ້ອຍ *(ສຽງກ້ອງ echo voice)*

G

ແປວໄຟນັ້ນ

A D A

ໄຟຄວາມຮັກຂອງພຣະອົງ

G

ແລະຂ້ອຍຈະພະຍາຍາມ

A D

ໃຫ້ແສງໄຟນັ້ນສ່ອງແສງແກ່ທຸກຫົວໃຈ

ແຕ່ລະວັນ
ຂ້ອຍຈະຫຼໍ່ລ້ຽງແປວໄຟນີ້
ຂະນະທີ່ຂ້ອຍສວດອະທິຖານ
ແລະກະທຳດີຕໍ່ຜູ້ອື່ນ
ແປວໄຟນີ້ຈະເຕີບໂຕ
ຂະນະທີ່ຂ້ອຍສວດອະທິຖານ
ແລະຮັບໃຊ້ມະນຸດຊາດ

ແລະແປວໄຟນີ້ເຜົາໄໝ້
ຂະນະທີ່ມັນເຕີບໂຕ
ຈະຮູ້ສຶກໄດ້
ໂດຍທຸກຄົນທີ່ມາ
ຕາມທາງຂອງແປວໄຟ
ຈະນຳຄວາມອົບອຸ່ນມາສູ່ທຸກຄົນ
ຜູ້ທີ່ມາຕາມທາງຂອງແປວໄຟ

<u>ຮ້ອງປະສານສຽງ</u>

## C. ການທ່ອງຈຳພຣະວັດຈະນະ

ຫົວຂໍ້ຂອງບົດຮຽນນີ້ແມ່ນການເຜົາໄໝ້, ແລະ ຂໍ້ຄວາມຂ້າງລຸ່ມຈະຊ່ວຍເຈົ້າແນະນຳຫົວຂໍ້ນີ້ ແລະ ພຣະວັດຈະນະສຳລັບການທ່ອງຈຳ:

> ມະນຸດທຸກຄົນຖືກສ້າງຂຶ້ນມາເພື່ອໃຫ້ຮູ້ຈັກພຣະຜູ້ເປັນເຈົ້າແລະຮັກພຣະອົງ, ແລະເຮົາທຸກຄົນມີປະກາຍແຫ່ງຄວາມຮັກຂອງພຣະອົງຢູ່ໃນຫົວໃຈຂອງເຮົາ. ເປັນສິ່ງສຳຄັນທີ່ເຮົາຈະເຕີມແປວເພີງແຫ່ງຄວາມຮັກພຣະຜູ້ເປັນເຈົ້າ ດ້ວຍການສວດອະທິຖານເຖິງພຣະອົງເປັນປະຈຳທຸກມື້ ແລະ ດ້ວຍການຮັບໃຊ້ຜູ້ອື່ນ, ໃນຂະນະທີ່ແປວເພີງນີ້ລຸກໄໝ້ດ້ວຍຄວາມຮ້ອນແຮງທີ່ທະວີຂຶ້ນ. ແປວເພີງນີ້ກໍຈະລຸກໄໝ້ສ່ອງສະຫວ່າງກວ່າເກົ່າໃນຫົວໃຈຂອງເຮົາ, ຄວາມອົບອຸ່ນຂອງແປວເພີງຈະເປັນທີ່ຮູ້ສຶກໄດ້ ໂດຍທຸກຄົນທີ່ຜ່ານເຂົ້າມາໃນວິຖີທາງຂອງເຮົາ. ແລະ ແສງຂອງເພີງນີ້ກໍຈະເຮັດໃຫ້ຫົວໃຈຂອງພວກເຂົາ ສະຫວ່າງສະໄຫວຂຶ້ນເຊັ່ນກັນ. ເມື່ອເຮົາຖືກເຜົາໄໝ້, ພວກເຮົາຈະກາຍເປັນດັ່ງທຽນທີ່ຖືກຈຸດຂຶ້ນ ເຊິ່ງບໍ່ມີທາງເລືອກອື່ນໃດນອກຈາກການສ່ອງແສງສະຫວ່າງອ້ອມຮອບຕົວເຮົາ. ຂໍໃຫ້ເຮົາທ່ອງຈຳບົດພຣະວັດຈະນະຕໍ່ໄປນີ້:
>
> **"ໂອ ປະຊາຊົນ, ຂໍຊົງເຮັດໃຫ້ຫົວໃຈຂອງເຂົາຖືກເຜົາໄໝ້, ດ້ວຍເພີງແຫ່ງຄວາມຮັກອັນອົບອຸ່ນຂອງພຣະຜູ້ເປັນເຈົ້າ, ເພື່ອວ່າເຈົ້າຈະເຜົາໄໝ້ຫົວໃຈຂອງຜູ້ອື່ນ."**[122]

*<u>ເຜົາໄໝ້</u>*

1. ເຮືອນຫຼັງນັ້ນໜາວເຢັນ, ສະນັ້ນພໍ່ຂອງອາແວວຈຶ່ງໄດ້ຕັດສິນໃຈເລີ້ມຈຸດໄຟ. ເຂົາໄດ້ນຳທ່ອນໄມ້ຂະໜາດໃຫຍ່ວາງໃນເຕົາໄຟ ແລະ ຈຸດກິ່ງໄມ້ນ້ອຍໆໄວ້ທາງລຸ່ມ. ບໍ່ດົນຫຼັງຈາກນັ້ນທ່ອນໄມ້ກໍເລີ່ມລຸກໄໝ້, ແລະ ໄຟໄດ້ນຳຄວາມອົບອຸ່ນມາສູ່ຫ້ອງນັ້ນ.
2. ນັກວິທະຍາສາດໄດ້ເດີນທາງມາທີ່ໂຮງຮຽນ ແລະ ບັນລະຍາຍໃຫ້ນັກຮຽນຟັງກ່ຽວກັບປາກົດການທີ່ໜ້າສົນໃຈໃນຈັກກະວານ. ນັກຮຽນໄດ້ຖາມຄຳຖາມຫຼາຍຂໍ້ ຫຼັງຈາກເຂົາໄດ້ບັນລະຍາຍແລ້ວ. ເຂົາໄດ້ເຜົາໄໝ້ຄວາມຢາກຮູ້ຢາກເຫັນໃນຕົວນັກຮຽນ ໃຫ້ລຸກໄໝ້ດ້ວຍຂໍ້ສົງໃສຕ່າງໆກ່ຽວກັບໂລກ.

## D. ເລື່ອງລາວ

*ໂທມັດ ແບຣກເວວ ເປັນຊາຍໜຸ່ມຜູ້ທີ່ດຳລົງຕຳແໜ່ງສຳຄັນ ໃນໂຮງງານຝ້າຍທາງພາກໃຕ້ຂອງສະຫະລັດອາເມລິກາ ແລະ ເຂົາໃຊ້ເວລາຊ່ວງວັນພັກຂອງເຂົາໃນທະວີບຢູໂລບ. ໃນລະຫວ່າງການເດີນທາງໄປທະວີບຢູໂລບໃນຊ່ວງລະດູຮ້ອນຂອງປີ ຄ.ສ 1901, ເຂົາໄດ້ພົບ*

ກັບຍິງຄົນໜຶ່ງເທິງເຮືອໄອນ້ຳ ແລະ ເລີ່ມສົນທະນາກັບນາງໃນເລື່ອງທາງທັມ. ເມື່ອພວກເຂົາເດີນທາງໄປເຖິງເມືອງປາຣີ, ຍິງຄົນນັ້ນໄດ້ພາເຂົາໄປພົບກັບເພື່ອນຄົນໜຶ່ງຂອງນາງ ເຊິ່ງອາໃສຢູ່ທີ່ອະພາດເມັ້ນແຫ່ງໜຶ່ງໃນເມືອງ ແລະ ເປັນຜູ້ເຊິ່ງນາງຮູ້ວ່າມີຄວາມສົນໃຈໃນເລື່ອງທີ່ຄ້າຍໆກັນ. ຍິງສາວຄົນນັ້ນຕ້ອນຮັບພວກເຂົາ, ແລະ ທັງສາມກໍໄດ້ສົນທະນາກັນໄລຍະໜຶ່ງ. ກ່ອນທີ່ຈະຈາກໄປ, ແບຣກເວວໄດ້ຖາມເຈົ້າຂອງເຮືອນວ່າ ເຂົາຈະສາມາດກັບມາເພື່ອສົນທະນາກັນອີກໄດ້ຫຼືບໍ່. ເຂົາກໍ່ໄດ້ຖືກເຊີນໃຫ້ກັບມາອີກໃນມື້ອື່ນເຊົ້າ.

ເມື່ອເຂົາມາເຖິງໃນມື້ຕໍ່ມາ, ຍິງສາວຜູ້ນັ້ນສັງເກດເຫັນວ່າດວງຕາຂອງເຂົາເປັນປະກາຍ ແລະ ນ້ຳສຽງຂອງເຂົາເຕັມໄປດ້ວຍຄວາມຮູ້ສຶກ. ນາງໄດ້ເຊີນໃຫ້ເຂົານັ່ງລົງ. ທ້າວແບຣກເວວແນມເບິ່ງນາງແປບໜຶ່ງແລ້ວຈຶ່ງເລົ່າໃຫ້ນາງຟັງ ກ່ຽວກັບປະສົບການອັນໜ້າມະຫັດສະຈັນຂອງເຂົາ. ຫຼັງຈາກທີ່ເຂົາໄດ້ອອກຈາກທີ່ພັກຂອງນາງມື້ກ່ອນ, ເຂົາໄດ້ຍ່າງໄປຂ້າງຖະໜົນສາຍໜຶ່ງຄົນດຽວ, ໃນຊ່ວງຕອນຄ່ຳທີ່ອາກາດຮ້ອນເອົ້າແລະມີລົມແຮງ. ບໍ່ມີແມ່ນແຕ່ໃບໄມ້ໃບດຽວທີ່ປິວມາອ້ອມຮອບຕົວເຂົາ. ແຕ່ທັນໃດນັ້ນ, ກໍມີລົມແຮງພັດມາ ເຊິ່ງຄືກັບວ່າຈະນຳຂ່າວດີກ່ຽວກັບຂ່າວສານໃໝ່ຈາກພຣະຜູ້ເປັນເຈົ້າມານຳ!

ຍິງສາວຄົນນັ້ນແນະນຳໃຫ້ເຂົາໃຈເຢັນລົງ. ນັ້ນເປັນເພາະວ່ານາງຮູ້ດີເຖິງຂ່າວສານທີ່ແບຣກເວວ ກຳລັງກ່າວເຖິງ. ຈາກນັ້ນເປັນເວລາສາມມື້ຕໍ່ກັນ, ນາງໄດ້ໃຊ້ເວລາຫຼາຍຊົ່ວໂມງໃນການເລົ່າໃຫ້ເຂົາຟັງກ່ຽວກັບສາສະໜາບາຮາຍ ໃນທຸກສິ່ງທຸກຢ່າງທີ່ນາງສາມາດຈະເລົ່າໄດ້ - ທັງໃນເລື່ອງປະຫວັດ ແລະ ຄຳສອນຂອງສາສະໜາ - ແລະກ່ຽວກັບພຣະອັບດຸລບາຮາ, ຜູ້ຊຶ່ງເປັນແບບຢ່າງທີ່ສົມບູນເລີດຂອງຄຳສອນເຫຼົ່ານັ້ນ, ຜູ້ຊຶ່ງກຳລັງອາໃສຢູ່ໃນເມືອງຄຸກແຫ່ງອັກຄາໃນດິນແດນສັກສິດ.

ເມື່ອສິ້ນສຸດວັນທີ່ສາມ, ຫົວໃຈຂອງແບຣກເວວຖືກເຕີມເຕັມດ້ວຍຄວາມປີຕິຍິນດີ ແລະ ຄວາມຫວັງຫຼາຍ ເຖິງຂັ້ນທີ່ເຂົາບໍ່ຕ້ອງການສິ່ງອື່ນໃດນອກຈາກການໄດ້ເດີນທາງໄປຍັງ ເມືອງອັກຄາເພື່ອເຂົ້າເຝົ້າພຣະອັບດຸລບາຮາ. ປາກົດວ່າມີຊາຍໜຸ່ມອີກຄົນໜຶ່ງຜູ້ເຊິ່ງໄດ້ຕຽມການໄວ້ຢູ່ແລ້ວວ່າຈະເດີນທາງໄປຍັງດິນແດນສັກສິດດ້ວຍຈຸດປະສົງດຽວກັນ ແລະ ເຂົາຮູ້ສຶກຍິນດີເປັນຢ່າງຍິ່ງທີ່ແບຣກເວວຈະຮ່ວມເດີນທາງໄປກັບເຂົາດ້ວຍ. ດັ່ງນັ້ນ ຈຶ່ງໄດ້ມີການສົ່ງຂໍ້ຄວາມໄປເຖິງພຣະອັບດຸລບາຮາ ເພື່ອຂໍອະນຸຍາດໃຫ້ເຂົາໄປນຳ, ແລະ ໃນເວລາບໍ່ດົນຫຼັງຈາກນັ້ນ ທັງສອງກໍໄດ້ເລີ່ມອອກເດີນທາງກັນ.

ເມື່ອຊາຍທັງສອງເດີນທາງໄປເຖິງເຮືອນຂອງພຣະອັບດຸລບາຮາ, ພວກເຂົາຖືກນຳເຂົ້າໄປຍັງອີກຫ້ອງໜຶ່ງທີ່ມີຊາຍອີກຈຳນວນໜຶ່ງນັ່ງລວມກັນຢູ່. ແບຣກເວວມອງໄປອ້ອມຮອບຫ້ອງແລ້ວຮູ້ສຶກເປັນກັງວົນໃຈຫຼາຍ. ບໍ່ມີຄົນໃດໃນຫ້ອງນັ້ນເລີຍທີ່ເຮັດໃຫ້ຫົວໃຈຂອງເຂົາໄດ້ຮັບການດຶງ

*ດູດໃຈ, ແລະ ດ້ວຍຄວາມທີ່ເຂົາຄິດວ່າ ພຣະອັບດຸລບາຮາຕ້ອງເປັນໜຶ່ງໃນຜູ້ທີ່ນັ່ງຢູ່ໃນຫ້ອງນັ້ນ, ເຂົາຈຶ່ງຄິດວ່າເຂົາຄົງຈະບໍ່ໄດ້ເຫັນພຣະຜູ້ຊົງມາຈາກສະຫວັນ ຜູ້ເຊິ່ງເຂົາໄດ້ຮຽນຮູ້ກ່ຽວກັບພຣະອົງເມື່ອຄັ້ງທີ່ຢູ່ເມືອງປາລີດ. ເຂົາຈຶ່ງນັ່ງລົງຢ່າງໝົດຫວັງ. ນະເວລານັ້ນ, ປະຕູກໍໄດ້ເປີດອອກ ແລະ ແບຣກເວວໄດ້ມອງຂຶ້ນໄປ. ເຂົາເຫັນແສງສະຫວ່າງເຈີດຈ້າມາຈາກພຣະວໍລະກາຍຂອງພຣະອັບດຸລບາຮາ. ເຂົາຮູ້ໄດ້ໃນທັນທີວ່າ ສຸດຍອດຄວາມປາດຖະໜາຂອງເຂົາໄດ້ເປັນຈິງແລ້ວ.*

*ແບຣກເວວໄດ້ໃຊ້ເວລາສອງວັນທີ່ຮຸ່ງເຮືອງ ໃນການໄດ້ເຂົ້າເຝົ້າພຣະອັບດຸລບາຮາ, ເຊິ່ງໃນລະຫວ່າງນັ້ນໄຟທີ່ເລີ່ມລຸກໄໝ້ໃນຈິດໃຈຂອງເຂົາ ກໍທະວີຄວາມແຮງກ້າຂຶ້ນຕາມລຳດັບ. ເມື່ອແບຣກເວວເລົ່າໃຫ້ພຣະອັບດຸລບາຮາຟັງ ກ່ຽວກັບງານຂອງເຂົາທີ່ໂຮງງານຝ້າຍ, ເຊິ່ງເປັນບ່ອນທີ່ເດັກໆຖືກໃຊ້ເປັນຄົນງານ, ພຣະອັບດຸລບາຮາໄດ້ແນະນຳໃຫ້ເຂົາລາອອກຈາກງານເສຍເຊິ່ງເຂົາກໍປະຕິບັດຕາມໂດຍບໍ່ລັງເລ. ເມື່ອສຳເລັດການຢ້ຽມຢາມຂອງເຂົາ, ເຂົາໄດ້ເດີນທາງກັບໄປຍັງເມືອງປາລີດ, ດ້ວຍຈິດໃຈຂອງເຂົາທີ່ລຸກເປັນໄຟຢ່າງສະຫວ່າງສະໄຫວ. ຊີວິດທີ່ເຫຼືອອັນແສນສັ້ນຂອງເຂົາ, ເຂົາລຸກໄໝ້ເໝືອນດັ່ງທຽນທີ່ສະຫວ່າງສະໄຫວ, ແບ່ງປັນແສງສະຫວ່າງຂອງເຂົາໃຫ້ກັບທຸກຄົນທີ່ເຂົາພົບ. ຈົນເຖິງວັນທີ່ເຂົາຕ້ອງເສຍຊີວິດ, ພຣະອັບດຸລບາຮາໄດ້ຊົງລິຂິດສານເພື່ອເປັນກຽດແກ່ເຂົາ, ເຊິ່ງລວມເຖິງຖ້ອຍຄຳຕໍ່ໄປນີ້: "ໂອ ແບຣກເວວ, ໂອຜູ້ເປັນທີ່ຮັກຍິ່ງຂອງເຮົາ! ທ່ານໄດ້ຈຸດໄຟຂຶ້ນໃນຕະກຽງແຫ່ງໝູ່ເທບເທວັນ, ທ່ານໄດ້ກ້າວເຂົ້າໄປຍັງອານາຈັກອັບຮາ, ທ່ານໄດ້ພົບຮົ່ມໄມ້ຊາຍຄາພາຍໃຕ້ຮົ່ມເງົາແຫ່ງພຶກສາອັນອຸດົມພອນ, ທ່ານໄດ້ເຂົ້າເຖິງການໄດ້ເຂົ້າເຝົ້າພຣະອົງ ໃນທີ່ພັກພິງແຫ່ງສະຫວັນ."*

## E. ເກມ: "ຊ່ວຍເຫຼືອຄົນເຈັບ"

ເລືອກເດັກນ້ອຍຄົນໜຶ່ງເພື່ອທຳທ່າເປັນ "ຄົນເຈັບ". ຕອນນີ້ໃຫ້ເດັກນ້ອຍອີກສອງຄົນຢືນເຊິ່ງໜ້າກັນ, ເອົາມືຂອງເຂົາເຈົ້າຈັບແຂນຂອງກັນແລະກັນ, ເພື່ອເຮັດເປັນ "ຕັ່ງນັ່ງ". ຂຶ້ນຢູ່ກັບຂະໜາດແລະທັກສະຂອງເດັກນ້ອຍ, ທ່ານສາມາດເຮັດໃຫ້ພວກເຂົາເປັນຕັ່ງນັ່ງໃນລັກສະນະອື່ນ. ໃນກໍລະນີດັ່ງກ່າວ, ໃຫ້ເດັກນ້ອຍທັງສອງເອົາຂໍ້ມືຂວາຂອງຕົນເອງຈັບມືຊ້າຍຂອງເຂົາເຈົ້າ ແລະ ເອົາຂໍ້ມືຊ້າຍຂອງເຂົາເຈົ້າຈັບມືຂວາຂອງກັນແລະກັນດ້ວຍ.

ໝູ່ຮ່ວມຊັ້ນຮຽນຄົນອື່ນໆຄວນຊ່ວຍ "ໝູ່ທີ່ເຈັບປ່ວຍ" ນັ່ງຢູ່ຕັ່ງນັ່ງ. ໃຫ້ເລືອກຕົ້ນໄມ້ຫຼືບ່ອນອື່ນເປັນ "ສູນປິ່ນປົວ" ແລະ ຂໍໃຫ້ເດັກນ້ອຍສອງຄົນທີ່ເຮັດເປັນຕັ່ງນັ່ງພາຄົນ "ເຈັບ" ໄປບ່ອນນັ້ນ.

ໃນກຸ່ມໃຫຍ່, ສາມາດຂໍໃຫ້ເດັກນ້ອຍເຮັດເປັນຮູບແບບ "ເປຫາມ" ແທນທີ່ຈະເປັນຕັ່ງນັ່ງໂດຍການຢືນເປັນສອງແຖວຫັນໜ້າເຂົ້າຫາກັນ. ເຂົາເຈົ້າຄວນງໍແຂນບ່ອນຂໍ້ສອກ, ໂດຍໃຫ້ແຕ່ລະຄົນຈັບ

ແຂນຂອງເດັກທີ່ຢູ່ກົງກັນຂ້າມກັນ. ເດັກທີ່ເປັນ "ຄົນເຈັບ" ຄວນນອນເທິງເປຫາມເພື່ອນຳໄປສົ່ງທີ່ "ສູນປິ່ນປົວ". ເຕືອນເດັກໆວ່າທຸກຄົນຈະຕ້ອງເຮັດວຽກຮ່ວມກັນ ຖ້າຫາກຕ້ອງການພາ "ຄົນເຈັບ" ໄປທີ່ສູນປິ່ນປົວຢ່າງປອດໄພ. ເຈົ້າສາມາດເວົ້າວ່າ "ຖ້າພວກເຮົາປ່ອຍໃຫ້ຄົນເຈັບລົ້ມ", "ເຂົາຈະໄດ້ຮັບບາດເຈັບ, ແລະ ພວກເຮົາທຸກຄົນຈະຮູ້ສຶກເສົ້າໃຈ. ແຕ່ຖ້າພວກເຮົາໄປເຖິງສູນປິ່ນປົວໂດຍບໍ່ມີບັນຫາໃດໆ ເຮົາກໍ່ຈະມີຄວາມສຸກແລະອິ່ມອົກອິ່ມໃຈ ຍ້ອນພວກເຮົາໄດ້ຊ່ວຍເຫຼືອເພື່ອນຂອງເຮົາ."

F. **ການທາສີ: ຮູບທີ 20**

G. **ການສວດອະທິຖານປິດ**

## ບົດທີ 21

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ສຳລັບບົດນີ້ແລະຕໍ່ໄປອີກສາມບົດຮຽນ, ເພື່ອເປັນການເປີດຊັ້ນຮຽນແຕ່ລະຄັ້ງຂໍໃຫ້ທ່ອງບົດສວດອະທິຖານທີ່ເຈົ້າຈື່ຂຶ້ນໃຈ, ເຊັ່ນບົດສວດອະທິຖານທີ່ໄດ້ສະເໜີໃນຕອນທີ 19. ຫຼັງຈາກນັ້ນເຈົ້າ ແລະ ເດັກນ້ອຍສອງສາມຄົນຈະສວດອະທິຖານເປີດ, ເຈົ້າສາມາດນຳສະເໜີບົດສວດອະທິຖານຂ້າງລຸ່ມແກ່ເດັກໆ, ເຊິ່ງເປັນບົດສວດທ້າຍທີ່ຈະທ່ອງຈຳໃນລະດັບນີ້.

> **"ໂອ ພຣະຜູ້ເປັນນາຍຜູ້ຊົງເມດຕາ! ຂ້າພະເຈົ້າເປັນເດັກນ້ອຍ, ຂໍຊົງອຸ້ມຊູໃຫ້ຂ້າພະເຈົ້າໄດ້ເຂົ້າໄປໃນອານາຈັກຂອງພຣະອົງ. ຂ້າພະເຈົ້າຕິດຢູ່ກັບໂລກ ຂໍຊົງໃຫ້ຂ້າພະເຈົ້າເຫີນຂຶ້ນສູ່ສະຫວັນ; ຂ້າພະເຈົ້າເປັນຊາວໂລກ ຂໍຊົງໃຫ້ຂ້າພະເຈົ້າເປັນຊາວສະຫວັນ; ຂ້າພະເຈົ້າບໍ່ແຈ່ມໃສ ຂໍຊົງເຮັດໃຫ້ຂ້າພະເຈົ້າສົດໃສ; ຂ້າພະເຈົ້າໝົກມຸ່ນທາງໂລກ ຂໍຊົງໃຫ້ຂ້າພະເຈົ້າຝັກໄຝ່ໃນທັມ, ແລະ ຂໍຊົງໃຫ້ຂ້າພະເຈົ້າສະແດງພຣະພອນອັນບໍ່ຮູ້ສິ້ນ ຂອງພຣະອົງໃຫ້ແຈ່ມແຈ້ງ.**
>
> **"ພຣະອົງຄື ພຣະຜູ້ຊົງອານຸພາບ, ພຣະຜູ້ຊົງປ່ຽມໄປດ້ວຍຄວາມຮັກ."**[123]

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຄວາມສະຫວ່າງສະໄຫວ**

E A

ຂະນະທີ່ເຮົາສະທ້ອນແສງທີ່ສ່ອງມາຈາກເບື້ອງບົນ

B E

ຫົວໃຈຂອງເຮົາຈະສະຫວ່າງດ້ວຍຄວາມກະລຸນາແລະຄວາມຮັກ

E A

ຂະນະທີ່ເຈົ້າມີຄວາມສຸກ, ສ່ອງແສງແລະສົດໃສ

B E

ຄົນອ້ອມຂ້າງຈະຮູ້ສຶກເຖິງຄວາມອົບອຸ່ນຈາກແສງສະຫວ່າງຂອງພຣະອົງ

<u>ຮ້ອງປະສານສຽງ:</u>

E A

ໂອ ບຸດ! ໂອ ບຸດແຫ່ງຊີວິດ!

B E

ເຈົ້າເປັນຕະກຽງຂອງເຮົາແລະແສງສະຫວ່າງຂອງເຮົາຢູ່ໃນຕົວເຈົ້າ!

E A

ໂອ ບຸດ! ໂອ ບຸດແຫ່ງຊີວິດ!

B E

ເຈົ້າເປັນຕະກຽງຂອງເຮົາແລະແສງສະຫວ່າງຂອງເຮົາຢູ່ໃນຕົວເຈົ້າ!

ຄວາມຮັກຂອງພຣະຜູ້ເປັນເຈົ້າບໍ່ເຄີຍຢຸດຫຼັ່ງໄຫຼ
ເມື່ອເຮົາລຸກຂຶ້ນຮັບໃຊ້ຄວາມສົດໃສຈະເພີ້ມຫຼາຍຂຶ້ນ
ຢ່າລັງເລ! ພຽງແຕ່ສ່ອງແສງ! ດ້ວຍພະລັງທັງໝົດຂອງເຈົ້າ
ຈົນກວ່າຫົວໃຈທຸກດວງຈະເຕັມໄປດ້ວຍແສງສະຫວ່າງຂອງພຣະອົງ

<u>ຮ້ອງປະສານສຽງ</u> (ຮ້ອງຊ້ຳແຖວສຸດທ້າຍ)

## C. ການທ່ອງຈຳພຣະວັດຈະນະ

ໃນຊັ້ນຮຽນມື້ນີ້ ເດັກໆຈະທ່ອງຈຳພຣະວັດຈະນະກ່ຽວກັບຄຸນລັກສະນະຂອງ ຄວາມສະຫວ່າງສະໄຫວ, ເຊິ່ງຄູສາມາດນຳສະເໜີດ້ວຍວິທີດັ່ງນີ້:

ແສງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ບໍ່ເຄີຍຢຸດໃນການເຮັດໃຫ້ຫົວໃຈຂອງເຮົາສະຫວ່າງສະໄຫວ. ໃນຂະນະທີ່ແສງນີ້ທະວີຄວາມສະຫວ່າງສະໄຫວຂຶ້ນເລື້ອຍໆ, ຫົວໃຈຂອງເຮົາສະຫວ່າງສະໄຫວດ້ວຍຄວາມຮັກຂອງພຣະອົງ. ແສງແຫ່ງຄວາມຮູ້ຂອງພຣະຜູ້ເປັນເຈົ້າ - ຄວາມ

ຮູ້ອັນຍິ່ງໃຫຍ່ຂອງພຣະອົງ, ຄວາມຮຸ່ງເຮືອງຂອງພຣະອົງ - ສ່ອງສະຫວ່າງດວງຕາຂອງພວກເຮົາ. ແລະ ດ້ວຍການກະທຳອັນເອື້ອເຟື້ອ ແລະ ຖ້ອຍຄຳທີ່ກະລຸນາ, ມີແສງແຫ່ງຄວາມຮັກ ແລະ ຄວາມຮູ້ສ່ອງແສງອອກມາ. ຄົນທີ່ອ້ອມຮອບພວກເຮົາຖືກສຳພັດດ້ວຍຄວາມສະຫວ່າງສະໄຫວແຫ່ງຄວາມສຸກທັນສາຂອງພວກເຮົາ. ເພື່ອຊ່ວຍໃຫ້ພວກເຮົາຈົດຈຳຄວາມສຳຄັນຂອງຄຸນລັກສະນະແຫ່ງຄວາມສະຫວ່າງສະໄຫວໄດ້ນັ້ນ, ຂໍໃຫ້ເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"ໂອ ບຸດແຫ່ງຊີວິດ! ເຈົ້າຄືຕະກຽງຂອງເຮົາແລະແສງຂອງເຮົາຢູ່ໃນຕົວເຈົ້າ. ຈົ່ງສ່ອງແສງດ້ວຍຄວາມສະຫວ່າງສະໄຫວຈາກຕະກຽງ ແລະ ຢ່າສະແຫວງຫາໃຜອື່ນນອກຈາກເຮົາ."**[124]

*ສະຫວ່າງສະໄຫວ*

1. ເມື່ອທ້າວໄທເຣວຕື່ນຂຶ້ນມາ, ຫ້ອງກໍເຕັມໄປດ້ວຍແສງແດດ. ເຂົາມີຄວາມສຸກທີ່ໄດ້ຮັບການທັກທາຍຈາກຄວາມສະຫວ່າງສະໄຫວຂອງດວງຕາເວັນ.
2. ນາງຊັນໂຕດຮັກທຸກຄົນຄືກັນກັບເປັນຄອບຄົວຂອງລາວເອງ. ລາວມີຄວາມເອື້ອເຟື້ອ, ຄວາມກາລຸນາ ແລະ ມັກຊ່ວຍເຫຼືອຜູ້ອື່ນຢູ່ສະເໝີ. ທຸກຄົນທີ່ໄດ້ພົບກັບລາວຮູ້ສຶກໄດ້ເຖິງຄວາມຮັກທີ່ປ່ຽມລົ້ນໃນຫົວໃຈຂອງລາວ, ເຊິ່ງນຳຄວາມສຸກມາສູ່ຈິດໃຈຂອງພວກເຂົາ. ທຸກຄົນຮູ້ສຶກປະທັບໃຈໃນຈິດໃຈທີ່ສະຫວ່າງສະໄຫວຂອງລາວ.

*ສະແຫວງຫາ*

1. ເມື່ອລູກນົກອອກມາຈາກໄຂ່, ແມ່ຂອງມັນຈະຫາອາຫານມາໃຫ້ມັນກິນ. ແມ່ນົກຈະສະແຫວງຫາອາຫານໃຫ້ລູກນົກຕົວໃໝ່.
2. ໂຮງຮຽນໄດ້ເຊີນນັກຮຽນທຸກຄົນເຂົ້າຮ່ວມທັດນະສຶກສາເປັນກໍລະນີພິເສດ. ເພື່ອສາມາດເຂົ້າຮ່ວມທັດນະສຶກສາໃນເທື່ອນີ້, ພວກເຂົາຕ້ອງໄດ້ຮັບອະນຸຍາດຈາກພໍ່ແມ່ຂອງພວກເຂົາ. ນັກຮຽນທຸກຄົນຕ້ອງສະແຫວງຫາການໄດ້ຮັບອະນຸຍາດຈາກຜູ້ປົກຄອງ ເພື່ອໄປທັດສະນະສຶກສາ.

## D. ເລື່ອງລາວ

*ໂດໂຣທີ ເບເກີ, ເປັນຄົນທີ່ໃນມື້ໃດມື້ໜຶ່ງພວກເຈົ້າຈະໄດ້ຮຽນຮູ້ເພີ້ມເຕີມກ່ຽວກັບລາວ, ຕອນລາວຍັງເປັນເດັກຍິງໄດ້ຮັບກຽດໃນການເຂົ້າພົບກັບ ພຣະອັບດຸລບາຮາ. ແມ່ຕູ້ຂອງໂດໂຣທີເປັນຄົນພາລາວໄປເຂົ້າພົບ ພຣະອັບດຸລບາຮາ ໃນລະຫວ່າງການເດີນທາງຂອງພຣະອົງຢູ່ທີດຕາເວັນຕົກ. ເມື່ອມາເຖິງບ້ານທີ່ລາວບໍ່ເຄີຍຢ້ຽມຢາມມາກ່ອນ, ໂດໂຣທີໄດ້ເຂົ້າໄປໃນຫ້ອງທີ່ແອອັດ. ຫຼາຍໆຄົນກຳລັງໂອ້ລົມກັນດ້ວຍຄວາມງຽບ ແລະ ດ້ວຍຄວາມເຄົາລົບໃນຕອນທີ່*

*ກຳລັງຖ້າໃຫ້ພຣະອັບດຸລບາຮາມາກ່າວ. ທ່ານນາຍຍິ້ມເມື່ອໂດໂຣທີ ແລະ ແມ່ຕູ້ຂອງລາວຍ່າງເຂົ້າມາ ແລະ ໄດ້ບອກໃຫ້ເດັກຍິງມານັ່ງໃກ້ກັບພຣະອົງ. ດ້ວຍຄວາມກະຕືລືລົ້ນ, ແຕ່ກັງວົນໃຈໜ້ອຍໜຶ່ງ, ລາວຍ່າງຂ້າມຫ້ອງໄປ. ໂດຍທີ່ບໍ່ເງີຍໜ້າຈາກພື້ນ ລາວຄ່ອຍໆຍ່າງຜ່ານແຂກຄົນທັງໝົດ ເພື່ອໄປເຖິງບ່ອນວາງພຣະບາດໃກ້ໆກັບພຣະບາດຂອງພຣະອົງ.*

*ຕອນທີ່ພຣະອັບດຸລບາຮາເລີ່ມເວົ້າ, ໂດໂຣທີໄດ້ນັ່ງຟັງດ້ວຍສາຍຕາທີ່ແນມລົງເບິ່ງເກີບສີດຳຂອງຕົນ. ລາວບໍ່ມີຄວາມກ້າຫານທີ່ຈະເບິ່ງພຣະອົງ. ແຕ່ບໍ່ດົນຄວາມຢ້ານຂອງລາວກໍຫາຍໄປ. ລາວຮູ້ສຶກວ່າຖືກດຶງດູດສູ່ຄວາມອົບອຸ່ນ ຂອງການປະທັບຢູ່ດ້ວຍຄວາມຮັກຂອງພຣະອັບດຸລບາຮາ. ແສງລັດສະໝີຂອງພຣະອົງປຽບດັ່ງແມ່ເຫຼັກ. ໂດໂຣທີພົບເຫັນວ່າຕົນເອງຫັນໜ້າໄປຫາພຣະອົງແບບບໍ່ຮູ້ໂຕວ່າຕົນເອງເພັ່ງຕີງ, ແຂນສອກວາງເທິງຫົວເຂົ່າ ແລະ ຄາງວາງເທິງມືສອງຂ້າງຂອງນາງ, ແລ້ວເບິ່ງຂຶ້ນໄປເທິງພຣະພັກທີ່ເປັ່ງປະກາຍຂອງ ພຣະອັບດຸລບາຮາ.*

*ໂດໂຣທີ ບໍ່ມີວັນຈື່ໄດ້ວ່າພຣະອັບດຸລບາຮາໄດ້ເວົ້າຫຍັງໃນມື້ນັ້ນ. ສິ່ງທີ່ລາວຈື່ໄດ້ມີພຽງແຕ່ໃບໜ້າທີ່ກະລຸນາຂອງພຣະອົງ, ສຽງອັນມ່ວນອອນຊອນຂອງພຣະອົງ, ແລະ ຄວາມອົບອຸ່ນຂອງການປະທັບຢູ່ຂອງພຣະອົງ. ດວງຕາທີ່ປ່ຽມໄປດ້ວຍຄວາມຮັກຂອງພຣະອົງ ເໝືອນກຳລັງບອກລາວເຖິງໂລກແຫ່ງຈິດວິນຍານຂອງພຣະຜູ້ເປັນເຈົ້າ. ເມື່ອເວລາຜ່ານໄປ, ຄວາມຮັກຂອງພຣະຜູ້ເປັນເຈົ້າທີ່ຈຸດປະກາຍຢູ່ໃນຫົວໃຈຂອງລາວແຂງແຮງຂຶ້ນຫຼາຍ ຈົນລາວຕັດສິນໃຈຂຽນຫາ ພຣະອັບດຸລບາຮາ. ໃນຈົດໝາຍລາວໄດ້ຂຽນວິງວອນຕໍ່ພຣະອົງໃຫ້ລາວໄດ້ຮັບໃຊ້ພຣະອົງ ແລະ ພຣະບິດາຂອງພຣະອົງ ພຣະບາຮາອຸລລະຫ໌. ໃນຄຳຕອບຂອງພຣະອົງຕໍ່ໂດໂຣທີ, ພຣະອັບດຸລບາຮາ ຍ້ອງຍໍເປົ້າໝາຍຂອງລາວ, ຮັບຮອງເຖິງພຣະກາລຸນາທິຄຸນຂອງພຣະຜູ້ເປັນເຈົ້າ ແລະ ໄດ້ສະແດງຄວາມຫວັງວ່າລາວຈະປະສົບຄວາມສຳເລັດ ຕາມສິ່ງທີ່ລາວປາດຖະໜາ. ແລະ ແນ່ນອນວ່າ, ໂດໂຣທີອຸທິດທັງຊີວິດຂອງຕົນເພື່ອຮັບໃຊ້ພຣະຜູ້ເປັນເຈົ້າ ແລະ ມະນຸດຊາດ.*

## E. ເກມ: "ສຳເນົາສອງທາງ"

ໃຫ້ແບ່ງເດັກໆອອກເປັນຄູ່ໆ, ໂດຍໃຫ້ເດັກແຕ່ລະຄົນຫັນໜ້າເຂົ້າຫາຄູ່ຂອງຕົນ. ແລ້ວຂໍໃຫ້ເດັກໜຶ່ງຄົນໃນແຕ່ລະຄູ່ເລີ່ມເຄື່ອນໄຫວຮ່າງກາຍແບບງ່າຍໆ, ເຊິ່ງເດັກອີກຄົນຄວນພະຍາຍາມເປັນຄືກະຈົກ. ຫຼັງຈາກນັ້ນສອງສາມນາທີ, ກໍໃຫ້ຄູ່ນັ້ນປ່ຽນຜຽນກັນ. ພ້ອມນີ້ເຈົ້າສາມາດໃຫ້ພວກເຂົາເປັນກະຈົກສະທ້ອນການສະແດງອອກທາງສີໜ້າແທນການເຄື່ອງໄຫວ. ຕໍ່ມາໃຫ້ເດັກໜຶ່ງຄົນໃນແຕ່ລະຄູ່ຢືນທາງຫຼັງຂອງອີກຄົນ. ຂະນະທີ່ຄົນຢູ່ທາງໜ້າເພັ່ງຕີງ, ກໍໃຫ້ຄົນທາງຫຼັງຄວນເປັນເງົາເຄື່ອນໄຫວຕາມ.

## F. ການທາສີ: ຮູບທີ 21

G. ການສວດອະທິຖານປິດ

## ບົດທີ 22

A. ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ

ຫຼັງສວດອະທິຖານເປີດ, ເດັກນ້ອຍສາມາດສືບຕໍ່ທ່ອງຈຳບົດສວດອະທິຖານ ທີ່ໄດ້ແນະນຳໃນບົດຜ່ານມາ.

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

**ຂ້ອຍຕ້ອງການມີຄວາມສຸກ**

```
  Am
ມີບາງສິ່ງທີ່ເຈົ້າຕ້ອງຮູ້
Am              E7
ໃນສາສະໜານີ້ຕ້ອງສະແດງອອກ
  Dm
ວ່າເຮົາເປັນຄົນດີ ບໍ່ພຽງແຕ່ຄຳເວົ້າ
     Am                      E7      Am
ຊີວິດຂອງເຮົາຕ້ອງສະແດງຄວາມເຊື່ອແກ່ມິດແລະສັດຕູ
```

<u>ຮ້ອງປະສານສຽງ:</u>

```
   Am
ຂ້ອຍຕ້ອງການມີຄວາມສຸກ
   Am
ຂ້ອຍຢາກຈະເຂັ້ມແຂງ
    Am
ເພື່ອຮັບໃຊ້ພຣະອົງ
      Am
```

ຕະຫຼອດຊີວິດຂອງຂ້ອຍ

Dm Am

ສະນັ້ນ, ຂ້ອຍຕ້ອງເຊື່ອຟັງກົດຂອງພຣະຜູ້ເປັນເຈົ້າ

E7 Am

ແມ່ນແລ້ວ, ຂ້ອຍຕ້ອງເຊື່ອຟັງໃນກົດຂອງພຣະຜູ້ເປັນເຈົ້າ

ມີບາງສິ່ງທີ່ເຈົ້າຕ້ອງຮູ້
ໃນໂລກແຫ່ງທີ່ວິຈິດງົດງາມແລະການສະແດງນີ້
ຜູ້ຄົນເບື່ອນ່າຍກັບຄຳເວົ້າທີ່ວ່າງເປົ່າ
ພວກເຂົາຕ້ອງການຈະເຫັນເຈົ້າລົງມືປະຕິບັດຕາມທີ່ເຈົ້າສອນ

ຮ້ອງປະສານສຽງ

## C. ການທ່ອງຈຳພຣະວັດຈະນະ

ໃນບົດຮຽນນີ້ ເດັກໆຈະຮຽນທ່ອງຈຳພຣະວັດຈະນະຕໍ່ໄປນີ້ຈົນຂຶ້ນໃຈ, ເຊິ່ງເນັ້ນໜັກໃສ່ຫົວຂໍ້ຂອງຄວາມຈົງຮັກພັກດີ. ຂ້າງລຸ່ມນີ້ຄືແນວຄວາມຄິດບາງອັນທີ່ຊ່ວຍເຈົ້າໃນການແນະນຳຫົວຂໍ້ນີ້:

ວິນຍານທີ່ຈົງຮັກພັກດີຈະບໍ່ລືມຄວາມກະລຸນາທັງປວງ ທີ່ພຣະຜູ້ເປັນເຈົ້າປະທານໃຫ້ແກ່ວິນຍານທີ່ສັດທາ; ມັນບໍ່ເຄີຍຢຸດຄວາມຮັກທີ່ມີຕໍ່ພຣະຜູ້ເປັນເຈົ້າ. ດ້ວຍຄວາມຈົງຮັກພັກດີຕໍ່ພຣະອົງ ພວກເຮົາຈຶ່ງພະຍາຍາມຢ່າງທີ່ສຸດຢູ່ສະເໝີ ທີ່ຈະປະຕິບັດຕາມຄຳສອນຂອງພຣະອົງ ແລະ ເຊື່ອຟັງກົດຂອງພຣະອົງ, ແມ່ນວ່າມັນຈະກາຍເປັນເລື່ອງຍາກກໍ່ຕາມ. ສະນັ້ນເຮົາຈຶ່ງເຮັດວຽກຢ່າງໜັກເພື່ອຮັບໃຊ້ຜູ້ອື່ນ ແລະ ກະທຳສິ່ງທີ່ສົມຄວນ, ໂດຍບໍ່ມີຄວາມຄິດອື່ນໃດນອກຈາກໄດ້ຮັບຄວາມພໍພຣະໄທຈາກພຣະອົງ. ສຳລັບວິນຍານທີ່ຈົງຮັກພັກດີຈະບໍ່ມີຄວາມສຸກຫັນສາໃດຈະຍິ່ງໃຫຍ່ໄປກວ່າການບຸກບືນພະຍາຍາມໃຫ້ພຣະຜູ້ເປັນເຈົ້າພໍພຣະໄທ. ຂໍໃຫ້ເຮົາຈົດຈຳພຣະວັດຈະນະນີ້ຂອງ ພຣະບາຮາອຸລລາຫ໌:

**"ຂໍຄວາມສຸກຈົ່ງມີແດ່ຜູ້ມີຄວາມຈົງຮັກພັກດີ ຜູ້ເຊິ່ງໄດ້ຮັບການຕົກແຕ່ງດ້ວຍພູສາ ແຫ່ງຄວາມພຽນພະຍາຍາມຢ່າງສູງ ແລະ ໄດ້ລຸກຂຶ້ນຮັບໃຊ້ສາສະໜານີ້."**[125]

*ຕົກແຕ່ງ*

1. ນາງ ແມ ມີຊຸດກະໂປ່ງທີ່ສວຍງາມຊຸດໜຶ່ງ ທີ່ນາງຈະສວມໃສ່ສະເພາະໃນໂອກາດພິເສດເທົ່ານັ້ນ. ນາງໄດ້ສວມໃສ່ຊຸດນັ້ນໃນການຊຸມນຸມຂອງຊຸມຊົນ. ນາງ ແມ ໄດ້ຮັບການຕົກແຕ່ງດ້ວຍຊຸດກະໂປ່ງທີ່ພິເສດຂອງນາງ.
2. ນາງ ນາຕາເລຍ ກະລຸນາຕໍ່ໝົດທຸກຄົນ. ພຣະຜູ້ເປັນເຈົ້າໄດ້ຕົກແຕ່ງວິນຍານຂອງນາງດ້ວຍຄວາມກະລຸນາ.

*ພູສາ (ເຄື່ອງນຸ່ງຫົ່ມ)*

1. ໃນສະຖານທີ່ບາງແຫ່ງ, ຜູ້ພິພາກສາຕ້ອງສວມໃສ່ວິກຜົມສີຂາວ ແລະ ຊຸດຄຸມຍາວສີດຳໃນສານ. ພວກເຂົາເລົ່າຕ້ອງສວມໃສ່ພູສາເຕັມຍົດຂອງຜູ້ພິພາກສາ.
2. ກ່ອນຈະສະເດັດອອກຈາກວັງ, ເຈົ້າຊາຍຊົງສວມສາຍສະພາຍແລະມົງກຸດ. ພຣະອົງຊົງສວມໃສ່ພຣະພູສາປະຈຳລາດຊະສຳນັກ.
3. ທ້າວ ຈາຄອບ ສວດອະທິຖານທຸກໆເຊົ້າກ່ອນອອກຈາກບ້ານ. ບົດສວດອະທິຖານເລົ່ານັ້ນ ເປັນເໝືອນພູສາທີ່ຫໍ່ຫຸ້ມວິນຍານຂອງລາວ. ບົດສວດອະທິຖານເລົ່ານັ້ນຈະເສີມສ້າງ ແລະ ປົກປ້ອງລາວໝົດມື້.

*ພຽນພະຍາຍາມ*

1. ນັກຮຽນຕັດສິນໃຈປູກຕົ້ນໄມ້ອ້ອມຮອບໂຮງຮຽນ. ຊຸມຊົນໄດ້ສະໜັບສະໜູນຄວາມພຽນພະຍາຍາມຂອງພວກເຂົາໂດຍການເອົາພັນພືດແລະດິນໃຫ້.
2. ປີເອແລະອາລີນ ຕັດສິນໃຈວ່າພວກເຂົາຈະປີນຂຶ້ນໄປຍັງຍອດພູເຂົາ. ພວກເຂົາຮູ້ດີວ່ານີ້ເປັນຄວາມພຽນພະຍາຍາມທີ່ມີຄວາມຍາກລຳບາກ, ແຕ່ພວກເຂົາກໍຍັງມຸ່ງໝັ້ນທີ່ຈະລອງເຮັດເບິ່ງ.

## D. ເລື່ອງລາວ

*ເມື່ອພຣະອັບດຸລບາຮາຍັງຊົງເຍົາໄວ, ຄອບຄົວຂອງພຣະອົງ ເຊິ່ງເປັນສ່ວນໜຶ່ງຂອງບຸກຄົນທີ່ສູງສົ່ງໃນເປີເຊຍ, ທີ່ມີຄົນຮັບໃຊ້ຜູ້ໜຶ່ງຊື່ວ່າ ອິສຟັນດີຍາລ໌. ເຂົາເປັນຄົນທີ່ຈົງຮັກພັກດີຕໍ່ຄອບຄົວນີ້ຫຼາຍ, ແລະ ຄອບຄົວກໍໄວ້ວາງໃຈໃນຕົວເຂົາເປັນຢ່າງຍິ່ງ. ເມື່ອເຈົ້າໜ້າທີ່ເຊິ່ງເຕັມໄປດ້ວຍອັກຄະຕິ ແລະ ອະວິຊາ, ໄດ້ຈັບກຸມພຣະບາຮາອຸລລາຫ໌ ຜູ້ຊົງເປັນພຣະບິດາອັນເປັນທີ່ຮັກຍິ່ງຂອງພຣະອັບດຸລບາຮາ, ຊັບສົມບັດທັງໝົດຂອງຄອບຄົວຈຶ່ງຖືກຍຶດໄປ. ຄອບຄົວນັ້ນບໍ່ເຫຼືອສິ່ງໃດເລີຍ, ແລະຜູ້ໃດກໍຕາມທີ່ເຂົ້າໃກ້ພຣະບາຮາອຸລລາຫ໌ຈະຕ້ອງຕົກຢູ່ໃນອັນຕະລາຍ. ເຖິງຢ່າງນັ້ນ ອິສຟັຍດີຍາລ໌ກໍຍັງຄົງຄອຍຖ້າເບິ່ງແຍງຄອບຄົວນີ້. ເມື່ອຮູ້ວ່າເຈົ້າຫນ້າທີ່ຫຼາຍຄົນ*

*ຈະອອກຊອກຫາ ອິສພັນດີຍາລ໌, ພຣະມານດາຂອງພຣະອັບດຸລບາຮາ ຈຶ່ງໄດ້ຟ້າວໂນ້ມເນົ້າໃຫ້ເຂົາອອກຈາກເມືອງໄປເສຍ. ແຕ່ອິສພັນດີຍາລ໌ບໍ່ຍອມໄປ.*

*"ຂ້າພະເຈົ້າບໍ່ອາດຈາກໄປໄດ້" ເຂົາກ່າວ ອະທິບາຍຕໍ່ໄປວ່າເຂົາຍັງຕິດຄ້າງເງິນຈຳນວນໜຶ່ງກັບເຈົ້າຂອງຮ້ານຄ້າຫຼາຍແຫ່ງໃນການຊື້ສິນຄ້າຕ່າງໆ. "ຂ້າພະເຈົ້າຈະໄປໄດ້ຢ່າງໃດ?" ເຂົາທູນຖາມ. "ພວກເຂົາເລົ່ານັ້ນຈະເວົ້າໄດ້ວ່າຄົນຮັບໃຊ້ຂອງພຣະບາຮາອຸລລາຫ໌ໄດ້ຊື້ເຄື່ອງ ແລະໄດ້ບໍລິໂພກສິນຄ້າ ແລະ ເຄື່ອງຂອງຈາກຮ້ານຄ້າເລົ່ານັ້ນໂດຍບໍ່ໄດ້ຊຳລະເງິນ. ຂ້າພະເຈົ້າບໍ່ອາດຈະໄປໄດ້ ເວັ້ນແຕ່ຂ້າພະເຈົ້າຈະໄດ້ຊຳລະໜີ້ສິນທັງໝົດນີ້ກ່ອນ. ແຕ່ຖ້າຫາກພວກເຂົາຈັບກຸມຂ້າພະເຈົ້າກໍບໍ່ເປັນຫຍັງ. ຖ້າຫາກພວກເຂົາລົງໂທດຂ້າພະເຈົ້າ ກໍບໍ່ເກີດຄວາມເສຍຫາຍແຕ່ຢ່າງໃດ. ຫາກພວກເຂົາຂ້າ-ຂ້າພະເຈົ້າ ກໍຂໍໃຫ້ພຣະອົງຢ່າໄດ້ກັງວົນໃຈເລີຍ. ແຕ່ການທີ່ຂ້າພະເຈົ້າຈະຈາກໄປເປັນສິ່ງທີ່ເຮັດບໍ່ໄດ້. ຂ້າພະເຈົ້າຈະຕ້ອງຢູ່ຈົນກວ່າຈະຊຳລະໜີ້ສິນຂອງຂ້າພະເຈົ້າທັງໝົດໃຫ້ຮຽບຮ້ອຍເສຍກ່ອນ."*

*ເປັນເວລາໜຶ່ງເດືອນທີ່ອິສພັນດີຍາລ໌ທ່ອງຕະເວນໄປຕາມຖະໜົນ ແລະ ຕະຫຼາດຫຼາຍແຫ່ງ, ເພື່ອຂາຍສິ່ງຂອງເລັກໆນ້ອຍໆທີ່ມີຢູ່ຂອງເຂົາ. ເມື່ອເຂົາໄດ້ຊຳລະໜີ້ສິນຂອງເຂົາຈົນໝົດແລ້ວ, ເຂົາກໍໄດ້ໄປຫາຄອບຄົວຂອງພຣະອັບດຸລບາຮາເພື່ອທູນລາ, ເພາະເຂົາຮູ້ດີແກ່ໃຈວ່າເຂົາບໍ່ອາດຢູ່ກັບຄອບຄົວຂອງພຣະອົງໄດ້ອີກຕໍ່ໄປ. ມີເສນາບໍດີຜູ້ໜຶ່ງຕົກລົງຮັບເຂົາໄວ້ ແລະ ຈະປົກປ້ອງຄຸ້ມຄອງ ແລະ ໃຫ້ທີ່ພັກພິງແກ່ເຂົາໃນຊ່ວງເວລາທີ່ອັນຕະລາຍນີ້.*

*ຫຼາຍເດືອນຕໍ່ມາ ພຣະບາຮາອຸລລາຫ໌ຊຶ່ງໄດ້ຮັບການປົດປ່ອຍອອກຈາກຄຸກ ແລະ ພຣະອົງພ້ອມດ້ວຍຄອບຄົວຖືກເນລະເທດອອກໄປຈາກເປີເຊຍ ດ້ວຍຄຳສັ່ງຂອງເຈົ້າໜ້າທີ່. ພຣະອົງແລະຄອບຄົວໄດ້ສະເດັດໄປຍັງເມືອງແບກແດດ, ເຊິ່ງເປັນເມືອງທີ່ຢູ່ໃນປະເທດເພື່ອນບ້ານ. ອິສພັນດີຍາລ໌ຜູ້ເຊິ່ງມີຄວາມຈົງຮັກພັກດີຕໍ່ພຣະບາຮາອຸລລາຫ໌ຢ່າງບໍ່ມີທີ່ສິ້ນສຸດ, ໄດ້ເດີນທາງໄປຍັງແບກແດດ ເພື່ອຂໍຖວາຍການຮັບໃຊ້ໃນເຮືອນຂອງພຣະອົງອີກເທື່ອໜຶ່ງ. ພຣະບາຮາອຸລລາຫ໌ໄດ້ຕັດກັບເຂົາວ່າ "ເມື່ອຕອນທີ່ເຈົ້າຈາກເຮົາໄປ ມີເສນາບໍດີຊາວເປີເຊຍຄົນໜຶ່ງໄດ້ໃຫ້ທີ່ພັກອາໄສກັບເຈົ້າໃນຍາມທີ່ບໍ່ມີໃຜໃຫ້ການປົກປ້ອງຄຸ້ມຄອງແກ່ເຈົ້າ. ເນື່ອງຈາກເຂົາໄດ້ໃຫ້ທີ່ພັກພິງແກ່ເຈົ້າ ແລະ ໄດ້ປົກປ້ອງຄຸ້ມຄອງເຈົ້າ, ເຈົ້າຈະຕ້ອງມີຄວາມຈົງຮັກພັກດີຕໍ່ເຂົາເຈົ້າ. ຫາກເຂົາຍິນດີໃຫ້ເຈົ້າຈາກເຂົາໄປ ກໍຈົ່ງມາຫາພວກເຮົາເຖີດ; ແຕ່ຫາກເຂົາບໍ່ຕ້ອງການໃຫ້ເຈົ້າຈາກໄປກໍຈົ່ງຢ່າຖິ້ມເຂົາໄປ."*

*ແນ່ນອນທີດຽວວ່າ ອິສພັນດີຍາລ໌ເປັນຜູ້ທີ່ຊື່ຕົງ ມີຄວາມໄວ້ວາງໃຈໄດ້ ແລະ ມີຄວາມຈົງຮັກພັກດີໃນລະດັບທີ່ສູງຫຼາຍ ຈົນເສນາບໍດີທ່ານນັ້ນບໍ່ຕ້ອງການໃຫ້ເຂົາຈາກໄປ. "ໂອ ອິສພັນດີຍາລ໌!" ເຂົາຮ້ອງອຸທານຂຶ້ນ "ຂ້າບໍ່ເຕັມໃຈດອກຫາກເຈົ້າຈະຈາກໄປ, ແຕ່ຫາກເຈົ້າມີຄວາມປາດຖະໜາທີ່ຈະ*

*ໄປ ຂ້ອຍກໍຈະປ່ອຍໃຫ້ເປັນໄປຕາມຄວາມປະສົງຂອງເຈົ້າ." ແຕ່ອີສຟັນດີຢາລ໌ຍັງຄົງຈົດຈໍາຖ້ອຍຄໍາຂອງພຣະບາຣາອຸລລາຫ໌. ເຂົາຈຶ່ງຕັດສິນໃຈຢູ່ຮັບໃຊ້ເສນາບໍດີຜູ້ນັ້ນຕໍ່ໄປ, ຈົນກະທັ້ງເມື່ອຜ່ານໄປໄລຍະໜຶ່ງ ເສນາບໍດີທ່ານນັ້ນໄດ້ຈາກໂລກນີ້ໄປ ແລະ ອີສຟັນດີຢາລ໌ຈຶ່ງໄດ້ກັບໄປຫາຄອບຄົວທີ່ເຂົາຮັກຢ່າງຫຼາຍອີກເທື່ອໜຶ່ງ, ໂດຍເຂົາໄດ້ຮັບໃຊ້ພຣະອັບດຸນບາຣາ ຈົນເຖິງລະຍະສຸດທ້າຍຂອງຊີວິດຂອງເຂົາ.*

E. **ເກມ: "ໃຜກໍາລັງເຄາະປະຕູນີ້?"**

ໃຊ້ຜ້າປິດຕາເດັກຄົນໜຶ່ງ, ແລ້ວໃຫ້ເຂົານັ່ງເທິງຕັ່ງແປ້ນມ້າໂດຍຫັນຫຼັງໃຫ້ກັບເພື່ອນໆຄົນທີ່ເຫຼືອຂອງຊັ້ນຮຽນ. ຕອນນີ້ໃຫ້ເລືອກເອົາເດັກອີກຄົນ. ໃຫ້ເຂົາໄປຫາຕັ່ງແປ້ນມ້າຂອງເດັກທີ່ຖືກປິດຕາແລ້ວກໍເຄາະເທິງຕັ່ງແປ້ນມ້າ. ເດັກທີ່ນັ່ງຢູ່ຄວນຖາມເວົ້າວ່າ "ໃຜກໍາລັງເຄາະປະຕູນີ້?" ເດັກອີກຄົນທີ່ເປັນຄົນເຄາະ ພະຍາຍາມດັດສຽງແລ້ວຕອບວ່າ "ຂ້ອຍເອງ!" ເດັກຄົນທີ່ນັ່ງຢູ່ຈະພະຍາຍາມທວາຍວ່າໃຜເປັນຜູ້ເຄາະ. ເຈົ້າອາດປາດຖະໜາທີ່ຈະບອກເດັກໆວ່າ ຖ້າຫາກເດັກທີ່ຖືກປິດຕາຕ້ອງຕັ້ງໃຈຟັງສຽງ, ເດັກຄົນອື່ນໆໃນຊັ້ນຮຽນຈະຕ້ອງຮັກສາຄວາມສະຫງົບ.

F. **ການທາສີ: ຮູບທີ 22**

G. **ການສວດອະທິຖານປິດ**

# ບົດທີ 23

A. **ການທ່ອງອອກສຽງ ແລະ ການທ່ອງຈໍາບົດສວດອະທິຖານ**

ເຈົ້າສາມາດເປີດຊັ້ນຮຽນດ້ວຍການສວດອະທິຖານ ແລ້ວຈາກນັ້ນຊ່ວຍໃຫ້ເດັກໆກ້າວໜ້າໃນຄວາມພະຍາຍາມຂອງພວກເຂົາທີ່ຈະທ່ອງຈໍາ ບົດສວດອະທິຖານທີ່ໄດ້ແນະນໍາໃນບົດທີ 21.

B. **ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)**

**ຄວາມອົດທົນ**

D A
ຂາຂອງເຈົ້າກໍາລັງອິດເມື່ອຍ

A D
ແລະຫົນທາງຍັງອີກແສນໄກ, ໄກ, ໄກ
D A
ເຈົ້າຢາກຢຸດເຊົາພະຍາຍາມ

A D
ແລະດວງຕາເວັນກໍເຕັ້ນແຮງ
G D
ບໍ່ຮູ້ສຶກວ່າອົດທົນບໍ່ໄດ້
G D
ບໍ່ມີປະໂຫຍດຖ້າເຈົ້າຮ້ອງໄຫ້
G D
ຫາກວ່າເຈົ້າເລີ້ມເທື່ອລະກ້າວ
A D
ເວລາຜ່ານໄປຢ່າງໄວ

<u>ຮ້ອງປະສານສຽງ:</u>

G D
ຄວາມອົດທົນຄືຄໍາຕອບ
G D
ເມື່ອເຈົ້າເສົ້າໂສກແລະເສຍໃຈ
G D
ຄວາມອົດທົນເປັນລາງວັນ
A D
ນໍາຄວາມສຸກມາໃຫ້ແກ່ເຈົ້າ

ອ້າຍນ້ອງຂອງເຈົ້າບໍ່ເຂົ້າໃຈ
ແຕ່ເຈົ້າໄດ້ອະທິບາຍຫຼາຍກວ່າສອງຄັ້ງແລ້ວ
ເຈົ້າຄວນລອງພະຍາຍາມຢ່າງຈິງຈັງອີກຄັ້ງ
ແລະກະທໍາຕົວເປັນຄົນດີໃຫ້ດີທີ່ສຸດ
ບໍ່ຮູ້ສຶກວ່າອົດທົນບໍ່ໄດ້
ມັນບໍ່ມີປະໂຫຍດທີ່ຈະເຂັ້ມງວດ

ຫາກເຈົ້າສະແດງຄວາມກະລຸນາແກ່ເຂົາ
ມັນເປັນວິທີທີ່ຊ່ວຍໃຫ້ເຂົາຮຽນຮູ້

ຮ້ອງປະສານສຽງ:

ເຈົ້າຢາກກະທຳໃຫ້ດີຂຶ້ນກວ່າເດີມ
ແຕ່ເຈົ້າຍັງເຮັດບໍ່ສຳເລັດ
ເຈົ້າສົງໃສວ່າເປັນຫຍັງຕ້ອງໃຊ້ຄວາມພະຍາຍາມ
ແລະທຸກຢ່າງຈະນຳພາໄປແຫ່ງໃດ
ບໍ່ຮູ້ສຶກວ່າອົດທົນບໍ່ໄດ້
ກະທຳເລັກໜ້ອຍນັ້ນບໍ່ສະຫຼາດ
ຫາກເຈົ້າບຸກບືນຕໍ່ໄປ
ເຈົ້າຈະກ້າວໜ້າໃນທີ່ສຸດ
ຮ້ອງປະສານສຽງ:

## C. ການທ່ອງຈຳພຣະວັດຈະນະ

ໃນບົດຮຽນນີ້, ເດັກນ້ອຍຈະທ່ອງຈຳພຣະວັດຈະນະກ່ຽວກັບຄວາມອົດທົນ, ເຊິ່ງເຈົ້າສາມາດນຳສະເໜີດ້ວຍວິທີດັ່ງນີ້:

ຄວາມອົດທານເປັນໜຶ່ງຄຸນລັກສະນະສຳຄັນທີ່ສຸດ ທີ່ເຮົາສາມາດມີໄວ້ໃນຄອບຄອງໄດ້. ຫາກປາດສະຈາກຄວາມອົດທານ ພວກເຮົາສາມາດບັນລຸສິ່ງຕ່າງໆໃນຊີວິດເຮົາໄດ້ໜ້ອຍຫຼາຍ. ບໍ່ວ່າຈະໃນດ້ານການສຶກສາຂອງເຮົາ, ໃນການເຮັດວຽກຂອງເຮົາ, ໃນຄອບຄົວຂອງເຮົາ, ໃນມິດຕະພາບຂອງເຮົາກັບຜູ້ອື່ນ, ໃນຄວາມພະຍາຍາມຂອງເຮົາທີ່ຈະ-ຈະເລີນກ້າວໜ້າທາງຈິດວິນຍານ, ຄວາມອົດທົນນັ້ນແມ່ນເປັນສິ່ງທີ່ຈຳເປັນ. ບໍ່ແມ່ນທຸກສິ່ງໃນຊີວິດທີ່ສາມາດເຮັດສຳເລັດລຸລ່ວງໄປໄດ້ຢ່າງວ່ອງໄວ. ຫຼາຍສິ່ງຫຼາຍຢ່າງໃນຊີວິດຂອງພວກເຮົາສາມາດເຮັດໄດ້ເທື່ອລະໜ້ອຍ, ມື້ລະເລັກມື້ລະໜ້ອຍ. ເມື່ອພວກເຮົາເຝິກໃຫ້ຕົວເອງມີຄວາມອົດທົນ, ພວກເຮົາກໍຈະບໍ່ພະຍາຍາມເລັ່ງສິ່ງທີ່ຕ້ອງໃຊ້ເວລາ. ພວກເຮົາຈຳເປັນຕ້ອງມີຄວາມອົດທົນທັງກັບຜູ້ອື່ນ ແລະກັບຕົວພວກເຮົາເອງ, ເພາະພວກເຮົາທັງໝົດກຳລັງຮຽນຮູ້ ແລະ ເຕີບໂຕ. ເພື່ອຊ່ວຍພວກເຮົາໃນຄວາມພະຍາຍາມທີ່ຈະໄດ້ມາເຊິ່ງຄວາມອົດທົນນັ້ນ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້:

**"ແທ້ຈິງແລ້ວ, ພຣະອົງຊົງເພີ່ມລາງວັນ ໃຫ້ແກ່ຜູ້ທີ່ທົນທານດ້ວຍຄວາມອົດທົນ."**[126]

*ລາງວັນ*

1. ນາງ ແອນເດີສັນ ພໍໃຈຫຼາຍກັບໂຄງການວິທະຍາສາດທີ່ສຸດຍອດ ຂອງນັກຮຽນໃນຊັ້ນຮຽນຂອງລາວກະກຽມໄວ້. ເພື່ອເປັນລາງວັນ, ລາວໄດ້ພາພວກເຂົາໄປຢ້ຽມຊົມພິພິດຕະພັນສັດນ້ຳທີ່ຢູ່ໃກ້.
2. ນາງ ອາລີນາ ໃຊ້ເວລາທຸກມື້ເພື່ອຮຽນຮູ້ວິທີຫຼິ້ນກີຕ້າ. ເມື່ອລາວຫຼິ້ນເພງມ່ວນໆໃຫ້ກັບນ້ອງຊາຍຂອງລາວ, ຄວາມຫັນສາເທິງໃບໜ້າຂອງນ້ອງຊາຍ ຄືລາງວັນທັງໝົດທີ່ລາວຕ້ອງການສຳລັບຄວາມພະຍາຍາມຂອງລາວ.

*ທົນທານ*

1. ນາງ ອາລິຍາ ແລະຄອບຄົວຂອງລາວ ໄດ້ຍ້າຍໄປຢູ່ທີ່ຫ່າງໄກຫຼາຍ. ໃນຊ່ວງສອງສາມເດືອນທຳອິດ, ພວກເຂົາຕ້ອງປະສົບກັບຄວາມຍາກລຳບາກຫຼາຍປະການ. ແຕ່ດ້ວຍຄວາມຊ່ວຍເຫຼືອຂອງເພື່ອນບ້ານທີ່ກະລຸນາ, ພວກເຂົາຈຶ່ງສາມາດທົນຕໍ່ຄວາມຍາກລຳບາກເລົ່ານັ້ນ ແລະ ຕອນນີ້ພວກເຂົາກໍ່ມີຄວາມສຸກຫຼາຍກັບເຮືອນຫຼັງໃໝ່ຂອງພວກເຂົາ.
2. ທ້າວ ຮັກ ລົ້ມປ່ວຍລົງ. ເຂົາທົນທຸກທໍລະມານດ້ວຍຄວາມເຈັບປວດຫຼາຍ, ແຕ່ເຂົາບໍ່ໄດ້ຈົ່ມແຕ່ຢ່າງໃດ. ເຂົາທົນທານຕໍ່ຄວາມເຈັບປວດຂອງເຂົາດ້ວຍຄວາມອົດທົນ.

## D. ເລື່ອງລາວ

*ທ້າວ ລີຊິນ ມັກກິນໝາກຄາຍຫຼາຍ (peach). ທຸກໆມື້ເຂົາຈະນຳເອົາໝາກຄາຍໜ່ວຍໜຶ່ງໄປໂຮງຮຽນນຳ ແລະ ຮັບປະທານໃນຊ່ວງພັກທ່ຽງ. ເຂົາຮູ້ເພີດເພີນໃຈກັບທຸກໆຄຳທີ່ເຂົາກັດກິນ, ແຕ່ເຂົາຈະຖິ້ມແກນກາງຂອງມັນສະເໝີ, ເຊິ່ງລວມເຖິງເມັດທີ່ຢູ່ດ້ານໃນນຳ.*

*ມື້ໜຶ່ງ ຊັ້ນຮຽນຂອງລີຊິນກຳລັງຮຽນເລື່ອງເມັດພືດ. ມັນເຮັດໃຫ້ເຂົາເກີດຄວາມຄິດໜຶ່ງຂຶ້ນມາ. ເຂົາຈະປູກເມັດພືດຈາກໝາກຄາຍທີ່ເຂົາກິນ ແລະ ຊ່ວຍໃຫ້ມັນຈະເລີນເຕີບໂຕຂຶ້ນເປັນຕົ້ນໄມ້! ຕອນພັກທ່ຽງ ເຂົາເກັບແກນກາງຂອງໝາກຄາຍເອົາໄວ້ ແລະ ຫໍ່ມັນດ້ວຍເຈ້ຍແຜ່ນໜຶ່ງ. ເມື່ອໂຮງຮຽນເລີກເຂົາຮີບຟ້າວແລ່ນກັບເຮືອນ ແລະ ຂໍໃຫ້ພໍ່ຂອງເຂົາຊ່ວຍຫາສະຖານທີ່ໆຈະປູກຕົ້ນໝາກຄາຍຂອງເຂົາ. ພໍ່ຂອງເຂົາເຕືອນເຂົາວ່າຈະຕ້ອງລໍໃຫ້ແກນກາງຂອງໝາກຄາຍແຫ້ງເສຍກ່ອນ ຈຶ່ງຈະສາມາດນຳເອົາເມັດທີ່ຢູ່ດ້ານໃນອອກມາໄດ້. ແຕ່ລີຊິນກໍຍັງຕ້ອງການຈະປູກຕົ້ນໝາກຄາຍໃນທັນທີ "ລີຊິນ" ພໍ່ຂອງເຂົາກ່າວ "ຖ້າຫາລູກບໍ່ມີຄວາມອົດທົນໃນການລໍໃຫ້ແກນກາງມັນແຫ້ງກ່ອນ, ແລ້ວລູກຈະມີຄວາມອົດທົນທີ່ຈະລໍຖ້າໃຫ້ເມັດມັນງອກອອກມາໄດ້ຢ່າງໃດ?" ດັ່ງນັ້ນ ລີຊິນຈຶ່ງເອົາແກນກາງນັ້ນໄປຕາກແຫ້ງ.*

ຫຼັງຈາກນັ້ນສອງສາມມື້, ລີຊິນກໍສາມາດແກະເປືອກຂອງແກນກາງ ແລະ ດຶງເອົາເມັດອອກມາໄດ້ໃນທີ່ສຸດ. ແມ່ຂອງເຂົາໄດ້ຊີ້ບອກພື້ນທີ່ໜຶ່ງທີ່ເຂົາສາມາດປູກຕົ້ນໝາກຄາຍໃຫ້ຈະເລີນງອກງາມ ແລະໃຫຍ່ໂຕຂຶ້ນໄດ້. ລີຊິນຂຸດຂຸມນ້ອຍໆຂຸມໜຶ່ງແລ້ວຢອດເມັດລົງໄປ, ແລ້ວຖົມດິນທີ່ຂຸ່ມລົງໄປເພື່ອປົກຄຸມເມັດນັ້ນໄວ້. ເຂົາຍິ້ມດ້ວຍຄວາມຕື່ນເຕັ້ນ. ໃນທີ່ສຸດຕົ້ນໝາກຄາຍຂອງເຂົາກໍກຳລັງຈະໃຫຍ່ແລ້ວ!

ທຸກໆມື້, ລີຊິນຈະໄປເບິ່ງເນີນດິນນັ້ນ ໂດຍຫວັງຈະໄດ້ເຫັນສັນຍານຂອງເມັດທີ່ຈະໄດ້ງອກຂຶ້ນ. ແຕ່ເປັນເວລາຫຼາຍອາທິດແລ້ວທີ່ບໍ່ມີຕົ້ນອ່ອນໃດໆປົ່ງອອກມາເລີຍ, ແລະ ລີຊິນກໍເລີ່ມທໍ້ໃຈ. ເມື່ອແມ່ຂອງລີຊິນເຫັນວ່າລູກກຳລັງເປັນກັງວົນໃຈ, ແມ່ຂອງເຂົາຈຶ່ງໄດ້ຖາມວ່າເຂົາມີບັນຫາຫຍັງບໍ. “ເມັດພືດຂອງຂ້ອຍມັນບໍ່ງອກຂຶ້ນມາ,” ລີຊິນເວົ້າ. “ຂ້ອຍຄິດວ່າຂ້ອຍຄົງຈະບໍ່ມີຕົ້ນໝາກຄາຍເປັນຂອງຕົວເອງແລ້ວລະ.” ແມ່ຂອງເຂົາເລີ່ມກ່າວ “ທີ່ຈິງແລ້ວ, ເມັດນີ້ຕ້ອງຈະເລີນເຕີບໂຕຂຶ້ນອີກຫຼາຍ. ຄິດໆໄປມັນກໍຄ້າຍກັບລູກນັ້ນແຫຼະ. ຕອນທີ່ລູກເກີດມາ, ລູກກໍຍັງເປັນເດັກນ້ອຍໆ ແລ້ວສິ່ງທີ່ເຮັດໄດ້ກໍມີແຕ່ກິນແລະກໍນອນ. ແລ້ວເບິ່ງຕົວລູກເອງຕອນນີ້ແມ້! ລູກເປັນເດັກໜຸ່ມ ທີ່ສາມາດຍ່າງ, ໂອ້ລົມ, ແລະຄິດເອງເປັນແລ້ວ! ຕົ້ນໝາກຄາຍຕົ້ນນີ້ອາດໃຊ້ເວລາຫຼາຍປີກວ່າຈະໃຫຍ່, ແຕ່ຫາກລູກເບິ່ງແຍງມັນດີໆ ມື້ໜຶ່ງລູກກໍຈະສາມາດນັ່ງໃຕ້ຮົ່ມເງົາຂອງຕົ້ນໝາກຄາຍນີ້ ແລະ ກິນໝາກຂອງມັນຢ່າງມີຄວາມສຸກເດີ້.” ເມື່ອລີຊິນຄິດກ່ຽວກັບສິ່ງເລົ່ານີ້, ເຂົາກໍກັບມີຄວາມຫວັງຂຶ້ນອີກຄັ້ງ. ເຂົາໄດ້ຮຽນຮູ້ໃນຊັ້ນຮຽນຂອງເຂົາແລ້ວວ່າ ເມັດພືດຈະຕ້ອງຜ່ານການປ່ຽນແປງຫຼາຍຢ່າງ ກ່ອນຈະສາມາດມີຕົ້ນກ້າງອກອອກມາ.

ຈາກນັ້ນ, ມື້ໜຶ່ງໃນລະດູໃບໄມ້ປົ່ງ ລີຊິນໄດ້ອອກໄປທີ່ເນີນດິນນັ້ນ, ດັ່ງທີ່ເຂົາເຮັດມາທຸກໆມື້ ແລະ ດ້ວຍຄວາມຕື່ນເຕັ້ນຢ່າງທີ່ສຸດ ເຂົາໄດ້ເຫັນຕົ້ນກ້າອ່ອນສີຂຽວແຕກໜໍ່ຂຶ້ນມາເໜືອພື້ນດິນນັ້ນ! ຕົ້ນໝາກຄາຍຂອງເຂົາເລີ່ມງອກຂຶ້ນແລ້ວ! ເຂົາຈຶ່ງແລ່ນໄປຍັງເຮືອນເພື່ອນບ້ານຂອງເຂົາ, ເຊິ່ງເປັນຊາວນາແລະບອກກັບນາງກ່ຽວກັບຂ່າວທີ່ໜ້າຕື່ນເຕັ້ນນີ້. ນາງໄດ້ໃຫ້ຄຳແນະນຳແກ່ເຂົາກ່ຽວກັບວິທີດູແລຮັກສາຕົ້ນກ້າຂະນະທີ່ມັນຍັງອ່ອນແລະເປາະບາງ, ແລະ ເຂົາກໍຟັງທຸກຄຳເວົ້າຂອງນາງຢ່າງຕັ້ງໃຈ, ດ້ວຍຄວາມກະຕືລືລົ້ນທີ່ຈະບຳລຸງລ້ຽງຕົ້ນໝາກຄາຍຂອງເຂົາຢ່າງສຸດຄວາມສາມາດ. “ໃນບໍ່ຊ້າເຮົາຈະມີໜ່ວຍໝາກຄາຍມາໃຫ້ເຈົ້າຫຼາຍໜ່ວຍ ເພື່ອເປັນການຂອບໃຈສຳລັບຄຳແນະນຳທີ່ດີ,” ລີຊິນກ່າວ. ແຕ່ເພື່ອນບ້ານຄົນນັ້ນໄດ້ແຕ່ຍິ້ມ “ລີຊິນ ເຈົ້າຈື່ໄດ້ບໍ ເຖິງຕອນທີ່ເຈົ້າຕ້ອງອົດທົນຂະໜາດໃດ ຕອນທີ່ລໍຖ້າໃຫ້ແກນກາງຂອງລູກໝາກຄາຍມັນແຫ້ງ?” ລີຊິນງຶກຫົວ. “ແລະເຈົ້າຈື່ໄດ້ບໍເຖິງຕອນທີ່ເຈົ້າຕ້ອງມີຄວາມອົດທົນຫຼາຍຂຶ້ນໄປອີກໃນຕອນທີ່ເຈົ້າລໍຖ້າໃຫ້ເມັດງອກອອກເປັນຕົ້ນກ້າ?” ລີຊິນຈື່ໄດ້ເຊັ່ນກັນ. ເພື່ອນບ້ານກ່າວ “ເອົາລະ, ມັນຈະໃຊ້ເວລາດົນຍິ່ງຂຶ້ນໄປອີກກວ່າຕົ້ນອ່ອນຂອງເຈົ້າຈະກາຍເປັນຕົ້ນໄມ້ ແລະ

*ໃຊ້ເວລາຫຼັງຈາກນັ້ນອີກໄລຍະໜຶ່ງກວ່າມັນຈະອອກໝາກຜົນ. ອາດຕ້ອງໃຊ້ເວລາເປັນປີໆກວ່າຕົ້ນໝາກຄາຍນີ້ພ້ອມທີ່ຈະອອກຜົນໃຫ້ເຈົ້າກິນຢ່າງມີຄວາມສຸກ."*

*ດັ່ງນັ້ນ ລີຊິນຈຶ່ງໄດ້ເອົາໃຈໃສ່ຕົ້ນໝາກຄາຍ ແລະ ເບິ່ງແຍງມັນໃຫ້ໄດ້ຮັບສິ່ງທີ່ຈຳເປັນເພື່ອມັນຈະເລີນງອກງາມຂຶ້ນຈາກຕົ້ນກ້າກາຍເປັນຕົ້ນອ່ອນ ແລະ ຈາກຕົ້ນອ່ອນກາຍເປັນຕົ້ນໄມ້. ເທື່ອລະເລັກເທື່ອລະນ້ອຍ, ຕົ້ນໄມ້ເຕີບໂຕສູງຂຶ້ນແລະແຕກກິ່ງກ້ານສາຂາ, ເຊັ່ນດຽວກັນທີ່ຕົວເຂົາເອງກໍຈະເລີນເຕີບໂຕຂຶ້ນ. ແລະໃນມື້ໜຶ່ງຕອນທີ່ລີຊິນກັບມາຈາກໂຮງຮຽນ, ເຂົາເຫັນໜ່ວຍໝາກຄາຍໜ່ວຍທຳອິດຂອງຕົ້ນເລີ່ມເຕີບໂຕຂຶ້ນ ຈາກຈຸດທີ່ເຄີຍເປັນພຽງດອກໄມ້ມາກ່ອນ. ອີກຄັ້ງໜຶ່ງທີ່ເຂົາຮູ້ສຶກວ່າຫົວໃຈຂອງເຂົາເຕັມປ່ຽມໄປດ້ວຍຄວາມສຸກ ເໝືອນຕອນທີ່ເຂົາເຫັນຕົ້ນກ້າງອກອອກຈາກເມັດພືດເປັນຄັ້ງທຳອິດ. ແລະ ອີກເທື່ອໜຶ່ງທີ່ເຂົາຮູ້ວ່າ ເຂົາຈະຕ້ອງເຝິກຄວາມອົດທົນ. ເນື່ອງດ້ວຍເຂົາຕ້ອງລໍຈົນກວ່າໜ່ວຍໝາກຄາຍເຫຼົ່ານັ້ນ ຈະສຸກພ້ອມສຳລັບຮັບປະທານ.*

E. **ເກມ: "ຊອກຫາຜູ້ເລີ້ມ"**

ເລືອກເດັກຄົນທຳອິດໜຶ່ງຄົນເອົາຜ້າປິດຕາ ແລ້ວໃຫ້ເຂົາອອກໄປຈາກເດັກນ້ອຍທີ່ຍັງເຫຼືອໃນກຸ່ມ. ແລ້ວເລືອກເດັກອີກຄົນໜຶ່ງຢ່າງງຽບໆໃຫ້ເປັນ "ຜູ້ເລີ້ມ". ກ່ອນທີ່ຈະເອີ້ນເອົາເດັກຄົນທຳອິດກັບຄືນມາຫາກຸ່ມ, ໃຫ້ຊ່ວຍເຝິກຊ້ອມເດັກຄົນອື່ນໆປະຕິບັດຕາມທ່າທາງຂອງ "ຜູ້ເລີ້ມ". ຕົວຢ່າງເຊັ່ນ, ຖ້າຫາກເຂົາຕົບມື ທຸກຄົນທີ່ເຫຼືອກໍເຮັດຕາມເຊັ່ນກັນ. ຫາກເຂົາເລີ່ມໂປກມືລາ ເດັກທຸກຄົນກໍເຮັດຕາມເຊັ່ນກັນ. ຕອນນີ້ໃຫ້ເດັກຄົນທຳອິດເອົາຜ້າປິດຕາອອກ ແລະ ເຂົ້າໄປໃນກຸ່ມຄືນ. ເຂົາຕ້ອງເບິ່ງຢ່າງຖ້ວນຖີ່ເພື່ອພະຍາຍາມຄົ້ນຫາວ່າໃຜເປັນ "ຜູ້ເລີ້ມ". ໃນຂະນະດຽວກັນ ເດັກຄົນອື່ນໆຕ້ອງພະຍາຍາມບໍ່ໃຫ້ເບິ່ງໄປທີ່ເດັກນຳພາເຮັດທ່າທາງຢ່າງໃກ້ຊິດ ຫຼື ເບິ່ງເລື້ອຍຫຼາຍຈົນເກີນໄປ, ເຊິ່ງຈະສາມາດເຮັດໃຫ້ເດັກທີ່ກຳລັງຄົ້ນຫາພົບຢ່າງງ່າຍດາຍ. ເດັກນ້ອຍສາມາດປ່ຽນຜຽນກັນເປັນ "ຜູ້ເລີ້ມ" ຫຼື ເປັນຜູ້ທີ່ຈະທວາຍ.

F. **ການທາສີ: ຮູບທີ 23**

G. **ການສວດອະທິຖານປິດ**

## ບົດທີ 24

A. **ການທ່ອງອອກສຽງ ແລະ ການທ່ອງຈຳບົດສວດອະທິຖານ**

ຕາມປົກກະຕິແລ້ວ ໃຫ້ເປີດຊັ້ນຮຽນດ້ວຍການສວດອະທິຖານ ແລ້ວຈາກນັ້ນກໍທົບທວນກັບນັກຮຽນ ກ່ຽວກັບບົດສວດອະທິຖານທີ່ເດັກໆໄດ້ທ່ອງຈໍາຈົນຂຶ້ນໃຈ ໃນຊ່ວງບົດຮຽນສອງສາມບົດທີ່ຜ່ານມາ.

B. ບົດເພງ (ລວມເຖິງການທວນຄືນເພງກ່ອນໆ)

## ໝັ້ນຄົງໃນຄວາມຮັກຂອງພຣະຜູ້ເປັນເຈົ້າ

G C
ເຮົາຍ່າງ, ເຮົາຍ່າງ
D G
ເຮົາຍ່າງໃນຫົນທາງຂອງພຣະອົງ
G C
ເຮົາໝັ້ນຄົງ, ເຮົາໝັ້ນຄົງ
D G
ໝັ້ນຄົງໃນຄວາມຮັກຂອງພຣະອົງ
G C
ເຮົາຍ່າງໃນຫົນທາງຂອງພຣະອົງ
D G
ເມື່ອມີບັນຫາເຂົ້າມາໃນຫົນທາງ
G C
ເຮົາໝັ້ນຄົງໃນຄວາມຮັກຂອງພຣະອົງ
D G
ແລະໃນຫົນທາງຂອງພຣະອົງເຮົາຈະຄົງຢູ່

ເຮົາຮັບໃຊ້, ເຮົາຮັບໃຊ້
ເຮົາຮັບໃຊ້ຈຸດປະສົງຂອງພຣະອົງ
ເຮົາໝັ້ນຄົງ, ເຮົາໝັ້ນຄົງ
ໝັ້ນຄົງໃນຄວາມຮັກຂອງພຣະອົງ
ເຮົາຮັບໃຊ້ຈຸດປະສົງຂອງພຣະອົງ
ເຮັດໜ້າທີ່ຂອງເຮົາຢູ່ສະເໝີ
ເຮົາໝັ້ນຄົງໃນຄວາມຮັກຂອງພຣະອົງ

ແລະຮັບໃຊ້ດ້ວຍຫົວໃຈທີ່ສຸກສັນ

ເຮົາຢືນ, ເຮົາຢືນ
ເຮົາຢືນ, ຫົວໃຈຫັນໄປຫາພຣະອົງ
ເຮົາໝັ້ນຄົງ, ເຮົາໝັ້ນຄົງ
ໝັ້ນຄົງໃນຄວາມຮັກຂອງພຣະອົງ
ເຮົາຢືນ, ຫົວໃຈຫັນໄປຫາພຣະອົງ
ບໍ່ເຄີຍສົງໃສໃນການຊ່ວຍເຫຼືອຂອງພຣະອົງ
ເຮົາໝັ້ນຄົງໃນຄວາມຮັກຂອງພຣະອົງ
ແລະຄວາມເສົ້າໂສກທັງໝົດຂອງເຮົາຈາງຫາຍໄປ

## C. ການທ່ອງຈຳພຣະວັດຈະນະ

ແນວຄິດຂ້າງລຸ່ມນີ້ຈະຊ່ວຍເຈົ້າແນະນຳພຣະວັດຈະນະ ທີ່ເດັກນ້ອຍຈະຈົດຈຳໃນບົດຮຽນສຸດທ້າຍນີ້, ເຊິ່ງເນັ້ນກ່ຽວກັບຫົວຂໍ້ຂອງຄວາມໝັ້ນຄົງ.

ໜຶ່ງໃນຄຸນລັກສະນະທີ່ສຳຄັນທີ່ສຸດຂອງບຸກຄົນໜຶ່ງ ທີ່ຮັກພຣະຜູ້ເປັນເຈົ້າຢ່າງແທ້ຈິງ ຄືຄວາມໝັ້ນຄົງ. ບໍ່ວ່າຈະເກີດສິ່ງໃດຂຶ້ນໃນຊີວິດ, ພວກເຮົາຄວນລະເລິກເຖິງພຣະຜູ້ເປັນເຈົ້າ ແລະ ຄວາມຮັກທີ່ເຮົາມີຕໍ່ພຣະອົງຢູ່ສະເໝີ. ດັ່ງນັ້ນ ບໍ່ວ່າຄົນອື່ນຈະເວົ້າຫຍັງ ຫຼື ເຮັດຫຍັງກັບເຮົາກໍຕາມ ກໍຈະບໍ່ມີຜົນກະທົບຕໍ່ຄວາມສັດທາທີ່ພວກເຮົາມີໃນພຣະອົງ. ພວກເຮົາຮັກພຣະອົງ ແລະ ເຄົາລົບກົດບັນຍັດ ແລະ ຄຳສອນຂອງພຣະອົງ. ເພື່ອເຕືອນໃຫ້ພວກເຮົາຈົ່ງຈົດຈຳໄດ້ເຖິງຄວາມສຳຄັນຂອງຄວາມຫມັ້ນຄົງຢູ່ຕະຫຼອດເວລາ, ຂໍໃຫ້ພວກເຮົາທ່ອງຈຳພຣະວັດຈະນະຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌:

**"ຫາກເຈົ້າຍັງຄົງຫມັ້ນຄົງ ຢູ່ໃນຈຸດປະສົງຂອງພຣະຜູ້ເປັນນາຍຂອງເຈົ້າ, ສະຖານະຂອງເຈົ້າຈະລ້ຳເລີດຢ່າງສູງສຸດ."**[127]

*ຢ່າງສູງສຸດ*

1. ສວນເລົ່ານັ້ນສວຍງາມຍິ່ງກວ່າສວນໃດໆທີ່ ທ້າວ ຊາເວຍ ເຄີຍພົບເຫັນມາ. ເຂົາບໍ່ສາມາດຈິນຕະນາການເຖິງສວນທີ່ສວຍງາມຢ່າງສູງສຸດກວ່ານີ້.
2. ແມ່ຂອງຄີເລັດໂສໄດ້ເຮັດເຄັກເປັນພິເສດກ້ອນໜຶ່ງໃຫ້ກັບຄອບຄົວ. ພວກເຂົາກິນເຄັກນັ້ນຢ່າງພຶງພໍໃຈຫຼາຍ, ແລະ ເວົ້າກັນວ່າເຄັກນັ້ນແຊບຢ່າງສູງສຸດ.

*ລ້ຳເລີດ*

1. ກ່ອນເຂົ້ານອນທຸກຄືນນາງ ມາທາ ສວດບົດອະທິຖານ ແລະ ຮູ້ສຶກຢູ່ໃກ້ກັບພຣະຜູ້ເປັນເຈົ້າ. ເມື່ອນາງໄປນອນ ຈິດວິນຍານຂອງນາງກໍຢູ່ໃນສະພາວະທີ່ລ້ຳເລີດ.
2. ໃນທີ່ປະຊຸມ ກຸມາ ກຳລັງກ່າວສຸນທົນພົດເລື່ອງສັນຕິພາບຂອງໂລກ ແລະ ຄວາມດີງາມຂອງມະນຸດຊາດ. ກຸມາ ກຳລັງເວົ້າເຖິງແນວຄິດທີ່ລ້ຳເລີດ.

*ຍັງຄົງໝັ້ນຄົງ*

1. ເພື່ອນຂອງນາງ ໂລດແມລີ່ ເວົ້າກັບນາງຕະຫຼອດວ່າ ດວງດາວເປັນຕະກຽງນ້ອຍໆທີ່ລອຍຢູ່ເທິງທ້ອງຟ້າ. ແຕ່ນາງ ໂລດແມລີ່ ໄດ້ຮຽນໃນຊັ້ນຮຽນມາວ່າ ດາວແຕ່ລະດວງນັ້ນເປັນດວງອາທິດທີ່ຢູ່ຫ່າງໄກອອກໄປ. ນາງ ໂລດແມລີ່ ບໍ່ໄດ້ປ່ຽນຄວາມຄິດຂອງນາງ. ນາງຍັງຄົງໝັ້ນຄົງຢູ່ໃນສິ່ງທີ່ນາງຮູ້ວ່າເປັນຄວາມຈິງ.
2. ມີຄົນບອກກັບນາງ ໂມນາ ວ່າການສວດອະທິຖານທຸກມື້ບໍ່ແມ່ນສິ່ງສຳຄັນ, ແຕ່ນາງ ໂມນາ ກໍຍັງຄົງສວດອະທິຖານຕໍ່ໄປ ເພາະນາງຮູ້ດີວ່າການອະທິຖານເປັນກົດຂອງພຣະຜູ້ເປັນເຈົ້າ. ນາງ ໂມນາ ຍັງຄົງໝັ້ນຄົງໃນການເຊື່ອຟັງຕໍ່ກົດຂອງການອະທິຖານ.

## D. ເລື່ອງລາວ

*ເຈົ້າອາດຈະຮູ້ວ່າ ທ່ານ ນາງ ບາຮີເຍຫ໌ ຄານຸມ ເປັນນ້ອງສາວຂອງພຣະອັບດຸລບາຮາ. ທ່ານນາງມີອາຍຸພຽງຫົກປີເມື່ອຕອນທີ່ພຣະບິດາອັນເປັນທີ່ຮັກຍິ່ງກໍຄື ພຣະບາຮາອຸລລາຫ໌ ຊົງຖືກຈັບກຸມ ແລະ ຊົງຖືກຈອງຈຳໃນຄຸກໂດຍລັດຖະບານທີ່ອະຍຸຕິທຳ. ເຈົ້າຈື່ຈາກເລື່ອງລາວອື່ນທີ່ຄອບຄົວຂອງທ່ານນາງເປັນສ່ວນໜຶ່ງຂອງຄົນທີ່ສູງສັກ. ແຕ່ວ່າ ທັນທີທີ່ພຣະບິດາຖືກຈັບກຸມ, ຊັບສິນທັງໝົດຂອງຄອບຄົວນີ້ໄດ້ຖືກຍຶດໄປໝົດ. ທີ່ດິນ, ເຮືອນຊານ, ເຄື່ອງໃຊ້ພາຍໃນບ້ານ, ສິ່ງຂອງທີ່ເປັນຂອງພວກທ່ານ - ທັງໝົດນີ້ແມ່ນຖືກເອົາໄປໝົດ. ຄອບຄົວເກືອບບໍ່ເຫຼືອຫຍັງເລີຍ, ບໍ່ມີແມ່ນແຕ່ອາຫານທີ່ຈະຮັບປະທານ. ເມື່ອທ່ານນາງແລະພຣະພາຣາດອນ (ອ້າຍ) ກໍຄືພຣະອັບດຸລບາຮາ, ຮູ້ສຶກຫິວແລະກໍບໍ່ມີເຂົ້າຈີ່ໃຫ້ແກ່ພວກທ່ານ, ພຣະມານດາກໍໄດ້ເທແປ້ງຈຳນວນໜຶ່ງໃສ່ຝາມືຂອງພວກທ່ານເພື່ອໃຫ້ຮັບປະທານເປັນອາຫານແທນ.*

*ຫຼັງຈາກເວລາຜ່ານໄປ, ພຣະບິດາຂອງພວກທ່ານໄດ້ຊົງຖືກປ່ອຍ ແລະ ຖືກບັງຄັບໂດຍລັດຖະບານ ໃຫ້ລະຖິ້ມບ້ານເກີດເມືອງນອນຂອງພວກທ່ານ. ຈາກນັ້ນ ທ່ານ ນາງ ບາຮີເຍຫ໌ ຄານຸມ ແລະ ຄອບຄົວຂອງທ່ານນາງໄດ້ອອກເດີນທາງ ທ່າມກາງຄວາມໜາວເຢັນອັນເຈັບ*

*ປວດຂອງລະດູໜາວ ໄປຍັງເມືອງແບກແດດໃນປະເທດເພື່ອນບ້ານ. ເພື່ອໃຫ້ໄປເຖິງເມືອງ, ພວກທ່ານຕ້ອງຂ້າມພູເຂົາໜ່ວຍໃຫຍ່ ທີ່ປົກຄຸມໄປດ້ວຍຫິມະ. ການເດີນທາງເຕັມໄປດ້ວຍອັນຕະລາຍ, ແລະ ອຸປະກອນທີ່ເຂົາເຈົ້າສະໜອງໃຫ້ກໍບໍ່ພຽງພໍ. ເສື້ອຜ້າຂອງພວກທ່ານປົກປ້ອງຈາກຫິມະ ແລະ ຄວາມໜາວເຢັນໄດ້ພຽງເລັກນ້ອຍ. ດ້ວຍຄວາມຊ່ວຍເຫຼືອຈາກໂຕລາຈຳນວນໜຶ່ງ, ພວກທ່ານຈຶ່ງຄ່ອຍໆຍ່າງໄປຕາມຍອດພູສູງ. ຫຼາຍຄັ້ງ, ທີ່ພວກທ່ານຕ້ອງຕັ້ງຄ້າຍພັກຄ້າງຄືນໃນປ່າທຸລະກັນດານຫຼາຍ. ແຕ່ພຣະຜູ້ເປັນເຈົ້າປົກປ້ອງພວກທ່ານ, ແລະ ດ້ວຍຄວາມຊ່ວຍເຫຼືອອັນໄຮ້ຂີດຈຳກັດຂອງພຣະຜູ້ເປັນເຈົ້າ, ພວກທ່ານເດີນທາງມາເຖິງເມືອງແບກແດດຢ່າງປອດໄພຫຼັງຈາກສາມເດືອນ. ທ່ານ ນາງ ບາຮີເຍຫ໌ ຄານຸມ ຈະບໍ່ມີວັນກັບໄປດິນແດນບ້ານເກີດຂອງທ່ານນາງອີກຄັ້ງ.*

*ຕະຫຼອດຊີວິດທີ່ເຫຼືອຂອງ ທ່ານ ນາງ ບາຮີເຍຫ໌ ຄານຸມ ຮ່ວມທຸກຮ່ວມສຸກ ແລະ ການຂັບໄລ່ຮ່ວມກັບພຣະບິດາຂອງທ່ານນາງ. ໃນທີ່ສຸດ, ລັດຖະບານກໍ່ເນລະເທດພຣະບາຮາອຸລລາຫ໌ ໄປຍັງເມືອງຄຸກຂອງເມືອງອັກຄາ, ເຊິ່ງເປັນບ່ອນທີ່ທ່ານນາງແລະຄອບຄົວອາໃສຢູ່ ທ່າມກາງບັກອາສະຍາກອນທີ່ບໍ່ໜ້າເພິ່ງປະສົງຫຼາຍທີ່ສຸດ. ເມື່ອພຣະບິດາຜູ້ເປັນທີ່ຮັບຍິ່ງໄດ້ຈາກໂລກນີ້ໄປ, ທ່ານ ນາງ ບາຮີເຍຫ໌ ຄານຸມ ໃຫ້ການສະໜັບສະໜູນຢ່າງຈິງຮັກພັກດີຕໍ່ພຣະພາຮາດອນ (ອ້າຍ) ຂອງທ່ານນາງກໍຄືພຣະອັບດຸລບາຮາ, ເຊິ່ງໄດ້ຮັບແຕ່ງຕັ້ງໃຫ້ເປັນຜູ້ນຳຂອງສາສະໜາຂອງພຣະບິດາ. ແລະ ຫຼາຍປີຕໍ່ມາ, ເມື່ອພຣະອັບດຸນບາຮາສະເດັດໄປສູ່ໂລກໜ້າເຊັ່ນກັນ, ທ່ານ ນາງ ບາຮີເຍຫ໌ ຄານຸມ ກາຍເປັນຜູ້ສະໜັບສະໜູນທີ່ຍິ່ງໃຫຍ່ທີ່ສຸດ ແລະ ເປັນຜູ້ພິທັກທີ່ເດັດດ່ຽວໝັ້ນຄົງຕໍ່ພຣະນັດດາ (ຫຼານຊາຍ) ກໍຄືທ່ານ ໂຊກິ ເອຟເຟນດີ, ເຊິ່ງໄດ້ຮັບຂະໜານນາມວ່າເປັນຜູ້ພິທັກສາສະໜາ ໂດຍພຣະອັບດຸລບາຮາ.*

*ຕອນນີ້ ທ່ານ ນາງບາຮີເຍຫ໌ ຄານຸມກໍຢູ່ໃນໄວຊະລາ. ຊີວິດຂອງທ່ານນາງເຕັມໄປດ້ວຍຄວາມຍາກລຳບາກແລະຄວາມປັ່ນປ່ວນ. ຊີວິດຂອງທ່ານນາງຜ່ານພົ້ນຈາກຄວາມທຸກຍາກໜຶ່ງ ໄປສູ່ອີກຄວາມທຸກຍາກໜຶ່ງ, ຈາກຄວາມທ້າຍຍະນະໜຶ່ງ ໄປສູ່ອີກຄວາມທ້າຍຍະນະໜຶ່ງ. ແຕ່ຈິດໃຈຂອງທ່ານນາງຍັງຄົງໜັກແໜ້ນ, ແລະ ຫົວໃຈຂອງທ່ານນາງກໍເຕັມປ່ຽມໄປດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າຢູ່ສະເໝີ. ທ່ານນາງໝັ້ນຄົງແລະແນ່ວແນ່ ຈົນເຖິງຊ່ວງທ້າຍສຸດໃນຊີວິດຂອງທ່ານນາງ.*

## E. ເກມ: "ມືທີ່ຊ່ວຍເຫຼືອ"

ຂໍໃຫ້ເດັກນ້ອຍຈັບຄູ່ ແລະ ຈັບມືກັບຄູ່ຂອງເຂົາເຈົ້າ. ທຳອິດໃຫ້ພວກເຂົາຍ່າງອ້ອມໆນຳກັນເປັນຄູ່, ໂດຍໃຫ້ພວກເຂົາມືນຕາ. ພວກເຂົາຄວນຈະເລີ່ມຕົ້ນດ້ວຍການຍ່າງບາດກ້າວນ້ອຍໆ, ແລ້ວບາດຍ່າງຂອງພວກເຂົາຄວນຈະຄ່ອຍໆກາຍເປັນກ້າວຍາວອອກແລະຍາວອອກ. ແຕ່ລະຄູ່ຄວນດູແລບໍ່

ໃຫ້ຕຳຄົນອື່ນ. ຈາກນັ້ນ, ໃຫ້ໜຶ່ງຄົນໃນແຕ່ລະຄູ່ຄວນປິດຕາ, ແລະ ພວກເຂົາຄວນອອກກຳລັງກາຍຢ່າງອີກຄັ້ງ. ບັດນີ້ຫາກພວກເຂົາຕ້ອງຫຼີກລ້ຽງການຕຳຄົນອື່ນ, ແມ່ນໃຫ້ເດັກນ້ອຍອີກຄົນຈະຕ້ອງນຳທາງເພື່ອນຂອງເຂົາ. ບອກພວກເຂົາວ່າພວກເຂົາຕ້ອງໃຊ້ສັນຍານໂດຍການສຳພັດຢ່າງດຽວ. ເຈົ້າຄວນຊ່ວຍໃຫ້ພວກເຂົາສ້າງສັນຍານກ່ອນທີ່ພວກເຂົາຈະເລີ່ມຫຼິ້ນ - ຕົວຢ່າງ, ການບີບມືໜຶ່ງຄັ້ງອາດຈະໝາຍຄວາມວ່າ "ຢຸດ", ສອງຄັ້ງແມ່ນ "ຖອຍຫຼັງ", ສາມຄັ້ງ "ລ້ຽວຂວາ", ແລະສີ່ຄັ້ງ "ລ້ຽວຊ້າຍ".

F. **ການທາສີ: ຮູບທີ 24**

G. **ການສວດອະທິຖານປິດ**



“ໂອ ບຸດແຫ່ງທັມ! ຄຳແນະນຳແລກຂອງພຣະອົງຄື: ຈົ່ງມີຫົວໃຈອັນບໍລິສຸດ,
ເມດຕາ ແລະ ຜ່ອງໃສ...”



“ພວກເຈົ້າຈິ່ງເດີນໄປຕາມຫົນທາງແຫ່ງຄວາມຍຸຕິທັມ,  ເພາະຫົນທາງນີ້,  ຄື ຫົນທາງຕົງຢ່າງແທ້ຈິງ.”



“ໂອ ມິດສະຫາຍ! ໃນອຸທະຍານຂອງຫົວໃຈເຈົ້າ ຢ່າໄດ້ເພາະປູກສິ່ງອື່ນໃດ
ນອກຈາກກຸຫຼາບແຫ່ງຄວາມຮັກ...”



“ວາຈາສັດຕືຣາກຖານຂອງຄຸນນະທັມທັງປວງ”



“ການໃຫ້ ແລະ ຄວາມເອື້ອເຟື້ອຄືຄຸນລັກສະນະຂອງເຮົາພຣະອົງ; ຂໍ ຄວາມສຸກສະຫວັດດີ ຈົ່ງມີແດ່ຜູ້ທີ່ປະດັບຕົນເອງ ດ້ວຍຄຸນນະທັມຂອງເຮົາພຣະອົງ.”



“ພອນຈົ່ງມີແດ່ຜູ້ທີ່ນຶກເຖິງພີ່ນ້ອງຂອງເຂົາກ່ອນຕົນເອງ”



“ໂອ ບຸດແຫ່ງມະນຸດ! ຈົ່ງຍິນດີໃນຄວາມປິຕິຂອງຫົວໃຈ, ເພື່ອວ່າເຈົ້າຈະຄູ່ຄວນຕໍ່ການພົບກັບເຮົາ ແລະ ສະທ້ອນຄວາມງາມຂອງເຮົາ.”



“ເຮົາຄວນສະແດງອອກຕະຫຼອດເວລາ ວາຈາສັດຊື່ ແລະ ຄວາມຈິງໃຈຂອງເຮົາ...”



“ໂອ ບຸດແຫ່ງມະນຸດ! ຈົ່ງຖ່ອມຕົນຕໍ່ໜ້າເຮົາ, ເພື່ອວ່າເຮົາຈະໄດ້ມາຢ້ຽມເຈົ້າ
ດ້ວຍຄວາມກະລຸນາ.”



"ເຈົ້າຈົ່ງເປັນສຸກ. ເຈົ້າຈົ່ງພໍໃຈ. ຈົ່ງລຸກຂຶ້ນເພື່ອຖວາຍຄໍາຂອບໃຈຕໍ່ພຣະຜູ້ເປັນເຈົ້າ, ເພື່ອວ່າຄວາມຮູ້ຂອງເຈົ້ານັ້ນ ຈະນໍາມາເຊິ່ງການເພີ່ມຂຶ້ນຂອງພຣະກະລຸນາທິຄຸນ."



"... ຈົ່ງໃຫ້ເຄື່ອງປະດັບຂອງເຈົ້າ ຄືການໃຫ້ອະໄພແລະຄວາມເມດຕາ ເຊິ່ງ
ເປັນສິ່ງນຳຄວາມປິຕິຍິນດີມາສູ່ຫົວໃຈ ຂອງຜູ້ເປັນທີ່ໂປດປານຂອງພຣະຜູ້
ເປັນເຈົ້າ."



“ໂອ ປະຊາຊົນ, ຈົ່ງຕົບແຕ່ງວາຈາຂອງເຈົ້າດ້ວຍວາຈາສັດຊື່, ແລະ ປະດັບ
ຈິດວິນຍານຂອງເຈົ້າ ດ້ວຍເຄື່ອງປະດັບແຫ່ງຄວາມຊື່ສັດ.”



“ອານາຈັກຂອງພຣະຜູ້ເປັນເຈົ້າຕັ້ງຢູ່ບົນຄວາມສະເໝີພາບ ແລະ ຄວາມຍຸຕິທັມ, ແລະ ບົນຄວາມເມດຕາ, ຄວາມເຫັນອົກເຫັນໃຈ, ແລະ ຄວາມກະລຸນາຕໍ່ຈິດວິນຍານທຸກດວງທີ່ມີຊີວິດຢູ່.”



“ຈົ່ງຮູ້ໄວ້ວ່າ ເຄື່ອງຕົກແຕ່ງອັນແທ້ຈິງ ປະກອບດ້ວຍຄວາມຮັກໃນພຣະຜູ້ເປັນເຈົ້າ ແລະ ການປ່ອຍວາງຈາກທຸກສິ່ງນອກຈາກພຣະອົງ...”



"ແຫຼ່ງທີ່ມາຂອງຄວາມຮຸ່ງເຮືອງທັງປວງ ຄືການຍອມຮັບສິ່ງໃດກໍຕາມ ທີ່ພຣະຜູ້ຊົງເປັນນາຍໄດ້ຊົງປະທານໃຫ້, ແລະ ຄວາມພໍໃຈໃນສິ່ງທີ່ພຣະຜູ້ເປັນເຈົ້າຊົງບັນຍັດ."



“ພຣະພອນຈົ່ງມີແດ່ຜູ້ທີ່ຄົບຫາສະມາຄົມ ກັບມະນຸດທຸກຄົນ ດ້ວຍດວງຈິດ
ແຫ່ງຄວາມກະລຸນາ ແລະ ຄວາມຮັກໄຄ່ຢ່າງທີ່ສຸດ.”



"ແຫຼ່ງທີ່ມາຂອງຄວາມກ້າຫານ ແລະ ພະລັງ ຄືການສົ່ງເສີມຖ້ອຍຄຳ ຂອງພຣະຜູ້ເປັນເຈົ້າ ແລະ ຄວາມໝັ້ນຄົງໃນຄວາມຮັກຂອງພຣະອົງ."



“ຢ່າສູນເສຍຄວາມໄວ້ວາງໃຈໃນພຣະຜູ້ເປັນເຈົ້າ. ຈົ່ງມີຄວາມຫວັງຢູ່ສະ ເ
ໝີ, ເພາະພຣະກະລຸນາຂອງພຣະຜູ້ເປັນເຈົ້າ ບໍ່ເຄີຍຢຸດຫຼັ່ງໄຫຼມາສູ່ມະນຸດ.”



“ຄວາມໄວ້ວາງໃຈໄດ້ເປັນປະຕູທີ່ຍິ່ງໃຫຍ່ທີ່ສຸດ ທີ່ຈະນຳພາໄປສູ່ຄວາມງຽບສະຫງົບ ແລະຄວາມປອດໄພຂອງປະຊາຊົນ.”



“ໂອ ປະຊາຊົນ, ຂໍຊົງເຮັດໃຫ້ຫົວໃຈຂອງເຂົາຖືກເຜົາໄໝ້, ດ້ວຍເພີງແຫ່ງ
ຄວາມຮັກອັນອົບອຸ່ນຂອງພຣະຜູ້ເປັນເຈົ້າ, ເພື່ອວ່າເຈົ້າຈະເຜົາໄໝ້ຫົວໃຈ
ຂອງຜູ້ອື່ນ.”



"ໂອ ບຸດແຫ່ງຊີວິດ! ເຈົ້າຄືຕະກຽງຂອງເຮົາແລະແສງຂອງເຮົາຢູ່ໃນຕົວເຈົ້າ.
ຈົ່ງສ່ອງແສງດ້ວຍຄວາມສະຫວ່າງສະໄຫວຈາກຕະກຽງ ແລະ ຢ່າສະແຫວງ
ຫາໃຜອື່ນນອກຈາກເຮົາ."



"ຂໍຄວາມສຸກຈົ່ງມີແດ່ຜູ້ມີຄວາມຈົງຮັກພັກດີ ຜູ້ເຊິ່ງໄດ້ຮັບການຕົກແຕ່ງດ້ວຍພູສາ ແຫ່ງຄວາມພຽນພະຍາຍາມຢ່າງສູງ ແລະ ໄດ້ລຸກຂຶ້ນຮັບໃຊ້ສາສະໜານີ້."



“ແທ້ຈິງແລ້ວ, ພຣະອົງຊົງເພີ່ມລາງວັນ ໃຫ້ແກ່ຜູ້ທີ່ທົນທານ
ດ້ວຍຄວາມອົດທົນ.”



“ຫາກເຈົ້າຍັງຄົງໝັ້ນຄົງ ຢູ່ໃນຈຸດປະສົງຂອງພຣະຜູ້ເປັນນາຍຂອງເຈົ້າ, ສະຖານະຂອງເຈົ້າຈະລ້ຳເລີດຢ່າງສູງສຸດ.”

## REFERENCES


1. ‘Abdu’l-Bahá, in *Bahá’í Prayers: A Selection of Prayers Revealed by Bahá’u’lláh, the Báb, and ‘Abdu’l-Bahá* (Wilmette: Bahá’í Publishing Trust, 2002, 2017 printing), p. 28.

2. Ibid., p. 29.

3. *Tablets of Bahá’u’lláh Revealed after the Kitáb-i-Aqdas* (Wilmette: Bahá’í Publishing Trust, 1988, 2005 printing), no. 6.25, pp. 66–67.

4. Bahá’u’lláh, cited by Shoghi Effendi, *The Advent of Divine Justice* (Wilmette: Bahá’í Publishing Trust, 2006, 2018 printing), par. 42, p. 41.

5. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 3.23, p. 27.

6. Bahá’u’lláh, *The Hidden Words* (Wilmette: Bahá’í Publishing Trust, 2003, 2012 printing), Arabic no. 2, pp. 3–4.

7. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 10.5, p. 155.

8. From a Tablet of ‘Abdu’l-Bahá. (authorized translation)

9. Ibid.

10. *Selections from the Writings of ‘Abdu’l-Bahá* (Wilmette: Bahá’í Publishing, 2010, 2015 printing), no. 12.1, p. 42.

11. *Gleanings from the Writings of Bahá’u’lláh* (Wilmette: Bahá’í Publishing Trust, 1983, 2017 printing), CXXXIX, par. 8, p. 345.

12. ‘Abdu’l-Bahá, cited by Shoghi Effendi, *The Advent of Divine Justice*, par. 40, p. 39.

13. ‘Abdu’l-Bahá, in “Trustworthiness: A Cardinal Bahá’í Virtue”, compiled by the Research Department of the Universal House of Justice, published in *The Compilation of Compilations* (Maryborough: Bahá’í Publications Australia, 1991), vol. 2, no. 2053, p. 338.

14. ‘Abdu’l-Bahá, in *Bahá’í Prayers*, p. 28.

15. Ibid., p. 29.

16. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 9.4, p. 138.

17. Ibid., no. 10.15, p. 156.

18. *Selections from the Writings of ‘Abdu’l-Bahá*, no. 206.13, p. 357.

19. Ibid., no. 199.6, pp. 334–35.

20. From a talk given on 1 July 1912, published in *The Promulgation of Universal Peace: Talks Delivered by 'Abdu'l-Bahá during His Visit to the United States and Canada in 1912* (Wilmette: Bahá'í Publishing, 2012), par. 1, p. 304.

21. *Selections from the Writings of 'Abdu'l-Bahá*, no. 237.5, p. 442; also in *Bahá'í Prayers*, p. 328.

22. From a talk given by 'Abdu'l-Bahá on 3 September 1912, published in *The Promulgation of Universal Peace*, par. 29, p. 441.

23. *The Tabernacle of Unity: Bahá'u'lláh's Responses to Mánikchí Ṣáḥib and Other Writings* (Haifa: Bahá'í World Centre, 2006), no. 5.7, p. 74.

24. *Days of Remembrance: Selections from the Writings of Bahá'u'lláh for Bahá'í Holy Days* (Haifa: Bahá'í World Centre, 2016), no. 42.8, pp. 209–10.

25. From a talk given on 22 November 1911, published in *Paris Talks: Addresses Given by 'Abdu'l-Bahá in 1911* (Wilmette: Bahá'í Publishing, 2006, 2016 printing), no. 35.2, p. 135.

26. *Selections from the Writings of 'Abdu'l-Bahá*, no. 16.5, pp. 51–52.

27. *The Summons of the Lord of Hosts: Tablets of Bahá'u'lláh* (Wilmette: Bahá'í Publishing, 2006), no. 5.51, p. 301.

28. *Tablets of Bahá'u'lláh Revealed after the Kitáb-i-Aqdas*, no. 4.23, p. 39.

29. *The Summons of the Lord of Hosts*, no. 3.17, p. 249.

30. From a talk given by 'Abdu'l-Bahá on 5 May 1912, published in *The Promulgation of Universal Peace*, par. 3, p. 127.

31. Bahá'u'lláh, in *Bahá'í Prayers*, p. 164.

32. Ibid., p. i.

33. *Tablets of Bahá'u'lláh Revealed after the Kitáb-i-Aqdas*, no. 6.19, p. 64.

34. *Gleanings from the Writings of Bahá'u'lláh*, LXXXII, par. 3, pp. 180–81.

35. Ibid., V, par. 2, pp. 6–7.

36. 'Abdu'l-Bahá, *The Secret of Divine Civilization* (Wilmette: Bahá'í Publishing, 2007, 2016 printing), par. 130, p. 93.

37. *The Hidden Words*, Arabic no. 70, p. 21.

38. *Gleanings from the Writings of Bahá'u'lláh*, CXXIX, par. 2, p. 316.

39. Ibid., CXXXIX, par. 4, p. 343.

40. From a talk given by ‘Abdu’l-Bahá on 23 April 1912, published in *The Promulgation of Universal Peace*, par. 5, p. 69.

41. *Gleanings from the Writings of Bahá’u’lláh*, CXXV, par. 3, pp. 300–1.

42. Ibid., XV, par. 1, p. 39.

43. From a talk given by ‘Abdu’l-Bahá on 5 May 1912, published in *The Promulgation of Universal Peace*, par. 4, p. 128.

44. From a talk given by ‘Abdu’l-Bahá on 2 December 1912, ibid., par. 2, pp. 638–39.

45. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 6.3, p. 57.

46. Bahá’u’lláh, *Epistle to the Son of the Wolf* (Wilmette: Bahá’í Publishing Trust, 1988, 2016 printing), p. 23.

47. Bahá’u’lláh, in “Trustworthiness”, published in *The Compilation of Compilations*, vol. 2, no. 2037, p. 334.

48. ‘Abdu’l-Bahá, in “Bahá’í Prayers and Tablets for Children: A Compilation Prepared by the Research Department of the Universal House of Justice”, no. 11.

49. Ibid., no. 10.

50. From a talk given by ‘Abdu’l-Bahá on 14 April 1912, published in *The Promulgation of Universal Peace*, par. 9, p. 17.

51. *Abdul Baha on Divine Philosophy* (Boston: The Tudor Press, 1918), pp. 41–42.

52. *Selections from the Writings of ‘Abdu’l-Bahá*, no. 35.8, p. 104.

53. Ibid., no. 7.4, p. 33.

54. *Gleanings from the Writings of Bahá’u’lláh*, CXXI, par. 6, p. 291.

55. Ibid., LXVI, par. 6, p. 144.

56. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 10.8, p. 155.

57. Bahá’u’lláh, in *The Bahá’í World: Volume One, 1925–1926* (Wilmette: Bahá’í Publishing Trust, 1926, 1980 printing), p. 42.

58. *The Hidden Words*, Arabic no. 40, p. 13.

59. Ibid., Persian no. 50, p. 39.

60. From a Tablet of ‘Abdu’l-Bahá. (authorized translation)

61. *Gleanings from the Writings of Bahá’u’lláh*, CXLVI, par. 1, p. 357.

62. *Selections from the Writings of ‘Abdu’l-Bahá*, no. 1.7, p. 8.

63. From a talk given by ‘Abdu’l-Bahá on 12 May 1912, published in *The Promulgation of Universal Peace*, par. 8, p. 166.

64. From a talk given by ‘Abdu’l-Bahá on 16 and 17 October 1911, published in *Paris Talks*, no. 1.7, p. 6.

65. ‘Abdu’l-Bahá, in *Bahá’í Prayers*, p. 173.

66. Bahá’u’lláh, ibid., p. 94.

67. *Selections from the Writings of ‘Abdu’l-Bahá*, no. 179.1, p. 285.

68. From a talk given by ‘Abdu’l-Bahá on 10 November 1912, published in *The Promulgation of Universal Peace*, par. 8, p. 599.

69. *Gleanings from the Writings of Bahá’u’lláh*, CLIII, par. 1, pp. 366–67.

70. *The Hidden Words*, Persian no. 21, p. 29.

71. *Selections from the Writings of ‘Abdu’l-Bahá*, no. 178.1, p. 284.

72. From a talk given by ‘Abdu’l-Bahá on 21 November 1911, published in *Paris Talks*, no. 34.8, p. 133.

73. Bahá’u’lláh, in “Trustworthiness”, published in *The Compilation of Compilations*, vol. 2, no. 2013, p. 327.

74. Ibid., no. 2024, p. 330.

75. Ibid., no. 2027, p. 330.

76. Bahá’u’lláh, in “Guidelines for Teaching”, compiled by the Research Department of the Universal House of Justice, published in *The Compilation of Compilations*, vol. 2, no. 1898, p. 293.

77. *Gleanings from the Writings of Bahá’u’lláh*, XV, par. 6, p. 41.

78. *The Summons of the Lord of Hosts*, no. 1.145, pp. 114–15.

79. *The Call of the Divine Beloved: Selected Mystical Works of Bahá’u’lláh* (Haifa: Bahá’í World Centre, 2018), no. 2.22, p. 21.

80. Bahá’u’lláh, in *Bahá’í Prayers*, p. 162.

81. ‘Abdu’l-Bahá, ibid., p. 29.

82. From a Tablet of ‘Abdu’l-Bahá. (authorized translation)

83. Bahá’u’lláh, in *The Kitáb-i-Aqdas: The Most Holy Book* (Wilmette: Bahá’í Publishing Trust, 1993, 2013 printing), par. 70, p. 45.

84. From a talk given by ‘Abdu’l-Bahá on 23 November 1911, published in *Paris Talks*, no. 36.9, p. 140.

85. From a talk given by ‘Abdu’l-Bahá on 12 April 1912, published in *The Promulgation of Universal Peace*, par. 2, p. 10.

86. *The Tabernacle of Unity*, no. 3.16, p. 64.

87. *Selections from the Writings of ‘Abdu’l-Bahá*, no. 141.4, p. 228.

88. Ibid., no. 1.4, p. 6.

89. *The Hidden Words*, Arabic no. 48, p. 15.

90. *Gleanings from the Writings of Bahá’u’lláh*, LXVI, par. 11, p. 146.

91. *The Summons of the Lord of Hosts*, no. 2.30, p. 229.

92. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 14.11, p. 212.

93. *Gleanings from the Writings of Bahá’u’lláh*, CXXXIV, par. 1, p. 328.

94. Ibid., CLXI, par. 1, p. 384.

95. Ibid., CXLIII, par. 1, pp. 353–54.

96. Bahá’u’lláh, *The Kitáb-i-Íqán: The Book of Certitude* (Wilmette: Bahá’í Publishing Trust, 2003, 2018 printing), par. 146, pp. 123–24.

97. From a talk given by ‘Abdu’l-Bahá on 23 November 1912, published in *The Promulgation of Universal Peace*, par. 4, p. 632.

98. ‘Abdu’l-Bahá, in *Bahá’í Prayers*, p. 29.

99. *The Hidden Words*, Arabic no. 1, p. 3.

100. *Gleanings from the Writings of Bahá’u’lláh*, CXVIII, par. 1, p. 283.

101. *The Hidden Words*, Persian no. 3, p. 23.

102. ‘Abdu’l-Bahá, cited by Shoghi Effendi, *The Advent of Divine Justice*, par. 40, p. 39.

103. ‘Abdu’l-Bahá, in *Bahá’í Prayers*, p. 29.

104. *The Hidden Words*, Persian no. 49, p. 39.

105. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 6.37, p. 71.

106. *The Hidden Words*, Arabic no. 36, p. 12.

107. *Selections from the Writings of ‘Abdu’l-Bahá*, no. 225.30, p. 407.

108. Bahá’u’lláh, in *Bahá’í Prayers*, p. i.

109. *The Hidden Words*, Arabic no. 42, p. 13.

110. *Tablets of Abdul-Baha Abbas* (New York: Bahá’í Publishing Committee, 1915, 1940 printing), vol. 2, p. 483. (authorized translation)

111. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 9.5, p. 139.

112. *Gleanings from the Writings of Bahá’u’lláh*, CXXXVI, par. 6, p. 336.

113. ‘Abdu’l-Bahá, in “Bahá’í Prayers and Tablets for Children”, no. 10.

114. *Selections from the Writings of ‘Abdu’l-Bahá*, no. 138.1, p. 220.

115. *The Summons of the Lord of Hosts*, no. 1.119, p. 93.

116. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 10.4, p. 155.

117. *Gleanings from the Writings of Bahá’u’lláh*, CLVI, par. 1, p. 378.

118. Bahá’u’lláh, in *Bahá’í Prayers*, p. 94.

119. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 10.10, p. 156.

120. *Selections from the Writings of ‘Abdu’l-Bahá*, no. 178.1, p. 284.

121. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 4.16, p. 37.

122. From a Tablet of Bahá’u’lláh. (authorized translation)

123. ‘Abdu’l-Bahá, in *Bahá’í Prayers*, p. 29.

124. *The Hidden Words*, Arabic no. 11, p. 6.

125. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 17, p. 257.

126. *Gleanings from the Writings of Bahá’u’lláh*, LXVI, par. 10, p. 146.

127. Ibid., CXV, par. 13, p. 278.